# ບົດທີ 1

# ຊີວິດຂອງທ່ານໂປໂລ
# ແລະຈົດໝາຍຝາກຂອງທ່ານ

## The Life of Paul and His Letters

**ຂໍ້ໃຂຊີວິດຂອງທ່ານໂປໂລ  ຟີລິບປອຍ 4:13**
*"ຂ້າພະເຈົ້າສາມາດສູ້ກັບທຸກສິ່ງໄດ້ໂດຍພຣະອົງຜູ້ຊົງຊູກຳລັງຂ້າພະເຈົ້າ"*

ເມື່ອເຮົາເປີດພຣະຄັມພີພາກພັນທະສັນຍາໃໝ່ເຮົາຈະພົບວ່າມີພຣະທັມທັງໝົດ 27 ເຫລັ້ມ ຊຶ່ງແບ່ງໄດ້ດັ່ງນີ້:

ພຣະທັມ 4 ເຫລັ້ມແຣກ ຄື ມັດທາຍ ມາຣະໂກ ລູກາ ແລະໂຢຮັນ ເປັນພຣະທັມຂ່າວປະເສີດທີ່ກ່າວເຖິງຂ່າວປະເສີດເຣື້ອງຊີວະປະວັດຂອງພຣະເຢຊູຄຣິສ

ພຣະທັມ 1 ເຫລັ້ມຕໍ່ມາ ຄື ພຣະທັມກິຈການທີ່ກ່າວເຖິງການອອກໄປຮັບໃຊ້ປ່າວປະກາດຂອງພວກອັຄສາວົກ ທີ່ປ່າວປະກາດຂ່າວປະເສີດໃຫ້ສຳເຣັດຕາມພັນທະກິຈຮັບໃຊ້ພຣະເຈົ້າ

ພຣະທັມ 21 ເຫລັ້ມຕໍ່ມາ ຄື ພຣະທັມທີ່ເປັນແບບຈົດໝາຍຝາກເຖິງຄຣິສຈັກຕ່າງ ໆ ທີ່ກຳລັງເກີດຂຶ້ນໃໝ່ໃນຫົວເມືອງຕ່າງ ໆ  ຈົດໝາຍເຫລົ່ານີ້ເປັນຄຳຕັກເຕືອນ ຊູກຢູ້ສະມາຊິກແລະຜູ້ນຳຂອງຄຣິສຈັກໃຫ້ດຳເນີນຊີວິດຕາມຄວາມເຊື່ອທີ່ມີຢູ່ໃນພຣະເຢຊູຄຣິສ ແລະໃຫ້ຜູ້ຮັບໃຊ້ດ້ວຍຄວາມສັດຊື່ໃນພຣະຄຣິສ ຜູ້ເປັນສີສະ

ພຣະທັມເຫລັ້ມສຸດທ້າຍ ຄືພຣະນິມິດ  ທີ່ກ່າວເຖິງເຫດການໃນອນາຄົດ ແລະການສະເດັດມາຂອງພຣະເຢຊູຄຣິສເທື່ອທີ່ສອງ

ເຮົາຈະເຫັນໄດ້ວ່າ ໃນໝວດພຣະທັມຈົດໝາຍຝາກທີ່ມີຢູ່ 21 ເຫລັ້ມນັ້ນ  ທ່ານອາຈານໂປໂລເປັນຜູ້ຂຽນຈົດໝາຍຫລາຍກວ່າໝູ່ເຖິງ 13 ເຫລັ້ມ  ຈົດໝາຍຂອງທ່ານໂປໂລສ່ວນຫລາຍແລ້ວຂຽນເຖິງຄຣິສຈັກທີ່ກໍ່ຕັ້ງຂຶ້ນໃໝ່ໃນເວລານັ້ນ

ທ່ານ ເຈ. ບີ. ຟີລລິປສ໌ (J.B. Phillips) ເອີ້ນຈົດໝາຍເຫລົ່ານີ້ຂອງທ່ານໂປໂລວ່າ "ຈົດໝາຍເຖິງຄຣິສຈັກໜຸ່ມ" (Letter to Young Churches)  ຈົດໝາຍຕ່າງ ໆ ເຫລົ່ານີ້ສ່ວນຫລາຍຂຽນເຖິງຄຣິສຈັກທີ່ທ່ານໂປໂລໄດ້ກໍ່ຕັ້ງຂຶ້ນຫຼືມີສ່ວນໃນການຈັດຕັ້ງ  ທ່ານໂປໂລຂຽນຈົດໝາຍຂຶ້ນກໍເພື່ອຕັກເຕືອນແລະຊູກຢູ້ໃຈຄຣິສຈັກເຫລົ່ານັ້ນ  ເຮົາເຫັນໄດ້ວ່າຊີວິດຂອງທ່ານໂປໂລມີຄວາມສຳຄັນແລະມີອິດທິພົນຕໍ່ຄຣິສຈັກໃນສມັຍແຣກຢ່າງຫລວງຫລາຍ ແລະມີຄວາມສຳຄັນທີ່ຄວນແກ່ນັກສຶກສາພຣະຄັມພີທຸກທ່ານຕ້ອງຮຽນຮູ້

## I. ຊີວິດເບື້ອງຕົ້ນຂອງທ່ານໂປໂລ

ທ່ານເປັນຜູ້ທີ່ມີຊື່ສອງຊື່ຄື "ໂຊໂລ"(Saul) ແລະ "ໂປໂລ"(Paul) ຊື່ໂຊໂລເປັນຊື່ທີ່ຕັ້ງຈາກພາສາເຮັບເຣີ ເປັນຊື່ທີ່ຕັ້ງຕາມຊື່ກະສັດອົງແຣກຂອງອິຣາເອລ ຄືກະສັດ ຊາອູນ (Saul, ພຣະຄັມພີສບັບພາສາອັງກິດສະກົດເໝືອນກັນ ພຣະຄັມພີພາສາລາວອອກສຽງສຳນຽງຕາມພາສາກຣີກວ່າ "ໂຊໂລ") ສ່ວນໂປໂລ (Paul) ເປັນຊື່ທີ່ຕັ້ງຕາມພາສາກຣີກແປວ່າ "ເລັກນ້ອຍ" ພຣະທັມກິຈການໃຊ້ຊື່ "ໂຊໂລ" ຕາມພາສາເຮັບເຣີ ໃນບົດຕົ້ນ ໆ ຈົນຮອດບົດທີ 13 ໃນເຫດການທີ່ທ່ານໂປໂລໄດ້ຜະເຊີນໜ້າໝໍວິດມົນຊື່ບາຣະເຢຊູ ທີ່ເມືອງປາໂຟ (ກຈ 13:6) ທ່ານລູກາຜູ້ຂຽນພຣະທັມກິຈການໄດ້ປ່ຽນການເອີ້ນຊື່ຂອງທ່ານໂປໂລຈາກ "ຊາໂລ" ມາເປັນ "ໂປໂລ" ຕັ້ງແຕ່ຕອນນັ້ນເປັນຕົ້ນໄປ ເພື່ອຕ້ອງການເນັ້ນເຖິງສິດທິຂອງທ່ານທີ່ເປັນສັນຊາດໂຣມັນ ແລະເປັນການຮັບໃຊ້ພຣະເຈົ້າຖ້ານກາງຄົນຕ່າງຊາດເຊື່ອວ່າທ່ານໂປໂລໄດ້ໃຊ້ຊື່ທັງສອງມາແລ້ວຕັ້ງແຕ່ເດັກນ້ອຍ ຄື "ໂຊໂລ" ຕາມເຊື້ອຊາດຢິວແລະ "ໂປໂລ" ຕາມສັນຊາດໂຣມັນ ມີນັກສຶກສາພຣະຄັມພີໃຫ້ຄວາມຄິດເຫັນວ່າ ເມື່ອທ່ານໂປໂລຢູ່ໃນວັທນະທັມຢິວ ຊຶ່ງເປັນບົດຕົ້ນ ໆ ຂອງພຣະທັມກິຈການທ່ານໄດ້ໃຊ້ຊື່ "ໂຊໂລ" ແລະເມື່ອທ່ານໄດ້ມີບົດບາດກັບວັທນະທັມກຣີກແລະຄົນຕ່າງຊາດທ່ານໃຊ້ຊື່ "ໂປໂລ" ເພື່ອອ້າງເຖິງສິດທິທາງກົດໝາຍ ໃນຖານະທີ່ເປັນສັນຊາດໂຣມັນ ເພື່ອບໍ່ໃຫ້ສັບສົນໃນການສຶກສາເຮົາຈະໃຊ້ຊື່ "ໂປໂລ" ໃນຕອນຕໍ່ ໆ ໄປ

ເມື່ອພິຈາຣນາເບິ່ງດູວັນເວລາເກີດຂອງທ່ານໂປໂລ ມີຄວາມເຊື່ອໝັ້ນວ່າ ທ່ານເກີດໃນຄຣິສສັຕວັດທີ່ 1 ທ່ານເກີດທີ່ເມືອງຕາໂຊ (Tarsus, ທາຣ໌ຊັສ) ແຂວງກີລີເກັຽ (Cilicia, ຊີລີເຊັຽ) ໃນອາເຊັຽນ້ອຍ (Asia Minor) ຊຶ່ງຕັ້ງຢູ່ທາງຕາວັນອອກສ່ຽງເໜືອຂອງທະເລເມຣິເຕີເຣນຽນ (Mediterranean Sea) ອັນເປັນສູນກາງທຸຣະກິຈການຄ້າຂາຍທີ່ສຳຄັນຂອງພວກກຣີກແລະໂຣມັນ ໃນພຣະທັມຟີລິບປອຍ 3:5-6 ທ່ານໂປໂລໄດ້ເປີດເຜີຍຣາຍລະອຽດພື້ນຖານຂອງຕົວທ່ານເອງ ດັ່ງຕໍ່ໄປນີ້:

(1) ທ່ານໂປໂລເກີດມາໄດ້ແປດມື້ກໍໄດ້ຮັບພິທີຕັດ ຕາມພຣະບັນຍັດຂອງພຣະເຈົ້າທີ່ໄດ້ສັ່ງກັບອັບຣາຮາມ (ປຖກ 17:12, ລວນ 12:3) ຕ່າງກັບເຊື້ອສາຍຂອງອິຊມາເອລທີ່ທຳພິທີຕັດເມື່ອອາຍຸ 13 ປີ ເມື່ອທ່ານໂປໂລອ້າງປະສົບການນີ້ ເພາະທ່ານຕ້ອງການໃຫ້ຮູ້ຈັກວ່າທ່ານເປັນຜູ້ທີ່ຮັກສາແລະສືບທອດໃນການເຊື່ອຟັງທີ່ຈະປະຕິບັດຕາມພຣະບັນຍັດຢ່າງອັບຣາຮາມທີ່ເປັນຕົ້ນຕະກູລຂອງທ່ານແລະຄົນຢິວ

(2) ທ່ານໂປໂລເປັນຄົນອິສຣາເອລ "ອິສຣາເອລ" ເປັນຊື່ທີ່ພຣະເຈົ້າປະທານໃຫ້ກັບຢາໂຄບ (ປຖກ 32:28) ແລະອວຍພອນຢາໂຄບ ທ່ານໂປໂລຖືວ່າ ທ່ານສືບເຊື້ອສາຍທີ່ຮັບພຣະພອນສືບທອດຈາກອັບຣາຮາມແລະລູກຫລານຂອງອັບຣາຮາມ ຄື ຢາໂຄບ ຜູ້ເປັນຕົ້ນຕະກູລຂອງອິສຣາເອລ

(3) ທ່ານໂລໂລເກີດໃນຕະກູນເບັນຢະມິນ (Benjamin, ຣມ 11:1) ເບັນຢະມິນເປັນຊົນເຜົ່າທີ່ເກີດຈາກເຊື້ອສາຍຂອງນາງຣາເຊລພັນລະຍາທີ່ຢາໂຄບຮັກ ເປັນຜູ້ທີ່ເກີດໃນແຜ່ນດິນແຫ່ງພັນທະສັນຍາ (ປຖກ 35:17,18) ເປັນຕະກູລຂອງກະສັດຊາອູນ ຊຶ່ງເປັນກະສັດອົງທຳອິດຂອງອິຣາເອລ (1 ຂນມ 9:1, 2) ເຜົ່າເບັນຢະມິນເປັນເຜົ່າດຽວທີ່ຮ່ວມຢູ່ກັບຢູດາຍໃນພາກໃຕ້ ໃນເວລາທີ່ແຍກປະເທດອິສຣາເອລອອກເປັນສອງຝ່າຍ ຄື ອິສຣາເອລຝ່າຍເໜືອ ແລະອິສຣາເອລຝ່າຍໃຕ້ (1 ພກສ 12:21) ເມື່ອຕອນກັບຄືນຖິ່ນຈາກການເປັນສະເລີຍເສິກໃນບາບີໂລນນັ້ນ ເຜົ່າເບັນຢະມິນເປັນຜູ້ກໍ່ຕັ້ງປະເທດຂຶ້ນໃໝ່ (ອສຣ 4:1) ເຜົ່າເບັນຢະມິນຍັງເປັນນັກຮົບແນວໜ້າທີ່ກ້າຫານ(ຜປຄ 5:14, ຣຂຢ 5:18) ດັ່ງນັ້ນທ່ານໂປໂລມີຄວາມພາກພູມໃຈໃນວົງຕະກູລຂອງທ່ານຫລາຍ

(4) ທ່ານໂປໂລເປັນຄົນເຮັບເຣີ ເກີດຈາກຊາວເຮັບເຣີ ສະແດງວ່າພໍ່ແມ່ຂອງທ່ານເປັນຊາວເຮັບເຣີແທ້ ບໍ່ມີສາຍເລືອດອື່ນປະສົມ (ຫຼືບໍ່ເປັນລູກຊອດ)

(5) ທ່ານໂປໂລຢູ່ໃນຄນະຟາຣິຊາຍ ເປັນພວກທີ່ແຍກຕົວອອກຈາກສັງຄົມ ອຸທິດຊີວິດໃນການຮັກສາທັມບັນຍັດຂອງໂມເຊ ຖືສາສນາຢິວຢ່າງເຄັ່ງຄັດ ຖືວ່າຕ້ອງປະຕິບັດທຸກຢ່າງຕາມຮີດຄອງຢິວຢ່າງຖືກຕ້ອງ

(6) ທ່ານໂປໂລເປັນຜູ້ທີ່ມີຄວາມຮ້ອນຮົນໃນຄວາມເຊື່ອຖືສາສນາຢ່າງເຖິງທີ່ສຸດ ດ້ວຍເຫດນີ້ທ່ານຈຶ່ງຂົ່ມເຫັງຄຣິສຈັກເມື່ອທ່ານຍັງບໍ່ໄດ້ເປັນຄຣິສຕຽນ ເພາະຕາມຄວາມເຊື່ອຖືເດີມແລ້ວເຫັນວ່າພວກຄຣິສຕຽນມີຄວາມເຊື່ອຖືທີ່ບໍ່ຖືກຕ້ອງຕາມພຣະບັນຍັດ

(7) ທ່ານໂປໂລໄດ້ຖືຮັກສາສິນຢ່າງຄົບຖ້ວນ ທ່ານກ່າວວ່າ "ໃນດ້ານຄວາມຊອບທັມຊຶ່ງມີຢູ່ໂດຍພຣະບັນຍັດ ເຮົາກໍບໍ່ມີທີ່ຕິຕຽນໄດ້" (ຟປ 3:6)

ທ່ານໂປໂລຢູ່ໃນຄອບຄົວທີ່ເຄັ່ງຄັດໃນສາສນາຢິວໃນພວກຟາຣິຊາຍ (ກຈ 23:6) ໄດ້ຮັບການອົບຮົມທາງສາສນາຕາມແບບອະນຸຣັກນິຍົມ (ພວກທີ່ຖືຕາມຮີດຄອງຢ່າງເຄັ່ງຄັດ) ເມື່ອອາຍຸປະມານ 13 ປີ ພໍ່ແມ່ໄດ້ສົ່ງໄປຮັບການສຶກສາທີ່ກຸງເຢຣູຊາເລັມ ທ່ານໂປໂລເປັນສິດຂອງທ່ານອາຈານຄາມາລີເອັລ (Gamaliel, ກຈ 22:3) ອາຈານຄາມາລີເອັລເປັນນັກປຣາດໃນສມັຍນັ້ນ ດ້ວຍເຫດທີ່ທ່ານໂປໂລອາໄສຢູ່ໃນເມືອງທີ່ມີຄົນຕ່າງຊາດຫລາຍ ທ່ານໂປໂລຈຶ່ງໄດ້ມີໂອກາສຮຽນຮູ້ພາສາ ວັທນະທັມ ແລະຮີດຄອງກຣີກ (ກຈ 21:37)

ທ່ານໂປໂລມີຄວາມພາກພູມໃຈຢູ່ສະເມີວ່າ ທ່ານເປັນຜູ້ທີ່ມີສິດທິພິເສດໃນການຖືສັນຊາດໂຣມັນຄືກັບພໍ່ຂອງທ່ານ (ກຈ 16:37, 22:25-28) ຄອບຄົວຂອງທ່ານໂປໂລໄດ້ສັນຊາດໂຣມັນມາດ້ວຍວິທີໃດນັ້ນບໍ່ໄດ້ຮູ້ຈັກຄັກ ການມີສັນຊາດໂຣມັນນີ້ເປັນປະໂຍດແກ່ທ່ານໂປໂລຫລາຍ ເມື່ອເຈົ້າໜ້າທີ່ໄດ້ທຳຮ້າຍທ່ານຢ່າງຜິດກົດໝາຍ ທ່ານກໍໃຊ້ສິດທິການເປັນຄົນສັນຊາດໂຣມັນຍັບຍັ້ງການທຳຮ້າຍຂອງເຈົ້າໜ້າທີ່ (ກຈ 16:37-39, 22:25-28, 25:11) ເຖິງແມ່ນວ່າທ່ານຈະມີຄວາມພາກພູມໃຈຢ່າງສຸດຊຶ້ງໃນສັນຊາດໂຣມັນຂອງທ່ານ ແຕ່ວ່າທ່ານບໍ່ເຄີຍມີຄວາມຮູ້ສຶກອັບອາຍທີ່ຖືຮັກສາລັດທິຢິວ ທ່ານມີຄວາມຈົງຮັກພັກດີຢ່າງສູງສຸດຕໍ່ພຣະເຈົ້າອົງດຽວຂອງອິສຣາເອລ ແລະຕໍ່ພຣະບັນຍັດໂມເຊ ຕົວຂອງທ່ານໂປໂລສົມທຽນຄືຂົວແຫ່ງຂ່າວປະເສີດຂອງພຣະເຢຊູຄຣິສ ທີ່ເຊື່ອມໂຍງຣະຫວ່າງພວກຢິວກັບຄົນຕ່າງຊາດ ແຕ່ທີ່ສຳຄັນກວ່ານັ້ນກໍຄື ທ່ານໄດ້ຮັບການອົບຮົມລ້ຽງດູໃຫ້ເປັນຢິວຕລອດເວລາ ອັນເປັນພື້ນຖານທີ່ສຳຄັນໃນຊີວິດຂອງທ່ານ ທ່ານບໍ່ຮູ້ສຶກອາຍແມ້ແຕ່ນ້ອຍ ທີ່ຈະສະແດງຕົວຫຼືບອກຜູ້ໃດວ່າທ່ານເປັນຄົນຢິວ (ກຈ 21:39, 22:3) ນອກຈາກນັ້ນກໍຍັງມີຈິດໃຈທີ່ຮັກແລະຜູກພັນກັບພີ່ນ້ອງຮ່ວມຊາດຂອງທ່ານຢ່າງໃກ້ຊິດໂດຍຖືວ່າເປັນພີ່ນ້ອງຕາມເຊື້ອຊາດແລະເນື້ອໜັງ (ໂຣມ 9:1-3) ແມ່ນວ່າການທີ່ທ່ານໂປໂລໄດ້ມີຊີວິດໃໝ່ເປັນຄຣິສຕຽນແລ້ວ ກໍບໍ່ໄດ້ໝາຍຄວາມວ່າທ່ານຕີຕົວອອກຈາກເພື່ອຮ່ວມຊາດ ຄວາມເປັນຢິວຂອງທ່ານກໍເປັນປະໂຍດຫລາຍສຳລັບການປະກາດຂ່າວປະເສີດໃນທຸກບ່ອນ ທ່ານໃຊ້ເປັນຈຸດເລີ້ມຕົ້ນໂດຍຕິດຕໍ່ກັບພວກຢິວກ່ອນ ເມື່ອໄປໃນບ່ອນຕ່າງ ໆ ເປັນເທື່ອທຳອິດ

*<u>ໝາຍເຫດ</u> ຄຳວ່າ "ເຮັບເຣີ" ກັບຄຳວ່າ "ເຮັບບຣູ" ຫຼື "ຮີບຣູ" ເປັນຄຳດຽວກັນ ອັນໝາຍເຖິງຄົນຊາວເຮັບເຣີ ແລະພາສາເຮັບເຣີ ຄຳວ່າ "ເຮັບເຣີ" ອອກສຽງຕາມພາສາຕົ້ນເດີມ ໃນປັດຈຸບັນນີ້ພາສາອັງກິດໃຊ້ຄຳວ່າ "Hebrew" ອອກສຽງເປັນ "ເຮັບບຣູ" ຫຼື "ຮີບຣູ"*

## II. ທ່ານໂປໂລກັບໃຈເປັນຄຣິສຕຽນແລະການຊົງເອີ້ນຂອງພຣະເຈົ້າ

ເມື່ອມີຊື່ຂອງທ່ານໂປໂລປາກົດໃນພຣະທັມກິຈການເທື່ອທຳອິດ ທ່ານຄົງຈະອາຍຸປະມານ 30 ປີ ໃນຖານະຊາຍໜຸ່ມຊາວຢິວ ເປັນຜູ້ນຳສາສນາຢິວທີ່ມີໃຈຮ້ອນຮົນ ໂດຍທີ່ທ່ານເປັນຜູ້ຕໍ່ຕ້ານພວກຄຣິສຕຽນຢ່າງຮຸນແຮງ ທ່ານຈຶ່ງໄດ້ຮັບການຍົກຍ້ອງສນັບສນຸນໃຫ້ເປັນຫົວໜ້າໃນການທຳລາຍລ້າງພວກຄຣິສຕຽນ ເຫດການທີ່ທ່ານຊະເຕຟາໂນຖືກປະຊາຊົນຕີຈົນຕາຍ ທ່ານໂປໂລໄດ້ຢູ່ໃນເຫດການນັ້ນດ້ວຍ(ກຈ 7:58) ທ່ານໄດ້ສອນໃຫ້ຮູ້ຈັກແຜນການໃນການທຳລາຍລ້າງພວກຄຣິສຕຽນວ່າເປັນແນວໃດ (ກຈ 26:11-16) ທ່ານພຍາຍາມຢ່າງໃຫຍ່ຫລວງທີ່ຈະກວາດລ້າງຄຣິສຈັກໃໝ່ (ຄຕ 1:13) ທີ່ປະຊາຊົນຂ້າຄຣິສຕຽນ ທ່ານກໍເຫັນຊອບດ້ວຍ ທ່ານໄດ້ທ່ຽວໄປຊອກຫາພວກຄຣິສຕຽນແລ້ວລາກມາໃສ່ຄຸກໄວ້ (ກຈ 8:1-3) ທ່ານໂປໂລເຫັນວ່າຄຣິສຕຽນນັ້ນຄືພວກນອກຮີດ ແລະການທຳລາຍລ້າງພວກນອກຮີດໃຫ້ໝົດໄປເປັນການຖວາຍກຽດຕິຍົສແດ່ພຣະເຢໂຮວາຫ໌ ແລະເປັນທີ່ຖືກຕ້ອງຕາມນ້ຳພຣະທັຍຂອງພຣະເຈົ້າ ແຕ່ກົງກັນຂ້າມເມື່ອມີການຂົ່ມເຫັງຄຣິສຕຽນເກີດຂຶ້ນ ພວກຄຣິສຕຽນກໍຍິ່ງກະຈັດກະຈາຍອອກໄປທຸກທິດທຸກທາງຄືກັບໄຟລາມລຸກໄໝ້ປ່າກວ້າງຂວາງຂຶ້ນ ຈຶ່ງເຮັດໃຫ້ທ່ານໂປໂລຄຽດແຄ້ນຫລາຍຍິ່ງຂຶ້ນ ທ່ານມຸ່ງທີ່ຈະທຳຮ້າຍຄຣິສຕຽນໃນທຸກບ່ອນ ທ່ານຮູ້ຈັກວ່າກະບວນການຄຣິສຕຽນໄດ້ຂຍາຍຕົວອອກແລະຫຍັ່ງຮາກລົງໃນເມືອງດາມາເຊ (Damascus, ດາມັດກັສ) ທ່ານໂປໂລຈຶ່ງຕັດສິນໃຈເດີນທາງໄປຕໍ່ສູ້ ເນື່ອງຈາກເມືອງດາເມເຊບໍ່ແມ່ນທ້ອງຖິ່ນຂອງພວກຢິວ ທ່ານໂປໂລຈຶ່ງຕ້ອງຂໍໜັງສືຈາກມະຫາປຸໂຣຫິດເຖິງຜູ້ປົກຄອງເມືອງແລະອອກເດີນທາງໄປ (ກຈ 9:1-2)

ໃນຂນະທີ່ເດີນທາງໄປເມືອງດາເມເຊ ທ່ານໄດ້ຮັບມອບອຳນາດມາຈາກມະຫາປຸໂຣຫິດແຫ່ງກຸງເຢຣູຊາເລັມໃຫ້ໄປກຳຈັດພວກຄຣິສຕຽນ ປາກົດການທີ່ສຳຄັນທີ່ສຸດໃນຊີວິດຂອງທ່ານໄດ້ເກີດຂຶ້ນ ຄືວ່າພຣະຄຣິສຜູ້ຊົງຄືນພຣະຊົນໄດ້ມາປາກົດກັບທ່ານໂປໂລຣະຫວ່າງທາງທີ່ໄປເມືອງດາເມເຊ ຈຶ່ງເປັນເຫດໃຫ້ທ່ານໂປໂລສຳນຶກຜິດ ແລະເຂົ້າໃຈວ່າທ່ານກຳລັງຢູ່ບົນຫົນທາງທີ່ຜິດເສັຽແລ້ວ ທ່ານຈຶ່ງໄດ້ຍອມພ່າຍແພ້ຕໍ່ພຣະເຢຊູຢ່າງສິ້ນເຊີງ ດວງຕາຂອງທ່ານມືດມົນໄປ ທ່ານຕ້ອງຕົກຢູ່ໃນຄວາມທຸກທໍຣະມານໃຈ ທ່ານໄດ້ອົດອາຫານ 3 ວັນ ຊ່ວງຣະຍະເວລານີ້ມີຄວາມສຳຄັນຕໍ່ທ່ານໂປໂລເປັນຢ່າງຫລາຍ ທ່ານຕ້ອງພິຈາຣະນາເຖິງນ້ຳພຣະທັຍຂອງພຣະເຈົ້າ ແລະການເຊື່ອຟັງພຣະບັນຊາຂອງພຣະອົງເພື່ອທ່ານຈະມີຊີວິດໃໝ່ທີ່ຈະດຳເນີນຕໍ່ໄປ ທ່ານໂປໂລຜູ້ຂົ່ມເຫັງຕ້ອງຍອມມອບຊີວິດຂອງຕົນແກ່ພຣະເຢຊູຜູ້ຊຶ່ງທ່ານໄດ້ເຄີຍປະນາມຢ່າງຮຸນແຮງ (ກຈ 9:1-19) ທ່ານໄດ້ຮຽນຮູ້ວ່າ ຄຣິສຕຽນເຫລົ່ານີ້ບໍ່ແມ່ນຄົນໂງ່ທີ່ມີແຕ່ຄວາມຄິດເພີ້ຝັນ ແຕ່ເປັນ "ຄຣິສຈັກຂອງພຣະເຈົ້າ" (1 ກທ 15:9) ການປ່ຽນແປງນີ້ເປັນໄປຢ່າງວ່ອງໄວຈາກໜ້າມືເປັນຫລັງມື ເຫດການນີ້ເປັນສິ່ງທີ່ປະທັບໃຈທ່ານຫລາຍ ທ່ານໄດ້ກ່າວໃນຈົດໝາຍຝາກສບັບຕ່າງ ໆ ວ່າເປັນຣິດທານຸພາບແລະພຣະກະຣຸນາທິຄຸນ ທີ່ພຣະເຈົ້າໄດ້ຊົງສຳແດງຕໍ່ທ່ານ ແລະພຣະອົງໄດ້ປ່ຽນແປງທ່ານເສັຽໃໝ່ ແລ້ວທ່ານໄດ້ຮັບມອບພາຣະກິຈທີ່ຈະໃຫ້ທ່ານໄດ້ເຮັດໜ້າທີ່ເປັນຜູ້ຮັບໃຊ້ຂອງພຣະເຢຊູຄຣິສ (1 ກທ 9:16-17, ຄຕ 1:15-16, ອຟ 3:3-9)

ທ່ານໂປໂລບໍ່ໄດ້ເຮັດແຕ່ເທົ່ານັ້ນ ທ່ານໄດ້ອອກໄປໃນປະເທດອາຣະເບັຽທາງທິດໃຕ້ຂອງເມືອງດາມາເຊ (ຄຕ 1:17) ຈາກບັນທຶກບໍ່ໄດ້ປາກົດແຈ້ງວ່າທ່ານຢູ່ດົນນານປານໃດຫຼືໄດ້ເທສນາສັ່ງສອນຜູ້ໃດ ເຊື່ອວ່າ ທ່ານໂປໂລຕ້ອງການຈະສະງົບຈິດໃຈສຳຣວຈຕົວເອງວ່າ ຄວນຈະເຮັດແນວໃດກັບຊີວິດຂອງທ່ານເມື່ອພຣະເຢຊູຄຣິສໄດ້ມາປາກົດເຊັ່ນນັ້ນ ແຕ່ທີ່ປາກົດແນ່ນແທ້ຄືເມື່ອທ່ານກັບຄືນມາພ້ອມກັບສາສນາສາດໃໝ່ ທີ່ເກີດຈາກປະສົບການໃໝ່ຂອງທ່ານ ທີ່ແນ່ນອນແລະຊັດແຈ້ງກ່ຽວກັບຄວາມເຊື່ອຂອງ

ຄຣິສຕຽນແລະຄຣິສຈັກ ເມື່ອທ່ານກັບຄືນມາດາເມເຊ ທ່ານໄດ້ເທສນາຢ່າງກ້າຫານຕໍ່ພວກຢິວທີ່ເປັນຊົນຊາດຂອງທ່ານຟັງວ່າ ພຣະເຢຊູຊົງເປັນພຣະຄຣິສ ຜູ້ທີ່ບັນດາພວກຢິວຄວນເຊື່ອຖື (ກຈ 9:20-22) ຜູ້ຄົນທີ່ໄດ້ຍິນຄຳເທສນາຂອງທ່ານໂປໂລກໍ່ຂູ່ເຂັນຈະທຳຮ້າຍທ່ານ ຢ່າງທີ່ທ່ານໄດ້ເຄີຍທຳຕໍ່ພວກຄຣິສຕຽນມາກ່ອນ ພວກເຂົາຊອກຫາທາງທີ່ຈະທຳຮ້າຍທ່ານເສັຽ ແຕ່ເມື່ອທ່ານຮູ້ເຣື້ອງທ່ານກໍໜີໄປດ້ວຍຄວາມຊ່ວຍເຫລືອຂອງພວກຄຣິສຕຽນແລະສະຫາຍຂອງທ່ານ ເຂົາໄດ້ເອົາທ່ານໃສ່ກວຍຢ່ອນລົງຕາມປ່ອງກຳແພງເມືອງ (ກຈ 9:23-25, 2 ກທ 11:32, 33)

**ຈົ່ງເອົາສິ່ງທີ່ທ່ານໄດ້ສຶກສາຈາກຂ້າງເທິງເຮັດບົດຝຶກຫັດຂໍ້ທີ່ນຶ່ງ & ສອງ**

## III. <u>ການຮັບໃຊ້ຂອງທ່ານໂປໂລໃນຕອນທຳອິດ</u>

ສາມປີຫລັງຈາກທີ່ທ່ານໂປໂລໄດ້ກັບໃຈໃໝ່ ທ່ານເດີນທາງໄປກຸງເຢຣູຊາເລັມດ້ວຍຈຸດປະສົງທີ່ຕ້ອງການລົ້ງເຄີຍກັບທ່ານເປໂຕຊຶ່ງເປັນອັຄສາວົກ (ຄຕ 1:18, 19) ແລະທ່ານໂປໂລຕ້ອງການບອກພວກຢິວຊຶ່ງເປັນຊົນຊາດຂອງທ່ານວ່າ ຄວາມເຊື່ອຂອງຄຣິສຕຽນນັ້ນເປັນຂອງຈິງ ຄວາມປະພຶດຂອງທ່ານເຊັ່ນນັ້ນເປັນສິ່ງທີ່ເຮັດໃຫ້ເກີດອັນຕຣາຍຕໍ່ຕົວທ່ານເອງໄດ້ ແຕ່ທ່ານໂປໂລຖືວ່າການເຮັດເຊັ່ນນັ້ນເປັນໜ້າທີ່ຂອງຄຣິສຕຽນທີ່ຕ້ອງຜະເຊີນກັບຄວາມຈິງ ເມື່ອທ່ານໄປເຖິງກຸງເຢຣູຊາເລັມ ບັນດາຜູ້ເຊື່ອທັງຫລາຍກໍແປກໃຈ ເຂົາທັງຫລາຍຢ້ານວ່າເປັນເລ່ກົນ ຈົນກ່ວາທ່ານບາຣະນາບາໄດ້ຮັບຮອງກັບພວກສາວົກວ່າ ການກັບໃຈຂອງທ່ານໂປໂລນັ້ນເປັນຄວາມຈິງໃຈ (ກຈ 9:26-30) ທ່ານໂປໂລໄດ້ເປັນພຍານເຣື້ອງພຣະຄຣິສຢ່າງແຂງແຮງກັບພວກທີ່ນິຍົມກຣີກທີ່ເຊື່ອຖືສາສນາຢິວ ຈົນເປັນເຫດໃຫ້ບັນດາພີ່ນ້ອງໃນກຸງເຢຣູຊາເລັມບໍ່ພໍໃຈ ເພາະເຫັນວ່າທ່ານໂປໂລຮຸນແຮງຫລາຍເກີນໄປ ແລ້ວບໍ່ຍອມຢູ່ງກ່ຽວກັບທ່ານໂປໂລເປັນເວລາ 15 ມື້ (ຄຕ 1:18) ທ່ານໂປໂລໄດ້ຮັບນິມິດຈາກພຣະເຈົ້າທີ່ຈະໃຫ້ອອກເດີນທາງໜີໄປຈາກກຸງເຢຣູຊາເລັມແລ້ວ ທ່ານຈຶ່ງຕົກລົງໃຈທີ່ຈະເດີນທາງກັບໄປບ້ານເກີດທີ່ເມືອງຕາໂຊ (ກິຈການ 9:30) ແລະໄດ້ຮັກສາຕົວຢູ່ທີ່ນັ່ນເປັນເວລານານປີປາຍ ການຂົ່ມເຫັງບໍ່ໄດ້ເຮັດໃຫ້ທ່ານຢຸດພັກເຊົາ ທ່ານໄດ້ອອກໄປຊູກຢູ້ຄຣິສຈັກໃນແຂວງຊີລີເຊັຽ (ກຈ 15:41) ຈະເຫັນໄດ້ຊັດວ່າທ່ານໂປໂລເທສນາໃນເມືອງຕາໂຊແລະບ່ອນທີ່ໃກ້ຄຽງຢ່າງເກີດຜົລສຳເຣັດ ໃນເວລານັ້ນບາຣະນາບາກໍບໍ່ໄດ້ລືມທ່ານ ເມື່ອໄດ້ຍິນເຣື້ອງການເທສນາຂອງທ່ານໂປໂລ (ຄຕ 1:23) ແລະເມື່ອຄຣິສຈັກໃໝ່ທີ່ເມືອງອັນຕິໂອເຊັຽ (Antioch, ອັນຕິໂອກ) ໃນປະເທດຊີເຣັຽຕ້ອງການຄວາມຊ່ວຍເຫລືອ ບາຣະນາບາໄດ້ໄປຍັງເມືອງຕາໂຊຊັກຊວນໃຫ້ທ່ານໂປໂລໄປຮັບໃຊ້ທີ່ເມືອງອັນຕິໂອເຊັຽ ທ່ານໂປໂລໄດ້ໄປທີ່ນັ້ນແລະໄດ້ເປັນຜູ້ນຳ (ກຈ 13:1) ການປະກາດກັບຄົນຕ່າງຊາດໄດ້ເລີ້ມຕົ້ນຂຶ້ນທີ່ຄຣິສຈັກອັນຕິໂອເຊັຽ ມີການສຖາປນາແຕ່ງຕັ້ງສົ່ງໃຫ້ທ່ານບາຣະນາບາແລະທ່ານໂປໂລອອກໄປ ໂດຍການຊົງນຳຂອງພຣະວິນຍານບໍຣິສຸດ

## IV. <u>ອັຄສາວົກໂປໂລຜູ້ຖືກສົ່ງອອກໄປ</u>

ຫລັງຈາກທີ່ທ່ານໂປໂລໄດ້ປຽ້ມຢາມກຸງເຢຣູຊາເລັມ ເພື່ອນຳຂອງບັນເທົາທຸກໄປຊ່ວຍເມື່ອມີການອຶດຢາກລຳບາກທີ່ນັ່ນ (ກຈ 11:27-30) ພຣະວິນຍານຂອງພຣະເຈົ້າໄດ້ຊົງນຳທ່ານໃຫ້ປະກາດຂ່າວປະເສີດຢ່າງກວ້າງຂວາງຂຶ້ນ ທີ່ເມືອງອັນຕີໂອເຂັຽໃນເວລາທີ່ພວກຄຣິສຕຽນກຳລັງນມັສການ ພຣະເຈົ້າຊົງນຳພວກເຂົາໃຫ້ແຕ່ງຕັ້ງຜູ້ຮັບໃຊ້ໃຫ້ອອກໄປປ່າວປະກາດຂ່າວປະເສີດ ທ່ານບາຣະນາບາແລະທ່ານໂປໂລທັງສອງທ່ານເປັນຜູ້ທີ່ຄຣິສຈັກສົ່ງອອກໄປປ່າວປະກາດດ້ວຍ (ກຈ 13:1, 2) ເມື່ອທ່ານໂປໂລເລີ້ມຕົ້ນຮັບໃຊ້ຄຣິສຈັກນັ້ນ ມີບາງຄົນສົງສັຍຖານະແລະສິດທິຂອງທ່ານ ທ່ານໄດ້ກ່າວວ່າ "ສຳລັບຂ່າວປະເສີດນັ້ນ ຂ້າພະເຈົ້າຈຶ່ງໄດ້ຖືກຊົງຕັ້ງໄວ້ໃຫ້ເປັນຜູ້ປະກາດແລະເປັນອັຄສາວົກ (ຂ້າພະເຈົ້າກ່າວຄວາມຈິງບໍ່ໄດ້ກ່າວຄຳຕົວະ) ແລະເປັນຄຣູສອນຄວາມເຊື່ອແລະຄວາມຈິງແກ່ຄົນຕ່າງຊາດ" (1 ຕທ 2:7, ທຽບກັບ 2 ຕທ 1:11) ທ່ານໂປໂລກ່າວອີກວ່າ "ເພາະເຫດນັ້ນເອງ ຂ້າພະເຈົ້າຈຶ່ງອົດທົນເອົາສິ່ງທັງຫລາຍນີ້ ເຖິງປານນັ້ນຂ້າພະເຈົ້າກໍບໍ່ມີຄວາມລະອາຍ ເພາະວ່າຂ້າພະເຈົ້າຮູ້ຈັກພຣະອົງຜູ້ທີ່ເຮົາໄດ້ເຊື່ອແລະໄວ້ວາງໃຈນັ້ນ..." (2 ຕທ 1:11) ໃນຈົດທີ່ທ່ານໂປໂລຂຽນໄປຍັງຄຣິສຈັກ ທ່ານໄດ້ອ້າງອີງໃນຄຳຂຶ້ນຕົ້ນຈົດໝາຍຂອງທ່ານຢ່າງຊັດແຈ້ງວ່າ "ໂປໂລຜູ້ຮັບໃຊ້ຂອງພຣະເຢຊູຄຣິສ ຜູ້ຊຶ່ງພຣະອົງຊົງເອີ້ນໃຫ້ເປັນອັຄສາວົກ" (ຣມ 1:1) "ໂປໂລຜູ້ທີ່ພຣະເຈົ້າຊົງເອີ້ນໄວ້ເປັນອັຄສາວົກຂອງພຣະເຢຊູຄຣິສ" (1 ກທ 1:1, ທຽບກັບ 2 ກທ 1:1, ຄຕ 1:1, ອຟ 1:1, ຄຊ 1:1, 1 ຕທ 1:1, 2 ຕທ 1:1) ທ່ານໂປໂລມີຄວາມເຊື່ອໝັ້ນວ່າ ພຣະເຢຊູຄຣິສໄດ້ຊົງເອີ້ນໃຫ້ທ່ານເປັນອັຄສາວົກຕາມນ້ຳພຣະທັຍຂອງພຣະອົງ ຕຳແໜ່ງໜ້າທີ່ອັຄສາວົກບໍ່ແມ່ນເປັນສິ່ງທີ່ເຮັດໂດຍມະນຸດ ແຕ່ພຣະເຢຊູຊົງເປັນຜູ້ແຕ່ງຕັ້ງຜູ້ທີ່ເປັນ "ອັຄສາວົກ" (Apostle) ນັ້ນ ໃນຕອນທຳອິດທີ່ພຣະຄັມພີພາກພັນທະສັນຍາໃໝ່ກ່າວເຖິງຄືພວກອັສາວົກ 12 ຄົນ ທີ່ພຣະເຢຊູຄຣິສໄດ້ເອີ້ນພຣະອົງເອງ ຕ້ອງເປັນສາວົກທີ່ມີການເອີ້ນຮຽກເປັນພິເສດສຳລັບພາຣະກິຈການຮັບໃຊ້ວຽກພັນທະກິຈຂອງພຣະເຢຊູຄຣິສ ເປັນບຸກຄົນທີ່ໄດ້ຢູ່ກັບພຣະເຢຊູຄຣິສຢ່າງໃກ້ຊິດ ໄດ້ຮັບຄຳສິດສອນໂດຍກົງຈາກພຣະເຢຊູຄຣິສ ດັ່ງນັ້ນທ່ານໂປໂລຈຶ່ງໄດ້ອ້າງອີງເຖິງປະສົບການທີ່ຢູ່ຣະຫວ່າງການເດີນທາງໄປເມືອງດາມັສກັສກັບພຣະເຢຊູຄຣິສ ທ່ານໂປໂລຖືວ່າປະສົບການນີ້ເປັນເຫດການທີ່ທ່ານໄດ້ພົບກັບພຣະເຢຊູຄຣິສແລະໄດ້ຮັບຄຳສອນຕ່າງ ໆ ຈາກພຣະເຢຊູຄຣິສໂດຍກົງ ແລະຜົນງານຕ່າງ ໆ ທີ່ທ່ານຮັບໃຊ້ພຣະເຈົ້າກໍເປັນພະຍານຫລັກຖານ ໂດຍສະເພາະພີ່ນ້ອງຄຣິສຕຽນຊາວເມືອງໂກຣິນໂທປຽບທຽບຄືກັບກາປະຈຳຕຳແໜ່ງອັຄສາວົກຂອງທ່ານ (1 ກທ 9:1-2, 2 ກທ 12:12) ຄຣິສຕຽນໃນປັຈຈຸບັນບໍ່ມີຂໍ້ສົງສັຍໃນການເປັນອັຄສາວົກຂອງທ່ານໂປໂລເລີຍ ເພາະຜົນງານແລະຫລັກຄຳສອນຂອງທ່ານ ໄດ້ເປີດເຜີຍໃຫ້ຄຣິສຕຽນເກີດຄວາມເຂົ້າໃຈໃນພຣະເຢຊູຄຣິສຢ່າງຊັດແຈ້ງ ເພາະຖ້າຫາກຂາດຄຳສອນແລະການອະທິບາຍຂອງທ່ານໂປໂລໃນເຣື່ອງຂ່າວປະເສີດຂອງພຣະເຢຊູຄຣິສແລ້ວ ພວກເຮົາຄົງຈະຂາດຄວາມເຂົ້າໃຈຢ່າງຊັດແຈ້ງໃນຫລາຍ ໆ ປະການ ແມ່ນແທ້ຄຳສິດສອນຂອງທ່ານໂປໂລຕ້ອງມາຈາກພຣະເຢຊູຄຣິສໂດຍບໍ່ມີຂໍ້ສົງສັຍ ທ່ານໂປໂລບໍ່ໄດ້ໄປຫາຫຼືຮຽນຈາກພວກອັຄສາວົກຄົນນຶ່ງຄົນໃດ ຄວາມຈິງທີ່ທ່ານໄດ້ຮັບເປັນສິ່ງທີ່ເຮັດໃຫ້ທ່ານອົດທົນຕໍ່ທຸກສິ່ງທຸກຢ່າງທີ່ໄດ້ເກີດຂຶ້ນກັບທ່ານ ຄວາມທຸກຍາກບໍ່ໄດ້ປ່ຽນແປງຄວາມເຊື່ອຂອງທ່ານຈັກນ້ອຍ ທ່ານໄດ້ທຳໜ້າທີ່ອັນສຳຄັນຄືນຳເອົາຂ່າວປະເສີດແຫ່ງຄວາມຈິງໄປເຖິງພີ່ນ້ອງຊາວຢິວກ່ອນ ແລ້ວຍັງຄົນຕ່າງຊາດ ການຕໍ່ສູ້ຂັດຄ້ານຂອງລັດທິຢູດາຍແລະພວກຄົນຢິວບໍ່ເປັນອຸປະສັກຂັດຂວາງທ່ານໃນການທີ່ທ່ານທຳໜ້າທີ່ປະກາດຂ່າວປະເສີດຂອງທ່ານຕໍ່ມວລມະນຸດ ເມື່ອເຮົາອ່ານຈົດໝາຍຂອງທ່ານ ເຮົາຈະເຫັນວ່າທ່ານມີຄວາມພາກພູມໃຈ ທີ່ທ່ານກ່າວເຖິງຕຳແໜ່ງໜ້າທີ່ "ອັຄສາວົກ" ຊຶ່ງເປັນສິ່ງທີ່ສົມຄວນ ເພາະທ່ານໄດ້ຮັບໃຊ້ຈົນ

ສຸດຊີວິດຂອງທ່ານ ດ້ວຍຄວາມສັດຊື່ຕໍ່ຂ່າວປະເສີດຂອງພຣະເຢຊູຄຣິສ

## V. ການເດີນທາງປະກາດຂ່າວປະເສີດທຽວທີ່ນຶ່ງ

(ກຈ ບົດທີ່ 13-14, ປະມານ ຄ.ສ. 47-48)

ທ່ານໂປໂລໄດ້ອອກເດີນທາງພ້ອມກັບບາຣະນາບາ ແລະມາຣະໂກເປັນຜູ້ຊ່ວຍ ໂດຍເດີນທາງມຸ່ງໄປເກາະກຸບໂຣ (Cyprus, ໄຊປຣັສ) ຈາກເມືອງອັນຕິໂອເຂັຽ ທ້ອງຖິ່ນນີ້ເປັນບ້ານເດີມຂອງທ່ານບາຣະນາບາ ທັງສາມໄດ້ເດີນທາງໄປຈົນຮອດເມືອງປາໂຟ (Paphos, ປາໂຟສ) ໃນເກາະນັ້ນທ່ານພະເຊີນກັບຫມໍຜີຄົນນຶ່ງຊື່ ບາຣະເຢຊູ ຊຶ່ງມີຜູ້ວ່າຣາຊການເມືອງເປັນຜູ້ໜູນຫລັງຢູ່ ຜູ້ວ່າຣາຊການເຊີນໃຫ້ພວກຂອງທ່ານໄປພົບ ເພື່ອຈະຟັງພຣະຄໍາຂອງພຣະເຈົ້າ ແຕ່ບາຣະເຢຊູຂັດຂວາງທ່ານໂປໂລ ດວງຕາຂອງບາຣະເຢຊູມືດມົນໄປ ເມື່ອຜູ້ວ່າຣາຊການເຫັນການອັສຈັນຈຶ່ງຍອມເຊື່ອ (ກຈ 13:4-12) ເຫດການນີ້ເຮັດໃຫ້ຄຣິສຈັກເກີດການຍອມຮັບທ່ານໂປໂລໃຫ້ເປັນຜູ້ນໍາໃນພວກຜູ້ປ່າວປະກາດ ຕໍ່ຈາກນັ້ນທ່ານໂປໂລໄດ້ລົງເຮືອຂ້າມຟັ່ງໄປທີ່ເມືອງເປເຄ (Perga, ເປີກ້າ) ແຂວງປໍາຟີເລັຽ (Pamphylia, ປັມຟີເລັຽ) ຊຶ່ງຢູ່ບົນຊາຍຝັ່ງຕອນໃຕ້ຂອງອາເຊັຽນ້ອຍ ທີ່ເມືອງນີ້ເອງທ່ານໂຢຮັນມາຣະໂກຊຶ່ງເປັນຜູ້ຮ່ວມທີມມີຄວາມຄິດເຫັນທີ່ແຕກຕ່າງຈາກທ່ານໂປໂລ ກໍໄດ້ດຸເດີນທາງເມືອກຸງເຢຣູຊາເລັມ (ກຈ 13:14) ທ່ານໂປໂລແລະບາຣະນາບາໄດ້ເດີນທາງຕໍ່ໄປຈົນເຖິງເມືອງອັນຕິໂອເຂັຽໃນແຂວງປີຊີເດັຽ (Pisidia) ທ່ານໂປໂລໄດ້ທໍາການປະກາດສັ່ງສອນໃນໂຮງທັມຂອງພວກຢິວ ພົບປາກົດວ່າໄດ້ມີຄົນເຊື່ອແລະຕິດຕາມຄໍາສອນຂອງທ່ານເປັນຈໍານວນຫລາຍ ເຮັດໃຫ້ເກີດການເຫິງສາ ຈຶ່ງທໍາການຄັດຄ້ານທ່ານໂປໂລແລະບາຣະນາບາຈຶ່ງກ່າວວ່າ "ຈໍາເປັນທີ່ຈະຕ້ອງກ່າວພຣະທັມຂອງພຣະເຈົ້າໃຫ້ທ່ານທັງຫລາຍຟັງກ່ອນ ແຕ່ຍ້ອນທ່ານທັງຫລາຍປັດຖິ້ມພຣະທັມນັ້ນ ແລະຖືວ່າຕົນບໍ່ສົມຄວນກັບຊີວິດອັນຕລອດໄປເປັນນິດ ດັ່ງນີ້ເຮົາກໍຈະປິ່ນຫນ້າໄປຫາພວກຕ່າງຊາດ" (ກຈ 13:46) ທ່ານທັງສອງອອກເດີນທາງຕໍ່ໄປຍັງເມືອງອີໂກນີອັນ (Iconium, ອີໂຄນຽມ) ໄດ້ເກີດເຫດລັກສນະດຽວກັນນີ້ຂຶ້ນອີກ ແຕ່ທີ່ເມືອງນີ້ ໄດ້ເກີດຄຣິສຈັກທີ່ເຂັ້ມແຂງຂຶ້ນ ທ່ານທັງສອງໄດ້ອອກເດີນທາງຕໍ່ໄປຍັງເມືອງລີຊະທາ (Lystra, ລີສຕຣາ) ໄດ້ປິ່ນປົວຄົນເປັ້ຽໃຫ້ເດີນໄດ້ ເປັນເຫດໃຫ້ຄົນຕ່າງຊາດຕື່ນເຕັ້ນເຖິງກັບນໍາເຄື່ອງບູຊາມາຖວາຍ ໂດຍຄິດວ່າທ່ານໂປໂລເປັນເທພເຈົ້າມາເກີດ ທ່ານທັງສອງໄດ້ປະຕິເສດຢ່າງເຕັມກໍາລັງວ່າ ການອັສຈັນທີ່ເກີດຂຶ້ນນັ້ນເປັນການກະທໍາຂອງພຣະເຈົ້າ ທ່ານທັງສອງເປັນຜູ້ຮັບໃຊ້ພຣະເຈົ້າມາແຈ້ງຂ່າວປະເສີດເທົ່ານັ້ນ ເຊື່ອວ່າທ່ານຕີໂມທຽວເປັນຜູ້ນຶ່ງທີ່ກັບໃຈໃນເມືອງນີ້ ແຕ່ພວກຢິວຈາກເມືອງອັນຕິໂອກແລະອີໂກນີອົມໄດ້ຕາມມາຍຸຍົງໃຫ້ເກີດການຕໍ່ຕ້ານອີກ ໄດ້ເອົາຫີນຂວ້າງໃສ່ທ່ານໂປໂລຈົນຫມົດສະຕິແລ້ວລາກອອກໄປນອກກໍາແພງເມືອງເຂົ້າໃຈວ່າທ່ານຕາຍແລ້ວ ພວກສາວົກອື່ນ ໆ ຢືນລ້ອມທ່ານໂປໂລໄວ້ ເມື່ອທ່ານໄດ້ສຕິກໍກັບເຂົ້າໄປໃນເມືອງອີກ ແລ້ວໄດ້ເດີນທາງໄປຍັງເມືອງເດຣະເບ (Derbe, ເດີບີ) ໃນວັນຮຸ່ງຂຶ້ນວຽກການທີ່ນັ້ນໄດ້ເກີດຜົນຫລາຍ ແລ້ວທ່ານກໍເດີນທາງຍ້ອນກັບໄປຕາມເສັ້ນທາງເດີມ ເພື່ອຮວມບຣວມສິດໃຫ້ເປັນກຸ່ມກ້ອນ ສັ່ງສອນໃຫ້ມີຄວາມເຊື່ອຫມັ້ນ ແລະແຕ່ງຕັ້ງໃຫ້ມີຫົວຫນ້າທີ່ຈະຮັບຜິດຊອບ (ກຈ 14:1-23) ເມື່ອໄດ້ຢ້ຽມຢາມທີ່ຕ່າງ ໆ ທົ່ວເຖິງແລ້ວ ກໍເດີນທາງກັບໄປຍັງເມືອງອັນຕິໂອເຂັຽແຂວງຊີເຣັຽອີກ ຊຶ່ງເປັນເມືອງທີ່ສົ່ງທ່ານອອກມາ ໄດ້ຣາຍງານເຖິງເຫດການທີ່ພຣະເຈົ້າໄດ້ເປີດປະຕູໃຫ້ແກ່ຄົນຕ່າງຊາດໄດ້ເຊື່ອ

## VI. ຄຣິສຈັກຂອງພຣະເຢຊູຄຣິສສຳຫຼັບທຸກຄົນ

ທີ່ເມືອງອັນຕິໂອເຂັຽນັ້ນພວກຢິວແລະຄົນຊາດອື່ນ ໆ ຮວມກັນຢູ່ໃນຄຣິສຈັກດຽວກັນ ເມື່ອທ່ານໂປໂລແລະທ່ານບາຣະນາບາອອກເທສນາສັ່ງສອນນັ້ນ ທ່ານເຫັນວ່າ ພວກຊົນຕ່າງຊາດຍິນດີພ້ອມໃຈຕ້ອນຮັບຂ່າວປະເສີດຫລາຍກວ່າພວກຢິວ ຂ່າວປະເສີດກຳລັງເດັ່ນຊັດຕໍ່ຄົນຊາດອື່ນ ໆ ໂດຍທົ່ວໄປ ແຕ່ສຳລັບພວກຢິວການຍອມຮັບຂ່າວປະເສີດນັ້ນຍາກຫລາຍ ແລະຖືວ່າເປັນປັນຫາຢ່າງໜັກທີ່ຜິດຕໍ່ທັມບັນຍັດຂອງພວກຢິວ ເພາະພວກຢິວເຫັນວ່າຮາກຖານຄວາມເຊື່ອທີ່ມີອຳນາດສູງສຸດ ທີ່ໃຊ້ເປັນພື້ນຖານການດຳເນີນຊີວິດຄື ພຣະທັມບັນຍັດ ທີ່ມີຢູ່ໃນພຣະທັມຫ້າເຫລັ້ມແຮກໃນພຣະຄຣິສທັມຄັມພີ ພ້ອມຄຳສອນຂອງບັນພະບຸຣຸດທີ່ແປລຄວາມໝາຍຂອງພຣະທັມບັນຍັດນັ້ນ ພວກຢິວໃຊ້ເປັນແນວປະຕິບັດໃນຊີວິດປະຈຳວັນ ຄວາມຫວັງຂອງພວກຢິວໃນການທີ່ຈະຮັກສາສັມພັນທະພາບກັບພຣະເຈົ້າ ອິງຢູ່ກັບຄວາມເຊື່ອຟັງພຣະທັມບັນຍັດຢ່າງສັດຊື່ຖືກົດຂໍ້ບັງຄັບຕ່າງ ໆ ທີ່ຕົກທອດມາຈາກບັນພະບຸຣຸດຢ່າງເຂັ້ມແຂງ

ບົດບັນຍັດຂອງພວກຢິວປະກອບດ້ວຍ ພິທີກັມແລະຮີດຄອງທີ່ເປັນການແຍກພວກເຂົາອອກຈາກຄົນຕ່າງຊາດ ຈາກປະວັດສາສາດຂອງຢິວທີ່ໄດ້ຜ່ານພົ້ນມາແລ້ວນັ້ນ ພຣະທັມບັນຍັດໄດ້ຊ່ວຍໃຫ້ພວກຢິວບໍ່ມີສ່ວນຮ່ວມໃນການນມັສການຮູບເຄົາຣົບຂອງພຣະຕ່າງ ແລະການນັບຖືສາສນາອື່ນ ໆ ບັດນີ້ຄວາມເຊື່ອໃນພຣະຄຣິສໄດ້ຮວມຄົນຊາດຕ່າງ ໆ ເຂົ້າເປັນພີ່ນ້ອງໃນພຣະເຈົ້າດຽວ ພຣະທັມບັນຍັດເຫລົ່ານັ້ນທີ່ພວກເຂົານັບຖືມາຈະເປັນແນວໃດ?

ເຣື້ອງທີ່ເຫັນໄດ້ຊັດວ່າເປັນປັນຫາແທ້ຄື "ພິທີຕັດ" (Circumcision) ພວກຢິວຍິນຍອມທີ່ຈະໃຫ້ຄົນຕ່າງຊາດເຂົ້າມາຮ່ວມໃນຄຣິສຈັກ ຖ້າພວກຕ່າງຊາດຍອມຜ່ານພິທີຕັດແລະຖືຮັກສາທັມນຽມ ແລະພິທີອັນສຳຄັນທີ່ໄດ້ກ່າວໄວ້ໃນທັມບັນຍັດເສັຽກ່ອນ ໃນດ້ານທາງປະຕິບັດແລ້ວພວກຢິວຕ້ອງການໃຫ້ຄົນຕ່າງຊາດທີ່ກັບໃຈນັ້ນມາເປັນຄົນຢິວເສັຽກ່ອນທີ່ຈະເປັນຄຣິສຕຽນ ໃນຂໍ້ນີ້ໂປໂລບໍ່ໄດ້ໃຫ້ຄົນຕ່າງຊາດປະຕິບັດຕາມ ສຳລັບແນວຄິດຂອງທ່ານໂປໂລແລ້ວ ທ່ານເຫັນວ່າຂ່າວປະເສີດທີ່ທ່ານນຳຄົນມາເຖິງຄວາມຣອດພົ້ນນັ້ນ ບໍ່ໄດ້ມີການຮຽກຮ້ອງໃຫ້ມີການຖືຮີດຄອງແລະການປະຕິບັດໃດ ທຸກຄົນເປັນຄົນບາບທັງນັ້ນ ຕ່າງຄົນກໍຊ່ວຍຕົວເອງບໍ່ໄດ້ ຄວາມຫວັງຂອງມະນຸດມາຈາກຂອງພຣະຣາຊທານຈາກພຣະເຈົ້າ ຖ້າຄວາມຣອດພົ້ນນັ້ນຕ້ອງອາສັຍການປະຕິບັດຕາມທັມບັນຍັດຂອງໂມເຊ ເໝືອນກັບພວກຢິວຕ້ອງການໃນຄົນຕ່າງຊາດຖືປະຕິບັດຕາມແລ້ວກໍບໍ່ມີຜູ້ໃດມາເຖິງຄວາມຣອດພົ້ນ ເມື່ອທຸກຄົນເປັນຄົນບາບ ຕາມພຣະບັນຍັດແລ້ວເຮົາທຸກຄົນກໍຖືກລົງໂທດໝົດ ເພາະບໍ່ມີຜູ້ໃດສາມາດທຳຕາມບັນຍັດຢ່າງຄົບຖ້ວນ ທີ່ສົມຄວນຈະໄດ້ຮັບຣາງວັລ ດັ່ງນັ້ນທັງຄົນຢິວແລະຄົນຕ່າງຊາດຕ້ອງໄວ້ວາງໃຈໃນພຣະເຈົ້າແລະໄດ້ຮັບການອະພັຍໂທດໄດ້ຮັບຂອງພຣະຣາຊທານຈາກພຣະເຈົ້າທີ່ຈະນຳໄປສູ່ຊີວິດໃໝ່ ການຮຽກຮ້ອງໃຫ້ຖືພິທີຕັດແລະຮັກສາພຣະບັນຍັດບໍ່ແມ່ນວ່າຈະບໍ່ເກີດຜົນເທົ່ານັ້ນແຕ່ຍັງເປັນອັນຕຣາຍດ້ວຍ ການເຮັດແນວນັ້ນເປັນການປິດບັງພຣະຄຸນຂອງພຣະເຈົ້າ ການພະຍາຍາມຮັກສາພຣະບັນຍັດໃຫ້ຄົບຖ້ວນເປັນສິ່ງທີ່ເປັນໄປບໍ່ໄດ້ ໃນເມື່ອມະນຸດຍັງເປັນຄົນບາບຢູ່ ແລະການເຮັດແນວນີ້ຍ່ອມນຳໃຫ້ເຂົາພຶ່ງໃນສິ່ງທີ່ເຂົາເຮັດບໍ່ໄດ້ພຶ່ງພຣະເຈົ້າແທ້ຈິງຄວາມຣອດຂອງມະນຸດນັ້ນໄດ້ມາໂດຍການພຶ່ງວາງໃຈໃນພຣະເຈົ້າເທົ່ານັ້ນ ສະນັ້ນສິ່ງທີ່ທ່ານໂປໂລຂໍໃຫ້ຄົນຕ່າງຊາດເຮັດນັ້ນຄື ຄວາມເຊື່ອສັດທາຢ່າງຈິງໃຈໃນພຣະຄຣິສ ແລະການດຳເນີນຊີວິດອັນປະກອບດ້ວຍຄວາມຮັກແລະຄວາມເຊື່ອຟັງຢ່າງຄຣິສຕຽນ ຊຶ່ງພຣະວິນຍານບໍຣິສຸດຈະປະທານຣິດເດດໃຫ້ດຳເນີນຊີວິດຄຣິສຕຽນຢ່າງເໝາະສົມ

ເມື່ອພວກຢິວຍົກເຣື້ອງນີ້ຂຶ້ນມາໃນເມືອງອັນຕິໂອເຂັຽທີ່ຊີເຣັຽ ພວກຜູ້ນຳກໍເອົາເຣື່ອງນີ້ໄປກຸງ

ເຢຣູຊາເລັມເພື່ອເຂົ້າປະຊຸມກັບບັນດາຜູ້ນໍາທີ່ນັ້ນ (ຄຕ 2:1-10, ກຈ 15:1-29) ໃນທີ່ສຸດທີ່ປະຊຸມໄດ້ມີຂໍ້ຕົກລົງວ່າ ພວກຄຣິສຕຽນຕ່າງຊາດບໍ່ຈໍາເປັນຕ້ອງຮັບພິທີຕັດ ແລະກົດພິທີກັມຕາມພຣະບັນຍັດເພື່ອຈະໄດ້ຮັບຄວາມຣອດພົ້ນ ມີການຕັກເຕືອນຄົນຕ່າງຊາດໃຫ້ລະເວັ້ນຈາກການລ່ວງປະເວນີ ແລະໄດ້ຂໍຮ້ອງພວກຄຣິສຕຽນຕ່າງຊາດໃຫ້ຖືກົດເຣື້ອງອາຫານບາງຂໍ້ແລະຣີດຄອງບາງຢ່າງ ເພື່ອເປັນການເຄົາຣົບຕໍ່ພວກຄຣິສຕຽນຢິວ ແລະປ້ອງກັນບໍ່ໃຫ້ຂັດໃຈກັນ (ກຈ 15:20, 29) ທີ່ປະຊຸມໄດ້ເຫັນດ້ວຍກັບທ່ານໂປໂລໃນສາຣະສໍາຄັນທີ່ວ່າ ຄົນຕ່າງຊາດບໍ່ຈໍາເປັນຕ້ອງຮັກສາພຣະບັດຍັດຕາມພວກຢິວ ຂໍ້ຕົກລົງນີ້ໄດ້ເປີດທາງໃຫ້ການປະກາດໄດ້ແຜ່ກວ້າງຂວາງຍິ່ງຂຶ້ນ

| |
|---|
| **ຈົ່ງເອົາສິ່ງທີ່ທ່ານໄດ້ສຶກສາຈາກຂ້າງເທິງເຮັດບົດຝຶກຫັດຂໍ້ທີ່ສາມ** |

## VII. ການເດີນທາງປະກາດຂ່າວປະເສີດທ່ຽວທີ່ສອງ

(ກຈ 15:36-18:22 ປະມານ ຄ.ສ. 50-52)

ການເດີນທາງໃນທ່ຽວແຣກ ໄດ້ນໍາຄວາມສໍາເຣັດແລະຄວາມຊົມຊື່ນມາສູ່ພີ່ນ້ອງຄຣິສຕຽນທີ່ສົ່ງພວກຜູ້ປະກາດອອກໄປ ດັ່ງນັ້ນພວກເຂົາຈຶ່ງມີຄວາມຕັ້ງໃຈຕ້ອງການອອກໄປປະກາດອີກ ແຕ່ກ່ອນທີ່ຈະເດີນທາງອອກໄປປະກາດໃນທ່ຽວທີ່ສອງ ທ່ານໂປໂລໄດ້ມີການຕົກລົງກັບທ່ານບາຣະນາບາເຣື້ອງໂຢຮັນມາຣະໂກ ຫລານຂອງບາຣະນາບາ ທີ່ເພິ່ນຖິ້ມງານໃນການເດີນທາງທ່ຽວທີ່ນຶ່ງແລ້ວເມືອກຸງເຢຣູຊາເລັມກ່ອນຜູ້ອື່ນ ທ່ານໂປໂລເຫັນວ່າຜູ້ທີ່ບໍ່ເດັດດ່ຽວເຊັ່ນນີ້ ບໍ່ຄວນຈະຮ່ວມຢູ່ໃນທີມງານນໍາ ດັ່ງນັ້ນຈຶ່ງໄດ້ແຍກກັນເດີນທາງໂດຍບາຣະນາບາໄປເກາະກຸບໂຣ (ເກາະໄຊປຣັສ) ກັບໂຢຮັນມາຣະໂກ ສ່ວນທ່ານໂປໂລໄດ້ເລືອກເພື່ອນຮ່ວມງານຜູ້ໃຫມ່ຊື່ "ຊີລາ"(Silas) ທ່ານໂປໂລໄດ້ໄປຢ້ຽມຢາມຄຣິສຈັກໃນແຂວງຄາລາຕັຽຕອນໃຕ້ (ກຈ 15:36-14) ເມື່ອມາເຖິງເມືອງລີຊະທາ (Lystra, ລິສຕຣາ) ກໍໄດ້ພົບກັບຊາຍຫນຸ່ມທີ່ເປັນຄຣິສຕຽນໃຫມ່ຊື່ ຕີໂມທຽວ (Timothy) ທ່ານໂປໂລຕ້ອງການນໍາທີໂມທຽວເປັນເພື່ອນຮ່ວມງານເດີນທາງໄປນໍາກັນ ທ່ານຈຶ່ງໄດ້ເຮັດພິທີຕັດໃຫ້ແກ່ຕີໂມທຽວເພາະວ່າແມ່ຂອງຕີໂມທຽວເປັນຄົນຢິວແຕ່ພໍ່ຂອງເພິ່ນເປັນຄົນກຣີກ ແລະເພື່ອເຫັນແກ່ຄວາມເຊື່ອຂອງພວກຢິວ ທ່ານໂປໂລບໍ່ຕ້ອງການໃຫ້ຕີໂມທຽວເປັນບັນຫາໃນການປະກາດຂ່າວປະເສີດ ເມື່ອທັງສາມທ່ານເດີນທາງໄປເມືອງຕ່າງ ໆ ກໍໄດ້ມອບຂໍ້ຕົກລົງຂອງພວກສາວົກແລະຜູ້ນໍາທີ່ກຸງເຢຣູຊາເລັມໃຫ້ຄຣິສຈັກໄດ້ຖືຮັກສາໄວ້ (ກຈ 16:4) ທ່ານທັງສາມໄດ້ເດີນທາງໄປທາງທິດຕາເວັນຕົກຊຽງເຫນືອເຖິງເມືອງໂທອາດ (Troas, ໂຕຣອັສ) ທ່ານໂປໂລໄດ້ຮັບນິມິດ ມີຊາຍຊາວມາເກໂດເນັຽ (Macedonia, ນາຊິໂດເນັຽ) ຄົນນຶ່ງອ້ອນວອນວ່າ "ຂໍຂ້າມມາເຖິງເມືອງມາເກໂດເນັຽນີ້ ເພື່ອຊ່ວຍພວກຂ້ານ້ອຍແດ່ທ້ອນ" (ກຈ 16:9) ພວກເຂົາໄດ້ອອກເດີນທາງໄປມາເກໂດເນັຽ ແລະພຣະທັມກິຈການ 16:10 ໄດ້ເລີ້ມຕົ້ນໃຊ້ສັພນາມວ່າພວກເຮົາ (We, ຄໍາທີ່ໃຊ້ເປັນພະຫູພົດບຸຣຸດທີ່ 3 ຫຼືບຸກຄົນຝ່າຍທີ່ສາມທີ່ມີຫລາຍກວ່າສອງຄົນຂຶ້ນໄປ) ຈາກການສຶກສາມີຄວາມເຂົ້າໃຈວ່າ ທ່ານລູກາຜູ້ຂຽນພຣະທັມກິຈການໄດ້ຮ່ວມເດີນທາງໄປດ້ວຍ ກອງປະກາດໄດ້ອອກເດີນທາງໄປຍັງເມືອງຟີລິບປອຍ (Philippi, ຟີລິປປີ) ທ່ານລູກາໄດ້ຢູ່ຕໍ່ໃນເມືອງ

ຟີລິບປອຍ ທ່ານໂປໂລນຳທອງປະກາດເດີນທາງຕໍ່ໄປຍັງເມືອງເທຊະໂລນິກ (Thessalonica, ເທຊະໂລນິກ) ເພື່ອບຸກເບີກວຽກການໃຫມ່ ການປະກາດກັບຊາວຢິວໃນໂຮງທັມໄດ້ຮັບການຕໍ່ຕ້ານ ແຕ່ການປະກາດກັບຄົນຕ່າງຊາດໄດ້ຜົລຫລາຍກວ່າ ພວກຢິວໄດ້ປຸກຣະດົມໃຫ້ເກີດຈລາຈົລຂຶ້ນ ທອງປະກາດຕ້ອງຫນີເອົາຕົວຣອດໄປເມືອງເບຣອຍອາ (Berea, ເບເຣອາ) ທີ່ເມືອງນີ້ການປະກາດໄດ້ຜົລດີໃນບັນດາຄົນຊັ້ນສູງ ຕໍ່ມາທ່ານໄດ້ເຂົ້າໄປໃນກຸງເອແທນ (Athens, ເອເທນສ໌) ແລະໄດ້ເທສນາໃນໂຮງທັມແລະໃນທີ່ຊຸມຊົນທຸກວັນ ທີ່ເມືອງນີ້ທ່ານໂປໂລຕ້ອງພະເຊີນຫນ້າແລະຖືກທ້າທາຍຈາກພວກນັກປຣາດກຸ່ມຕ່າງ ໆ ແຕ່ທ່ານກໍໄດ້ສະແດງຄວາມສາມາດແລະຕອບໂຕ້ພວກນັກປຣາດໄດ້ຢ່າງຍອດຢ້ຽມ ຄຳກ່າວຂອງທ່ານທີ່ສະພາອາເຣໂອປາໂຄ (Areopagus) ນັບວ່າເປັນຜົລງານຊັ້ນໂບວ໌ແດງທີ່ມີຄຳເວົ້າຄົມຄາຍ ແລະເນື້ອຫາທີ່ລຶກຊຶ້ງ ຈາກນັ້ນທອງປະກາດຂ່າວປະເສີດໄດ້ເດີນທາງໄປຍັງເມືອງໂກຣິນໂທ (Corinth, ໂຄຣິນທ໌) ເມືອງນີ້ເປັນສູນກາງສຳຄັນທາງທຸຣະກິຈການຄ້າຂາຍທີ່ຮັ່ງມີ ແຕ່ເຕັມໄປດ້ວຍແຫລ່ງເສື່ອມໂຊມແລະອາບາຍມຸກ ໃນຣະຍະເວລາ 18 ເດືອນຂອງການເຮັດວຽກການໄດ້ຮັບຜົນສຳເຣັດຢ່າງເດັ່ນຊັດ (ກຈ 18:1-17) ທີ່ເມືອງໂກຣິນໂທທ່ານໂປໂລໄດ້ມີອາຊີພເຢັບເຕັນຂາຍຢູ່ກັບຄອບຄົວຂອງທ່ານອາກິລາ (Achaiapc, ອາຄູລາ) ແລະພັນລະຍາຊື່ປີຊະກິລາ (Priscilla, ພຣິຊຄິລລາ) ຊຶ່ງເປັນຜູ້ອົພຍົພຫລົ້ພັຍມາຈາກກຸງໂຣມ ໃນເວລາດຽວກັນທ່ານໂປໂລໄດ້ຫາລ້ຽງຊີພແລະໄດ້ເທສນາເປັນປະຈຳຢູ່ທີ່ໂຮງທັມ ທ່ານໂປໂລມີຄວາມຊົນຊື່ນຍິນດີເມື່ອຊີລາແລະຕີໂມທຽວນຳຂ່າວມາຈາກຄຣິສຈັກໃນເມືອງເທຊະໂລນິກ ເຮັດໃຫ້ທ່ານໄດ້ຂຽນຈົດຫມາຍສອງສະບັບເຖິງຄຣິສຈັກໃນເມືອງເທຊະໂລນິກ ເມື່ອອອກເດີນທາງຕໍ່ໄປ ທ່ານໂປໂລນຳເອົາສອງສາມີພັນຣະຍາຮ່ວມເດີນທາງໄປດ້ວຍຈົນເຖິງເມືອງເອເຟໂຊ ແລ້ວໃຫ້ຄອບຄົວຂອງອາກິລາອາສັຍຢູ່ທີ່ນັ່ນ ທ່ານໄດ້ຮັບເຊີນໃຫ້ເທສນາໃນໂຮງທັມໃນເມືອງເອເຟໂຊ ແຕ່ທ່ານໄດ້ປະຕິເສດ ແລ້ວຮີບເດີນທາງໄປກຸງເຢຣູຊາເລັມ ແລ້ວເດີນທາງກັບໄປເມືອງອັນຕີໂອກໃນຊີເຣັຽ ການເດີນທາງທ່ຽວທີ່ສອງກໍສິ້ນສຸດລົງ

ໃນສິ່ງຕ່າງ ໆ ທີ່ທ່ານໂປໂລໄດ້ເຮັດໄປໃນການເດີນທາງ ສະແດງວ່າທ່ານໄດ້ເຮັດການຢ່າງມີແຜນການ ທ່ານໄດ້ໄປເມືອງທີ່ເປັນສູນກາງແລະເມືອງສຳຄັນ ໆ ໃນບ່ອນເຫລົ່ານັ້ນທ່ານໄດ້ປູກຄຣິສຈັກຂຶ້ນໂດຍຂ່າວປະເສີດ ແລະຄຣິສຈັກເຫລົ່ານີ້ໄດ້ຈະເຣີນແຜ່ຂຍາຍອອກໄປຍັງເມືອງນ້ອຍ ໆ ທີ່ຢູ່ລ້ອມຮອບ

## VIII. ການເດີນທາງປະກາດຂ່າວປະເສີດທ່ຽວທີ່ສາມ
(ກຈ 18:23-21:17 ປະມານ ຄ.ສ. 53-57)

ທ່ານໂປໂລໄດ້ເດີນທາງອອກປ່າວປະກາດຂ່າວປະເສີດຈາກເມືອງອັນຕີໂອເຊັຽອີກເທື່ອນຶ່ງ ການເດີນທາງເທື່ອນີ້ເປັນການເດີນທາງອອກໄປປ່າວປະກາດເທື່ອສຸດທ້າຍ ການຈາກໄປເທື່ອນີ້ເຮັດທ່ານໂປໂລຈະບໍ່ມີໂອກາດໄດ້ເດີນທາງກັບຍັງຫ້ອງການຂອງທ່ານທີ່ເມືອງອັນຕີໂອເຊັຽນີ້ອີກ ເພາະທ່ານໂປໂລໄດ້ຖືກຈັບຕົວຫລັງຈາກການເດີນທາງເທື່ອນີ້ ທ່ານໄດ້ເລີ້ມເດີນທາງຂ້າມເອເຊັຽນ້ອຍ ເພື່ອກັບໄປຢ້ຽມຢາມຄຣິສຈັກຕ່າງ ໆ ແລະໄດ້ຢຸດພັກຢູ່ທີ່ເມືອງເອເຟໂຊ ຊຶ່ງວຽກການໃນເມືອງນີ້ໄດ້ເກີດຜົນດີ (ກຈ 18:23-19:41) ທ່ານໄດ້ຂຽນຈົດຫມາຍໂກຣິນໂທສະບັບຕົ້ນທີ່ນັ້ນ ເມື່ອທ່ານໄດ້ເຮັດການຢ່າງຫນັກຢູ່ສາມປີແລ້ວ ທ່ານໄດ້ເດີນທາງໄປເມືອງໂກຣິນໂທແລະເມືອງອື່ນ ໆ ດ້ວຍ ແລ້ວເດີນທາງໄປທາງເຫນືອຂ້າມອາເຊັຽນ້ອຍຢ້ຽມຢາມແຂວງມາເກໂດເນັຽ (Macedonia, ມາຊີໂດເນັຽ) ທີ່ເມືອງນີ້ທ່ານໄດ້ຂຽນຈົດຫມາຍໂກຣິນໂທສະບັບທີ່ສອງ ແລ້ວເດີນທາງໄປກຣີກ ທ່ານໄດ້ຢູ່ໃນກຣີກໄດ້ສາມເດືອນທ່ານກໍ

ເດີນທາງເມືອງກຸງເຢຣູຊາເລັມໂດຍຜ່ານແຂວງມາເກໂດເນັຽ ແລ້ວແລ່ນເຮືອລົງມາຕາມຝັ່ງຕາເວັນຕົກຂອງອາເຊັຽນ້ອຍ ເດີນທາງຕໍ່ໄປຈົນເຖິງກຸງເຢຣູຊາເລັມ ເພື່ອໃຫ້ທັນເທສການເພັນເຕຄອສ (ກຈ 20:1-21:16) ທ່ານໄດ້ຮັບເງິນຫລາຍຈາກການຖວາຍຂອງຄຣິສຈັກຂອງຄົນຕ່າງຊາດ ເພື່ອນໍາໄປຊ່ວຍເຫລືອຄຣິສຕຽນຢິວທີ່ຍາກຈົນໃນກຸງເຢຣູຊາເລັມ (1 ກທ 16:1-4, 2 ກທ ບົດ 8, 9, ຣມ 15:25-27, ກຈ 24:17) ດ້ວຍຄວາມເຫັນອົກເຫັນໃຈແລະການແບ່ງປັນຂອງຄຣິສຕຽນນີ້ ທ່ານຫວັງທີ່ຈະຜູກມັດຄຣິສຕຽນທັງສອງຝ່າຍຄືຄຣິສຕຽນຢິວແລະຄຣິສຕຽນຕ່າງຊາດໃຫ້ເຂົ້າກັນ ຫລັງຈາກນັ້ນທ່ານກໍຫວັງທີ່ຈະເທສນາໃນປະເທດສະເປັນ (Spain)

## IX. ການເດີນທາງຂອງທ່ານໂປໂລຈາກກຸງເຢຣູຊາເລັມສູ່ກຸງໂຣມ

(ກຈ 21:18-28:31 ປະມານ ຄ.ສ.57-64)

ພວກຢິວທີ່ເປັນສັດຕູເກົ່າຂອງທ່ານໂປໂລໄດ້ທໍາຮ້າຍແຜນການຂອງທ່ານ ໃນຂະນະທີ່ທ່ານໄປທີ່ພຣະວິຫານພວກກໍ່ກວນໄດ້ສ້າງບັນຫາຂຶ້ນກັບທ່ານແລະພຍາຍາມຈະເອົາຊີວິດຂອງທ່ານ ສ້າງເຣື້ອງຂຶ້ນວ່າທ່ານໂປໂລເປັນຜູ້ທີ່ເຮັດໃຫ້ວິຫານເປັນມົລທິນ ທ່ານໂປໂລຣອດຕາຍຈາກຝູງຊົນໂດຍນາຍທຫານໂຣມຜູ້ທີ່ຊ່ວຍທ່ານໄວ້ໄດ້ດ້ວຍການຈັບກຸມທ່ານໄວ້ ທ່ານໂປໂລພິສູດຕົວເອງວ່າທ່ານນັ້ນເປັນຜູ້ທີ່ຈິງຮັກພັກດີຕໍ່ຊາວຢິວ ໂດຍຂໍອະນຸຍາດຢືນຂຶ້ນກ່າວໃຫ້ຝູງຊົນຟັງເທິງບັນໄດປ້ອມທຫານ ຝູງຊົນສະງົບຟັງດ້ວຍຄວາມຕັ້ງໃຈເພາະທ່ານເວົ້າເປັນພາສາເຮັບເຣີ ເລົ່າເຣື້ອງຊີວິດຕົນເອງວ່າເຕີບໂຕຂຶ້ນມາເປັນຢິວແນວໃດເຄັ່ງຄັດໃນສາສນາຢິວ ໄດ້ພະຍາຍາມທໍາລາຍລ້າງພວກຄຣິສຕຽນ ແຕ່ເຫດການຣະຫວ່າງທາງໄປເມືອງດາມາເຊເປັນເຫດໃຫ້ປ່ຽນແປງຊີວິດ ກາຍເປັນຜູ້ຮັບຄໍາສັ່ງໃຫ້ອອກທໍາງານຮັບໃຊ້ພຣະເຢຊູສໍາຫຼັບຄົນຕ່າງຊາດ ພໍເຖິງຈຸດນີ້ ຝູງຊົນກໍໂຫ່ຮ້ອງສະແດງຄວາມຄຽດຕໍ່ທ່ານ ເມື່ອທຫານໂຣມັນເຫັນວ່າຈະເກີດການຈະລາຈົນຈຶ່ງນໍາຕົວທ່ານໂປໂລໄປເພື່ອຈະບີບຄັ້ນເອົາຄວາມຈິງ ໂດຍສັ່ງໃຫ້ຄຽ່ນຕີ ແຕ່ທ່ານໂປໂລໄດ້ອ້າງສິດທິ ວ່າເປັນຄົນທີ່ມີສັນຊາດໂຣມັນໂດຍກໍາເນີດ ເປັນເຫດໃຫ້ທຫານແລະນາຍພັນຕົກໃຈແລະຢ້ານມີຄວາມຜິດຈຶ່ງໄດ້ແກ້ເຊືອກມັດທ່ານອອກ ນາຍພັນໄດ້ພາທ່ານໂປໂລໄປໄຕ່ສວນຕໍ່ໜ້າສະພາແລະມະຫາປຸໂຣຫິດ ກໍ່ຄວາມວຸ່ນວາຍອີກ ຈົນຕ້ອງພາຕົວທ່ານໂປໂລກັບມາໄວ້ໃນກົມທຫານອີກ ໃນຄືນນັ້ນພຣະເຈົ້າມາປາກົດແກ່ທ່ານໂປໂລຕັດວ່າ "ເຈົ້າຈົ່ງມີໃຈກ້າ ເພາະວ່າເຈົ້າໄດ້ເປັນພະຍານຝ່າຍເຮົາໃນກຸງເຢຣູຊາເລັມຢ່າງໃດ ເຈົ້າຈະຕ້ອງເປັນພະຍານໃນກຸງໂຣມຢ່າງນັ້ນເໝືອນກັນ" (ກຈ 23:11) ເມື່ອນາຍພັນຮູ້ແຜນການຂອງພວກຢິວທີ່ກໍາລັງຈະເອົາຊີວິດຂອງທ່ານໂປໂລ ຈຶ່ງສົ່ງທ່ານໂປໂລໄປຕິດຄຸກທີ່ເມືອງກາຍຊາເຣັຽ (Caesarea, ຊີຊາຣີຢາ) ຮອດສອງປີ ທ່ານໄດ້ມີຄໍາຮ້ອງອຸທອນໄປຍັງຈັກພັດຊີຊາຣ໌ທີ່ກຸງໂຣມ ເພື່ອທີ່ຈະໄດ້ຮັບຄວາມຍຸຕິທັມໃນການດໍາເນີນຄດີ ອັນເປັນເອກສິດຢ່າງນຶ່ງຂອງຜູ້ທີ່ມີສັນຊາດໂຣມັນ ແລະເປັນການປ້ອງກັນບໍ່ໃຫ້ເຂົານໍາຕົວທ່ານກັບໄປທີ່ກຸງເຢຣູຊາເລັມ ຊຶ່ງເປັນທີ່ທີ່ພວກຢິວຕ້ອງການຂ້າທ່ານ ໃນທີ່ສຸດທ່ານໂປໂລໄດ້ຮັບອະນຸຍາດໃຫ້ໄປດໍາເນີນຄດີທີ່ກຸງໂຣມໂດຍເຮືອສິນຄ້າ (ກຈ 25:1-12) ການເດີນທາງຫຼ້ອນີ້ນັບໄດ້ວ່າເປັນຫຼ້ອທີ່ສີ່ ເຖິງແມ່ນວ່າຈະບໍ່ຖືວ່າເປັນງານປະກາດຂ່າວປະເສີດໂດຍກົງທີ່ຄຣິສຈັກສົ່ງທ່ານອອກໄປ ແຕ່ກໍມີຄວາມສໍາຄັນໃນປະວັດການຂຍາຍງານຂອງຄຣິສຈັກດ້ວຍ ການເດີນທາງໃນສາມຫຼ້ອກ່ອນນັ້ນເປັນການຮັບໃຊ້ຂອງທ່ານໂປໂລທີ່ຢູ່ໃນພາກຕາວັນອອກຂອງທະເລເມດິເຕີເຣນຽນ ແຕ່ໃນທ່ຽວທີ່ສີ່ນີ້ເປັນການເລີ່ມຕົ້ນຂອງການຂຍາຍອານາເຂດຂອງຄຣິສຈັກໄປທາງຕາວັນຕົກ ຊຶ່ງມີກຸງໂຣມເປັນຈຸດສູນກາງ ແລະເປັນທີ່ເຊື່ອໄດ້ວ່າທ່ານໂປໂລໄດ້ເດີນທາງໄປເຖິງ

ສະເປນອີກດ້ວຍ

ທ່ານໂປໂລໄດ້ຖືກສົ່ງຕົວໃນປະມານປີ ຄ.ສ. 60 ພາຍໃຕ້ການຄວບຄຸມຂອງນາຍຮ້ອຍຊື່ຢູລີໂອ (Julius, ກຈ 27:1) ມີທໍ່ລູກາແລະອາຣິດຕາໂຂຮ່ວມເດີນທາງໄປນຳ ທ່ານລູກາໄດ້ບັນທຶກເລື້ອງຣາວການເດີນທາງໄປຈົນກະທັ້ງເຖິງກຸງໂຣມໄວ້ຢ່າງລະອຽດຊັດແຈ້ງ ດ້ວຍຄວາມເຂົ້າໃຈຂອງທ່ານລູກາຜູ້ມີຄວາມຮູ້ໃນເລື້ອງການເດີນທາງໃນທາງທະເລ ແລະດ້ວຍສາຍາຂອງທ່ານລູກາຜູ້ທີ່ໄດ້ປະສົບພົບເຫັນດ້ວຍຕົນເອງ ເຮືອທີ່ເດີນທາງໄປປະສົບກັບຄລື່ນລົມຢ່າງຮຸນແຮງ ຈຶ່ງເຮັດໃຫ້ການເດີນທາງຕ້ອງເສັຽເວລາຫລາຍ ໃນທີ່ສຸດຕ້ອງພະເຊີນກັບລົມພາຍຸເຮັດໃຫ້ເຮືອແຕກ ຈຶ່ງຕ້ອງຕົກຄ້າງຢູ່ທີ່ເກາະມອລຕາ (Malta, ມອລຕາ) ທຸກຄົນເອົາຕົວຣອດໂດຍເກາະໄມ້ກະດານ ບໍ່ມີຜູ້ໃດເສັຽຊີວິດຕາມຄຳຂອງທ່ານໂປໂລ ຊາວເກາະໄດ້ໃຫ້ການຕ້ອນຮັບຢ່າງດີຍິ່ງ ຕ້ອງຕົກຄ້າງຢູ່ສາມເດືອນ ມີເຮືອບັນທຸກເຂົ້າສາລີລຳໃຫມ່ມາຈາກອາເລັກຊັນເດັຽ ຈຶ່ງໄດ້ໂດຍສານຕໍ່ໄປຈົນເຖິງກຸງໂຣມ

ໃນກຸງໂຣມທ່ານໂປໂລໄດ້ຖືກຕິດຄຸກຢູ່ສອງປີເພື່ອຣໍຄອຍການພິຈາຣະນາຄດີ ໃນຣະຫວ່າງນັ້ນເອງທ່ານມີໂອກາດທີ່ຈະເຮັດພຣະຣາຊກິຈຂອງພຣະເຈົ້າໄດ້ຢ່າງເຕັມທີ່ ໃນຊ່ວງເວລານີ້ທ່ານໄດ້ມີເວລາທີ່ຈະຢູ່ກັບທີ່ ຈຶ່ງສາມາດໃຊ້ເວລາໃຄ່ຄວນແລະໄດ້ຂຽນຈົດຫມາຍ ຟີເລໂມນ ໂກໂລຊາຍ ເອເຟໂຊ ແລະຟີລິບປອຍ ພຣະທັມກິຈການບໍ່ໄດ້ບອກເຖິງຜົລການຕັດສິນຄດີຂອງທ່ານ ແຕ່ມີຕຳນານໂບຮານກ່າວວ່າ ທ່ານໂປໂລໄດ້ຮັບການປລົດປ່ອຍຫລັງຈາກຈຳຄຸກເປັນເວລາ 2 ປີ ຫລັງຈາກນັ້ນກໍສັນນິຖານວ່າໃນຣະດູໃບໄມ້ໂປ່ງ ຄ.ສ.63 ທ່ານໂປໂລໄດ້ເດີນທາງໄປທາງຕະວັນອອກຂອງກຸງໂຣມອີກ ຍັງເມືອງເອເຟໂຊແລ້ວຈັດໃຫ້ທ່ານຕີໂມທຽວປະຈຳຢູ່ທີ່ນັ້ນ ແລ້ວທ່ານໂປໂລກໍເດີນທາງຕໍ່ໄປຍັງແຂວງມາເກໂດເນັຽ (1 ຕທ 1:3) ໄດ້ມອບໃຫ້ທ່ານຕີໂຕຢູ່ທຳງານທີ່ເກາະກະເຣເຕ ເພື່ອໃຫ້ງານປະກາດຂ່າວປະເສີດທີ່ຄ້າງຢູ່ໄດ້ສຳເຣັດ ທ່ານໂປໂລຂຽນຈົດຫມາຍເຖິງຕີໂຕແລ້ວບອກວ່າໃນຣະດູຫນາວທ່ານຈະຍັງຢູ່ທີ່ນີໂກໂປລີສຈາກເມືອງນີ້ເອງ ທີ່ມີຂໍ້ສັນນິຖານວ່າທ່ານໂປໂລອາຈຈະເດີນທາງໄປສເປນ ແລະໄດ້ປະກາດຢູ່ທີ່ນັ້ນຊຶ່ງເປັນເວລາດຽວກັນກັບການຂົ່ມເຫັງໃຫຍ່ທີ່ເກີດຂຶ້ນຈາກນ້ຳມືຂອງຈັກພັດນີໂຣທີ່ກຸງໂຣມແນປີ ຄ.ສ.64 ຈາກຈົດຫມາຍທີ່ມີໄປເຖິງຕີໂມທຽວສະບັບທີ່ສອງ ທຳໃຫ້ເຮົາໄດ້ເຫັນຊັດແຈ້ງວ່າທ່ານໂປໂລໄດ້ຄືນມາເປັນນັກໂທດທີ່ກຸງໂຣມອີກເປັນເທື່ອທີ່ສອງ ໃນເທື່ອນີ້ທ່ານໂປໂລໄດ້ຖືກຈຳຈອງຢ່າງເຂັ້ມງວດໃນຖານະອາຊະຍາກອນ (ເພາະການຂົ່ມເຫັງຄຣິສຕຽນໄດ້ຫນັກຫລາຍຂຶ້ນກວ່າເມື່ອກ່ອນ) ທ່ານໂປໂລໄດ້ຖືກປະຫານຊີວິດທີ່ກຸງໂຣມຣາວ ຄ.ສ.66 ຫຼືບໍ່ເຊັ່ນນັ້ນກໍຕົ້ນປີ ຄ.ສ.67

| |
|---|
| **ຈົ່ງເອົາສິ່ງທີ່ທ່ານໄດ້ສຶກສາຈາກຂ້າງເທິງເຮັດບົດຝຶກຫັດຂໍ້ທີ່ສີ່** |

## X. ລັກສນະຄວາມເປັນບຸກຄົນຂອງທ່ານໂປໂລ

ລັກສນະເດັ່ນຂອງທ່ານໂປໂລຄື ເຊື້ອສາຍຂອງທ່ານເປັນຄົນຢິວແລະເຊື່ອຖືໃນສາສນາຢິວ ຕລອດຊີວິດຂອງທ່ານມີຄວາມສຳນຶກຢູ່ສະເມີວ່າ ທ່ານຮ່ວມຢູ່ໃນຊົນຊາດທີ່ເປັນປະຊາກອນຂອງພຣະເຈົ້າ (ຣມ 11:1) ທ່ານມີຄວາມມຸ່ງຫວັງຢູ່ສະເມີທີ່ຈະເຫັນພຣະປະສົງຂອງພຣະເຈົ້າສຳເຣັດ ດັ່ງທີ່ຊາວຢິວທັງຫລາຍໄດ້ຕັ້ງຄວາມຫວັງໄວ້ ໃນການປະກາດສິດສອນຂອງທ່ານໂປໂລນັ້ນ ເຣື່ອງສຳຄັນທີ່ທ່ານສອນມັກ

ຈະເປັນເຣື່ອງທີ່ຊາວຢິວມີຄວາມເຂົ້າໃຈ ອັນກ່ຽວກັບທັມບັນຍັດ ຄວາມເຊື່ອ ພຣະສັນຍາ ຄວາມຊອບທັມຂອງພຣະເຈົ້າ ການພິພາກສາ ແລະພຣະວິນຍານເປັນຕົ້ນ ເຖິງປານນີ້ສິ່ງທີ່ທ່ານປະກາດສັ່ງສອນກໍບໍ່ໄດ້ເປັນທີ່ຕ້ອນຮັບຂອງພີ່ນ້ອງຊາວຢິວທີ່ຖືສາສນາດຽວກັບທ່ານ ທ່ານໂປໂລເປັນຊາວຢິວທີ່ບໍ່ໄດ້ຢູ່ໃນແຜ່ນດິນອິສຣາເອລ ແຕ່ໃຫຍ່ຢູ່ໃນຕ່າງແດນທີ່ໄດ້ຮັບອິດທິພົນຈາກພວກນິຍົມກຣິກ ທ່ານໃຊ້ພຣະຄັມພີຂອງຊາວຢິວສະບັບແປເປັນພາສາກຣີກ (LXX) ທ່ານເປັນຜູ້ທີ່ມີຄວາມຮູ້ພາສາກຣີກດີ ແລະໄດ້ຮັບອິດທິພົນດ້ານຄວາມຄິດຈາກທາງດ້ານຕາວັນອອກ ທີ່ເຜີຍແຜ່ໃນບໍຣິເວນແຖບເມຣິເຕີເຣນຽນໃນສມັຍນັ້ນ ທ່ານຫັນມາເປັນຄຣິສຕຽນແລະມີຄວາມຮັບຜິດຊອບໃນປະກາດຂ່າວປະເສີດແລະການນຳພາພີ່ນ້ອງຊາວຢິວ ພ້ອມຄົນຊາດອື່ນໃຫ້ມາເຖິງຄວາມຣອດພົ້ນ ໂດຍຖືວ່າເປັນສິ່ງສຳຄັນທີ່ສຸດ ການຂຽນຂອງທ່ານໄດ້ອ້າງອີງສະເພາະທີ່ມາຈາກພຣະຄັມພີພາກພັນທະສັນຍາເດີມເທົ່ານັ້ນ ແຕ່ຄວາມຄິດເຫັນຂອງທ່ານນັ້ນກວ້າງຂວາງເພາະວ່າທ່ານເຄີຍຢູ່ໃນເມືອງທີ່ມີຄວາມຈະເຣີນແລະຄວາມກ້າວໜ້າ ເຮັດໃຫ້ການຂຽນຂອງທ່ານເປັນແບບເຂົ້າໃຈຄວາມຄິດຂອງຄົນຮ່ວມສມັຍຂອງທ່ານ (ທັນສມັຍໃນເວລານັ້ນ) ຈົດໝາຍທຸກສະບັບຂອງທ່ານຈະປາກົດເດັ່ນວ່າພຣະຄຣິສເປັນຈຸດສູນກາງແຫ່ງຄວາມຄິດຂອງທ່ານສະເມີ ສິ່ງທີ່ເຮົາພົບໃນຕົວຂອງທ່ານຄື ຊີວິດຂອງທ່ານທີ່ເປັນແບບຢ່າງ ແມ່ນວ່າທ່ານໂປໂລຈະໄດ້ຮັບອິດທິພົນຈາກສິ່ງແວດລ້ອມ ແລະວັທນາທັມຫລາຍປະການກໍຕາມ ແຕ່ທ່ານກໍໄດ້ຂຽນຈົດໝາຍຕາມແບບລັກສນະເດັ່ນຂອງທ່ານເອງ ທ່ານບໍ່ໄດ້ມີເຈຕນາໃນການຂຽນໃຫ້ເປັນເອກສານທາງສາສນາສາດ ແຕ່ກໍມີຄວາມໝາຍສຳຄັນທີ່ຊ່ວຍໃຫ້ເຮົາໄດ້ເຂົ້າໃຈໃນຫລັກຄວາມເຊື່ອທີ່ຊັດແຈ້ງ ຈົດໝາຍຕ່າງ ໆ ຂອງທ່ານໂປໂລຊີ້ໃຫ້ເຮົາໄດ້ເຫັນວ່າທ່ານມີແນວຄວາມຄິດແລະບຸຄລິກລັກສນະສລຸບໄດ້ດັ່ງນີ້

**1. ທ່ານໂປໂລເປັນນັກຕໍ່ສູ້** ທ່ານບໍ່ຍອມເລີກລົ້ມສິ່ງນຶ່ງສິ່ງໃດງ່າຍ ໆ ແມ່ນວ່າມີຫລາຍປະການທີ່ທ່ານຕ້ອງຕໍ່ສູ້ດີ້ນຣົນຢູ່ກັບຄວາມຄິດພາຍໃນຕົວທ່ານ ແລະສຖານການຮອບຕົວທ່ານ ທ່ານເກີດມາໃນຖ້າມກາງວັທນະທັມທີ່ເຕັມໄປດ້ວຍການຂັດແຍ້ງ ດ້ານນຶ່ງຄື ມໍຣະດົກແຫ່ງຄວາມເຊື່ອໃນສາສນາຢິວທີ່ທ່ານຖືຢ່າງເຄັ່ງຄັດ ທ່ານເປັນຊາວຢິວ ເປັນຊົນກຸ່ມນ້ອຍທີ່ມີຄວາມຈົງຮັກພັກດີຢ່າງໝັ້ນຄົງຕໍ່ອົງພຣະຜູ້ເປັນເຈົ້າອີກດ້ານນຶ່ງທ່ານຢູ່ໃນຖ້າມກາງວັທນະທັມຂອງຊົນກຸ່ມໃຫຍ່ຄືຊາວກຣີກແລະຊາວໂຣມັນທີ່ເຊື່ອຖືໃນຫລາຍ ໆ ສາສນາ ແລະພຍາຍາມຈະແຊກຊຶມເຂົ້າໄປຢູ່ໃນທຸກວັທນະທັມທີ່ມີຢູ່ໃນສມັຍນັ້ນ ຣວມທັງຣີດຄອງຂອງຢິວດ້ວຍ ຊາວຢິວທີ່ຢູ່ນອກແຜ່ນດິນພາເລສໄຕນ໌ຈະວາງຕົວຫຼືປະຕິບັດຕົນເພື່ອຕໍ່ຕ້ານກັບວັທນະທັມອື່ນ ໆ ທີ່ຢູ່ລ້ອມຮອບຕົວທີ່ພຍາຍາມແຊກແຊງເຂົ້າມາໃນຣີດຄອງຂອງເຂົາ ໃນ 1 ກທ 8:10 ຊີ້ໃຫ້ເຫັນວ່າທ່ານໂປໂລໄດ້ໃຊ້ເວລາແລະຄວາມຄິດຢ່າງຫລາຍ ທີ່ຈະກ່າວເຖິງແລະອະທິບາຍຄວາມກ່ຽວຂ້ອງ ແລະຄວາມສັມພັນຂອງຄຣິສຕຽນກັບປະເພນີທາງສາສນາທີ່ລ້ອມຮອບຕົວ ພຣະທັມຕອນນີ້ເປັນຫລັກຖານຊີ້ໃຫ້ເຫັນວ່າທ່ານໂປໂລມີປະສົບການແລະຕໍ່ສູ້ກັບປັນຫາຕ່າງ ໆ ເຫລົ່ານັ້ນມາດົນນານແລ້ວ

ທ່ານໂປໂລເປັນນັກຕໍ່ສູ້ດ້ານຄວາມຄິດແລະຈິດໃຈ ຈະເຫັນໄດ້ວ່າທ່ານມີການຕໍ່ສູ້ພາຍໃນຈິດໃຈຂອງທ່ານໃນເຣື່ອງການຍອມເຊື່ອຟັງແລະຍອມເສັຽສລະຖວາຍຊີວິດເພື່ອພຣະຄຣິສ ແຕ່ວ່າຕ້ອງຕໍ່ສູ້ກັບຄວາມຮູ້ສຶກຝ່າຍເນື້ອໜັງ ການຕໍ່ສູ້ນີ້ຄືກັບເສິກສົງຄາມພາຍໃນຕົວທ່ານ ແມ່ນວ່າຊີວິດຂອງທ່ານໄດ້ຊັຍຊນະ ແລະປາກົດເດັ່ນໃຫ້ເຫັນເຖິງການຍອມເສັຽສລະ ການຖວາຍຊີວິດຈົນໝົດສິ້ນໃນການຮັບໃຊ້ອົງພຣະຜູ້ເປັນເຈົ້າ ແຕ່ການຕໍ່ສູ້ຕໍ່ຄວາມຮູ້ສຶກຂອງຈິດໃຈແລະເນື້ອໜັງກໍມີຢູ່ບໍ່ເຊົາ ທ່ານໂປໂລຕ້ອງເຂັ້ມແຂງແລະເອົາຊນະຕໍ່ຄວາມຮູ້ສຶກທີ່ອ່ອນແອຂອງເນື້ອໜັງ ດັ່ງທີ່ໄດ້ປາກົດໃນຂໍ້ຂຽນຂອງທ່ານ ທ່ານໂປໂລມັກຈະເອົາສອງສິ່ງມາສົມທຽບກັນ ຕົວຢ່າງເຣື່ອງຈິດວິນຍານກັບເນື້ອໜັງ ຄວາມຣອດພົ້ນໂດຍຄວາມເຊື່ອສັດທາກັບຄວາມຣອດໂດຍການກະທຳຫຼືຄວາມປະພຶດ ພຣະກະຣຸນາທິຄຸນກັບການເຮັດເພື່ອຮັບຣາງວັນ

ການສືບທຽບວິທີນີ້ເຮັດໃຫ້ເຮົາເກີດຄວາມເຂົ້າໃຈຊັດແຈ້ງຍິ່ງຂຶ້ນ ຊຶ່ງນໍາເຮົາມາເຖິງຈຸດທີ່ຈະຕ້ອງຕັດສິນໃຈແລະຮັບເອົາຄວາມຄິດອັນຖືກຕ້ອງຂອງທ່ານໄວ້

**2. ທ່ານໂປໂລເປັນຜູ້ມີຄວາມສັນຕິສຸຂພາຍໃນ** ແມ່ນວ່າທ່ານໂປໂລຕ້ອງຕໍ່ສູ້ກັບຫລາຍສິ່ງຫລາຍຢ່າງ ແຕ່ທ່ານກໍເປັນຜູ້ມີສັນຕິສຸຂພາຍໃນຈິດໃຈຄືກັນ ທ່ານເປັນບຸກຄົນທີ່ມີແນວຄວາມຄິດຫນັກແຫນ້ນຫມັ້ນຄົງ ທ່ານມີຄວາມສະລຽວສະລາດແລະເປັນຜູ້ນໍາທີ່ເຂັ້ມແຂງ ເປັນບຸກຄົນທີ່ເດັ່ນໃນຈໍານວນຄົນທັງຫລາຍທີ່ຕິດຕາມພຣະຄຣິສ ບາງເທື່ອທ່ານຈະຕ້ອງຜະເຊີນກັບຄວາມສັບສົນວຸ່ນວາຍໃນສະຖານການຮອບດ້ານ ອາຈຈະເປັນຄວາມອຶດຍາກ ຫຼືຄວາມອຸດົມສົມບູນ ທ່ານກໍເປັນຜູ້ທີ່ມີສັນຕິສຸຂແລະມີຄວາມຊົມຊື່ນຍິນດີໃນພຣະຄຣິສ "ຂ້າພະເຈົ້າສາມາດສູ້ກັບທຸກສິ່ງໄດ້ໂດຍພຣະອົງຜູ້ຊົງຊູກໍາລັງຂ້າພະເຈົ້າ" (ຟປ 4:13) ທ່ານມີຄວາມເຊື່ອວ່າ "ພຣະເຈົ້າຊົງຊ່ວຍກັບຄົນທັງຫລາຍທີ່ຮັກພຣະອົງ ເພື່ອໃຫ້ເກີດຜົນດີໃນທຸກສິ່ງ" (ຣມ 8:28) ແລະມີຄວາມເຊື່ອຫມັ້ນວ່າ "..ສິ່ງອື່ນໃດທີ່ໄດ້ຊົງສ້າງແລ້ວນັ້ນກໍດີ ກໍຈະບໍ່ສາມາດເຮັດໃຫ້ພວກເຮົາຂາດຈາກຄວາມຮັກຂອງພຣະເຈົ້າ ຊຶ່ງມີຢູ່ໃນພຣະຄຣິສເຈົ້າຂອງເຮົາທັງຫລາຍນັ້ນ" (ຣມ 8:39) ແມ່ນວ່າທ່ານຈະມີຄວາມຍາກລໍາບາກລ້ອມຮອບທ່ານ ຈົນມືດມົນກໍຕາມສິ່ງຕ່າງໆເຫລົ່ານັ້ນບໍ່ໄດ້ເຮັດໃຫ້ທ່ານຫມົດຫວັງ ທ່ານສອນແລ້ວວ່າກໍາແພງແຫ່ງການແບ່ງແຍກມະນຸດອອກຈາກກັນ ບັດນີ້ຖືກທໍາລາຍລົງແລ້ວຄື ບໍ່ມີການແບ່ງແຍກການເປັນທາສແລະອິສຣະພາບ ບໍ່ມີການແບ່ງແຍກວ່າເປັນຢິວຫຼືຄົນຕ່າງຊາດ ເປັນຊາຍຫຼືເປັນຍິງອີກຕໍ່ໄປ ເຮົາເປັນອັນນຶ່ງອັນດຽວກັນໃນພຣະເຢຊູຄຣິສ (ກທ 3:23-28) ເພາະວ່າຂ່າວປະເສີດທີ່ທ່ານຍຶດຫມັ້ນນັ້ນ ເຮັດໃຫ້ສິ່ງທີ່ແຕກແຍກກັນນັ້ນຫມົດສິ້ນໄປ ທ່ານເຫັນວ່າແຕ່ລະບຸກຄົນມີຄວາມສໍາຄັນ ແມ່ນວ່າຜູ້ເລັກນ້ອຍທີ່ສຸດໃນພຣະເຢຊູຄຣິສກໍເປັນບຸກຄົນທີ່ມີຄວາມສໍາຄັນຍິ່ງຕາມພຣະປະສົງຂອງພຣະເຈົ້າ ທ່ານຖືວ່າ "ຖ້າພວກເຮົາມີຊີວິດຢູ່ໂດຍພຣະວິນຍານ ກໍຈົ່ງດໍາເນີນຊີວິດໄປຕາມພຣະວິນຍານດ້ວຍ ເຮົາຢ່າເປັນຄົນຖືຕົວລ້າ ໆ ຢ່າກຸກກວນໃຈກັນ ແລະຢ່າອິດສາກັນແລະກັນ" (ຄຕ 5:25-26) ຜູ້ທີ່ດໍາເນີນຕາມພຣະວິນຍານມີສັນຕິສຸຂແລະສາມາດເຂົ້າກັນໄດ້ໃນເຣື້ອງຄວາມຄິດເຫັນແລະການຢູ່ຮ່ວມກັບຄົນອື່ນ ບໍ່ໄດ້ເຫັນວ່າຜູ້ອື່ນມີຄຸນຄ່າຕໍ່າຕ້ອຍ ສິ່ງເຫລົ່ານີ້ຈະນໍາຄວາມສັນຕິສຸຂພາຍໃນມາ ຊຶ່ງຄຣິສຕຽນຕ້ອງເປັນແບບຢ່າງດ້ວຍ ເພາະວ່າ "ເຈົ້າທັງຫລາຍບໍ່ຮູ້ຫຼືວ່າ ໄພ່ພົນຂອງພຣະເຈົ້າຈະພິພາກສາໂລກ" (1 ກທ 6:2) ທ່ານສອນວ່າຄຣິສຕຽນຈະຕ້ອງເປັນຜູ້ນັ່ງບັນລັງພິພາກສາຮ່ວມກັບພຣະຄຣິສ ແຕ່ຖ້າຄຣິສຕຽນບໍ່ທໍາຈິດໃຈແລະວາງຕົວໃຫ້ເຫມາະສົມແລ້ວ ຈະເປັນຜູ້ໃຫ້ຄວາມຍຸຕິທັມແກ່ຜູ້ອື່ນບໍ່ໄດ້ ຈິດໃຈທີ່ມີຄວາມສັນຕິສຸຂໃນພຣະຄຣິສນໍາຄວາມຍຸຕິທັມມາສູ່ຊີວິດຂອງເຮົາແລະຜູ້ອື່ນ ດັ່ງທີ່ເຮົາໄດ້ພົບໃນຊີວິດຂອງທ່ານໂປໂລ ທີ່ມີຄວາມຫນັກແຫນ້ນ ບໍ່ວ່າສິ່ງໃດຈະເກີດຂຶ້ນ ພຣະຄຣິສຢູ່ໃນໃຈຂອງທ່ານສະເມີ ຄວາມສັນຕິສຸຂເກີດຂຶ້ນໃນຕົວທ່ານເຮັດໃຫ້ມີຄວາມຍຸຕິທັມໃນການພິຈາຣະນາສິ່ງຕ່າງ ໆ

**3. ລັກສນະທ່າທາງຂອງທ່ານໂປໂລ** ຫລັກຖານທີ່ເຮົາມີຢູ່ບໍ່ພຽງພໍທີ່ຈະຊ່ວຍໃຫ້ເຮົາສາມາດວາດພາບໄດ້ວ່າທ່ານໂປໂລມີລັກສນະຮ່າງກາຍແລະຫນ້າຕາເປັນແນວໃດ ແຕ່ຄໍາເວົ້າຈາກຈົດຫມາຍຂອງທ່ານ ທ່ານໂປໂລຂຽນໄວ້ວ່າທ່ານມີພຍາດເຮື້ອຮັງປະຈໍາຕົວທີ່ບໍ່ຫາຍຂາດ ທ່ານໄດ້ທູນຂໍໃຫ້ພຣະເຈົ້າຊ່ວຍເຖິງສາມເທື່ອແຕ່ກໍບໍ່ໄດ້ຮັບຄໍາຕອບ ຈົນທ່ານເຫັນວ່າຄວາມອ່ອນແອຂອງຮ່າງກາຍນີ້ ເປັນບົດຮຽນຊີວິດຂອງທ່ານ (2 ກທ 12:7-8) ທ່ານມີສາຍຕາບໍ່ເຫັນຮຸ່ງ (ຄທ 6:11) ຖ້າເຮົາອ່ານໃນ 2 ກທ 11:24-29 ທ່ານໂປໂລກ່າວວ່າ "ພວກຢິວໄດ້ຂຽນຂ້າພະເຈົ້າຫ້າເທື່ອ ເທື່ອລະສາມສິບເກົ້າບາດ ຂ້າພະເຈົ້າໄດ້ຖືກຂຽນດ້ວຍແສ້ຫວາຍສາມເທື່ອ ເຂົາໄດ້ຂວ້າງກ້ອນຫີນໃສ່ຂ້າພະເຈົ້າເທື່ອນຶ່ງ ຂ້າພະເຈົ້າໄດ້ຖືກສະເພົາຫລົ້ມເຖິງສາມເທື່ອ ຂ້າພະເຈົ້າໄດ້ຢູ່ໃນທະເລເລິກວັນນຶ່ງກັບຄືນນຶ່ງ ຂ້າພະເຈົ້າຕ້ອງເດີນທາງຫລາຍເທື່ອ ຜະເຊີນໄພອັນຫນ້າຢ້ານໃນແມ່ນໍ້າ ຜະເຊີນພວກໂຈນ ຜະເຊີນໄພຈາກເພື່ອນ

ຮ່ວມຊາດຂອງເຮົາເອງ ຜະເຊີນຈາກພວກຕ່າງຊາດ ຜະເຊີນໃນບ້ານເມືອງ ຜະເຊີນໃນປ່າ ຜະເຊີນໃນທະເລຜະເຊີນພັກຈາກພີ່ນ້ອງທີ່ບໍ່ສັດຊື່ ຜະເຊີນໃນການໜັກໜ່ວງແລະຍາກລຳບາກ ຕ້ອງອົດຫລັບອົດນອນຫລາຍຄືນ ໃນການອຶດເຂົ້າຢາກນ້ຳ ໃນການອົດອາຫານຫລາຍເທື່ອ ໃນການຖືກໜາວແລະເປືອຍຕົວ ແລະນອກຈາກການອື່ນ ໆ ທີ່ຂ້າພະເຈົ້າຍັງບໍ່ໄດ້ຍົກມາໃຫ້ຟັງ ກໍຍັງມີພາລະປະຈຳວັນຂອງຂ້າພະເຈົ້າ ຄືຄວາມຫ່ວງໃຍເຖິງຄຣິສຈັກທັງປວງ ມີໃຜແດ່ທີ່ອ່ອນແຮງ ແລະຂ້າພະເຈົ້າບໍ່ໄດ້ອ່ອນແຮງນຳມີໃຜແດ່ທີ່ຖືກສະດຸດໃຈ ແລະຂ້າພະເຈົ້າບໍ່ໄດ້ຮ້ອນຮົນໃຈດ້ວຍ" ທ່ານໄດ້ຂຽນນັບເປັນບັນຊີລາຍການຂອງຄວາມທຸກຍາກລຳບາກທີ່ເຮັດໃຫ້ເຮົາຕ້ອງເຂົ້າໃຈວ່າ ທ່ານມີຮ່າງກາຍທີ່ແຂງແຮງພໍປະມານ ບໍ່ແມ່ນເປັນຄົນຈ່ອຍ ທ່ານໂປໂລເປັນຄົນທີ່ມີຈິດໃຈທີ່ລະອຽດອ່ອນ ແລະມີອາລົມຮ້ອນ ດັ່ງທີ່ປາກົດຢູ່ໃນຈົດໝາຍສະບັບຕ່າງ ໆ ຂອງທ່ານ ເມື່ອຄົນອື່ນອວດຕົວທ່ານກໍອວດຕົວນຳ ແຕ່ການອວດຂອງທ່ານເປັນການສົມທຽບ ໃຫ້ຜູ້ອ່ານໄດ້ຮູ້ຈັກທ່ານແລະຖານະຂອງທ່ານ ເພື່ອໃຫ້ເຫັນວ່າທ່ານເປັນຄົນທີ່ມີລະດັບສູງເຖິງປານນັ້ນ ທ່ານຍັງເຫັນວ່າພຣະເຢຊູຄຣິສຍິ່ງໃຫຍ່ສູງສຸດໃນຊີວິດຂອງທ່ານ (2 ກທ 10:8-15, 11:1, 16, 21, 30, 12:1) ທ່ານພາກພູມໃຈກັບຄວາມເຊື່ອສັດທາໃນພຣະຄຣິສທີ່ເຮັດໃຫ້ມີຄວາມໝັ້ນໃຈໃນຊັຍຊະນະ (ຟປ 3:4-14) ແລະສງ່າລາສີທີ່ຈະມາເຖິງ (ຄທ 6:11-15)

ທ່ານໂປໂລເປັນຜູ້ທີ່ສ້າງມິດສະຫາຍໄດ້ຢ່າງໜ້າອັສຈັນໃຈ ເມື່ອເຮົາອ່ານໂຣມບົດທີ່ 16 ມີລາຍຊື່ຄົນທີ່ລື້ງເຄີຍກັບທ່ານທີ່ໄດ້ກ່າວໄວ້ໃນຈົດໝາຍຂອງທ່ານເຖິງ 27 ຄົນ ທ່ານມີຄວາມສັມພັນກັບຄົນເຫລົ່ານັ້ນ ແລະນຳໃຫ້ເຮົາໄດ້ຮູ້ຈັກຊື່ຂອງຄຣິສຕຽນຫລາຍຄົນ ສະແດງວ່າທ່ານເປັນຜູ້ສົນໃຈແລະຫ່ວງຜູ້ອື່ນ ທ່ານຍັງມີໃຈກວ້າງຂວາງຕໍ່ຄູ່ແຂ່ງທີ່ມີໃຈບໍ່ບໍຣິສຸດຕໍ່ທ່ານ (ຟປ 1:12-18) ທ່ານມີຈິດໃຈທີ່ຖ່ອມສຸພາພອ່ອນໂຍນຍອມເຮັດທຸກຢ່າງເພື່ອເຫັນແກ່ຂ່າວປະເສີດ ດັ່ງທ່ານໄດ້ກ່າວວ່າ "ແຕ່ວ່າພວກເຮົາໄດ້ຢູ່ໃນຖ້າມກາງພວກເຈົ້າດ້ວຍໃຈສຸພາບອ່ອນໂຍນ ເໝືອນດັ່ງແມ່ທີ່ລ້ຽງລູກອ່ອນນ້ອຍຂອງຕົນ ເມື່ອພວກເຮົາມີໃຈຮັກແພງເຈົ້າທັງຫລາຍດັ່ງນີ້ແລ້ວ ເຮົາກໍມີໃຈພ້ອມທີ່ຈະເຜີຍແຜ່ ບໍ່ໃຊ່ແຕ່ພຽງຂ່າວປະເສີດຂອງພຣະເຈົ້າເທົ່ານັ້ນ ແຕ່ມີໃຈພ້ອມທີ່ຈະສລະຊີວິດຈິດໃຈຂອງເຮົາໃຫ້ແກ່ເຈົ້າດ້ວຍ ເພາະວ່າພວກເຈົ້າເກີດເປັນທີ່ຮັກແພງຂອງພວກເຮົາ (1 ທຊ 2:7-8) ໃນບັນດາຄວາມທຸກຍາກທີ່ທ່ານໄດ້ຈົດໄວ້ເປັນລາຍການນັ້ນບໍ່ໄດ້ເຮັດໃຫ້ທ່ານຕ້ອງຮູ້ສຶກທົນທຸກທໍຣະມານຈິດໃຈແຕ່ນ້ອຍ ແຕ່ເປັນສິ່ງທີ່ທ່ານໃຊ້ເພື່ອທ້າທາຍໃຫ້ຜູ້ອື່ນໃຫ້ເຂັ້ມແຂງຂຶ້ນຫລາຍຂຶ້ນ (2 ກທ 11:28-29)

ທ່ານໂປໂລໄດ້ເດີນທາງໄປຫລາຍບ່ອນ ທ່ານມັກເວົ້າເຖິງຊີວິດໃນເມືອງເຊັ່ນ ເຣື້ອງຂອງສນາມກິລາ ສຖານທີ່ຣາຊການ ກອງທະຫານ ທ່ານສາມາດນຳເອົາເຣື້ອງເຫລົ່ານີ້ມາເປັນການສົມທຽບໃຫ້ໄດ້ຢ່າງເໝາະສົມ (1 ກທ 3:10-15, 4:9, 9:24-27)

ນອກຈາກນັ້ນເຮົາໄດ້ເຫັນວ່າທ່ານເປັນບຸກຄົນທີ່ມີຄວາມສົມດຸລໃນຊີວິດ ໂດຍສະເພາະຢ່າງຍິ່ງທາງດ້ານຈິດວິນຍານອັນເປັນຂອງປະທານອັນຍິ່ງໃຫຍ່ຂອງທ່ານ ຈະເປັນການກ່ຽວຂ້ອງກັບຜູ້ອື່ນໃນການນມັສການ ໃນແນວຄວາມຄິດທາງດ້ານຈຣິຍະທັມ ດັ່ງທີ່ທ່ານບັນຍາຍໄວ້ໃນ 1 ກທ ບົດທີ່ 12-14 ຊຶ່ງສະແດງວ່າທ່ານມີຈິດໃຈທີ່ສູງ ຜົນງານທີ່ທ່ານໄດ້ສ້າງໄວ້ຈາກຊີວິດແລະງານຂອງທ່ານ ຕໍ່ຄົນໃນສມັຍຂອງທ່ານ ແລະຕໍ່ພວກເຮົາໃນປັຈຈຸບັນ ສະແດງວ່າທ່ານເປັນຜູ້ທີ່ມີສຸຂພາບຈິດທີ່ສົມບູນຍິ່ງ

**ຈົ່ງເອົາສິ່ງທີ່ທ່ານໄດ້ສຶກສາຈາກຂ້າງເທິງເຮັດບົດຝຶກຫັດຂໍ້ທີ່ຫ້າ**

## XI . ໜ້າທີ່ການຮັບໃຊ້ຂອງທ່ານໂປໂລ

ໃນການເດີນທາງທ່ອງທ່ຽວທັງໝົດທ່ານໂປໂລໄດ້ຮວມງານສອງສີ່ງເຂົ້າດ້ວຍກັນ ຄືທ່ານນຳຂ່າວປະເສີດເຂົ້າໄປໃນທ້ອງຖິ່ນທີ່ບໍ່ມີຜູ້ໃດໄປປະກາດ ທ່ານເປັນສາສນາທູດ (Missionary) ທີ່ຍິ່ງໃຫຍ່ທີ່ສຸດທີ່ຄຣິສຈັກໄດ້ເຄີຍຮູ້ຈັກ ແຕ່ຫົວໃຈຂອງທ່ານກໍສະແດງອອກເປັນສິດຍາພິບາລດ້ວຍ ທ່ານບໍ່ໄດ້ລືມບັນດາຄຣິສຕຽນຕາມຄຣິສຈັກທີ່ທ່ານໄດ້ປູກຝັງໄວ້ ທ່ານມີຄວາມຮັກແພງໃນພວກເຂົາ ທ່ານພະຍາຍາມທຸກໂອກາສທີ່ຈະກັບໄປຢ້ຽມຢາມແລະຊ່ວຍເຂົາໃນເຣື້ອງການດຳເນີນຊີວິດຄຣິສຕຽນ

ການໄປຢາມຄຣິສຈັກພຽງເວລາສັ້ນ ຍ ນັ້ນຍັງບໍ່ພຽງພໍ ຄຣິສຈັກໃນເວລານັ້ນຫາກໍເກີດຂຶ້ນໃໝ່ບໍ່ທັນເຂັ້ມແຂງ ແລະມີປັນຫາຫລາຍແນວ ເຊັ່ນຖືຂິ່ມເຫັງ ແຕກແຍກກັນເອງ ຫຼືມີຄວາມສົງສັຍໃນຄວາມເຊື່ອ ທ່ານໂປໂລຕ້ອງຫາວິທີໃໝ່ເພື່ອຊ່ວຍເຫລືອຄຣິສຈັກ ຄື ການສົ່ງຜູ້ຊ່ວຍທີ່ທ່ານໄວ້ວາງໃຈໄດ້ເດີນທາງໄປຢ້ຽມຢາມແລະຊ່ວຍແກ້ປັນຫາ ແລະອີກວິທີນຶ່ງທີ່ເກີດຜົລຫລາຍທີ່ສຸດຄືການຂຽນຈົດໝາຍໄປເຖິງຄຣິສຈັກເຫລົ່ານັ້ນ ເພື່ອແກ້ໄຂປັນຫາແລະຊູກຢູ້ຄຣິສຈັກ ທ່ານມັກຂຽນຈົດໝາຍດ້ວຍຄຳເວົ້າທີ່ກົງໄປກົງມາ ແລະເວົ້າຢ່າງຈິງໃຈ ເພື່ອແກ້ປັນຫາຂອງຄຣິສຈັກໄດ້ຢ່າງກົງຈຸດໝາຍ ທ່ານໂປໂລເປັນຜູ້ທີ່ມີຄວາມສາມາດໃນການຂຽນຈົດໝາຍ ເພື່ອຮັບໃຊ້ພຣະເຈົ້າດນຳໃຫ້ຄຣິສຈັກກ້າວໜ້າ ແລະເກີດຜົລຫລາຍກວ່າໝູ່

## XII. ລັກສນະຈົດໝາຍຂອງທ່ານໂປໂລ

ລັກສນະຈົດໝາຍຂອງທ່ານໂປໂລກໍຄືກັນກັບ ຈົດໝາຍຂອງຄົນທົ່ວໃນສມັຍຂອງທ່ານ ແລະບໍ່ຕ່າງກັບ

ຈົດໝາຍຂອງເຮົາໃນສມັຍນີ້ຫລາຍປານໃດ ເປັນຮູບແບບຂອງຈົດໝາຍທີ່ນິຍົມໃຊ້ກັນໂດຍທົ່ວ ໆ ໄປ ທ່ານໂປໂລໄດ້ຂຽນຕາມແບບທີ່ມີຢູ່ໃນສມັຍຂອງທ່ານ ແຕ່ມີລັກສນະເດັ່ນຕາມຄວາມເຊື່ອຂອງຄຣິສຕຽນ ແລະມີຣິດເດດຂອງພຣະເຈົ້າໃນຄຳເວົ້າຂອງທ່ານໂປໂລ ຈົດໝາຍຂອງທ່ານໂດຍທົ່ວໄປແບ່ງເປັນຕອນໄດ້ດັ່ງນີ້

**ຕອນທີ່ນຶ່ງ** ເປັນຄຳຂຶ້ນຕົ້ນທີ່ສະແດງຄວາມນັບຖື ທີ່ຜູ້ຂຽນໃຊ້ແນະນຳຕົວໂດຍການຂຶ້ນຕົ້ນດ້ວຍຊື່ຂອງຜູ້ຂຽນຂຶ້ນຕົ້ນ ແລະຄົນອື່ນທີ່ຢູ່ກັບຜູ້ຂຽນ ແລ້ວຕໍ່ດ້ວຍຄຳວ່າ "ຮຽນ" ແລ້ວຕໍ່ດ້ວຍ "ເຖິງ" ພ້ອມຊື່ຜູ້ຮັບຈົດໝາຍ ທ່ານໂປໂລຂຽນໃນລັກສນະນີ້ ໃນພຣະທັມ ໂຣມ 1:1, 1 ໂກຣິນໂທ 1:2, 2 ໂກຣິນໂທ 1:1, ຄາລາເຕັຽ 1:1, ເອເຟໂຊ 1:1 ຟີລິບປອຍ 1:1, ໂກໂລຊາຍ 1:1, 2, 1 ເທຊະໂລນິກ 1:1, 2 ເທຊະໂລນິກ 1:1

**ຕອນທີ່ສອງ** ເປັນຄຳອະທິຖານເພື່ອຜູ້ຮັບຈົດໝາຍ ແລະຄວາມເປັນໄປຂອງຜູ້ຮັບ ທ່ານໂປໂລໄດ້ອະທິຖານ ໃຫ້ພຣະຄຸນຂອງພຣະເຈົ້າຢູ່ກັບຜູ້ທີ່ທ່ານຂຽນເຖິງຫຼືຜູ້ຮັບຈົດໝາຍ ດັ່ງໃນພຣະທັມ ໂຣມ 1:7, 1 ໂກຣິນໂທ 1:3, 2 ໂກຣິນໂທ 1:2, ຄາລາທຽຍ 1:3, ເອເຟໂຊ 1:2, ຟີລິບປອຍ 1:3, ໂກໂລຊາຍ 1:2, 1 ເທຊະໂລນິກ 1:1, 2 ເທຊະໂລນິກ 1:2

**ຕອນທີ່ສາມ** ຕາມລັກສນະຂອງຈົດໝາຍກຣີກໃນສມັຍກ່ອນເປັນຕອນແສດງຄວາມຂອບໃຈ ຊຶ່ງ

ເປັນການແສດງຄວາມພໍໃຈສ່ວນຕົວ ທ່ານໂປໂລມີການຂຽນລັກສນະນີ້ ໃນຈົດໝາຍທຸກສະບັບຂອງທ່ານ ເວັ້ນພຣະທັມຄາລາເຕັຽ ໃນຈົດໝາຍພຣະທັມຄາລາເຕັຽທ່ານຕົກໃຈ ເພາະພວກຄຣິສຕຽນຊາວຄາລາເຕັຽບໍ່ໄດ້ຍຶດໝັ້ນໃນຂ່າວປະເສີດຢ່າງແທ້ຈິງ ທ່ານຈຶ່ງຮີບດ່ວນໂຕ້ຕອບຢ່າງຮຸນແຮງໃຫ້ທັນກັບເຫດການທີ່ກຳລັງເກີດຂຶ້ນ (ຄທ 1:6-10) ພວກຜູ້ອ່ານທີ່ຫວັງຈະໄດ້ຮັບຄວາມເວົ້າແບບມິດພາພ ຫຼືຫວັງໄດ້ຄຳອະທິຖານກໍຕ້ອງຕົກໃຈ ໃນຄວາມເວົ້າຂອງທ່ານ ສ່ວນໃນຈົດໝາຍສະບັບອື່ນ ໆ ທ່ານໂປໂລໄດ້ຂຽນຕາມແບບຈົດໝາຍທີ່ມີຢູ່ໃນເວລານັ້ນ ດັ່ງໃນພຣະທັມຕໍ່ໄປນີ້ ໂຣມ 1:8, 1 ໂກຣິນໂທ 1:4, 2 ໂກຣິນໂທ 1:3, ເອເຟໂຊ 1:3, 1 ເທຊະໂລນິກ 1:3, 2 ເທຊະໂລນິກ 1:3

**ຕອນທີ່ສີ່** ເປັນຕອນທີ່ເປັນເນື້ອຄວາມຂອງຈົດໝາຍ ໃນສ່ວນນີ້ແຫລະທີ່ຜູ້ຂຽນຈະຂຽນເຖິງຈຸດປະສົງຂອງຜູ້ຂຽນວ່າເຣື່ອງທີ່ຂຽນມານັ້ນເປັນເຣື່ອງແບວໃດ ທ່ານໂປໂລໄດ້ແຈ້ງເຖິງຄວາມຕ້ອງການຂອງຄຣິສຈັກທີ່ໄດ້ກໍ່ຕັ້ງຂຶ້ນ ທ່ານໂປໂລບໍ່ມີຈຸດປະສົງພຽງຈະນຳພວກເຂົາມາເຖິງຄວາມຈິງແຫ່ງຄວາມເຊື່ອເທົ່ານັ້ນ ແຕ່ທ່ານໄດ້ຊີ້ແນະໃຫ້ເຫັນເຖິງແນວທາງການດຳເນີນຊີວິດແບບຄຣິສຕຽນທີ່ຖືກຕ້ອງດ້ວຍ ທ່ານໄດ້ອະທິບາຍຫລາຍ ໆ ເທື່ອເພື່ອໃຫ້ຮູ້ຈັກຄັກແນ່ນວ່າຂ່າວປະເສີດແມ່ນ ຄືຄວາມຮັກຂອງພຣະເຈົ້າທີ່ນຳເຖິງມະນຸດ ໃຫ້ມະນຸດເກີດຄວາມສັມພັນຂຶ້ນໃໝ່ກັບອົງພຣະຜູ້ເປັນເຈົ້າ ເປັນເຣື່ອງຂອງການປະຕິບັດອອກມາຈິງ ໆ ບໍ່ແມ່ນເປັນພຽງແຕ່ຄວາມເວົ້າດ້ວຍປາກເທົ່ານັ້ນ ທ່ານໂປໂລໄດ້ເຫັນວ່າເຣື່ອງນີ້ເປັນເຣື່ອງສຳຄັນຂອງຊີວິດຄຣິສຕຽນ ຕອນທ້າຍມັກຈະເປັນການແກ້ບັນຫາຕ່າງ ໆ ທີ່ຄົນໄດ້ຖາມມາ

**ຕອນທີ່ຫ້າ** ເປັນຄຳສະແດງຄວາມນັບຖືສ່ວນຕົວແລະເປັນຄຳອຳລາ ຈົດໝາຍບາງສະບັບທ່ານໄດ້ບອກຄວາມເວົ້າຂອງທ່ານໃຫ້ຄົນອື່ນຂຽນ ດັ່ງນັ້ນແລ້ວເມື່ອມາຮອດຕອນທ້າຍຈົດໝາຍນີ້ແລ້ວ ທ່ານມັກຈະຈັບປາກກາມາຂຽນໝາຍເຫດສ່ວນຕົວດ້ວຍລາຍມືຂອງທ່ານເອງ ທີ່ເຮັດແນວນີ້ເປັນການສະແດງຄວາມເປັນກັນເອງແລະມິດຕະພາບ ແລະເຮັດໃຫ້ຮູ້ວ່າຈົດໝາຍນີ້ເປັນຂອງທ່ານແທ້ ໆ (1 ກທ 16:21, ກຊ 4:18, 2 ທຊ 3:17) ຄຳສະແດງຄວາມນັບຖືສຸດທ້າຍຂອງທ່ານບໍ່ແມ່ນເປັນຄຳວ່າ "ລາກ່ອນ" ຕາມແບບຈົດໝາຍກຣີກໂດຍທົ່ວໄປ ທ່ານມັກຈົບລົງດ້ວຍຄຳອະທິຖານຂໍໃຫ້ພຣະຄຸນຂອງພຣະເຈົ້າມີແກ່ຜູ້ອ່ານຂອງທ່ານຕະລອດໄປ ດັ່ງໃນພຣະທັມຕໍ່ໄປນີ້ ໂຣມ 16:1, 1 ໂກຣິນໂທ 16:19, 2 ໂກຣິນໂທ 13:13, ຟີລິບປອຍ 4:21, 22, ໂກໂລຊາຍ 4:12-15, 1 ເທຊະໂລນິກ 5:26

| |
|---|
| **ຈົ່ງເອົາສິ່ງທີ່ທ່ານໄດ້ສຶກສາຈາກຂ້າງເທິງເຮັດບົດຝຶກຫັດຂໍ້ທີ່ຫົກ** |

## XIII. <u>ຂ່າວປະເສີດດຽວທີ່ທ່ານໂປໂລປະກາດ</u>

ຈົດໝາຍຂອງທ່ານໂປໂລຫລາຍສະບັບຂຽນເວລາທີ່ຕ່າງກັນ ແຕ່ລະສະບັບຂຽນໃນສະຖານການທີ່ຕ່າງກັນດ້ວຍ ດັ່ງນັ້ນບາງເທື່ອເຮົາອາດຈະເກີດຄວາມຄິດສົມທຽບຫຼືສັງເກດເຫັນຄວາມຕ່າງກັນ ເຮົາຄວນຈະມີຄວາມເຂົ້າໃຈວ່າ ທ່ານໂປໂລເມື່ອຂຽນຈົດໝາຍສະບັບທຳອິດທ່ານເປັນຄຣິສຕຽນຢ່າງນ້ອຍທີ່ສຸດກໍສິບຫ້າປີມີຄວາມຮູ້ຄວາມເຂົ້າໃຈແລະປະສົບການຄວາມເຊື່ອຫລາຍດ້ານ ທ່ານເຄີຍເທສນາສັ່ງສອນແລະສຶກສາພຣະຄັມພີມາເປັນເວລານານແລ້ວ ທ່ານບໍ່ແມ່ນຄຣິສຕຽນໃໝ່ ຫຼືບໍ່ແມ່ນຜູ້ທີ່ເຮັດວຽກໃໝ່

ໃນຄຣິສຈັກ ເພາະສະນັ້ນແມ່ນຈະວ່າເປັນຈົດໝາຍສະບັບຕົ້ນຂອງທ່ານ ກໍເປັນການຂຽນຈາກຜູ້ທີ່ໄດ້ຮັບການຊົງດົນໃຈຈາກພຣະເຈົ້າ ມີປະສົບການແລະມີຄວາມຊໍານານໃນການຮັບໃຊ້ພຣະເຈົ້າ

ແມ່ນວ່າຈົດໝາຍແຕ່ລະສະບັບຂອງທ່ານໂປໂລມີຄວາມແຕກຕ່າງກັນ ຍ້ອນເພາະເຫດວ່າ ແຕ່ລະຄຣິສຈັກຜະເຊີນປັນຫາທີ່ແຕກຕ່າງກັນ ແລະມີສະຖານການບໍ່ຄືກັນ ແຕ່ວ່າໃນຈົດໝາຍທຸກສະບັບທີ່ທ່ານໂປໂລຂຽນ ທ່ານຂຽນເຖິງເຣື່ອງຂ່າວປະເສີດອັນດຽວກັນ ແລະເຕືອນສະຕິຄຣິສຕຽນແຕ່ບ່ອນໃຫ້ແກ້ປັນຫາຂອງຄຣິສຈັກພ້ອມປະຕິບັດວຽກການຂອງພຣະເຈົ້າໃຫ້ກົງຕາມຄວາມມຸ່ງໝາຍຂອງອົງພຣະຜູ້ເປັນເຈົ້າ ເພາະເຫດວ່າຂ່າວປະເສີດຂອງພຣະເຢຊູຄຣິສບໍ່ເຄີຍປ່ຽນແປງ

ເມື່ອເຮົາອ່ານຈົດໝາຍທັງໝົດຂອງທ່ານໂປໂລ ແລະຮວບຮວມເອົາຄວາມຄິດພ້ອງຈຸດປະສົງທັງໝົດທີ່ທ່ານຂຽນ ເຮົາຈະພົບວ່າທ່ານໄດ້ໃຊ້ຂ່າວປະເສີດຂອງພຣະເຢຊູຄຣິສແກ້ໄຂປັນຫາຂອງຄຣິສຈັກໃນເວລານັ້ນ ເຮັດໃຫ້ເຮົາເຂົ້າໃຈແຈ່ມແຈ້ງຫລາຍຂຶ້ນເຖິງພຣະປະສົງແລະນໍ້າພຣະທັຍຂອງພຣະເຈົ້າໃນການກໍ່ຕັ້ງຄຣິສຈັກ ຄຣິສຈັກໃນເວລານັ້ນໄດ້ຮັກສາຈົດໝາຍຂອງທ່ານໄວ້ ແລະຮວມເຂົ້າໄວໃນພຣະຄັມພີພາກພັນທະສັນຍາໃໝ່ ໂດຍຖືວ່າຈົດໝາຍຂອງທ່ານເປັນການຊົງດົນຈາກພຣະເຈົ້າທີ່ມີປະໂຍດໃນການສັ່ງສອນ ຕັກເຕືອນສະຕິແກ່ຄຣິສຈັກ ແລະມີປະໂຍດຕໍ່ຄົນຮຸ່ນຫລັງຈົນຮອດທຸກມື້ນີ້ ຄຣິສຈັກປັດຈຸບັນໄດ້ອ່ານຈົດໝາຍເຫລົ່ານີ້ຂອງທ່ານໂປໂລ ໄດ້ພົບຄວາມຈິງຊຶ່ງນໍາພາໄປເຖິງຄວາມເຊື່ອ ແລະສາມາດດໍາເນີນຊີວິດຄຣິສຕຽນໄດ້ກົງຕາມພຣະປະສົງຂອງອົງພຣະຜູ້ເປັນເຈົ້າ

## XIV. <u>ເຫດການຂອງວັນເວລາໃນຊ່ວງຊີວິດຂອງທ່ານໂປໂລ</u>

ເຫດການທີ່ເກີດໃນເວລາຕໍ່ໄປນີ້ເປັນການປະມານຂອງນັກສຶກສາພຣະຄັມພີ

ຄ.ສ. 10 ທ່ານໂປໂລເກີດໃນເມືອງຕາໂຊ (Trasus) ໃນເວລາທີ່ທ່ານເປັນຄົນໜຸ່ມທີ່ໄດ້ເດີນທາງໄປສຶກສາເພື່ອເປັນຊາຣີຊາຍກັບອາຈານຄາມາລີເອັລ (Gamaliel)

ຄ.ສ. 29-30 ພຣະເຢຊູຄຣິສຖືກຕຶງ ເປັນຂຶ້ນຈາກຕາຍ ແລະສະເດັດຂຶ້ນສູ່ສວັນ

ຄ.ສ. 30-31 ທ່ານສະເຕຟາໂນຖືກຊາວຢິວດ້ວງຫີນໃສ່ຈົນຕາຍ ທ່ານໂປໂລກັບໃຈບັງເກີດໃໝ່ໃນຣະຫວ່າງທາງໄປເມືອງດາເມເຊ (Damascus) ທ່ານໄດ້ອາສັຍຢູ່ໃນທະເລຊາຍຊີເຣັຽຣະຍະນຶ່ງ ໄດ້ເທສນາ 3 ປີໃນເມືອງດາເມເຊ ໄດ້ເດີນທາງໄປຢ້ຽມຢາມທ່ານເປໂຕທີ່ກຸງເຢຣູຊາເລັມໃນຣະຍະເວລາສັ້ນ ໆ ແລະໄດ້ຕັ້ງຖານການປະກາດຂ່າວປະເສີດທີ່ເມືອງອັນຕີໂອເຂັຽ (Antioch)

ຄ.ສ. 46-48 ທ່ານໂປໂລເດີນທາງປ່າວປະກາດຫຼ້ອແຮກຮ່ວມກັບທ່ານບາຣະນາບັສໄປຍັງເກາະກະເຣເຕ ແລະແຂວງຄາລາເຕັຽ

ຄ.ສ. 48-49 ການປະຊຸມສະພາຄຣິສຈັກທີ່ກຸງເຢຣູຊາເລັມ

ຄ.ສ. 49-52 ການເດີນທາງປ່າວປະກາດຂ່າວປະເສີດຫຼ້ອທີ່ສອງຂອງທ່ານໂປໂລ ຮ່ວມກັບທ່ານຊີລາ ແລະຕີໂມທຽວ ໄດ້ເດີນທາງໄປທົ່ວເອເຊັຽນ້ອຍຈົນເຖິງກຣີກ ແລະເດີນທາງກັບອັນຕີໂອເຂັຽ

ຄ.ສ. 53-57 ການເດີນທາງປ່າວປະກາດຂ່າວປະເສີດຫຼ້ອທີ່ສາມຂອງທ່ານໂປໂລ ທ່ານໄດ້ເດີນທາງໄປທົ່ວເອເຊັຽນ້ອຍຈົນເຖິງກຣີກອີກ ແລະໄດ້ເດີນທາງກັບກຸງເຢຣູຊາເລັມ

ຄ.ສ. 57-59 ທ່ານຖືກຈັກກຸມໃນການກຸງເຢຣູຊາເລັມ ແລະຖືກຄວບກຸມຂັງໂດຍເຈົ້າໜ້າທີ່ໂຣມັນໃນເມືອງກາຍຊາເຣັຽ (Caesarea)

ຄ.ສ. 59-60 ທ່ານໂປໂລເດີນທາງໂດຍເຮືອໄປຍັງກຸງໂຣມ ຫລັງຈາກນັ້ນທ່ານຢູ່ໃນການຄວມ

ກຸມຕົວໃນບ້ານທີ່ກຸງໂຣມອີກສອງປີ ແລະໄດ້ຮັບການປ່ອຍຕົວ

ຄ.ສ. 62-65 ທ່ານໂປໂລຈັບອີກແລະຖືກປະຫານຊີວິດໃນກຸງໂຣມ ໃນຣະຫວ່າງການຂົ່ມເຫັງຂອງຈັກພັດນີໂຣ

ຄ.ສ. 70 ກຸງເຢຣູຊາເລັມແລະພຣະວິຫານຖືກທຳລາຍລົ້ມ

**ຈົ່ງເອົາສິ່ງທີ່ທ່ານໄດ້ສຶກສາຈາກຂ້າງເທິງເຮັດບົດຝຶກຫັດຂໍ້ທີ່ເຈັດ**

04 10-9-95

# ບົດທີ 2

## ຈົດໝາຍຂອງໂປໂລ ທີ່ຂຽນເຖິງຄຣິສຈັກໃນກຸງໂຣມ

## The Letter of Paul to the Romans

**ຂໍ້ໃຈຈົດໝາຍພຣະທັມໂຣມ** 1:16-17 (ແປຕາມສະບັບ NIV)

"ເພາະວ່າຂ້າພະເຈົ້າບໍ່ມີຄວາມລະອາຍໃນຂ່າວປະເສີດ ດ້ວຍວ່າຂ່າວປະເສີດນັ້ນເປັນຣິດເດດຂອງພຣະເຈົ້າ ເພື່ອໃຫ້ທຸກຄົນທີ່ເຊື່ອໄດ້ຮັບຄວາມຣອດພົ້ນ ພວກຢິວກ່ອນແລະພວກຕ່າງຊາດດ້ວຍ ເພາະໃນຂ່າວປະເສີດນັ້ນ ຄວາມຊອບທັມຂອງພຣະເຈົ້າໄດ້ຊົງສຳແດງອອກ ໂດຍຄວາມເຊື່ອ ຕັ້ງແຕ່ເລີ້ມຕົ້ນເຖິງທີ່ສຸດປາຍ ເໝືອນມີຄຳຂຽນໄວ້ໃນພຣະຄັມພີແລ້ວວ່າ *"ຄົນຊອບທັມດຳເນີນຊີວິດຢູ່ໂດຍຄວາມເຊື່ອ"*

ທ່ານມາຕິນ ລູເທີຣ໌ (Martin Luther) ໄດ້ໃຫ້ການຮັບຮອງພຣະທັມໂຣມຢ່າງສູງສຸດຫລາຍກວ່າພຣະທັມເຫລັ້ມອື່ນ ທ່ານໄດ້ກ່າວເຖິງພຣະທັມໂຣມວ່າ

*ພຣະທັມຈົດໝາຍໂຣມເປັນຫລັກສຳຄັນຂອງພຣະຄັມພີພາກພັນທະສັນຍາໃໝ່ ແລະເປັນພຣະທັມທີ່ມີເນື້ອແທ້ຂອງຂ່າວປະເສີດ ເປັນພຣະທັມທີ່ຄຣິສຕຽນທຸກທ່ານຈະຕ້ອງຮຽນຮູ້ໃຫ້ທຸກ ໆ ຄວາມຕິດຢູ່ໃນໃຈ ແລະສົມຄວນອ່ານທຸກ ໆ ວັນ ຄືກັບຮັບອາຫານປະຈຳວັນໃນຝ່າຍຈິດວິນຍານ ພຣະທັມນີ້ບໍ່ມີວັນທີ່ຈະອ່ານຫລາຍເກີນໄປ ຄື ຍິ່ງອ່ານແຮງຍິ່ງມັກ ຍິ່ງສຶກສາຍິ່ງມີຄວາມຊື່ນຊົມ ແລະໄດ້ຣົສຊາດອັນຫອມຫວານ*

*[Martin Luther, "Preface to St. Paul's Epistle to Romans", in Fosdick, ed., Great Voices, p. 118.]*

ນັກສາສນາສາດທີ່ຍິ່ງໃຫຍ່ຂອງຄຣິສຕຽນຄົນສຳຄັນ ໆ ເຊັ່ນ ທ່ານອໍກັສຕິນ (Agustine) ທ່ານຈອນ ຄາລວິນ (John Calvin) ທ່ານຄາຣ໌ລ ບາຣ໌ທ (Karl Barth) ຄົນເຫລົ່ານີ້ເກີດຄວາມຄິດທາງສາສນາສາດແລະຫລັກຄວາມເຊື່ອຍ້ອນພຣະທັມໂຣມ ພຣະທັມນີ້ໄດ້ຮັບການຍອມຮັບແລະເຫັນໄດ້ຢ່າງຊັດແຈ້ງວ່າປະກອບດ້ວຍຫລັກຂໍ້ເຊື່ອທີ່ສຳຄັນຫລາຍສຳລັບທຸກຄົນ ທີ່ທ່ານໂປໂລໄດ້ເນັ້ນໜັກຄື → "ເຣື້ອງຄວາມຊອບທັມໂດຍຄວາມເຊື່ອ" (Justification by Faith)

ການທີ່ທ່ານ ມາຕິນ ລູເທີຣ໌ ກ່າວວ່າ "ພຣະທັມໂຣມເປັນພຣະທັມທີ່ມີເນື້ອແທ້ຂອງຂ່າວປະເສີດ" ທ່ານເຫັນວ່າ ແມ່ນວ່າພຣະທັມໂຣມຈະບໍ່ມີເຣື້ອງຣາວຊີວະປວັດຂອງພຣະເຢຊູຄຣິສຄືກັບພຣະທັມມັດທາຍ (1) ມາຣະໂກ ລູກາ ແລະໂຢຮັນ ແຕ່ພຣະທັມໂຣມໄດ້ໃຫ້ຄວາມໝາຍສຳຄັນທີ່ນຳໃຫ້ເຮົາໄປເຖິງເນື້ອນັຍແລະໃຈຄວາມສຳຄັນຂອງຂ່າວປະເສີດ ຄືຕົວພຣະເຢຊູຄຣິສແລະພຣະຣາຊກິຈຂອງພຣະອົງ ຊຶ່ງມີຄວາມໝາຍອັນແທ້ຈິງຕໍ່ຜູ້ເຊື່ອທັງໃນປັດຈຸບັນນີ້ແລະໃນອນາຄົດ ທ່ານລູເທີຣ໌ເຫັນວ່າ ນີ້ຄືຂ່າວປະເສີດທີ່ທ່ານໂປໂລໄດ້ເປີດເຜີຍໃຫ້ເຮົາໄດ້ເຂົ້າໃຈ

## ນຶ່ງ. ຄຣິສຈັກໃນກຸງໂຣມ

ທ່ານໂປໂລໄດ້ຂຽນຈົດໝາຍພຣະທັມໂຣມທີ່ຍາວກວ່າຈົດໝາຍສະບັບອື່ນ ໆ ຂອງທ່ານໄປຍັງຄຣິສຈັກໃນກຸງໂຣມ ທີ່ທ່ານບໍ່ເຄີຍໄດ້ຮູ້ຈັກມາກ່ອນ ນັກສຶກສາພຣະຄັມພີສ່ວນຫລາຍມີຄວາມເຊື່ອຖືວ່າ ຂ່າວປະເສີດມາເຖິງກຸງໂຣມໄດ້ ໂດຍຜູ້ຄົນທີ່ໄດ້ຮັບພຣະວິນຍານບໍຣິສຸດໃນວັນເພັນເຕຄໍສະເຕທີ່ກຸງເຢຣູຊາເລັມ (ກຈ 2:10) ໃນຈຳນວນຜູ້ຄົນທີ່ຮັບພຣະວິນຍານບໍຣິສຸດມີຊາວໂຣມັນຢູ່ທີ່ນັ້ນດ້ວຍ ເຊື່ອວ່າຄົນເຫລົ່ານັ້ນໄດ້ກັບໃຈບັງເກີດໃໝ່ ແລະໄດ້ນຳຂ່າວປະເສີດກັບໄປຍັງກຸງໂຣມ ເຊື່ອວ່າມີຄຣິສຕຽນບາງທ່ານທີ່ທ່ານໂປໂລຫລືຜູ້ນຳທ່ານອື່ນ ໆ ໄດ້ນຳໃຫ້ເຂົາກັບໃຈ ຄົນເຫລົ່ານີ້ເຄີຍຢູ່ໃນທາງດ້ານຕາວັນອອກໄດ້ເດີນທາງໄປກຸງໂຣມ ແລະໄດ້ປ່າວປະກາດຂ່າວປະເສີດ ພວກເຂົາໄດ້ຮ່ວມກັນກໍ່ຕັ້ງຄຣິສຈັກຂຶ້ນ

ສິ່ງທີ່ເຮົາຮູ້ໄດ້ແນ່ຄັກຈາກຈົດໝາຍຂອງທ່ານໂປໂລຄື ຄຣິສຈັກໃນກຸງໂຣມຕັ້ງມານານແລ້ວ ແລະໃນເວລາທີ່ທ່ານໂປໂລຂຽນຈົດໝາຍໄປ ຄຣິສຈັກນີ້ກໍມີຊື່ສຽງວ່າເປັນຄຣິສຈັກທີ່ເຂັ້ມແຂງແລ້ວ (ຣມ 1:8) ດັ່ງນັ້ນຖ້າທ່ານໂປໂລສາມາດຜູກມິດແລະໄດ້ຮັບຄວາມຮ່ວມມືແລ້ວ ກໍຈະເປັນສິ່ງທີ່ສົ່ງເສີມທ່ານໃນການປະກາດທາງດ້ານຕາວັນຕົກ

ຕາມຄວາມເຊື່ອຖືຂອງໂຣມັນຄາທໍລິກ ຖືວ່າຄຣິສຈັກໃນກຸງໂຣມກໍ່ຕັ້ງໂດຍທ່ານເປໂຕ ປະມານປີ ຄ.ສ. 42 ທ່ານເປໂຕເປັນສິດຍາພິບາລ (Bishop) ແລະຕໍ່ມາທ່ານໄດ້ເປັນສັນຕະປາປາ (Pope) ຈົນເວລາທີ່ທ່ານຖືກປະຫານຊີວິດຢ່າງວິຣະບຸຣຸດໃນ ຄ.ສ.67 ນັກສຶກສາພຣະຄັມພີໃນສມັຍປັດຈຸບັນນີ້ ບໍ່ໄດ້ໃຫ້ການສນັບສນູນແນວຄວາມຄິດນີ້ປານໃດ ມີສິ່ງນຶ່ງທີ່ແນ່ນອນທີ່ນັກສຶກສາພຣະຄັມພີເຫັນພ້ອມຄື ທ່ານເປໂຕບໍ່ແມ່ນຜູ້ທຳອິດທີ່ນຳຂ່າວປະເສີດໄປຍັງກຸງໂຣມ ຂ່າວປະເສີດເຜີຍແຜ່ໄດ້ໄປກ່ອນ ທ່ານໄດ້ໄປນຳຫລັງ ຫລັກຖານໃນພຣະຄັມພີກໍບໍ່ມີຂໍ້ສນັບສນຸນຄວາມຈິງທີ່ວ່າທ່ານເປໂຕເປັນຜູ້ກໍ່ຕັ້ງຄຣິສຈັກໂຣມຄົນທຳອິດ ຈາກພຣະທັມກິຈການ 28:14-15 ສະແດງວ່າຄຣິສຈັກໄດ້ເກີດຂຶ້ນກ່ອນທ່ານໂປໂລຈະເດີນທາງໄປເຖິງ ແລະເມື່ອທ່ານໄປເຖິງບໍ່ໄດ້ກ່າວເຖິງທ່ານເປໂຕ ຖ້າທ່ານເປໂຕເປັນຜູ້ກໍ່ຕັ້ງຫລືເປັນຜູ້ນຳຂອງຄຣິສຈັກທີ່ກຸງໂຣມ ທ່ານລູກາຈະຕ້ອງກ່າວເຖິງທ່ານເປໂຕໃນພຣະທັມກິຈການເມື່ອກ່າວເຖິງທ່ານໂປໂລເດີນທາງໄປເຖິງກຸງໂຣມ ຫລືໃນຈົດໝາຍຂອງທ່ານໂປໂລທີ່ຂຽນໄປເຖິງຄຣິສຈັກໃນກຸງໂຣມກໍຕ້ອງຖາມຂ່າວທ່ານເປໂຕ ທ່ານໂປໂລໄດ້ກ່າວທັກທາຍຫລາຍ ໆ ທ່ານ <u>ແຕ່ບໍ່ໄດ້ກ່າວເຖິງທ່ານເປໂຕເລີຍໃນຈົດໝາຍພຣະທັມໂຣມ</u> ຄິດວ່າທ່ານເປໂຕອາດຈະຢູ່ໃນກຸງໂຣມຈິງ ແຕ່ອາດຈະບໍ່ແມ່ນເປັນເວລາດຽວກັນທີ່ພຣະທັມກິຈການແລະໂຣມໄດ້ບັນທຶກ

ເມື່ອທ່ານໂປໂລຂຽນຈົດໝາຍໄປເຖິງຄຣິສຈັກໃນກຸງໂຣມ ທ່ານຂຽນເຖິງຄົນສ່ວນຫລາຍທີ່ເປັນຄົນທີ່ບໍ່ຮູ້ຈັກຫລື່ງເຄີຍກັນ ດັ່ງນັ້ນຈົດໝາຍຂອງທ່ານຈຶ່ງບໍ່ມີລັກສນະກັນເອງ ທ່ານໂປໂລຍັງຮູ້ຈັກວ່າ ຄຣິສຕຽນສ່ວນຫລາຍໃນຄຣິສຈັກທີ່ກຸງໂຣມເປັນຄົນຊາດອື່ນຫລາຍກວ່າຊາວຢິວ (ຣມ 1:13, 11:13) ແຕ່ກໍມີຊາວຢິວທີ່ເປັນຄຣິສຕຽນຢູ່ຫລາຍພໍ ທີ່ເຮັດໃຫ້ຄວາມສັມພັນຣະຫວ່າງຄວາມເຊື່ອຂອງຄຣິສຕຽນກັບລັດທິຢິວເປັນເຣື້ອງສຳຄັນທີ່ທ່ານໂປໂລຕ້ອງກ່າວເຖິງແລະຕ້ອງໃຫ້ຄຳແນະນຳ ທ່ານຮູ້ຈັກວ່າຄຣິສຕຽນຈະຕ້ອງຕັດສິນໃຈເອົາເອງໃນບັນຫາຕ່າງ ໆ ວ່າຈະເຊື່ອຟັງອຳນາດຈັກພັດທີ່ບໍ່ເປັນຄຣິສຕຽນ (ຣມ 13:1-7) ແລະທີ່ເຂົາຈະຜິດຖຽງກັນວ່າເຂົາຄວນຈະຮັບປະທານອາຫານຊະນິດໃດໄດ້ບ້າງ (ຣມ 14:1-15:13) ຖ້າເຮົາຈະທຽບຈົດໝາຍຂອງທ່ານໂປໂລທີ່ຂຽນໄປເຖິງໂຣມກັບຈົດໝາຍສະບັບອື່ນ ໆ ຂອງທ່ານແລ້ວຈະເຫັນໄດ້ວ່າຈົດໝາຍສະບັບອື່ນມີຄວາມເປັນກັນເອງຫລາຍກວ່າຈົດໝາຍທີ່ຂຽນໄປເຖິງກຸງໂຣມ

## **ສອງ. ຄວາມຕັ້ງໃຈຂອງທ່ານໂປໂລກັບຄຣິສຈັກໂຣມ**

ໃນຂນະທີ່ທ່ານໂປໂລຂຽນພຣະທັມໂຣມ ທ່ານຍັງບໍ່ເຄີຍໄປກຸງໂຣມເລີຍ ວຽກຂອງທ່ານຢູ່ໃນກຸງເຢຣູຊາເລັມ ເມື່ອວຽກແລ້ວທ່ານມີຄວາມຕັ້ງໃຈວ່າຈະເດີນທາງໂດຍຜ່ານແຂວງມາເກໂດເນັຽແລະແຂວງອະຂາຢາ ໂດຍມີຄວາມຫວັງວ່າ "ເມື່ອໄດ້ໄປທາງນັ້ນຈະຕ້ອງເຫັນກຸງໂຣມເຫມືອນກັນ" (ກຈ 19:21) ທ່ານໂປໂລໄດ້ເລີ້ມຕົ້ນຈົດຫມາຍຂອງທ່ານກ່າວວ່າ "ຂ້າພະເຈົ້າປາຖນາຢາກເຫັນເຈົ້າທັງຫລາຍ" (ຣມ 1:9-11) "ຂ້າພະເຈົ້າມີຄວາມປາຖນາຫລາຍປີມາແລ້ວທີ່ຈະມາຫາພວກເຈົ້າ ເມື່ອຂ້າພະເຈົ້າຈະໄປປະເທດສະເປນ (ຣມ 15:23) "ແຕ່ປັດຈຸບັນນີ້ຂ້າພະເຈົ້າກໍາລັງຂຶ້ນເມືອກຸງເຢຣູຊາເລັມ ເພື່ອຊ່ວຍສົງເຄາະພວກໄພ່ພົນຂອງພຣະເຈົ້າ" (ຣມ 15:25) ທ່ານໂປໂລໄດ້ຮອບຮວມເງິນເພື່ອຊ່ວຍເຫລືອຄົນທີ່ທຸກຍາກໃນກຸງເຢຣູຊາເລັມ ຕາມທີ່ທ່ານໄດ້ເຄີຍກ່າວໄວ້ໃນຈົດຫມາຍທີ່ຂຽນເຖິງໂກຣິນໂທ (ຣມ 15:26-27, 1 ກທ 16:1-4) ທ່ານມີຄວາມດີໃຈທີ່ຈະນໍາເງິນຖວາຍນັ້ນໄປຍັງກຸງເຢຣູຊາເລັມແລະເດີນທາງໄປຍັງກຸງໂຣມ ເພື່ອນໍາຂ່າວປະເສີດໃຫ້ໄປເຖິງປະເທດສະເປນ (ຣມ 25: 28) ນັກສຶກສາພຣະຄັມພີມີຄວາມເຊື່ອວ່າທ່ານໂປໂລຂຽນຈົດຫມາຍພຣະທັມໂຣມຈາກເມືອງໂກຣິນໂທໃນຣະຫວ່າງທີ່ພັກຢູ່ໃນກຣີກສາມເດືອນໃນການເດີນທາງຫຣືອທີ່ສາມປະມານ ຄ.ສ.57 (ກຈ 20:3) ໃນເວລານີ້ທ່ານໂປໂລພັກຢູ່ທີ່ບ້ານຂອງທ່ານຄາໂອ (Gaius, ຣມ 16:23) ທ່ານຂຽນເພື່ອຕຽມໃຈສມາຊິກຂອງຄຣິສຈັກໃນກຸງໂຣມ ແລະໃຫ້ພວກເຂົາມີຄວາມເຂົ້າໃຈໃນຄວາມເຊື່ອຂອງທ່ານ ບໍ່ແມ່ນຕ້ອງການແກ້ໄຂບັນຫາຂອງຄຣິສຈັກທີ່ເກີດຂຶ້ນ

**ມີເຫດຜົລສອງປະການທີ່ເປັນເຫດໃຫ້ທ່ານໂປໂລຕ້ອງການໄປຢ້ຽມຢາມກຸງໂຣມ ແລະບໍຣິເວນທາງດ້ານຕະວັນຕົກຂອງອານາຈັກໂຣມັນ**

**ປະການທໍາອິດ** ທ່ານໄດ້ຍິນຂ່າວຄາວເຖິງຄຣິສຈັກທີ່ກຸງໂຣມມານານແລ້ວ ແລະມີຄວາມຕັ້ງໃຈວ່າຈະໄປຢ້ຽມຢາມ ແຕ່ທ່ານໂປໂລມີວຽກຫລາຍຢູ່ທາງດ້ານທິດຕາວັນອອກຊຶ່ງເຮັດໃຫ້ທ່ານໄປຢ້ຽມຢາມບໍ່ໄດ້ ໃນເວລາທີ່ທ່ານຂຽນຈົດຫມາຍສບັບນີ້

**ປະການທີ່ສອງ** ຄືຄວາມສໍາຄັນຂອງກຸງໂຣມນັ່ນເອງ ກຸງໂຣມເປັນນະຄອນຫລວງຂອງອານາຈັກທີ່ກຽງໄກ ບັນດາຜູ້ນໍາແລະຄົນສໍາຄັນຂອງໂລກໃນສມັຍໂບຮານຢູ່ທີ່ນັ້ນ ກຸງໂຣມເປັນຈຸດສົນໃຈຂອງແຂວງຕ່າງ ໆ ທົ່ວຣາຊອານາຈັກ ມີທາງຫລວງທີ່ມີຊື່ສຽງຈາກກຸງໂຣມ ມີການຄົມນາຄົມທາງທະເລນໍາໄປຍັງທົ່ວທຸກທິດ ທ່ານໂປໂລເປັນຄົນສັນຊາດໂຣມ ທ່ານຮູ້ຈັກດີເຖິງກໍາລັງແລະຄວາມສໍາຄັນຂອງໂຣມ ທ່ານຕ້ອງການໄປເຜີຍແຜ່ຂ່າວປະເສີດທີ່ນັ້ນ

ທ່ານໂປໂລບໍ່ມີຄວາມຕັ້ງໃຈຈະໄປຕັ້ງຖິ່ນຖານຢູ່ທີ່ກຸງໂຣມ ເພາະທີ່ນັ້ນຄຣິສຈັກໄດ້ເກີດຂຶ້ນແລ້ວເມື່ອທ່ານຢູ່ບໍ່ນານທ່ານກໍຈະຍ້າຍໄປຍັງເມືອງອື່ນທີ່ບໍ່ມີຜູ້ໃດປ່າວປະກາດ ແຕ່ການຢ້ຽມຢາມອາດເຮັດໃຫ້ (1) ເກີດຄວາມພາກພູມໃຈທີ່ໄດ້ມີໂອກາດເທສນາໃນນະຄອນທີ່ສໍາຄັນແລະເປັນສູນກາງເຊັ່ນກຸງໂຣມ (2) ເປັນການຜູກມິດໄມຕຣີກັບຄຣິສຈັກໃນກຸງໂຣມ ຖ້າສມາຊິກຂອງຄຣິສຈັກເປັນຜູ້ຮ້ອນຮົນຮັກພຣະເຈົ້າແລ້ວ ອາດໃຫ້ການສນັບສນຸນທ່ານໃນການປ່າວປະກາດໃນປະເທດສະເປນຕໍ່ໄປ ຖ້າພວກເຂົາມີຄວາມສົງສັຍຫລືບໍ່ເຫັນພ້ອມກັບແນວຄໍາສອນຂອງທ່ານໂປໂລກໍຈະເປັນອຸປະສັກຂັດຂວາງໃນການປ່າວປະກາດຕາມທີ່ທ່ານໄດ້ຕັ້ງໃຈໄວ້ ແຕ່ໃນທາງກົງກັນຂ້າມຖ້າຄຣິສຈັກໃນກຸງໂຣມມີຄວາມເຂົ້າໃຈແລະໃຫ້ຄວາມຮັກແພງກໍຈະຊ່ວຍທ່ານ ຄຣິສຈັກຈະປ້ອງກັນທ່ານບໍ່ໃຫ້ຖືກການໂຈມຕີຢ່າງບໍ່ເປັນທັມ ແລະໃຫ້ການ

ສັບສົນໄດ້ຢ່າງຫລວງຫລາຍ

ແມ່ນວ່າທ່ານໂປໂລຍັງບໍ່ໄດ້ຮູ້ຈັກຄຣິສຈັກໂຣມ ແລະບໍ່ເຄີຍໄປຢ້ຽມຢາມມາກ່ອນ ແຕ່ທ່ານກໍຍັງມີເພື່ອນທີ່ຮູ້ຈັກຢູ່ທີ່ນັ້ນ ເປັນພວກຄຣິສຕຽນຈາກຄຣິສຈັກທີ່ທ່ານໄດ້ເຄີຍກໍ່ຕັ້ງຂຶ້ນ ຫລືຄຣິສຈັກທີ່ທ່ານເຄີຍໄປຢ້ຽມຢາມໄດ້ຍ້າຍໄປຢູ່ທີ່ກຸງໂຣມ ແຕ່ຄຣິສຕຽນຊາວໂຣມສ່ວນຫລາຍບໍ່ເຄີຍເຫັນໜ້າທ່ານ ເຂົາທັງຫລາຍອາດຮັງກຽດທ່ານກໍອາດເປັນໄດ້ ເພາະສັດຕູຂອງທ່ານໃນທີ່ອື່ນ ໆ ອາດສົ່ງຂ່າວອັນບໍ່ເປັນທັມໃນເຣື່ອງກ່ຽວກັບຕົວທ່ານໄປທີ່ນັ້ນແລ້ວກໍໄດ້ ສະນັ້ນໃນຕອນທໍາອິດນີ້ທ່ານຕ້ອງການສ້າງມິດພາບກັບຄຣິສຕຽນຊາວໂຣມ ກ່ອນທີ່ຈະຕຽມວຽກການຮັບໃຊ້ໃນສະເປນ ທ່ານຈຶ່ງໄດ້ແຈ້ງຄວາມປະສົງຂອງທ່ານໃຫ້ເຂົ້າໃຈຢ່າງຊັດແຈ້ງ ໂດຍຫວັງວ່າພວກເຂົາຈະມີຄວາມເຂົ້າໃຈ ແລະຮ່ວມກັບທ່ານໃນການປ່າວປະກາດຂ່າວປະເສີດໃຫ້ກວ້າງຂວາງອອກໄປໃນແຖບພາກຕາວັນຕົກ

## ສາມ. ຈຸດປະສົງຂອງພຣະທັມໂຣມ

ທ່ານໂປໂລຂຽນພຣະທັມໂຣມເພື່ອຕຽມໃຈຄຣິສຕຽນຊາວໂຣມ ກ່ອນທີ່ທ່ານຈະເດີນທາງໄປ ທ່ານຕ້ອງການໃຫ້ເຂົາມີຄວາມເຂົ້າໃຈຊັດແຈ້ງເຖິງຂ່າວປະເສີດວ່າ ຂ່າວປະເສີດຂອງພຣະເຢຊູຄຣິສນັ້ນມີຄວາມໝາຍແນວໃດ? ທ່ານໄດ້ໃຫ້ຄໍາຕອບຢ່າງຊັດແຈ້ງໃນພຣະທັມໂຣມ 1:16-17 (ສຶກສາທຽບກັບພຣະທັມຮາບາກຸກ 2:4) ຂ່າວປະເສີດນັ້ນເປັນຂອງທຸກຄົນທັງຄົນຢິວແລະຄົນຕ່າງຊາດ ໃນຂ່າວປະເສີດນັ້ນພຣະເຈົ້າຊົງສໍາແດງ (ເປີດເຜີຍ) ໂດຍຄວາມເຊື່ອຕັ້ງແຕ່ຕົ້ນເຖິງທີ່ສຸດປາຍ ຜູ້ທີ່ອ່ານຈົດໝາຍຂອງທ່ານອາດມີຄວາມຄິດເຫັນທີ່ແຕກຕ່າງກັນ ບາງຄົນຄິດວ່າ ມະນຸດມີຄວາມຊອບທັມໃນການປະຕິບັດຕາມພຣະທັມບັນຍັດຊຶ່ງເປັນການກະທໍາທີ່ເຂົາເຮັດຂຶ້ນເອງ (ຣມ 10:3) ໃນທີ່ສຸດເຂົາໄດ້ປະຕິເສດຄວາມຊອບທັມທີ່ມາຈາກພຣະເຈົ້າ ແລະທີ່ຈິງມະນຸດຈະຮັບຄວາມຊອບທັມໄດ້ໂດຍຄວາມເຊື່ອ ດ້ວຍຄວາມເຊື່ອນີ້ແຫລະທຸກຄົນມີຄວາມສະເໝີພາບກັນ ແມ່ນວ່າເປັນຢິວຫລືຄົນຕ່າງຊາດ ຖ້າມີຄວາມເຊື່ອກໍຖືກຕ້ອງຕາມນໍ້າພຣະທັຍຂອງພຣະເຈົ້າ

4/1 ເຣື່ອງການເປັນຄົນຊອບທັມໂດຍຄວາມເຊື່ອ ເປັນເຣື່ອງຫລັກຂອງພຣະທັມໂຣມ ເຮົາເຫັນໄດ້ວ່າພຣະທັມທັງເຫລັ້ມຊີ້ໃຫ້ມີຄວາມເຂົ້າໃຈຊັດແຈ້ງເຖິງຂ່າວປະເສີດ ທີ່ເປັນຄວາມຊອບທັມທີ່ມາຈາກພຣະເຈົ້າຫລາຍກວ່າ ຜູ້ທີ່ມີຄວາມເຊື່ອມີຄວາມຫວັງໃນຄວາມຣອດພົ້ນໂດຍອາສັຍພຣະຄຸນ ຄວາມຊອບທັມແລະຄວາມຮັກຂອງພຣະເຈົ້າ ທ່ານໂປໂລຂຽນໃຫ້ຜູ້ອ່ານມີຄວາມຊື່ນຊົມຍິນດີໃນພຣະຄຸນຄວາມດີຂອງພຣະເຈົ້າ ທີ່ພຣະອົງຊົງເຮັດເພື່ອມະນຸດ

ພຣະທັມໂຣມເປັນຂ່າວປະເສີດຂອງພຣະເຈົ້າ ໃຫ້ຄໍາຕອບຕໍ່ຄໍາຖາມທີ່ວ່າ "ເຮົາຈະໄດ້ຮັບຄວາມຣອດພົ້ນຢ່າງໃດ?" ນອກຈາກນັ້ນຍັງໃຫ້ຄໍາຕອບຕໍ່ຄໍາຖາມຕ່າງ ໆ ເຊັ່ນ "ແມ່ນມີບາງຄົນບໍ່ສັດຊື່ ຄວາມບໍ່ສັດຊື່ຂອງເຂົາ(ມະນຸດ)ນັ້ນຈະເຮັດໃຫ້ຄວາມສັດຊື່ຂອງພຣະເຈົ້າເສັຽຜົນປະໂຍດຫລື?" (ຣມ 3:3) "ເຮົາຈະວ່າຢ່າງໃດ ຈະວ່າພຣະເຈົ້າຊົງລົງໂທດໂດຍບໍ່ຍຸດຕິທັມນັ້ນຫລື?" (ຣມ 3:5) "ພຣະເຈົ້າຊົງເປັນພຣະເຈົ້າຂອງຊາດຢິວຊາວດຽວເທົ່ານັ້ນຫລື?" (ຣມ 3:29) "ພຣະບັນຍັດນັ້ນຄືບາບຫລື?" (ຣມ 7:7,13) "ພຣະເຈົ້າບໍ່ຊົງຍຸດຕິທັມຫລື?" (ຣມ 9:14) "ພຣະເຈົ້າໄດ້ຊົງປະຖິ້ມໄພ່ພົນຂອງພຣະອົງແລ້ວຫລື?" (ຣມ 11:1)

ທ່ານໂປໂລໄດ້ຊີ້ໃຫ້ເຫັນວ່າ ຄວາມຊອບທັມຂອງພຣະເຈົ້າຢູ່ໃນການກະທໍາ (ກິຣິຍາ) ຂອງພຣະອົງຄື ພຣະເຢຊູຄຣິສໄດ້ຕາຍແລະເປັນຂຶ້ນເພື່ອມະນຸດສະຍະຊາດ ພຣະເຈົ້າຊົງຢູ່ຝ່າຍພວກເຮົາ (ຣມ

8:31) ຂ່າວປະເສີດນັ້ນເປັນເຣື່ອງການກະທຳທີ່ພຣະເຈົ້າເຮັດເພື່ອເຮົາ ຄວາມຮັກແລະເປັນຫ່ວງຂອງພຣະອົງທີ່ມີຕໍ່ມະນຸດໄດ້ເປີດເຜີຍອອກຢ່າງຊັດແຈ້ງ ການກະທຳຂອງພຣະເຈົ້າຍັງດຳເນີນໄປຈົນເຖິງການສະເດັດກັບມາຂອງພຣະເຢຊູຄຣິສ

ຄຳວ່າ "ເຊື່ອ" (Faith) ທ່ານໂປໂລໃຊ້ຄຳນີ້ຕາມຄວາມຫມາຍທີ່ມີຢູ່ໃນພາສາເດີມຄື ຄວາມເຊື່ອເປັນການດຳເນີນຊີວິດທີ່ຕໍ່ເນື່ອງບໍ່ມີວັນສິ້ນສຸດ ເປັນຄວາມເຊື່ອສັດທາໃນສິ່ງນຶ່ງອັນໃດທີ່ເປັນຄວາມຈິງ (True) ຄວາມເຊື່ອສັດທາເປັນຄວາມໄວ້ວາງໃຈ (Trust) ອັນເຮັດໃຫ້ຖືຮັກສາຄຳຫມັ້ນສັນຍາທີ່ຍຶດຖືຕໍ່ກັນແລະກັນ (Commitment) ຄວາມເຊື່ອສັດທາໃນພຣະເຈົ້າເປັນສັມພັນທະພາບສ່ວນຕົວຂອງແຕ່ລະບຸກຄົນ (Personal Relationship) ທີ່ແຕ່ລະບຸກຄົນມີຕໍ່ພຣະເຈົ້າ ພຣະອົງຊົງເປີດເຜີຍພຣະອົງໃນພຣະເຢຊູຄຣິສ ຄວາມເຊື່ອນີ້ແຫລະ ທີ່ເຮັດໃຫ້ເກີດການອະພັຍແລະໃຫ້ມີຊີວິດໃຫມ່ເກີດຂຶ້ນ ຕັ້ງແຕ່ບັດນີ້ຈົນຫມົດກັບ ທ່ານໂປໂລມີຄວາມຫມັ້ນໃຈວ່າ ຄວາມຊອບທັມຈະດຳຣົງຢູ່ໂດຍຄວາມສັດຊື່ຄືພຣະເຈົ້າຊົງຄວາມສັດຊື່ຕໍ່ຜູ້ທີ່ເຊື່ອ ແລະຜູ້ທີ່ເຊື່ອມີຄວາມສັດຊື່ຕໍ່ພຣະເຈົ້າ

ຈຸດປະສົງຂອງພຣະທັມໂຣມ ເພື່ອໃຫ້ຜູ້ອ່ານໄດ້ຮູ້ຈັກ ເຣື່ອງຄວາມຊອບທັມຂອງພຣະເຈົ້າ ແລະການອະພັຍໂທດ ຄວາມຊອບທັມຂອງພຣະເຈົ້າເປັນຂອງປະທານໃຫ້ແກ່ຜູ້ທີ່ມີຄວາມເຊື່ອສັດທາ ແລະຜູ້ດຳເນີນຕາມຄວາມເຊື່ອນັ້ນ

| |
|---|
| **ຈົ່ງເອົາສິ່ງທີ່ທ່ານໄດ້ສຶກສາຈາກຂ້າງເທິງເຮັດບົດຝຶກຫັດຂໍ້ທີ່ນຶ່ງ & ສອງ** |

## ສີ່. ເນື້ອນັຍຂອງພຣະທັມໂຣມ

### 1. <u>ຂ່າວປະເສີດແຫ່ງຄວາມຣອດພົ້ນ</u>

ທ່ານໂປໂລມີຄວາມເຊື່ອໃນຂ່າວປະເສີດດຽວກັນກັບຄຣິສຈັກໃນກຸງໂຣມ ແຕ່ທ່ານກໍໄດ້ສະເນີຫົວໃຈຂອງຂ່າວປະເສີດໃຫ້ແກ່ຊາວໂຣມັນ ເພື່ອຊ່ວຍໃຫ້ເຂົາໃຫ້ເກີດຄວາມເຂົ້າໃຈຢ່າງຊັດແຈ້ງແລະເປັນການ ສ້າງມິຕພາບກັບຄຣິສຕຽນຊາວໂຣມັນດ້ວຍ ທ່ານສອນວ່າຂ່າວປະເສີດນັ້ນເຫມືອນກັນຫມົດບໍ່ມີແຕກຕ່າງ ຈະເປັນຂ່າວປະເສີດສຳລັບຊາວຢິວຫລືຊາວຕ່າງຊາດ ຈະເປັນຂ່າວປະເສີດສຳລັບຈັກພັດໂຣມຫລືສຳລັບໂລກ ຈະເປັນຂ່າວປະເສີດສຳລັບຄວາມເຊື່ອຫລືຊີວິດປະຈຳວັນ ຈະເປັນຂ່າວປະເສີດສຳລັບປັດຈຸບັນຫລືອານາຄົດ

ທ່ານໂປໂລບໍ່ໄດ້ຄິດຄົ້ນເຣື່ອງຂ່າວປະເສີດຂຶ້ນດ້ວຍຕົວເອງ ທ່ານໄດ້ຮັບມາຈາກພຣະເຢຊູຄຣິສ (ຄຕ 1:11,12) ທ່ານກ່າວວ່າ "ຂ່າວປະເສີດຂອງພຣະເຈົ້າ" (ຣມ 1:1) ເປັນເຣື່ອງທີ່ພຣະເຈົ້າໄດ້ເຮັດເພື່ອມະນຸດທາງພຣະຄຣິສເປັນຂ່າວປະເສີດທີ່ວ່າ ພຣະເຈົ້າຊົງສາມາດຊ່ວຍ ແລະພຣະອົງຊົງໃຫ້ຄວາມຣອດພົ້ນແກ່ທຸກຄົນທີ່ມີຄວາມເຊື່ອໃນຂ່າວປະເສີດ ທີ່ພຣະອົງຊົງປະທານຄວາມຣອດພົ້ນທາງພຣະເຢຊູຄຣິສ

ທ່ານໂປໂລຕ້ອງການຈະໃຫ້ຜູ້ອ່ານໄດ້ທົບທວນວ່າຂ່າວປະເສີດນັ້ນໄດ້ກຳເນີດຂຶ້ນໃນຊົນຊາດອິສຣາເອລ ພຣະເຢຊູຄຣິສເປັນເຊື້ອສາຍດາວິດ ແລະຊົງເປັນພຣະບຸດຂອງພຣະເຈົ້າ ປະກອບດ້ວຍຣິດເດດພຣະເຈົ້າປະທານຄວາມຣອດພົ້ນແກ່ມະນຸດທັງປວງທາງພຣະຄຣິສ ແລະພຣະເຈົ້າຊົງໃຊ້ທ່ານເປັນຜູ້ປະ

ກາດແກ່ຄົນຕ່າງຊາດ (ຣມ 1:1-7) ທ່ານໂປໂລໂມທນາພຣະຄຸນຂອງພຣະເຈົ້າ ເພາະໄດ້ຮັບຂ່າວດີເຣື່ອງຄວາມເຊື່ອຂອງຄຣິສຈັກໂຣມ ທ່ານບອກເຂົາໃຫ້ຫມັ້ນໃຈວ່າທ່ານໄດ້ອະທິຖານດົນນານ ແລະຍັງອະທິຖານຢູ່ ເພື່ອທ່ານຈະໄດ້ມາຢຽ້ມຢາມເຂົາແລະມີໂອກາສແບ່ງປັນກັບພວກເຂົາໃນກຸງໂຣມ (ຣມ 1: 8-15)

ຫົວຂໍ້ສຳຄັນຂອງທ່ານຄື ທ່ານໂປໂລບໍ່ລະອາຍໃນຂ່າວປະເສີດ ແມ້ວ່າຈະເປັນກຸງໂຣມນະຄອນຫລວງໃຫຍ່ຂອງອານາຈັກໂຣມັນ ທີ່ທ່ານມີຄວາມພາກພູມໃຈ ທ່ານກໍຍັງບໍ່ລະອາຍໃນຂ່າວປະເສີດ ແມ່ນວ່າໂຣມມີກອງທັພອັນໃຫຍ່ໂຕ ແລະມີອຳນາດທາງການເມືອງ ແຕ່ຣິດເດດທີ່ແທ້ຈິງຄືຣິດເດດຂອງພຣະເຈົ້າທີ່ຊ່ວຍໃຫ້ມະນຸດມາເຖິງຄວາມຣອດພົ້ນ ທຸກຄົນທີ່ເຊື່ອໃນຂ່າວປະເສີດຍ່ອມມີຄວາມສັມພັນຢ່າງຖືກຕ້ອງກັບພຣະເຈົ້າ ແລະການມີຊີວິດຢ່າງຖືກຕ້ອງກັບພຣະເຈົ້າ (ຣມ 1:1, 17)

ອາດຈະມີບາງຄົນຄິດວ່າບໍ່ຕ້ອງການຄວາມຣອດພົ້ນ ທ່ານໂປໂລກ່າວວ່າ ເຂົາເຫລົ່ານັ້ນຄິດຜິດ ເພາະມະນຸດທຸກຄົນທຳຜິດບາບຕໍ່ພຣະພັກພຣະເຈົ້າ ເຂົາເປັນຄົນບາບ ທ່ານຈຶ່ງໄດ້ກ່າວເຖິງບາບແລະຄວາມຕ້ອງການຂອງມະນຸດທຸກຄົນກ່ອນ ພວກຢິວແລະພວກຕ່າງຊາດກໍເຫມືອນກັນ(ຣມ 1:18- 3:20) ໂດຍໃຫ້ເຂົາພິຈາຣະນາດູມະນຸດ ແລະສຶກສາພຣະຄັມພີ ຈະພົບວ່າມະນຸດຊົ່ວແລະລົ້ມເຫລວ ແມ່ນວ່າພວກຢິວຜູ້ທີ່ມີໂອກາດດີກວ່າກໍກະທຳບາບຄືກັບຄົນຕ່າງຊາດ ພຣະບັນຍັດແລະຄຳສອນໃນພຣະຄັມພີປ້ອງກັນໄວ້ບໍ່ໄດ້ ມະນຸດທຸກຄົນມີຄວາມຕ້ອງການຄວາມຊ່ວຍເຫລືອຄືກັນ ເພາະເຂົາສົມຄວນໄດ້ຮັບການພິພາກສາລົງໂທດຈາກພຣະເຈົ້າ ແຕ່ເຂົາກໍຫາຄວາມຊ່ວຍເຫລືອບໍ່ພົບດ້ວຍຕົວເຂົາເອງ

ຄວາມຊ່ວຍເຫລືອຂອງພຣະເຈົ້າທີ່ນຳມະນຸດມາເຖິງຄວາມຣອດພົ້ນອັນແທ້ຈິງຢູ່ໃນພຣະເຢຊູຄຣິສພຣະອົງໄດ້ຊົງເສັຽສລະອັນຍິ່ງໃຫຍ່ໃນການໄຖ່ບາບມະນຸດທຸກຄົນທີ່ເຊື່ອ ເມື່ອພຣະເຈົ້າຊົງເປັນຜູ້ຊ່ວຍທີ່ປະທານພຣະບຸດຂອງພຣະອົງຄື ພຣະເຢຊູຄຣິສ ກໍບໍ່ມີມະນຸດຜູ້ໃດທີ່ຈະສາມາດຍົກຕົນເອງຂຶ້ນໄດ້ ຫລືບໍ່ມີຫມູ່ຄະນະໃດ ໆ ຈະອວດຕົວໄດ້ ຖານະແລະສິດທິໃຫມ່ຂອງມະນຸດເປັນຂອງຂວັນທີ່ພຣະເຈົ້າຊົງປະທານໃຫ້ແກ່ເຂົາ ແທ້ຈິງແລ້ວມະນຸດບໍ່ຄູ່ຄວນທີ່ຈະໄດ້ຮັບຂອງຂວັນນີ້ ແຕ່ພຣະເຈົ້າກໍປະທານໃຫ້ແກ່ມະນຸດລ້າ ໆ ແມ່ນວ່າໃນຕອນທຳອິດຈະປະທານແກ່ພວກຢິວກ່ອນ ບັດນີ້ພຣະເຈົ້າປະທານໃຫ້ແກ່ທຸກຄົນຕາມແຜນການຂອງພຣະອົງ ທີ່ທຸກຄົນຈະຮັບເອົາໄດ້ດ້ວຍຄວາມຈິງໃຈໃນຄວາມເຊື່ອສັດທາ (ຣມ 3:21-31)

ໂດຍຫົນທາງແຫ່ງຄວາມຣອດພົ້ນນີ້ເອງ ພຣະຄຸນຂອງພຣະເຈົ້າສາມາດຊ່ວຍຄົນບາບ ແລະຄົນທີ່ຊ່ວຍຕົນເອງບໍ່ໄດ້ໃຫ້ຣອດພົ້ນໄດ້ ຫົນທາງນີ້ບໍ່ແມ່ນເປັນທາງພຣະບັນຍັດ ເພາະທາງແຫ່ງພຣະບັນຍັດນັ້ນມະນຸດຈະຣອດພົ້ນບໍ່ໄດ້ ຄວາມຣອດພົ້ນບໍ່ໄດ້ຂຶ້ນຢູ່ກັບການທີ່ເຂົາຮັກສາບັນຍັດໄດ້ຫລືບໍ່ໄດ້ ແຕ່ເປັນພຣະຄຸນຂອງພຣະເຈົ້າທາງພຣະເຢຊູຄຣິສ ຂ່າວປະເສີດທີ່ນຳຄວາມຣອດພົ້ນມາໃຫ້ກັບເຮົານັ້ນ ມີຮາກຖານຈາກພຣະຄັມພີພາກພັນທະສັນຍາເດີມແລະຊີວິດຂອງຊົນຊາດອິສຣາເອລ (ຣມ 4) ຕາມຄວາມຈິງແລ້ວບັນພະບູຣຸດຂອງຊາວອິສຣາເອລມີຜູ້ທີ່ເປັນແບບຢ່າງຢູ່ສອງທ່ານ ທີ່ເປັນຕົວຢ່າງຂອງຂ່າວປະເສີດແຫ່ງຄວາມເຊື່ອ ຄືທ່ານອັບຣາຮາມທີ່ພຣະເຈົ້າຊົງພໍພຣະທັຍໃນຕົວທ່ານ (ປຖກ 15:6) ແລະທ່ານດາວິດທີ່ທ່ານໄດ້ກ່າວໃນບົດເພງສັນລະເສີນທີ່ 32 ວ່າ ການອະພັຍໂທດບາບເປັນທາງທີ່ເຂົ້າສນິທກັບພຣະເຈົ້າພຣະຄຸນແຫ່ງການອະພັຍໂທດຂອງພຣະເຈົ້າ ແລະການຕອບສນອງຂອງມະນຸດໂດຍຄວາມເຊື່ອ ເປັນພາກສ່ວນສຳຄັນທີ່ເປັນພື້ນຖານຂອງຂ່າວປະເສີດ

## 2. <u>ຊີວິດທີ່ຕາຍໃນບາບແລະຊີວິດໃຫມ່ທີ່ໄຖ່ໂດຍພຣະເຢຊູຄຣິສ</u>

ຄວາມເຊື່ອນີ້ບໍ່ແມ່ນເປັນການເປີດທາງໄປເຖິງພຣະເຈົ້າເທົ່ານັ້ນ ແຕ່ມີຜົນນຳພາຊີວິດໃຫ້ມີ

ຄວາມຈະເຣີນເຕີບໂຕເຂັ້ມແຂງກວ່າເດີມ ເປັນສິ່ງທີ່ໃຫ້ຜູ້ເຊື່ອມີຄວາມເຊື່ອໝັ້ນ ເພາະຜູ້ທີ່ພຣະຄຣິສໄດ້ຕາຍໄຖ່ເຂົາມັ້ນ ພຣະເຈົ້າມີພຣະພອນທີ່ໃຫຍ່ກວ່ານັ້ນສຳລັບເຂົາໂດຍທາງພຣະວິນຍານບໍຣິສຸດ ຣິດເດດຂອງພຣະເຈົ້າຈະມີຊັຍຊນະຢ່າງສົມບູນຕໍ່ບາບທີ່ທຳລາຍມະນຸດ ຫລັກຄວາມຈິງນີ້ບໍ່ໄດ້ມີພື້ນຖານບໍ່ຂຶ້ນຢູ່ກັບຄວາມຍິ່ງໃຫຍ່ຂອງມະນຸດ ແຕ່ເປັນຄວາມຍິ່ງໃຫຍ່ຂອງພຣະເຈົ້າ ພຣະອົງຊົງຕອບສະນອງຄວາມຕ້ອງການຂອງມະນຸດໂດຍພຣະເຢຊູຄຣິສຜູ້ຊົງຖືກຕຶງຕາຍເພື່ອບາບຂອງມະນຸດ ແລະຍັງມີຊີວິດຢູ່ ພຣະບັນຍັດຂອງຢິວນັ້ນມີບົດບາດຮອງລົງມາ ພຣະບັນຍັດມີໜ້າທີ່ເຮັດໃຫ້ເຫັນຊັດແຈ້ງວ່າ ມະນຸດຄວນເຮັດແນວໃດຫລືບໍ່ຄວນເຮັດແນວໃດ ດ້ວຍເຫດນີ້ພຣະບັນຍັດຈຶ່ງຊ່ວຍໃຫ້ເຮົາໄດ້ຮູ້ຈັກວ່າ ເຮົາມີຄວາມບາບຕ້ອງຫັນຫາຄວາມຊ່ວຍເຫລືອຈາກພຣະເຢຊູຄຣິສ (ຣມ 5)

ທ່ານໂປໂລໄດ້ອະທິບາຍເຖິງບາບເດີມອັນເປັນທັມຊາດຂອງມະນຸດວ່າ ເປັນບາບທີ່ຕິດຕົວມາກັບຕົ້ນເດີມທີ່ມະນຸດໄດ້ເລີ້ມເຮັດບາບ ທ່ານບໍ່ໄດ້ເຫັນວ່າບາບນັ້ນຈະເປັນຄືກັບສີ ທີ່ມາແຕ້ມມະນຸດໃຫ້ເປິະເປື້ອນ ຫລືເຮັດໃຫ້ມະນຸດມີແນວໂນ້ມໃຫ້ທຳບາບເທົ່ານັ້ນ ແຕ່ທ່ານເຫັນຕົ້ນກຳເນີດຂອງຄວາມບາບນັ້ນເປັນເພາະ ມະນຸດທຸກຄົນຄືກັນໝົດ ຄືມີເຊື້ອສາຍເຜົ່າພັນໃນຄວາມເປັນມະນຸດຄືກັນໂດຍທາງອາດາມ ຜູ້ເປັນຕົ້ນກຳເນີດຂອງມະນຸດຊາດ ທີ່ໄດ້ເປັນຜູ້ເລີ້ມຕົ້ນທຳບາບ ດັ່ງນັ້ນມະນຸດທັງໝົດຈຶ່ງເປັນຄົນບາບໃນໂຣມ 5 ອາຈານພີສະນຸ ອັຄພົນອະທິບາຍເຖິງມະນຸດທັງໝົດເປັນຄົນບາບໄວ້ດັ່ງນີ້

1. ອາດາມໄດ້ເຮັດບາບໂດຍຝ່າຝືນຄຳສັ່ງຂອງພຣະເຈົ້າ
2. ຜົນທີ່ເກີດຂຶ້ນກໍຄືຄວາມຕາຍໄດ້ເຂົ້າມາໃນໂລກ ເພາະຄວາມຕາຍເປັນຜົນແຫ່ງຄວາມບາບ
3. ນັ້ນຕັ້ງແຕ່ອາດາມມາຈົນເຖິງໂມເຊຍັງບໍ່ມີພຣະທັມບັນຍັດເກີດຂຶ້ນ ເພາະພຣະເຈົ້າຍັງບໍ່ໄດ້ປະທານທັມບັນຍັດ ດັ່ງນັ້ນໃນເວລານັ້ນກໍບໍ່ມີການຜິດບາບອັນເນື່ອງຈາກເຮັດຜິດທັມບັນຍັດ (ສະແດງວ່າ ການທີ່ມະນຸດເຮັດຜິດບາບນັ້ນເປັນທັມຊາດທີ່ຕິດຕົວມາ)
4. ເຖິງປານນັ້ນມະນຸດຍັງຕ້ອງປະສົບກັບຄວາມຕາຍຢູ່
5. ເຫດຜົນທີ່ມະນຸດຕາຍກໍເພາະເຜົ່າພັນຂອງມະນຸດລ້ວນເປັນເຊື້ອສາຍຂອງອາດາມ ທີ່ໄດ້ເຮັດບາບ ແລະທຸກຄົນລ້ວນເປັນຜູ້ເຮັດບາບ ເຂົາຈຶ່ງຕ້ອງຕາຍ

ສິ່ງດຽວເທົ່ານັ້ນທີ່ຈະສາມາດປ່ຽນແປງທັມຊາດນີ້ໄດ້ກໍຄື ພຣະເຢຊູຄຣິສສະເດັດເຂົ້າມາໃນໂລກເມື່ອເຮົາເປັນອັນນຶ່ງອັນດຽວກັບພຣະເຢຊູຄຣິສແລ້ວ ພຣະອົງເຮັດໃຫ້ເຮົາມີຊີວິດໄດ້ ແຕ່ກໍມີຄຳຖາມເກີດຂຶ້ນອີກວ່າ ຖ້າພຣະເຈົ້າຈະຍົກຄວາມຜິດບາບ ໃຫ້ມະນຸດກາຍເປັນຄົນຊອບທັມໄດ້ແລ້ວ ກໍເທົ່າກັບພຣະເຈົ້າອະນຸຍາດໃຫ້ມະນຸດທຳບາບອີກຕໍ່ໄປ ບໍ່ໄດ້ເປັນເຊັ່ນນັ້ນ ເພາະໂດຍທີ່ເຮົາຮັບບັບຕິສມານັ້ນເຮົາໄດ້ເປັນອັນນຶ່ງອັນດຽວໃນພຣະຄຣິສ ທັນໃດນັ້ນເອງຊີວິດອັນເຕັມໄປດ້ວຍຄວາມບາບແຕ່ຫົນຫລັງຂອງເຮົາກໍຈະເປັນເຣື່ອງອາດີດໄປ ຊີວິດໃໝ່ກໍຈະເລີ້ມຕົ້ນ ສັນຍາລັກຄວາມໝາຍຂອງບັບຕິສມາກໍເທົ່າກັບວ່າເຮົາໄດ້ຕາຍແລ້ວກັບຄວາມບາບ ແຕ່ເຮົາໄດ້ກັບຟື້ນຂຶ້ນໃໝ່ແລະມີຊີວິດໃໝ່ໃນພຣະເຢຊູຄຣິສຢ່າງຜູ້ຊອບທັມຊີວິດໃໝ່ນີ້ ຈະໄດ້ຮັບແຮງກຳລັງທີ່ຈະຄອຍອຸດໜຸນຊຸກຍູ້ຈາກພຣະວິນຍານບໍຣິສຸດເຈົ້າ (ຣມ 6)

ທ່ານໂປໂລອະທິບາຍຊີວິດໃໝ່ໃນພຣະຄຣິສວ່າ ພຣະຄຣິສເປັນສູນກາງຂອງຊີວິດແລະເປັນຜູ້ມີອຳນາດຄວບຄຸມຊີວິດ ບໍ່ແມ່ນຄວາມບາບທີ່ເຫັນແກ່ຕົນເອງຫລືຕັນຫາແຫ່ງຄວາມບາບ ຫລືບໍ່ແມ່ນເປັນພຣະບັນຍັດທີ່ເປັນລາຍລັກອັກສອນຢູ່ພາຍນອກກາຍ ສູນກາງແລະອຳນາດທີ່ຄວບຄຸມຊີວິດເປັນພຣະຄຣິສ ຜູ້ເປັນພຣະຜູ້ເປັນເຈົ້າແລະພຣະຜູ້ໄຖ່ບາບ ພຣະທັມບັນຍັດນັ້ນດີງາມ (ຣມ 7:12) ໃຫ້ຄົນປະພຶດດີ ແຕ່ບໍ່ໄດ້ໃຫ້ຣິດເດດແກ່ມະນຸດທີ່ຈະຫລຸດຈາກອຳນາດຜູກມັດຂອງບາບໃນຊີວິດຂອງຕົນ ພຣະບັນຍັດຮຽກຮ້ອງຄຸນ

ຄວາມດີຫລາຍຢ່າງ ແຕ່ບໍ່ໄດ້ໃຫ້ກຳລັງໃນການຊຸກຍູ້ທີ່ຈະເຮັດໃຫ້ສຳເຣັດ ນັ້ນຈຶ່ງເປັນເຫດທີ່ທ່ານໂປໂລຮ້ອງວ່າ "ໂອເຮົານີ້ຊ່າງເປັນຄົນທຸກຍາກເຂັນໃຈແທ້ຫນໍ ໃຜແດ່ຈະຊ່ວຍເຮົາໃຫ້ພົ້ນຈາກຮ່າງກາຍທີ່ຕ້ອງຕາຍນີ້" (ຣມ 7:24) ພຣະຄຣິສຊົງຊ່ວຍໄດ້ ພຣະອົງເປັນຄຳຕອບທີ່ເຮົາຈະເຊື່ອຖືແລະມີຄວາມຈົງຮັກພັກດີ ແລະດ້ວຍຄວາມເຊື່ອຖືແລະຈົງຮັກພັກດີຂອງຜູ້ກ່ຽວນີ້ເອງ ພຣະວິນຍານບໍຣິສຸດຊົງປະທານຣິດເດດໃຫ້ເຂົາເປັນຄົນຊື່ກົງແລະມີຄວາມເຊື່ອຫມັ້ນ (ຣມ 8)

ດັ່ງນັ້ນ ດ້ວຍຄວາມຮັກຂອງພຣະເຈົ້າທີ່ສຳແດງໃນພຣະຄຣິສແລ້ວ ໄດ້ນຳພາຜູ້ເຊື່ອໂດຍພຣະວິນຍານບໍຣິສຸດໃຫ້ມີຊີວິດທີ່ເຊື່ອຟັງດ້ວຍຄວາມກະຕັນຍູກະຕະເວທີ ດ້ວຍເຫດນີ້ຄຣິສຕຽນມີຄວາມເຊື່ອວາງໃຈໃນພຣະປະສົງອັນຖາວອນຂອງພຣະເຈົ້າ ເຮັດໃຫ້ເຂົາສາມາດຜະເຊີນກັບອານາຄົດດ້ວຍຄວາມຫວັງແລະມີຊີວິດດ້ວຍຊັຍຊນະຂອງພຣະວິນຍານບໍຣິສຸດ ເຂົາຍັງຕ້ອງຕໍ່ສູ້ກັບຊີວິດຕໍ່ໄປ ບາງເທື່ອອາດຜິດພາດ ແຕ່ຂ່າວປະເສີດໃຫ້ຣິດເດດແກ່ເຂົາ ເຂົາມີຄວາມຄິດພ້ອມກັບໂປໂລວ່າ "ເຫດວ່າເຮົາເຊື່ອຢ່າງຫມັ້ນຄົງວ່າຄວາມຕາຍຫລືຊີວິດກໍດີ ທູດສວັນຫລືຜູ້ປົກຄອງກໍດີ ສິ່ງທີ່ມີຢູ່ດຽວນີ້ຫລືສິ່ງຈະມີມາໃນພາຍຫນ້າກໍດີ ຫລືຣິດເດດທັງຫລາຍ ຄວາມສູງ ຫລືຄວາມເລິກກໍດີ ຫລືສິ່ງອື່ນໃດທີ່ໄດ້ຊົງສ້າງແລ້ວນັ້ນກໍດີ ກໍຈະບໍ່ສາມາດເຮັດໃຫ້ພວກເຮົາຂາດຈາກຄວາມຮັກຂອງພຣະເຈົ້າ ຊຶ່ງມີຢູ່ໃນພຣະເຢຊູຄຣິສເຈົ້າຂອງເຮົາທັງຫລາຍນັ້ນ" (ຣມ 8:38-39)

### 3. ຊົນຊາດຍິວກັບພຣະຄຣິສ

ໃນໂຣມບົດທີ່ 9-11 ທ່ານໂປໂລໄດ້ກ່າວເຖິງບັນຫາຕ່າງ ໆ ທີ່ກ່ຽວຂ້ອງກັບພວກຍິວ ທ່ານຖາມດ້ວຍຈິດໃຈໂສກເສົ້າວ່າ ເປັນຫຍັງບໍ່ມີພວກຍິວຫລວງຫລາຍທີ່ເຊື່ອຂ່າວປະເສີດ? ຂ່າວປະເສີດໄດ້ເຜີຍແຜ່ໄປແລະໄດ້ຊນະໃຈພວກຕ່າງຊາດຢ່າງຫລວງຫລາຍ ແຕ່ພວກຍິວທີ່ເປັນຜູ້ນຳແລະພວກຍິວສ່ວນໃຫຍ່ປະຕິເສດພຣະຄຣິສ ແລະມີຊາວຍິວທີ່ຕໍ່ສູ້ພວກຄຣິສຕຽນດ້ວຍ ນີ້ເປັນເຣື່ອງຫນ້າເສົ້າທີ່ຊາວຍິວຜູ້ມີຄວາມເລິກຊຶ້ງໃນຄວາມເຊື່ອເປັນມໍຣະດົກຂອງເຂົາ ແລະມີຄວາມຮ້ອນໃຈພຣະບັນຍັດມາຕົກຢູ່ໃນສະພາບເຊັ່ນນີ້ ທີ່ຈິງຂ່າວປະເສີດໄດ້ມາເຖິງ "ພວກຍິວກ່ອນ" (ຣມ 1:16) ແຕ່ພວກຍິວສ່ວນຫລາຍກໍປະຕິເສດບໍ່ຮັບເອົາໄວ້ ພວກຄຣິສຕຽນຈະອະທິບາຍຂໍ້ນີ້ແນວໃດ? ຊາວຍິວຜູ້ເປັນຄຣິສຕຽນຄວນມີຄວາມຄິດແນວໃດຕໍ່ຊາວຍິວດ້ວຍກັນ? ຄຣິສຕຽນຊາວຕ່າງຊາດຄວນມີຄວາມຄິດແນວໃດໃນເຣື່ອງນີ້? ຄຣິສຕຽນຊາວຕ່າງຊາດຄວນກະທຳແນວໃດຕໍ່ຊາວຍິວ? ຄຳຖາມເຫລົ່ານີ້ຣົບກວນຈິດໃຈແລະແນວຄິດຂອງຄຣິສຈັກໂຣມແລະທ່ານໂປໂລດ້ວຍ ດ້ວຍເຫດນີ້ໂຣມບົດ 9-11 ທ່ານໂປໂລຈຶ່ງໄດ້ພິຈາຣະນາເຣື່ອງນີ້ກັບຄຣິສຈັກໂຣມທີ່ສ່ວນຫລາຍເປັນຊົນຕ່າງຊາດ

ທ່ານໂປໂລໄດ້ທົບທວນປວັດສາດດ້ວຍຄວາມຫນັກໃຈ ທ່ານໄດ້ຊີ້ໃຫ້ເຫັນວ່າພວກຍິວບໍ່ໄດ້ໃຊ້ສິດທິທີ່ພຣະເຈົ້າຊົງປະທານໃຫ້ຢ່າງຖືກຕ້ອງ (ຣມ 9:1-5) ແລ້ວທ່ານກໍນຳມາເຖິງຈຸດສຳຄັນ ຄືພຣະເຈົ້າຊົງເປັນພຣະເຈົ້າຜູ້ຊົງມີອຳນາດເຫນືອພິພົບໂລກ ພຣະອົງມີຣິດເດດແລະພຣະປັນຍາ ພຣະອົງຊົງເລືອກທີ່ຈະສ້າງຄຣິສຈັກທີ່ມີຊົນຕ່າງຊາດເປັນສ່ວນໃຫຍ່ ແລະປ່ອຍໃຫ້ພວກລັດທິຍິວຢູ່ພາຍນອກຄຣິສຈັກມະນຸດກໍບໍ່ມີສິດທີ່ຈະກ່າວໂທດພຣະອົງ ພຣະອົງຊົງມີສິດທີ່ຈະເລືອກຖ້າມກາງມະນຸດແລະກະທຳໃຫ້ພຣະທັຍຂອງພຣະອົງສຳເຣັດໂດຍໃຊ້ຄົນງານທີ່ພຣະອົງຊົງເລືອກໄວ້ນັ້ນ (ຣມ 9:6-33)

ການກະທຳເຊັ່ນນີ້ບໍ່ແມ່ນວ່າພຣະເຈົ້າຊົງກະທຳໂດຍຂາດສະຕິປັນຍາຫລືຄວາມຍຸຕິທັມ ທ່ານໂປໂລກ່າວພຣະເຈົ້າຍຸຕິທັມ ເຖິງແມ່ນວ່າມະນຸດບໍ່ເຂົ້າໃຈວິທີການຂອງພຣະອົງ ແລະໃນເຣື່ອງນີ້ມີເຣື່ອງທີ່ຈະເວົ້າຫລາຍ ແມ່ນພວກຍິວໄດ້ຍິນຂ່າວປະເສີດ ແຕ່ເຂົາກໍມີຄວາມຄິດທີ່ໄດ້ປະຕິເສດບໍ່ຍອມຮັບພຣະຄຣິສ

(ຣມ 10) ຢ່າງໃດກໍຕາມບໍ່ແມ່ນວ່າພວກຢິວທັງໝົດປະເສີດບໍ່ຮັບຂ່າວປະເສີດ ແຕ່ຍັງມີສ່ວນນຶ່ງທີ່ເອີ້ນກັນວ່າ "ພວກທີ່ເຫລືອຢູ່" (a remnant, ຣມ 11:5) ພວກນີ້ເປັນຜູ້ທີ່ມີຄວາມເຊື່ອທີ່ເຫລືອຢູ່ພຽງເລັກນ້ອຍ [ຄວາມໝາຍຂອງຄວາມນີ້ໃນພາສາເດີມນັ້ນຄືກັບເສດຜ້າທີ່ໃຊ້ທຳຄວາມສະອາດໄດ້ຜ່ານການໃຊ້ຈົນເປິະເປື້ອນ ແລ້ວທຳຄວາມສະອາດຫລາຍຄັ້ງຫລາຍເທື່ອຈົນເຫລືອເປັນເສດຜ້າ] ຄວາມຈິງນີ້ໄດ້ເກີດຂຶ້ນເຊັ່ນດຽວກັບໃນປະວັດອິສຣາເອລທີ່ມີບາງຄົນທີ່ສັດຊື່ໃນຄວາມເຊື່ອຈະເຫລືອຢູ່ (ຣມ 11:1-10)

ເຖິງແມ່ນວ່າເປັນເຊັ່ນນັ້ນ ພຣະເຈົ້າຍັງຊົງນຳເອົາສິ່ງດີອອກມາຈາກຄວາມບາບທີ່ບໍ່ມີຄວາມເຊື່ອຟັງ ແມ່ນພວກຢິວຈະປະຕິເສດບໍ່ຍອມຮັບຂ່າວປະເສີດ ຂົ່ມເຫັງຄຣິສຕຽນແລະຂັບໄລ່ໄສ່ສົ່ງຄຣິສຕຽນໃຫ້ໄປໃນໂລກຂອງຄົນຕ່າງຊາດ ພຣະເຈົ້າກໍຍັງຮັດໃຫ້ເກີດຜົນດີ ຄືຂ່າວປະເສີດຂອງພຣະເຈົ້າໄດ້ປ່າວປະກາດໃຫ້ແກ່ຄົນຫລວງຫລາຍກວ່າແຕ່ກ່ອນໄດ້ຍິນໄດ້ຟັງຂ່າວປະເສີດ ແລະເປັນການເພີ່ມພູນພວກຄົນຕ່າງຊາດໃຫ້ມີຄວາມເຊື່ອຫລາຍຍິ່ງຂຶ້ນ (ຣມ 11:11-24) ນອກຈາກນີ້ທ່ານໂປໂລມີຄວາມຫວັງວ່າຫລັງຈາກທີ່ຂ່າວປະເສີດໄປເຖິງທຸກປະເທດຊາດແລ້ວ ໃນທີ່ສຸດພວກຢິວກໍຈະເຊື່ອພຣະເຈົ້າ "ເພາະພຣະເຈົ້າໄດ້ຊົງຮິບໂຮມຄົນທັງປວງໃຫ້ຢູ່ໃນຄວາມບໍ່ເຊື່ອຟັງ ເພື່ອຈະໄດ້ຊົງເມດຕາແກ່ເຂົາທຸກຄົນ" (ຣມ 11:25-32) ພຣະທັມຂໍ້ນີ້ຊີ້ໃຫ້ເຫັນວ່າທັງຄົນຢິວແລະຄົນຕ່າງຊາດຈະມີຖານະທີ່ສເມີພາບກັນ ຄືຕ່າງກໍບໍ່ເຊື່ອຟັງພຣະເຈົ້າ ແລະເພິ່ງພາອາສັຍພຣະເມດຕາຄຸນຂອງພຣະເຈົ້າ

ທ່ານໂປໂລບໍ່ມີຄວາມເຂົ້າໃຈໃນວິທີການແລະແຜນການຂອງພຣະເຈົ້າໝົດ ແຕ່ທ່ານວາງໃຈໃນພຣະເຈົ້າ ທ່ານເຊື່ອວ່າພຣະເຈົ້າຜູ້ຊົງສະຕິປັນຍາເລີດຍິ່ງກຳລັງຊົງກະທຳໃຫ້ນ້ຳພຣະທັຍອັນກະຣຸນາຄຸນແລະຍຸຕິທັມຂອງພຣະອົງສຳເຣັດຖ້າມກາງມະນຸດທັ້ງປວງ ດັ່ງນັ້ນຄຳລົງທ້າຍຂອງຕອນນີ້ເປັນຄຳສັນລະເສີນທີ່ສະແດງເຖິງຄວາມໄວ້ວາງໃຈໃນພຣະເຈົ້າ "ດ້ວຍວ່າສິ່ງສາຣະພັດກໍເປັນມາຈາກພຣະອົງດ້ວຍພຣະອົງ ແລະເພື່ອພຣະອົງ ຂໍພຣະກຽດຕິຍົດຈົ່ງມີແກ່ພຣະອົງສືບ ໆ ໄປເປັນນິດ ອາເມນ (ຣມ 11: 33-36)

4. <u>ການດຳເນີນຊີວິດຄຣິສຕຽນ</u>

ສຳລັບທ່ານໂປໂລຫລັກຄວາມເຊື່ອ (ຫລືສາສນາສາດ) ແລະຈະຣິຍະທັມ (ຫລືການປະຕິບັດຕາມຫລັກທັມ) ເປັນສິ່ງທີ່ຕ້ອງຄວບຄູ່ກັນໄປສເມີ ດັ່ງນັ້ນພຣະທັມໂຣມບົດທີ່ 12-15 ຈຶ່ງເປັນຂໍ້ແນະນຳທີ່ກ່ຽວກັບຈະຣິຍະທັມ ຄຣິສຕຽນດຳເນີນ "ຕາມຊີວິດໃໝ່" (ຣມ 6:4) ເຫດສະນັ້ນທ່ານໂປໂລຈຶ່ງແນະນຳແກ່ຄຣິສຈັກໂຣມເຊັ່ນດຽວກັນກັບຄຣິສຈັກອື່ນ ໆ ວ່າ ຂ່າວປະເສີດຮຽກຮ້ອງສິ່ງອັນໃດໃນຊີວິດປະຈຳວັນ ເຂົາທັງຫລາຍຕ້ອງຖວາຍຕົວເປັນເຄື່ອງບູຊາທີ່ມີຊີວິດ ບໍຣິສຸດ ແລະມອບໄວ້ກັບພຣະເຈົ້າເຂົາທັ້ງຫລາຍຈະຕ້ອງປຽ່ນແປງໃໝ່ ເພື່ອຄວາມຄິດແລະການກະທຳທັງສິ້ນຂອງເຂົາຈະຮັບໃຊ້ຕາມພຣະປະສົງຂອງພຣະເຈົ້າ ເຂົາຈຶ່ງມີຊີວິດທີ່ສະແດງຄວາມຮັກຄວາມຊ່ວຍເຫລືອຢ່າງຄຣິສຕຽນໃນທຸກວິຖີທາງ (ຣມ 12) ແມ່ນວ່າເຂົາຜະເຊີນກັບການກະທຳທີ່ຊົ່ວ ເຂົາຈະຕ້ອງຕອບແທນດ້ວຍຄວາມດີຄື "ຢ່າໃຫ້ຄວາມຊົ່ວໄດ້ຊນະເຈົ້າ ແຕ່ຈົ່ງຊນະຄວາມຊົ່ວດ້ວຍຄວາມດີ" (ຣມ 12:21)

ທ່ານໂປໂລເຫັນວ່າ ຊີວິດຄຣິສຕຽນເປັນຊີວິດທີ່ມີຄວາມເຊື່ອຟັງໃນກົດໝາຍ ແລະປະຕິບັດໜ້າທີ່ຂອງຕົນຕໍ່ຜູ້ປົກຄອງທີ່ຕົນອາສັຍຢູ່ (ຣມ 13:1-7) ຄຣິສຕຽນຄວນມີຄວາມຮັກຕໍ່ຄົນເພື່ອນບ້ານແລະຄົນອື່ນ ໆ (ຣມ 13:8-10) ຄຣິສຕຽນຄວນຮູ້ຈັກກາລະເວລາແລະປະຕິບັດໃຫ້ສົມກັບວັນເວລາທີ່ຜ່ານພົ້ນໄປຢ່າງໄວ ບໍ່ປ່ອຍຕົວໃຫ້ຕົກຕໍ່າກັບຕັນຫາ "ແຕ່ຈົ່ງປະດັບຕົວດ້ວຍພຣະເຢຊູຄຣິສເຈົ້າ" (ຣມ 13: 11-14)

ຄຣິສຕຽນມີແນວປະຕິບັດໃນຄວາມເຊື່ອຖືທີ່ແຕກຕ່າງກັນ ທ່ານໂປໂລຕັກເຕືອນວ່າ "ສ່ວນຄົນທີ່ອ່ອນໃນຄວາມເຊື່ອນັ້ນ ຈົ່ງຮັບເຂົາໄວ້ ແຕ່ບໍ່ແມ່ນເພື່ອຜິດຖຽງກັນໃນເຣື່ອງຄວາມເຊື່ອທີ່ແຕກຕ່າງກັນ" (ຣມ 14:1) "ເຫດສະນັ້ນພວກເຮົາຢ່າກ່າວໂທດໃສ່ກັນແລະກັນ ແຕ່ວ່າຈົ່ງຕັ້ງໃຈເຮັດດັ່ງນີ້ດີກວ່າ ຄື ຢ່າໄດ້ເອົາສິ່ງໃດເປັນເຫດໃຫ້ຊູນສະດຸດຫລືລົ້ມລົງມາຂວາງທາງຂອງພີ່ນ້ອງ (ຣມ 14:13) ຄຣິສຕຽນບາງຄົນບໍ່ມີຄວາມສະບາຍໃຈໃນການຮັບປະທານເນື້ອສັດ ເພາະເຂົາຢ້ານວ່າກິນເນື້ອສັດທີ່ຖວາຍບູຊາແກ່ຮູບເຄົາຣົບແລ້ວເຮັດໃຫ້ດູເຫມືອນວ່າເຂົາມີຄວາມເຊື່ອຖືໄຫວ້ຮູບເຄົາຣົບ (ສຶກສາຫຽບ 1 ກທ 8, 10) ທ່ານໂປໂລມີຄວາມຄິດເຫັນວ່າຄຣິສຕຽນຈະທານເນື້ອສັດທີ່ສະອາດບໍ່ຜິດໄດ້ ດ້ວຍໃຈໂມທະນາຂອບພຣະຄຸນພຣະເຈົ້າ ແຕ່ວ່າບໍ່ສົມຄວນໃຫ້ຜູ້ໃດເຮັດໃຫ້ຈິດສຳນຶກຂອງຄຣິສຕຽນທີ່ອ່ອນແອກວ່າສະດຸດ ເພາະເຮັດເຊັ່ນນີ້ກໍບໍ່ໄດ້ປະພຶດຕາມທາງແຫ່ງຄວາມຮັກ (ຣມ 14:15) ຜູ້ໃດທານດ້ວຍຄວາມສົງສັຍແລ້ວບໍ່ສະບາຍໃຈກໍບໍ່ຄວນໃຫ້ຜູ້ນັ້ນທານ "ເພາະຜູ້ນັ້ນບໍ່ໄດ້ທານຕາມທີ່ຕົນເຊື່ອ ທັງນີ້ກໍເພາະການກະທຳທີ່ບໍ່ໄດ້ເກີດຈາກຄວາມເຊື່ອຫມັ້ນກໍເປັນບາບທັງຫມົດ" (ຣມ 14:23) ຜູ້ທີ່ມີຄວາມເຊື່ອເຂັ້ມແຂງ ຄວນອົດທົນຕໍ່ຄົນທີ່ມີຄວາມເຊື່ອຢຸດ ໆ ຢ່ອນ ໆ ແລະບໍ່ຄວນເຮັດຕາມຄວາມຊອບໃຈຂອງຕົນເອງ "ເພາະວ່າພຣະຄຣິສບໍ່ໄດ້ເຮັດສິ່ງຊອບພຣະທັຍພຣະອົງ" (ຣມ 15:3) ແຕ່ຕາມພຣະທັຍຂອງພຣະບິດາທີ່ຈະໃຫ້ທຸກສິ່ງເກີດຂຶ້ນຕາມແຜນການພຣະອົງ

## 5. <u>ແຜນການເດີນທາງຂອງທ່ານໂປໂລ</u>

ທ່ານໂປໂລໄດ້ສະເນີແຜນການເດີນທາງຂອງທ່ານໃນພຣະທັມໂຣມ 15:14-33 ທ່ານໄດ້ທຳງານຂອງທ່ານທາງທິດຕາວັນອອກແລ້ວ ຫລັງຈາກທີ່ໄດ້ນຳເງິນຊ່ວຍເຫລືອພີ່ນ້ອງທີ່ທຸຂຍາກໄປສົ່ງທີ່ກຸງເຢຣູຊາເລັມແລ້ວ ທ່ານມີຄວາມຕັ້ງໃຈຈະໄປຢຽມຢາມກຸງໂຣມແລ້ວເດີນທາງໄປຍັງປະເທດສະເປັນ ທ່ານບໍ່ໄດ້ວາງແຜນການຈະຢູ່ໂຣມ ທ່ານຮູ້ວ່າມີອັນຕາຍທີ່ຖ້າທ່ານຢູ່ໃນກຸງເຢຣູຊາເລັມ ແຕ່ທ່ານບໍ່ຕ້ອງການໃຫ້ຄວາມຢ້ານກົວກຳຫນົດວິຖີຊີວິດຂອງທ່ານ ທ່ານມີຄວາມຫມັ້ນໃຈໃນການນຳພາຂອງພຣະເຈົ້າ ທ່ານຂໍຮ້ອງໃຫ້ພີ່ນ້ອງໃນຄຣິສຈັກໂຣມອະທິຖານເພື່ອທ່ານ "ເພື່ອຂ້າພະເຈົ້າ (ໂປໂລ) ຈະໄດ້ມາຫາພວກທ່ານ ຕາມຊອບພຣະທັຍພຣະເຈົ້າ ດ້ວຍຄວາມຊົມຊື່ນຍິນດີແລະຈະມີຄວາມເບີກບານສຳຣານໃຈເມື່ອໄດ້ພົບພວກທ່ານ (ຣມ 15:32)

## 6. <u>ຄຳທັກທາຍສ່ວນຕົວແລະຄຳສັນລະເສີນ</u>

ໃນພຣະທັມໂຣມບົດທີ່ 16 ເປັນການຝາກຄວາມຣະລຶກຄິດເຖິງສ່ວນຕົວ ມາຍັງຜູ້ຮູ້ຈັກທີ່ຢູ່ໃນຄຣິສຈັກໂຣມ (ຣມ 6:1-20) ນອກຈາກນັ້ນຍັງມີຄວາມຣະລຶກເຖິງຈາກຄຣິສຕຽນທີ່ເມືອງໂກຣິນໂທເຖິງຜູ້ທີ່ຢູ່ໃນຄຣິສຈັກໂຣມ (ຣມ 16:21-23) ລົງທ້າຍຈົບລົງດ້ວຍ ຄຳສັນລະເສີນ (ຣມ 16:24-27) ພຣະທັມໂຣມ 16:22 ທຳໃຫ້ຮູ້ຈັກວ່າຈົດຫມາຍສະບັບນີ້ຂອງທ່ານໂປໂລ ທ່ານຂຽນຂຶ້ນໂດຍວິທີບອກຄວາມເວົ້າໃຫ້ທ່ານເຕຣະຕຽວເປັນຜູ້ຂຽນເປັນລາຍລັກອັກສອນ ທີ່ໄດ້ຝາກຄວາມຄິດຮອດຄິດເຖິງມາຍັງຄຣິສຈັກໂຣມດ້ວຍ

**ຈົ່ງເອົາສິ່ງທີ່ທ່ານໄດ້ສຶກສາຈາກຂ້າງເທິງເຮັດບົດຝຶກຫັດຂໍ້ທີ່ສາມ & ສີ່**

## ຫ້າ. ພຣະທັມຈົດໝາຍໂຣມມີຄຸນຄ່າແກ່ເຮົາແນວໃດ

ຈົດໝາຍໂຣມບໍ່ແມ່ນເປັນຈົດໝາຍທີ່ອ່ານງ່າຍທີ່ສຸດ ຕ້ອງມີຄວາມເຂົ້າໃຈພື້ນຖານຫລາຍເຣື້ອງດ້ວຍການ ມີຫລາຍເຣື້ອງທີ່ຜູ້ອ່ານຕ້ອງມີຄວາມຕັ້ງໃຈຈິງໃນການຄົ້ນຄວ້າຈຶ່ງມີຄວາມເຂົ້າໃຈ ດັ່ງນັ້ນເຮົາອາດຈະຖາມວ່າ ພຣະທັມນີ້ມີຄຸນຄ່າແນວໃດສຳຫຼັບເຮົາໃນໂລກປັດຈຸບັນນີ້ ຢ່າງນ້ອຍທີ່ສຸດກໍເຫດຜົລສາມປະການ ຄື

**ປະການທຳອິດ** ພຣະທັມໂຣມເປັນຜົນງານຊິ້ນເອກຂອງທ່ານໂປໂລທີ່ບອກເຮົາເຖິງເຣື້ອງຂ່າວປະເສີດທີ່ທ່ານປະກາດໄດ້ຢ່າງລະອຽດຊັດເຈນ ທ່ານໄດ້ຂຽນຢ່າງຣະມັດຣະວັງ ໂດຍທີ່ບໍ່ມີເຫດການໃດທີ່ຢູ່ເບື້ອງຫລັງຄອຍຜັກດັນທ່ານໃຫ້ຂຽນ ໄດ້ຫຍິບຍົກເອົາບັນຫາທີ່ເກີດໃນທ້ອງຖິ່ນມາພິຈາຣະນາເໝືອນຢ່າງທ່ານໄດ້ເຮັດໃນຈົດໝາຍອື່ນ ໆ ທ່ານໄດ້ສະເນີຄວາມເຊື່ອຂອງທ່ານຢ່າງງຽບແລະເຕັມໄປດ້ວຍກຳລັງ ເພື່ອໃຫ້ພີ່ນ້ອງຄຣິສຈັກໂຣມເຫັນວ່າທ່ານມີຫລັກຄວາມເຊື່ອແນວໃດ ແລະເຫດໃດທ່ານຈຶ່ງເທສນາສິດສອນຢ່າງບໍ່ຮູ້ຈັກເໜັດເໜື່ອຍ

**ປະການທີ່ສອງ** ພຣະທັມນີ້ພິສູດໃນຕົວເອງໃຫ້ເຫັນວ່າເປັນພຣະທັມທີ່ມີຣິດເດດຫລາຍທີ່ສຸດທີ່ຄຣິສຈັກເຄີຍຮູ້ຈັກກັນມາ ການສຶກສາພຣະທັມໂຣມຫລາຍເທື່ອຫລາຍທີ ໃຫ້ຄວາມສວ່າງແລະກຳລັງໃໝ່ ໂດຍສະເພາະໃນຍາມທີ່ຄຣິສຈັກມີຄວາມວຸ່ນວາຍຫຼືຫວັ່ນໄຫວ ຕົວຢ່າງໃນສມັຍປະຕິຮູບ ພຣະທັມໂຣມໃຫ້ກຳລັງແລະຫລັກຂໍ້ເຊື່ອພື້ນຖານແກ່ທ່ານລູເທີ (Luther) ຄາລ໌ວິນ (Calvin) ແລະຜູ້ນຳບາງຄົນໃນການປະຕິຮູບຄວາມເຊື່ອໃຫ້ເກີດຄວາມເຂົ້າໃຈຊັດໃນຄວາມເຊື່ອອັນແທ້ຈິງຂອງຄຣິສຕຽນ

**ປະການສຸດທ້າຍ** ໃນພຣະທັມນີ້ເຮົາຍັງຄວາມຈິງອັນລຶກຊຶ້ງກ່ຽວກັບຄວາມເຊື່ອຂອງເຮົາເອງ ພຣະເຈົ້າຊົງປະທານຂ່າວປະເສີດໃຫ້ເປັນຂອງຂວັນມາເຖິງຄົນບາບທັງຫລາຍຮວມທັງຕົວເຮົາດ້ວຍ ພຣະອົງຊົງຂໍໃຫ້ເຮົາມີແຕ່ຄວາມເຊື່ອທີ່ຈິງໃຈທີ່ມອບຊີວິດທັງໝົດແກ່ພຣະອົງເປັນການຕອບສະນອງຂ່າວປະເສີດບໍ່ແມ່ນແນວຄວາມຄິດທີ່ບໍ່ມີປະໂຍດ ແຕ່ໄດ້ບັນຈຸຣິດເດດຂອງພຣະເຈົ້າທີ່ປ່ຽນແປງຊີວິດຄວາມເປັນຢູ່ຂອງມະນຸດ ເປັນສິ່ງນຳໃຫ້ເກີດການກະທຳແຫ່ງຄວາມດີສູ່ຊີວິດຂອງມະນຸດທຸກຄົນທຸກສມັຍຂ່າວປະເສີດນີ້ເປັນຂອງທຸກຄົນແລະທຸກປະຊາຊາດ "ຂ່າວປະເສີດນັ້ນເປັນຣິດເດດຂອງພຣະເຈົ້າ ເພື່ອໃຫ້ທຸກຄົນທີ່ເຊື່ອໄດ້ຮັບຄວາມຣອດພົ້ນ" (ຣມ 1:16)

ໂລກຕ້ອງການຂ່າວປະເສີດນີ້ ຄຣິສຈັກຂອງເຮົາຕ້ອງການຟັງ ເພື່ອຈະໄດ້ຈື່ຈຳໄວ້ໄດ້ສະເໝີວ່າເຮົາຈະພົບຄວາມຊ່ວຍເຫລືອໄດ້ທີ່ບ່ອນໃດ ແຕ່ຈົດໝາຍສະບັບນີ້ເຕືອນຄຣິສຕຽນວ່າຂ່າວປະເສີດນີ້ບໍ່ແມ່ນເປັນແຕ່ພຽງຂອງຂວັນເທົ່ານັ້ນ ແຕ່ຮຽກຮ້ອງໃຫ້ຄຣິສຕຽນອອກສິດສອນທົ່ວສາກົລດ້ວຍ ຄຣິສຈັກທີ່ເຂັ້ມແຂງຈະໂມທະນາພຣະຄຸນພຣະເຈົ້າເພາະໄດ້ອ່ານພຣະທັມໂຣມ ເມື່ອເຂົາອ່ານ ເຂົາຈະຮູ້ຈັກວ່າເຂົາຈະດຳເນີນຊີວິດຄຣິສຕຽນຕາມຄຳສອນແນວໃດ

| |
|---|
| **ຈົ່ງເອົາສິ່ງທີ່ທ່ານໄດ້ສຶກສາຈາກຂ້າງເທິງເຮັດບົດຝຶກຫັດ ຂໍ້ທີ່ຫ້າ** |

ແລ້ວ ສົ່ງ → 5-2-96

# ບົດທີ 3

## ຈົດໝາຍຂອງໂປໂລ ທີ່ຂຽນເຖິງຄຣິສຈັກໃນເມືອງໂກຣິນໂທ
The Letter of Paul to the Corinthians

## ຕອນທີ 1

**ຂໍ້ໄຂຈົດໝາຍພຣະທັມໂກຣິນໂທ ສະບັບຕົ້ນ**

*ເຈົ້າທັງຫລາຍບໍ່ຮູ້ຫລືວ່າ ຮ່າງກາຍຂອງເຈົ້າເປັນວິຫານຂອງພຣະວິນຍານບໍຣິສຸດຜູ້ຊຶ່ງຊົງສະຖິດຢູ່ໃນພວກເຈົ້າຊຶ່ງພວກເຈົ້າໄດ້ຮັບຈາກພຣະເຈົ້າ ເຈົ້າບໍ່ແມ່ນເຈົ້າຂອງຕົວເຈົ້າເອງ ພຣະເຈົ້າໄດ້ຊົງຊື້ເຈົ້າທັງຫລາຍໄວ້ແລ້ວດ້ວຍຣາຄາສູງ ເຫດສະນັ້ນຈົ່ງຖວາຍພຣະກຽດຕໍ່ພຣະເຈົ້າດ້ວຍຮ່າງກາຍຂອງຕົນ (1 ກທ 6:19-20)*

*ເຖິງແມ່ນຂ້າພະເຈົ້າ(ໂປໂລ)ເວົ້າພາສາແປກ ໆ ໄດ້ ຈະເປັນພາສາມະນຸດ ຫລືພາສາທູດສວັນກໍດີ ແຕ່ບໍ່ມີຄວາມຮັກ ຂ້າພະເຈົ້າກໍເປັນເໝືອນຄ້ອງຫລືແຊ່ງທີ່ສົ່ງສຽງດັງອຶກກະທຶກ (1 ກທ 13:1)*

**ນຶ່ງ. ເມືອງໂກຣິນໂທ**

ເມືອງໂກຣິນໂທເປັນດິນແດນທີ່ຕິດກັບຂົວເຊື່ອມພາກເໜືອແລະໃຕ້ຂອງກຣີກ ເມືອງນີ້ຕັ້ງຢູ່ກົງຮອຍຕໍ່ຣະຫວ່າງອ່າວອາຈຽນ (Aegean) ກັບອ່າວເອດຣຍຕິກ (Adriatic) ຈຶ່ງເຮັດໃຫ້ເມືອງນີ້ກາຍເປັນເມືອງທ່າເຮືອແລະເປັນສູນກາງການຄ້າຂາຍ ສິນຄ້າທຸກຊະນິດຂອງກຣີກຈາກເໜືອລົງໃຕ້ຕ້ອງຜ່ານເມືອງໂກຣິນໂທ ເມືອງໂກຣິນໂທມີພົລເມືອງປະມານ 200,000 ຄົນ ມີທາດປະມານ 500,000 ຄົນ ມີຊົນກຸ່ມນ້ອຍທີ່ມີອຳນາດຫລາຍ ຄືພວກໂຣມັນ ຊຶ່ງສ່ວນຫລາຍເປັນທະຫານຜູ້ຊຳນານເສິກ ແລະຍັງມີອີກສອງກຸ່ມທີ່ມີອິດທິພົນຄືພວກກຣີກແລະຢິວ ຈະເຫັນໄດ້ວ່າຄົນສ່ວນຫລາຍນັ້ນເປັນທາດ ນອກຈາກນີ້ເມືອງໂກຣິນໂທຍັງປະກອບໄປດ້ວຍພໍ່ຄ້າແລະນັກທ່ອງທ່ຽວຈາກຊາດຕ່າງ ໆ ເຊັ່ນ ລາຕິນ ຊີເຣັຽ ເອເຊັຽ ແລະອີຢິປ ເມືອງໂກຣິນໂທຍັງມີຄວາມສຳຄັນດ້ານການເມືອງດ້ວຍ ເພາະເປັນເມືອງຫລວງຂອງແຂວງອະຂາຢາ (Achaia) ເມືອງນີ້ຈຶ່ງເປັນເມືອງທີ່ທ່ານໂປໂລຕັ້ງເປົ້າໝາຍໃຫ້ເປັນສູນກາງການປະກາດຂ່າວປະເສີດ ເພື່ອໃຊ້ເປັນແຫລ່ງໃຫ້ຂ່າວປະເສີດໄດ້ແຜ່ຂຍາຍໄປຢ່າງກວ້າງຂວາງ

ແຕ່ວ່າເມືອງໂກຣິນໂທກໍມີຂໍ້ເສັຽຢ່າງໃຫຍ່ຫລວງ ທີ່ເບິ່ງແລ້ວເມືອງໂກຣິນໂທຈະກໍ່ຕັ້ງຄວາມເຊື່ອຂອງຄຣິສຕຽນແລະຄຣິສຈັກຂຶ້ນໄດ້ຢາກ ເພາະເທິງຍອດພູ ອາໂຄຣໂກຣິນ (Acrocorinth ແປວ່າ "ທີ່ສູງໂກຣິນ" ສູງປະມານ 1,800 ຟຸຕ) ຢູ່ທາງຕອນເໜືອຂອງເມືອງນີ້ມີວິຫານຂອງພວກພຣະອາໂຟຣໄດທ໌ (Aphrodite) ທີ່ມີຊື່ສຽງວ່າເປັນ "ເທພທິດາແຫ່ງຄວາມຮັກ" ມີຜູ້ຍິງທີ່ບວດເປັນ

โສເພນີທີ່ຖວາຍຕົວບູຊາຍັນແລະຮັບໃຊ້ໃນວິຫານເປັນຈຳນວນພັນ ໆ ຄົນ ພຣະຜູ້ຍິງພວກນີ້ມີຄວາມເຊື່ອວ່າ ການຮ່ວມເພດເປັນຖວາຍບູຊາຍັນຂອງສວງແກ່ເທພທິດາແຫ່ງຄວາມຮັກ ພວກພຣະຜູ້ຍິງເຫລົ່ານີ້ຈະລົງມາຈາກພູ ເພື່ອຊັກຊວນໃຫ້ຜູ້ຊາຍໄປຮ່ວມນມັສການ ຈົນມີຄວາມເວົ້າທີ່ກ່າວໄວ້ວ່າ "ບໍ່ແມ່ນຜູ້ຊາຍທຸກຄົນຈະໄປເມືອງໂກຣິນໂທໄດ້" ຊື່ເມືອງໂກຣິນໂທກາຍເປັນຄຳປ່ອຍດ່າ ເຊັ່ນ "ຫລິ້ນຍັງກະຊາວໂກຣິນໂທ" ຫລື "ຄິດຢ່າງໂກຣິນໂທ" ຄວາມເວົ້າເຫລົ່ານີ້ໃຊ້ເປັນຄຳປ່ອຍດ່າທີ່ມີຄວາມໝາຍເສັຽຫາຍໄປໃນທາງລາມົກເປັນສ່ວນໃຫຍ່ ຈົນເຮັດໃຫ້ຄວາມຄິດຂອງຄົນໃນອານາຈັກໂຣມັນຮູ້ຈັກເມືອງໂກຣິນໂທໄປໃນທາງເສັຽຫາຍ ນອກຈາກນີ້ຍັງມີວິຫານອື່ນ ໆ ອີກຫລາຍແຫ່ງໃນເມືອງນີ້ ຊຶ່ງເປັນການສນັບສນູນຫລືເພີ່ມຄວາມປະພຶດຜິດທາງສິລທັມທັງສິ້ນ ເຖິງຢ່າງໃດກໍຕາມ ທ່ານໂປໂລກໍບໍ່ໄດ້ທໍ້ໃຈໄດ້ຕັ້ງຄຣິສຈັກຂຶ້ນທີ່ນັ້ນ ດ້ວຍຄວາມເຊື່ອໝັ້ນໃນການນຳພາຂອງພຣະວິນຍານບໍຣິສຸດ ທ່ານມີຄວາມເຊື່ອແລະໄດ້ຍືນຫຍັດແລະສອນເຖິງຄວາມຮັກທີ່ມີຄຸນຄ່າແລະຄວາມໝາຍແທ້ ດັ່ງທີ່ທ່ານໄດ້ບັນຍາຍໄວ້ໃນພຣະທັມໂກຣິນໂທສະບັບຕົ້ນບົດທີ່ 13 ແນະນຳໃຫ້ຮູ້ຈັກຄວາມຮັກອັນແທ້ຈິງຂອງຜູ້ທີ່ມີຊີວິດຢູ່ໃນພຣະຄຣິສ

**ສອງ. ຄຣິສຈັກໃນເມືອງໂກຣິນໂທ**

ທ່ານໂປໂລຕັ້ງຄຣິສຈັກນີ້ຂຶ້ນໃນຣະຫວ່າງການເດີນທາງໄປປະກາດຂ່າວປະເສີດຖ້ຽວທີ່ສອງ ເຂົ້າໃຈກັນວ່າຄຣິສຈັກໃນເມືອງໂກຣິນໂທໄດ້ຕັ້ງຂຶ້ນປະມານ 5 ປີ ທ່ານໂປໂລຈຶ່ງໄດ້ຂຽນຈົດໝາຍມາຍັງຄຣິສຈັກຫນຸ່ມນີ້ ຄຣິສຈັກໃນເມືອງໂກຣິນໂທມີສະພາບຄ້າຍກັບຊາວເມືອງໂກຣິນໂທ ຄືປະກອບດ້ວຍຄົນຫລາຍຊາດມີທັງຢິວ ກຣີກແລະຄົນຊາດອື່ນ ສມາຊິກບາງຄົນເປັນຮັ່ງມີແລະມີຕຳແໜ່ງສູງ ແຕ່ສ່ວນຫລາຍເປັນຄົນຊັ້ນຕ່ຳ ແລະເປັນຄົນບໍ່ເຄີຍໄດ້ເຊື່ອພຣະເຈົ້າມາກ່ອນກັບໃຈເປັນຄຣິສຕຽນ ພວກເຂົາມັກອວດໃນການເປັນຄົນກຣີກຂອງຕົນເອງ ມັກອວດສະແດງຄຳພູດທີ່ມີຄວາມໝາຍລຶກ ເຊັ່ນ "ເສຣີພາບ" ຫລື "ຄວາມຮູ້" ອັນເປັນເຫດໃຫ້ເກີດຄວາມຄິດທີ່ແຕກແຍກຜິດຖຽງກັນ

**ສາມ. ທ່ານໂປໂລໃນເມືອງໂກຣິນໂທ**

ເມື່ອທ່ານໂປໂລມາເຖິງຄຣິສຈັກໃນເມືອງໂກຣິນໂທ ທ່ານອ່ອນກຳລັງແລະມີຄວາມຢ້ານຫລາຍທີ່ສຸດ (1 ກທ 2:3) ທັງນີ້ອາດຈະເນື່ອງຈາກບັນຫາທີ່ທ່ານໄດ້ຜະເຊີນມາຈາກເມືອງເອແທນ ທີ່ວຽກຝ່າຍຈິດວິນຍານເກີດຜົນພຽງເລັກນ້ອຍ ແຕ່ເມື່ອພຣະເຈົ້າຊົງໃຊ້ໃຫ້ທ່ານໂປໂລນຳຂ່າວປະເສີດມາເຖິງເມືອງໂກຣິນໂທທ່ານໄດ້ປະກາດທີ່ນັ້ນ ຕອນທຳອິດທ່ານໂປໂລໄດ້ເຮັດວຽກຢູ່ຄົນດຽວ ໂດຍທີ່ຊີລາແລະຕີໂມທຽວຜູ້ຊ່ວຍຂອງທ່ານໄດ້ແວະຢ້ຽມຢາມຄຣິສຈັກອື່ນ ໆ ໃນແຂວງມາຊີໂດເນັຽທີ່ເພິ່ງຕັ້ງໄວ້ບໍ່ນານ

ທ່ານໂປໂລໄດ້ພັກເຊົາຢູ່ກັບຜົວເມັຽຄູ່ນຶ່ງຊື່ອາກີລາກັບປີຊະກີລາ ທັງສອງເປັນຄົນເຍັບເຕັນທີ່ໄດ້ເດີນທາງມາຈາກກຸງໂຣມ ມາຕັ້ງຖິ່ນຖານໃນເມືອງໂກຣິນໂທ ທ່ານໂປໂລໄດ້ຫາລ້ຽງຊີບໂດຍການເຍັບເຕັນນຳອາກີລາກັບປີຊະກີລາ ທ່ານໄດ້ເສີມສ້າງມິຕພາບຕໍ່ກັນແລະກັນ ແລະອອກໄປປະກາດຂ່າວປະເສີດເມື່ອວ່າງຈາກງານ ເມື່ອຊີລາແລະຕີໂມທຽວເດີນທາງມາຈາກແຂວງມາຊີໂດເນັຽໄດ້ນຳຂອງຂວັນຈາກພີ່ນ້ອງຄຣິສຕຽນມາຝາກທ່ານໂປໂລ (2 ກທ 11:9) ເປັນເຫດໃຫ້ທ່ານມີເວລາປະກາດຂ່າວປະເສີດຫລາຍຂຶ້ນ ແທນທີ່ຈະໃຊ້ເວລາໃນການຫາລ້ຽງຊີບ (ກຈ 18:5)

ທ່ານໂປໂລໄດ້ເລີ້ມຕົ້ນເທສນາໃນໂຮງທັມ ໂດຍຫົວໜ້າໂຮງທັມນັ້ນໄດ້ໃຫ້ຄົນຢິວທີ່ເດີນທາງມາ

ຢ້ຽມຢາມໄດ້ກ່າວພຣະທັມ ບໍ່ນານພວກຢິວຈຶ່ງໄດ້ເຂົ້າໃຈວ່າ ຄວາມເຊື່ອແບບໃໝ່ທ່ານໂປໂລສອນນີ້ຕ້ອງການໃຫ້ເຂົາທັງຫລາຍມີຊີວິດໃໝ່ໂດຍຍຶດເອົາພຣະຄຣິສເປັນພຣະຜູ້ເປັນເຈົ້າ ແລະຈະທຳລາຍເຄື່ອງກີດຂວາງເຣື່ອງການແບ່ງແຍກຣະຫວ່າງຊາວຢິວກັບຊາວຕ່າງຊາດເສັຽ ມີບາງຄົນໄດ້ຍອມຮັບເຊື່ອ ແຕ່ວ່າເມື່ອມີຄົນອື່ນຕໍ່ຕ້ານທ່ານໂປໂລຫລາຍ ຜູ້ເຊື່ອໃໝ່ແລະອີກຫລາຍ ໆ ທ່ານກໍພາກັນອອກຈາກໂຮງທັມ ແລະປະກາດພຣະທັມຕໍ່ໄປຍັງເຮືອນຄົນຕ່າງຊາດຄົນນຶ່ງ ຜູ້ນີ້ຊື່ ຕີໂຕ ໂຢຢູຊະໂຕ (Titus Justus) ເຮືອນຂອງທ່ານຢູ່ຖັດໂຮງທັມ ທ່ານໂປໂລໄດ້ຮັບໃຊ້ເຖິງສິບແປດເດືອນ (ກຈ 18:5-11) ແລະໄດ້ສາວົກຫລາຍມີທັງຢິວແລະຄົນຕ່າງຊາດ

ໃນທີ່ສຸດພວກຢິວທີ່ຄິດຄ້ານຄຳສອນຂອງທ່ານໂປໂລ ໄດ້ເຫັນໂອກາດທີ່ມີການປ່ຽນຜູ້ປົກຄອງໃໝ່ຊື່ຄາລີໂອນ ໃນປະມານ ຄ.ສ. 53 ພວກຢິວຈຶ່ງນຳຕົວທ່ານໂປໂລມາຟ້ອງສານ ກ່າວຫາວ່າທ່ານໂປໂລປະກາດສາສນາທີ່ຜິດກົດໝາຍ ທີ່ບໍ່ໄດ້ຮັບການຮັບຮອງຈາກຣັຖບາລ ທ່ານໂປໂລກັບພວກຄຣິສຕຽນຈຶ່ງກ່າວວ່າ ຄວາມເຊື່ອຂອງຄຣິສຕຽນນັ້ນເປັນຄວາມເຊື່ອທີ່ຖືກຕ້ອງແທ້ຂອງຊົນຊາດອິສຣາເອລ ຊຶ່ງບັດນີ້ມີຄວາມສົມບູນໃນພຣະເຢຊູຄຣິສ ແຕ່ພວກຢິວໄດ້ປະຕິເສດບໍ່ຍອມຮັບແລະຍັງກ່າວຕໍ່ໄປວ່າ ທ່ານຄາລີໂອນຄວນຈະປະກາດວ່າເປັນຄຳສອນເຖື່ອນ ແຕ່ທ່ານຄາລີໂອນກັບໄດ້ເຂົ້າໃຈເຖິງຄວາມພົວພັນທີ່ສຳຄັນຣະຫວ່າງຂ່າວປະເສີດແລະຄວາມເຊື່ອຂອງຊາວຢິວ ທ່ານຈຶ່ງປະຕິເສດບໍ່ຍອມລົງໂທດທ່ານໂປໂລ (ກຈ 18:12-17) ດັ່ງນັ້ນທ່ານໂປໂລຈຶ່ງໄດ້ປະກາດສັ່ງສອນຕໍ່ໄປໄດ້

ການປະກາດໃນເມືອງໂກຣິນໂທເທື່ອນີ້ໄດ້ຜົນຢ່າງກວ້າງຂວາງ ຄຣິສຈັກໄດ້ແຜ່ພາຍອອກໄປໃນເຂດຫົວເມືອງໃກ້ຄຽງດ້ວຍ ມີຄຣິສຈັກເກີດຂຶ້ນໃນເມືອງເກັບເຂໄອ (Cenchreae) ອັນເປັນເມືອງທ່າຕາວັນອອກຂອງໂກຣິນໂທ (ຣມ 16:1) ເມື່ອທ່ານໂປໂລກ່າວເຖິງ "ໄພ່ພົນທັງປວງຂອງພຣະເຈົ້າທີ່ຢູ່ທົ່ວແຂວງອະຂາຢາ (2 ກທ 1:1) ທ່ານໝາຍຄວາມວ່າຂ່າວປະເສີດໄດ້ແຜ່ພາຍອອກໄປກວ້າງຂວາງຈາກເມືອງໂກຣິນ

ໜ້າທີ່ສຳຄັນຂອງທ່ານໂປໂລຄືການອອກໄປປະກາດຂ່າວປະເສີດໃນທີ່ໃໝ່ ເມື່ອທ່ານເຫັນວ່າຄຣິສຈັກໃນເມືອງໂກຣິນໂທຕັ້ງຕົວໄດ້ດີແລ້ວ ທ່ານກໍລາຈາກໄປ ຫລັງຈາກທີ່ທ່ານໄປຢ້ຽມຢາມກຸງເຢຣູຊາເລັມແລະອັນຕີໂອເຂັຽໃນຊີເຣັຽແລ້ວ ທ່ານກໍໄດ້ອອກເດີນທາງໃນຖ້ຽວທີ່ສາມ ແລະກໍໄດ້ພັກເຊົາທີ່ເມືອງເອເຟໂຊ ທ່ານໄດ້ຢູ່ທີ່ເອເຟໂຊເທື່ອນີ້ນານທີ່ສຸດ ແລະທີ່ເອເຟໂຊນີ້ເອງເຊື່ອກັນວ່າທ່ານໂປໂລໄດ້ຂຽນຈົດໝາຍພຣະທັມໂກຣິນໂທສະບັບຕົ້ນ

## ສີ່. ສະພາບເຫດການທີ່ຂຽນຈົດໝາຍພຣະທັມໂກຣິນໂທ

ເຮົາຕ້ອງເຂົ້າໃຈວ່າ ທ່ານໂປໂລໄດ້ເດີນທາງໄປປະກາດຂ່າວປະເສີດໃນຫລາຍ ໆ ຫົວເມືອງ ພຣະທັມກິຈການ 18:1-17 ໄດ້ບັນທຶກເຣື່ອງການຮັບໃຊ້ຂອງທ່ານໂປໂລທີ່ຢູ່ໃນເມືອງໂກຣິນໂທນານເຖິງ 18 ເດືອນ ຫລັງຈາກທີ່ທ່ານໄດ້ຈາກໄປແລ້ວ ທ່ານໄດ້ຂຽນຈົດໝາຍເຖິງຄຣິສຕຽນຊາວໂກຣິນໂທ ຊຶ່ງພຣະທັມຈົດໝາຍໂກຣິນໂທມີຄວາມສຳຄັນຫລາຍໃນການອະທິບາຍໃຫ້ເຮົາຮູ້ຈັກເຖິງສະພາບຂອງຊີວິດຄຣິສຕຽນໃນສມັຍທຳອິດ ດັ່ງນັ້ນຈຶ່ງເປັນສິ່ງສຳຄັນທີ່ເຮົາຄວນໄດ້ສຶກສາເຖິງສະພາບເຫດການທີ່ເຮັດໃຫ້ທ່ານໂປໂລຕ້ອງຂຽນພຣະທັມຈົດໝາຍນີ້

1. ທ່ານໂປໂລຕັກເຕືອນຄຣິສຕຽນໃນເມືອງໂກຣິນໂທບໍ່ໃຫ້ຄົບຫາກັບຄົນຫລິ້ນຊູ້ (1 ກທ 5:9) ໂດຍມີຄຳຂຶ້ນຕົ້ນວ່າ "ເຮົາໄດ້ຂຽນຈົດໝາຍບອກເຈົ້າທັງຫລາຍແລ້ວວ່າ..." ໃນຕອນນີ້ສະແດງວ່າ

ທ່ານໂປໂລເຄີຍຂຽນຈົດໝາຍເຖິງຄຣິສຕຽນໃນເມືອງໂກຣິນໂທມາກ່ອນແລ້ວ ເປັນສະບັບທີກ ກ່ອນໜ້າພຣະທັມໂກຣິນໂທສະບັບຕົ້ນແລະສະບັບທີ່ສອງ ມີນັກສຶກສາບາງທ່ານຄິດວ່າຈົດໝາຍສະບັບທີກນັ້ນໄດ້ເສັຽໄປ ແຕ່ຄວາມຄິດເຫັນຂອງນັກສຶກສາສ່ວນໃຫຍ່ເຫັນວ່າ ຈົດໝາຍສະບັບທີກບໍ່ໄດ້ເສັຽໄປໄສ ແຕ່ວ່າໄດ້ຖືກຮວບຮວມມາຢູ່ໃນ 1 ໂກຣິນໂທ 6:12-20 ແລະ 2 ໂກຣິນເທ 6:14-7:1 ເພາະວ່າຂໍ້ຄວາມສອງຕອນນີ້ໄດ້ອ້າງເຖິງເນື້ອນັຍທີ່ທ່ານໂປໂລໄດ້ຂຽນໄປຊວ້ານຊູໃຈຄຣິສຕຽນຜູ້ທີ່ໄດ້ຖວາຍຕົວຢ່າງແທ້ຈິງແກ່ພຣະຄຣິສແລ້ວໃຫ້ດຳເນີນຊີວິດຢູ່ໃນຄວາມບໍຣິສຸດທັງ ໃນດ້ານຄວາມຄິດແລະການກະທຳ ແລະເຕືອນເຂົາທັງຫລາຍບໍ່ໃຫ້ຄົບຫາກັບຄົນທີ່ປະພຶດຜິດທາງກາມ (ຫລິ້ນຊູ້ ຫລືພວກທີ່ໄປພົວພັນກັບພຣະຜູ້ຍິງ)

2. ໃນເວລາທີ່ທ່ານໂປໂລກຳລັງຮັບໃຊ້ຢູ່ໃນເມືອງເອເຟໂຊ ກໍມີຂ່າວຊາລືຈາກເມືອງໂກຣິນໂທມາເຖິງຫູທ່ານ ເມື່ອທ່ານໄດ້ຟັງກໍບໍ່ສະບາຍໃຈ ທ່ານໂປໂລຈຶ່ງສັ່ງຕີໂມທຽວໃຫ້ໄປຫາທາງຊ່ວຍແກ້ໄຂເຫດການເພື່ອໃຫ້ຄືນສູ່ສະພາບທີ່ດີຂຶ້ນ ທ່ານໂປໂລໄດ້ຮັບຂ່າວແລະຮູ້ຈັກບັນຫາຕ່າງ ໆ ຂອງຄຣິສຈັກໃນເມືອງໂກຣິນໂທ ຈາກແຫລ່ງຕ່າງ ໆ ດັ່ງຕໍ່ໄປນີ້

**ປະການທຳອິດ** ຈາກຄົນນຳຂ່າວທີ່ມາຈາກບ້ານຂອງນາງຂະໂລເອ (1 ກທ 1:11)

**ປະການທີ່ສອງ** ຈາກຈົດໝາຍທີ່ຊາວໂກຣິນໂທທີ່ໄດ້ຂຽນໄປໃຫ້ທ່ານໂປໂລຖາມເຖິງບັນຫາຕ່າງ ໆ ທີ່ໄດ້ເກີດຂຶ້ນທີ່ຄຣິສຈັກໃນເມືອງໂກຣິນໂທ (7:1)

**ປະການທີ່ສາມ** ຈາກການຢ້ຽມຢາມຂອງທ່ານຊະເຕຟານາ ທ່ານຟໍຕູນາໂຕ ແລະທ່ານຂາອີໂກ (1 ກທ 16:17)

ໃນພຣະທັມໂກຣິນໂທສະບັບຕົ້ນ ທ່ານໂປໂລໄດ້ຕອບບັນຫາຕ່າງ ໆ ເຫລົ່ານີ້ ແລະໄດ້ສະແດງຄວາມດີໃຈກັບພີ່ນ້ອງທີ່ມາຢ້ຽມຢາມ ແລະນຳປັດຈັຍທີ່ທ່ານໂປໂລຂາດເຂີນມາໃຫ້

3. ຄຣິສຕຽນໃນເມືອງໂກຣິນໂທໄດ້ຟັງຄວາມຕັກເຕືອນຈາກຈົດໝາຍຂອງທ່ານໂປໂລແຕ່ພຽງນ້ອຍດຽວ ເຮັດໃຫ້ທ່ານໂປໂລຕ້ອງເດີນທາງໄປດ້ວຍຕົນເອງ ດັ່ງທີ່ໄດ້ບັນທຶກໄວ້ໃນພຣະທັມໂກຣິນໂທສະບັບສອງ 12:14, 13:1-2 ຕອນເຫລົ່ານີ້ກ່າວເຖິງທ່ານໂປໂລໄປຢ້ຽມຢາມເທື່ອທີ່ສາມ ສະແດງວ່າທ່ານໄດ້ໄປແກ້ບັນຫາທີ່ຄຣິສຈັກເມືອງໂກຣິນໂທເຖິງ 3 ເທື່ອ ແລ້ວຍັງແກ້ບັນຫາບໍ່ຕົກ ເຮັດໃຫ້ທ່ານໂປໂລຜິດຫວັງແລະອຸກໃຈ

4. ເມື່ອການຢ້ຽມຢາມບໍ່ເກີດຜົນ ທ່ານໂປໂລຈຶ່ງໄດ້ຂຽນຈົດໝາຍພຣະທັມໂກຣິນໂທສະບັບສອງໄປອີກ ໃນເທື່ອນີ້ທ່ານໄດ້ຂຽນໃຊ້ຄຳເວົ້າຢ່າງຮູນແຮງ ຊຶ່ງຕົວຂອງທ່ານເອງກໍເສັຽໃຈທີ່ຕ້ອງເວົ້າຮູນແຮງເຊັ່ນນັ້ນ ເຮົາຈະອ່ານພົບຄວາມຮູ້ສຶກເສັຍໃຈຂອງທ່ານໂປໂລນີ້ໄດ້ຈາກພຣະທັມໂກຣິນໂທສະບັບສອງບົດທີ່ 10-13 ທ່ານໂປໂລຕ້ອງເວົ້າກັນຢ່າງຕົງໄປຕົງມາ ເຖິງວ່າສະຖານການຕ່າງ ໆ ຈະຮູນແຮງຈົນທ່ານຕ້ອງຂຽນຈົດໝາຍໄປຫລາຍ ໆ ສະບັບແລະໄປຢ້ຽມຢາມດ້ວຍຕົນເອງກໍຍັງບໍ່ໄດ້ຜົນເຕັມທີ່ ແຕ່ວ່າທ່ານກໍບໍ່ໄດ້ລະຄວາມພຍາຍາມ ທ່ານໄດ້ສົ່ງຄົນໜຸ່ມຊື່ ຕິໂຕ ໃຫ້ໄປຢູ່ເປັນປະຈຳ ເພື່ອຈະຫາທາງຮັກສາບາດແຜລທີ່ເກີດຂຶ້ນໃນຄຣິສຈັກ

5. ທ່ານໂປໂລໄດ້ອອກເດີນທາງຈາກເມືອງເອເຟໂຊໄປເມືອງໂກຣິນໂທ ໂດຍຜ່ານໄປທາງແຂວງມາຊີໂດເນັຽ ທ່ານມີຄວາມວິຕົກກັງວົນຫລາຍກ່ຽວກັບສະຖານການຂອງຄຣິສຈັກເມືອງໂກຣິນໂທຢູ່ແຕ່ທີ່ແຂວງມາຊີໂດເນັຽນີ້ເອງທ່ານໄດ້ພົບພໍ້ກັບຕິໂຕພ້ອມກັບຂ່າວດີ ທີ່ເຮັດໃຫ້ທ່ານໝັ້ນໃຈວ່າ ບັນຫາທີ່ມີຢູ່ໃນຄຣິສຈັກໃນເມືອງໂກຣິນໂທໄດ້ສິ້ນສຸດແລ້ວ ທ່ານໄດ້ຂຽນສະແດງຮູ້ສຶກຂອງທ່ານໃນພຣະທັມໂກຣິນໂທສະບັບສອງ ບົດທີ່ 1 ເຖິງບົດທີ່ 9 ໃນບົດເຫລົ່ານີ້ສະແດງໃຫ້ເຫັນວ່າຄວາມໜັກອຸກໃຈ ຄວາມຜິດຫວັງ ຄວາມເສັຽໃຈກຳລັງຈະສູນຫາຍໄປແລະເກີດເປັນຄວາມຫວັງໃໝ່ ເປັນເໝືອນພາຍຸທີ່ໂຫມພັດ

ກະທບໍ່າມາ ແລະບັດນີ້ກໍໄດ້ຜ່ານພົ້ນໄປແລ້ວ ຄົງເຫລືອແຕ່ຄວາມສງົບແລະຄວາມປອດພັຍ

| ຈົ່ງເອົາສິ່ງທີ່ທ່ານໄດ້ສຶກສາຈາກຂ້າງເທິງເຮັດບົດຝຶກຫັດ ຂໍ້ທີນຶ່ງ |
| --- |

**ຫ້າ. ເນື້ອນັຍຂອງພຣະທັມຈົດໝາຍໂກຣິນໂທສະບັບຕົ້ນ**

ດັ່ງທີ່ເຮົາໄດ້ສຶກສາມາແລ້ວວ່າ ເມືອງໂກຣິນໂທເປັນສູນການແຫ່ງການຄ້າຂາຍ ມີຄົນເດີນທາງເຂົ້າອອກມາຈາກຊາດຕ່າງ ໆ ປະຊາກອນສ່ວນຫລາຍເປັນຄົນຊັ້ນຕໍ່າທີ່ເປັນທາດ ໃນດ້ານສິລທັມແລະສາສນາກໍຕົກຕໍ່າ ສິ່ງເຫລົ່ານີ້ມີຜົນຕໍ່ສິລທັມແລະການດຳເນີນຊີວິດຂອງຄຣິສຕຽນຄືກັນ ແມ່ນວ່າຊາວໂກຣິນໂທໄດ້ມາເປັນຄຣິສຕຽນແລ້ວ ແຕ່ຍັງມີມາຕຖານສິນທັມຄືກັບຊາວໂລກ ບໍ່ໄດ້ປ່ຽນແປງບໍ່ໄດ້ກັບໃຈໃໝ່ ດັ່ງທີ່ເຮົາຈະໄດ້ສຶກສາຕໍ່ໄປ ແລະຖ້າເຮົາຈະສັງເກດເບິ່ງວ່າຊີວິດຂອງຄຣິສຕຽນໃນສັງຄົມປັດຈຸບັນມີບັນຫາບໍ່ຕ່າງກັບບັນຫາຕ່າງ ໆ ຂອງຄຣິສຈັກໃນໂກຣິນໂທ ດັ່ງນັ້ນຂໍໃຫ້ທ່ານສຶກສາເບິ່ງແລະພິຈາຣະນາເພື່ອນຳຄວາມຈິງແຫ່ງພຣະຄຳຂອງພຣະເຈົ້າມາແກ້ໄຂບັນຫາໃນຄຣິສຈັກຂອງເຮົາ ມີຜູ້ກ່າວວ່າຈົດໝາຍໂກຣິນໂທສະບັບຕົ້ນນີ້ ເປັນພຣະທັມຈົດໝາຍທີ່ເປີດຫລັງຄາຂອງຄຣິສຈັກໃນຍຸກທຳອິດອອກ ແລະໃຫ້ເຮົາໄດ້ສຶກສາເບິ່ງເຫດການພາຍໃນຄຣິສຈັກ ເນື້ອນັຍຂອງພຣະທັມໂກຣິນໂທສະບັບຕົ້ນເປັນຕົວຢ່າງນຶ່ງທີ່ເປີດເຜີຍໃຫ້ເຮົາໄດ້ເຫັນວ່າ ການທີ່ມີບັນຫາເກີດຂຶ້ນໃນຄຣິສຈັກເປັນສິ່ງທັມມະດາ ທີ່ເກີດຂຶ້ນໄດ້ກັບຄຣິສຈັກທົ່ວໄປ ຫາກວ່າສະມາຊິກຂອງຄຣິສຈັກຍອມໃຫ້ກິຈການແລະແນວຄວາມຄິດຂອງຝ່າຍໂລກມາມີອິດທິພົນເໜືອຄວາມເຊື່ອຝ່າຍຈິດວິນຍານທີ່ພຣະຄຣິສໄດ້ສ້າງຂຶ້ນໃໝ່ ໂດຍສະເພາະຢ່າງຍິ່ງສະມາຊິກທີ່ມີພື້ນຖານໃນສາສນາອື່ນມາກ່ອນ ຍັງບໍ່ໄດ້ຫຍັ່ງຮາກລຶກໃນພຣະຄຳຂອງພຣະເຈົ້າຢ່າງພຽງພໍ ດັ່ງນັ້ນມາຕຖານການດຳເນີນຊີວິດຂອງຄຣິສຕຽນເຫລົ່ານີ້ຈຶ່ງຍັງພົວພັນ ແລະຕິດຢູ່ກັບແນວຄວາມຄິດແລະຄວາມປະພຶດເດີມຈົນໃນສຸດທ່ານໂປໂລຕ້ອງກ່າວວ່າ

*"ເຫດສະນັ້ນ ແຕ່ນີ້ຕໍ່ໄປເຮົາຈະບໍ່ສັງເກດຮູ້ຜູ້ໃດຕາມມາຕຖານຂອງມະນຸດ ເຖິງແມ່ນເມື່ອກ່ອນເຮົາໄດ້ສັງເກດຮູ້ພຣະຄຣິສຕາມມາຕຖານຂອງມະນຸດກໍຕາມ ແຕ່ດຽວນີ້ເຮົາກໍບໍ່ສັງເກດຮູ້ພຣະອົງຢ່າງນັ້ນອີກ ເຫດສະນັ້ນຖ້າຜູ້ໃດຢູ່ໃນພຣະຄຣິສ ຜູ້ນັ້ນກໍເປັນຄົນທີ່ຖືກຊົງສ້າງຂຶ້ນໃໝ່ແລ້ວ ຖານະເກົ່າເຫລົ່ານັ້ນກໍລ່ວງໄປແລ້ວ ເບິ່ງແມ ກາຍເປັນສິ່ງໃໝ່ທັງນັ້ນ"*

(2 ກທ 5:1-17)

ບັນຫາຕ່າງ ໆ ທີ່ເກີດຂຶ້ນໃນພຣະທັມຈົດໝາຍໂກຣິນໂທສະບັບຕົ້ນມີຫົວຂໍ້ຕ່າງ ໆ ດັ່ງຕໍ່ໄປນີ້

**1. ປັນຍາຂອງໂລກກັບພຣະປັນຍາຂອງພຣະເຈົ້າ**

ທ່ານໂປໂລໄດ້ກ່າວຢ່າງຊັດແຈ້ງກັບຊາວໂກຣິນໂທ ເຖິງຄວາມຕັ້ງໃຈໃນການປະກາດຂອງທ່ານວ່າ "ຈະບໍ່ສະແດງຄວາມຮູ້ເຣື່ອງໃດ ໆ ໃນທ້າມກາງພວກເຈົ້າ ເວັ້ນແຕ່ເຣື່ອງພຣະເຢຊູຄຣິສແລະການທີ່ພຣະອົງຊົງຖືກຄຶງໄວ້ທີ່ໄມ້ກາງແຂນນັ້ນ" (1 ກທ 2:2 ສຶກສາທຽບກັບ 1:17, 20-25, 2:1-5, 10-16, 3:18-23) ເຮົາອາດຈະສົງສັຍວ່າ ເປັນຫຍັງທ່ານໂປໂລຈຶ່ງຕັ້ງໃຈເຊັ່ນນີ້ ເພາະວ່າໃນເມືອງຫລວງຂອງປະເທດກຣີກ ເປັນເມືອງທີ່ມີຄວາມຈະເຣີນ ແລະມັກສະແດງປັນຍາຂອງໂລກ ແຕ່ທ່ານ

ໂປໂລເຫັນວ່າພຣະຄຣິສເປັນພຣະປັນຍາຂອງພຣະເຈົ້າ ທີ່ມີຄວາມລ້ຳລຶກເກີນກວ່າມະນຸດທັມດາຈະເຂົ້າໃຈໄດ້ ຜູ້ທີ່ມີວິນຍານຂອງພຣະເຈົ້າຈຶ່ງຈະເຂົ້າໃຈໄດ້ "ທ່ານເຫັນວ່າປັນຍາຂອງໂລກເປັນຄວາມໂງ່ຕໍ່ພຣະພັກພຣະເຈົ້າ" ດັ່ງນັ້ນບໍ່ມີມະນຸດຜູ້ໃດຈະອວດໄດ້ ເພາະຄວາມຮູ້ແລະປັນຍາຂອງເຂົາບໍ່ສົມບູນ ຕ້ອງເພິ່ງພາອາສັຍພຣະເຈົ້າໂດຍຄວາມເຊື່ອດ້ວຍຄວາມບໍຣິສຸດໃຈ (1 ກທ 1:29-30)

## 2. ການແບ່ງແຍກຖືພັກຖືພວກ

ສິ່ງທີ່ທຳລາຍການເປັນພີ່ນ້ອງໃນພຣະຄຣິສ ແລະຄຸນລັກສນະຂອງຄຣິສຕຽນຢ່າງຮ້າງແຮງທີ່ສຸດຄືການແບ່ງແຍກຖືພັກຖືພວກ ສິ່ງນີ້ບໍ່ໜ້າທີ່ຈະເກີດຂຶ້ນໃນຄຣິສຈັກຜູ້ມີຄວາມເຊື່ອໃນພຣະເຢຊູຄຣິສ ໃນເມື່ອຄຣິສຕຽນທຸກຄົນຕ່າງມີຄວາມເຊື່ອສັດທາໃນພຣະອົງ ປາກົດວ່າການແຕກແຍກຖືພັກຖືພວກໄດ້ແບ່ງອອກເປັນສີ່ພວກດ້ວຍກັນຄື (ສຶກສາຈາກ 1 ກທ 1:12)

(1) "ຂ້ອຍເປັນຝ່າຍໂປໂລ"

(2) "ຂ້ອຍເປັນຝ່າຍອາໂປໂລ"

(3) "ຂ້ອຍເປັນຝ່າຍເກຟາ" (ເປໂຕ)

(4) "ຂ້ອຍເປັນຝ່າຍພຣະຄຣິສ"

ຈະເຫັນໄດ້ວ່າແຕ່ລະຝ່າຍອ້າງອີງຫົວໜ້າຄົນສຳຄັນຂອງຕົນ ພວກນຶ່ງອວດວ່າເຂົາຕິດຕາມທ່ານໂປໂລ ອີກພວກນຶ່ງອວດວ່າເຂົາຢູ່ຝ່າຍທ່ານອາໂປໂລ ພວກທີ່ສາມຖືຕົວຢ່າງໜັກວ່າຕິດຕາມທ່ານເປໂຕຜູ້ນຳຄຣິສຈັກ ພວກທີ່ສີ່ຄິດວ່າພວກອື່ນນັ້ນໄດ້ຕິດຕາມມະນຸດ ແຕ່ພວກເຂົາໄດ້ອ້າງວ່າຢູ່ຝ່າຍພຣະຄຣິສແລະບໍ່ຍອມຕາມມະນຸດ ເຮົາເຫັນໄດ້ວ່າຜູ້ທີ່ແບ່ງແຍກອອກເປັນພັກເປັນພວກເຊັ່ນນີ້ ມີຈິດໃຈຄັບແຄບແລະມັກການແຕກແຍກ ການທີ່ຄຣິສຈັກສມັຍທຳອິດຂາດຕົວອາຄານໂບດຫລືວິຫານ ອາດເປັນເຫດນຶ່ງທີ່ກໍ່ໃຫ້ເກີດບັນຫານີ້ຂຶ້ນໄດ້ ຄືພວກເຂົາໄດ້ແບ່ງແຍກອອກເປັນກຸ່ມເລັກ ໆ ໄປປະຊຸມຕາມເຮືອນຕ່າງ ໆ ຜູ້ໃດມັກຕິດແທກແລະມີແນວຄວາມເຊື່ອນຳຜູ້ໃດກໍໄປກັບພວກນັ້ນ ການແຍກກຸ່ມເຊັ່ນນີ້ມີຜົນດີທີ່ເຮັດໃຫ້ຄົນໄດ້ຄຸ້ນເຄີຍສ້າງມິຕພາບກັນໄດ້ງ່າຍກວ່າຢູ່ໃນກຸ່ມໃຫຍ່ ແຕ່ກໍຕ້ອງມີອີກພາກສ່ວນນຶ່ງທີ່ມີສ່ວນສຳຄັນຄືທຸກກຸ່ມຄວນສ້າງຄວາມຮູ້ສຶກແລະແນວຄິດເຫັນວ່າ "ພວກເຮົາເປັນອັນນຶ່ງອັນດຽວກັນໃນພຣະຄຣິສ" ບັນຫາທີ່ເກີດກໍເພາະພວກເຂົາເຫັນວ່າ ຝ່າຍຂອງຕົວເອງຖືກຕ້ອງແລະບໍ່ຍອມຮັບຜູ້ອື່ນເຂົ້າເປັນສ່ວນຮ່ວມໃນພຣະຄຣິສ

ເຫດທີ່ເກີດຂຶ້ນເຊັ່ນນີ້ທ່ານໂປໂລຍອມບໍ່ໄດ້ ແທ້ຈິງແລ້ວພຣະເຢຊູຄຣິສເທົ່ານັ້ນເປັນສີສະຂອງຄຣິສຈັກ ແຕ່ວ່າຄຣິສຕຽນທີ່ຍົກຍໍມະນຸດຄົນນຶ່ງເປັນຜູ້ນຳສູງສຸດແລ້ວບໍ່ຍອມຮັບຜູ້ອື່ນ ອັນນີ້ບໍ່ຖືກຕ້ອງຄຣິສຕຽນຕ້ອງມີຄວາມຊື່ນຊົມຍິນດີກັບຜູ້ນຳທີ່ມີຂອງປະທານຕ່າງ ໆ ໃນການຮັບໃຊ້ພຣະເຈົ້າ ແລະໃຫ້ໃຊ້ຂອງປະທານຕ່າງ ໆ ທີ່ຜູ້ນຳແຕ່ລະມີໃຫ້ເປັນປໂຍດໃນການຮັບໃຊ້ພຣະເຈົ້າ ທ່ານໂປໂລກ່າວວ່າ "ເຫດສະນັ້ນ ຢ່າໃຫ້ຜູ້ໃດຍົກມະນຸດຂຶ້ນອວດ ດ້ວຍວ່າສິ່ງສາຣະພັດເປັນຂອງເຈົ້າທັງຫລາຍແລ້ວ ເຖິງແມ່ນວ່າໂປໂລກໍດີ ອາໂປໂລແລະເກຟາກໍດີ ໂລກກັບຊີວິດແລະຄວາມຕາຍກໍດີ ຫລືສິ່ງທີ່ມີໃນປັດຈຸບັນແລະອະນາຄົດກໍດີ ສິ່ງສາຣະພັດນັ້ນກໍເປັນຂອງພວກເຈົ້າ ແລະພວກເຈົ້າເປັນຂອງພຣະຄຣິສ ແລະພຣະຄຣິສຊົງເປັນພຣະເຈົ້າ" (1 ກທ 3:21-23)

ໃນປັດຈຸບັນ ຫລາຍ ໆ ຄຣິສຈັກມີການປະຊຸມສຶກສາພຣະຄັມພີກັນຕາມເຮືອນ ບາງບ່ອນເອີ້ນວ່າເຊລກຣຸບ (Cell Group) ຫລືກຸ່ມສຶກສາພຣະຄັມພີຕາມເຮືອນ ຊຶ່ງເກີດຜົນດີນຳພາໃຫ້ສະມາຊິກຂອງ

ແຕ່ລະຄຣິສຈັກມີໂອກາສຮວມຕົວເຂົ້າເປັນກຸ່ມນ້ອຍ ໆ ໄດ້ມີໂອກາສສາມັກຄີທົ່ມກັນ ແລະໄດ້ໃຊ້ເວລາວ່າງໃຫ້ເປັນປະໂຍດ ເພື່ອສຶກສາພຣະຄຳພີແລະໄຫວ້ວອນຫາພຣະເຈົ້າຮ່ວມກັນ ການປະຊຸມແບບນີ້ຈຳເປັນຕ້ອງມີຜູ້ນຳກຸ່ມທີ່ຮັກແພງຄຣິສຈັກ ແລະເປັນຜູ້ທີ່ມີນ້ຳໃຈນຳພາໃຫ້ຄຣິສຈັກມີຄວາມເປັນອັນນຶ່ງອັນດຽວກັນ ໂດຍໃຫ້ພຣະວິນຍານບໍຣິສຸດນຳພາ ບໍ່ແມ່ນຜູ້ນຳກຸ່ມຕັ້ງຕົວເປັນໃຫຍ່ເພື່ອສິດທິອຳນາດຂອງຕົວ ແຕ່ວ່າຜູ້ນຳຕ້ອງເປັນຜູ້ທີ່ຖ່ອມໃຈແລະເຄົາຣົບສິດທິອຳນາດຂອງຄຣິສຈັກ ເປັນຜູ້ສ້າງສັນຕິ ເປັນເກລືອ ແລະເປັນຄວາມສວ່າງສ່ອງແຈ້ງນຳພາສມາຊິກໃຫ້ເຂົ້າໃກ້ຊິດສນິທກັບພຣະຄຳຂອງພຣະເຈົ້າ ຮູ້ຈັກວຽກງານການຮັບໃຊ້ຄຣິສຈັກ ແລະຖວາຍກຽດຕິຍົດສງ່າຣາສີທັງມວລແດ່ອົງພຣະເຢຊູຄຣິສ ຄຣິສຈັກໃດທີ່ສາມາດເຮັດແບບນີ້ໄດ້ກໍຈະເກີດໝາກຜົນຫລາຍ ຖວາຍກຽດຕິຍົດແດ່ພຣະຄຣິສ ແລະນຳຊື່ສຽງມາສູ່ຄຣິສຈັກຂອງຕົວເອງ

### 3. ຊີວິດຄຣິສຕຽນກັບການແຕ່ງງານ

ອີກບັນຫານຶ່ງຂອງຄຣິສຈັກໃນໂກຣິນໂທຄື ເຣື້ອງການຜິດກາມແລະການຄອງເຮືອນ ໂດຍມີສະມາຊິກຄົນນຶ່ງໄດ້ກິນຢູ່ກັບແມ່ນ້າ (ເມັຽໃໝ່ຂອງພໍ່ຂອງຕົນ) ການເຮັດຜິດແບບນີ້ ເຖິງວ່າຄົນຕ່າງຊາດກໍຍັງບໍ່ເຮັດ ແລະບໍ່ຖືວ່າຖືກຕ້ອງ ແຕ່ພວກສະມາຊິກຍັງອວດຕົວຂຶ້ນແທນທີ່ຈະເປັນທຸກຮ້ອນໃຈ (1 ກທ 5: 1-2) ທ່ານໂປໂລໄດ້ເຫັນວ່າບັນຫານີ້ແຮງຮ້າຍຂຶ້ນ ເພາະສະມາຊິກຂອງຄຣິສຈັກໄດ້ພິຈາຣະນາເຣື້ອງການຜິດກາມແລະຊີວິດການແຕ່ງງານຕາມມາຕຖານອັນອ່ອນ ໆ ຂອງຊາວໂກຣິນໂທໂດຍທົ່ວໄປ ແລະໄດ້ສ້າງບັນຫາໃຫ້ກັບຄອບຄົວໂດຍທີ່ບໍ່ໄດ້ເຫັນວ່າເປັນສິ່ງຜິດ ເປັນການເປີດທາງໃຫ້ຄຣິສຕຽນຄົນອື່ນ ໆ ມີແນວຄິດວ່າ ການຜົວພັນທີ່ຜິດໃນທາງກາມບໍ່ມີຜົນກະທົບກະເທືອນຕໍ່ຊີວິດຝ່າຍຈິດວິນຍານ (1 ກທ 6: 12-20) ແລ້ວຍັງມີສະມາຊິກຂອງຄຣິສຈັກຄົນອື່ນ ໆ ທີ່ຄິດໃນທາງກົງກັນຂ້າມຄື ຢ້ານວ່າພຣະເຈົ້າຈະບໍ່ພໍພຣະທັຍການແຕ່ງງານແລະມີລູກຫລານ ພວກເຂົາມີຄຳຖາມຫາທ່ານໂປໂລວ່າ ຫາກວ່າຈະຮັກສາຕົວເປັນໂສດຈະສາມາດດຳເນີນຊີວິດໄດ້ບໍຣິສຸດດີກວ່າຜູ້ທີ່ແຕ່ງງານມີຄອບຄົວ ເພາະບໍ່ມີເຣື້ອງການມາກ່ຽວຂ້ອງທີ່ຈະເຮັດໃຫ້ເກີດບັນຫາການດຳເນີນຊີວິດຄຣິສຕຽນ ທ່ານໂປໂລໄດ້ຕອບບັນຫານີ້ໃນພຣະທັມໂກຣິນໂທສະບັບຕົ້ນ 7:1-6

ທ່ານໂປໂລສອນວ່າ ຮ່າງກາຍ ຈິດໃຈ ແລະຈິດວິນຍານຮວມກັນເປັນຊີວິດດຽວ ການທຳຮ້າຍຮ່າງກາຍຫລືການດຳເນີນຊີວິດອັນເປາະເປື່ອນຫລືບໍ່ບໍຣິສຸດ ເຮັດໃຫ້ເປັນອັນຕຣາຍຕໍ່ຊີວິດຝ່າຍຈິດວິນຍານແລະຈິດໃຈດ້ວຍ ແລ້ວຍັງໃຫ້ໂທດແລະເຮັດໃຫ້ສັງຄົມເສື່ອມລົງດ້ວຍ ອາດມີບາງຄົນສາມາດດຳເນີນຊີວິດຢ່າງບໍຣິສຸດໂດຍບໍ່ຕ້ອງແຕ່ງງານ ເພື່ອເຂົາຈະຖວາຍຕົວເຮັດວຽກການຮັບໃຊ້ພິເສດ ແຕ່ສຳລັບຄົນທົ່ວໄປແລ້ວການແຕ່ງງານເປັນຊີວິດທີ່ເໝາະສົມແລະດີເລີດ ທ່ານໂປໂລໄດ້ເຫັນເຖິງບັນຫາຂອງການແຕ່ງງານເພາະຜູ້ທີ່ແຕ່ງງານແລ້ວຈະຄິດຫລາຍເຖິງໜ້າທີ່ການເບິ່ງແຍງຄອບຄົວ ອາດເຮັດໃຫ້ການຮັບໃຊ້ພຣະເຈົ້າໃນຄຣິສຈັກແລະສັງຄົມບໍ່ສາມາດທຸ່ມເທໄດ້ເຕັມຂນາດ ທ່ານໂປໂລເຫັນວ່າ ຊີວິດໃນໂລກນີ້ຈະດຳເນີນໄປອີກບໍ່ນານ (1 ກທ 7:29-31) ທ່ານຈຶ່ງຖືວ່າ ຖ້າຜູ້ໃດບໍ່ໄດ້ແຕ່ງງານໄດ້ກໍດີ ຈະໄດ້ມີອິສຣະທີ່ຈະມີຊີວິດເພື່ອພຣະຄຣິສ ເພື່ອຮັບໃຊ້ພຣະເຈົ້າໃນຍຸກສຸດທ້າຍທີ່ທຸກຍາກນີ້ ທ່ານໂປໂລຕ້ອງການໃຫ້ຄຣິສຕຽນທຸກຄົນມີຄວາມຕັ້ງໃຈບົວລະບັດພຣະເຢຊູຄຣິສ "ໂດຍບໍ່ມີໃຈເປັນສອງກ້ຳສອງຝ່າຍ" (1 ກທ 7: 32-35) ເນື່ອງຈາກ "ເວລາທີ່ເຫລືອຢູ່ນັ້ນກໍສັ້ນເຂົ້າມາແລ້ວ" (1 ກທ 7:29) ຜູ້ທີ່ເປັນໂສດໃຫ້ຕັ້ງຈິດຕັ້ງໃຈໃນການບົວລະບັດພຣະເຈົ້າ ແລະຜູ້ແຕ່ງງານແລ້ວກໍດຳເນີນຊີວິດເໝືອນບໍ່ໄດ້ແຕ່ງງານ "ດ້ວຍ

ວ່າລະບົບຂອງໂລກກຳລັງລ່ວງໄປ"

ຄຣິສຕຽນໃນປັດຈຸບັນເມື່ອອ່ານຈົດຫມາຍພຣະທັມໂກຣິນໂທສະບັບຕົ້ນ ເຖິງເຣື້ອງການແຕ່ງງານນີ້ ອາດຈະມີຄິດວ່າ ທ່ານໂປໂລບໍ່ເຫັນດ້ວຍກັບການແຕ່ງງານ ແທ້ທີ່ຈິງທ່ານເຫັນວ່າການແຕ່ງງານເປັນສິ່ງທີ່ຖືກຕ້ອງແລະມີຄວາມສຳຄັນ ແຕ່ທ່ານໂປໂລມີຄວາມຄິດເຫັນວ່າຜູ້ທີ່ບໍ່ໄດ້ແຕ່ງງານກໍທຸ່ມເທຊີວິດໃນການບົວລະບັດພຣະເຈົ້າໄດ້ຫລາຍກວ່າ ເມື່ອທ່ານສະແດງຄວາມຄິດເຫັນນີ້ທ່ານໄດ້ບອກໃຫ້ຮູ້ວ່າເປັນຄວາມຄິດເຫັນຂອງທ່ານ (1 ກທ 7:25, 40) ທ່ານໂປໂລເຊື່ອວ່າພຣະເຈົ້າຊົງສ້າງມະນຸດ ແລະໃຫ້ມີການແຕ່ງງານຢູ່ກັນເປັນຜົວເມັຽກັນ ການແຕ່ງງານບໍ່ແມ່ນເປັນການຜິດບາບ ທ່ານເຫັນວ່າຄຣິສຕຽນສ່ວນຫລາຍຄວນແຕ່ງງານ ທ່ານເຊື່ອວ່າການແຕ່ງງານເປັນການຮວມຜູ້ຊາຍຄົນນຶ່ງເຂົ້າກັບຜູ້ຍິງຢ່າງຖາວອນ ໂດຍການອ້າງອີງຄຳສອນຂອງພຣະເຢຊູຄຣິສເປັນຄຳສັ່ງ "ຢ່າໃຫ້ເມັຽປະຜົວ... ແລະຂໍຢ່າໃຫ້ຜົວປະຮ້າງເມັຽ" (1 ກທ 7:10) ທ່ານຍັງໄດ້ກ່າວອີກວ່າ "ຖ້າເຈົ້າມີເມັຽແລ້ວ ຢ່າຊອກຫາທາງແຍກຈາກກັນ" (1 ກທ 7:27) ຫມາຍຄວາມວ່າຜູ້ທີ່ແຕ່ງງານແລ້ວ ຕ້ອງສັດຊື່ຕໍ່ຄູ່ຄອງຂອງຕົນເອງ ເຖິງວ່າບາງເທື່ອຈະຕ້ອງແຍກຈາກກັນຊົ່ວຄາວ ເພື່ອເສັຽສລະຕົວໃນການອະທິຖານຫລືບົວລະບັດພຣະເຈົ້າ ຫລັງຈາກນັ້ນກໍກັບຄືນມາຢູ່ຮ່ວມກັນອີກບໍ່ໃຫ້ເປີດຊ່ອງໃຫ້ມານແຊກແຊງ (1 ກທ 7:5) ທ່ານໂປໂລເຫັນຄວາມສຳຄັນຂອງຊີວິດແຕ່ງງານ ແຕ່ບໍ່ຍາກໃຫ້ຄຣິສຕຽນຫຍຸ້ງຍາກຫລົງແຕ່ການຢູ່ຮ່ວມກັນຈົນບໍ່ສົນໃຈໃນການບົວລະບັດຮັບໃຊ້ພຣະເຈົ້າ ແລະໃນທາງກົງກັບຂ້າມຄົນທີ່ບໍ່ໄດ້ແຕ່ງງານ ເປັນໂສດຕ້ອງດຳເນີນຊີວິດບໍຣິສຸດດ້ວຍການຄວບຄຸມຕົວເອງ ແລະຕັ້ງໃຈໃນການຮັບໃຊ້ພຣະເຈົ້າແທ້ "ແຕ່ຖ້າເຂົາອົດໃຈບໍ່ໄດ້ ກໍໃຫ້ເຂົາແຕ່ງງານເສັຽ ເພາະການແຕ່ງງານນັ້ນດີກວ່າມີໃຈເຜົາຮ້ອນດ້ວຍກາມຣະຄະ" (1 ກທ 7:9) ໃນປັດຈຸບັນນີ້ ເຮົາຈະເຫັນໄດ້ວ່າມີຄົນຈຳນວນຫລວງຫລາຍຢູ່ນຳກັນໂດຍບໍ່ໄດ້ແຕ່ງງານ ເຫດຜົນນຶ່ງໃນຄວາມຮູ້ສຶກຂອງເຂົາຄື ບໍ່ຕ້ອງການມີຄຳຫມັ້ນສັນຍາ ຫລືບໍ່ຮ່ວມກັນສ້າງຄອບຄົວຢ່າງຖາວອນ ແຕ່ປ່ອຍຕົວເຂົາໃຫ້ເປັນໄປຕາມຄວາມຮູ້ສຶກແລະຄວາມຕ້ອງການຂອງຮ່າງກາຍ ທ່ານໂປໂລບໍ່ເຫັນນຳ ທ່ານສອນວ່າ ຖ້າອົດໃຈບໍ່ໄດ້ໃຫ້ແຕ່ງງານກັນ ຖ້າບໍ່ແຕ່ງກໍຕ້ອງຮັກສາຊີວິດຮ່າງກາຍໃຫ້ບໍຣິສຸດບໍ່ເປັນມົນທິນ ບໍ່ໃຫ້ເປັນໄປຕາມກາມຣະຄະ ທ່ານໂປໂລຍືນຍັດຄວາມເຊື່ອນີ້ໄດ້ກ່າວວ່າ "ຮ່າງກາຍຂອງເຈົ້າເປັນວິຫານຂອງພຣະວິນຍານບໍຣິສຸດ ຜູ້ຊຶ່ງຊົງສະຖິດຢູ່ໃນພວກເຈົ້າຊຶ່ງພວກເຈົ້າໄດ້ຮັບຈາກພຣະເຈົ້າ ເຈົ້າບໍ່ແມ່ນເຈົ້າຂອງຕົວເຈົ້າເອງ ພຣະເຈົ້າໄດ້ຊົງຊື້ເຈົ້າທັງຫລາຍໄວ້ແລ້ວດ້ວຍຣາຄາສູງ ເຫດສະນັ້ນຈົ່ງຖວາຍພຣະກຽດຕໍ່ພຣະເຈົ້າດ້ວຍຮ່າງກາຍຂອງຕົນ" (1 ກທ 6:19-20)

## 4. ຊີວິດຄຣິສຕຽນແລະການຢູ່ຮ່ວມກັນໃນສັງຄົມ

ທ່ານໂປໂລມີຄວາມເສັຽໃຈທີ່ເກີດການຜິດຖຽງກັນ ຈົນກະທັ່ງຕ້ອງນຳຄວາມໄປເຖິງສານທີ່ເປັນຄົນທີ່ບໍ່ເປັນຄຣິສຕຽນ (1 ກທ 6:1-11) ການເຮັດແນວນັ້ນຍ່ອມນຳພາເອົາຄວາມອັບອາຍຂາຍຫນ້າມາສູ່ຄຣິສຈັກ ທ່ານຮູ້ສຶກວ່າ ເມື່ອພີ່ນ້ອງຄຣິສຕຽນມີຄວາມຜິດກັນຢ່າງທີ່ຫລີກຫນີບໍ່ພົ້ນແລ້ວ ກໍຄວນຈະເປັນຫນ້າທີ່ຂອງພີ່ນ້ອງໃນຄຣິສຈັກດ້ວຍກັນຈັດການແກ້ບັນຫາທີ່ຜິດກັນນັ້ນ ທ່ານໂປໂລສອນວ່າຄຣິສຈັກຄວນຮຽນຮູ້ຈັກໃນເຣື້ອງນີ້ ເພາະ "ໄພ່ພົນຂອງພຣະເຈົ້າຈະພິພາກສາໂລກ" ບັນຫາໃນໂລກນີ້ເປັນເຣື້ອງເລັກນ້ອຍເມື່ອທຽບກັບຫນ້າທີ່ຄວາມຮັບຜິດຊອບທີ່ຈະມາໃນອານາຄົດ ທ່ານໂປໂລເຫັນວ່າທີ່ຈິງແລ້ວການທີ່ຄຣິສຕຽນມີຄວາມກັນຈົນເຖິງສານນັ້ນກໍຕົກຈາກຣະດັບສິລທັມທີ່ຄຣິສຕຽນຄວນມີ ຜູ້ທີ່ເປັນຄຣິສຕຽນນັ້ນມີຄຸນທັມທີ່ຕ້ອງອົດທົນຕໍ່ການຄິດໂກງຂອງຜູ້ອື່ນ ການໂກງແລະການທຳຮ້າຍກັນນັ້ນເປັນການຂອງຄົນອະ

ທັມ ແລະບໍ່ມີສ່ວນໃນແຜ່ນດິນຂອງພຣະເຈົ້າ ດັ່ງນັ້ນຖ້າຄຣິສຕຽນປະພຶດຕົວຄືກັບຄົນອະທັມແລ້ວເຮົາກໍຕົກຢູ່ໃນຖານະດຽວກັບຄົນອະທັມ ດັ່ງນັ້ນໃຫ້ອິດເອົາໂດຍຖືວ່າ "ເຈົ້າທັງຫລາຍໄດ້ຮັບການຊົງຊໍາຮະແລ້ວ ໄດ້ຖືກຊົງຕັ້ງໄວ້ສໍາລັບພຣະເຈົ້າແລ້ວ ໄດ້ຖືກຊົງນັບເປັນຄົນຊອບທັມໃນພຣະນາມຂອງພຣະເຢຊູຄຣິສເຈົ້າ ແລະໂດຍພຣະວິນຍານແຫ່ງພຣະເຈົ້າຂອງພວກເຮົາ" (1 ກທ 6:11) ດ້ວຍເຫດນີ້ຄຣິສຕຽນຄວນຈະຢູ່ຢ່າງສັນຕິສຸກໃນພຣະຄຣິສ ຍອມອົດທົນຕໍ່ກັນແລະກັນຫລາຍກວ່າຕໍ່ສູ້ກັນແລະທໍາຮ້າຍກັນ ເພື່ອຮັກສາຊີວິດຄຣິສຕຽນທີ່ໄດ້ຮັບການຊໍາຮະແລ້ວ ບໍ່ໃຫ້ເປາະເປື້ອນຫລືຕົກຈາກຄຸນທັມທີ່ຄຣິສຕຽນມີຢູ່

ຄຣິສຕຽນມີຄວາມຈໍາເປັນຕ້ອງພົວພັນກັບຄົນທີ່ບໍ່ເປັນຄຣິສຕຽນ ໃນເຣື້ອງການຄ້າ ການປົກຄອງ ແລະການສັງຄົມ ເປັນສິ່ງທີ່ຫລີກຫນີບໍ່ໄດ້ ໂດຍສະເພາະຄົນໃນເມືອງໂກຣິນໂທມີຄວາມກ່ຽວຂ້ອງພົວພັນກັບເຣື້ອງການນັບຖືຮູບເຄົາຣົບແລະພຣະຈໍານວນຫລວງຫລາຍ ແມ່ນໃນເຮືອນ ໃນຫ້ອງການຂອງເມືອງ ໃນສຫະກອນ ແລະໃນສະມາຄົມຂອງສັງຄົມຍ່ອມມີສ່ວນພົວພັນກັບຮູບເຄົາຣົບ ໂດຍສະເພາະເຣື້ອງການກິນອາຫານທີ່ຖວາຍບູຊາກັບຮູບເຄົາຣົບເປັນສິ່ງຫລີກຫນີໄດ້ຍາກ ຄົນໃນສມັຍນັ້ນມີການຖວາຍອາຫານເປັນເຄື່ອງບູຊາແກ່ຮູບເຄົາຣົບ ເຂົາຈະເອົາອາຫານສ່ວນນຶ່ງເຜົາບູຊາ ອາຫານອີກສ່ວນນຶ່ງໃຫ້ແກ່ພວກພຣະທີ່ປົວລະບັດໃນວິຫານ ແລະອາຫານອີກສ່ວນນຶ່ງຜູ້ຄົນກໍຈະນໍາກັບມາກິນສລອງກັນ ບາງເທື່ອກໍກິນກັນໃນວິຫານ ບາງເທື່ອກໍກິນກັນໃນເຮືອນ ບາງເທື່ອເນື້ອທີ່ຂາຍໃນຫ້ອງຕລາດກໍຜ່ານການຖວາຍບູຊາພຣະທຽມເທັດມາແລ້ວ ດັ່ງນັ້ນຈຶ່ງເປັນສິ່ງທີ່ຍາກທີ່ສຸດທີ່ຄຣິສຕຽນຈະແຍກຕົວອອກຈາກສັງຄົມໂດຍເດັດຂາດ ຄຣິສຈັກໃນເມືອງໂກຣິນໂທໄດ້ເອົາບັນຫານີ້ມາຖາມທ່ານໂປໂລວ່າ ຄຣິສຕຽນສົມຄວນຈະມີຊີວິດແນວໃດກ່ຽວຂ້ອງກັບບັນຫານີ້ (ອ່ານເບິ່ງ 1 ກທ 8:1-11:1)

ທ່ານໂປໂລກ່າວໃນພຣະທັມໂກຣິນໂທສະບັບຕົ້ນ 8:1-3 ເຣື້ອງຂອງທີ່ເຂົາເອົາບູຊາແກ່ພຣະທຽມນັ້ນ ເຮົາທັງຫລາຍຮູ້ຢູ່ວ່າ "ພວກເຮົາຕ່າງກໍມີຄວາມຮູ້ທຸກຄົນ" ຄວາມຮູ້ນັ້ນເຮັດໃຫ້ອວດຕົວ ແຕ່ຄວາມຮັກເຮັດໃຫ້ຈະເຣີນຂຶ້ນ ຖ້າຜູ້ໃດຖືວ່າຕົວຮູ້ສິ່ງໃດແລ້ວ ຜູ້ນັ້ນຍັງບໍ່ຮູ້ອັນໃດຕາມທີ່ຄວນຈະຮູ້ ແຕ່ວ່າຖ້າຜູ້ໃດຮັກພຣະເຈົ້າ ພຣະເຈົ້າກໍຊົງຮູ້ຈັກຜູ້ນັ້ນ" ທ່ານໂປໂລໄດ້ສອນສົມທຽບໃຫ້ຟັງວ່າ ຖ້າເຮົາເອົາຄວາມຮູ້ມາອວດ ມາຕັດສິນວ່າສິ່ງໃດສົມຄວນເຮັດແລະບໍ່ສົມຄວນເຮັດແລ້ວ ບາງເທື່ອຄວາມຮູ້ຄວາມເຂົ້າໃຈຂອງເຮົາອາດຈະບໍ່ພໍເທື່ອ ຫລືທັນສົມບູນ ແຕ່ວ່າບໍ່ວ່າເຮົາຈະເຮັດສິ່ງໃດໃຫ້ເຮົາຖືເອົາຄວາມຮັກທີ່ເຮົາມີຕໍ່ພຣະເຈົ້າເປັນຫລັກດີກວ່າຈະເພິ່ງຄວາມຮູ້ຂອງເຮົາເອງ ຕາມຄວາມຮູ້ແລ້ວການທີ່ຈະກິນເນື້ອທີ່ຖວາຍບູຊາແກ່ຮູບເຄົາຣົບແລ້ວບໍ່ໄດ້ເຮັດໃຫ້ຄວາມເຊື່ອເສັຽກໍຈິງຢູ່ ແຕ່ວ່າການກະທໍາຂອງເຮົາອາດຈະສ້າງບັນຫາໃຫ້ກັບຜູ້ອື່ນທີ່ມີປັນຍານ້ອຍກວ່າສະດຸດທໍ້ໃຈ ບາງຄົນຫາກໍເປັນເປັນຄຣິສຕຽນໃຫມ່ທີ່ເພິ່ງຫັນຈາກຮູບເຄົາຣົບມາຮັບເຊື່ອມີຊີວິດໃຫມ່ໃນພຣະຄຣິສ ເມື່ອເຫັນຄຣິສຕຽນຮ່ວມເຜົາເຂົ້າກັບຜູ້ທີ່ນັບຖືຮູບເຄົາຣົບແນວນັ້ນກໍອາດເກີດຄວາມທໍໃຈ ເພາະຕາມຈິດສໍານຶກຂອງເຂົາເຫັນວ່າ ຜູ້ທີ່ກິນແລະດື່ມຮ່ວມສລອງໃນວິຫານຫລືຕາມເຮືອນຖືວ່າກໍມີສ່ວນຮ່ວມໃນການບູຊາຕໍ່ພຣະທຽມຫລືຮູບເຄົາຣົບ ທ່ານໂປໂລຈຶ່ງໄດ້ຕັກເຕືອນຢ່າງຫນັກໃນພຣະທັມໂກຣິນໂທສະບັບຕົ້ນ ບົດທີ 10 ທ່ານຍົກຕົວຢ່າງຈາກປວັດສາດຂອງອິສຣາເອລມາກ່າວເຖິງລົງໂທດຂອງພຣະເຈົ້າວ່າ "ເຮົາບໍ່ຢາກໃຫ້ເຈົ້າທັງຫລາຍມີສ່ວນຮ່ວມກັບຜີ ເຈົ້າທັງຫລາຍຈະດື່ມແຕ່ຈອກຂອງອົງພຣະຜູ້ເປັນເຈົ້າແດ່ ແລະແຕ່ຈອກຂອງຜີແດ່ກໍ**ບໍ່ໄດ້** ຈະຮັບປະທານຮ່ວມໂຕະຂອງອົງພຣະຜູ້ເປັນເຈົ້າແດ່ ແລະຂອງຜີແດ່ກໍ**ບໍ່ໄດ້**" (1 ກທ 10:21-22) ຄຣິສຕຽນຄວນມີຄວາມຮັກທີ່ພຣະເຈົ້າພໍພຣະທັຍໂດຍເຫັນແກ່ຜູ້ທີ່ມີຄວາມເຊື່ອນ້ອຍ "ແຕ່ຈົ່ງຣະວັງໃຫ້ດີ ຢ່າໃຊ້ເສຣີພາບຂອງເຈົ້າທັງຫລາຍ ເປັນເຫດໃຫ້ຄົນທີ່ມີຄວາມເຊື່ອນ້ອຍສະດຸດໃຈ" (1 ກທ 8:9) ທ່ານໂປໂລວ່າ "ເຮົາເຮັດສິ່ງສາຣະພັດໄດ້ບໍ່ມີໃຜຫ້າມ ແຕ່ບໍ່ແມ່ນທຸກສິ່ງທີ່ເຮັດໄດ້ນັ້ນເປັນປະໂຍດ ເຮົາເຮັດສິ່ງສາຣະ

ພັດໄດ້ບໍ່ມີໃຜຫ້າມ ແຕ່ບໍ່ແມ່ນທຸກສິ່ງທີ່ເຮັດໄດ້ນັ້ນຈະໃຫ້ຈະເຣີນຂຶ້ນ ຢ່າໃຫ້ຜູ້ໃດຫາປໂຍດສ່ວນຕົວ ແຕ່ຈົ່ງເຫັນແກ່ປະໂຍດຂອງຄົນອື່ນ" (1 ກທ 10:23-24) ສິ່ງທີ່ສຳຄັນທີ່ສຸດຄື "ເຫດສະນັ້ນເມື່ອເຈົ້າທັງຫລາຍຈະກິນຈະດື່ມ ຫລືຈະເຮັດສິ່ງໃດກໍດີ ຈົ່ງເຮັດທຸກສິ່ງເພື່ອຖວາຍພຣະກຽດແດ່ພຣະເຈົ້າ ຢ່າເປັນຕົ້ນເຫດທີ່ເຮັດໃຫ້ພວກຢິວ ພວກຕ່າງຊາດ ຫລືຄຣິສຈັກຂອງພຣະເຈົ້າສະດຸດໃຈ (1 ກທ 10:31-32)

ໃນພຣະທັມໂກຣິນໂທສະບັບຕົ້ນບົດທີ 9 ທ່ານໂປໂລໄດ້ປະພຶດຕົວເປັນແບບຢ່າງແກ່ຊາວໂກຣິນໂທຜູ້ທີ່ມັກລື້ງເຄີຍໃຊ້ຊີວິດຕາມແບບຊາວໂລກ ທ່ານໂປໂລໃຊ້ຄວາມຮັກຂອງພຣະເຈົ້າເປັນຫລັກໃນການດຳເນີນຊີວິດຫລາຍກວ່າການໃນ້ຄວາມຮູ້ ທ່ານໂປໂລໄດ້ຫນຸນໃຈໃຫ້ຊາວໂກຣິນໂທເອົາແບບຢ່າງຂອງທ່ານໂດຍກ່າວວ່າ "ເຮົາເອງເຄີຍເຮັດທຸກຢ່າງໃຫ້ເປັນທີ່ພໍໃຈຄົນທັງປວງ ໂດຍບໍ່ເຫັນແກ່ປໂຍດສ່ວນຕົວ ແຕ່ເຫັນແກ່ປໂຍດຂອງຄົນທັງຫລາຍ ເພື່ອເຂົາຈະໄດ້ພົ້ນ ເຈົ້າທັງຫລາຍຈົ່ງປະຕິບັດຕາມແບບຢ່າງຂອງເຮົາ ເຫມືອນເຮົາປະຕິບັດຕາມແບບຢ່າງຂອງພຣະຄຣິສ" (1 ກທ 10:33-11:1)

| |
|---|
| **ຈົ່ງເອົາສິ່ງທີ່ທ່ານໄດ້ສຶກສາຈາກຂ້າງເທິງເຮັດບົດຝຶກຫັດຂໍ້ທີສອງ** |

## 5. ຊີວິດຄຣິສຕຽນກັບການນມັສການພຣະເຈົ້າ

ທ່ານໂປໂລຍ້ອງຍໍພີ່ນ້ອງຄຣິສຕຽນທີ່ເມືອງໂກຣິນໂທທີ່ຟັງຄວາມຂອງທ່ານ ແລະໄດ້ຮັກສາຄຳສອນທີ່ທ່ານໄດ້ມອບໃຫ້ ແຕ່ການປະຊຸມນມັສການຂອງຄຣິສຕຽນໃນເມືອງໂກຣິນໂທມີບັນຫາຢູ່ນ້ອຍນຶ່ງ ຄືພວກເຂົາຂາດຄວາມເປັນຣະບຽບ ແລະເປັນບັນຫາເຣື່ອງຜ້າປົກຫົວແມ່ຍິງ ໃນສມັຍນັ້ນຜູ້ຍິງທີ່ດີມີມາຣະຍາດເມື່ອປາກົດຕົວໃນທີ່ຊຸມຊົນຕ້ອງມີຜ້າປົກຄຸມຫົວສເມີ ຜ້າປົກຫົວຈະເຮັດໃຫ້ຜູ້ຊາຍຮູ້ຈັກວ່າຜູ້ຍິງຜູ້ນີ້ເປັນຄົນດີກໍຈະບໍ່ເວົ້າກ້ຽວພາບາລີ ແຕ່ໄດ້ຮັບຄວາມນັບຖືຈາກຊຸມຊົນ ບັນຫາຄືພວກກຣີກແລະຢິວມີປະເພນີທີ່ຕ່າງກັນໃນເຣື່ອງຂອງການອະທິຖານ ຜູ້ຍິງກຣີກມັກອະທິຖານໂດຍບໍ່ມີຜ້າປົກຫົວເຫມືອນຜູ້ຊາຍ ແຕ່ພວກໂຣມັນແລະພວກຢິວທັງຍິງແລະຊາຍຈະອທິຖານໂດຍມີຜ້າປົວຫົວສເມີ ຜ້າປົກຫົວໃນສມັຍກ່ອນຫມາຍເຖິງການຍອມຢູ່ໃຕ້ອຳນາດຂອງອີກຝ່າຍນຶ່ງ ດັ່ງນັ້ນເມື່ອຜູ້ຍິງບໍ່ມີຜ້າປົກຫົວກໍຈະເສັຽກຽດແກ່ສາມີ ເມື່ອເຂົາຖິ້ມຜ້າປົວຫົວກໍຫມາຍເຖິງເຂົາບໍ່ສົນໃຈອຳນາດຂອງສາມີ ກໍຄືກັບວ່ານາງເປັນໂສເພນີ ການລົງໂທດໂສເພນີສມັຍກ່ອນກໍຄືການແຖຫົວ ແມ່ນວ່າຜົມເປັນຄວາມງາມຂອງຍິງກໍຈິງຢູ່ ແຕ່ເມື່ອຈະຕ້ອງປາກົດຕົວໃນທີ່ຊຸມນຸມຊົນແລ້ວ ຜູ້ຍິງຕ້ອງສຳຣວມໂດຍມີຜ້າປົກຫົວທີ່ຈະສະແດງເຖິງການຍອມຮັບອຳນາດຈາກສາມີ ແລະເຮັດຕາມມາຣະຍາດທີ່ດີຂອງສັງຄົມ ຖ້າປ່ອຍຕົວບໍ່ສົນໃຈໃນມາຣະຍາດຂອງສັງຄົມແລ້ວກໍຈະບໍ່ໄດ້ຮັບກຽດແລະຖືກສັງຄົມຕີຄ່າຄວາມຫມາຍໄປໃນທາງທີ່ຜິດໄດ້

ທ່ານໂປໂລຍັງຕ້ອງການໃຫ້ພີ່ນ້ອງຄຣິສຕຽນໃນເມືອງໂກຣິນໂທໄດ້ເຂົ້າໃຈວ່າ ພຣະເຢຊູຄຣິສ 2ເປັນເອກ ແລະຜູ້ຊາຍເປັນອັນດັບຮອງລົງມາ ເພາະຜູ້ຊາຍເປັນສິ່ງສູງສຸດຂອງສິ່ງທີ່ພຣະເຈົ້າໄດ້ຊົງສ້າງດັ່ງນັ້ນຈຶ່ງບໍ່ໄດ້ຢູ່ໃຕ້ອຳນາດຂອງມະນຸດ ແຕ່ຢູ່ໃຕ້ອຳນາດຂອງພຣະເຢຊູຄຣິສໂດຍກົງ ຈຶ່ງບໍ່ຕ້ອງມີຜ້າປົກຫົວໃນການອະທິຖານແລະປະກາດພຣະທັມ ສ່ວນຜູ້ຍິງນັ້ນຢູ່ໃຕ້ການປົກຄອງຂອງຜູ້ຊາຍ ຈຶ່ງຕ້ອງມີຜ້າປົກຫົວໃນເວລາອະທິຖານແລະປະກາດພຣະທັມ ເພື່ອເຕືອນໃຈນາງຍາມທີ່ນາງອະທິຖານແລະປະກາດພຣະທັມ ເພາະວ່າພຣະເຈົ້າໄດ້ສ້າງຊາຍຂຶ້ນກ່ອນ ໃຫ້ຜູ້ຊາຍມີທັມຊາດເປັນຜູ້ນຳ ແລະພຣະອົງບໍ່ມີພຣະປະສົງໃຫ້ຜູ້ຍິງພຍາຍາມທຳຕົວໃຫ້ຄືຜູ້ຊາຍ ແລະຜູ້ຊາຍກໍບໍ່ຕ້ອງທຳຕົວຄືກັບຜູ້ຍິງໂດຍການໄວ້ຜົມຍາວແບບຜູ້ຍິງ

ພຣະອົງໄດ້ສ້າງໄວ້ຕ່າງກັນ "ເຖິງປານນັ້ນກໍດີ ໃນອົງພຣະຜູ້ເປັນເຈົ້າຜູ້ຊາຍກໍຕ້ອງເພິ່ງຜູ້ຍິງ ແລະຜູ້ຍິງກໍຕ້ອງເພິ່ງຜູ້ຊາຍ ດ້ວຍວ່າຜູ້ຍິງນັ້ນຊົງສ້າງມາຈາກຜູ້ຊາຍສັນໃດ ຕໍ່ມາຜູ້ຊາຍຈຶ່ງເກີດມາຈາກຜູ້ຍິງສັນນັ້ນ ແຕ່ສິ່ງສາຣະພັດກໍມີມາຈາກພຣະເຈົ້າ" (1 ກທ 11:11-12)

ສິ່ງທີ່ໜ້າສັງເກດໃນຕອນນີ້ຄືເຣື້ອງສິດທິຂອງຜູ້ຍິງ ເຮົາຈະເຫັນໄດ້ວ່າ ຜູ້ຍິງມີສິດທິໃນການປະກອບສາສນາກິຈ ໃນການນມັສການຂອງຄຣິສຈັກດ້ວຍ ເພາະໄດ້ກ່າວເຖິງການອະທິຖານແລະການປະກາດພຣະທັມຂອງຜູ້ຍິງ ແຕ່ຕ້ອງໃຫ້ມີມາຣະຍາດອັນຖືກຕ້ອງຕາມຮີດຄອງປະເພນີອັນງາມ ເມື່ອເຮົາອ່ານຕໍ່ໄປໃນ 14:34-36 ກໍຈະພົບຄຳສອນຂອງທ່ານໂປໂລໃນເຣື້ອງສິດຂອງຜູ້ຍິງອີກ ເຮົາຄວນຮູ້ຈັກແລະເຂົ້າໃຈສິ່ງທີ່ທ່ານສອນຄືການໃຫ້ກຽດແກ່ຜູ້ຊາຍ ຊຶ່ງຖືວ່າມີກຽດໃນສັງຄົມແລະຊີວິດຄວາມເປັນຢູ່ຂອງຊາວຢິວແລະຄົນສມັຍນັ້ນ ຄວາມຈິງນີ້ຍັງມີຄວາມໝາຍຕໍ່ເຮົາໃນປັດຈຸບັນຄືກັນ ຜູ້ຊາຍທີ່ຢູ່ໃນທີ່ປະຊຸມສົມຄວນໄດ້ຮັບກຽດໃນການນຳພາໃຫ້ຄຣິສຈັກໃຫຽ່ຂຶ້ນໃນພຣະຄຣິສ ແຕ່ທ່ານໂປໂລກໍໄດ້ສອນວ່າ "ຝ່າຍສາມີຈົ່ງຮັກພັຣຍາຂອງຕົນ.. ບຳຣຸງຖະນອມລ້ຽວໄວ້" (ສຶກສາເຕີ່ມ ອຟ 5:25-29) ທ່ານໂປໂລບໍ່ໄດ້ສອນໃຫ້ຜູ້ຊາຍກົດຜູ້ຍິງລົງໃຫ້ຕົກຕໍ່າລົງ ແຕ່ເຮົາຕ້ອງໃຫ້ກຽດແກ່ນາງ ເພາະນາງເປັນຮ່າງກາຍສ່ວນນຶ່ງຂອງຊາຍທີ່ຜູ້ຊາຍສົມຄວນຕ້ອງໃຫ້ກຽດ ໃນຕອນທີ່ເຮົາສຶກສາຢູ່ນີ້ກໍເຫັນໄດ້ແຈ້ງວ່າ ຜູ້ຍິງສາມາດມີສ່ວນໃນການອະທິຖານໄຫວ້ວອນແລະການປະກາດພຣະທັມດ້ວຍກິຣິຍາມາຣະຍາດທີ່ຖືກຕ້ອງ ແລະເປັນທີ່ຍອມຮັບຂອງຊຸມຊົນ ຜູ້ຍິງບໍ່ສົມຄວນເຮັດສິ່ງທີ່ໜ້າກຽດແລະລົບຫລູ່ຜູ້ຊາຍ ການທີ່ທ່ານໂປໂລເນັ້ນໜັກເຊັ່ນນີ້ກໍເພາະທ່ານຕ້ອງການໃຫ້ເອື້ອຍນ້ອງຄຣິສຕຽນຜູ້ຍິງ ປາກົດຕົວເປັນຜູ້ທີ່ຖວາຍກຽດຕິຍົດແກ່ພຣະເຈົ້າ ມີຄວາມແຕກຕ່າງຈາກຊີໂສເພນີຂອງສາສນາອື່ນໃນເມືອງໂກຣິນໂທ ສິ່ງເຫລົ່ານີ້ເປັນສິ່ງທີ່ໜ້າຄິດເບິ່ງສຳລັບຄຣິສຈັກຂອງເຮົາໃນປັດຈຸບັນນີ້ ແມ່ນວ່າເຮົາຈະບໍ່ມີປະເພນີໃຊ້ຜ້າປົກຫົວຄືກັບສມັຍກ່ອນກໍຕາມ ແຕ່ການແຕ່ງຕົວຂອງຜູ້ຍິງທີ່ມາປາກົດຕົວໃນກອງປະຊຸມນມັສການພຣະເຈົ້າ ກໍຄວນແຕ່ງຕົວໃຫ້ເໝາະສົມສວຍງາມແລະຖວາຍກຽດແກ່ພຣະເຈົ້າ ບໍ່ຄວນໃຫ້ການແຕ່ງຕົວເປັນເຫດໃຫ້ເກີດຄວາມຍົ່ວຍວນ ແລະນຳໃຫ້ເກີດຜົນເສັຍຫາຍແກ່ຄຣິສຈັກ ເມື່ອເປັນດັ່ງນີ້ແລ້ວຜູ້ຍິງກໍຈະໄດ້ຮັບກຽດດ້ວຍ ແລະມີສ່ວນຮ່ວມຄຽງຂ້າງກັບຊາຍໃນການບົວລະບັດການປະກາດພຣະທັມ ແລະການນມັສກາພຣະເຈົ້າ

ອີກບັນຫານຶ່ງໃນການນມັສການ ຄືການປະກອບພິທີຣະລຶກເຖິງພຣະເຢຊູຄຣິສຂອງຄຣິສຈັກໃນເມືອງໂກຣິນໂທ (1 ກທ 11:17-34) ແທນທີ່ພິທີນີ້ຈະເປັນການຊູກຍູ້ໃຈຄຣິສຕຽນໃຫ້ເຂັ້ມແຂງຂຶ້ນແຕ່ກັບເຮັດໃຫ້ຄຣິສຕຽນອ່ອນກຳລັງລົງແລະເກີດການແຕກແຍກກັນ ທ່ານໂປໂລໄດ້ເຫັນພ້ອງກັບຝ່າຍທີ່ຖືກຕ້ອງທ່ານກ່າວວ່າ "ເພື່ອພວກຝ່າຍຖືກໃນພວກເຈົ້ານັ້ນຈະໄດ້ປາກົດແຈ້ງຂຶ້ນ" (1 ກທ 11:19) ຄົນສມັຍນັ້ນມີຮີດຄອງທີ່ມີການຮັບປະທານອາຫານສາມັກຄີທັມກັນກ່ອນທີ່ຈະເຮັດພິທີຣະລຶກ ການລ້ຽງສລອງນີ້ເອີ້ນວ່າ "ການລ້ຽງແຫ່ງຄວາມຮັກສາມັກຄີ" (Love Feast) ແຕ່ຄຣິສຕຽນຊາວໂກຣິນໂທບໍ່ມີຄວາມຮັກສົມກັບຈຸດປະສົງຂອງການລ້ຽງ ມີແຕ່ການແບ່ງແຍກ ຖືຊັ້ນວັນນະ ຄົນຮັ່ງນຳອາຫານດີມາແລ້ວ ກໍຮັບປະທານອາຫານນັ້ນໃນພວກຂອງຕົນຈົນອີ່ມມ້ວນຊຶ່ນໄປ ສ່ວນສມາຊິກຄົນຈົນທີ່ບໍ່ນຳມີສິ່ງໃດມາ ຫລືຜູ້ທີ່ເປັນທາດກໍຖືກປະຖິ້ມໃຫ້ຫິວຈົນແສບທ້ອງ ຫລັງຈາກນັ້ນຈຶ່ງປະກອບພິທີຣະລຶກ ຊຶ່ງບາງຄົນຍັງຫິວ ແຕ່ບາງຄົນຍັງກໍເມົາຢູ່ ການເຮັດແນວນີ້ບໍ່ເປັນການເຄົາຣົບແລະມີຄວາມເປັນພີ່ນ້ອງກັນເລີຍ ທ່ານໂປໂລໄດ້ສອນເຂົາວ່າ ເຂົາຄວນຣະລຶກເຖິງຄວາມໝາຍທີ່ພຣະເຢຊູຊົງກ່າວໄວ້ກັບສາວົກຂອງພຣະອົງໃນເວລາທີ່ຮັບປະທານຮ່ວມກັນໃນຄາບສຸດທ້າຍ ການຮັບປະທານເຂົ້າຈີ່ແລະນ້ຳລະແຊງນັ້ນ ເປັນການຮ່ວມຝ່າຍຈິດວິນຍານໃນພຣະກາຍແລະພຣະໂລຫິດຂອງພຣະເຢຊູຄຣິສເຈົ້າ ເປັນການຣະລຶກເຖິງການສິ້ນພຣະຊົນຂອງພຣະເຢຊູຄຣິສ ເພາະສະນັ້ນພິທີນີ້ຈຶ່ງເປັນພິທີສັກສິດ ບໍ່ສົມຄວນທີ່ຈະຮ່ວມໂດຍມີກິຣິຍາແລະທ່າທີທີ່ບໍ່ຖືກ

ຕ້ອງ ອັນບໍ່ເປັນການຖວາຍກຽດແກ່ພຣະເຈົ້າ ຖ້າຜູ້ໃດເຂົ້າຮ່ວມຢ່າງບໍ່ສົມຄວນ ຫລືບໍ່ໄດ້ພິຈາຣະນາເບິ່ງຈິດໃຈຂອງຕົນເອງ ຜູ້ນັ້ນຕ້ອງຖືກປັບໂທດ ພຣະເຈົ້າຈະຊົງຕີສອນ ຄຣິສຕຽນຕ້ອງກວດເບິ່ງໃຈຂອງຕົນສເມີ ເພື່ອຈະໄດ້ຮູ້ວ່າເຂົາຂາດຕົກບົກພ່ອງແນວໃດແດ່ ຖ້າເຂົາລະເລີຍຕໍ່ຄວາມບາບ ພຣະເຈົ້າກໍຈໍາເປັນຕ້ອງຕີສອນເຂົາ ທ່ານໂປໂລແນະນໍາວ່າ ຖ້າຜູ້ໃດຫິວຫລາຍ ກໍສົມຄວນຮັບປະທານມາກ່ອນເລັກນ້ອຍ ເມື່ອເຖິງການລ້ຽງຕາມພິທີຂອງອົງພຣະຜູ້ເປັນເຈົ້າ ຈະໄດ້ມີໃຈຮ່ວມກັບຜູ້ອື່ນດ້ວຍຄວາມເຄົາຣົບໃນການຣະລຶກເຖິງພຣະຄຸນຂອງພຣະເຢຊູຄຣິສ ທີ່ໄດ້ເສັຽສລະພຣະຊົນເພື່ອໄຖ່ເຮົາໃຫ້ຣອດພົ້ນ

ການນມັສການຂອງຄຣິສຕຽນຊາວໂກຣິນໂທໄດ້ສ້າງຄວາມສັບສົນຫວຸ້ນວາຍ ຄືມີການອວດຂອງພຣະຣາຊທານ (1 ກທ ບົດທີ 12-14) ຊາວໂກຣິນໂທມີປະສົບການກັບຄວາມເຊື່ອຖືອື່ນມາກ່ອນໃນການນມັສການຂອງເຂົາມີການເວົ້າຫລາຍແນວ ແລະເຂົາມີຄວາມເຂົ້າໃຈວ່າຖານະຂອງເຂົາໄດ້ປ່ຽນໄປ ມີຄວາມແຕກຕ່າງກັນຄົນອື່ນ ທ່ານໂປໂລໄດ້ເຕືອນບໍ່ໃຫ້ເອົາປະສົບການຂອງການເຊື່ອຖືສາສນາອື່ນມາໃຊ້ "ເພາະວ່າພຣະເຈົ້າບໍ່ແມ່ນເປັນພຣະເຈົ້າແຫ່ງຄວາມຫວຸ້ນວາຍ ແຕ່ຊົງເປັນພຣະເຈົ້າແຫ່ງສັນຕິສຸກ" (1 ກທ 14:33 ສະບັບ NIV) ທ່ານໂປໂລໄດ້ເຕືອນໃຫ້ພວກເຂົາຮູ້ຈັກສັງເກດວິນຍານດ້ວຍທ່ານສອນວ່າ ເຫດສະນັ້ນເຮົາຈຶ່ງບອກເຈົ້າທັງຫລາຍໃຫ້ຮູ້ວ່າ ບໍ່ມີໃຜທີ່ເວົ້າດ້ວຍພຣະວິນຍານຂອງພຣະເຈົ້າຈະກ່າວວ່າ "ຂໍໃຫ້ພຣະເຢຊູຖືກດ່າ" ແລະບໍ່ມີໃຜອາດເວົ້າໄດ້ວ່າ "ພຣະເຢຊູຊົງເປັນອົງພຣະຜູ້ເປັນເຈົ້າ" ເວັ້ນໄວ້ແຕ່ຜູ້ເວົ້າໂດຍພຣະວິນຍານບໍຣິສຸດ (1 ກທ 12:3) ທີ່ທ່ານໂປໂລກ່າວດັ່ງນີ້ ກໍມີພື້ນຖານຈາກຄໍາສອນຂອງພຣະເຢຊູທີ່ໄດ້ກ່າວວ່າ "ພຣະວິນຍານແຫ່ງຄວາມຈິງຊຶ່ງອອກຈາກພຣະບິດາໄດ້ສະເດັດມາແລ້ວພຣະອົງນັ້ນແຫລະ ຈະຊົງເປັນພຍານໃຫ້ແກ່ເຮົາ" (ຢຣ 15:26) "ພຣະອົງຈະຊົງໃຫ້ເຮົາໄດ້ຮັບກຽດ" (ຢຣ 16:14) ດ້ວຍເຫດນີ້ແລ້ວ ການກະທໍາໃດ ໆ ທີ່ອ້າງວ່າເປັນມາຈາກພຣະວິນຍານຈະຕ້ອງເຫັນພ້ອມກັບຄວາມຈິງນີ້ ເພາະພຣະວິນຍານຊົງນໍາພາຜູ້ໃດຜູ້ນັ້ນຈະສັຣເສີນ ແລະຖວາຍກຽດແດ່ພຣະເຢຊູຄຣິສ ໂດຍສະເພາະຢ່າງຍິ່ງຜູ້ມີຂອງພຣະຣາຊທານຕ່າງ ໆ ພຣະວິນຍານຍ່ອມນໍາພາຜູ້ທີ່ມີຂອງພຣະຣາຊທານ ໃຫ້ມາຮັບໃຊ້ຮ່ວມກັນເພື່ອຄວາມຈໍາເຣີນເຕີບໂຕໃນພຣະເຢຊູຄຣິສ ແຕ່ວ່າມີຫລາຍຄົນໃນຄຣິສຈັກທີ່ເມືອງໂກຣິນໃຊ້ຂອງພຣະຣາຊທານເພື່ອອວດກັນ ແລະສະແດງຕົວວ່າເປັນຄຣິສຕຽນທີ່ມີຖານະສູງກວ່າກັບຄົນອື່ນ ທ່ານໂປໂລສອນວ່າ "ການສະແດງຂອງພຣະວິນຍານນັ້ນມີແກ່ທຸກຄົນເພື່ອປໂຍດຮ່ວມກັນ... ແລະປະທານແກ່ທຸກຄົນຕາມຊອບພຣະທັຍຂອງພຣະອົງ" (1 ກທ 12:7, 11) ທ່ານສົມທຽບເຖິງໜ້າທີ່ການງານຂອງອະວັຍວະໃນຮ່າງກາຍຂອງມະນຸດ ກັບຜູ້ທີ່ໄດ້ຮັບຂອງປະທານຈາກພຣະເຈົ້າວ່າຕ້ອງການງານຮ່ວມກັນ ສິ່ງສໍາຄັນທີ່ໄດ້ຈາກຕົວຢ່າງຄື "ແຕ່ພຣະເຈົ້າໄດ້ຊົງບັນດານໃຫ້ອະວັຍວະທຸກສ່ວນເຂົ້າເປັນອັນດຽວກັນ... ເພື່ອບໍ່ໃຫ້ມີການຍາດແຍ່ງກັນໃນຮ່າງກາຍ ແຕ່ໃຫ້ອະວັຍະທຸກສ່ວນຄໍານຶງເຖິງກັນແລະກັນ ຖ້າອະວັຍວະອັນນຶ່ງເຈັບ ອະວັຍວະທັງໝົດກໍເຈັບດ້ວຍກັນ ຖ້າອະວັຍະວະອັນນຶ່ງໄດ້ຮັບກຽດ ອະວັຍະວທັງໝົດກໍຊົມຊື່ນຍິນດີດ້ວຍກັນ" (1 ກທ 12:24-26) ແທນທີ່ຈະອວດກັນຄວນຈະຊຸກຍູ້ກັນແລະກັນຈະດີກວ່າ ແລະສົມຄວນສແວງຫາຂອງພຣະຣາຊທານອັນສໍາຄັນກວ່ານັ້ນອີກ ຄືຄວາມເຊື່ອ ຄວາມຫວັງໃຈ ແລະຄວາມຮັກ ເພາະສິ່ງຂອງພຣະຣາຊທານອື່ນ ໆ ມີເວລາທີ່ຍົກເລີກ ດັບສູນແລະບໍ່ສົມບູນ ແຕ່ທັງສາມສິ່ງນີ້ເຮັດໃຫ້ຊີວິດຄຣິສຕຽນຕັ້ງຢູ່ຕລອດໄປ ບາງເທື່ອການປະຊຸມນມັສການມີການເວົ້າກັນຫລາຍ ບາງຄົນກໍເວົ້າອອກມາຕາມອາຣົມຄວາມຮູ້ສຶກໂດຍບໍ່ໄດ້ນຶກຄິດ ບາງຄົນກໍເວົ້າອອກມາບໍ່ເປັນພາສາຈຶ່ງເປັນເຫດໃຫ້ເກີດຄວາມຫວຸ້ນວາຍ ທ່ານໂປໂລໃຫ້ຄິດເຖິງປໂຍດຂອງສ່ວນຣວມແລະການຮັບໃຊ້ທີ່ຊ່ວຍໃຫ້ພີ່ນ້ອງໃນຄຣິສຈັກຈະເຣີນເຕີບໂຕໃນພຣະຄຣິສຫລາຍກວ່າ ທ່ານຍອມຮັບໃນເຣື່ອງຂອງພຣະຣາຊທານທີ່ເວົ້າເປັນພາສາແປກ ໆ ແຕ່ທ່ານກໍຍາກໃຫ້ໃຊ້ພາສາທີ່ເຂົ້າໃຈກັນໄດ້ສໍາລັບ

ທຸກຄົນດີກວ່າ ເພື່ອພີ່ນ້ອງຄົນອື່ນຈະໄດ້ມີສ່ວນຮ່ວມໃນການສັຣເສີນພຣະເຈົ້າດ້ວຍ ທ່ານໄດ້ສົມທຽບການເວົ້າພາສາແປກ ໆ ກັບການປະກາດພຣະທັມ ທ່ານເຫັນວ່າການປະກາດພຣະທັມກໍເປັນສິ່ງທີ່ສຳຄັນກວ່າເພາະນຳພາໃຫ້ຄົນເຂົ້າໃຈເຖິງພຣະຄຳຂອງພຣະເຈົ້າ ແລະບັງເກີດມີຊີວິດຄຣິສຕຽນທີ່ຈະເຣີນເຕີບໂຕ ທ່ານໂປໂລສອນວ່າ ເມື່ອມີການນມັສການຂອງຄຣິສຈັກ ຖ້າສມາຊິກມີຂອງພຣະຣາຊທານແນວໃດທີ່ຈະນຳມາຖວາຍເພື່ອຮັບໃຊ້ພຣະເຈົ້າ ທ່ານກໍໃຫ້ຄິດເບິ່ງວ່າ "ເຈົ້າຈົ່ງເຮັດທຸກຢ່າງເພື່ອໃຫ້ມີການຈະເຣີນຂຶ້ນ" ດັ່ງນັ້ນຜູ້ໃດຈະເວົ້າພາສາແປກ ໆ ກໍໃຫ້ມີການແປ ຖ້າບໍ່ມີຜູ້ແປກໍໃຫ້ຜູ້ນັ້ນມິດຢູ່ໃນທີ່ປະຊຸມ ໃຫ້ເວົ້າກັບຕົນເອງແລະທູນຕໍ່ພຣະເຈົ້າ ຖ້າມີຜູ້ໃດປະກາດພຣະທັມຫລາຍກໍເວົ້າເທື່ອລະຄົນ ເພື່ອຄົນທັງປວງຈະໄດ້ຄວາມຮູ້ແລະຈະໄດ້ຮັບຄວາມຫນຸນໃຈ ສິ່ງຕ່າງເຫລົ່ານີ້ຫມາຍຄວາມວ່າການນມັສການຈຳເປັນຕ້ອງໃຫ້ມີຣະບຽບ ຈົ່ງຢູ່ເຮົາຕ້ອງເປີດຈິດເປີດໃຈໃຫ້ພຣະວິນຍານບໍຣິສຸດນຳພາ ແຕ່ເຮົາກໍຈຳເປັນຕ້ອງຮູ້ວ່າ "ພຣະເຈົ້າບໍ່ແມ່ນພຣະເຈົ້າແຫ່ງຄວາມຫວຸ້ນວາຍ ແຕ່ຊົງເປັນພຣະເຈົ້າແຫ່ງສັນຕິສຸກ"

## 6. ຊີວິດຄຣິສຕຽນກັບການເປັນຄືນມາຈາກຕາຍ

ຄຣິສຕຽນບາງຄົນໃນເມືອງໂກຣິນໂທປະຕິເສດໄດ້ຄຳສອນຂອງທ່ານໂປໂລເຣື່ອງການເປັນຄືນມາຂອງຄົນທີ່ຕາຍແລ້ວ ພວກເຂົາມີຄວາມຄິດເຫັນວ່າ ວິນຍານຂອງຄົນເຮົາຣອດພົ້ນໄດ້ ແຕ່ສ່ວນຮ່າງກາຍນັ້ນ ຍັງເປັນບັນຫາ ແລະພວກເຂົາເຫັນວ່າຮ່າງກາຍບໍ່ຈະມີສ່ວນຫຽັງໃນອານາຄົດ (1 ກທ ບົດ 15) ກ່ອນອື່ນ ທ່ານໂປໂລໃຫ້ເຂົາທົບທວນເຣື່ອງການເປັນຄືນມາຂອງພຣະເຢຊູຄຣິສ (1 ກທ 15:3-9) ນອກຈາກການບັນທຶກຂອງພຣະທັມຂ່າວປະເສີດເຣື່ອງການເປັນຄືນຈາກຕາຍຂອງພຣະເຢຊູແລ້ວ ທ່ານໂປໂລໄດ້ບັນທຶກສິ່ງທີ່ເປັນປະຈັກພຍານທີ່ເຫັນໄດ້ຊັດແຈ້ງວ່າ ພຣະເຢຊູຄຣິສໄດ້ເປັນຂຶ້ນມາແທ້ຈິງ ທ່ານໂປໂລເຊື່ອວ່າການເປັນຄືນຈາກຕາຍຂອງພຣະເຢຊູຄຣິສເປັນເຣື່ອງສຳຄັນທີ່ສຸດ ບໍ່ແມ່ນເປັນເຣື່ອງທີ່ໃຜຈະເຊື່ອກໍໄດ້ບໍ່ເຊື່ອກໍໄດ້ ຄວາມເຊື່ອຂອງຄຣິສຕຽນຂຶ້ນຢູ່ກັບຄວາມຈິງໃນເຣື່ອງນີ້ ເຣື່ອງທັງຫມົດເປັນຄວາມຈິງທີ່ໄດ້ພິສູດແລ້ວຈາກຄົນທີ່ໄດ້ເຫັນພຣະເຢຊູເປັນຄືນຈາກຕາຍ ບາງຄົນຍັງມີຊີວິດຢູ່ (ປະມານ 25 ປີ ຫລັງຈາກເຫດການທີ່ເກີດຂຶ້ນ) ການເປັນຄືນຈາກຕາຍມີຄວາມຫມາຍແກ່ຄຣິສຕຽນວ່າ ຄຣິສຕຽນກໍຈະເປັນຄືນຈາກຕາຍຄືກັນ ແຕ່ຮ່າງກາຍທີ່ເປັນຂຶ້ນມານີ້ຈະດີກວ່າຮ່າງກາຍທີ່ຖືກຝັງລົງໄປ ຮ່າງກາຍເກົ່າເປັນຝຸ່ນດິນ ແຕ່ຮ່າງກາຍໃຫມ່ເປັນກາຍຝ່າຍວິນຍານແລະມີສະພາບທິພຄືຕາຍບໍ່ເປັນ ທ່ານໂປໂລພຍາຍາມສອນໃຫ້ເຂົ້າໃຈວ່າ ທັງຮ່າງກາຍແລະຈິດວິນຍານນັ້ນຈະໄດ້ຮັບຄວາມຣອດພົ້ນ ຄຣິສຕຽນແຕ່ລະຄົນຍັງມີລັກສນະຂອງແຕ່ລະບຸກຄົນຢູ່ ແຕ່ວ່າລັກສນະຂອງຂອງຮ່າງກາຍມີການປ່ຽນສພາບໃຫ້ເຂົ້າກັບສະພາບຄວາມເປັນຢູ່ອັນຕລອດໄປ ພຣະເຈົ້າຈະເປັນຜູ້ປະທານຮູບຮ່າງສງ່າຣາສີແກ່ເຮົາຕາມທີ່ພຣະອົງເຫັນຊອບ ແຕ່ລະຄົນມີສັກສີທີ່ຕ່າງກັນຄືກັບດວງດາວ ທ່ານໂປໂລໄດ້ກ່າວຊັກຊວນວ່າ "ຈົ່ງຂອບພຣະຄຸນພຣະເຈົ້າຜູ້ຊົງປະທານຊັຍຊນະແກ່ເຮົາທັງຫລາຍ ດ້ວຍພຣະເຢຊູຄຣິສເຈົ້າຂອງເຮົາ ດັ່ງນັ້ນແຫລະ ພີ່ນ້ອງທີ່ຮັກຂອງເຮົາເອີຍເຈົ້າທັງຫລາຍຈົ່ງຕັ້ງຫມັ້ນຢູ່ ຢ່າຫວັ່ນໄຫວ ຈົ່ງປະຕິບັດງານຂອງອົງພຣະຜູ້ເປັນເຈົ້າໃຫ້ບໍຣິບູນທຸກເວລາ ດ້ວຍຮູ້ວ່າໃນອົງພຣະຜູ້ເປັນເຈົ້າ ການຂອງພວກເຈົ້ານັ້ນຈະບໍ່ໄຮ້ປໂຍດ" (1 ກທ 15:57-58)

ຈຸດຣວມຂອງຄວາມເຊື່ອຄຣິສຕຽນໃນເຣື່ອງການເປັນຂຶ້ນມາຈາກຕາຍ ມີຫລັກຖານຢູ່ທີ່ການເປັນຂຶ້ນຈາກຕາຍຂອງພຣະເຢຊູຄຣິສທີ່ປາກົດຕົວໃຫ້ກັບພວກສາວົກກ່ອນທີ່ຈະສະເດັດຂຶ້ນສູ່ສວັນ ຊຶ່ງເປັນສິ່ງທີ່ເຮົາມີຄວາມເຊື່ອຫມັ້ນໄດ້ຢ່າງຊັດແຈ້ງໂດຍບໍ່ຕ້ອງສົງສັຍ ພຣະເຢຊູຄຣິສໄດ້ເປັນຂຶ້ນຈາກຕາຍແລະປາ

ກິດຕິວຕາມການບັນທຶກຂອງພຣະຄັມພີພາກພັນທະສັນຍາໃຫມ່ມີດັ່ງນີ້

(1) ພຣະເຢຊູຄຣິສຊົງປາກົດຕົວໃນບໍຣິເວນກຸງເຢຣູຊາເລັມ

- ແກ່ມາຣີອາມັກດາລາ (ຢຮ 20:11-18)
- ແກ່ຍິງຄົນອື່ນ ໆ (ມທ 28:8-10)
- ແກ່ເປໂຕ (ລກ 24:34)
- ແກ່ສາວົກສິບຄົນ (ລກ 24:36-43, ຢຮ 20:19-25)
- ແກ່ສາວົກສິບເອັດຄົນຮວມທັງໂທມາດ້ວຍ (ຢຮ 20:26-29)
- ກ່ອນການສະເດັດຂຶ້ນສູ່ສວັນ (ລກ 24:50-53, ກຈ 1:4-12)

(2) ພຣະເຢຊູຄຣິສຊົງປາກົດຕົວໃນການເດີນທາງໄປເອມາອູດ (ລກ 24:13-35)

(3) ພຣະເຢຊູຄຣິສຊົງປາກົດຕົວໃນແຖບຊາຍຝັ່ງທະເລຄາລີເລ (ມທ 28:16-20, ຢຮ 21:1-24 ເມືອງຕິເບເຣັຽເປັນຢູ່ທາງດ້ານຕາວັນຕົກຂອງທະເລຄາລີເລ)

(4) ພຣະເຢຊູຄຣິສຊົງປາກົດຕົວແກ່ພວກພີ່ນ້ອງຄຣິສຕຽນຫ້າຮ້ອຍຄົນ (1ກທ 15:6)

(5) ພຣະເຢຊູຄຣິສຊົງປາກົດຕົວແກ່ຢາໂກໂປ ແລະອັຄສາວົກທັງຫມົດ ( 1 ກທ 15:7)

(6) ພຣະເຢຊູຄຣິສຊົງປາກົດຕົວແກ່ທ່ານໂປໂລຣະຫວ່າງການເດີນທາງໄປເມືອງດາມາເຊ (ກຈ 9:1-6, 18:9, 10, 22:1-8, 23:11, 26:12-19, 1 ກທ 15:8)

ຈາກຂໍ້ພຣະຄັມພີເຫລົ່ານີ້ທີ່ທ່ານໄດ້ສຶກສາມາ ເປັນຫລັກຖານຍືນຫຍັດໄດ້ວ່າພຣະເຢຊູຄຣິສເປັນຂຶ້ນຈາກຄວາມຕາຍຢ່າງແທ້ຈິງ ບໍ່ແມ່ນການສ້າງຂ່າວຊາລືຂຶ້ນ ພຣະອົງມີພຣະກາຍທີ່ປາກົດໃຫ້ສາວົກຂອງພຣະອົງໄດ້ເຫັນ ແລະຢູ່ຮ່ວມກັບພວກເຂົາ ກິນຢູ່ ສົນທະນາກັບພວກເຂົາ ນີ້ເປັນຫລັກຖານແກ່ເຮົາໃນເຣື້ອງການເປັນຄືນຈາກຕາຍຂອງເຮົາໃນອານາຄົດ

## 7. ການຊ່ວຍເຫລືອພີ່ນ້ອງຄຣິສຕຽນ ແລະຄຳລົງທ້າຍ

ທ່ານໂປໂລເປັນຫ່ວງພີ່ນ້ອງຄຣິສຕຽນໃນກຸງເຢຣູຊາເລັມ ແລະຫາທາງຊ່ວຍເຂົາສເມີ ຕັ້ງແຕ່ເກີດການກັນດານອາຫານ (ສຶກສາ ກຈ 11:27-30, ຄຕ 2:10) ໃນການເດີນທາງປ່າວປະກາດຂ່າວປະເສີດທ່ານໄດ້ຂໍໃຫ້ພີ່ນ້ອງຄຣິສຕຽນໃນເມືອງອື່ນ ໆ ມີສ່ວນສລະເງິນເພື່ອຊ່ວຍເຫລືອ ຕໍ່ມາທ່ານໄດ້ນຳເງິນໄປໃຫ້ກັບພີ່ນ້ອງໃນກຸງເຢຣູຊາເລັມ (ກຈ 24:17) ທ່ານມີຄວາມປະສົງຢ່າງນຶ່ງຄື ຕ້ອງການໃຫ້ພີ່ນ້ອງຄຣິສຕຽນຊາວກຸງເຢຣູຊາເລັມຮູ້ວ່າ ຄຣິສຕຽນຊາວຕ່າງຊາດຮັກແພງພີ່ນ້ອງຄຣິສຕຽນຊາວຢິວ ຕ້ອງການເປັນນ້ຳນຶ່ງໃຈດຽວກັນກັບຊາວຢິວ ຄຣິສຕຽນຊາວໂກຣິນໂທປະຊຸມນມັສການທຸກວັນອາທິດໃນວັນນັ້ນທັງຄົນຈົນແລະຄົນຮັ່ງນຳເງິນມາຖວາຍ ແລ້ວຊາວໂກຣິນໂທຕ້ອງເລືອກຜູ້ແທນເພື່ອນຳເງິນຖວາຍໄປຍັງກຸງເຢຣູຊາເລັມ ເມື່ອທ່ານໂປໂລມາເມືອງໂກຣິນໂທກໍຈະຂຽນຈົດຫມາຍແນະນຳຄົນເຫລົ່ານັ້ນ ຝາກໄປໃຫ້ຄຣິສຈັກກຸງເຢຣູຊາເລັມ ແລະບາງທີທ່ານອາດຈະໄປດ້ວຍ (1 ກທ 16:1-4)

ຫລັງຈາກນັ້ນທ່ານໄດ້ກ່າວຄຳສແດງຄວາມເຄົາຣົບແລ້ວ (1 ກທ 16:5-20) ທ່ານກໍໄດ້ຈົບຈົດຫມາຍຂອງທ່ານລົງດ້ວຍການຂຽນຄຳເຕືອນສຕິດ້ວຍລາຍມືຂອງທ່ານເອງ (1 ກທ 16:21-24)

## 8. ຂ່າວປະເສີດສຳລັບຊາວໂກຣິນໂທແລະເຮົາໃນປັດຈຸບັນ

ຫລັກຄວາມເຊື່ອຂອງຄຣິສຕຽນທີ່ຍິ່ງໃຫຍ່ແລະເດັ່ນຊັດໃນຈົດຫມາຍສະບັບນີ້ ຄື

(1) ຂ່າວປະເສີດຂອງພຣະເຢຊູຄຣິສມີຣິດເດດທີ່ປ່ຽນແປງຄົນບາບ ແມ່ນວ່າເມືອງໂກຣິນໂທ ເປັນເມືອງທີ່ເຕັມໄປດ້ວຍຄວາມອະທັມ ແຕ່ເປັນທີ່ປາກົດແລ້ວວ່າພຣະຄຣິສຊົງຊ່ວຍເຂົາໃຫ້ຣອດໄດ້ ເຊັ່ນດຽວກັນ ບາງເທື່ອເຮົາເບິ່ງຄວາມບາບໃນສັງຄົມຂອງເຮົາໃນປັດຈຸບັນແລ້ວກໍຫມົດຫວັງແລະທໍ້ໃຈ ກໍຢາກຈະຂໍຫນຸນໃຈທ່ານໃຫ້ມີຄວາມເຊື່ອໃນຣິດເດດຂອງຂ່າວປະເສີດ ທີ່ໄດ້ປ່ຽນແປງຊີວິດຂອງຊາວໂກຣິນໂທມາແລ້ວ ແລະຈະປ່ຽນແປງສັງຄົມຂອງເຮົາຄືກັນ ຖ້າເຮົາມີຄວາມເຊື່ອຫມັ້ນໃນຂ່າວປະເສີດນັ້ນ

(2) ຄຣິສຕຽນຄວນດໍາເນີນຊີວິດທີ່ຕັດຂາດ ອອກຈາກການດໍາເນີນຊີວິດທີ່ຊົ່ວຮ້າຍທີ່ມີຢູ່ໃນສັງຄົມ ຄຣິສຕຽນຖວາຍຕົວອຸທິດທັງຮ່າງກາຍແລະຈິດໃຈແດ່ພຣະເຈົ້າ ຣວມທັງຄວາມຄິດແລະເຈຕນາດ້ວຍ ເປັນກາຍຖວາຍທັງຕົວແດ່ພຣະເຈົ້າ ບໍ່ແມ່ນເປັນການຖວາຍສ່ວນນຶ່ງສ່ວນໃດເທົ່ານັ້ນ

(3) ພຣະເຈົ້າຊົງໃຊ້ທຸກຄົນໃນຄຣິສຈັກຂອງພຣະອົງໄດ້ ບໍ່ວ່າເຮົາຈະມີຂອງພຣະຣາຊທານແນວໃດ ເພາະພຣະຄຣິສເປັນພຣະຜູ້ຊ່ວຍມະນຸດ ແລະພຣະອົງພຣະຣາຊທານຕາມພຣະປະສົງຂອງພຣະອົງ ມະນຸດຈຶ່ງບໍ່ມີເຫດທີ່ຈະອວດຕົວ ສິ່ງທີ່ສໍາຄັນທີ່ມະນຸດຕ້ອງເຮັດຄື ດໍາເນີນຊີວິດທີ່ສະແດງຄວາມກະຕັນຍູກະຕະເວທີຕອບແທນຄຸນພຣະອົງ ດ້ວຍຄວາມຈົງຮັກພັກດີ ບໍ່ມີມະນຸດຜູ້ໃດມີອໍານາດສິດຂາດເຫນືອຄຣິສຈັກມີພຣະຄຣິສແຕ່ພຣະອົງດຽວຜູ້ເປັນສີສະຂອງຄຣິສຈັກ ຄຣິສຕຽນຄວນດໍາເນີນຊີວິດຂອງຕົນໃຫ້ຄົນອື່ນເຫັນປະຈັກເຖິງພຣະຄຸນແລະຣິດເດດຄວາມຮັກຂອງພຣະເຈົ້າ

(4) ຄຣິສຈັກນັ້ນເປັນຄຣິສຈັກດຽວ ການຜິດຖຽງກັນແລະການແຕກແຍກກັນໃນຄຣິສຈັກເປັນສິ່ງຫນ້າອາຍແກ່ຊາວໂລກ ພຣະຄຣິສຜູ້ຊົງເປັນພຣະເຈົ້າອົງດຽວຂອງຄຣິສຈັກ ພຣະອົງຊົງຜູກພັນຄຣິສຕຽນຫມົດທັງສິ້ນເຂົ້າດ້ວຍກັນໃຫ້ມີມິດພາບອັນດຽວກັນ ດັ່ງນັ້ນສິ່ງຈໍາເປັນໃນການນມັສການທີ່ແທ້ຈິງນັ້ນ ບໍ່ແມ່ນແຕ່ພຽງການສະແດງເຄົາຣົບສັກກາຣະຕໍ່ພຣະເຈົ້າ ແລະບໍ່ແມ່ນການສະແດງຄວາມກະຕັນຍູກະຕະເວທີຕໍ່ພຣະຄຣິສໃນສິ່ງທີ່ພຣະອົງໄດ້ຊົງເຮັດເພື່ອເຮົາເທົ່ານັ້ນ ແຕ່ເຮົາຕ້ອງມີຄວາມຫວັງດີຕໍ່ພີ່ນ້ອງຄຣິສຕຽນ ແລະພ້ອມໃຈທີ່ຈະໃຊ້ຂອງພຣະຣາຊທານທີ່ຕົນໄດ້ຮັບ ໃຫ້ເກີດຄຸນໂຍດແກ່ພີ່ນ້ອງຄຣິສຕຽນດ້ວຍກັນ ຄຣິສຕຽນຄວນໃຊ້ຄວາມຮັກເປັນຕົວນໍາພາໃນເຣື່ອງການໃຊ້ຂອງພຣະຣາຊທານ ເພື່ອໃຫ້ເກີດຄຸນປໂຍດໃນການນມັສການແລະໃນຊີວິດ

(5) ຄວາມຫວັງໃຈຂອງຄຣິສຕຽນໃນອານາຄົດເປັນສິ່ງທີ່ເຮັດໃຫ້ເກີດຄວາມຊົມຊື່ນຍິນດີ ແລະເກີດກໍາລັງໃຈແກ່ຄຣິສຕຽນສເມີ ຜູ້ທີ່ມີຄວາມເຊື່ອວາງໃຈໃນພຣະເຢຊູຄຣິສວ່າເປັນອົງພຣະຜູ້ເປັນເຈົ້າ ແລະປະຕິບັດຢ່າງສັດຊື່ຕໍ່ພຣະອົງ ຈະມີສ່ວນໃນຊັຍຊນະໃນມື້ສຸດທ້າຍດ້ວຍກັນກັບພຣະຄຣິສ ແຕ່ຮາກຖານແຫ່ງຄວາມຫວັງໃຈແລະຄວາມວາງໃຈຂອງເຮົາບໍ່ແມ່ນຢູ່ໃນມະນຸດ ແຕ່ຢູ່ໃນພຣະເຈົ້າ ທີ່ຈິງແລ້ວເມື່ອເຮົາເຫັນຄວາມຜິດບາບຂອງຊາວໂກຣິນໂທ ເຮົາກໍເຫັນຄວາມຫວັງ ດັ່ງທີ່ທ່ານໂປໂລໄດ້ເຫັນວ່າ ພຣະຄຸນແລະຣິດເດດຂອງພຣະເຈົ້າ ເປັນຄວາມຫວັງແຫ່ງການກັບໃຈໃຫມ່ແລະເປັນຮາກຖານອັນດຽວທີ່ຫມັ້ນຄົງຂອງຄຣິສຕຽນ

**ຈົ່ງເອົາສິ່ງທີ່ທ່ານໄດ້ສຶກສາຈາກຂ້າງເທິງເຮັດບົດຝຶກຫັດຂໍ້ທີສາມແລະສີ່**

# ບົດທີ 4

# ຈົດໝາຍຂອງໂປໂລ ທີ່ຂຽນເຖິງຄຣິສຈັກໃນເມືອງໂກຣິນໂທ

The Letter of Paul to the Corinthians

## ຕອນທີ 2

**ຂໍ້ໄຂຈົດໝາຍພຣະທັມໂກຣິນໂທ ສະບັບສອງ**

*ເຮົາບໍ່ໄດ້ປະກາດຕົວເຮົາເອງ ແຕ່ໄດ້ປະກາດພຣະຄຣິສຄືພຣະເຢຊູວ່າຊົງເປັນອົງພຣະຜູ້ເປັນເຈົ້າ ແລະປະກາດຕົວເຮົາເອງວ່າເປັນຜູ້ຮັບໃຊ້ຂອງເຈົ້າທັງຫລາຍເພາະເຫັນແກ່ພຣະເຢຊູ (2 ກທ 4:5)*

*ເຫດສະນັ້ນເຮົາຈຶ່ງເປັນທູດຂອງພຣະຄຣິສ ໂດຍທີ່ພຣະເຈົ້າຊົງຂໍຮ້ອງເຈົ້າທັງຫລາຍທາງເຮົາ ເຮົາຈຶ່ງຂໍຮ້ອງພວກເຈົ້າໃນນາມຂອງພຣະຄຣິສວ່າ "ຈົ່ງຍອມໃຫ້ພຣະເຈົ້າຊົງກະທຳໃຫ້ເຈົ້າຄືນດີກັນກັບພຣະອົງເທີນ" ເພາະວ່າພຣະເຈົ້າໄດ້ຊົງກະທຳໃຫ້ພຣະຄຣິສ ຜູ້ຊົງບໍ່ມີຄວາມຜິດບາບນັ້ນ ໄດ້ເຂົ້າສ່ວນກັບຄວາມຜິດບາບຂອງເຮົາ ເພື່ອພວກເຮົາຈະໄດ້ສ່ວນໃນຄວາມຊອບທັມຂອງພຣະເຈົ້າໂດຍທາງພຣະອົງ (2 ກທ 5:20-21)*

**ລັກສນະແລະເນື້ອນັຍຂອງພຣະທັມຈົດໝາຍໂກຣິນໂທສະບັບສອງ**

ເມື່ອຜູ້ສື່ຂ່າວຂອງທ່ານໂປໂລໄປຮອດເມືອງໂກໂຣິນໂທແລະມອບ "ພຣະທັມຈົດໝາຍໂກຣິນໂທສະບັບຕົ້ນ" ໃຫ້ແກ່ຄຣິສຈັກ ແລ້ວມີຫຽັງເກີດຂຶ້ນ ເຮົາໝັ້ນໃຈວ່າພວກຄຣິສຕຽນໄດ້ພາກັນປະຊຸມກັນ ແລະຟັງຈົດໝາຍຂອງທ່ານໂປໂລ ແຕ່ເຮົາກໍບໍ່ຮູ້ວ່າພວກເຂົາມີຄວາມຄິດເຫັນແນວໃດ ຖ້າເຮົາກັບໄປຊອກຫາໃນພຣະທັມກິຈການ ເຮົາກໍຄົ້ນຫາຄຳຕອບບໍ່ພົບ ຈຳເປັນທີ່ເຮົາຕ້ອງຄົ້ນຄວ້າຈາກຈົດໝາຍຂອງທ່ານໂປໂລເອງໃນເຣື່ອງເຫດການທີ່ໄດ້ເກີດຂຶ້ນພາຍຫລັງຈາກທີ່ທ່ານສົ່ງຈົດໝາຍສະບັບຕົ້ນ ເມື່ອເຮົາຕິດຕາມເຣື່ອງໃນພຣະທັມໂກຣິນໂທສະບັບສອງ ກໍພົບວ່າບາງຕອນກໍຕື່ນເຕັ້ນແລະບາງຕອນກໍເສົ້າໝອງ ເມື່ອເຮົາສຶກສາຕິດຕາມຂໍ້ຄວາມຂອງພຣະທັມໂກຣິນໂທສະບັບສອງ ເຮົາຈະພົບວ່າຈົດໝາຍສະບັບສອງນີ້ປະກອບໄປດ້ວຍຂໍ້ຄວາມເຫລົ່ານີ້ຄື "ຈົດໝາຍຕອນທີ່ຫາຍໄປ" (1 ກທ 6:14-17:1) "ຈົດໝາຍຕອນທີ່ໂປໂລກ່າວປ້ອງກັນຕົວຢ່າງເຂັ້ມແຂງ" ແລະ "ຈົດໝາຍຕອນທີ່ໂມທນາພຣະຄຸນພຣະເຈົ້າ" ດັ່ງທີ່ຈະສຶກສາຕໍ່ໄປນີ້

## 1. ການໂຈມຕີທ່ານໂປໂລ

ໃນເວລາທີ່ທ່ານໂປໂລຂຽນ "ພຣະທັມຈົດຫມາຍໂກຣິນໂທສະບັບຕົ້ນ" ຈາກເມືອງເອເຟໂຊນັ້ນ ທ່ານຫວັງໃຈແລະອະທິຖານວ່າ ຈົດຫມາຍນັ້ນຈະຊ່ວຍແກ້ໄຂບັນຫາທີ່ເກີດຂຶ້ນໃນເມືອງໂກຣິນໂທໄດ້ ແລະນຳໃຫ້ເກີດຄວາມເປັນອັນນຶ່ງອັນດຽວກັນອີກ ແມ່ນແທ້ເຮົາບໍ່ຕ້ອງສົງສັຍເລີຍວ່າຄຳສອນຂອງທ່ານໂປໂລຄົງຈະເຮັດໃຫ້ເຫດການຫລາຍແນວດີຂຶ້ນ ແຕ່ບັນຫາຄວາມຍຸ້ງຍາກຍັງບໍ່ຫມົດເທື່ອ ແຕ່ກັບແຮງຮ້ອນຂຶ້ນອີກ ຄືຄຣິສຈັກໄດ້ແຕກແຍກເປັນພວກເປັນເຫລົ່າ ພວກເຫລົ່ານີ້ (ດັ່ງທີ່ກ່າວໃນ 1 ກທ 1:12) ໄດ້ຫາເຣື່ອງໃສ່ຄວາມທ່ານໂປໂລ ຈະເຫັນໄດ້ຈາກຈົດຫມາຍທີ່ທ່ານໂປໂລຂຽນໄປ ແລະການໄປຢ້ຽມຢາມຂອງທ່ານຕີໂມທຽວ (1 ກທ 4:17, 16:20) ກໍບໍ່ໄດ້ຊ່ວຍປ່ຽນໃຈຂອງພວກທີ່ຕໍ່ຕ້ານທ່ານໂປໂລ

ໃນທີ່ສຸດການຕໍ່ຕ້ານໄດ້ຮຸກເປັນໄຟ ມີນັກເທດພະເນຈອນ (ນັກເທດທີ່ບໍ່ໄດ້ປະຈຳເປັນສິດຍາພິບາລໃນຄຣິສຈັກນຶ່ງຄຣິສຈັກໃດ) ໄດ້ເຂົ້າໄປໃນຄຣິສຈັກທີ່ເມືອງໂກຣິນໂທແລະປະກາດຕົວວ່າເປັນອັຄສາວົກຂອງພຣະເຢຊູ ໃນພວກນີ້ມີໃຜບ້າງເຮົາບໍ່ຮູ້ ແຕ່ເຮົາຮູ້ແນ່ຊັດວ່າບໍ່ແມ່ນເປັນພວກອັຄສາວົກໃນສິບສອງຄົນ ແຕ່ພວກນີ້ເປັນພວກອັຄສາວົກທຽມ ຫຍິ່ງຈອງຫອງອວດຕົວ ແລະສະແດງຕົວວ່າສລາດໃນການທຳລາຍອິດທິພົນຂອງທ່ານໂປໂລ ເຂົາທັງຫລາຍອວດອ້າງວ່າ ເຂົາມີເລືອດເນື້ອເຊື້ອໄຂຂອງຄົນຢິວ ແລະມີສິດທິໃນການສັ່ງສອນ (2 ກທ 11:4, 5, 13, 20, 22) ດ້ວຍການຊັກນຳຂອງພວກອັຄສາວົກທຽມນີ້ ຈຶ່ງເກີດມີຄຣິສຕຽນຊາວໂກຣິນໂທຜູ້ນຶ່ງເດືອດຮ້ອນໃຈ ແລະຕໍ່ຕ້ານທ່ານໂປໂລເປັນພິເສດ ໄດ້ພຍາຍາມດຳເນີນການບາງສິ່ງບາງຢ່າງ ຊຶ່ງບໍ່ມີຜົນດີຕໍ່ທ່ານໂປໂລເລີຍ ແທ້ຈິງຄວາມຜິດຂອງຊາຍຜູ້ນີ້ຄົງຈະເປັນເພາະຄວາມຫຍິ່ງອວດຕົວແລະຈິດໃຈທີ່ຕໍ່ຕ້ານ ບໍ່ແມ່ນເພາະຈາກຄຳສອນຜິດທີ່ໄດ້ເກີດຂຶ້ນໃຫມ່ຕໍ່ມາພາຍຫລັງເມື່ອຜູ້ນີ້ຖືກໃສ່ໂທດແລ້ວ ແລະຮູ້ສຶກເສັຽໃຈໃນຄວາມຜິດຂອງຕົນ ທ່ານໂປໂລກໍຮ້ອນໃຈຢາກຈະໃຫ້ຄຣິສຈັກໃຫ້ອະພັຍເຂົາ ແລະຮັບເຂົາກັບມາເປັນສະມາຊິກອີກ (2 ກທ 2:5-8) ແຕ່ພວກທີ່ບຸກຮຸກທີ່ໂຫດຮ້າຍນັ້ນ ແລະຄົນທີ່ເປັນຫົວຫນ້າຕໍ່ຕ້ານໃນທ້ອງຖິ່ນເຮັດໃຫ້ຊາວໂກຣິນໂທຍຸ້ງຍາກໄປຣະຍະນຶ່ງ ເຮັດໃຫ້ທັງຄນະໄດ້ຫັນຫລັງໃຫ້ທ່ານໂປໂລແລະປະຕິເສດບໍ່ຍອມຮັບທ່ານໂປໂລເປັນຜູ້ນຳ

ເຫດການນີ້ໄດ້ເກີດຂຶ້ນຕອນຕົ້ນຂອງປີ ຄ.ສ. 57 ທ່ານໂປໂລກໍເລີ້ມເດີນທາງເຮືອຂ້າມທະເລອາຈ້ຽນໄປຍັງເມືອງໂກຣິນໂທ ເຮົາສຶກສາເຣື່ອງນີ້ໄດ້ຊັດແຈ້ງຂຶ້ນໃນຈົດຫມາຍພຣະທັມໂກຣິນໂທສະບັບສອງ 2:1, 12:14, 13:1, 2 ໃນຕອນເຫລົ່ານີ້ເປັນເຣື່ອງທີ່ທ່ານໂປໂລມີຄວາມຮູ້ສຶກວ່າ ການຢ້ຽມຢາມເປັນສິ່ງທີ່ຫນ້າເສັຽໃຈແລະເຈັບປວດສຳລັບທ່ານ ທ່ານຫວັງວ່າການໄປຢ້ຽມຢາມດ້ວຍຕົນເອງນັ້ນ ຈະເຮັດໃຫ້ຊາວໂກຣິນໂທເຫັນວ່າ ທ່ານເປັນຜູ້ຮັບໃຊ້ອຽກງານຂອງພຣະຄຣິສ ແລະການທີ່ພວກເຂົາຕິດຕາມຄົນທີ່ກໍ່ຄວາມຍຸ້ງຍາກນັ້ນເປັນການເຮັດຜິດ ແຕ່ຄວາມຫວັງໃຈຂອງທ່ານກໍບໍ່ສຳເຣັດ ເມື່ອຄຣິສຈັກບໍ່ຟັງຄວາມທ່ານ ທ່ານກໍບໍ່ໄດ້ເຮັດຫຽັງໃນຕອນນັ້ນ ຫລັງຈາກທີ່ໄດ້ຕັກເຕືອນເຂົາວ່າທ່ານຈະກັບມາຫາເຂົາອີກ ທ່ານຈຶ່ງເດີນທາງຕໍ່ໄປແຂວງມາເກໂດເນັຽ (2 ກທ 1:16) ແລ້ວທ່ານຈຶ່ງກັບໄປເມືອງເອເຟໂຊ ທ່ານມີຄວາມຫວັງວ່າກ່ອນທີ່ທ່ານຈະກັບມາຢ້ຽມຢາມໃນເທື່ອໃຫມ່ ພວກເຂົາຈະເຫັນຄວາມຜິດຂອງຕົນແລະປ່ຽນໃຈກັບຄືນດີກັບທ່ານອີກ

## 2. ຈົດໝາຍທີ່ກ່າວປ້ອງກັນຕົວຢ່າງເຂັ້ມແຂງ

ທ່ານໂປໂລບໍ່ໄດ້ປ່ອຍໃຫ້ເວລາຜ່ານພົ້ນໄປລ້າ ໆ ໂດຍບໍ່ມີຜົນດີເກີດຂຶ້ນ ທ່ານຂຽນຈົດໝາຍເຖິງຄຣິສຕຽນໃນເມືອງໂກຣິນໂທອີກ ທ່ານອ້າງໄວ້ໃນພຣະທັມສອງໂກຣິນໂທສະບັບສອງ 2:4, 9, 7:8 ທ່ານໂປໂລພຍາຍາມທີ່ຈະນຳພາຊາວໂກຣິນໂທໃຫ້ສຳນຶກຕົວ ໃຫ້ເປັນມິດກັບທ່ານແລະໄວ້ວາງໃຈທ່ານອີກ ທ່ານໄດ້ກ່າວຢ່າງເຂັ້ມແຂງແລະຕຶງໄປຕຶງມາ ໂດຍສະເພາະໃນພຣະທັມໂກຣິນໂທສະບັບທີ່ສອງ ບົດທີ່ 10-13 ເປັນຕອນທີ່ເຮົາເຫັນເຖິງການປ້ອງກັນຕົວຂອງທ່ານຢ່າງເຂັ້ມແຂງ ແລະໄດ້ກ່າວໂຈມຕີພວກຫົວໜ້າອັຄສາວົກທຽມຢ່າງໜັກ

ຈົດໝາຍສະບັບນີ້ໄດ້ຝາກທ່ານຕີໂຕໄປຍັງເມືອງໂກຣິນໂທ ບໍ່ແມ່ນຈະໃຫ້ທ່ານຕີໂຕມອບຈົດໝາຍໃຫ້ເທົ່ານັ້ນ ແຕ່ຕ້ອງການໃຫ້ທ່ານຕີໂຕຊ່ວຍໜູນໃຈສມາຊິກເປັນການສ່ວນຕົວ ເພື່ອຊ່ວຍໃຫ້ຄົນເຫລົ່ານັ້ນມີຈິດໃຈອ່ອນລົງແລະກັບຄືນດີອີກ ຄຣິສຈັກຈະເຂັ້ມແຂງແລະຈະເຣີນຕິບໂຕໄດ້ ຖ້າຄຣິສຕຽນຊາວເມືອງໂກຣິນໂທຈະເລີກນັບຖືພວກຫົວໜ້າທີ່ມັກຕໍ່ຕ້ານເຫລົ່ານັ້ນເສັຽ ໂດຍປ່ຽນທ່າທີເສັຽໃຫມ່ ແລະຮື້ອຟື້ນມິຕພາບໃຫມ່ກັບທ່ານໂປໂລ ໃນເມື່ອທ່ານໂປໂລຕັ້ງໃຈຈະອອກຈາກເມືອງເອເຟໂຊໃນເວລາບໍ່ນານທ່ານໄດ້ນັດພົບກັບທ່ານຕີໂຕໃນທີ່ນຶ່ງທີ່ໃດຕາມທາງພາກເໜືອຂອງເອເຊັຽນ້ອຍຫລືໃນແຂວງມາເກໂດເນັຽ

ດັ່ງນັ້ນທ່ານໂປໂລຈຶ່ງໄດ້ເດີນທາງອອກຈາກເມືອງເອເຟໂຊ ແລະເຫັນວ່າ "ອົງພຣະຜູ້ເປັນເຈົ້າຊົງໄຂຊ່ອງທາງໃຫ້ແກ່ເຮົາ" (2 ກທ 2:12) ໃນເມືອງໂທອາດປະຊາຊົນທີ່ນັ້ນພ້ອມທີ່ຈະຟັງຂ່າວປະເສີດ ແລະເຊື່ອສັດທາ ແຕ່ເພາະຄວາມເປັນຫ່ວງຄຣິສຕຽນໃນເມືອງໂກຣິນໂທ ເຮັດໃຫ້ທ່ານບໍ່ມີສັນຕິສຸກພາຍໃນຈິດໃຈ ທ່ານໂປໂລຢາກໄດ້ຟັງຂ່າວຈະພວກເຂົາຢ່າງໂດຍໄວທີ່ສຸດ ວ່າຈົດໝາຍທີ່ທ່ານຂຽນຢ່າງເຂັ້ມແຂງນັ້ນ ພ້ອມດ້ວຍຄຳສເນີແນະຂອງທ່ານຕີໂຕຈະເອົາຊນະໃຈພີ່ນ້ອງຊາວເມືອງໂກຣິນໂທໄດ້ຫລືບໍ່ ດັ່ງນັ້ນທ່ານຈຶ່ງອອກຈາກເມືອງໂທອາດຂ້າມໄປຍັງແຂວງມາເກໂດເນັຽ ເຊື່ອວ່າທ່ານໂປໂລໄດ້ພົບກັບທ່ານຕີໂຕ ໃນຕອນທ້າຍຣະດູຮ້ອນຫລືຣະດູໃບໄມ້ລ່ວງປີ ຄ.ສ. 57 ຂ່າວນັ້ນເປັນຂ່າວດີ ຄຣິສຈັກໃນເມືອງໂກຣິນໂທໄດ້ປ່ຽນແປງຢ່າງສິ້ນເຊີງ ຄຣິສຈັກໄດ້ບັງຄັບຫົວໜ້າທີ່ມັກຕໍ່ຕ້ານໄວ້ໄດ້ ແລະຮ້ອນໃຈຢາກມີມິຕພາບກັບທ່ານໂປໂລອີກ ທ່ານໂປໂລດີໃຈຫລາຍ ໆ ແລະເຕັມໄປດ້ວຍຄວາມຊົມຊື່ນຍິນດີທ່ານຈຶ່ງໄດ້ຂຽນຈົດໝາຍທັນທີ ເປັນຈົດໝາຍຂອບໃຈ ເພື່ອສະແດງຄວາມໂມທນາຄຸນຕໍ່ພຣະເຈົ້າ ແລະແຈ້ງຄວາມຮັກຂອງທ່ານທີ່ມີຕໍ່ຊາວໂກຣິນໂທ

## 3. ຈົດໝາຍໂມທນາຄຸນພຣະຄຸນພຣະເຈົ້າ

ທ່ານໂປໂລດີໃຈຫລາຍ ໆ ແລະເຕັມໄປດ້ວຍຄວາມຊົມຊື່ນຍິນດີ ທ່ານໄດ້ຂຽນອອກມາໃນຈົດໝາຍທີ່ໂມທນາພຣະຄຸນພຣະເຈົ້າ ໃນຕອນແຣກທ່ານສະແດງຄວາມພໍໃຈຂອງທ່ານ ທີ່ໄດ້ຮູ້ວ່າເຣື່ອງຣາວໃນເມືອງໂກຣິນໂທຖືກຕ້ອງດີແລ້ວແລະຄຣິສຈັກມີສະພາບທີ່ດີຂຶ້ນ ທ່ານຣະລຶກໄດ້ວ່າທ່ານຣອດຕາຍຢ່າງອັສຈັນໃນອາເຊັຍ ອັນເປັນແຂວງນຶ່ງຂອງໂຣມໃນເອເຊັຽນ້ອຍພາກຕາວັນຕົກ (2 ກທ 1:3-11) ເຫດການຫວຸ້ນວາຍເທື່ອນີ້ບໍ່ໄດ້ເຮັດໃຫ້ທ່ານໂປໂລຕົກຢູ່ໃນອັນຕຣາຍ ແລະບໍ່ໄດ້ເຮັດໃຫ້ທ່ານທໍ້ໃຈ ເພາະທ່ານຍັງປາຖນາຈະເຂົ້າໄປເວົ້າກັບພວກທີ່ກໍ່ຄວາມຫວຸ້ນວາຍເຫລົ່ານັ້ນ ອັນຕຣາຍທີ່ເກີດຂຶ້ນເປັນອັນໃດເຮົາບໍ່ຮູ້ແຈ້ງ ແຕ່ເຮົາຮູ້ແຈ້ງວ່າພຣະເຈົ້າຊົງຊ່ວຍທ່ານໃຫ້ພົ້ນຄວາມຕາຍ ແລະພຣະອົງປະທານຄວາມເລົ້າໂລມໃຈດ້ວຍເຫດການທີ່ເກີດຂຶ້ນໃນເມືອງໂກຣິນໂທ

## 4. ທ່ານໂປໂລຮັບໃຊ້ບົວລະບັດເພື່ອພຣະຄຣິສ

ທ່ານໂປໂລໄດ້ຄວາມຄິດຮອດພີ່ນ້ອງໃນຄຣິສຈັກໂກຣິນໂທເຄີຍມີຄວາມຈົ່ງຮັກພັກດີ ແລະເຄີຍສນັບສນຸນການຮັບໃຊ້ຂອງທ່ານ ທ່ານຈຶ່ງໄດ້ໃຫ້ເຂົາຣະລຶກເຖິງປະສົບການຮັບໃຊ້ທຸກຢ່າງ ທີ່ທ່ານເຄີຍໄດ້ເຮັດຮ່ວມກັນດ້ວຍຄວາມຈິງໃຈ (2 ກທ 1:12-14) ທ່ານມີເຫດຜົນທີ່ບໍ່ໄດ້ໄປຢາມເຂົາກ່ອນທີ່ທ່ານໄປຍັງແຂວງມາເກໂດເນັຽ ທ່ານຄິດວ່າຈະປ່ອຍໃຫ້ເຂົາມີເວລາປ່ຽນທ່າທີແນວຄິດກ່ອນ ເພື່ອເມື່ອເວລາທີ່ທ່ານໄປຢ້ຽມຢາມອີກເທື່ອນຶ່ງ ຈະເປັນການຢ້ຽມຢາມທີ່ມີຄວາມສຸກໃຈ ແທນທີ່ທ່ານຈະໄປຢ້ຽມທັນທີ ພຣະເຈົ້າໄດ້ຊົງນຳທ່ານໂປໂລໃຫ້ຂຽນຈົດໝາຍທີ່ເຂັ້ມແຂງຂຶ້ນ ແລະສົ່ງໄປເພື່ອໃຫ້ເຫດການດີຂຶ້ນເສັຍກ່ອນ (2 ກທ 1:15-2:4) ການຊົງນຳຂອງພຣະເຈົ້າໄດ້ຜົນຫລາຍ ຄຣິສຈັກກັບໃຈໃໝ່ແລະໄດ້ລົງໂທດຫົວໜ້າທີ່ຕໍ່ຕ້ານ ດັ່ງນັ້ນທ່ານໂປໂລຈຶ່ງໄດ້ຊຸກຊວນເຂົາ ໃຫ້ຍົກໂທດແກ່ຜູ້ທີ່ກະທຳຜິດ (2 ກທ 2:5-11)

ທ່ານໂປໂລມີຄວາມຊື່ນຊົມຍິນດີເມື່ອໄດ້ຮັບຂ່າວດີຈາກທ່ານຕີໂຕ ແລະໂມທນາພຣະຄຸນພຣະເຈົ້າທີ່ຊົງໃຊ້ທ່ານໃນພຣະຣາຊກິຈຂອງພຣະອົງ ຂໍ້ນີ້ເຮັດໃຫ້ທ່ານບັນຍາຍເຖິງກິຈການແລະການປະກາດຂອງພວກອັຄສາວົກ (2 ກທ 2:14-6:10) ທ່ານໂປໂລສາມາດເຮັດງານຂອງທ່ານໄດ້ດ້ວຍຣິດເດດຂອງພຣະເຈົ້າເທົ່ານັ້ນ ຄວາມດີຄວາມຊອບບໍ່ໄດ້ຕົກແກ່ທ່ານໂປໂລ ແຕ່ເປັນເພາະວ່າພຣະເຈົ້າຊົງທ່ຽງທັມ (2 ກທ 2:14-17) ທ່ານບໍ່ຕ້ອງການໜັງສືຮັບຮອງຕົວ ເພາະວ່າຊີວິດທີ່ປ່ຽນໃໝ່ຂອງຄຣິສຕຽນຊາວໂກຣິນໂທເປັນໃບຮັບຮອງຢູ່ແລ້ວ (2 ກທ 3:1-3) ທ່ານເປັນຜູ້ຮັບໃຊ້ໃນພັນທະສັນຍາໃໝ່ຊຶ່ງພຣະເຢຊູຄຣິສໄດ້ຊົງສະຖາປນາແຕ່ງຕັ້ງ ໃນພັນທະສັນຍາໃໝ່ນີ້ພຣະຄຣິສຊົງເປັນອົງພຣະຜູ້ເປັນເຈົ້າແລະພຣະວິນຍານຂອງພຣະເຈົ້າເປັນຣິດເດດທີ່ປະທານຊີວິດ (2 ກທ 3:4-18)

ທ່ານໂປໂລຊີ້ແຈງໃຫ້ເຫັນອີກວ່າ ອັຄສາວົກເປັນຜູ້ຮັບໃຊ້ພຣະຄຣິສແລະຄຣິສຈັກ ເປັນຄົນທັມມະດາແລະມີຄວາມອ່ອນແອ ແຕ່ຣິດເດດຂອງພຣະເຈົ້າປະທານໃຫ້ທ່ານມີແຮງກຳລັງໃໝ່ ພຣະເຈົ້າຊົງເຮັດການຢູ່ໃນຕົວທ່ານ ໃຫ້ທ່ານມີຊີວິດເພື່ອຜູ້ອື່ນແລະເພື່ອຕົວທ່ານດ້ວຍ ຊີວິດນີ້ເປັນຊີວິດອັນຕລອດໄປເປັນນິດ (2 ກທ ບົດທີ 4) ແມ່ນວ່າຈະເປັນຄວາມຕາຍກໍຈະບໍ່ນຳຄວາມພ່າຍແພ້ແລະຄວາມເສັຽຫາຍມາສູ່ທ່ານ ເພາະພຣະວິນຍານຂອງພຣະເຈົ້າຢູ່ໃນຕົວທ່ານ ເປັນມັດຈຳຂອງພຣະເຈົ້າ ໃຫ້ທ່ານໂປໂລໄດ້ຮູ້ແນ່ວ່າຈະຢູ່ຮ່ວມພັກເຊົາກັບພຣະເຈົ້າໃນຊີວິດພາຍພາກໜ້າ ພຣະສັນຍານີ້ເປັນແຮງແລະເປັນກຳລັງຂອງທ່ານທີ່ຈະດຳເນີນຊີວິດຢູ່ ເພື່ອພຣະຄຣິສຈະຊົງຮັບທ່ານໃນການພິພາກສາໃນວັນສຸດທ້າຍ (2 ກທ 5:1-10) ຄວາມຢຳເກງແລະຄວາມຮັກອັນຊົງຣິດເດດຂອງພຣະຄຣິສ ເຮັດໃຫ້ທ່ານມີຄວາມສັດຊື່ໃນການປ່າວປະກາດ ເພື່ອໃຫ້ຄືນກັບຄືນດີກັບພຣະເຈົ້າ ຫົວໃຈແຫ່ງການປ່າວປະກາດຂ່າວປະເສີດຂອງທ່ານຄື "ພຣະເຈົ້າຜູ້ຊົງສະຖິດຢູ່ໃນອົງພຣະຄຣິສໄດ້ຊົງກະທຳໃຫ້ມະນຸດຄືນດີກັນກັບພຣະອົງ ບໍ່ໄດ້ຊົງຖືໂທດໃນການຜິດບາບຂອງເຂົາ ແລະຊົງມອບຂ່າວເຣື່ອງການທີ່ພຣະອົງໃຫ້ຄືນດີກັນນັ້ນໄວ້ກັບເຮົາໃຫ້ປະກາດ" (2 ກທ 5:11-19) ດ້ວຍເຫດນີ້ທ່ານໂປໂລໃນຖານະທີ່ທ່ານເປັນຣາຊທູຕຂອງພຣະຄຣິສທ່ານຈຶ່ງມີຄວາມຮ້ອນຮົນແລະກະຕືລືລົ້ນ ໃນການຮັບໃຊ້ມະນຸດ ແລະເຮັດວຽກງານຂອງທ່ານເລື້ອຍໄປໂດຍບໍ່ໄດ້ຄິດເຖິງຄວາມຍາກລຳບາກແລະອັນຕຣາຍແຕ່ຢ່າງໃດ (2 ກທ 5:20-6:10)

ທ່ານໂປໂລໄດ້ຂໍຮ້ອງຄຣິສຈັກໃນເມືອງໂກຣິນໂທຢ່າງເຂັ້ມແຂງໃຫ້ພວກເຂົາຕອບສະໜອງຄວາມຄວາມຮັກຂອງທ່ານດ້ວຍຄວາມຮັກຄືກັນ (2 ກທ 6:11-7:4) ໃນຄຳຂໍຮ້ອງຂອງທ່ານມີຄຳຕັກເຕືອນທີ່ສຳຄັນບໍ່ໃຫ້ຜູກພັນກັບຄົນທີ່ບໍ່ເຊື່ອແລະສາສນາຂອງເຂົາ ເພາະເປັນສິ່ງທີ່ເຂົ້າກັນບໍ່ໄດ້ ຄຳສອນແລະ

ແນວເຊື່ອຖືຂອງຄົນເຫລົ່ານັ້ນຈະນໍາໃຫ້ເກີດບາບແກ່ກາຍແລະຈິດວິນຍານ ຄຣິສຕຽນເປັນລູກຂອງພຣະເຈົ້າ ຈະຕ້ອງແຍກຕົວອອກຈາກສາສນາແລະແນວເຊື່ອຖືໃນອໍານາດອື່ນ ໆ ພຣະເຈົ້າຈຶ່ງຈະຮັບເຮົາ ທ່ານໂປໂລກ່າວສລູບວ່າ "ພວກທີ່ຮັກເອີຍ ເມື່ອພວກເຮົາມີພຣະສັນຍາດັ່ງນັ້ນແລ້ວ ໃຫ້ເຮົາທັງຫລາຍຊໍາຣະຕົວ ຈາກຮອຍເປື້ອນທຸກຢ່າງຂອງເນື້ອກາຍແລະວິນຍານຈິດ ແລະຈົ່ງເຮັດໃຫ້ມີຄວາມບໍຣິສຸດຢ່າງຄົບຖ້ວນ ໂດຍຄວາມຢໍາເກງພຣະເຈົ້າ" (2 ກທ 6:14-7:1) ນັກສຶກສາພຣະຄັມພີສ່ວນຫລາຍຄິດວ່າຕອນນີ້ເປັນຈົດຫມາຍທີ່ທ່ານໂປໂລໄດ້ອ້າງເຖິງໃນ ພຣະທັມໂກຣິນໂທສະບັບຕົ້ນ 5:9 ຈົດຫມາຍນີ້ບໍ່ໄດ້ຫາຍໄປໃສ ແຕ່ໄດ້ຖືຮວບຮວມມາຢູ່ໃນພາກສ່ວນຂອງພຣະທັມໂກຣິນສະບັບສອງ

ໃນທີ່ສຸດທ່ານໂປໂລໄດ້ບອກວ່າທ່ານໄດ້ພົບກັບທ່ານຕີໂຕແລະກ່າວເຖິງຄວາມຊື່ນຊົມຍິນດີຂອງທ່ານແລະຂອງທ່ານຕີໂຕທີ່ໄດ້ຮັບຂ່າວດີຈາກພີ່ນ້ອງຄຣິສຕຽນໃນເມືອງໂກຣິນໂທ ຂ່າວນັ້ນເຮັດໃຫ້ທ່ານໂປໂລມີຄວາມສຸກສະບາຍໃຈ (2 ກທ 7:5-16)

| |
|---|
| **ຈົ່ງເອົາສິ່ງທີ່ທ່ານໄດ້ສຶກສາຈາກຂ້າງເທິງເຮັດບົດຝຶກຫັດ ຂໍ້ທີຫ້າ** |

## 5. ການແຜ່ຊັບຖວາຍຂອງຄຣິສຕຽນ

ຜູ້ທີ່ເປັນຄຣິສຕຽນມີຄວາມຈົງຮັກພັກດີແລະຄວາມກະຕັນຍູຮູ້ຄຸນພຣະເຈົ້າ ດັ່ງນັ້ນຄຣິສຕຽນຈຶ່ງມີຫນ້າທີ່ຄວາມຮັບຜິດຊອບຕ້ອງເຮັດຕາມຄວາມເຊື່ອທີ່ຄຣິສຕຽນມີຢູ່ ດັ່ງທີ່ຈະເຫັນໄດ້ຈາກພຣະຄັມພີຂໍ້ຕໍ່ໄປນີ້ ໃນພຣະທັມ 1 ໂກຣິນໂທ 16:1-4 ທ່ານໂປໂລຂໍໃຫ້ພີ່ນ້ອງຊາວໂກຣິນໂທ ຖວາຍເປັນປະຈໍາດ້ວຍໃຈກວ້າງຂວາງ ໃຫ້ການຣິບໂຮມໃຫ້ພ້ອມທີ່ສົ່ງໄປຊ່ວຍເຫລືອ ໃນພຣະທັມໂຣມ 15:26-28 ທ່ານໂປໂລບອກກັບຄຣິສຈັກໃນກຸງໂຣມວ່າ ທ່ານຫວັງວ່າຈະໄດ້ໄປຢ້ຽມຢາມຣະຫວ່າງການເດີນໄປສະເປນ ແຕ່ຕ້ອງນໍາຊັບທີ່ຖວາຍໄປຍັງກຸງເຢຣູຊາເລັມກ່ອນ ທ່ານເຫັນວ່າພີ່ນ້ອງຄຣິສຕຽນຊາວຕ່າງຊາດສົມຄວນໃຫ້ຄວາມຊ່ວຍອຸປະຖັມພີ່ນ້ອງໃນກຸງເຢຣູຊາເລັມ ໃນຖານະທີ່ພີ່ນ້ອງເຫລົ່ານັ້ນມີສ່ວນສນັບສນູນໃນຝ່າຍຈິດວິນຍານ ທີ່ໄດ້ນໍາຄວາມຣອດພົ້ນມາຍັງພີ່ນ້ອງຊາວຕ່າງຊາດ ເຮົາຈະເຫັນໄດ້ວ່າຄວາມຮັບຜິດຊອບທີ່ສໍາຄັນຢ່າງນຶ່ງທີ່ຄຣິສຕຽນສົມຄວນຕ້ອງຕອບສນອງຕໍ່ພຣະເຈົ້າຄື ການແຜ່ຊັບຖວາຍພຣະເຈົ້າ ເພື່ອສໍາແດງເຖິງຄວາມຮັກຕໍ່ພຣະເຈົ້າແລະຕໍ່ພີ່ນ້ອງຄຣິສຕຽນຜູ້ຮັບໃຊ້ພາຣະກິຈພຣະເຈົ້າຮ່ວມກັນ ຄວາມຕ້ອງການໃນເວລານັ້ນ ຄືຄຣິສຈັກໃນກຸງເຢຣູຊາເລັມເກີດການກັນດານ ແລະຄຣິສຈັກໃນເມືອງໂກຣິນໂທມີຄວາມຕັ້ງໃຈດ້ວຍຄວາມຮັກ ແລະໄດ້ເລີ້ມແຜ່ຊັບຖວາຍເພື່ອຊ່ວຍເຫລືອຊ່ວຍພີ່ນ້ອງເຫລົ່ານັ້ນ (1 ກທ 16:1-4) ທ່ານໂປໂລເຫັນວ່າ ການກະທໍາເຊັ່ນນີ້ເປັນການສໍາແດງຄວາມຮັກໃນຖານະທີ່ເປັນກາຍດຽວກັນໃນພຣະຄຣິສ ເປັນການຜູກພັນພີ່ນ້ອງຊາວຢິວເຂົ້າກັບພີ່ນ້ອງຕ່າງຊາດ ໃຫ້ມີນໍ້າໃຈແລະຄວາມເຂົ້າໃຈດີຕໍ່ກັນ ຝ່າຍນຶ່ງຖວາຍດ້ວຍຄວາມຍິນດີແລະອີກຝ່າຍນຶ່ງຮັບດ້ວຍຄວາມຮູ້ສຶກຂອບພຣະຄຸນພຣະເຈົ້າ ທັງສອງຝ່າຍກໍຈະຖືກດຶງດູດເຂົ້າຫາກັນດ້ວຍຄວາມຮັກແລະຄວາມໄວ້ວາງໃຈສັນພີ່ນ້ອງໃນພຣະຄຣິສ ແຕ່ການແຜ່ຊັບຖວາຍຂອງຊາວເມືອງໂກຣິນໂທໄດ້ເຊົາໄປຊົ່ວຄາວເພາະການຕໍ່ຕ້ານທີ່ເກີດຂຶ້ນໃນຄຣິສຈັກ ໃນພຣະທັມຈົດຫມາຍໂກຣິນໂທສະບັບສອງ ບົດທີ 8 ແລະ 9 ເປັນບົດຮຽນທີ່ເຮົາຈະສາມາດສຶກສາເຣື່ອງການແຜ່ຊັບຖວາຍໄດ້ຢ່າງກວ້າງຂວາງ

ທ່ານໂປໂລໄດ້ເລີ້ມຕົ້ນໂດຍການຍົກຕົວຢ່າງຂອງຄຣິສຈັກໃນມາເກໂດເນັຽວ່າ "ຄວາມຍັນດີອັນເຫລືອລົ້ນ ແລະຄວາມຍາກຈົນອັນເຫລືອປະມານຂອງເຂົານັ້ນ ກໍໄດ້ປາກົດລົ້ນອອກມາເປັນໃຈສັດທາອັນກວ້າງຂວາງ.. ເຂົາສັດທາຖວາຍໂດຍສຸດຄວາມສາມາດຂອງເຂົາ ແລະເຫລືອຄວາມສາມາດຂອງເຂົາເສັຽອີກ" ເພື່ອຕ້ອງການໃຫ້ພີ່ນ້ອງຊາວໂກຣິນໂທມີຈິດໃຈສັດທາຄືກັນ ໄດ້ໃຫ້ຕົວຢ່າງຂອງພຣະເຢຊູຄຣິສວ່າ "ເຈົ້າທັງຫລາຍຮູ້ຈັກພຣະຄຸນຂອງພຣະເຢຊູຄຣິສເຈົ້າຂອງພວກເຮົາແລ້ວວ່າ ເຖິງແມ່ນພຣະອົງຊົງຮັ່ງມີ ພຣະອົງກໍຍັງຊົງຍອມກາຍເປັນຄົນຍາກຈົນເພາະເຫັນແກ່ເຈົ້າທັງຫລາຍ ເພື່ອເຈົ້າທັງຫລາຍຈະໄດ້ກາຍເປັນຄົນຮັ່ງມີ ເນື່ອງຈາກຄວາມຍາກຈົນຂອງພຣະອົງ" (2 ກທ 8:1-15) ຫລັງຈາກນັ້ນທ່ານໂປໂລໄດ້ອະທິບາຍເຖິງຂັ້ນຕອນແລະການດຳເນີນການໃນການແຜ່ຊັບຖວາຍດ້ວຍຄວາມສັດຊື່ວ່າ ຈະເຮັດແນວໃດ (2 ກທ 8:16-24) ທ່ານໂປໂລຕ້ອງການໃຫ້ຄຣິສຈັກໄດ້ເກັບຊັບທີ່ຖວາຍຕາມເວລາທີ່ກຳໜົດ ເພື່ອຈະບໍ່ຕ້ອງຮີບແລ່ງໃນນາທີສຸດທ້າຍ ເພື່ອໃຫ້ການຖວາຍນັ້ນເປັນສິ່ງທີ່ເຕັມໃຈຫລາຍກວ່າການບັງຄັບ (2 ກທ 9:1-5)

ເຣື່ອງການແຜ່ຊັບຖວາຍພຣະເຈົ້ານີ້ ເຮົາຈະສາມາດສລູບເປັນຫລັກການສຳລັບຄຣິສຕຽນໃນການປະຕິບັດໄດ້ດັ່ງຕໍ່ໄປນີ້

(1) ສິ່ງທີ່ສຳຄັນທີ່ສຸດໃນການແຜ່ຊັບຖວາຍຄື ການຖວາຍຕົວເຮົາໃຫ້ແກ່ພຣະເຈົ້າກ່ອນ ແລ້ວມອບຕົວໃຫ້ພຣະເຈົ້າໃຊ້ຕາມນ້ຳພຣະທັຍຂອງພຣະອົງ ດັ່ງນັ້ນເມື່ອຄຣິສຕຽນຈະຖວາຍສິ່ງອັນໃດກໍສົມຄວນທີ່ຈະພິຈາຣະນາກັບພຣະເຈົ້າກ່ອນສິ່ງອື່ນ ເພື່ອໃຫ້ການຖວາຍເປັນໄປຕາມນ້ຳພຣະທັຍພຣະເຈົ້າ ແມ່ນວ່າຊັບທີ່ຖວາຍນັ້ນຈະມອບໃຫ້ກັບເຈົ້າໜ້າທີ່ຂອງຄຣິສຈັກ ການທີ່ຜູ້ຖວາຍພິຈາຣະນາກັບພຣະເຈົ້າ ເພື່ອໃຫ້ການຖວາຍນັ້ນເປັນຂອງພຣະເຈົ້າຢ່າງແທ້ຈິງ ແລະຖືກຕ້ອງຕາມນ້ຳພຣະທັຍພຣະເຈົ້າຫລາຍກວ່າທີ່ຈະຖວາຍໄປຕາມອາຣົມຄວາມຮູ້ສຶກ ແລະສພາບການຂ້າງຄຽງທີ່ມີຜູ້ບີບບັງຄັບໃຫ້ຖວາຍດ້ວຍຄວາມຈຳໃຈຄຣິສຕຽນຄວນຖວາຍຈາກໃຈຈິງຕໍ່ພຣະເຈົ້າ (2 ກທ 8:5)

(2) ຄຣິສຕຽນຄວນໃຫ້ການແຜ່ຊັບຖວາຍ ເປັນໄປຕາມນິມິດໝາຍທີ່ພຣະເຈົ້າໄດ້ຊົງສຳແດງໃຫ້ເຮົາເຫັນເຖິງວຽກການຮັບໃຊ້ທີ່ພຣະອົງຕ້ອງການໃຫ້ເຮົາມີສ່ວນຮ່ວມ (ຣມ 15:27, ຄຕ 2:10)

(3) ຄຣິສຕຽນຄວນຖືແບບຢ່າງຂອງພຣະເຢຊູຄຣິສ ທີ່ພຣະອົງຍອມຖວາຍຕົວຂອງພຣະອົງຈາກສະພາບທີ່ຮັ່ງມີໃຫ້ກາຍເປັນສະພາບຂອງຄວາມຍາກຈົນ (2 ກທ 8:9)

(4) ການທີ່ຄຣິສຕຽນແຜ່ຊັບຖວາຍພຣະເຈົ້າກໍ່ໃຫ້ເກີດ

ກ. ຄວາມຮັກທີ່ປະຕິບັດອອກມາເປັນການກະທຳແລະຫຍຸດການເວົ້າຂວັນຕໍ່ກັນແລະກັນ (2 ກທ 8:8)

ຂ. ຄວາມເປັນອັນນຶ່ງອັນດຽວກັນຂອງພີ່ນ້ອງໃນຄຣິສຈັກຂອງພຣະຄຣິສທີ່ມີຈິດໃຈຮ່ວມກັນຄຣິສຕຽນຜູ້ທີ່ມີບໍຣິບູນແລ້ວຕ້ອງຊ່ວຍເຫລືອຜູ້ທີ່ຂາດເຂີນ ເພື່ອໃຫ້ເປັນການສເມີກັນໂດຍການຊ່ວຍກັນໄປຊ່ວຍກັນມາ (2 ກທ 8:10-15)

(5) ຫລັກການແຜ່ຊັບຖວາຍທີ່ສຳຄັນຄື ການຖວາຍເປັນປະຈຳ (1 ກທ 16:1-2) ການແຜ່ຖວາຍທີ່ລະເລັກລະນ້ອຍ ດີກວ່າທີ່ຈະສະສົມຈົນເປັນຈຳນວນກ້ອນໃຫຽ່ ແລ້ວເກີດຄວາມເສັຽດາຍ

(6) ການຖວາຍນັ້ນຄວນມີຄວາມເໝາະແລະສົມສ່ວນກັບລາຍໄດ້ຂອງຜູ້ຖວາຍ (1 ກທ 16:1-2) ການທີ່ຜູ້ນຶ່ງມີຄວາມຂາດເຂີນນັ້ນບໍ່ໄດ້ໝາຍຄວາມວ່າເຂົາເປັນຂໍທານ ແຕ່ວ່າເຂົາຂໍຄວາມຊ່ວຍເຫລືອຈາກພີ່ນ້ອງຜູ້ທີ່ມີ ເຂົາບໍ່ຕ້ອງການຈະສ້າງພາຣະໃຫ້ກັບຜູ້ອື່ນ (2 ກທ 8:12-15) ພີ່ນ້ອງຄຣິສຕຽນຄວນສແດງຄວາມຮັກໃຫ້ຄວາມຊ່ວຍເຫລືອຕາມກຳລັງທີ່ມີຢູ່ ໃນທາງກົງກັນຂ້າມຝ່າຍທີ່ຮັບຄວາມ

ຊ່ວຍເຫລືອກໍບໍ່ຄວນຖືໂອກາສ ແຕ່ໃຫ້ໃຊ້ໂອກາສທີ່ໄດ້ຮັບຄວາມຊ່ວຍເຫລືອນີ້ປ່ຽນແປງຖານະໃຫມ່ຂອງຕົນ

(7) ການແຜ່ຊັບຖວາຍເປັນການຖວາຍໃຫ້ດ້ວຍຄວາມເຕັມໃຈແລະຊື່ນຊົມຍິນດີ ບໍ່ເປັນການບີບບັງຄັບຫລືຂູ່ເຂັນ "ພຣະເຈົ້າຊົງຮັກຄົນນັ້ນທີ່ໃຫ້ດ້ວຍຊື່ນໃຈຍິນດີ" (2 ກທ 9:6-11) ພຣະເຈົ້າຊົງໂຜດໃຫ້ຄຣິສຕຽນຮັ່ງມີດ້ວຍສິ່ງຂອງຢ່າງບໍຣິບູນ ເພື່ອໃຫ້ຄຣິສຕຽນມີຂອງແຈກຢາຍຢ່າງໃຈກວ້າງຂວາງ

(8) ປັດຈັຍຖວາຍແກ່ຜູ້ທີ່ຂາດເຂີນ ຍ່ອມນໍາມາສູ່ການຂອບພຣະຄຸນພຣະເຈົ້າ (2 ກທ 9:12) ບໍ່ມີສິ່ງໃດຈະໂມທນາຄຸນພຣະເຈົ້າໄດ້ດີເທົ່າກັບການຊ່ວຍເຫລືອເພື່ອນມະນຸດດ້ວຍກັນ

(9) ຄຣິສຕຽນຜູ້ທີ່ມີຈິດໃຈກວ້າງຂວາງແລະຄວາມຮັບຜິດຊອບຕໍ່ຜູ້ອື່ນ ເປັນພົນທີ່ມີອໍານາດ ແລະນໍາສງ່າຣາສີໃຫ້ແກ່ພຣະເຈົ້າ (2 ກທ 9:13-15)

(10) ທ່ານໂປໂລໄດ້ວາງແຜນການໃນການຈັດຫາລາຍໄດ້ ແລະສນັບສນຸນການແຜ່ຊັບຖວາຍ (2 ກທ 8:16-24) ການວາງແຜນການເປັນສິ່ງສໍາຄັນ ເພື່ອພີ່ນ້ອງໃນຄຣິສຈັກໄດ້ເກີດຄວາມເຂົ້າໃຈໃນຈຸດປະສົງ ແລະຕຽມຕົວໃນການໄຫວ້ວອນສແວງຫານໍ້າພຣະທັຍພຣະເຈົ້າ ທ່ານໂປໂລຍັງໄດ້ເລືອກຜູ້ທີ່ເຫມາະສົມທີ່ຈະຮັບຜິດຊອບຕໍ່ຫນ້າທີ່ຮັບເກັບຮັກສາເງິນຖວາຍນໍາໄປສິ່ງຕາມແຜນການ ເຮົາຈະເຫັນໄດ້ວ່າ ທ່ານພຍາຍາມໃຫ້ມີການຕິດຕໍ່ຣະຫວ່າງບຸກຄົນຕໍ່ບຸກຄົນ ເພື່ອໃຫ້ເກີດສັມພັນທະພາບຣະຫວ່າງບຸກຄົນສອງຝ່າຍ ຈະເຫັນໄດ້ວ່າຄວາມຄິດສ່ວນຫລາຍໄດ້ຈາງຫາຍໄປ ເພາະວ່າໃນປັດຈຸບັນນີ້ມີວິທີການສົ່ງເງິນຮັບເງິນທີ່ກ້າວຫນ້າ ຈຶ່ງເຮັດໃຫ້ເຮົາຂາດການສັມຜັດຣະຫວ່າງບຸກຄົນ ດັ່ງນັ້ນຜູ້ຖວາຍແລະຜູ້ຮັບການຖວາຍຈຶ່ງບໍ່ໄດ້ມີສັມພັນທະພາບ ຫລືບໍ່ເກີດການຜູກພັນຣະຫວ່າງຄຣິສຈັກທັງສອງຝ່າຍ

## 6. ການຕັກເຕືອນຢ່າງເຂັ້ມແຂງ

ເມື່ອທ່ານໂປໂລໄດ້ກ່າວແລ້ວວ່າທ່ານຍິນດີຫລາຍສັກປານໃດທີ່ຊາວໂກຣິນໂທໄດ້ຣື້ອຟື້ນຄວາມຈົງຮັກພັກດີຕໍ່ທ່ານຂຶ້ນໃຫມ່ ແລະທ່ານໄດ້ຊຸກຊວນເຂົາໃຫ້ເກັບເງິນຖວາຍໃຫ້ສໍາເດັດ ແຕ່ບັດນີ້ຫນ້າປະຫລາດໃຈທີ່ຕໍ່ມາອີກສີ່ບົດເປັນການກ່າວປ້ອງກັນຕົນເອງ ການໂຈມຕີ ແລະການຕັກເຕືອນ ທີ່ທ່ານກ່າວຢ່າງເຂັ້ມແຂງຫນັກແນ່ນເຖິງບາບທີ່ຊາວໂກຣິນໄດ້ເຮັດຢ່າງຣຸນແຮງ (2 ກທ 10:1-13:10)

ໃນບົດເຫລົ່ານີ້ໄດ້ບອກເຖິງເຣື້ອງຂອງທ່ານໂປໂລຫລາຍຢ່າງຫລາຍປະການ ທ່ານຍອມຮັບວ່າຮູບຮ່າງຫນ້າຕາຂອງທ່ານ ແລະຄວາມສາມາດໃນການພູດຂອງທ່ານບໍ່ເປັນທີ່ປະທັບໃຈຄົນ (2 ກທ 10:10) ວິທີເຮັດວຽກຂອງທ່ານຄື ໄປໃນບ່ອນທີ່ຍັງບໍ່ທັນມີຄົນອື່ນໄປປະກາດແລະຕັ້ງຄຣິສຈັກຂຶ້ນໃຫມ່ (2 ກທ 10:15-16) ທ່ານຕ້ອງຊ່ວຍຕົວເອງບ່ອຍ ໆ (ກຈ 18:3) ແລະບໍ່ເຄີຍຮັບການສນັບສນູນຈາກເມືອງໃດທີ່ທ່ານໄປເຮັດວຽກ (2 ກທ 11:7-11) ທີ່ທ່ານເຮັດເຊັ່ນນີ້ເພື່ອປ້ອງກັນບໍ່ໃຫ້ຄົນເຂົ້າໃຈຜິດວ່າທ່ານສົນໃຈໃນເຣື້ອງເງິນທອງ ຄວາມສັດຊື່ແລະການຖວາຍຕົວຂອງທ່ານຕໍ່ພຣະຄຣິສກໍຊັດແຈ້ງຢູ່ໃນລາຍການຂອງການຖືກຂົ່ມເຫັງ ຄວາມຍາກລໍາບາກ ຄວາມທົນທຸກທີ່ທ່ານໄດ້ຮັບ (2 ກທ 11:23-29) ທ່ານໄດ້ກ່າວເຖິງນິມິດທີ່ພຣະເຈົ້າຊົງປະທານໃຫ້ ບໍ່ແມ່ນເພື່ອເປັນເຫດໃຫ້ອວດຕົວ ທີ່ຈິງເພື່ອໃຫ້ທ່ານຖ່ອມຕົວ ພຣະເຈົ້າຊົງປະທານສິ່ງທີ່ທົດລອງກາຍຂອງທ່ານ ຄື "ຫນາມ" ຫລືຄວາມເຈັບປ່ວຍ ແຕ່ພຣະເຈົ້າຊົງປະທານກໍາລັງແກ່ທ່ານເພື່ອຈະທົນແລະເຮັດການຂອງພຣະອົງໄດ້ (2 ກທ 12:1-10) ແມ່ນການອັສຈັນພຣະເຈົ້າກໍຊົງປະທານໃຫ້ທ່ານເຮັດຖ້າມກາງຊາວໂກຣິນໂທ (2 ກທ 12:12) ເມື່ອຊາວໂກຣິນໂທຮູ້ຈັກສິ່ງເຫລົ່ານີ້ແລ້ວ ຊາວໂກຣິນໂທຄວນກັບໃຈເສັຽໃຫມ່ ແລະສະແດງທ່າທີເສັຽໃຫມ່ກ່ອນທີ່ທ່ານມາອີກເທື່ອນຶ່ງ (2 ກທ 12:14-13:10)

ເມື່ອເຮົາສຶກສາອ່ານພຣະທັມຕອນນີ້ກໍມີຄວາມແປກໃຈໃນຄຳເວົ້າຂອງທ່ານໂປໂລ ຈະເຫັນໄດ້ວ່າ ມີຄວາມຮຸນແຮງອີກ ທີ່ຈິງທ່ານໂປໂລຕ້ອງເວົ້າຢ່າງເຂັ້ມແຂງເພື່ອເປັນການກ່າວປ້ອງກັນຕົວຢ່າງຕົງໄປຕົງມາ ແມ່ນໃນບົດກ່ອນທ່ານໂປໂລບັນຍາຍຄືວ່າພີ່ນ້ອງຊາວໂກຣິນໂທໄດ້ກັບໃຈແລະເຊື່ອຟັງແລ້ວ ທ່ານເວົ້າວ່າ "ເຮົາຊື່ນຊົມຍິນດີ ເພາະວ່າເຮົາເຊື່ອໝັ້ນພວກເຈົ້າໄດ້ທຸກສິ່ງ" ( 2 ກທ 7:16) ເຫດທີ່ທ່ານເວົ້າຢ່າງຮຸນແຮງອີກ ຄືດວ່າສີ່ບົດນີ້ເປັນສ່ວນທີ່ຂຽນເວລາດຽວກັນຈົດໝາຍທີ່ທ່ານຂຽນຈາກເມືອງເອເຟໂຊຕອນນີ້ບໍ່ແມ່ນເປັນເຫດການທີ່ເກີດຂຶ້ນ ເມື່ອທ່ານໂປໂລຂຽນຈົດໝາຍໂມທນາພຣະຄຸນສະບັບຫລັງຈາກມາເກໂດເນັຽ ຄືດວ່າເມື່ອເຂົາປະກອບຈົດໝາຍຂອງທ່ານໂປໂລເຂົ້າດ້ວຍກັນ ເຂົາໄດ້ເອົາພຣະທັມຕອນນີ້ (2 ກທ 10:1-13:10) ມາສອດໄວ້ໃນຕອນທ້າຍຂອງພຣະທັມຈົດໝາຍໂກຣິນໂທສະບັບສອງ ເພາະເຂົາໄດ້ພິຈາຣະນາເຫັນເໝາະສົມທີ່ຈະເອົາຂ່າວການເດີນທາງແລະການອອກສັ່ງສອນຂອງທ່ານໂປໂລມາໃສ່ດ້ວຍກັນ ເພື່ອໃຫ້ຮູ້ວ່າທ່ານໄດ້ຮັບໃຊ້ວຽກການຕໍ່ໄປແນວໃດ

ຈາກມາເກໂດເນັຽທ່ານໂປໂລເດີນທາງຕໍ່ໄປເຖິງກຣີກເພື່ອພັກຢູ່ສາມເດືອນ (ກຈ 20:1-3) ທ່ານອາດຈະພັກເຊົາໃນຣະດູໜາວທີ່ນັ້ນກ່ອນທີ່ເດີນທາງໄປຍັງກຸງເຢຣູຊາເລັມ ເພື່ອນຳເອົາເງິນຖວາຍຈາກໂກຣິນໂທແລະຈາກຄຣິສຈັກອື່ນ ໆ ໄປດ້ວຍ ທ່ານຄົງຈະໃຊ້ເວລາສ່ວນຫລາຍຢູ່ກັບພີ່ນ້ອງຊາວໂກຣິນໂທຈົນໄດ້ເກັບເງິນຖວາຍຈົນສຳເຣັດແລ້ວ (ຣມ 15:26) ເຮົາຈະເຫັນໄດ້ຈາກພຣະທັມຈົດໝາຍສອງສະບັບນີ້ວ່າ ໃນເວລາທີ່ເກີດຄວາມຫວຸ້ນວາຍແກ່ພີ່ນ້ອງໃນຄຣິສຈັກໂກຣິນໂທ ທ່ານໂປໂລໄດ້ສະແດງນ້ຳໃຈຂອງສິດຍາພິບາລ ຄວາມສັດຊື່ຂອງທ່ານ ແລະຄວາມເຂົ້າໃຈຢ່າງລຶກຊຶ້ງໃນຂ່າວປະເສີດແລະວຽກການປະກາດສັ່ງສອນທີ່ພຣະເຈົ້າປະທານໃຫ້ເປັນຢ່າງດີ

## 7. ຕອນຈົບຂອງພຣະທັມຈົດໝາຍໂກຣິນໂທສະບັບສອງ

ຄວາມຮັກຂອງພຣະເຈົ້າແລະຄວາມສົນໃຈສ່ວນຕົວຂອງໂປໂລໄດ້ຢູ່ເບື້ອງຫລັງ ທີ່ເຮັດໃຫ້ທ່ານໄດ້ຂຽນຈົດໝາຍເຖິງຄຣິສຕຽນໃນເມືອງໂກຣິນໂທ ທ່ານໄດ້ກ່າວສະແດງຄວາມຮູ້ສຶກນີ້ເປັນເທື່ອສຸດທ້າຍໃນຄຳຕັກເຕືອນແລະຄຳລົງທ້າຍໃນຕອນຈົບ (2 ກທ 13:11-13) ແລະຈົດໝາຍຂອງທ່ານຈົບລົງດ້ວຍຄຳອະທິຖານ "ຂໍໃຫ້ພຣະຄຸນຂອງພຣະເຢຊູຄຣິສເຈົ້າ ຄວາມຮັກຂອງພຣະເຢຊູຄຣິສເຈົ້າ ຄວາມຮັກຂອງພຣະເຈົ້າ ແລະຄວາມຮ່ວມໃຈແຫ່ງພຣະວິນຍານບໍຣິສຸດ ຈົ່ງສະຖິດຢູ່ນຳເຈົ້າທັງຫລາຍທຸກຄົນເທີນ" (2 ກທ 13:14)

ພຣະທັມຈົດໝາຍໂກຣິນໂທທັງສອງສະບັບໄດ້ໃຫ້ຄວາມເຂົ້າໃຈແກ່ເຮົາວ່າ ເຫດການບັນຫາທີ່ເກີດຂຶ້ນໃນຄຣິສຈັກໂກຣິນໂທນັ້ນຍັງມີຢູ່ໃນປັດຈຸບັນ ແລະເກີດຂຶ້ນແກ່ຄຣິສຈັກທົ່ວໄປ ພຣະເຈົ້າໄດ້ໃຊ້ເຫດການທີ່ເກີດຂຶ້ນໃນຄຣິສຈັກໃນເມືອງໂກຣິນໂທເປັນແບບຢ່າງຄຳສອນແກ່ຄຣິສຈັກທັງຫລາຍໃນປັດຈຸບັນ ພຣະວິນຍານບໍຣິສຸດໄດ້ຊົງນຳພາທ່ານໂປໂລໃຫ້ຮັບໃຊ້ຢ່າງສັດຊື່ ດ້ວຍຄວາມຮັກ ຄວາມອົດທົນ ແລະທ່ານໄດ້ຣໍຄອຍເວລາອັນເໝາະສົມທີ່ຈະຄືນໄປຢາມຄຣິສຈັກໂກຣິນໂທເພື່ອການຄືນດີ ແລະກໍ່ໃຫ້ເກີດຄວາມຮັກແພງໃນຄຣິສຈັກຄືນມາອີກ ທ່ານໂປໂລໄດ້ນຳພາໃຫ້ຄຣິສຈັກຕາສວ່າງບໍ່ຫລົງຜິດໄປນຳຜູ້ທີ່ຕໍ່ຕ້ານການຮັບໃຊ້ຂອງທ່ານ ທ່ານໂປໂລກໍບໍ່ໄດ້ທໍ້ໃຈຫລືເຊົາການຮັບໃຊ້ພຣະເຈົ້າ ໃນປັດຈຸບັນນີ້ຄຣິສຈັກມີຜູ້ນຳຫລາຍແບບແລະບາງເທື່ອອາດເກີດການໂຕ້ຖຽງຜິດໃຈກັນ ຜູ້ນຳທີ່ດີທີ່ມີຄວາມເຊື່ອໃນພຣະເຈົ້າແທ້ ຄວນຈະສງົບລົງໂດຍການອ້ອນວອນ ແລະຂໍການຊົງນຳພາຈາກພຣະເຈົ້າ ໂດຍຕັ້ງໝັ້ນຄົງໃນພຣະຄຳຂອງພຣະ

ເຈົ້າຄື "ບັດນີ້ຍັງຕັ້ງຢູ່ສາມສິ່ງ ຄືຄວາມເຊື່ອ ຄວາມຫວັງໃຈ ແລະຄວາມຮັກ ແຕ່ສິ່ງໃຫຍ່ກວ່າແມ່ນ ຄວາມຮັກ" (1 ກທ 13:13) ຂໍພຣະເຈົ້າຊົງນຳທ່ານທັງຫລາຍໃນການເປັນຜູ້ຮັບໃຊ້ໃຫ້ຕັ້ງໝັ້ນຄົງຢູ່ ໂດຍຄວາມສັດຊື່ແລະບໍຣິສຸດໃຈໃນພຣະເຈົ້າເທີນ ອາເມນ

**ຈົ່ງເອົາສິ່ງທີ່ທ່ານໄດ້ສຶກສາຈາກຂ້າງເທິງເຮັດບົດຝຶກຫັດຂໍ້ທີຫົກແລະເຈັດ**


Black Sea
ທະເລດຳ
ຟີລິບປອຍ
Philippi
ເທຊະໂລນິກ
Thessalonica
Beroea
ເບຣອຍອາ
ໂທອາດ
Troas
ເອເຟໂຊ
Ephesus
Miletus
ມີເລໂຕ
ເອແທນ
Athens
Corinth
ໂກຣິນໂທ
Mediterranean Sea
ທະເລເມດີເຕີເຣນຽນ
CRETE
ເມືອງຕ່າງ ໆ ທີ່ທ່ານໂປໂລສອນ
ຄຣິສຈັກທີ່ທ່ານໂປໂລກໍ່ຕັ້ງ
0
100 mi.

# ບົດທີ 5

# ຈົດໝາຍຂອງທ່ານໂປໂລ ເຖິງຄຣິສຈັກໃນແຂວງຄາລາເຕັຽ
## The Letter of Paul to the Galatians

### ຂໍ້ໄຂຈົດໝາຍພຣະທັມຄາລາເຕັຽ

> *ຂ້າພະເຈົ້າບໍ່ໄດ້ເຮັດໃຫ້ພຣະຄຸນຂອງພຣະເຈົ້າເປັນໂມຄະ ເພາະວ່າຖ້າຄວາມຊອບທັມໄດ້ມາໂດຍທາງພຣະບັນຍັດແລ້ວ ພຣະຄຣິສກໍຊົງສິ້ນພຣະຊົນໂດຍບໍ່ມີປໂຍດ (ຄທ 2:21) ເພາະວ່າເຈົ້າທັງຫລາຍກໍເປັນບຸດຂອງພຣະເຈົ້າ ຮ່ວມໃນພຣະເຢຊູຄຣິສໂດຍທາງຄວາມເຊື່ອ ດ້ວຍວ່າຝ່າຍພວກເຈົ້າຄົນໃດທີ່ໄດ້ຮັບບັບຕິສມາໃນພຣະຄຣິສແລ້ວຄົນນັ້ນກໍໄດ້ຫົ່ມຊີວິດພຣະຄຣິສ ຈະບໍ່ເປັນຊາດຢິວຫລືຄົນຕ່າງຊາດ ຈະບໍ່ເປັນຂ້ອຍຂ້າຫລືອິສຣະຈະບໍ່ເປັນຊາຍຫລືຍິງ ເພາະວ່າເຈົ້າທັງຫລາຍເປັນອັນນຶ່ງອັນດຽວກັນໃນພຣະເຢຊູຄຣິສ (ຄທ 3:26-28) ເພື່ອເສຣີພາບນັ້ນແຫລະ ພຣະຄຣິສຈຶ່ງໄດ້ຊົງໂຜດໃຫ້ເຮົາທັງຫລາຍເປັນອິສຣະ ເຫດສະນັ້ນ ຈົ່ງຕັ້ງໝັ້ນຄົງຢູ່ ແລະຢ່າຍອມເຂົ້າທຽມແອກເປັນຂ້ອຍຂ້າອີກ (ຄທ 5.1)*

ພຣະທັມຄາລາເຕັຽໄດ້ຊື່ວ່າເປັນ "ທັມມະນູນແຫ່ງເສຣີພາບຄຣິສຕຽນ" ທ່ານໂປໂລຍືນຫຍັດວ່າມະນຸດຈະຄືນດີກັບພຣະເຈົ້າດ້ວຍຄວາມເຊື່ອວາງໃຈໃນພຣະຄຣິສເທົ່ານັ້ນ ບໍ່ແມ່ນດ້ວຍການປະພຶດຫລືການເຮັດສາສນາພິທີຕ່າງ ໆ (ຄທ 2:16, 3:24-25, 5:1, 6:12-15) ຄວາມໝັ້ນໃຈໃນຄວາມເຊື່ອຂອງທ່ານໂປໂລເຮັດໃຫ້ຄຣິສຕຽນເປັນສາສນາສາກົນ ມີເສຣີພາບຈາກສາສນາຢິວ ບໍ່ແມ່ນເປັນນິກາຍພຣະເຢຊູໃນສາສນາຢິວ ນີ້ແຫລະຄືຄວາມສຳຄັນຂອງພຣະທັມຄາລາເຕັຽ ທີ່ມີບົດບາດແລະຜົນຕໍ່ຄຣິສຈັກສມັຍແຣກ ແລະຕໍ່ຜູ້ນຳຄຣິສຕຽນຕລອດປວັດສາດຄຣິສຈັກ

### I. ການເຜີຍແຜ່ຂ່າວປະເສີດຂອງພຣະເຢຊູຄຣິສໄປຍັງຄົນຕ່າງຊາດ

ທ່ານໂປໂລເປັນບຸກຄົນນຶ່ງທີ່ມີຄວາມສຳຄັນໃນການປ່າວປະກາດຂ່າວປະເສີດ ເປັນເພາະຄວາມເຊື່ອອັນລຶກຊຶ້ງ ແລະຄວາມຮ້ອນໃຈໃນການປະກາດຂ່າວຂອງທ່ານ ແລະຄວາມເຂັ້ມແຂງທີ່ທ່ານໄດ້ສະແດງອອກໃນການດຳເນີນຊີວິດ ດ້ວຍຄວາມສາມາດແລະຄວາມຮ້ອນຮົນເຮັດ ໃຫ້ທ່ານໄດ້ເປັນຜູ້ນຳທີ່ເດັ່ນກວ່າໝູ່ ໃນການປ່າວປະກາດຂ່າວປະເສີດ ໃນຕອນທຳອິດຂນະທີ່ທ່ານໂປໂລຍັງບໍ່ເປັນຄຣິສຕຽນທ່ານເປັນຜູ້ຕໍ່ຕ້ານຄວາມເຊື່ອຂອງຄຣິສຕຽນ ທ່ານໂປໂລເປັນຜູ້ທີ່ໄດ້ຊື່ວ່າ "ມີໃຈຮ້ອນຮົນຫລາຍກວ່າໝູ່" (ຄທ 1:14) ແລະເປັນຜູ້ນຳໃນການຂົ່ມເຫັງສາວົກຂອງພຣະເຢຊູ ແຕ່ວ່າເມື່ອທ່ານໄດ້ກັບໃຈໃໝ່ເປັນຄຣິສຕຽນແລ້ວ "ໃນບັດດຽວນັ້ນທ່ານໄດ້ປະກາດເຣື່ອງພຣະເຢຊູໃນໂຮງທັມເທສນາ" (ກຈ 9:20)

ສະແດງວ່າທ່ານມີໃຈຮ້ອນຮົນບໍ່ໄດ້ຖືສິ່ງນຶ່ງອັນໃດ ແຕ່ໄດ້ປ່າວປະກາດຂ່າວປະເສີດຂອງພຣະເຢຊູຄຣິສ ທັນທີສະແດງໃຫ້ເຫັນວ່າ ຂ່າວປະເສີດມີຄວາມສຳຄັນແລະມີຄວາມຊື່ນຊົມຍິນດີຕໍ່ຊີວິດທ່ານໂປໂລ ເຮັດໃຫ້ທ່ານຕ້ອງປ່າວປະກາດໂດຍດ່ວນ ທ່ານໄດ້ຫາໂອກາສໃນການປ່າວປະກາດຂ່າວປະເສີດສະເມີ ສິ່ງຕ່າງ ໆ ທີ່ໄດ້ກ່າວມານີ້ສະແດງໃຫ້ເຮົາເຫັນວ່າ ທ່ານໂປໂລເປັນບຸກຄົນທີ່ມີຄວາມສຳຄັນໃນການເຜີຍແຜ່ຂ່າວປະເສີດໃຫ້ກວ້າງຂວາງອອກໄປຕາມພຣະມະຫາບັນຊາຂອງພຣະເຢຊູຄຣິສ

ທ່ານໂປໂລເປັນຄົນສຳຄັນຄົນນຶ່ງຂອງໂລກ ສິ່ງທີ່ເຮັດໃຫ້ທ່ານເປັນບຸກຄົນສຳຄັນເພາະທ່ານໄດ້ມີໃຈກ້າຫານໃນການປະກາດຂ່າວປະເສີດແກ່ຄົນຕ່າງຊາດ (ໃນສມັຍນັ້ນເປັນຊາວກຣີກ) ນອກຈາກທ່ານໂປໂລແລ້ວ ຍັງມີຄົນອື່ນ ໆ ທີ່ມີຄວາມຄິດແລະໄດ້ມີຄວາມສຳຄັນໃນການປ່າວປະກາດຂ່າວປະເສີດແກ່ຄົນຕ່າງຊາດ ບຸກຄົນສຳຄັນໃນປວັດສາດຄຣິສຈັກຍຸກແຣກຄື ທ່ານຊະເຕຟາໂນ ທ່ານໄດ້ຕຽມທາງໄວ້ສຳລັບການປ່າວປະກາດຂ່າວປະເສີດແກ່ຄົນໃນໂລກກວ້າງ ເພື່ອໃຫ້ຄົນຕ່າງຊາດໄດ້ຮັບຂ່າວປະເສີດຕາມນ້ຳພຣະທັຍພຣະເຈົ້າ ທ່ານຊະເຕຟາໂນເຫັນວ່າ ພຣະວິຫານແລະພຣະທັມບັນຍັດຂອງໂມເຊບໍ່ແມ່ນທາງທີ່ແທ້ຈິງ ທີ່ຈະນຳໄປສູ່ຄວາມຣອດພົ້ນ (ກຈ 6:13, 14, 7:48, 53) ຄວາມຄິດເຊັ່ນນີ້ເປັນການເປີດໃຈກວ້າງສຳລັບຄົນຕ່າງຊາດທີ່ຈະມາເຖິງຄວາມຣອດພົ້ນ ບໍ່ແມ່ນພຽນແຕ່ຄົນຢິວເທົ່ານັ້ນ ທີ່ມາເຖິງຄວາມຣອດພົ້ນ ນອກນັ້ນຍັງມີທ່ານຟີລິບປ່າວປະກາດຂ່າວປະເສີດໃນແຂວງຊາມາເຣັຽແລະເອທິໂອເປັຽ (ກຈ 8:5-40) ສ່ວນທ່ານເປໂຕໄດ້ຮັບການຊົງນຳຂອງພຣະວິນຍານບໍຣິສຸດໃຫ້ເທສນາແກ່ທ່ານໂກເນລີໂອແລະຄົວເຮືອນຂອງທ່ານຊຶ່ງເປັນຄົນຕ່າງຊາດ ແມ່ນວ່າຈະເປັນການຂັດຕໍ່ຄວາມຮູ້ສຶກຂອງທ່ານ ແຕ່ວ່າທ່ານເປໂຕໄດ້ປະຕິບັດຈົນເກີດໝາກຜົນຕາມການນຳພາຂອງພຣະວິນຍານບໍຣິສຸດ (ກຈ 10:44-48) ການປະກາດຂ່າວປະເສີດມີຄວາມເຂັ້ມແຂງຂຶ້ນຫລາຍທີ່ສຸດກໍເບິ່ງໄດ້ຈາກຄຣິສຈັກທີ່ເມືອງອັນຕິໂອເຂັຽໃນຊີເຣັຽ ທີ່ນັ້ນມີທັງຊາວຢິວແລະຊາວຕ່າງຊາດທີ່ຕ້ອນຮັບພຣະເຢຊູຄຣິສ ພວກເຂົາຢູ່ກັນຢ່າງສັນພີນ້ອງໂດຍບໍ່ຕ້ອງໃຫ້ພວກຕ່າງຊາດຮັກສາພິທີຕາມຮີດຄອງຂອງຊາວຢິວ ສະແດງວ່າເຣື່ອງການປ່າວປະກາດແກ່ຄົນຕ່າງຊາດນີ້ເກີດຂຶ້ນກ່ອນໜ້າທ່ານໂປໂລຈະເປັນສ່ວນນຶ່ງຂອງຄຣິສຈັກໃນອັນຕິໂອເຂັຽ (ກຈ 11:19-26) ການທີ່ຂ່າວປະເສີດແຜ່ໄປຍັງຄົນຕ່າງຊາດເຊັ່ນນີ້ເປັນການບຸກເບີກຂອງພຣະເຈົ້າໂດຍພຣະວິນຍານບໍຣິສຸດ ອັນເປັນການຕຽມພື້ນທາງໃຫ້ກັບທ່ານໂປໂລໃນການປະກາດຂ່າວປະເສີດໃຫ້ກວ້າງຂວາງອອກໄປສູ່ຄົນທຸກຊາດ

ທ່ານໂລໂປໄດ້ປ່າວປະກາດຂ່າວເສີດຂອງພຣະເຢຊູຄຣິສອອກໄປຢ່າງກວ້າງຂວາງ ທ່ານເປັນຜູ້ນຳຄົນຕ່າງຊາດໃຫ້ເປັນຄຣິສຕຽນຫລາຍກວ່າໝູ່ໃນສມັຍຂອງທ່ານ ເທື່ອທຳອິດທ່ານໂປໂລໄດ້ໄປນຳທ່ານບາຣະນາບາ ຫລັງຈາກນັ້ນທ່ານໄດ້ບຸກເບີກດ້ວຍການນຳພາຂອງພຣະວິນຍານບໍຣິສຸດ ທ່ານບາຣະນາບາກັບທ່ານໂປໂລນັບວ່າເປັນຜູ້ນຳໃນພວກທີ່ຮ້ອງວ່າ "ຜູ້ປະກາດພຣະທັມແລະອາຈານ" ທີ່ຄຣິສຈັກອັນຕິໂອເຂັຽໃນເມືອງຊີເຣັຽໄດ້ສົ່ງໃຫ້ທ່ານໂປໂລແລະຄົນອື່ນ ໆ ອອກໄປປ່າວປະກາດຂ່າວປະເສີດ (ກຈ 13:1-3) ກອງປະກາດຂ່າວປະເສີດໄດ້ເດີນທາງອອກໄປປ່າວປະກາດໂດຍບໍ່ຮູ້ຈັກວ່າ ການປ່າວປະກາດຂອງພວກເຂົານັ້ນຈະມີຄວາມສຳຄັນຕໍ່ຄົນຕ່າງຊາດ ແລະຈະເປັນສິ່ງທີ່ຍິ່ງໃຫຽ່ທີ່ສຸດໃນປວັດສາດຄຣິສຈັກ ເມື່ອພວກເຂົາໄປປະກາດຍັງຫົວເມືອງຕ່າງ ໆ ກັບຄົນຢິວ ກໍໄດ້ຮັບການປະຕິເສດຢ່າງດຸເດືອດ ພວກເຂົາໄດ້ໄປປະກາດກັບຄົນຕ່າງຊາດ ປາກົດວ່າພວກຄົນຕ່າງຊາດໄດ້ຟັງແລະຕ້ອນຮັບພຣະເຢຊູຄຣິສດີຫລາຍກວ່າຄົນຢິວ ເມື່ອການປ່າວປະກາດຂ່າວປະເສີດແກ່ຄົນຕ່າງຊາດໄດ້ຜົນ ເຮັດໃຫ້ມີພວກຜູ້ປະກາດຫັນໄປປ່າວປະກາດແກ່ຄົນຕ່າງຊາດຫລາຍຂຶ້ນ ຈົນມີຈຳນວນທີ່ຄົນເຊື່ອຫລາຍຂຶ້ນ

ດ້ວຍເຫດນີ້ຄຣິສຈັກທີ່ເກີດຂຶ້ນມາຈຶ່ງເປັນຂອງຄົນຕ່າງຊາດເປັນສ່ວນຫລາຍ ຖ້າຄົນຕ່າງຊາດເມື່ອເປັນຄຣິສຕຽນແລ້ວຮັບພຣະບັນຍັດຂອງພວກຢິວທັນທີ ແລະປະຕິບັດຕາມສາສນາພິທີຕ່າງ ໆ ຂອງພວກຢິວກໍຈະບໍ່ມີບັນຫາອັນໃດ ແຕ່ວ່າຄຣິສຕຽນຕ່າງຊາດບໍ່ໄດ້ເຂົ້າມາຖືພຣະບັນຍັດຕາມພວກຢິວ ເຮັດໃຫ້ພວກຄຣິສຕຽນຢິວເກີດຄຳຖາມວ່າ ຖ້າຄົນຕ່າງຊາດບໍ່ຍອມຖືຮັກສາທັມບັນຍັດແລະຣິດຄອງຢ່າງຊາວຢິວເຂົາຈະເປັນຄຣິສຕຽນທີ່ແທ້ໄດ້ແນວໃດ ເພາະວ່າທ່ານໂປໂລເປັນນັກເທສທີ່ເດັ່ນທີ່ສຸດໃນຫມູ່ຄົນຕ່າງຊາດໃນເວລານັ້ນ ດັ່ງນັ້ນການໂຈມຕີຈຶ່ງຕົກຫນັກຢູ່ທີ່ຕົວທ່ານ ເຫດການນີ້ໄດ້ເກີດຂຶ້ນເມື່ອພວກຄຣິສຕຽນຢິວເດີນທາງຈາກແຂວງຢູດາຍມາອັນຕິໂອເຊັຽໃນຊີເຣັຽສອນວ່າ "ຖ້າທ່ານທັງຫລາຍບໍ່ຮັບພິທີຕັດຕາມຣິດຄອງຂອງໂມເຊ ພວກທ່ານຈະພົ້ນບໍ່ໄດ້" (ກຈ 15:1)

ບັນຫານີ້ໄດ້ເປັນເຫດໃຫ້ເກີດການປະຊຸມສະພາໃນກຸງເຢຣູຊາເລັມ (ໃນ ຄ.ສ. 50) ໃນທີ່ສຸດບັນດາພວກອັຄສາວົກໄດ້ຕົກລົງກັນວ່າ ຄົນຕ່າງຊາດທີ່ເປັນຄຣິສຕຽນບໍ່ຈຳເປັນຕ້ອງຮັກສາພຣະບັນຍັດແລະຣິດຄອງຂອງຊາວຢິວ ແຕ່ເພື່ອຈະບໍ່ເປັນເຫດໃຫ້ຄຣິສຕຽນຢິວຂັດໃຈ ຈຶ່ງຂໍຮ້ອງໃຫ້ພວກຄຣິສຕຽນທີ່ເປັນຄົນຕ່າງຊາດຖືຮັກສາຂໍ້ບັງຄັບບາງປະການ ເຣື່ອງໃຫຍ່ກໍຄືອາຫານການກິນ ຕົວຢ່າງເຊັ່ນ ພວກຢິວບໍ່ໄດ້ປະກອບອາຫານດ້ວຍເນື້ອຫມູ ດັ່ງນັ້ນຕ້ອງການໃຫ້ຄົນຕ່າງຊາດບໍ່ທານຫມູ ເພື່ອເຫັນແກ່ຄວາມເຊື່ອຂອງຄຣິສຕຽນຢິວ ແຕ່ການປະຕິບັດນີ້ບໍ່ໄດ້ມີຄວາມສຳຄັນກ່ຽວກັບຄວາມຣອດພົ້ນ ຫລັງຈາກນັ້ນເບິ່ງຄືກັບວ່າບັນຫານີ້ໄດ້ຕົກລົງທຳຄວາມເຂົ້າໃຈໄດ້ (ກຈ 15:1-29)

ແຕ່ການຜິດຖຽງກັນຍັງດຳເນີນຕໍ່ໄປ ພວກຢິວທີ່ຕໍ່ຕ້ານຄຣິສຕຽນຕ່າງຊາດບໍ່ໄດ້ຢຸດໃນການໂຈມຕີຕ້ອງການຮຽກຮ້ອງໃຫ້ຄຣິສຕຽນທຸກຄົນຮັກສາບັນຍັດແລະຣິດຄອງຕາມຄົນຢິວ ພວກເຂົາໄດ້ຕິດຕາມທ່ານໂປໂລເຂົ້າໄປໃນທ້ອງຖິ່ນທີ່ທ່ານໂປໂລທຳການປ່າວປະກາດຂ່າວປະເສີດ ໃນທີ່ສຸດໄດ້ປະທະກັນໃນແຂວງຄາລາເຕັຽ ທີ່ຢູ່ໃນຕອນກາງຂອງເອເຊັຽນ້ອຍ ມີສີ່ຫົວເມືອງຄື ອັນຕິໂອເຊັຽ ອີໂກນີອັນ ລີຊະທາ ແລະເດຣະເບ ເປັນເມືອງທີ່ທ່ານໂປໂລໄດ້ກໍ່ຕັ້ງຄຣິສຈັກໄວ້ ເມື່ອທ່ານໂປໂລອອກປະກາດຂ່າວປະເສີດໃນເທື່ອແຮກ (ກຈ 13, 14) ພວກຢິວໄດ້ຕໍ່ຕ້ານທ່ານໂປໂລຢ່າງແຂງແຮງຕັ້ງແຕ່ຕອນທຳອິດແລ້ວ ທ່ານຖືກຕຳນິຕິຕຽນ ຖືກຂັບໄລ່ ແລະເອົາຫີນຂວ້າງ ໃນເວລານີ້ພວກຢິວທີ່ເປັນຄຣິສຕຽນໃຫມ່ ທີ່ຮ້ອນຮົນໃນພຣະບັນຍັດໄດ້ເດີນທາງມາສົມທົບ ເພື່ອພຍາຍາມທຳລາຍຫລັກຄຳສອນຂອງທ່ານໂປໂລ ແລະຕ້ອງການເອົາຊຸມະຄຣິສຈັກໃຫ້ຫັນກັບມາຕາມແນວຄວາມຄິດຂອງພວກຢິວ

## II. ຣິດຄອງຢິວກັບຂ່າວປະເສີດຂອງພຣະເຢຊູຄຣິສ

ຄຳສອນຂອງທ່ານໂປໂລໃນເຣື່ອງຄວາມຣອດພົ້ນໂດຍຂ່າວເສີດຂອງພຣະເຢຊູຄຣິສ ເປັນສຳສອນທີ່ກະທົບກະເທືອນຕໍ່ຄວາມເຊື່ອຂອງພວກຖືລັດທິຢິວນິຍົມຊຶ່ງເຂົາໄດ້ຮັບໄວ້ເປັນມໍຣະດົກມານານແລ້ວ ຖ້າເຮົາໄດ້ຮຽນຮູ້ແລະມີຄວາມເຂົ້າໃຈ ກໍຈະເຮັດໃຫ້ເຮົາມີພື້ນຖານຄວາມເຂົ້າໃຈພຣະທັມຄາລາເຕັຽຫລາຍຍິ່ງຂຶ້ນ ແລະມີຄວາມເຂົ້າໃຈແຈ້ງຫລາຍກວ່ານັ້ນ ວ່າຈົດຫມາຍສະບັບນີ້ມີຄວາມຫມາຍສຳລັບເຮົາແນວໃດ

ພວກຢິວທີ່ເປັນສັດຕູຕ້ອງການພິສູດໃຫ້ເຫັນວ່າ ທ່ານໂປໂລບໍ່ໄດ້ຮຽກຮ້ອງໃຫ້ຄົນຕ່າງຊາດເປັນຢິວຢ່າງເຕັມຕົວເສັຽກ່ອນ ແລ້ວຈຶ່ງໃຫ້ເປັນຄຣິສຕຽນ ເມື່ອທ່ານໂປໂລປະກາດຂ່າວປະເສີດ ທ່ານໄດ້ຂໍໃຫ້ຜູ້ຟັງທັງຄົນຢິວແລະຄົນຕ່າງຊາດໃຫ້ຫັນຈາກຄວາມຜິດບາບທັງສິ້ນ ແລະມີຄວາມເຊື່ອຢ່າງເຕັມບໍຣິບູນໃນພຣະເຢຊູຄຣິສ ພຣະອົງຜູ້ຊົງນຳການໄຖ່ບາບຂອງພຣະເຈົ້າມາສູ່ມະນຸດ ທ່ານໂປໂລຂໍໃຫ້ດຳເນີນຊີວິດດ້ວຍຄວາມເຊື່ອໃນພຣະພຣະເຢຊູແລະມີຄວາມຮັກໃນເພື່ອນມະນຸດ ການດຳເນີນຊີວິດຄຣິສຕຽນກໍໂດຍຣິດ

ເດດພຣະວິນຍານຂອງພຣະເຈົ້າທີ່ຊົງປະທານໃຫ້ ພວກເຂົາທີ່ເປັນຄຣິສຕຽນຈະປະຕິບັດຕາມຮີດຄອງຂອງພວກເຂົາຕໍ່ໄປໄດ້ ຕາບໃດທີ່ການກະທຳນັ້ນບໍ່ທຳລາຍມິດຕພາບຂອງຄຣິສຈັກ ແມ່ນຕົວຂອງທ່ານໂປໂລເອງກໍຍັງເຮັດຕາມຮີດຂອງເດີມຢູ່ສະເໝີ ແຕ່ທ່ານໂປໂລບໍ່ໄດ້ຮ້ອງຂໍໃຫ້ຄົນຕ່າງຊາດເຮັດຕາມ

ໃນເມື່ອຄຳສອນຂອງທ່ານໂປໂລບໍ່ໄດ້ຮ້ອງຂໍໃຫ້ຄົນຕ່າງຊາດມາຖືຮີດຄອງຢິວກ່ອນ ກໍເປັນການຂັດຕໍ່ຄວາມເຊື່ອຖືຂອງພວກຢິວ ເພາະພວກຢິວຖືວ່າ ອິສຣາເອລເປັນຊາດທີ່ພຣະເຈົ້າໄດ້ຊົງເລືອກສັນ ພຣະເຈົ້າໄດ້ປະທານພຣະເຢຊູເປັນພຣະເມຊີຢາ ທີ່ເປັນຂອງປະທານອັນລ້ຳຄ່າແກ່ມະນຸດ ພວກເຂົາໃຫ້ຄວາມນັບຖືແກ່ພຣະເຢຊູຄຣິສ ຖ້າພຣະເຢຊູຄຣິສຊົງເປັນພຣະເມຊີຢາ ພຣະອົງຈະຄອບຄອງຊົນຊາດຢິວ ດັ່ງນັ້ນ ພວກເຂົາຈຶ່ງມີຄວາມຄິດວ່າ ຜູ້ນຶ່ງຜູ້ໃດທີ່ເປັນຄຣິສຕຽນຈະຕ້ອງເຂົ້າເປັນຊົນຊາດຂອງພຣະເຈົ້າ ຄືເປັນຄົນຢິວ ການເປັນຄົນຢິວນັ້ນຈະຕ້ອງຜ່ານພິທີຕັດ ເພາະເປັນພິທີທີ່ພຣະເຈົ້າປະທານໃຫ້ແກ່ອິສຣາເອລທີ່ເປັນຊົນຊາດຂອງພຣະອົງ ເພື່ອແຍກພວກເຂົາອອກຈາກຊົນຊາດອື່ນ ໆ ການເປັນຊົນຊາດຢິວຕ້ອງປະຕິບັດຕາມພຣະບັນຍັດ ຖືເທສກາລລຽງອັນມີຂໍ້ຜູກພັນກ່ຽວກັບອາຫານການກິນແລະການດື່ມ ເມື່ອພວກຢິວພົບວ່າໂປໂລເປີດໃຈກວ້າງສຳລັບຄົນຕ່າງຊາດໃນເຣື່ອງຕ່າງ ໆ ກໍເຮັດໃຫ້ພວກຢິວຍອມຮັບບໍ່ໄດ້

ຄວາມເຂົ້າໃຈຜິດຂອງພວກຄົນຢິວທີ່ຕ້ອງການບັງຄັບຄົນຕ່າງຊາດໃຫ້ມາເປັນຢິວກ່ອນນັ້ນເປັນເຫດໃຫ້ນຳການຕໍ່ຕ້ານມາສູ່ທ່ານໂປໂລ ພວກຢິວໄດ້ຕັ້ງອົກຕັ້ງໃຈຕໍ່ຕ້ານທ່ານໂປໂລ ຄືກັບທີ່ທ່ານໂປໂລໄດ້ເຄີຍຕໍ່ຕ້ານຄຣິສຕຽນໃນສມັຍທີ່ທ່ານຍັງບໍ່ທັນກັບໃຈເປັນຄຣິສຕຽນ ພວກຢິວເຊື່ອວ່າ ເປັນໜ້າທີ່ຂອງເຂົາທີ່ຕ້ອງການບອກເພື່ອຍັບຍັ້ງທ່ານໂປໂລ ແລະໃຫ້ພວກທີ່ຕິດຕາມທ່ານໂປໂລຮູ້ວ່າເຂົາຄິດຜິດ ແລະນີ່ເປັນສິ່ງທີ່ພວກຢິວໄດ້ພຍາຍາມບອກກັບຊາວຄາລາເຕັຽ ນັບຕັ້ງແຕ່ເລີ້ມຕົ້ນຈົນສິ້ນສຸດຊີວິດແຫ່ງການຮັບໃຊ້ຂອງທ່ານໂປໂລ ມີຜູ້ທີ່ຕ້ານທ່ານແບບນີ້ຢູ່ຮອບດ້ານ ຈຶ່ງມີຜູ້ກ່າວວ່າພຣະທັມຄາລາເຕັຽນີ້ ຄືກັບດາບທີ່ທ່ານໂປໂລແກວ່ງຢູ່ໃນມືຂອງທ່ານເພື່ອປ້ອງກັນຕົວ ການກ່າວຫາມີເຣື່ອງສຳຄັນດັ່ງຕໍ່ໄປນີ້

**ປະການທຳອິດ** ເຂົາໄດ້ອິງໃສ່ຕົວທ່ານໂປໂລ ອ້າງວ່າທ່ານໂປໂລບໍ່ແມ່ນ**ອັຄສາວົກ**ທີ່ແທ້ຈິງທ່ານໂປໂລບໍ່ແມ່ນຄົນນຶ່ງໃນອັຄສາວົກສິບສອງຄົນ ທ່ານບໍ່ໄດ້ຢູ່ຮ່ວມຮັບໃຊ້ກັບພຣະເຢຊູຄຣິສໃນກະລີລາຍແລະບໍ່ໄດ້ໄປກຸງເຢຣູຊາເລັມກັບພຣະເຢຊູໃນອາທິດສຸດທ້າຍທີ່ພຣະອົງຢູ່ໃນໂລກນີ້ ເຂົາອ້າງວ່າຫລັກການເປັນອັຄສາວົກມີສອງປະການ ຄື

(1) ຈະຕ້ອງເປັນຜູ້ທີ່ຕິດຕາມພຣະເຢຊູຄຣິສມາແຕ່ເດີມ ໂດຍການຊົງເອີ້ນຂອງພຣະອົງ

(2) ຈະຕ້ອງເປັນຜູ້ທີ່ຮູ້ເຫັນແລະມີປະສົບການກັບການເປັນຂຶ້ນມາຈາກຄວາມຕາຍຂອງພຣະເຢຊູຄຣິສໃນສີ່ສິບວັນ ແລະສິ່ງສະເດັດພຣະເຢຊູຄຣິສຂຶ້ນສູ່ສວັນ

ດັ່ງນັ້ນພວກຄຣິສຕຽນຢິວຈຶ່ງອ້າງວ່າ ທ່ານໂປໂລຈຶ່ງບໍ່ມີສິດທິອຳນາດຂອງອັຄສາວົກ ທີ່ຈະບອກຄຣິສຈັກເຖິງຄວາມໝາຍຂອງຂ່າວປະເສີດ ເພາະຄຳສອນຂອງທ່ານໂປໂລນັ້ນຕ້ອງອາສັຍພວກອັກສາວົກຮຸ້ນແຮກ ຄວາມຈິງອີກປະການນຶ່ງທີ່ກ່ຽວຂ້ອງກັບຂໍ້ນີ້ທີ່ພວກເຂົາຕໍ່ຕ້ານທ່ານໂປໂລຄື ທ່ານໂປໂລເລີ້ມຕົ້ນເຂົ້າມາກ່ຽວຂ້ອງກັບຄຣິສຕຽນໃນຖານະຂອງຜູ້ຂົ່ມເຫັງແລະຂ້າຢ່າງໂຫດຮ້າຍ ເຄີຍມີຄວາມມຸ່ງໝາຍທີ່ຈະທຳລາຍຄຣິສຕຽນໃຫ້ສູນສິ້ນໄປ (ຄຕ 1:13, 23) ສິ່ງເຫລົ່ານີ້ເປັນສິ່ງທີ່ເຮັດໃຫ້ບໍ່ໄວ້ວາງໃຈທ່ານແລະເກີດການໂຈມຕີທ່ານ ທ່ານໂປໂລບໍ່ເຄີຍປະຕິເສດເຫດການໃນອາດີດທີ່ເກີດຂຶ້ນກັບຊີວິດຂອງທ່ານ<u>ແຕ່ບັດນີ້ທ່ານໄດ້ກັບໃຈບັງເກີດໃໝ່ແລ້ວ</u> ທ່ານໂປໂລຊີ້ໃຫ້ເຫັນວ່າ ແທ້ທີ່ຈິງນັ້ນການເປັນອັຄສາວົກຂອງທ່ານສຳຄັນແລະຍິ່ງໃຫຍ່ ເພາະມະນຸດບໍ່ໄດ້ເປັນຜູ້ທີ່ແຕ່ງຕັ້ງທ່ານ ຫລືມະນຸດເປັນຕົວແທນແຕ່ງຕັ້ງທ່ານແຕ່ວ່າ<u>ພຣະເຢຊູຄຣິສແລະພຣະບິດາເຈົ້າເປັນຜູ້ຊົງແຕ່ງຕັ້ງ</u> (ຄຕ 1:1) ແລະການແຕ່ງຕັ້ງໃຫ້ເປັນອັຄສາວົກຂອງທ່ານນີ້ ໄດ້ຮັບການຮັບຮອງຈາກອັຄສາວົກແລະຜູ້ນຳຂອງຄຣິສຈັກ (ຄຕ 2:8-10) ດັ່ງນັ້ນ

ທ່ານຈຶ່ງໄດ້ປະກາດໃຫ້ຮູ້ວ່າ ພຣະເຈົ້າເປັນຜູ້ແຕ່ງຕັ້ງແລະມະນຸດໄດ້ຮັບຮອງຕົວທ່ານ

**ປະການທີ່ສອງ** ພວກທີ່ຕໍ່ຕ້ານທ່ານກ່າວຫາວ່າ ຂ່າວປະເສີດທີ່ທ່ານປະກາດບໍ່ແມ່ນເປັນຂ່າວປະເສີດທີ່ແທ້ຈິງ ໃນພຣະຄັມພີພາກພັນທະສັນຍາເດີມພຣະເຈົ້າຊົງປະທານທັມບັນຍັດໃຫ້ເປັນມາຕາຖານອັນຕລອດໄປ ບໍ່ມີໃຜຈະມາເລີກລົ້ມເສັຽໄດ້ ພຣະທັມບັນຍັດໃຫ້ຜູ້ຊາຍທຸກຄົນທີ່ເປັນຊົນຊາດຂອງພຣະເຈົ້າຕາມພັນທະສັນຍາໂດຍຮັບພິທີຕັດ (ປຖກ 17:9-14) ເພື່ອໃຫ້ເປັນເຄື່ອງໝາຍ ໃຫ້ຄົນຢິວຖືເທສການລຣັ້ງບາງຢ່າງແລະຖືພິທີກັມທາງສາສນາອື່ນ ໆ ອີກ ຜູ້ທີ່ຈະເປັນຊົນຊາດຂອງພຣະເຈົ້າເຂົາຈະຕ້ອງຮັກສາພຣະບັນຍັດເຫລົ່ານີ້ ເຫດສະນັ້ນຄຣິສຕຽນທຸກຄົນຕ້ອງຖືພຣະບັນຍັດ ເບິ່ງດູຄືກັບວ່າຕອນທໍາອິດພວກຢິວບໍ່ໄດ້ຮຽກຮ້ອງໃຫ້ເຮັດຫລາຍປານນີ້ ເຂົາໄດ້ເລີ້ມຕົ້ນໂດຍໃຫ້ພວກຄາລາເຕັຽຖືເທສການລຣັ້ງຕ່າງ ໆ ກ່ອນ (ຄຕ 4:10) ແລະກ່ອນເວລາທີ່ທ່ານໂປໂລຂຽນຈົດໝາຍກໍເປັນເວລາທີ່ຮຽກຮ້ອງໃຫ້ຖືພິທີຕັດ ແຕ່ທ່ານໂປໂລຮູ້ວ່າພວກຢິວກໍາລັງນໍາຄຣິສຕຽນຕ່າງຊາດໄປໃນທາງຂອງການຖືຮັກສາບັນຍັດໃຫ້ຄົບຖ້ວນເພື່ອໃຫ້ເຖິງຄວາມຣອດພົ້ນ ການທີ່ພວກຢິວເນັ້ນເຊັ່ນນີ້ເປັນເພາະວ່າ ພວກເຂົາມີຄວາມເຊື່ອຢ່າງແນ່ນໜາວ່າເຂົາເປັນຊົນຊາດທີ່ພຣະເຈົ້າຊົງເລືອກສັນ ເພາະພຣະເຢຊູຄຣິສນັ້ນເປັນຂອງພຣະຣາຊທານອັນລໍ້າເລີດທີ່ພຣະເຈົ້າປະທານໃຫ້ແກ່ມະນຸດ ດັ່ງນັ້ນຄົນທັງຫລາຍຈະຕ້ອງມາເປັນຢິວກ່ອນເພື່ອເຂົ້າເປັນຊົນຊາດຂອງພຣະເຈົ້າແລ້ວ ຈຶ່ງຈະເປັນຄຣິສຕຽນທີ່ສົມບູນໄດ້ ໂດຍການເຂົ້າພິທີຕ່າງ ໆ ທາງສາສນາທີ່ຈະທໍາໃຫ້ເຂົາເປັນຢິວ

ທ່ານໂປໂລເຫັນວ່າ ມະນຸດໄດ້ໃຊ້ວິທີເຮັດສິ່ງຕ່າງ ໆ ທີ່ຈະເອົາຊນະນໍ້າພຣະທັຍພຣະເຈົ້າ ໂດຍໃຊ້ຮ່າງກາຍແລະຄວາມສາມາດຂອງຕົນເພື່ອຈະໃຫ້ພຣະເຈົ້າພໍພຣະທັຍ ທ່ານໂປໂລໄດ້ໂຕ້ຕອບດັ່ງນີ້

(1) ຊີ້ໃຫ້ເຫັນຈາກປະສົບການຄວາມຈິງວ່າ ພວກຄຣິສຕຽນຊາວຄາລາເຕັຽໄດ້ຮັບພຣະວິນຍານໂດຍການເຊື່ອຟັງຂ່າວປະເສີດທີ່ໄດ້ຍິນ ບໍ່ແມ່ນໂດຍການປະຕິບັດຕາມພຣະບັນຍັດ (ຄຕ 3:1-5)

(2) ຊີ້ໃຫ້ເຫັນຈາກການເປີດເຜີຍຂໍ້ຄວາມຂອງຜູ້ປະກາດພຣະທັຄືວ່າ "ຄົນຊອບທັມຈະໄດ້ຊີວິດໂດຍທາງຄວາມເຊື່ອ" (ຮບກ 2:4, ຄຕ 3:11, 2:16, ຮຣ 10:38)

(3) ຊີ້ໃຫ້ເຫັນຈາກປວັດສາດອິສຣາເອລ ເມື່ອອັບຣາຮາມໄດ້ຮັບການຍອມຮັບຈາກພຣະເຈົ້າບໍ່ແມ່ນເປັນທາງພິທີຕັດແຕ່ເປັນເພາະຄວາມເຊື່ອ ທ່ານໂປໂລໄດ້ຊີ້ໃຫ້ເຫັນວ່າອິສຣາເອລຍັງບໍ່ໄດ້ຮັບພຣະບັນຍັດໃນເວລານັ້ນ ເປັນຣະຍະເວລາສີ່ຮ້ອຍສາມສິບປີກ່ອນທີ່ອິສຣາເອລຈະໄດ້ຮັບພຣະບັນຍັດ (ຄຕ 3:10-18)

ຈາກປະສົບການ ຈາກການເປີດເຜີຍ ຈາກປວັດສາດ ທັງສາມນີ້ພິສູດວ່າຫົນທາງແຫ່ງສັມພັນທະພາບທີ່ຖືກຕ້ອງທີ່ພຣະເຈົ້າພໍພຣະທັຍນັ້ນຄື **ຄວາມເຊື່ອ**

ຖ້າເຊັ່ນນັ້ນແລ້ວ ພຣະບັນຍັດທີ່ພຣະເຈົ້າປະທານໃຫ້ທີ່ພູຊີນາຍຍັງມີຄວາມສໍາຄັນເຫລືອຢູ່ຫລື? ຈະບໍ່ເປັນການທໍາລາຍຄວາມສັກສິດຄວາມບໍຣິສຸດຂອງພຣະບັນຍັດຫລື? ສໍາລັບທ່ານໂປໂລຜູ້ໃຫຍ່ມາກັບພຣະບັນຍັດ ທ່ານເຫັນວ່າພຣະບັນຍັດຍັງມີຄຸນຄ່າແລະມີຄວາມສໍາຄັນຕໍ່ຊີວິດ ເພາະພຣະບັນຍັດຊ່ວຍເຮົາໃຫ້ຮູ້ຈັກຄວາມບາບວ່າເປັນຫຽັງ ດ້ວຍເຫດນີ້ເອງມະນຸດຈຶ່ງຮູ້ຈັກວ່າອັນໃດຄືຄວາມບາບ ແຕ່ພຣະບັນຍັດບໍ່ໄດ້ຮັກສາປົ່ນປົວໃຫ້ມະນຸດຫາຍຈາກບາດແຜລແຫ່ງບາບ ພຣະບັນຍັດຊີ້ໃຫ້ມະນຸດເຫັນວ່າ ອັນໃດຄືຄວາມບາບຂອງມະນຸດ ແຕ່ບໍ່ຄວນຢຸດຍັ້ງພຽງແຄ່ນັ້ນ ເມື່ອໄດ້ຮູ້ຈັກຄວາມບາບທີ່ມີໃນຕົວແລ້ວກໍຄວນເປັນເຫດກະຕຸ້ນໃຫ້ມະນຸດເຂົ້າຫາພຣະກະຣຸນາທິຄຸນຂອງພຣະເຈົ້າໂດຍ**ຄວາມເຊື່ອ** ບໍ່ມີຜູ້ໃດທີ່ຈະປະຕິບັດໃຫ້ຄົບຖ້ວນຕາມບົດບັນຍັດໄດ້ ແຕ່ຖ້າຜູ້ໃດທີ່ຫວັງເພິ່ງພຣະບັນຍັດກໍຈະຈົບລົງດ້ວຍຄວາມປາຊັຍ ທາງດຽວເທົ່ານັ້ນທີ່ຈະຊ່ວຍເຂົາໄດ້ກໍຄື ເຂົ້າຮ່ວມໃນພຣະເຢຊູຄຣິສໂດຍ**ຄວາມເຊື່ອ** (ຄຕ 3:19-29)

ຂໍ້ກ່າວຫາທີ່ພວກຢິວຄຣິສຕຽນໄດ້ກ່າວມາແລ້ວນີ້ ເປັນສິ່ງທີ່ສ້າງຄວາມຢ້ານກົວໃຫ້ກັບຄຣິສຕຽນຊາວຄາລາເຕັຽ ພວກເຂົາຕ້ອງການມີຂ່າວປະເສີດອັນແທ້ ທີ່ຈະໄດ້ຮັບຄວາມຣອດພົ້ນຈິງ ໆ ດັ່ງນັ້ນພວກຕໍ່ຕ້ານຈຶ່ງມີອິດທິພົລເຫນືອພວກເຂົາ ພວກເຂົາຂາດຄວາມຊັດແຈ້ງແລະຂາດການສິດສອນ ຈຶ່ງເປັນເຫດທີ່ພວກເຂົາເລີ່ມຍອມເຮັດຕາມຄໍາສອນຂອງພວກຢິວທີ່ຕໍ່ຕ້ານ ພວກເຂົາເລີ່ມປະຕິບັດຕາມເທສການລ້ຽງຂອງພວກຢິວແລະດີອົກດີໃຈໃນງານລ້ຽງຕ່າງ ໆ ເກືອບພ້ອມທີ່ຈະເຂົ້າພິທີຕັດຕາມພຣະບັນຍັດຢູ່ແລ້ວ

ເມື່ອທ່ານໂປໂລໄດ້ຍິນເຖິງລັກສນະຂອງພວກຊາວຄາລາເຕັຽທີ່ເປັນແບບນີ້ ທ່ານຈຶ່ງຮູ້ວ່າຄຣິສຈັກກໍາລັງຜະເຊີນກັບບັນຫາຮ້າຍແຮງ ແລະມີຄວາມສໍາຄັນທີ່ຕ້ອງຂຽນຈົດຫມາຍເຕືອນສະຕິແລະສອນໃຫ້ຊາວຄາລາເຕັຽເຂົ້າໃຈຂ່າວປະເສີດຂອງພຣະເຢຊູຄຣິສຢ່າງຖືກຕ້ອງ ກ່ອນທີ່ຈະສາຍເກີນໄປ ຫລືກ່ອນທີ່ຄໍາສອນຂອງພວກຕໍ່ຕ້ານແຜ່ກວ້າງຂວາງອອກໄປ ທ່ານຈຶ່ງໄດ້ຂຽນດ້ວຍອາຣົມຄວາມຮູ້ສຶກທີ່ແຮງ ເພື່ອສະແດງເຖິງຄວາມສໍາຄັນແລະຄວາມຫນັກແນ່ນແຫ່ງພຣະຄຸນຂອງພຣະເຈົ້າ

| |
|---|
| **ຈົ່ງເອົາສິ່ງທີ່ທ່ານໄດ້ສຶກສາຈາກຂ້າງເທິງເຮັດບົດຝຶກຫັດຂໍ້ທີ່ສອງ & ສາມ** |

## III. ເນື້ອນັຍຂອງພຣະທັມຄາລາເຕັຽ

ທ່ານໂປໂລໄດ້ໂຕ້ຕອບຄໍາຕໍ່ຕ້ານຂອງພວກແນວຕໍ່ຕ້ານ ເພື່ອຈະໃຫ້ຜູ້ອ່ານບໍ່ຕ້ອງສົງສັຍໃນຕົວຂອງທ່ານ ຕັ້ງແຕ່ວັກແຣກຂອງຈົດຫມາຍທ່ານກ່າວວ່າ ທ່ານເປັນອັຄສາວົກທີ່ພຣະເຈົ້າແຕ່ງຕັ້ງແທ້ ແລະພວກຄຣິສຕຽນທີ່ຢູ່ກັບທ່ານຕ່າງກໍຮັບຮອງດ້ວຍ ສະນັ້ນທ່ານຈຶ່ງກ່າວເຖິງຄົນເຫລົ່ານັ້ນທີ່ຢູ່ກັບທ່ານວ່າເປັນເຈົ້າຂອງຈົດຫມາຍດ້ວຍ ເມື່ອທ່ານອະທິຖານໃຫ້ຜູ້ອ່ານໄດ້ຮັບພຣະພອນອັນປະກອບດ້ວຍພຣະຄຸນແລະສັນຕິສຸຂຂອງພຣະເຈົ້າແລ້ວ ທ່ານໄດ້ຊີ້ໃຫ້ຮູ້ແຈ້ງວ່າ ມະນຸດຈະຮັບພຣະພອນເຫລົ່ານີ້ໂດຍການຮັກສາພຣະບັນຍັດບໍ່ໄດ້ພຣະຄຸນແລະສັນຕິສຸຂເປັນສິ່ງທີ່ພຣະເຈົ້າຊົງປະທານແກ່ຄົນບາບ ໂດຍການສິ້ນພຣະຊົນຂອງພຣະຄຣິສໃຫ້ຣອດພົ້ນຈາກຍຸກອັນຊົ່ວຊ້ານີ້ (ຄຕ 1:2-5)

ຫລັງຈາກນັ້ນແທນທີ່ຈະເປັນຄໍາກ່າວໂມທນະຄຸນພຣະເຈົ້າແລະຄໍາສັນຣະເສີນ ຄືກັບຈົດຫມາຍສະບັບອື່ນ ໆ ຂອງທ່ານໂປໂລ ທ່ານໄດ້ເລີ່ມກ່າວກັບຊາວຄາລະເຕັຽຢ່າງກົງໄປກົງມາ ໂດຍບໍ່ໃຫ້ເສັຽເວລາ ເຖິງເຣື່ອງທີ່ຊາວຄາລາເຕັຽຕ້ອງການຈະເລີກລົ້ມຄວາມເຊື່ອອັນແທ້ຈິງຂອງຄຣິສຕຽນ (ຄຕ 1: 6-10) ທ່ານໂປໂລຕັກເຕືອນພວກເຂົາວ່າການທີ່ຍອມປ່ຽນຄວາມເຊື່ອຕາມຄໍາຢົວະຂອງພວກຢິວຄຣິສຕຽນເຊັ່ນນັ້ນ ຈະນໍາຄວາມພິນາສມາເຖິງເຂົາທັ້ງຫລາຍທີ່ເປັນຄົນຕ່າງຊາດ ການທີ່ຈະທິ້ງຄວາມຈິງເສັຍນັ້ນເປັນເຣື່ອງທີ່ບໍ່ຖືກຕ້ອງ

ແລ້ວທ່ານໂປໂລກໍຫັນໄປຕໍ່ສູ້ກັບຂໍ້ກ່າວຫາທີ່ມີຕໍ່ຕົວທ່ານ ທ່ານໄດ້ພິສູດໃຫ້ເຫັນວ່າທ່ານໄດ້ຮັບຂ່າວປະເສີດຈາກພຣະຄຣິສ ແລະທ່ານເປັນອັຄສາວົກທີ່ສັດຊື່ແລະຈິງແທ້ ທ່ານໂປໂລໄດ້ກ່າວເຖິງປະວັດຊີວິດຂອງທ່ານທີລະຂັ້ນຕອນ (ຄຕ 1:11-2:21) ແມ່ນວ່າທ່ານເຄີຍເປັນຜູ້ຂົ່ມເຫັງຄຣິສຕຽນມາກ່ອນກໍຈິງພຣະເຈົ້າຊົງໃຫ້ໂອກາສທ່ານໄດ້ກັບໃຈເສັຽໃຫມ່ແລ້ວ ທ່ານຈຶ່ງສາມາດເທສນາຂ່າວປະເສີດໄດ້ທັນທີເພາະພຣະເຈົ້າເປັນຜູ້ຮັບຮອງທ່ານ ການກັບໃຈໃຫມ່ຂອງທ່ານເປັນການພິສູດວ່າພຣະເຈົ້າເອີ້ນຮຽກ

ທ່ານ ຂ່າວປະເສີດທີ່ທ່ານເທສນາເປັນສິ່ງທີ່ມາຈາກພຣະເຈົ້າໂດຍກົງ ທ່ານບໍ່ໄດ້ຮໍຄອຍໃຫ້ພວກອັຄສາວົກສັ່ງສອນຫລືລົງຄວາມເຫັນຊອບກ່ອນອອກໄປຮັບໃຊ້ ງານຂອງທ່ານກໍເກີດຜົນສະແດງວ່າພຣະເຈົ້າຊົງເຫັນຊອບ ແມ່ນວ່າໃນແຂວງຢູດາຍພວກຄຣິສຕຽນກໍຮູ້ຈັກເຖິງງານຂອງທ່ານແລະໂມທນາພຣະຄຸນພຣະເຈົ້າເພາະຕົວທ່ານ ເມື່ອເກີດການໂຕ້ຖຽງກັນໃນເຣື່ອງການຮັບຄົນຕ່າງຊາດເຂົ້າໃນຄຣິສຈັກ ອັຄສາວົກໃນກຸງເຢຣູຊາເລັມກໍເຫັນຊອບກັບຂ່າວປະເສີດຂອງທ່ານ ເມື່ອຢູ່ທີ່ຄຣິສຈັກອັນຕິໂອກເຂັຽໃນຊີເຣັຽ ທ່ານເປໂຕແລະບາຣະນາບາກໍເຫັນດ້ວຍກັບການຖືຮັກສາພຣະບັນຍັດເຣື່ອງອາຫານຂອງພວກຢິວ ອັນເປັນເຫດທີ່ເຮັດໃຫ້ຄຣິສຈັກແຕກແຍກກັນ ທ່ານໂປໂລຍືນຫຍັດຫມັ້ນຄົງແລະໄດ້ຊີ້ໃຫ້ເປໂຕເຫັນວ່າ ພວກຢິວແລະຄົນຕ່າງຊາດກໍລົ້ມເຫລວເຫມືອນກັນ ຄົນທຸກຝ່າຍຕ່າງຈຳເປັນຕ້ອງເພິ່ງພາອາສັຍໃນພຣະຄຸນຂອງພຣະເຈົ້າ ຈະເປັນການບໍ່ຖືກຕ້ອງທີ່ຈະຂໍໃຫ້ພວກຄົນຕ່າງຊາດຖືພຣະບັນຍັດຊຶ່ງພວກຢິວເອງຍັງຖືຮັກສາບໍ່ໄດ້

ທ່ານໂປໂລໄດ້ກ່າວຕໍ່ໄປວ່າ ມະນຸດທຸກຄົນລົ້ມເຫລວ ແລະເຮັດບາບ ຖ້າເຮົາຈຳເປັນຕ້ອງປະຕິບັດຕາມທັມບັນຍັດກ່ອນແລ້ວຈຶ່ງຈະໄດ້ຮັບຄວາມຣອດພົ້ນ ຄົງບໍ່ຄົນມາເຖິງຄວາມຣອດພົ້ນສັກຄົນ ເພາະເຮົາເຮັດບາບ ສະນັ້ນມະນຸດທຸກຄົນ ທຸກຊາດ ມີຄວາມຕ້ອງການຄວາມຣອດພົ້ນເຫມືອນກັນ ພຣະບັນຍັດຊ່ວຍບໍ່ໄດ້ ຈິງຢູ່ພຣະບັນຍັດສັນຍາວ່າ ຄົນໃດທີ່ຮັກສາພັນທະສັນຍາຂອງພຣະເຈົ້າຈະໄດ້ຮັບພຣະພອນແມ່ນເປັນຜູ້ທີ່ເຮັດຕາມພຣະທັຍພຣະເຈົ້າ ແຕ່ເນື່ອງຈາກມະນຸດເຮັດບາບ ເຂົາຈະຮັບເອົາພຣະພອນເຫລົ່ານັ້ນບໍ່ໄດ້ ມະນຸດຮູ້ຈັກຢູ່ແລ້ວວ່າເຂົາຄວນເຮັດຕາມນ້ຳພຣະທັຍຂອງພຣະເຈົ້າ ແຕ່ຖ້າເຂົາກອດເບິ່ງດູໃຫ້ລັກກໍພົບວ່າ ເຂົາບໍ່ສາມາດເຮັດໃຫ້ສຳເດັດໄດ້ ເນື່ອງຈາກບັນຍັດນຳໄປເຖິງຄວາມສິ້ນຫວັງເພາະບໍ່ມີຜູ້ໃດສາມາດຖືຮັກສາໃຫ້ຄົບຖ້ວນໄດ້

ນີ້ເປັນເຫດທີ່ທ່ານໂປໂລຕໍ່ສູ້ຢ່າງແຂງແຮງ ຮຽກຮ້ອງບໍ່ໃຫ້ຊາວຄະລາເຕັຽຮັກສາພິທີເທສການລ້ຽງແລະຮັບພິທີຕັດ ຖ້າຈະຖາມພວກຕໍ່ຕ້ານວ່າເປັນຫຍັງຈຶ່ງໃຫ້ເຮັດແນວນີ້ ກໍຈະໄດ້ຄຳຕອບວ່າ ເພາະພຣະບັນຍັດບັງຄັບໄວ້ ແລະການທີ່ຈະໄດ້ຮັບພຣະຄຸນຈາກພຣະເຈົ້າ ກໍຕ້ອງປະຕິບັດຕາມພຣະບັນຍັດ ທ່ານໂປໂລໄດ້ໂຕ້ຕອບວ່າ ຄວາມຍາກລຳບາກນັ້ນຢູ່ທີ່ນີ້ ຄືມະນຸດເຮົາເຫັນແລ້ວວ່າເຂົາບໍ່ສາມາດຈະກະທຳທຸກຢ່າງຕາມທີ່ພຣະບັນຍັດໄດ້ບັງຄັບໄວ້ໄດ້ຫມົດ ແມ່ນວ່າເຂົາໄດ້ເຮັດຫລາຍສິ່ງຫລາຍຢ່າງຕາມພຣະບັນຍັດ ແຕ່ເຂົາກໍຮູ້ແກ່ໃຈວ່າ ແນວຄວາມຄິດ ຄຳເວົ້າ ແລະການກະທຳຂອງເຂົາບໍ່ສະອາດ ບໍ່ສັດຊື່ ແລະບໍ່ເປັນທີ່ຊ່ວຍເຫລືອຢ່າງທີ່ຄວນຈະເປັນ ຈິດໃຈຂອງເຂົາຍັງບໍ່ຄືນດີກັບພຣະເຈົ້າ

ດັ່ງນັ້ນເອງ ຂ່າວປະເສີດຂອງພຣະເຢຊູຄຣິສຈຶ່ງເປັນສິ່ງທີ່ມີຄວາມສຳຄັນ ທີ່ພຣະເຈົ້າໄດ້ຊົງປະທານການອະພັຍແກ່ມະນຸດຜູ້ທີ່ລົ້ມເຫລວ ຜູ້ທີ່ໄດ້ຮັບຄວາມຣອດພົ້ນບໍ່ໄດ້ຮັບດ້ວຍພຣະບັນຍັດ ໃຫ້ເຂົາເຫລົ່ານີ້ກັບມີມິດຕະພາບກັບພຣະອົງເພື່ອໃຫ້ໄດ້ຊີວິດໃຫມ່ ພຣະອົງຊົງຂໍໃຫ້ມະນຸດເສັຽໃຈໃນຄວາມຜິດບາບແລະໃຫ້ມີຄວາມເຊື່ອຢ່າງເຕັມປ່ຽມແລະຈິງໃຈໃນພຣະຄຣິສ ດ້ວຍການດຳເນີນຊີວິດດ້ວຍຄວາມຮັກໂດຍຣິດເດດແຫ່ງພຣະວິນຍານຂອງພຣະເຈົ້າ ການທີ່ບັງຄັບໃຫ້ປະຕິບັດຕາມພຣະບັນຍັດ ກໍເປັນການບັງຄັບໃຫ້ເຮັດສິ່ງທີ່ເຮັດບໍ່ໄດ້ ແລະເປັນການບຽດບັງຄວາມຈິງທີ່ພຣະເຈົ້າຊົງຊ່ວຍມະນຸດໂດຍທາງພຣະຄຣິສເສັຍ ແມ່ນໃນພັນທະສັນຍາເດີມພຣະເຈົ້າກໍຊົງຊີ້ທາງແຫ່ງຄວາມເຊື່ອວ່າ ເປັນທາງແຫ່ງຄວາມຣອດພົ້ນຂອງມະນຸດ (ຄຕ 3:6-9)

ຄວາມຕ້ອງການໃຫ້ຣອດພົ້ນຂອງມະນຸດເປັນເຣື່ອງສາກົນ ທາງແຫ່ງຄວາມເຊື່ອແລະຄວາມຮັກເປັນຫົນທາງແຫ່ງຄວາມຣອດພົ້ນທີ່ບໍ່ໄດ້ຜູກພັນກັບການຖືຊົນຊາດຫລືຣິດຄອງຂອງພວກຢິວ ນີ້ເປັນຂ່າວປະເສີດອັນເປັນສາກົນ ຄືສຳລັບຄົນທົ່ວໂລກ ເປັນຂໍ້ສະເນີໃຫ້ພວກຢິວແລະຄົນຕ່າງຊາດເທົ່າທຽມກັນ ໂດຍບໍ່

ມີຄວາມແຕກຕ່າງຂອງຊົນຊາດ ຫລືຂໍ້ອ້າງອີງທີ່ມະນຸດຝ່າຍນຶ່ງຝ່າຍໃດຈະລອດຕົວໄດ້

ພວກຍິວທີ່ຕໍ່ຕ້ານຍັງມີແນວຄັດຄ້ານຄໍາສອນຂອງທ່ານໂປໂລວ່າ ຊົນຊາດຂອງພຣະເຈົ້າຕ້ອງມີການກະທໍາອັນຊອບທັມຕາມພຣະບັນຍັດ ຈຶ່ງຈະຖືວ່າເປັນການເຊື່ອຟັງຕາມນໍ້າພຣະທັຍຂອງພຣະເຈົ້າ ຖ້າບໍ່ຖືຮັກສາຕາມພຣະບັນຍັດແລ້ວກໍຈະເກີດຜົນໃຫ້ຄົນມີຊີວິດຜິດສິນທັມແລະໂລເລ ພວກເຂົາຖືວ່າພຣະບັນຍັດເປັນສິ່ງຈໍາເປັນທີ່ຈະຊ່ວຍໃຫ້ການດໍາເນີນຊີວິດດີໄດ້ ທ່ານໂປໂລໄດ້ຕອບວ່າ ຊີວິດໃຫມ່ແຫ່ງຄວາມເຊື່ອແລະຄວາມຮັກເປັນຊີວິດທີ່ແຂງແຮງທາງດ້ານສິນທັມ (ຄຕ 5:1-6:10) ພຣະບັນຍັດເປັນຈໍານວນຫລວງຫລາຍບໍ່ແກ້ບັນຫາສິນທັມຂອງມະນຸດ ເຂົາຈະຕ້ອງເປັນຄົນຊອບທັມພາຍໃນ ແລະເຂົາຈະຕ້ອງເປັນອິສຣະພົ້ນຈາກຄວາມປາດຖະນາທີ່ຊົ່ວແລະນິສັຍຊົ່ວ ເຂົາຕ້ອງມີຫົວໃຈທີ່ຕັ້ງໄວ້ເພື່ອມຸ່ງຫາຄວາມດີ ເຂົາຈະຕ້ອງມີຈິດໃຈແຫ່ງຄວາມຮັກເປັນຕົວນໍາພາຊີວິດ ຊີວິດແຫ່ງຄວາມເຊື່ອໃຫ້ສິ່ງເຫລົ່ານີ້ທີ່ມະນຸດຕ້ອງການ "ຄວາມເຊື່ອຊຶ່ງສະແດງອອກເປັນຜົນໂດຍທາງຄວາມຮັກເທົ່ານັ້ນສໍາຄັນ" (ຄຕ 5:6) ນີ້ຄືຄໍາສອນຂອງທ່ານໂປໂລເຣື່ອງຊີວິດຄຣິສຕຽນ ຊີວິດນີ້ມີອິສຣະພາບ ຄື ອິສຣະພາບອັນພົ້ນຈາກຂໍ້ບັງຄັບການຄອບຄຸມຂອງບາບແລະຄວາມຊົ່ວ ຄວາມຮັກແທ້ ຄືຄວາມຫວັງດີແກ່ຜູ້ອື່ນຢ່າງຈິງໃຈ ແລະເປັນຊີວິດທີ່ມີຣິດເດດ ເພາະພຣະວິນຍານຂອງພຣະເຈົ້າເປັນກໍາລັງຂອງຊີວິດນັ້ນ ສະນັ້ນ "ຜົນຂອງພຣະວິນຍານນັ້ນ ຄື ຄວາມຮັກ ຄວາມຍິນດີ ສັນຕິສຸຂ ຄວາມອົດກັ້ນໄວ້ນານ ຄວາມປານີ ຄວາມດີ ຄວາມສັດຊື່ຄວາມສຸພາບອ່ອນຫວານ ການຮູ້ຈັກບັງຄັບຕົນເຣື່ອງແນວນີ້ບໍ່ມີພຣະບັນຍັດຫ້າມໄວ້ເລຍ (ຄຕ 5:22-23)

ທ່ານໂປໂລໄດ້ຂຽນຂໍ້ສລູບດ້ວຍຕົນເອງເຕີມ (ຄຕ 6:11-28) ທ່ານເວົ້າຢ່າງມີຄວາມຫມັ້ນໃຈວ່າ ພີ່ນ້ອງຊາວຄາລາເຕັຽຈະຕ້ອງຟັງຄວາມເວົ້າຂອງທ່ານດ້ວຍຄວາມເຄົາຣົບ ການທີ່ທ່ານໄດ້ສະລູບດ້ວຍຂໍ້ຄວາມທີ່ຍາວກວ່າຈົດຫມາຍສະບັບອື່ນ ໆ ຂອງທ່ານ ຍອມສະແດງວ່າ ທ່ານເຫັນເຖິງຄວາມສໍາຄັນຂອງປັນຫາທີ່ເກີດຂຶ້ນ ທ່ານມີຄວາມຕັ້ງໃຈທີ່ຈະຊ່ວຍຊາວຄາລາເຕັຽໃຫ້ພົ້ນຈາກການຫລົງຜິດໃນບັນຫາຕ່າງ ໆ

## VI. ຜູ້ຂຽນແລະວັນເວລາຂອງການຂຽນພຣະທັມຄາລາເຕັຽ

ພຣະທັມຄາລາເຕັຽເປັນຈົດຫມາຍຝາກທີ່ຂຽນໂດຍທ່ານໂປໂລບໍ່ມີຜູ້ໃດຄັດຄ້ານ ແລະເສັຽເວລາໂຕ້ແຍ້ງກັນ ເພາະເນື້ອຫາຂອງຈົດຫມາຍມີຫລັກຄວາມເຊື່ອເປັນຂອງທ່ານໂປໂລແນ່ນ ສໍານວນການຂຽນແລະຄໍາເວົ້າໃນການສະແດງຄວາມຄິດເຫັນ ລັກສນະຕ່າງ ໆ ທີ່ສະແດງອອກຂອງພຣະທັມຄາລາເຕັຽນັ້ນນັກສຶກສາພຣະຄັມພີຮ້ອງເປັນສຽງດຽວກັນວ່າ ແມ່ນທ່ານໂປໂລເປັນຜູ້ຂຽນ ແຕ່ໃນທາງກົງກັນຂ້າມ ເມື່ອຈະເວົ້າເຖິງວັນເວລາທີ່ຂຽນກໍມີຄວາມຄິດເຫັນຕ່າງ ໆ ກັນ ຊຶ່ງພໍສລູບໄດ້ດັ່ງນີ້

ບາງທ່ານມີຄວາມຄິດເຫັນວ່າຄາລາເຕັຽເປັນຈົດຫມາຍສະບັບແຣກສຸດໃນບັນດາຈົດຫມາຍຂອງທ່ານໂປໂລ ຂຽນຈາກເມືອງອັນຕິໂອເຂັຽ ຫລັງຈາກທີ່ທ່ານກັບຈາກການເດີນທາງທ່ຽວທີ່ນຶ່ງ ຕາມຫລັກຖານທີ່ປາກົດໃນພຣະທັມກິຈການຂອງພວກອັຄສາວົກບົດທີ່ 13, 14, ແລະ 15 ແຕ່ເມື່ອສຶກສາເບິ່ງຢ່າງລະອຽດກ່ຽວຂ້ອງເຫດການອື່ນ ໆ ໃນຊີວິດຂອງທ່ານໂປໂລທີ່ບັນທຶກໄວ້ໃນພຣະທັມກິຈການຂອງພວກອັຄສາວົກ ກັບຂໍ້ຄວາມທີ່ປາກົດໃນພຣະທັມຈົດຫມາຍຄາລາເຕັຽ ແລະເມື່ອທຽບເບິ່ງກັບຈົດຫມາຍສະບັບອື່ນ ໆ ຄື ພຣະທັມໂຣມແລະພຣະທັມໂກຣິນໂທແລ້ວ ເຮັດໃຫ້ນັກສຶກສາພຣະຄັມພີເກີດຄວາມວຸ່ນວາຍຈົນບໍ່ສາມາດທີ່ຈະສລູບລົງໄດ້ຢ່າງແນ່ນອນວ່າຂຽນຂຶ້ນເມື່ອໃດແທ້ ອາຈຂຽນກ່ອນການປະຊຸມ

ທີ່ກຸງເຢຣູຊາເລັມ (ກຈ 15, ຄ.ສ.50) ຫລືອາດຈະຂຽນປະມານ ຄ.ສ. 55 ຣະຫວ່າງການເດີນທາງປະກາດເທື່ອທີ່ 3 ຂອງທ່ານໂປໂລ (ກຈ 18:23-21:14)

<u>ຫມາຍເຫດ</u>

ເມື່ອຂ້າພະເຈົ້າສຶກສາເພື່ອຂຽນຕຳຣານີ້ ສັງເກດເຫັນໄດ້ວ່າ ຕຳຣາຫລາຍເຫລັ້ມ ບໍ່ໄດ້ກ່າວເຖິງວັນເວລາຂອງການຂຽນເລີຍ ອາດຈະເປັນເພາະຄວາມບໍ່ຊັດແຈ້ງວ່າວັນເວລາໃດທີ່ຂຽນ ທີ່ຈິງເນື້ອນັຍຂອງພຣະທັມຄາລາເຕັຽມີຄຸນຄ່າມະຫາສານ ແລະເປັນພຣະທັມທີ່ມີຜົນອັນສຳຄັນຕໍ່ປວັດສາດຄຣິສຈັກດັ່ງທີ່ຈະໄດ້ສຶກສາຕໍ່ໄປ ເຮົາບໍ່ຄວນໃຫ້ການສຶກສາຂອງເຮົາຕິດຢູ່ທີ່ຈຸດນີ້ ຂໍໃຫ້ນັກສຶກສາມີຄວາມເຊື່ອຫມັ້ນໃນສິ່ງທີ່ພຣະເຈົ້າແລະພຣະວິນຍານບໍຣິສຸດໄດ້ເປີດເຜີຍໃຫ້ຮູ້ຈັກແລ້ວຢ່າງຊັດແຈ້ງນັ້ນຄື ເນື້ອນັຍຂອງພຣະທັມຄາລາເຕັຽ ຢ່າເສັຽເວລາລ້າ ໆ ກັບແນວຄວາມຄິດທີ່ແຕກຕ່າງກັນ

## V. ຂ່າວປະເສີດຂອງພຣະເຢຊູຄຣິສອັນຖາວອນ

ຈົດຫມາຍພຣະທັມຄາລາເຕັຽກ່າວເຖິງ ຈຸດສູນຣວມຄວາມເຊື່ອຂອງຄຣິສຕຽນອັນເປັນຣິດເດດຂອງພຣະເຈົ້າ ໃນຍາມທີ່ຄຣິສຈັກໄດ້ຮັບຄວາມຍາກລຳບາກ ຈົດຫມາຍພຣະທັມສະບັບນີ້ມີອິດທິພົນຢ່າງໃຫຍ່ຫລວງໃນປວັດສາດຄຣິສຈັກ ຕົວຢ່າງເຊັ່ນ ໃນສມັຍປະຕິຮູບຄຣິສຈັກ ຈົນຫມາຍພຣະທັມຄາລາເຕັຽສະບັບນີ້ເປັນຄວາມສວ່າງສ່ອງທາງໃຫ້ແກ່ ທ່ານມາຣ໌ຕິນ ລູເທີ ທ່ານແຄລວິນ ແລະຄຣິສຕຽນຄົນອື່ນ ໆ ຜູ້ຊອກຫາຫົວໃຈແຫ່ງຂ່າວປະເສີດຂອງພຣະເຢຊູຄຣິສອັນແທ້ຈິງ

ຈົດຫມາຍພຣະທັມຄາລາເຕັຽກ່າວເຖິງ "ຂ່າວແຫ່ງພຣະຄຸນ" ຄວາມຫວັງຂອງມະນຸດບໍ່ໄດ້ຢູ່ໃນຕົນເອງແຕ່ຢູ່ໃນພຣະເຈົ້າ ພຣະເຈົ້າຊົງປະທານທຸກຢ່າງຕາມຄວາມຕ້ອງການຂອງມະນຸດ ໃນອົງພຣະເຢຊູຄຣິສແລ້ວ ພຣະອົງຊົງປະທານການໃຫ້ອະໄພແລະໃຫ້ຄົນທີ່ມາຫາພຣະອົງຄືສູ່ສະພາບດີ ພຣະອົງຊົງປະທານໃຫ້ຜູ້ທີ່ເຊື່ອຖືໄດ້ຮັບຄວາມອຸປຖັມແລະຣິດເດດ ທີ່ຈະດຳເນີນຊີວິດທີ່ຕິດສນິທກັບພຣະເຈົ້າແລະເປັນພີ່ນ້ອງກັບເພື່ອນມະນຸດດ້ວຍກັນ ສະນັ້ນພຣະທັມສະບັບນີ້ຈຶ່ງກ່າວເຖິງຄວາມເຊື່ອສັດທາ ພຣະເຈົ້າຊົງປະສົງການຕອບສະນອງຂອງມະນຸດດ້ວຍຄວາມເຊື່ອຢ່າງເຕັມໃຈແລະສັດຊື່ ຄວາມເຊື່ອສັດທານີ້ເປັນການຮັບພຣະຄຸນຂອງພຣະເຈົ້າດ້ວຍການຂອບພຣະຄຸນ ໂດຍການມອບຊີວິດໄວ້ດ້ວຍຄວາມວາງໃຈໃນພຣະເຈົ້າ ພຣະອົງຜູ້ຊົງເປີດເຜີຍພຣະອົງໃຫ້ປະຈັກໃນພຣະຄຣິສ ເປັນການມອບຊີວິດທັງສິ້ນໄວ້ດ້ວຍຄວາມວາງໃຈໃນພຣະຄຸນແລະຄວາມເຊື່ອຟັງ ພຣະເຈົ້າຜູ້ຊົງປະທານຄວາມຣອດພົ້ນໃຫ້ແກ່ມະນຸດຕາມທີ່ມະນຸດຕ້ອງການ

ຈົດຫມາຍພຣະທັມຄາລາເຕັຽກ່າວເຖິງເສຣີພາບ ໃຫ້ເຮົາພິຈາຣະນາດູໃຫ້ດີ ເສຣີພາບນີ້ບໍ່ໄດ້ຫມາຍຄວາມວ່າເຮົາເຮັດອັນໃດໄດ້ຕາມໃຈຊອບ ຫລືບໍ່ເຮັດອັນໃດເລີຍ ມະນຸດບໍ່ມີເສຣີພາບເມື່ອເຂົາເປັນທາດຂອງບາບແລະນິສັຍຊົ່ວ ເມື່ອພຣະຄຣິສຊົງໃຫ້ເຂົາເປັນອິສຣະ (ຄຕ 5:1) ເຂົາກໍຫລຸດພົ້ນຈາກກັມຊົ່ວ ຈາກບາບ ຈາກການເປັນທາດຂອງຂໍ້ບັງຄັບແລະຣິດຄອງ ເຂົາມີເສຣີທີ່ຈະເຮັດສິ່ງທີ່ຊອບທັມນີ້ເປັນເສຣີພາບຢ່າງໃຫຍ່ຫລວງທີ່ຂ່າວປະເສີດສະເນີໃຫ້ ຄື ເສຣີພາບທີ່ຈະເຮັດສິ່ງທີ່ຊອບທັມໄດ້ດ້ວຍຄວາມສະມັກໃຈໂດຍບໍ່ໄດ້ຖືກບັງຄັບ ອັນເປັນຂອງພຣະຣາຊທານຈາກພຣະເຈົ້າດ້ວຍຣິດເດດຂອງພຣະອົງບໍ່ແມ່ນເປັນຄວາມສຳເດັດຂອງມະນຸດ ແລະນີ້ຄືເສຣີພາພອັນແທ້ຈິງ

ສະນັ້ນພຣະທັມຈົດຫມາຍຄາລາເຕັຽສະບັບນີ້ຈຶ່ງກ່າວເຖິງຂ່າວແຫ່ງຣິດເດດອຳນາດຝ່າຍສິນທັມ

ຣິດເດດອຳນາດບໍ່ແມ່ນໄດ້ມາດ້ວຍການສ້າງບົດບັນຍັດຂຶ້ນແລ້ວໃຫ້ມະນຸດເຣັດຕາມ ພຣະທັມບັນຍັດມີປໂຍດ ຄືບອກໃຫ້ມະນຸດຮູ້ຈັກໜ້າທີ່ແລະຊີ້ທາງຖືກໃຫ້ແກ່ມະນຸດ ແຕ່ວ່າມະນຸດຕ້ອງການຣິດເດດອຳນາດຈາກພຣະເຈົ້າເພື່ອຈະເຣັດສິ່ງທີ່ຖືກຕ້ອງ ໄດ້ດ້ວຍຄວາມເຊື່ອສັດທາທີ່ແທ້ຈິງ ດ້ວຍຄວາມເຊື່ອສັດທາທີ່ແທ້ຈິງເຣັດໃຫ້ມະນຸດຍອມຖວາຍຊີວິດໝົດທັງສິ້ນໄວ້ກັບພຣະເຈົ້າ ຍອມເປີດໃຈໃຫ້ພຣະວິນຍານເພື່ອເຂົາຈະໄດ້ດຳເນີນຢ່າງທີ່ເຂົາຄວນມີ ພຣະວິນຍານຂອງພຣະເຈົ້າຈະຊົງຊູກຢູ້ຜູ້ທີ່ເຊື່ອສັດທາດ້ວຍຄວາມເຕັມໃຈແລະຈິງໃຈ ໃຫ້ມີຊີວິດທີ່ເໝືອນພຣະຄຣິສແລະມີຊີວິດສົມບູນອັນແທ້ຈິງ

ດັ່ງນັ້ນພຣະທັມນີ້ຈຶ່ງເປັນຂ່າວແຫ່ງຄວາມຫວັງແກ່ມະນຸດທຸກຄົນ ນີ້ເປັນຂ່າວປະເສີດສາກົນທີ່ເຂົ້າເຖິງຄວາມຕ້ອງການຂອງມະນຸດ ພຣະເຈົ້າຊົງໃຫ້ອະພັຍແລະຊົງຊ່ວຍມະນຸດທຸກຄົນ ບໍ່ວ່າຊາດໃດຫລືອະດີດເປັນມາຢ່າງໃດ ຖ້າເຂົາຫັນກັບຈາກການຜິດຂອງເຂົາຈິງ ໆ ແລະຮັບສິ່ງທີ່ພຣະເຈົ້າປະທານດ້ວຍໃຈກະຕັນຍູ "ຈະບໍ່ເປັນຊາດຢິວຫລືຄົນຕ່າງຊາດ ຈະບໍ່ເປັນຂ້ອຍຂ້າຫລືເປັນອິສຣະ ຈະບໍ່ເປັນຊາຍຫລືຍິງ ເພາະວ່າເຈົ້າທັງປວງເປັນອັນນຶ່ງອັນດຽວກັນໃນພຣະເຢຊູຄຣິສ" (ຄຕ 3:28)

ນີ້ເປັນຂ່າວປະເສີດສຳລັບມະນຸດທຸກຄົນດ້ວຍຄວາມສະເມີພາບເທົ່າທຽມກັນ ໃນການເລືອກສັນຂອງພຣະເຈົ້າ ຂ່າວປະເສີດນີ້ມາເຖິງພວກຢິວກ່ອນ ແຕ່ກໍມຸ່ງທີ່ຈະໃຫ້ແກ່ມະນຸດທຸກຄົນຢ່າງທົ່ວເຖິງທ່ານໂປໂລເຫັນຂໍ້ນີ້ຊັດແຈ້ງແລະຕໍ່ສູ້ ເພື່ອໃຫ້ຄວາມເຊື່ອຢ່າງນີ້ເກີດຜົນ ສະນັ້ນທຸກມື້ນີ້ເຮົາຈຶ່ງມີຂ່າວປະເສີດຢູ່ນຳເຮົາ ເປັນຂ່າວປະເສີດສຳລັບໂລກສາກົນ ເມື່ອເຫດເກີດຂຶ້ນໃນຄາລາເຕັຽ ພຣະເຈົ້າຊົງໃຫ້ທ່ານໂປໂລພ້ອມທີ່ມີຄວາມເຂົ້າໃຈຢ່າງຊັດແຈ້ງ ແລະນຳຄຣິສຈັກໃຫ້ຍຶດໝັ້ນຢູ່ໃນຫົວໃຈຂອງຂ່າວປະເສີດ ຄື "ຄວາມເຊື່ອຊຶ່ງສະແດງອອກເປັນຜົນໂດຍທາງຄວາມຮັກເທົ່ານັ້ນສຳຄັນ" (ຄຕ 5:6)

| |
|---|
| **ຈົ່ງເອົາສິ່ງທີ່ທ່ານໄດ້ສຶກສາຈາກຂ້າງເທິງເຣັດບົດຝຶກຫັດຂໍ້ສີ່ & ຫ້າ** |

ສະບັບແກ້ໄຂ
1-15-97

# ບົດທີ 6

## ຈົດໝາຍຂອງທ່ານໂປໂລ
## ເຖິງຄຣິສຈັກໃນເມືອງເອເຟໂຊ

**ຂໍ້ໄຂຈົດໝາຍພຣະທັມເອເຟໂຊ**

*"ແຕ່ພຣະເຈົ້າຜູ້ຊົງປະກອບດ້ວຍພຣະກະຣຸນາອັນອຸດົມ ເພາະເຫດຄວາມຮັກອັນໃຫຍ່ຫລວງ ທີ່ພຣະອົງຊົງຮັກພວກເຮົານັ້ນ ເຖິງແມ່ນວ່າເມື່ອພວກເຮົາຕາຍໄປແລ້ວໃນການຫລົງຜິດ ພຣະອົງຍັງໄດ້ຊົງບັນດານໃຫ້ເຮົາມີຊີວິດຢູ່ກັບພຣະຄຣິສ . . . ແລະໄດ້ຊົງບັນດານໃຫ້ເຮົາເປັນຄືນມາດ້ວຍກັນກັບພຣະອົງ ແລະຊົງໂຜດໃຫ້ເຮົານັ່ງໃນສວັນສະຖານດ້ວຍກັນກັບພຣະເຢຊູຄຣິສ ເພື່ອໃນຄາວຕໍ່ໄປພຣະອົງຈະໄດ້ຊົງສະແດງພຣະຄຸນອັນອຸດົມເຫລືອລົ້ນຂອງພຣະອົງ ໃນການຊຶ່ງພຣະອົງໄດ້ຊົງເມດຕາເຮົາທັງຫລາຍໃນພຣະເຢຊູຄຣິສດ້ວຍວ່າຊຶ່ງທ່ານທັງຫລາຍໄດ້ຖືຊົງໂຜດໃຫ້ພົ້ນນັ້ນ ກໍຍ້ອນພຣະຄຸນດ້ວຍທາງຄວາມເຊື່ອສິ່ງເຫລົ່ານີ້ບໍ່ໃຊ່ພວກທ່ານເຮັດເອົາເອງ ແຕ່ພຣະເຈົ້າຊົງປະທານໃຫ້ (ອຟ 2:4-8)*

**ນຶ່ງ. ລັກສນະຂອງພຣະທັມເອເຟໂຊ**

ໃນຈຳນວນພຣະທັມຈົດໝາຍຝາກຂອງທ່ານໂປໂລ 13 ເຫລັ້ມນັ້ນ **ພຣະທັມຄາລາເຕັຽ ພຣະທັມໂຣມ ພຣະທັມເອເຟໂຊ**ເປັນພຣະທັມທີ່ມີຫລັກຄຳສອນທີ່ສຳຄັນ ໃນ**ພຣະທັມຄາລາເຕັຽ**ທ່ານໂປໂລໄດ້ຕໍ່ສູ້ເພື່ອໃຫ້ຄຣິສຕຽນຮັກສາຫລັກຄຳສອນເຣື້ອງຄວາມຣອດພົ້ນໂດຍຄວາມເຊື່ອ ບໍ່ແມ່ນໂດຍຄວາມປະພຶດ ໃນ**ພຣະທັມໂຣມ**ທ່ານໂປໂລໄດ້ສອນໃຫ້ເຂົ້າໃຈເຖິງແຜນການອັນກວ້າງຂວາງຂອງພຣະເຈົ້າ ທີ່ນຳພາໃຫ້ທຸກຄົນມາເຖິງຄວາມຊອບທັມໂດຍຄວາມເຊື່ອ ໃນ**ພຣະທັມເອເຟໂຊ**ທ່ານໂປໂລໄດ້ໃຫ້ຂໍ້ສລູບແລະນຳມາເຖິງຄວາມເຂົ້າໃຈໃນການຊົງເອີ້ນຣຽກຂອງພຣະເຈົ້າທີ່ມີຕໍ່ຄຣິສຕຽນໃຫ້ເປັນເອກພາບກັນໃນພຣະອົງ ຄຳສອນຈາກພຣະທັມຄາລາເຕັຽ ພຣະທັມໂຣມ ແລະພຣະທັມເອເຟໂຊຮວມກັນເຂົ້າ ເປັນຂໍ້ສລູບຫລັກຄຳສອນຂອງທ່ານໂປໂລ ທີ່ທ່ານເຊື່ອແລະຍຶດຖືໄວ້ໃນການດຳເນີນວຽກການຮັບໃຊ້ຂອງທ່ານ

ພຣະທັມເອເຟໂຊເປັນພຣະທັມທີ່ມີຄົນຍ້ອງຍໍວ່າເປັນວັນນະກັມສຸດຍອດຈາກປາກກາຂອງທ່ານໂປໂລ ທ່ານມີເປົ້າໝາຍເພື່ອສະແດງເຖິງພຣະປະສົງຂອງພຣະເຈົ້າ ໃນການຕັ້ງຄຣິສຈັກຂອງພຣະເຢຊູຄຣິສໃຫ້ເປັນຄຣິສຈັກສາກົນ ພຣະບິດາໄດ້ຊົງເອີ້ນຄົນທຸກຊາດ ທຸກພາສາ ທຸກເຜົ່າພັນມາເປັນສມາຊິກຂອງຄຣິສຈັກ ຊົງໄຖ່ແລະອະພັຍໂທດບາບໂດຍພຣະບຸດ ໃຫ້ສາມັກຄີທັມໂດຍການຊົງນຳຂອງພຣະວິນຍານບໍຣິສຸດ

ໃນພຣະທັມເອເຟໂຊນີ້ທ່ານໂປໂລໄດ້ເນັ້ນພຣະລັກສນະຕຣີເອການຸພາບຂອງພຣະເຈົ້າໄວ້ຢ່າງ

ຊັດແຈ້ງໃນຫລາຍຕອນດ້ວຍກັນ (ຕົວຢ່າງເຊັ່ນ ອຟ 1:5, 12, 13, 2.18-22, 3:14, 16, 17, 4:4-6) ເຮົາເຫັນໄດ້ວ່າ (1) ຄຣິສຈັກໄດ້ຮັບການເອີ້ນໂດຍພຣະບິດາ (2) ຄຣິສຈັກໄດ້ຮັບການໄຖ່ແລະອະພັຍໂທດບາບໂດຍພຣະຄຣິສ ແລະ (3) ຄຣິສຈັກໄດ້ຮັບການນຳພາໂດຍການສຖິດຂອງພຣະວິນຍານບໍຣິສຸດ

**ສອງ. ວັນເວລາແລະສະພາບການ**

*ເຮົາຮູ້ຄັກແນ່ກ່ຽວກັບຈົດໝາຍພຣະທັມເອເຟໂຊວ່າ*

(1) ທ່ານໂປໂລເປັນຜູ້ຂຽນຈົດໝາຍພຣະທັມເອເຟໂຊນີ້ (ອຟ 1:1, 3:1)

(2) ໃນເວລາທີ່ທ່ານຖືກຈຳຄຸກໃນກຸງໂຣມ ໃນປະມານ ຄ.ສ. 61 ຫລື 62 ພຣະທັມເອເຟໂຊ ຮວມຢູ່ໃນກຸ່ມດຽວກັນກັບພຣະທັມຟີລິປອຍ ພຣະທັມໂກໂລຊາຍ ແລະພຣະທັມຟີເລໂມນ ທີ່ເຮົາຮູ້ໄດ້ຄັກແນ່ວ່າທ່ານໂປໂລຂຽນຂຶ້ນໃນເວລາທີ່ຖືກຈຳຈອງຢູ່ໃນຄຸກ (ກຈ 28:16, 30, ອຟ 3:1, 4:1, 6:20, ຟປ 1:7, 13-14, ກຊ 4:3, 10, 18, ຟມ 9-10, 13, 23)

(3) ທ່ານໂປໂລໄດ້ຂຽນຈົດໝາຍພຣະທັມເອເຟໂຊ ໂກໂລຊາຍ ແລະຟີເລໂມນ ໃນເວລາໃກ້ຄຽງກັນ ເພື່ອນຂອງທ່ານໂປໂລຄົນນຶ່ງຊື່ ຕີຂີໂກ (ກຊ 4:7, ອຟ 6:21) ເປັນຜູ້ຖືຈົດໝາຍທັງສາມສະບັບໄປດ້ວຍກັນ ເພາະຢູ່ໃກ້ຄຽງກັນ ຈົດໝາຍເຫລົ່ານີ້ທ່ານໂປໂລຂຽນດ້ວຍອາຣົມແລະຈິດໃຈທີ່ສງົບສຸກ ຊື່ນຊົມຍິນດີ ແມ່ນວ່າເປັນເວລາທີ່ຍາກລຳບາກທີ່ຖືກຈຳຈອງເພື່ອຖ້າການພິພາກສາ

(4) ຈົດໝາຍພຣະທັມເອເຟໂຊບໍ່ໄດ້ນຳບັນຫາທີ່ກ່ຽວກັບຄຣິສຈັກເອເຟໂຊຂຶ້ນມາສເນີໃຫ້ແກ່ຜູ້ອ່ານ ທັງນີ້ເປັນເພາະວ່າ ທ່ານໂປໂລໄດ້ສົ່ງພຣະທັມຈົດໝາຍນີ້ໄປໃຫ້ຫລາຍຄຣິສຈັກອ່ານ ທ່ານຈຶ່ງບໍ່ໄດ້ກ່າວເຖິງບັນຫາສະເພາະຂອງຄຣິສຈັກເອເຟໂຊ ຊຶ່ງເປັນການດີທີ່ເຮັດໃຫ້ພຣະທັມສະບັບນີ້ສອນພວກເຮົາໃນປັດຈຸບັນໄດ້ດີຍິ່ງຂຶ້ນ ຖ້າເຮົາອ່ານພຣະຄັມພີພາສາລາວ 1:1 ເຮົາຈະພົບອັກສອນ "ກ" ຫລັງ "ພວກໄພ່ພົນຂອງພຣະເຈົ້າ" ເມື່ອອ່ານໝາຍເຫດຂ້າງລຸ່ມກໍຈະພົບວ່າ ສຳເນົາກົກສະບັບເກົ່າແກ່ບາງສະບັບເພີ່ມເຕີມຂໍ້ຄວາມວ່າ "ໃນເມືອງເອເຟໂຊ" ດ້ວຍເຫດນີ້ນັກສຶກສາພຣະຄັມພີມີຄວາມເຊື່ອວ່າ ຈົດໝາຍນີ້ຂຽນເຖິງຄຣິສຈັກທົ່ວໄປ ແຕ່ໄດ້ເພີ່ມເຕີມຊື່ເມືອງເອເຟໂຊເພື່ອທີ່ຈະໃຫ້ເປັນຜູ້ຮັບເມື່ອສົ່ງສຳເນົາຈົດໝາຍໄປໃຫ້ຄຣິສຈັກເມືອງເອເຟໂຊ ສິ່ງທີ່ສັງເກດເຫັນອີກປະການນຶ່ງຄືພຣະທັມເອເຟໂຊທ່ານໂປໂລບໍ່ໄດ້ຂຽນເຖິງເຣື່ອງສ່ວນຕົວຫລາຍປານໃດ ທັງ ໆ ທີ່ທ່ານໄດ້ຢູ່ທີ່ເມືອງເອເຟໂຊນານເຖິງສາມປີ (ກຈ 20:31) ຄວນຈະມີເພື່ອນຝູງໝູ່ຄູທີ່ຮູ້ຈັກກັນດີ ທີ່ຈະຕ້ອງກ່າວເຖິງຖ້າທ່ານຈະຂຽນຈົດໝາຍສະບັບນີ້ກົງໄປໃຫ້ຄຣິສຕຽນຊາວເອເຟໂຊຮັບ ທ່ານໂປໂລກ່າວເຖິງຜູ້ອ່ານວ່າ "ເມື່ອກ່ອນທ່ານທັງຫລາຍເປັນຄົນຕ່າງຊາດຕາມເນື້ອກາຍ... ເຄີຍເອີ້ນທ່ານທັງຫລາຍວ່າ ຝ່າຍບໍ່ຮັບພິທີຕັດ... ບໍ່ມີພຣະເຈົ້າ" (ອຟ 2:11-12) ແລະທ່ານໂປໂລໄດ້ກ່າວຕັກເຕືອນວ່າ "ຕັ້ງແຕ່ນີ້ຕໍ່ໄປ ທ່ານທັງຫລາຍຢ່າດຳເນີນຊີວິດຕາມຢ່າງຄົນຕ່າງຊາດທີ່ເຂົາດຳເນີນກັນ" (ອຟ 4:17) ສະແດງວ່າຜູ້ອ່ານສ່ວນໃຫຍ່ເປັນຊາວຕ່າງຊາດ ທີ່ໄດ້ກັບໃຈມາເປັນຄຣິສຕຽນ ດ້ວຍເຫດນີ້ເມື່ອເຮົາອ່ານພຣະທັມເອເຟໂຊໃນປັດຈຸບັນນີ້ ມີຄວາມຮູ້ສຶກວ່າເປັນພຣະທັມທີ່ໃກ້ຕົວຂອງເຮົາຫລາຍທີ່ສຸດ

| |
|---|
| **ຈົ່ງເອົາສິ່ງທີ່ທ່ານໄດ້ສຶກສາຈາກຂ້າງເທິງເຮັດບົດຝຶກຫັດຂໍ້ທີ່ສອງ** |

## ສາມ. ເນື້ອນັຍແລະສາຣະສຳຄັນຂອງພຣະທັມເອເຟໂຊ

ເນື້ອນັຍຂອງຫລັກຄຳສອນທີ່ສຳຄັນຂອງພຣະທັມເອເຟໂຊທີ່ທ່ານໂປໂລນັ້ນຄື ຂ່າວປະເສີດດຽວ ເພື່ອຄຣິສຈັກດຽວ ຄືຄຣິສຈັກສາກົນ ເຮົາເຫັນໄດ້ຈາກຄຳສອນຂອງທ່ານໂປໂລໃນພຣະທັມຄາລາເຕັຽ 1:7 "ທີ່ຈິງ ຂ່າວປະເສີດອັນອື່ນບໍ່ມີ" ສະແດງວ່າ ຂ່າວປະເສີດມີຂ່າວປະເສີດດຽວ ເຮັດໃຫ້ມີຄຣິສຈັກດຽວ ໂດຍມີພວກຜູ້ທີ່ເຊື່ອໃນພຣະຄຣິສອົງດຽວເປັນສມາຊິກ **ດັ່ງນັ້ນເຮົາທຸກຄົນເປັນພີ່ນ້ອງໃນຄຣິສຈັກດຽວກັນທີ່ມີຮາກຖານດຽວຄືພຣະເຢຊູຄຣິສ** ຄຣິສຈັກໃນໂກຣິນໂທເກີດການແຕກແຍກ (1 ກຊ 1:12-13) ທ່ານໂປໂລບໍ່ໄດ້ໃຫ້ຄຳແນະນຳໃຫ້ແບ່ງອອກເປັນພວກເປັນຄນະ ນິກາຍຕ່າງ ໆ ດັ່ງທີ່ເຮົາເຮັດກັນຢູ່ໃນປັດຈຸບັນ ທ່ານໄດ້ທັກທ້ວງທັນທີວ່າ "ພຣະຄຣິສແບ່ງອອກເປັນຫລາຍອົງແລ້ວຫລື" ທຸກຄົນທີ່ຕິດຕາມພຣະຄຣິສພຽງອົງດຽວກໍເປັນສມາຊິກໃນຄຣິສຈັກດຽວກັນ ທ່ານໄດ້ກ່າວຕໍ່ຕ້ານພວກທີ່ພຍາຍາມແບ່ງແຍກເປັນພວກຢິວກັບຄົນຕ່າງຊາດວ່າ "ຈະບໍ່ເປັນຊາດຢິວຫລືຄົນຕ່າງຊາດ ... ເພາະວ່າເຈົ້າທັງປວງເປັນອັນນຶ່ງອັນດຽວກັນໃນພຣະຄຣິສຄືພຣະເຢຊູ" (ຄຕ 3:28) ທ່ານເຫັນວ່າການແບ່ງແຍກກັນອອກເປັນຊັ້ນວັນນະຫລືຊົນຊັ້ນເປັນການຜິດທັງສິ້ນ ດ້ວຍເຫດນີ້ເຮົາຈະເຫັນໄດ້ວ່າໃນພຣະທັມເອເຟໂຊມີການເນັ້ນເຣື້ອງເອກພາບຂອງຄຣິສຕຽນ ຫລາຍກວ່າຈົດຫມາຍສະບັບອື່ນຂອງທ່ານໂປໂລ ເຮົາຈະໄດ້ອ່ານພົບຄຳວ່າ "ອັນນຶ່ງອັນດຽວກັນ" (one) "ຮວມກັນ" (unite) ຫລື "ເອກພາບ" (unity) ທີ່ທ່ານໂປໂລໄດ້ໃຊ້ສິບແປດເທື່ອຄຳວ່າ "ທັງສິ້ນ"(all) "ທຸກຄົນ"(every) ມີຫລາຍກວ່າສີ່ສິບເທື່ອດ້ວຍກັນ ຈະເຫັນໄດ້ວ່າທ່ານໂປໂລຕັ້ງໃຈໃຫ້ຜູ້ອ່ານພຣະທັມເອເຟໂຊເຂົ້າໃຈຊັດແຈ້ງວ່າ **ຂ່າວປະເສີດເຣື້ອງພຣະເຢຊູຄຣິສເປັນຂ່າວປະເສີດດຽວ ເພື່ອຄຣິສຈັກດຽວ ຄືຄຣິສຈັກສາກົນ**

### ກ. ເອກພາບທາງຄວາມເຊື່ອໃນພຣະຄຣິສ

ຈົດຫມາຍພຣະທັມເອເຟໂຊມີຕອນໃຫຽ່ສອງຕອນ ຕອນແຣກບົດທີ 1-3) ຕອນທີ່ສອງບົດທີ 4 - 6 ຕອນນແຣກທ່ານໂປໂລໄດ້ບັນຍາຍເຖິງເອກພາບ (ຄວາມເປັນອັນນຶ່ງອັນດຽວກັນ) ຂອງຄຣິສຈັກ ພຣະຄຣິສເປັນສີສະຂອງຄຣິສຈັກນັ້ນ ໂດຍການທີ່ພຣະຄຣິສເປັນສີສະແລະເປັນປະມຸກ ພຣະອົງໄດ້ເຊື່ອມສມາຊິກທັງສິ້ນໃຫ້ມີມິຕພາບດຽວກັນໃນຄວາມເຊື່ອແລະການນມັສການ ເອກພາບນີ້ເກີດຂຶ້ນເນື່ອງຈາກພຣະເຈົ້າເປັນພຣະອົງດຽວຜູ້ປະທານຊີວິດແລະທາງແຫ່ງຊີວິດແກ່ທຸກຊາດເຜົ່າພັນທັງສິ້ນຂອງມະນຸດ ແຜນງານນີ້ຂອງພຣະເຈົ້າໄດ້ດຳເນີນຕໍ່ເນື່ອງກັນໄປເລື້ອຍ ໆ ແຜນງານນີ້ມີພຣະຄຣິສເປັນສູນຮວມ ແລະພຣະເຈົ້າຊົງເອີ້ນແລະຮວບຮວມພຣະປະສົງທັງສິ້ນຂອງພຣະອົງໄວ້ໃນພຣະເຢຊູຄຣິສ ວຽກງານນີ້ໄດ້ດຳເນີນຕໍ່ໄປໂດຍພຣະວິນຍານບໍຣິສຸດ ຊຶ່ງໄດ້ປະທານແກ່ບັນດາຜູ້ທີ່ເຊື່ອໃນພຣະຄຣິສ (ອຟ 1:3-14) ສະນັ້ນທ່ານໂປໂລຈຶ່ງອະທິຖານເພື່ອໃຫ້ຜູ້ອ່ານທຸກຄົນຈຳເຣີນຂຶ້ນໃນຄວາມເຂົ້າໃຈເຖິງຄວາມຫມາຍອັນລຶກຊຶ້ງຂອງຂ່າວປະເສີດ ແລະເພື່ອເຂົາຈະພໍໃຈຍິ່ງຂຶ້ນທີ່ພຣະຄຣິສຊົງເປັນອົງພຣະຜູ້ເປັນເຈົ້າຂອງທຸກສິ່ງທີ່ພຣະເຈົ້າຊົງສ້າງ (ອຟ 1:15-23) ເມື່ອເດີມນັ້ນມະນຸດຊາດໄດ້ຕົກຢູ່ໃນກຳມືຂອງບາບຈຶ່ງບໍ່ມີຊີວິດອັນທ່ຽງແທ້ ແລ້ວພຣະເຈົ້າໄດ້ຊ່ວຍໃຫ້ພົ້ນບາບແລະມີຊີວິດໃຫມ່ ມີທາງດຽວທີ່ເທົ່ານັ້ນທີ່ຈະໄປສູ່ພຣະພອນນີ້ໄດ້ ຄືພຣະຄຸນຂອງພຣະເຈົ້າທີ່ຊົງປະທານແກ່ມະນຸດທາງພຣະຄຣິສ (ອຟ 2:1-10) ເປັນສິ່ງທີ່ພຣະເຈົ້າກະທຳເພື່ອຊ່ວຍມະນຸດໃຫ້ຮອດພົ້ນ ທ່ານໂປໂລເຕືອນບໍ່ໃຫ້ມະນຸດອວດອ້າງໃນການກະທຳຂອງ

ຄົນ ການທີ່ມະນຸດຈະໄດ້ສູ່ຊີວິດໃໝ່ແຕ່ລະຂັ້ນນັ້ນເປັນພຣະຣາຊກິຈຂອງພຣະເຈົ້າ ແມ່ນຄວາມເຊື່ອ ຊຶ່ງມະນຸດມີຢູ່ ແຕ່ມະນຸດຕ້ອງຍອມຮັບພຣະຣາຊກິຈທີ່ພຣະເຈົ້າເຮັດໃຫ້ ທ່ານໂປໂລກ່າວວ່ານີ້ເປັນ ສິ່ງທີ່ "ພຣະເຈົ້າຊົງປະທານໃຫ້" (ອຟ 2:8)

ຂ່າວປະເສີດອັນດຽວນີ້ຮວມມະນຸດທັງປວງເຂົ້າເປັນອັນດຽວກັນ "ເປັນຄົນໃໝ່ຄົນດຽວ" (ອຟ 2:15) ເມື່ອເດີມນັ້ນເບິ່ງເໝືອນພວກຢິວກັບພວກຕ່າງຊາດແຍກກັນຢ່າງເດັດຂາດ ທີ່ຈິງແລ້ວ ພຣະເຈົ້າຊົງປະທານຂອງປະທານແກ່ພວກຢິວຫລາຍຢ່າງ ແຕ່ເມື່ອເຮົາມຸ່ງໄປສູ່ພຣະເຈົ້າແລະການ ດຳເນີນຊີວິດອັນຊອບທັມໃນພຣະອົງ ຄວາມຈິງປາກົດວ່າພວກຢິວກັບພວກຊົນຕ່າງຊາດທັງສອງພວກມີ ຄວາມຕ້ອງການຢ່າງດຽວກັນ ແລະມີຖານະດຽວກັນ ຄືທັງສອງພວກຮອດພົ້ນໂດຍທາງດຽວກັນ ຄືໂດຍ ການຕາຍແລະການສແດງຫາຂອງພຣະຄຣິສຜູ້ຊົງຄືນພຣະຊົນແລ້ວນັ້ນ ກຳແພງແຫ່ງການແບ່ງແຍກໃນ ສມັຍໂບຮານນັ້ນໄດ້ຖືກທຳລາຍລົງ ດ້ວຍເຫດນີ້ຜູ້ເຊື່ອທັງໝົດຖືກຮວມເຂົ້າເປັນຄຣິສຈັກອັນຍິ່ງໃຫຍ່ ອັນດຽວ ຊຶ່ງມີພຣະຄຣິສເປັນສີລາມຸມເອກ ຜູ້ເຊື່ອທັງສິ້ນກໍ່ຂຶ້ນເປັນພຣະວິຫານຂອງພຣະເຈົ້າທີ່ຈະເຣີນ ເຕີບໂຕ (ອຟ2:11-22)

ໃນຄຣິສຈັກສາກົນນີ້ ວຽກງານຂອງທ່ານໂປໂລຄື ການນຳເອົາຂ່າວປະເສີດໄປເຜີຍແຜ່ແກ່ຄົນ ຕ່າງຊາດທີ່ບໍ່ຮູ້ຈັກຂ່າວປະເສີດຂອງພຣະເຈົ້າ ພຣະເຈົ້າຊົງໃຊ້ໃຫ້ທ່ານໄປປ່າວປະກາດແກ່ຊົນຕ່າງ ຊາດວ່າ ບັດນີ້ເຂົາທັງຫລາຍເປັນຄົນຊຶ່ງມີສ່ວນເຕັມທີ່ກັບພວກຢິວໃນຄຣິສຈັກສາກົນອັນດຽວກັນ (ອຟ 3:1-13) ນີ້ເປັນຂ່າວຊຶ່ງບັນຈຸຄວາມໝາຍໄວ້ຫລາຍສຳລັບການນມັສການແລະການດຳເນີນຊີວິດ ຄຣິສຕຽນ ທ່ານໂປໂລໄດ້ອະທິຖານດ້ວຍໃຈຮ້ອນຮົນຂໍໃຫ້ພຣະເຈົ້າຊົງຊ່ວຍໃຫ້ຜູ້ອ່ານໃຫ້ເຂົ້າໃຈເຖິງ ຂ່າວປະເສີດຊັດແຈ້ງຍິ່ງຂຶ້ນ ແລະທ່ານກໍສັຣເສີນພຣະເຈົ້າເພາະພຣະອົງຊົງປະທານພຣະພອນຫລວງ ຫລາຍໃຫ້ແກ່ບັນດາຜູ້ທີ່ນມັສການພຣະອົງດ້ວຍຈິດໃຈທີ່ກະຕັນຍູກະຕະເວທີ (ອຟ 3:14-21)

## ຂ. ເອກພາບໃນການດຳເນີນຊີວິດຄຣິສຕຽນ

ຖ້າເຮົາມີຄວາມເຊື່ອໃນພຣະເຈົ້າພຣະອົງດຽວເປັນຜູ້ຈັດທາງແຫ່ງຄວາມຮອດພົ້ນໄວ້ທາງດຽວ ຄືທາງພຣະຜູ້ຊ່ວຍຜູ້ດຽວ ຄືອົງພຣະເຢຊູຄຣິສເຈົ້າ ຖ້າຄຣິສຕຽນຕັ້ງຢູ່ໃນຄວາມເຊື່ອນີ້ແລ້ວ ແລະຮວມ ເຂົ້າເປັນຄຣິສຈັກອັນດຽວກັນຄືຄຣິສຈັກສາກົນ ກໍຈະເຮັດໃຫ້ເຂົາມີເອກພາບໃນການດຳເນີນຊີວິດຄຣິສ ຕຽນໃນແຕ່ລະວັນ (ອຟ ບົດທີ 4-6, ຕອນທີສອງ)

ພຣະເຈົ້າຊົງນຳມະນຸດເຂົ້າມາຮ່ວມກັນແລະຊົງກະທຳໃຫ້ເຂົາຢູ່ຮ່ວມກັນໄດ້ໂດຍວຽກການຂອງ ພຣະຄຣິສແລະໂດຍການຊົງນຳແຫ່ງຣິດເດດຂອງພຣະວິນຍານບໍຣິສຸດ ພຣະເຈົ້າບໍ່ໄດ້ເຮັດໃຫ້ເຮົາມີ ລັກສນະເໝືອນກັນໝົດ ພຣະອົງຊົງໃຊ້ຜູ້ນຳຫລາຍ ໆ ຄົນ ແຕ່ບໍ່ມີຜູ້ນຳສັກຜູ້ດຽວທີ່ພຣະອົງຊົງປະທານ ຂອງປະທານເໝືອນກັນທຸກປະການ ພຣະອົງຊົງຮຽກຮ້ອງໃຫ້ແຕ່ລະຄົນໃຫ້ໃຊ້ຄວາມສາມາດທີ່ເປັນຂອງ ປະທານຂອງຕົນປົວຣະບັດຕາມຄວາມຕ້ອງການຂອງຄຣິສຈັກດຽວນັ້ນ ແລະຕາມແຜນງານຂອງພຣະເຈົ້າ ພວກຜູ້ນຳເຫລົ່ານີ້ຈະຮວມຄຣິສຈັກເຂົ້າເປັນອັນດຽວກັນດ້ວຍການນມັສການຮ່ວມກັນ ແລະດ້ວຍຄວາມປະ ສົງດີຮ່ວມກັນ ຄຣິສຕຽນຜູ້ສຳນຶກໃນພຣະມຫາກະຣຸນາທິຄຸນທັງຫລາຍຈະເຮັດງານດ້ວຍກັນ ເພື່ອຄຸນ ປໂຍດຂອງຜູ້ອື່ນ (ອຟ 4:1-16)

ພວກຄຣິສຕຽນໃນສມັຍຂອງທ່ານໂປໂລຮູ້ຈັກໂລກຕ່າງສາສນາເປັນຢ່າງດີ ບໍ່ແມ່ນເພາະເພື່ອນ

ບ້ານຂອງເຂົາເປັນພວກຕ່າງສາສນາແຕ່ຢ່າງດຽວ ແຕ່ແມ່ນວ່າຕົວຂອງເຂົາເອງກໍອອກຈາກພື້ນຖານຕ່າງສາສນາເຂົ້າມາດຳເນີນຊີວິດຄຣິສຕຽນ ໃນປີທຳອິດເຂົາຍັງບໍ່ຮູ້ວ່າຄອບຄົວຄຣິສຕຽນນັ້ນເປັນແນວໃດ ເພາະສະນັ້ນແນວຄວາມຄິດແລະແນວການດຳເນີນຊີວິດແບບສາສນາເດີມຈຶ່ງຍັງມີອິດທິພົນເຫນືອເຂົາຢູ່ ທ່ານໂປໂລຈຶ່ງຊັກຊວນເຂົາໃຫ້ຖິ້ມທາງຊີວິດເດີມນັ້ນເສັຍ ແລະປະພຶດຕົວຢ່າງເປັນຄົນໃຫມ່ ໃນຊີວິດປະຈຳວັນເຂົາຕ້ອງລະເວັ້ນທາງທີ່ເຂົາເຄີຍເຮັດ ເຂົາຕ້ອງດຳເນີນຊີວິດດ້ວຍຄວາມຊື່ສັດແລະດ້ວຍຄວາມຮັກ ແລະຕື່ນຕົວຢູ່ສເມີແລະມີໃຈໂມທະນາພຣະຄຸນພຣະເຈົ້າ (ອຟ 4:17-5:20)

ໃນຈົດຫມາຍພຣະທັມເອເຟໂຊກໍເຫມືອນໃນຈົດຫມາຍທີ່ທ່ານໂປໂລຂຽນເຖິງຊາວໂກຣິນໂທ ຄືທ່ານໂປໂລຊັກຊວນສມາຊິກໃນຄອບຄົວໃຫ້ສະແດງຄວາມນັບຖືແລະຄວາມຮັກຕໍ່ກັນແລະກັນ (ອຟ 5:21-6:9) ແຕ່ໃນທີ່ນີ້ມີຄວາມຄິດໃຫມ່ປາກົດຂຶ້ນ ເມື່ອທ່ານໂປໂລຄິດເຖິງຄວາມຮັກລະຫວ່າງສາມີແລະພັຣຍາ ທ່ານເຫັນວ່າຄວາມຮັກນີ້ມີສັນຍາລັກແຫ່ງຄວາມຮັກອັນຊື່ຕົງລະຫວ່າງພຣະຄຣິສກັບຄຣິສຈັກ ເພາະຄຣິສຈັກຈະຍັ້ງຢືນຢູ່ໄດ້ກໍໂດຍຕິດສະນິດກັບພຣະຄຣິສ ແລະບົວລະບັດພຣະອົງດ້ວຍຄວາມຈິງຮັກພັກດີເທົ່ານັ້ນ ແຕ່ຄວາມຄິດນີ້ບໍ່ໄດ້ເຮັດໃຫ້ທ່ານໂປໂລລືມເຣື້ອງຄອບຄົວ ເອກພາບໃນຄອບຄົວຂຶ້ນຢູ່ກັບຄວາມຮັກຄວາມຊ່ວຍເຫລືອ ຄວາມນັບຖືຕໍ່ກັນແລະກັນ ສມາຊິກທຸກຄົນຂອງຄອບຄົວບໍ່ວ່າເຂົາຈະເຮັດຫຽັງກໍໃຫ້ເຮັດຕາມນ້ຳພຣະທັຍຂອງພຣະເຈົ້າ ຊີວິດນີ້ທີ່ເຮັດຕາມນ້ຳພຣະທັຍຂອງພຣະເຈົ້າເປັນຊີວິດທີ່ມີຄວາມຮັກແລະຄວາມເອົາໃຈໃສ່ໃນຄວາມສຸກຂອງຜູ້ອື່ນໃນຄອບຄົວ

ໃນເວລາທີ່ທ່ານໂປໂລຕິດຄຸກຢູ່ນັ້ນ ທ່ານໄດ້ເຫັນພາບທະຫານທີ່ມີຍຸທພັນທັງຊຸດ ທ່ານໄດ້ໃຊ້ເຣື້ອງນີ້ເພື່ອສະແດງວ່າຄຣິສຕຽນຈະຕ້ອງປ້ອງກັນຕົນເອງໃຫ້ພົ້ນຈາກການໂຈມຕີທາງດ້ານຄວາມເຊື່ອ ແລະຕໍ່ສູ້ຢ່າງເຕັມກຳລັງເພື່ອໃຫ້ເປົ້າຫມາຍໃນການບົວລະບັດພຣະເຈົ້າສຳເຣັດ (ອຟ 6:10-20) ດັ່ງນັ້ນທ່ານໄດ້ຊັກຊວນໃຫ້ສວມຍຸທພັນທັງຊຸດທີ່ພຣະເຈົ້າປະທານໃຫ້ ເຊັ່ນດຽວກັບທະຫານທີ່ຕ້ອງມີການປ້ອງກັນຕົວຢູ່ຕລອດເວລາ ດ້ວຍເຄື່ອງຍຸທພັນທີ່ຄົບຊຸດ ຄຳສອນນີ້ແນະນຳໃຫ້ຮູ້ຈັກວ່າຊີວິດເປັນການຕໍ່ສູ້ລະຫວ່າງອຳນາດແຫ່ງຄວາມດີແລະອຳນາດແຫ່ງຄວາມຊົ່ວ ທຸກຄົນຕ້ອງຂຶ້ນທະບຽນຢູ່ກັບຜູ້ບັງຄັບບັນຊາທີ່ຊອບທັມແລະບົວລະບັດໃນທາງທີ່ຖືກຕ້ອງແລະຫມັ້ນຄົງ

ໃນຕອນຈົບທ່ານໂປໂລໄດ້ສົ່ງຂ່າວໃຫ້ແກ່ຜູ້ອ່ານທັງຫລາຍ ແລະອະທິຖານເພື່ອເຂົາ (ອຟ 6:21-24) ໄຊຊນະໃນສົງຄາມແຫ່ງຊີວິດນັ້ນຂຶ້ນຢູ່ກັບຂອງປະທານອັນສມ່ຳສເມີຈາກພຣະເຈົ້າ ແລະການຕອບສນອງແຫ່ງຄວາມຮັກອັນກະຕັນຍູຊື່ຕົງຂອງຄຣິສຕຽນ

ດັ່ງນັ້ນເຮົາສາມາດສລຸບໄດ້ວ່າ ຄຣິສຕຽນຄວນດຳເນີນຊີວິດທີ່ເປັນເອກພາບໃນພຣະຄຣິສໃຫ້ສົມກັບການຊົງເອີ້ນຂອງພຣະເຈົ້າ (ອຟ 4:1) ຊຶ່ງມີຂໍ້ສລຸບສີ່ປະການດ້ວຍກັນ

**ປະການທຳອິດ** ຄຣິສຕຽນຄວນມີໃຈຖ່ອມລົງ ໃຈອ່ອນສຸພາບດ້ວຍຄວາມພຽນອົດທົນ ແລະຜ່ອນຫນັກຜ່ອນເບົາະຊຶ່ງກັນແລະກັນດ້ວຍຄວາມຮັກ (ອຟ 4:2) ໂດຍໃຊ້ຂອງປະທານຕ່າງ ໆ ທີ່ໄດ້ຮັບຈາກພຣະຄຣິສ "ເພື່ອເສີມສ້າງພຣະກາຍຂອງພຣະຄຣິສໃຫ້ຈະເຣີນຂຶ້ນ ຈົນກວ່າເຮົາທຸກຄົນຈະບັນລຸເຖິງຄວາມເປັນນ້ຳນຶ່ງໃຈດຽວກັນໃນຄວາມເຊື່ອ ແລະໃນຄວາມຮູ້ເຖິງເຣື້ອງພຣະບຸດຂອງພຣະເຈົ້າ ຈົນກວ່າເຮົາຈະເປັນຄົນໃຫຍ່ເຕັມສ່ວນ ຄືເຕັມເຖິງຂນາດຄວາມສົມບູນຂອງພຣະຄຣິສ" (ອຟ 4:12-13)

**ປະການທີສອງ** ຄຣິສຕຽນບໍ່ດຳເນີນຊີວິດຕາມແບບຢ່າງຂອງຄົນທີ່ບໍ່ມີຄວາມເຊື່ອ ທ່ານໂປໂລກ່າວວ່າ "ຢ່າດຳເນີນຊີວິດຕາມຢ່າງຄົນຕ່າງຊາດທີ່ເຂົາດຳເນີນກັນນັ້ນ ຄືດ້ວຍໃຈໂງ່ອັນຫາປໂຍດບໍ່ໄດ້" (ອຟ 4:17) ທ່ານໂປໂລແນະນຳຄຣິສຕຽນວ່າ "ພວກທ່ານຈົ່ງຖອດຖິ້ມສະພາບມະນຸດເກົ່າຂອງຕົນຊຶ່ງຄູ່ກັບວິຖີຊີວິດເດີມນັ້ນເສັຽ ທີ່ກຳລັງເສື່ອມເສັຽໄປສູ່ຄວາມຕາຍຕາມຕັນຫາອັນເປັນທີ່ຫລອກລວງ

ນັ້ນ ແລະຈົ່ງໃຫ້ວິນຍານຈິດຂອງທ່ານຖືກຊົງຕັ້ງຂຶ້ນໃຫມ່ ແລະໃຫ້ທ່ານທັງຫລາຍສວມສະພາບມະນຸດໃຫມ່ ຊຶ່ງຊົງສ້າງຂຶ້ນໃຫມ່ຕາມແບບລັກສນະຂອງພຣະເຈົ້າ ໃນຄວາມຊອບທັມແລະຄວາມບໍຣິສຸດທີ່ແທ້ຈິງ" (ອຟ 4:22-24) ດັ່ງນັ້ນຄຣິສຕຽນມີຈິດໃຈໃຫມ່ຕໍ່ເພື່ອນມະນຸດ "ຈົ່ງມີໃຈເມດຕາຕໍ່ກັນ ມີໃຈເອັນດູກັນ ແລະອະພັຍໂທດໃຫ້ກັນ ເຫມືອນດັ່ງພຣະເຈົ້າໄດ້ຊົງໂຜດອະພັຍໂທດໃຫ້ແກ່ພວກທ່ານໃນອົງພຣະຄຣິສນັ້ນ" (ອຟ 4:32) "ເພາະສະນັ້ນທ່ານທັງຫລາຍ ຈົ່ງເປັນຜູ້ດໍາເນີນຊີວິດຕາມແບບຢ່າງພຣະເຈົ້າເຫມືອນເປັນບຸດທີ່ຊົງຮັກ ແລະຈົ່ງດໍາເນີນຊີວິດນັ້ນໃນຄວາມຮັກ ເຫມືອນດັ່ງພຣະຄຣິສໄດ້ຊົງຮັກທ່ານທັງຫລາຍ ແລະຊົງສລະພຣະອົງເອງເພື່ອພວກເຮົາ..." (ອຟ 5:1-2) ພຣະເຢຊູຄຣິສຕ້ອງເປັນແບບຂອງຄຣິສຕຽນທຸກຄົນ ເອກພາບຈຶ່ງຈະເກີດ ເພາະເຮົາມີແບບຢ່າງໃນການດໍາເນີນຊີວິດແບບຢ່າງດຽວຄື **ພຣະຄຣິສ**

**ປະກາດທີສາມ** ພາກສ່ວນສໍາຄັນຂອງການຖືກສ້າງຂຶ້ນໃຫມ່ອີກປະການນຶ່ງຄື "ຄອບຄົວຄຣິສຕຽນ" ຄອບຄົວປະກອບໄປດ້ວຍສມາຊິກ (ສາມີແລະພັຣຍາ ພໍ່ແມ່ແລະລູກຫລານ ນາຍແລະຂ້ອຍຂ້າ) ທີ່ຢໍາເກງພຣະຄຣິສແລະຍອມຟັງຊຶ່ງກັນແລະກັນ (ອຟ 5:21-6:9) ນັ້ນຫມາຍຄວາມວ່າ ສມາຊິກທຸກຄົນໃນຄອບຄົວຕ້ອງເປັນຜູ້ທີ່ມີຄວາມສັດຊື່ ໃຫ້ກຽດແລະຄວາມເຄົາຣົບ ຍອມເຊື່ອຟັງ ແລະຮັບໃຊ້ດ້ວຍຄວາມອົດທົນຄືກັບເປັນຄຣິສຈັກນ້ອຍ ໆ ທີ່ຢູ່ໃນຄົວເຮືອນ ເມື່ອທຸກຄອບຄົວມີຊີວິດທີ່ເຕີບໃຫຍ່ຂຶ້ນໃນຄວາມເຊື່ອເຊັ່ນນັ້ນແລ້ວຄຣິສຈັກສາກົນກໍໄດ້ຮັບພຣະພອນໄປດ້ວຍ

**ປະການທີສີ່** ໃນການຜ່ານຜ່າອຸປສັກຕ່າງ ໆ ຂອງທຸກຄຣິສຈັກໃນໂລກ ຄຣິສຕຽນຕ້ອງສວມຍຸທພັນທັງຊຸດຊຶ່ງມາຈາກພຣະເຈົ້າ (ອຟ 6:10-20) ທ່ານໂປໂລໄດ້ກ່າວຊໍ້າໃນ 1 ທຊ 5:8 ໃນສວມຍຸທພັນທັງຊຸດຂອງພຣະເຈົ້າ ເປັນສິ່ງທີ່ຄຣິສຕຽນທຸກຄົນປະມາດບໍ່ໄດ້ ເພາະຝ່າຍສັດຕູມີກໍາລັງຫລາຍ ຈະກ່າວໄດ້ວ່າກໍາລັງຂອງສັດຕູນັ້ນຫລາຍເກີນກວ່າທີ່ຄຣິສຕຽນຈະຕໍ່ສູ້ໂດຍລໍາພັງຕົວເອງໄດ້ ຄຣິສຕຽນຕ້ອງອາສັຍອຸປກອນ ແລະກໍາລັງຈາກພຣະເຈົ້າ ຕ້ອງການອາສັຍການອ້ອນວອນ "ຈົ່ງອ້ອນວອນແລະໄຫວ້ວອນທຸກຢ່າງ ຈົ່ງອ້ອນວອນໂດຍພຣະວິນຍານທຸກເວລາ ແລະຈົ່ງເຝົ້າຣະວັງໃນການນັ້ນດ້ວຍຄວາມພຽນທຸກຢ່າງ" (ອຟ 6:18) ການອ້ອນວອນເປັນທໍ່ພຣະພອນທີ່ຕິດຕໍ່ກັບພຣະເຈົ້າເພື່ອຮັບກໍາລັງໃນການຮັບໃຊ້ ແລະກໍາຈັດອຸປສັກຕ່າງ ໆ ໃຫ້ຜ່ານພົ້ນໄປ

## ຄ. ພຣະປະສົງຂອງພຣະເຈົ້າໃນເອກພາບ (ຄວາມເປັນອັນນຶ່ງອັນດຽວກັນ) ຂອງຄຣິສຈັກ

ໃນພຣະທັມເອເຟໂຊ 1:9-10 ກ່າວວ່າ "ພຣະເຈົ້າໄດ້ຊົງໂຜດໃຫ້ພວກເຮົາຮູ້ຈັກຄວາມລັບເລິກໃນນໍ້າພຣະທັຍຂອງພຣະອົງ ຕາມພຣະເຈຕະນາຂອງພຣະອົງ ຊຶ່ງພຣະອົງໄດ້ຊົງຕັ້ງພຣະທັຍໄວ້ກ່ອນໃນພຣະຄຣິສ ປະສົງວ່າເມື່ອເວລາກໍານົດຄົບບໍຣິບູນແລ້ວ ພຣະອົງຈະຊົງຮວບຮວມສິ່ງສາຣະພັດ ທັງທີ່ມີຢູ່ໃນຟ້າສວັນແລະແຜ່ນດິນໂລກ ໄວ້ໃນອົງພຣະຄຣິສຜູ້ຊົງເປັນພຣະປະມຸກ" ເຮົາເຫັນໄດ້ວ່າພຣະເຈົ້າໄດ້ຊົງຕັ້ງພຣະທັຍໄວ້ແທ້ ດ້ວຍເຫດນີ້ພຣະເຈົ້າເຮັດການທຸກຢ່າງໃຫ້ສໍາເຣັດຕາມແຜນການນີ້ ທີ່ນີ້ມີຄວາມຫມາຍຕໍ່ທຸກຄົນທີ່ຕ້ອງການຕິດແລະເຊື່ອຟັງພຣະເຈົ້າ ທີ່ຈະຕ້ອງປະຕິບັດຕົວແລະປ່ຽນແປງໃຫ້ຊີວິດໃຫມ່ໃຫ້ເຫມາະສົມຕາມນໍ້າພຣະທັຍຂອງພຣະເຈົ້າ ພຣະປະສົງຂອງພຣະເຈົ້າທີ່ຕ້ອງການໃຫ້ທຸກສິ່ງຮວມທັງຄຣິສຕຽນທຸກຄົນເປັນເອກພາບໂດຍທາງພຣະເຢຊູຄຣິສ ມີນໍ້ານຶ່ງໃຈດຽວກັນໂດຍຄວາມເຊື່ອໃນພຣະເຢຊູຄຣິສ ເພື່ອໃຫ້ມະນຸດທີ່ຖືກແຍກອອກຈາກພຣະເຈົ້າໄດ້ກັບຄືນມາຢູ່ພາຍໃຕ້ການປົກຄອງຂອງ

ພຣະອົງແລະຕາມພຣະປະສົງຂອງພຣະອົງ ມີນ້ຳນຶ່ງໃຈດຽວກັນກັບພຣະອົງ ເຮັດໃຫ້ພຣະປະສົງຂອງພຣະອົງມາເຖິງຄວາມສຳເຣັດ ແລະນຳຄວາມຊື່ນຊົມຍິນດີມາສູ່ແຜ່ນດິນຂອງພຣະອົງ ພຣະປະສົງຂອງພຣະເຈົ້າໃນການເປັນອັນນຶ່ງອັນດຽວກັນມີ ດັ່ງນີ້

1. ດ້ວຍພຣະຄຸນຂອງພຣະເຈົ້າ ພຣະອົງໄດ້ຕຽມການໄວ້ລ່ວງໜ້າໃນການນຳພາໃຫ້ຄຣິສຕຽນຜ່ານຜ່າໂດຍຄວາມເຊື່ອ ທີ່ຈະຮັບການປ່ຽນແປງຈາກສະພາບຊີວິດເດີມທີ່ຕ້ອງຕາຍກັບຄືນມີຊີວິດໃໝ່ໃນພຣະອົງ ຊີວິດໃໝ່ນີ້ສ້າງຂຶ້ນໃໝ່ໂດຍພຣະເຢຊູຄຣິສ ເພື່ອໃຫ້ປະກອບການດີ ຕາມພຣະປະສົງຂອງພຣະອົງທີ່ໄດ້ຈັດຕຽມໄວ້ລ່ວງໜ້າ (ອຟ 2:1-10)

2. ພຣະເຈົ້ານຳພາມະນຸດໃຫ້ມີເອກພາບກັບມະນຸດດ້ວຍກັນ ຈະເປັນຄົນຕ່າງຊາດຫລືຢິວ ໄດ້ເຂົ້າຮ່ວມເປັນເອກພາບດຽວກັນໃນພຣະຄຣິສ ພຣະອົງໄດ້ຮື້ກຳແພງທີ່ກັ້ນລະຫວ່າງການເປັນສັດຕູກັນຖິ້ມ (2:11-22) ກຳແພງໃນທີ່ນີ້ໄດ້ອ້າງອີງເຖິງກຳແພງໃນບໍຣິເວນພຣະວິຫານທີ່ແບ່ງເຂດອອກເປັນຊັ້ນ ໆ ຜູ້ທີ່ສາມາດເຂົ້າແລະຢູ່ໃກ້ຫີບພັນທະສັນຍາທີ່ຖືວ່າເປັນທີ່ປະທັບຂອງພຣະເຈົ້ານັ້ນໄດ້ແກ່ມຫາປະໂລຫິດ ພວກທີ່ຢູ່ນອກ ໆ ອອກມາໄດ້ແກ່ພວກປະໂຣຫິດ ຊາຍຊາວຢິວ ຍິງຊາວຢິວ ແລະຄົນຕ່າງຊາດເປັນພວກທີ່ຢູ່ນອກທີ່ສຸດ ພວກຕ່າງຊາດຈະກາຍເຂົ້າບໍຣິເວນອື່ນ ໆ ບໍ່ໄດ້ ຖ້າຜິດຕໍ່ກົດລະບຽບນີ້ຄົນຕ່າງຊາດຜູ້ນັ້ນຕ້ອງໂທດເຖິງຕາຍ ທ່ານໂປໂລໄດ້ຊີ້ໃຫ້ເຫັນວ່າໂດຍພຣະຄຣິສນັ້ນການແບ່ງແຍກໄດ້ສິ້ນສຸດລົງທຸກຄົນເປັນເອກພາບດຽວ ທັງສອງຝ່າຍເຂົ້າເປັນ "ຄົນໃໝ່ ຄົນດຽວໃນພຣະຄຣິສ" (ອຟ 2:15) ຄຳວ່າ "ຄົນໃໝ່" ຕາມພາສາເດີມບໍ່ແມ່ນເປັນຄົນເດີມໃນເວລາໃໝ່ ຫລືສະຖານທີ່ໃໝ່ ແຕ່ໝາຍຄວາມວ່າທັງສອງຝ່າຍຖືກສ້າງຂຶ້ນໃໝ່ ທີ່ມີທັມຊາດແລະຄວາມງົດງາມຫລາຍກວ່າທັມຊາດເດີມຂອງທັງສອງຝ່າຍ ຄົນໃໝ່ທີ່ສ້າງຂຶ້ນນີ້ບໍ່ແມ່ນວ່າໃຫ້ຄົນຕ່າງຊາດກາຍມາເປັນຄົນຢິວ ຫລືຄົນຢິວກັບກາຍເປັນຄົນຕ່າງຊາດ ແຕ່ເປັນທັມຊາດໃໝ່ທີ່ມີລັກສນະຂອງພຣະຄຣິສ ຈຸດປະສົງແລະຄວາມຕັ້ງໃຈຂອງຄຣິສຕຽນເກີດຂຶ້ນໃໝ່ໂດຍພຣະເຢຊູຄຣິສ ເຮັດໃຫ້ເກີດສັງຄົມໃໝ່ ແລະສງ່າຣາສີໃໝ່

3. ພຣະເຈົ້ານຳພາໃຫ້ມະນຸດຄືນດີກັບພຣະອົງແລະມີເອກພາບກັບພຣະອົງທາງພຣະຄຣິສ (ອຟ 2:10) ເພື່ອເປັນການເປີດຫົນທາງໃຫ້ຄຣິສຕຽນເຂົ້າເຝົ້າພຣະອົງ ທ່ານໂປໂລໄດ້ກ່າວເຊັ່ນນີ້ສອງເທື່ອດ້ວຍກັນ (ອຟ 2:18, 3:12) ໂດຍໄມ້ກາງແຂນແລະການເສັຽສລະຂອງພຣະເຢຊູຄຣິສ (ອຟ 2:13, 16) ໄດ້ເປີດຫົນທາງໄປເຖິງພຣະເຈົ້າ ຄວາມແຕກແຍກລະຫວ່າງມະນຸດກັບພຣະເຈົ້າໄດ້ປະສານກັນເກີດຄວາມເປັນເອກພາບຂຶ້ນໃໝ່ ເຮົາເຂົ້າເຝົ້າພຣະເຈົ້າໄດ້ໂດຍບໍ່ຕ້ອງຜ່ານຜູ້ນຶ່ງຜູ້ໃດ

4. ພຣະປະສົງຂອງພຣະເຈົ້າຄືໃຫ້ເກີດເອກພາບໃນໂລກຂອງພຣະອົງ ພຣະເຈົ້າໃຊ້ພຣະຄຣິສເປັນອຸປະກອນສຳຄັນໃນການສ້າງເອກພາບນັ້ນ ແຕ່ພຣະຄຣິສບໍ່ມີຮູບຮ່າງປາກົດໃນປັດຈຸບັນ ພຣະອົງຢູ່ກັບເຮົາຝ່າຍວິນຍານ ດັ່ງນັ້ນພຣະອົງໄດ້ໃຊ້ຄຣິສຈັກທີ່ມີສະພາບທີ່ປາກົດເປັນອຸປກອນຊ່ວຍໃຫ້ແຜນການຂອງພຣະອົງເປັນໄປຕາມພຣະປະສົງຂອງພຣະເຈົ້າ ນີ້ໝາຍຄວາມວ່າຄຣິສຈັກເປັນພຣະກາຍຂອງພຣະຄຣິສ ເປັນສຽງເປັນຄວາມຄິດ ເປັນມືແລະເທົ້າທີ່ປາກົດຕ່າງໜ້າພຣະເຈົ້າ ພຣະເຢຊູຄຣິສເປັນປະມຸກຂອງຄຣິສຈັກ "ຄືເຕັມບໍຣິບູນດ້ວຍພຣະອົງ ຜູ້ຊົງເຕັມໃນທຸກຫົນທຸກແຫ່ງທົ່ວສັພສິ່ງ" (ອຟ 1:22-23) ຄຳວ່າ "ເຕັມບໍຣິບູນ" ມີຄວາມໝາຍສອງດ້ານ ດ້ານນຶ່ງເປັນຄວາມໝາຍທີ່ສະແດງໃຫ້ເຫັນສິ່ງທີ່ເຕີມດັ່ງນັ້ນເຮົາມີຄຣິສຈັກເຕີມດ້ວຍພຣະຄຣິສ ແຕ່ອີກດ້ານນຶ່ງ "ເຕັມບໍຣິບູນ" ຍັງໝາຍເຖິງສ່ວນປະກອບຂອງສານ ນັ້ນໝາຍຄວາມວ່າ ຄຣິສຈັກໄດ້ຮັບການເຕີມໃຫ້ເຕັມໂດຍພຣະຄຣິສ ແລະປະກອບດ້ວຍພຣະຄຣິສ ຄຣິສຈັກຈະເປັນອຸປກອນເຄື່ອງມືທີ່ໃຊ້ການໄດ້ຖ້າມີພຣະເຢຊູຄຣິສ ດັ່ງນັ້ນເຮົາເຫັນໄດ້ວ່າ ພຣະຄຣິສເປັນສີສະທີ່ຄອຍຄວບຄຸມ ແລະຄຣິສຈັກເປັນຮ່າງກາຍທີ່ມີໜ້າທີ່ຈະປະຕິບັດຕາມ ເພື່ອວຽກການ

ຂອງພຣະເຈົ້າໃນໂລກນີ້ໃຫ້ເປັນໄປຕາມພຣະປະສົງຂອງພຣະອົງ

ດັ່ງນັ້ນແລ້ວພຣະທັມເອເຟໂຊໄດ້ສອນເຮົາເຖິງວຽກການໜ້າທີ່ຂອງຄຣິສຈັກ ຄືເຮັດຕາມພຣະປະສົງຂອງພຣະເຈົ້າເພື່ອໃຫ້ໂລກມີເອກພາບ ເຄື່ອງມືອຸປກອນທີ່ພຣະເຈົ້າໃຊ້ເຮັດໃຫ້ເອກພາບເກີດຂຶ້ນໃນພຣະເຢຊູຄຣິສຄືຄຣິສຈັກ ເອກພາບທີ່ເກີດຂຶ້ນເປັນຜົນງານຂອງພຣະເຢຊູຄຣິສ

## ງ. ຄຸນຄ່າຂອງພຣະທັມເອເຟໂຊ

ຄວາມຈິງທີ່ທ່ານໂປໂລບໍ່ໄດ້ກ່າວເຖິງບັນຫາຄວາມແຕກແຍກຂອງຄຣິສຈັກທ້ອງຖິ່ນໃນສມັຍນັ້ນເຮັດໃຫ້ຈົດໝາຍພຣະທັມສະບັບນີ້ມີຄຳສອນແກ່ເຮົາໄດ້ດີຍິ່ງຂຶ້ນ ທ່ານບໍ່ໄດ້ຮຽບຮ້ອນຂຽນ ຫລືມີເຫດໂຕ້ແຍ້ງໃຫ້ຂຽນ ແຕ່ທ່ານຂຽນດ້ວຍຈິດໃຈສະງົບ ທ່ານໃຫ້ເຫັນນິມິດອັນຍິ່ງໃຫຍ່ໃນເຣື້ອງຂ່າວປະເສີດສຳລັບໂລກ ນີ້ເປັນຄວາມເຊື່ອໝັ້ນຂອງນັກປ່າວປະກາດທີ່ຍິນດີຈະຍອມເສັຽສລະທຸກສິ່ງເພື່ອຂ່າວປະເສີດນັ້ນ ແມ່ນວ່າທ່ານຈະຕ້ອງຜະເຊີນກັບຄວາມທຸກຫລືຄວາມຕາຍ

ເບື້ອງຫລັງການປ່າວປະກາດຂອງທ່ານໂປໂລ ທ່ານມີຄວາມເຊື່ອໃນພຣະເຈົ້າຢ່າງໝັ້ນຄົງວ່າຂ່າວປະເສີດແລະຂອງປະທານທຸກຢ່າງມາຈາກພຣະອົງ ເຮົາຈະເຂົ້າໃຈປອັດສາດໄດ້ກໍຕໍ່ເມື່ອເຮົາເຂົ້າໃຈເຫດການຕ່າງ ໆ ທີ່ເປັນໄປຕາມທີ່ພຣະເຈົ້າຊົງເຮັດໃຫ້ພຣະປະສົງຂອງພຣະອົງສຳເຣັດເພື່ອມະນຸດໂດຍມີພຣະເຢຊູຄຣິສເປັນຈຸດສູນຣວມ ພຣະວິນຍານຂອງພຣະອົງໄດ້ນຳໃຫ້ເຮົາເຊື່ອໃນພຣະຄຣິສແລະປະຕິບັດຕາມນ້ຳພຣະທັຍຂອງພຣະອົງ ແຜນງານຂອງພຣະເຈົ້ານີ້ໄດ້ຣວມທັງຊາວຢິວແລະຊົນຕ່າງຊາດເຂົ້າມາດ້ວຍກັນ ດັ່ງນັ້ນຈຶ່ງເປັນເຫດໃຫ້ເກີດຄຣິສຈັກສາກົນ

ຄຣິສຕຽນຄວນຕອບແທນພຣະຄຸນຂອງພຣະເຈົ້າສຳລັບຂອງປະທານທີ່ພຣະອົງໄດ້ຊົງປະທານໃຫ້ດ້ວຍການມີຊີວິດທີ່ເຕັມໄປດ້ວຍຄວາມເຊື່ອ ຄວາມກະຕັນຍູ ແລະຄວາມຊື່ນຊົມຍິນດີ ດັ່ງນັ້ນທ່ານໂປໂລຈຶ່ງໄດ້ສະແດງຄວາມຮູ້ສຶກນີ້ອອກມາໃນການອະທິຖານ ແລະໂມທະນາພຣະຄຸນພຣະເຈົ້າເພາະຂ່າວປະເສີດ (ອຟ 1:3-14) ແລະເພາະຄວາມເຊື່ອຂອງພວກຄຣິສຕຽນແລະຜູ້ທີ່ອ່ານພຣະທັມຂອງທ່ານ (ອຟ 1:15-23) ຄຳອະທິຖານຂອງທ່ານໃນພຣະທັມເອເຟໂຊ 3:14 ເປັນຄຳອະທິຖານ ເພື່ອວ່າເຂົາເຈົ້າທັງຫລາຍຈະໄດ້ຈຳເຣີນຂຶ້ນໃນຄວາມເຂົ້າໃຈ ແລະໃນຊີວິດທີ່ຈົງຮັກພັກດີ ເພາະພຣະເຈົ້າປະທານຂອງປະທານຕ່າງ ໆ ໃຫ້ຄຣິສຈັກ ຄຣິສຕຽນຈຶ່ງຄວນອະທິຖານດ້ວຍຄວາມໄວ້ວາງໃຈ ພຣະເຈົ້າຊົງພ້ອມທີ່ຈະປະທານຍິ່ງກວ່າທີ່ມະນຸດທູນຂໍ (ອຟ 3:14-21)

ໃນເອກພາບແຫ່ງການເປັນພີ່ນ້ອງຄຣິສຕຽນ ມີຄວາມຈຳເປັນແລະຄວາມຕ້ອງການໃນການໃຊ້ຂອງປະທານທີ່ພຣະເຈົ້າພຣະຣາຊທານໃຫ້ ເພື່ອໃຫ້ຄຣິສຕຽນຈະເຣີນຂຶ້ນ ຄຣິສຕຽນຄວນທັນຫລັງໃຫ້ແກ່ທຸກສິ່ງຊີວິດທີ່ຜ່ານພົ້ນມາອັນຫາຄ່າບໍ່ໄດ້ ຄຣິສຕຽນຄວນຈະເຣີນຂຶ້ນໃນພຣະປະສົງຂອງພຣະເຈົ້າທີ່ມີຕໍ່ຜູ້ອື່ນແລະຕໍ່ພຣະເຈົ້າ ພຣະເຈົ້າປະສົງແກ່ຜູ້ທີ່ເຊື່ອທຸກຄົນ ໃຫ້ເຂົາສະແດງອອກເຖິງຄວາມມີນ້ຳໃຈໃນຄວາມຈົງຮັກພັກດີ ແລະໃນການຊ່ວຍເຫລືອຜູ້ອື່ນ ໃນສັມພັນທະພາບທຸກປະການ ແລະພາຍໃຕ້ການທົດລອງທຸກຢ່າງ ຊຶ່ງຄວາມຊົ່ວແລະການຍາກລຳບາກອາດນຳມາໃຫ້ ແມ່ນວ່າທ່ານໂປໂລຕ້ອງຕິດໂຊ່ຢູ່ທ່ານກໍມີປະສົງແລະຮ້ອງຂໍຜູ້ອື່ນໃຫ້ອະທິຖານ ເພື່ອທ່ານຈະມີກຳລັງແລະຄວາມກ້າຫານທີ່ຈະປະກາດຢ່າງກ້າຫານ (ອຟ 6:18-20) ເພາະສະນັ້ນຄຣິສຕຽນທຸກຄົນຈຶ່ງຕ້ອງສະແຫວງຫາເອກພາບໃນຊີວິດຂອງຕົນເອງ ໂດຍມີຄວາມເຊື່ອທີ່ບໍ່ແບ່ງແຍກແລະມີການປະພຶດໃນສິ່ງຕ່າງ ໆ ທີ່ພຣະເຈົ້າຊົງປະທານ

ໃຫ້ກະທຳຢ່າງບໍ່ຫວັ່ນໄຫວ

ຈົ່ງພຽນພຍາຍາມເອົາສັນຕິສຸກຜູກມັດ ເພື່ອຮັກສາຄວາມເປັນນ້ຳນຶ່ງໃຈດຽວກັນ ຊຶ່ງພຣະວິນຍານຊົງປະທານໃຫ້ນັ້ນ (ອຟ 4:3) ຈົ່ງມີກຳລັງເພີ່ມຂຶ້ນໃນອົງພຣະຜູ້ເປັນເຈົ້າ ແລະໃນຣິດເດດອັນແກ່ກ້າຂອງພຣະອົງ (ອຟ 6:10) ແຕ່ຈົ່ງເຂົ້າໃຈນ້ຳພຣະທັຍຂອງອົງພຣະຜູ້ເປັນເຈົ້າວ່າເປັນຢ່າງໃດ (ອຟ 5:17) ແລະໃຫ້ທ່ານທັງຫລາຍສວມສະພາບມະນຸດໃຫມ່ ຊຶ່ງຊົງສ້າງຂຶ້ນໃຫມ່ຕາມແບບລັກສນະຂອງພຣະເຈົ້າ ໃນຄວາມຊອບທັມແລະຄວາມບໍຣິສຸດທີ່ແທ້ຈິງ (ອຟ 4:24) ຈົ່ງມີໃຈເມດຕາຕໍ່ກັນ ມີໃຈເອັນດູກັນ ແລະອະພັຍໂທດໃຫ້ກັນ ເຫມືອນດັ່ງພຣະເຈົ້າຊົງໂຜດອະພັຍໂທດໃຫ້ແກ່ພວກທ່ານໃນອົງພຣະຄຣິສນັ້ນ (ອຟ 4:32) ແລະຈົ່ງດຳເນີນຊີວິດນັ້ນໃນຄວາມຮັກ ເຫມືອນດັ່ງພຣະຄຣິສໄດ້ຊົງຮັກທ່ານທັງຫລາຍ ແລະຊົງສລະພຣະອົງເອງເພື່ອພວກເຮົາ (ອຟ 5:2) ຈົ່ງຂອບພຣະຄຸນພຣະເຈົ້າ ຄືພຣະບິດາສຳລັບສິ່ງສາຣະພັດສເມີ ໃນພຣະນາມຂອງພຣະເຢຊູຄຣິສເຈົ້າຂອງເຮົາທັງຫລາຍ (ອຟ 5:20)

### ຈ. ພຣະກະຣຸນາອັນອຸດົມຂອງພຣະເຈົ້າ

ພຣະເຈົ້າຊົງມີພຣະກະຣຸນາອັນອຸດົມທີ່ໃຫຍ່ຫລວງຕໍ່ຜູ້ເຊື່ອ ພຣະກະຣຸນາອັນອຸດົມນີ້ເປັນການກະທຳຂອງພຣະເຈົ້າທີ່ພຣະອົງ (1) ສຳແດງພຣະອົງເອງໃຫ້ມະນຸດໄດ້ຮູ້ຈັກ (2) ພຣະຣາຊທານພຣະເຢຊູຄຣິສເພື່ອມະນຸດ (3) ພຣະເຢຊູຄຣິສໄດ້ເສັຽສລະຊີວິດເພື່ອໄຖ່ (4) ພຣະອົງຊົງເຮັດທຸກຢ່າງດ້ວຍຄວາມຮັກຂອງພຣະອົງ ເມື່ອເຮົາສຶກສາເບິ່ງດູພຣະກະຣຸນາອັນອຸດົມຂອງພຣະເຈົ້າຈາກພຣະທັມເອເຟໂຊ 1:3-14 ຈະພົບວ່າ

1. **ພຣະກະຣຸນາອັນອຸດົມຂອງພຣະເຈົ້າໃຫ້ຜົນປໂຍດຄື**
   - ພຣະເຈົ້າປະທານພຣະພອນຝ່າຍວິນຍານ (ຂໍ້ 3)
   - ເຮົາໄດ້ຮັບການອະພັຍທີ່ຫລົງຜິດຂອງເຮົາ (ຂໍ້ 7)

2. **ຕົ້ນກຳເນີດແຫ່ງພຣະກະຣຸນາອັນອຸດົມຂອງພຣະເຈົ້າ**
   - ພຣະເຈົ້າໄດ້ຊົງເລືອກໄວ້ກ່ອນທີ່ຈະຊົງວາງຮາກສ້າງໂລກ (ຂໍ້ 4)
   - ເກີດຈາກພຣະປະສົງອັນພໍພຣະທັຍຂອງພຣະເຈົ້າ (ຂໍ້ 5)

3. **ຈຸດປະສົງແຫ່ງພຣະກະຣຸນາອັນອຸດົມຂອງພຣະເຈົ້າ**
   - ເພື່ອໃຫ້ເຮົາບໍຣິສຸດໂດຍບໍ່ມີຂໍ້ຕິຕຽນ ດ້ວຍຄວາມຮັກຂອງພຣະເຈົ້າ (ຂໍ້ 4)
   - ເພື່ອເຮົາຈະມີສ່ວນຮ່ວມໃນເອກພາບພາຍໃຕ້ພຣະເຢຊູຄຣິສ (ຂໍ້ 10)

4. **ສິດທິພິເສດອັນເກີດຈາກພຣະກະຣຸນາອັນອຸດົມຂອງພຣະເຈົ້າ**
   - ເຮົາໄດ້ເປັນບຸດຂອງພຣະເຈົ້າໂດຍທາງພຣະເຢຊູຄຣິສ (ຂໍ້ 5)

5. **ຄຸນຄ່າຂອງພຣະກະຣຸນາອັນອຸດົມຂອງພຣະເຈົ້າ**
   - ພຣະເຢຊູຄຣິສຊົງໄຖ່ໃຫ້ພົ້ນຄວາມຜິດບາບດ້ວຍພຣະໂລຫິດຂອງພຣະອົງ (ຂໍ້ 7)

6. **ພຣະກຣຸນາອັນອຸດົມຂອງພຣະເຈົ້າມີຄວາມໝາຍແກ່ເຮົາ**

- ເມື່ອໄດ້ຍິນພຣະທັມອັນສັດຈິງ ແລະໄດ້ໄວ້ວາງໃຈ (ຂໍ້ 12, 13)

7. **ຄວາມໝັ້ນຄົງໃນພຣະກະຣຸນາອັນອຸດົມຂອງພຣະເຈົ້າ**

- ພຣະວິນຍານເປັນເຄື່ອງມັດຈຳຂອງການຮັບມໍຣະດົກຈາກພຣະເຈົ້າ (ຂໍ້ 13, 14)

| |
|---|
| ຈົ່ງເອົາສິ່ງທີ່ທ່ານໄດ້ສຶກສາຈາກຂ້າງເທິງເຮັດບົດຝຶກຫັດຂໍ້ສີ່ & ຫ້າ |

ວັນ 2-5-97

# ບົດທີ 7

## ຈົດໝາຍຂອງທ່ານໂປໂລ ເຖິງຄຣິສຈັກໃນເມືອງຟີລິບປອຍ

### ຂໍ້ໃຂຈົດໝາຍພຣະທັມຟີລິບປອຍ

> *ຂ້າພະເຈົ້າມີໃຈຊົມຊື່ນຍິນດີຫລວງຫລາຍໃນອົງພຣະຜູ້ເປັນເຈົ້າ ເພາະວ່າໃນທີ່ສຸດນີ້ ພວກເຈົ້າໄດ້ຫວນລະນຶກເຖິງຂ້າພະເຈົ້າອີກ ຄວາມຈິງ ເຈົ້າທັງຫລາຍກໍເຄີຍຄິດເຖິງຂ້າພະເຈົ້າຢູ່ ແຕ່ຍັງບໍ່ມີໂອກາດທີ່ຈະສະແດງ ຂ້າພະເຈົ້າບໍ່ໄດ້ຈົ່ມເຖິງເຣື່ອງການຂັດສົນ ເພາະຂ້າພະເຈົ້າຈະມີຖານະຢ່າງໃດກໍຕາມ ຂ້າພະເຈົ້າກໍຮຽນຮູ້ແລ້ວທີ່ຈະພໍໃຈຢ່າງນັ້ນ ຂ້າພະເຈົ້າຮູ້ຈັກທີ່ຈະປະສົບກັບການຕົກຕ່ຳ ແລະຮູ້ຈັກທີ່ຈະປະສົບກັບຄວາມອຸດົມສົມບູນ ບໍ່ວ່າໃນກໍຣະນີໃດ ໆ ຂ້າພະເຈົ້າໄດ້ຮຽນຮູ້ເຖິງແງ່ຄວາມລັບ ທີ່ຈະປະສົບກັບຄວາມອີ່ມທ້ອງ ແລະຄວາມອຶດຢາກ ຄວາມສົມບູນພູນສຸກ ແລະຄວາມຂັດສົນ ຂ້າພະເຈົ້າສາມາດສູ້ກັບທຸກສິ່ງໄດ້ໂດຍພຣະອົງຜູ້ຊົງຊູກຳລັງເຮົາ*
>
> *(ຟປ 4: 10-13)*

ໃນບັນດາພຣະທັມຈົດໝາຍຂອງທ່ານໂປໂລ ນັບໄດ້ວ່າພຣະທັມຟີລິບປອຍຂຽນດ້ວຍຄວາມຊົມຊື່ນຍິນດີ ດ້ວຍຄວາມຮັກ ແລະໄດ້ສະແດງອອກເຖິງສັມພັນທະພາບທີ່ມີຄວາມໃກ້ຊິດ ຊຶ່ງທ່ານໂປໂລໄດ້ມອບໃຫ້ແກ່ຜູ້ອ່ານຊາວເມືອງຟີລິບປອຍຫລາຍທີ່ສຸດ ສິ່ງເຫລົ່ານີ້ສະແດງໃຫ້ເຫັນວ່າ ທ່ານໂປໂລມີຄວາມພຶ່ງພໍໃຈ ແລະມີຄວາມພາກພູມໃຈໃນຄຣິສຈັກຟີລິບປອຍຫລາຍ ຊຶ່ງແຕກຕ່າງຈາກເມືອງອື່ນ ໆ ທີ່ມີບັນຫາເກີດຂຶ້ນໃນຄຣິສຈັກ ດັ່ງທີ່ເກີດຂຶ້ນ**ໃນເມືອງເທຊະໂລນິກ** ຄຣິສຕຽນຫລາຍຄົນຫວຸ້ນວາຍເນື່ອງດ້ວຍເຣື່ອງວັນສຸດທ້າຍຂອງໂລກ ຄຣິສຕຽນກາຍເປັນຄົນກຽດຄ້ານ ບໍ່ເຮັດວຽກລ້ຽງຊີບ ປ່ອຍໃຫ້ເປັນພາຣະແກ່ຄົນອື່ນໃນຄຣິສຈັກ **ໃນເມືອງຄາລາເຕັຽ** ພວກຄຣິສຕຽນເກືອບຈະຖິ້ມຄວາມເຊື່ອ ເຣື່ອງໃນພຣະຄຸນຄວາມຣອດທີ່ພຣະເຈົ້າຊົງປະທານໃຫ້ໂດຍທາງພຣະເຢຊູຄຣິສ ອັນເປັນສິ່ງສຳຄັນທີ່ສຸດສຳລັບຄວາມເຊື່ອຄຣິສຕຽນ ຈຶ່ງເປັນເຫດໃຫ້ທ່ານໂປໂລຕ້ອງຂຽນຈົດໝາຍໄປເຖິງພວກເຂົາຢ່າງຮຸນແຮງ **ໃນເມືອງໂກຣິນໂທ**ຄຣິສຈັກໄດ້ເກີດການໂຕ້ຖຽງກັນ ແລະມີບັນຫາທາງດ້ານສິລທັມ ເຮັດໃຫ້ຄຣິສຈັກເກີດອັນຕະລາຍ ແລະມີຜົນເສັຍຫາຍຕໍ່ທ່ານໂປໂລ **ໃນເມືອງໂກໂລຊາຍ**ເກີດຄຳສອນທີ່ມີຄວາມໂນ້ມອຽງໄປໃນທາງທີ່ເຮັດໃຫ້ພຣະຄຣິສກາຍເປັນພຣະຜູ້ຊ່ວຍອົງນຶ່ງ ຖ້າມກາງພຣະຜູ້ຊ່ວຍອົງອື່ນ ໆ (ເຂົາເຊື່ອວ່າຄວາມຣອດພົ້ນມີຫລາຍທາງ) ທີ່ຈະໄປສູ່ພຣະເຈົ້າ ຄວາມເຂົ້າໃຈນີ້ມີຜົນໃຫ້ເກີດຄວາມເຂົ້າໃຈຜິດ ແລະບໍ່ໄດ້ເຫັນເຖິງຄວາມສຳຄັນ ແລະບໍ່ເຫັນເຖິງພາຣະໜ້າທີ່ຂອງພຣະເຢຊູຄຣິສວ່າພຣະອົງເປັນສູນກາງຂອງຄວາມເຊື່ອແລະຄວາມຣອດພົ້ນຢ່າງແທ້ຈິງ ແຕ່ວ່າຄຣິສຈັກ**ໃນເມືອງຟີລິບປອຍ** ເຖິງວ່າຈະມີ

ການກະທົບກະທຽບເລັກນ້ອຍເກີດຂຶ້ນ ແຕ່ກໍບໍ່ມີອັນຕະລາຍອັນໃດທີ່ຈະເປັນພັຍແກ່ຄຣິສຈັກ ທ່ານໂປໂລໄດ້ພົບຄວາມຊົມຊື່ນຍິນດີແລະຄວາມພໍໃຈໃນຄວາມເຊື່ອ ແລະມິດພາບຂອງພວກຄຣິສຕຽນໃນເມືອງຟີລິບປອຍຫລາຍທີ່ສຸດ

**ນຶ່ງ. ລັກສນະຂອງເມືອງຟີລິບປອຍແລະພື້ນເບື້ອງຫລັງ**

ຟີລິບປອຍ ເປັນເມືອງສຳຄັນໃນແຄວ້ນມາເກໂດເນັຽ ຊຶ່ງຢູ່ທາງພາກເຫນືອຂອງປະເທດກຣີຊ ເມືອງນີ້ເປັນອານານິຄົມຂອງໂຣມ ເມືອງຟີລິບປອຍໄດ້ຕັ້ງຊື່ເມືອງຕາມຊື່ຂອງກະສັດຟີລິບທີສອງ ແຫ່ງມາເກໂດເນັຽ (King Phillip II of Mocedon) ກະສັດຟີລິບທີສອງເປັນພໍ່ຂອງກະສັດອາເລັກຊານເດີມະຫາຣາຊ (Alexander the Great) ເມືອງຟີລິບປນີ້ຕັ້ງຢູ່ບົນຖະນົນຫລວງສາຍເຫນືອຊື່ "ເອກນາທຽນ" (Egnatian) ຖະນົນນີ້ມຸ້ງໄປຍັງເມືອງຄອນສະແຕນຕິໂນເປີ້ນ (Constantinople) ເປັນຖະນົນເຊື່ອມຣະຫວ່າງຕາວັນອອກແລະຕາວັນຕົກເຂົ້າດ້ວຍກັນ ໃນເມືອງນີ້ເອງໄດ້ກໍ່ຕັ້ງຄຣິສຈັກຊາວຢຸໂຣປຂຶ້ນເປັນແຫ່ງແລກ ຊຶ່ງນັບວ່າເປັນຈຸດສຳຄັນໃນການຂຍາຍຕົວຂອງຄຣິສຈັກໃນສະໃຫມແລກນັ້ນ ທ່ານໂປໂລໄດ້ຕັ້ງຄຣິສຈັກນີ້ຂຶ້ນໃນຣະຫວ່າງການເດີນທາງໄປປະກາດຂ່າວປະເສີດຖ້ຽວທີສອງ (ກຈ 16:12-40) ໃນຣະຫວ່າງການເດີນທາງຖ້ຽວທີສາມ ທ່ານໂປໂລໄດ້ຢ້ຽມຢາມຄຣິສຈັກຟີລິບປອຍເຖິງສອງເທື່ອ (2 ກທ 2:13, 7:5 ກຈ 20:6)

ໃນເມືອງຟີລິບປອຍນີ້ ທ່ານໂປໂລໄດ້ເຫສນາຢ່າງເກີດຜົນ ດັ່ງທີ່ພຣະທັມກິຈການໄດ້ບັນທຶກໄວ້ວ່າ ນາງລີເດັຽ ແມ້ຄ້າຄົນຕ່າງຊາດມາຈາກເມືອງທົວເຕຣາໃນອາເຊັຽນ້ອຍ ໄດ້ຮັບເຊື່ອພ້ອມກັບໄທເຮືອນຂອງຕົນ (ກຈ 16:14-15) ພາຍຫລັງທັມມະໂຮງ (ນາຍຄຸກ) ກັບຄົວເຮືອນທຸກຄົນຂອງທ່ານໄດ້ຮັບບັບຕິສມາ (ກຈ 16:33-34) ແລະກໍຍັງມີຄົນອື່ນ ໆ ອີກຫລາຍຄົນໄດ້ເຊື່ອໃນພຣະຄຣິສ ເມື່ອທ່ານໂປໂລອອກຈາກເມືອງຟີລິບປອຍ ທ່ານໄດ້ປະຄຣິສຈັກຟີລິບປອຍໄວ້ແລ້ວອອກປະກາດຂ່າວປະເສີດຕໍ່ໄປຍັງເມືອງອື່ນ ໆ ຄຣິສຈັກນີ້ໄດ້ກາຍເປັນຄຣິສຈັກທີ່ແຂງແຮງ ມີໃຈສັດທາຈົນໄດ້ສົ່ງຂອງຂວັນໄປຊ່ວຍທ່ານໂປໂລເມື່ອທ່ານຮັບໃຊ້ຢູ່ທີ່ເມືອງເທຊະໂລນິກ (ຟປ 4:16)

ເຮົາອ່ານພົບໃນພຣະທັມຟີລິບປອຍ 4:2-3 ວ່າທ່ານໂປໂລໃຫ້ກຽດແລະຍົກຍ່ອງສຕຣີ ຊຶ່ງເປັນຣິດຄອງຂອງຊາວເມືອງນີ້ ທ່ານເຫັນວ່າສຕຣີເປັນຄົນທີ່ມີສ່ວນສຳຄັນໃນຄຣິສຈັກນີ້ຕັ້ງແຕ່ຕົ້ນ ຈຶ່ງໄດ້ຕັກເຕືອນໃຫ້ສຕຣີປອງດອງກັນໄວ້ ທ່ານໄດ້ຍົກຊື່ຂອງສຕຣີສອງທ່ານຄື ນາງຢູໂອເດັຽ ກັບນາງຊິນຕີເຂວ່າເປັນຜູ້ທີ່ເຄີຍເຮັດການຮ່ວມກັນກັບທ່ານໂປໂລໃນການປ່າວປະກາດຂ່າວປະເສີດ ທ່ານໄດ້ຂໍໃຫ້ກອງປະຊຸມໄດ້ຊ່ວຍເຫລືອສຕຣີເຫລົ່ານັ້ນ

ທ່ານໂປໂລຢູ່ທີ່ເມືອງຟີລິບປອຍນານເທົ່າໃດເຮົາບໍ່ຮູ້ຄັກ ແຕ່ໃນທີ່ສຸດມີເຫດສຳຄັນບາງຢ່າງນຳໃຫ້ທ່ານໂປໂລຕ້ອງຈາກເມືອງນີ້ໄປ ເພາະມີຍິງໃຊ້ຄົນນຶ່ງຊຶ່ງມີຜີຫມໍດູເຂົ້າສິງຢູ່ ຍິງໃຊ້ຜູ້ນີ້ໄດ້ຕິດຕາມຣົບກວນທ່ານໂປໂລແລະສະຫາຍຂອງທ່ານ ຈົນທ່ານໂປໂລເຫລືອໃຈ ຈຶ່ງໄດ້ສັ່ງຜີໃຫ້ມັນອອກຈາກຍິງໃຊ້ຈົນນາງຫາຍຄືນ ນາຍຂອງຍິງນັ້ນກໍໄດ້ປຸກປັ່ນຄົນໃຫ້ກໍ່ການຫວຸ້ນວາຍໃສ່ຮ້າຍທ່ານໂປໂລ ພວກນີ້ໄດ້ປິດບັງຄວາມຈິງທີ່ພວກເຂົາໄດ້ເສັຍຜົນປໂຍດໄວ້ ແຕ່ອ້າງຕົວວ່າຮັກຊາດໂຣມັນບັງຫນ້າ ເປັນເຫດໃຫ້ທ່ານ

ໂປໂລແລະຊີລາຖືກຂ້ຽນດ້ວຍໄມ້ແສ້ ແລະຖືກຄຸມຂັງຢ່າງໜາແໜ້ນ ຢ່າງໃດກໍດີໃນຄືນດຽວກັນນັ້ນເອງໄດ້ເກີດແຜ່ນດິນໄຫວປະຕູຄຸກເປີດອອກ ຝ່າຍທັມມະໂຮງ (ນາຍຄຸກ) ຄິດວ່ານັກໂທດໜີໄປໝົດແລ້ວຈຶ່ງພ້ອມທີ່ຈະຂ້າຕົວຕາຍ ທ່ານໂປໂລໄດ້ຫ້າມເຂົາໄວ້ ແລະໄດ້ຖືໂອກາດນໍາເຂົາມາເຖິງຄວາມເຊື່ອໃນພຣະຄຣິສ ໃນວັນຮຸ່ງຂຶ້ນເຂົາໄດ້ປ່ອຍທ່ານໂປໂລ ເມື່ອຮູ້ວ່າທ່ານໂປໂລມີສັນຊາດໂຣມັນ ເພາະຊາວເມືອງເປັນຜູ້ທີ່ນິຍົມ ແລະໃຫ້ຄວາມນັບຖືຕໍ່ຜູ້ທີ່ມີສັນຊາດໂຣມັນ ແລະມີຄວາມພາກພູມໃຈທີ່ພວກເຂົາມີສັນໂຣມັນຄືກັນ ທ່ານໂປໂລຈຶ່ງໄດ້ໄປຢ້ຽມຢາມແລະໜຸນໃຈຄຣິສຈັກ ທີ່ປະຊຸມກັນຢູ່ທີ່ບ້ານຂອງນາງລີເດັຽ ແລະທ່ານໂປໂລກັບຊີລາກໍຈາກພວກເຂົາໄປ (ກຈ 16:16-40)

ຄຣິສຕຽນຊາວຟີລິບປອຍບໍ່ລືມທ່ານໂປໂລ ຄຸນຄວາມດີຂອງທ່ານໂປໂລທີ່ໄດ້ປະກາດຂ່າວປະເສີດແລະກໍ່ຕັ້ງຄຣິສຈັກຟີລິບປອຍຂຶ້ນ ພວກເຂົາຮູ້ຈັກດີວ່າທ່ານໂປໂລບໍ່ຍອມອອກປາກຂໍສິ່ງອັນໃດຈາກຄຣິສຈັກທີ່ທ່ານເຄີຍຮັບໃຊ້ມາກ່ອນ ດັ່ງນັ້ນເພື່ອເປັນການຊ່ວຍເຫລືອແກ່ທ່ານໂປໂລໃນເວລາທີ່ອາສັຍຢູ່ໃນເມືອງເທຊະໂລນິກຄຣິສຕຽນຊາວຟີລິບປອຍຈຶ່ງໄດ້ສົ່ງປັດຈັຍໄປໃຫ້ທ່ານເຖິງສອງເທື່ອ (ຟປ 4:16)

ຫລາຍປີຕໍ່ມາທ່ານໂປໂລຖືກຄຸກ (ຟປ 1:12-14) ນັກສຶກສາພຣະຄັມພີສ່ວນຫລາຍເຊື່ອວ່າເປັນຄຸກທີ່ກຸງໂຣມ ເພາະໄດ້ກ່າວເຖິງ "ໝູ່ຜູ້ຄຸມ" ແລະ "ພວກທີ່ຢູ່ໃນພຣະຣາຊວັງຂອງກາຍຊາ" (ຟປ 1:13, 4:22) ທ່ານໂປໂລໄດ້ຕິດຄຸກຢູ່ສອງປີ (ກຈ 28:16, 30) ເມື່ອຊາວຟີລິບປອຍໄດ້ຍິນຂ່າວວ່າທ່ານໂປໂລຢູ່ໃນຄຸກ ພວກເຂົາໄດ້ສະແດງເຖິງນໍ້າໃຈມິຕພາບຄວາມເປັນຄຣິສຕຽນ ໄດ້ສົ່ງທ່ານເອປາໂຟດີໂຕ ໃຫ້ໄປຢູ່ຮັບໃຊ້ທ່ານໂປໂລ ເພື່ອໃຫ້ທ່ານມີຄວາມສະດວກສະບາຍແລະແບ່ງເບົາພາລະບາງຢ່າງ ເຂົາໄດ້ສົ່ງຂອງຂວັນໄປພ້ອມເພື່ອເປັນການຊ່ວຍເຫລືອທ່ານໂປໂລໃນຄວາມຂາດເຂີນຂອງທ່ານດ້ວຍ ປາກົດວ່າແຜນການບໍ່ເປັນໄປຕາມທີ່ຄິດ ທ່ານເອປາໂຟດີໂຕເຈັບໜັກເກືອບຈະຕາຍເມື່ອເຂົາໄດ້ພັກເຊົາພໍມີແຮງ ທ່ານໂປໂລເຫັນວ່າບໍ່ສົມຄວນທີ່ຈະໃຫ້ທ່ານເອປາໂຟດີໂຕຢູ່ກັບທ່ານນານເກີນໄປ ໃນເວລາດຽວກັນຄວາມເຈັບໄຂ້ເຮັດໃຫ້ທ່ານເອປາໂຟດີໂຕອ່ອນກໍາລັງ ແລະຄິດຮອດປາກເມືອເຮືອນ ທ່ານເອປາໂຟດີໂຕອາດຈະຄິດໄດ້ວ່າ ຕົວທ່ານກາຍເປັນອຸປະສັກຫລາຍກວ່າຈະເປັນຜູ້ຮັບໃຊ້ທ່ານຈຶ່ງໄດ້ເມືອເມືອງຟີລິບປອຍ ພ້ອມທັງຖືຈົດໝາຍຟີລິບປອຍຈະບັບທີ່ເຮົາອ່ານນີ້ ທີ່ທ່ານໂປໂລໄດ້ຂຽນຝາກໄປຍັງພີ່ນ້ອງໃນເມືອງຟີລິບປອຍ

## ສອງ. ສາເຫດທີ່ຂຽນພຣະທັມຟີລິບປອຍ

ດັ່ງເຫດການທີ່ໄດ້ກ່າວໄປແລ້ວເບື້ອງຕົ້ນ ເຮັດໃຫ້ທ່ານໂປໂລມີເຫດຜົນທີ່ຈະຂຽນຈົດໝາຍເຖິງພີ່ນ້ອງຄຣິສຕຽນໃນເມືອງຟີລິບປອຍ ດັ່ງຕໍ່ໄປນີ້

1. ທ່ານໂປໂລຕ້ອງແຈ້ງໃຫ້ຮູ້ວ່າ ແມ່ນເຫດໃດທ່ານເອປາໂຟດີໂຕຈຶ່ງໄດ້ກັບເມືອມາຍັງເມືອງຟີລິບປອຍ ທ່ານບໍ່ຕ້ອງການໃຫ້ຜູ້ທີ່ມີຄວາມຕັ້ງໃຈຊ່ວຍເຫລືອທ່ານ ຄືທ່ານເອປາໂຟດີໂຕຕ້ອງຖືກຕິຕຽນຈາກພີ່ນ້ອງຄຣິສຕຽນທີ່ໄດ້ສົ່ງທ່ານໄປ ວ່າບໍ່ໄດ້ຢູ່ຮັບໃຊ້ທ່ານໂປໂລ ທ່ານໂປໂລໄດ້ອະທິບາຍວ່າ ເຫດໃດທ່ານເອປາໂຟດີໂຕຈຶ່ງກັບເມືອບ້ານ ທ່ານໄດ້ບອກວ່າຕົວທ່ານເອງເປັນຜູ້ສົ່ງໃຫ້ກັບ (ຟປ 2:25-30)

2. ທ່ານໂປໂລຕ້ອງການທີ່ຈະຂອບໃຈຊາວຟີລິບປອຍ ໃນເຣື່ອງຂອງຂວັນທີ່ເຂົາໄດ້ສົ່ງໄປໃຫ້

ທ່ານ ຊຶ່ງທ່ານບໍ່ມີໂອກາດທີ່ຈະຂອບໃຈພີ່ນ້ອງກ່ອນໜ້ານີ້ ໃນຈົດໝາຍນີ້ທ່ານໄດ້ຂອບໃຈຕໍ່ຄວາມຄຶດຮອດ ແລະຄວາມເມດຕາຂອງພີ່ນ້ອງຄຣິສຕຽນໃນເມືອງຟີລິບປອຍ (ຟປ 4:10-20)

3. ໃນເວລາດຽວກັນທ່ານໂປໂລຕ້ອງການບອກໃຫ້ພີ່ນ້ອງຄຣິສຕຽນໄດ້ຮູ້ວ່າ ທ່ານມີຄວາມເປັນຢູ່ແນວໃດ ທ່ານມີຄວາມຫວັງໃຫ້ເບື້ອງໜ້າແນວໃດ ທ່ານໄດ້ກ່າວໄວ້ຢ່າງຊັດແຈ້ງວ່າ ແມ່ນວ່າທ່ານຈະຖືກຕິດຄຸກ ແຕ່ສະພາບການກໍບໍ່ໄດ້ເຮັດໃຫ້ນໍ້າໃຈທີ່ທ່ານໄດ້ຕັ້ງໃຈໄວ້ແລ້ວ ປ່ຽນແປງ ທ່ານຍັງມີຄວາມເຊື່ອທີ່ໝັ້ນຄົງໃນການຮັບໃຊ້ພຣະເຈົ້າ (ສຶກສາ ຟປ 1:12-26)

4. ທ່ານໂປໂລໄດ້ສັງເກດເຫັນເຄື່ອງໝາຍຂອງການແຕກແຍກທີ່ກຳລັງຈະເກີດຂຶ້ນໃນຄຣິສຈັກຟີລິບປອຍ ທ່ານຈຶ່ງໄດ້ກ່າວຕັກເຕືອນໄວ້ກ່ອນທີ່ຈະສາຍເກີນໄປ ກ່ອນທີ່ຈະເປັນອັນຕະລາຍຕໍ່ຄຣິສຈັກເພາະທ່ານມີຄວາມຮັກແລະຊົມຊື່ນຍິນດີຕໍ່ຄຣິສຈັກນີ້ຫລາຍ ບໍ່ຢາກຈະໃຫ້ເກີດຄວາມຜິດຫວັງ

5. ຄຣິສຈັກຟີລິບປອຍກໍຄືກັບຄຣິສຈັກອື່ນ ໆ ທີ່ຕ້ອງການຄຳແນະນຳຕັກເຕືອນຢູ່ສເມີ ທ່ານໂປໂລຈຳເປັນຕ້ອງຕັກເຕືອນເຂົາວ່າ ຢ່າຖືການປະຕິບັດຕາມພວກຢິວນິຍົມ ຊຶ່ງເປັນສິ່ງທີ່ບໍ່ຈຳເປັນສຳລັບຄວາມຮອດພົ້ນ ຕົວຢ່າງເຊັ່ນ ພວກນາຍຄຣູສອນປອມມັກກ່າວວ່າ ພິທີຕັດນັ້ນເປັນສິ່ງທີ່ຈຳເປັນຕ້ອງເຮັດ (ຟປ 3:2) ບາງຄົນກໍມີຄຳສອນແນະນຳໃຫ້ປ່ອຍຕົວໄປຕາມເນື້ອໜັງ ຍົກເອົາການທີ່ໜ້າອັບອາຍຂຶ້ນມາໂອ້ອວດ ແລະສົນໃຈໃນວັດຖຸຝ່າຍໂລກ ທ່ານຕັກເຕືອນໃຫ້ລະວັງຄົນເຫລົ່ານັ້ນດ້ວຍນໍ້າຕາໄຫລ (ຟປ 3: 17-19)

ສິ່ງຕ່າງ ໆ ເຫລົ່ານີ້ຢູ່ໃນຈິດໃຈຂອງທ່ານໂປໂລ ທີ່ເຮັດໃຫ້ທ່ານໄດ້ບັນລະຍາຍອອກມາໃນພຣະທັມຈົດໝາຍຟີລິບປອຍ ມີຄວາມເຊື່ອວ່າພຣະທັມນີ້ຂຽນຂຶ້ນໃນປະມານຣະຫວ່າງ ຄ.ສ.61-63

| |
|---|
| ຈົ່ງເອົາສິ່ງທີ່ທ່ານໄດ້ສຶກສາຈາກຂ້າງເທິງເຮັດບົດຝຶກຫັດຂໍ້ສອງເຖິງຂໍ້ສີ່ |

## ສາມ. ສາຣະສຳຄັນແລະເນື້ອນັຍຂອງພຣະທັມຟີລິບປອຍ

ເມື່ອເຮົາສຶກສາພຣະທັມຟີລິບປອຍ ເຮົາຈະພົບຄຳໜູນໃຈຫລາຍຄວາມຂອງທ່ານໂປໂລ ທີ່ທ່ານຊ່ວຍຊູຈິດໃຈພີ່ນ້ອງຄຣິສຕຽນ ຄວາມເຫລົ່ານີ້ທີ່ທ່ານໂປໂລໄດ້ໃຊ້ກ່າວຢໍ້າ ເປັນຂໍກະແຈໄຂເຖິງຄວາມເຊື່ອໝັ້ນຂອງທ່ານໃຫ້ແກ່ພີ່ນ້ອງຄຣິສຕຽນ ແລະເປັນສາຣະສຳຄັນຂອງພຣະທັມຟີລິບປອຍ

<u>ປະການທຳອິດ</u> ທ່ານໂປໂລໄດ້ກ່າວຢໍ້າຫລາຍເທື່ອ ໂດຍໃຊ້ຄຳວ່າ **"ຍິນດີ"** ຫລື **"ຊົມຊື່ນຍິນດີ"** (ຟປ 1:4, 1:18-19, 3:1, 4:1, 4:4 ແລະໃນຕອນອື່ນ ໆ ລວມ 16 ເທື່ອດ້ວຍກັນ) ທ່ານໂປໂລກ່າວຄຳເຫລົ່ານີ້ຈາກປະສົບການຊີວິດຄຣິສຕຽນທີ່ທ່ານໄດ້ຮັບໃຊ້ພຣະເຈົ້າມາຢ່າງຫລວງຫລາຍ ບໍ່ແມ່ນເປັນຄວາມເວົ້າຂອງຜູ້ທີ່ຂາດປະສົບການ ໃນບົດທີສາມໄດ້ກ່າວເຖິງປະສົບການຊີວິດສ່ວນຕົວຂອງທ່ານ ແລະຄວາມສົມບູນໃນຖານະທີ່ທ່ານມີຢູ່ ແຕ່ວ່າທ່ານໂປໂລບໍ່ໄດ້ອວດປະສົບການຂອງຕົວເອງ "ຖືວ່າສິ່ງເຫລົ່ານັ້ນເປັນເໝືອນຂີ້ເຫຍື້ອ ເພື່ອຈະໄດ້ອີງພຣະຄຣິສມາເປັນປໂຍດແກ່ຂ້າພະເຈົ້າ" ເຮົາເຫັນໄດ້ວ່າສິ່ງທີ່ເຮັດໃຫ້ທ່ານໂປໂລຊົມຊື່ນຍິນດີຄື ພຣະຄຣິສຜູ້ເປັນສູນກາງຂອງຊີວິດ ແມ່ນວ່າທ່ານຈະຖືກຄຸກ

ຫລືຍາກລຳບາກປານໃດ ຫລືມີຄວາມສຸກສຳຣານ ທ່ານມີຄວາມຊື່ນຊົມຍິນດີໂດຍພຣະເຢຊູຄຣິສ ຄວາມຊື່ນຊົມຍິນດີນີ້ ເປັນເຫມືອນດັ່ງຄຳສອນຂອງພຣະເຢຊູຄຣິສທີ່ສັ່ງໄວ້ວ່າ *"ດັ່ງນັ້ນໃນບັດນີ້ທ່ານທັງຫລາຍກໍມີຄວາມທຸກໂສກ ແຕ່ເຮົາຈະເຫັນພວກທ່ານອີກ ແລະໃຈຂອງພວກທ່ານຈະຊື່ນຊົມຍິນດີ ແລະ <u>ບໍ່ມີຜູ້ໃດຈະເອົາຄວາມຍິນດີນັ້ນອອກໄປຈາກພວກທ່ານໄດ້</u>"* (ຢຮ 16:22) ດັ່ງນັ້ນ ເມື່ອໃຈຂອງທ່ານໂປໂລມີພຣະເຢຊູຄຣິສເປັນສູນກາງ ທ່ານຈຶ່ງໄດ້ເກີດຄວາມຊື່ນຊົມຍິນດີ ແລະເຮົາເຫັນໄດ້ຢ່າງຊັດແຈ້ງວ່າ ບໍ່ມີຜູ້ໃດຈະເອົາຄວາມຊື່ນຊົມຍິນດີໄປຈາກໃຈຂອງທ່ານໂປໂລໄດ້ ດ້ວຍເຫດນີ້ເມື່ອເຮົາອ່ານແລະສຶກສາພຣະທັມຟີລິບປອຍແລ້ວ ກໍຈະພົບຂໍ້ໄຂຂອງທ່ານໂປໂລທີ່ຊື່ນຊົມຍິນດີໃນອົງພຣະຜູ້ເປັນເຈົ້າ ຊຶ່ງເປັນການຫນູນໃຈພວກເຮົາໃນປັດຈຸບັນຄືກັນ

**<u>ປະການທີສອງ</u>** ທ່ານໂປໂລໄດ້ກ່າວຢ້ຳຫລາຍເທື່ອ ເຖິງ **"ວັນຂອງພຣະຄຣິສ"** ທີ່ພຣະອົງຈະສະເດັດມາ (ຟປ 1:9-11, 2:16, 3:20-21) ການຢ້ຳຂອງທ່ານໂປໂລເຊັ່ນນີ້ເພື່ອຈະຊູກຍູ້ໃຫ້ຄຣິສຕຽນບໍ່ທໍ້ໃຈໃນສິ່ງທີ່ກຳລັງເກີດຂຶ້ນໃນປັດຈຸບັນທີ່ຢູ່ອ້ອມຂ້າງ ຫລືບໍ່ຕ້ອງການໃຫ້ເຮົາປັກຫລັກຢ່າງແຫນ້ນຫນາໃນໂລກນີ້ "<u>ບ້ານເມືອງຂອງເຮົາທັງຫລາຍນັ້ນຢູ່ໃນສວັນ</u>" ສິ່ງສຳຄັນຄືເຮົາຜູ້ຊຶ່ງເປັນຄຣິສຕຽນຄວນຕຽມພ້ອມສຳລັບການສະເດັດມາຂອງພຣະເຢຊູຄຣິສ ເຮົາຄວນເປັນ "ດວງສວ່າງຕ່າງ ໆ ທີ່ສ່ອງແຈ້ງໃນໂລກ" (ຟປ 2:15) ແລະມຸ່ງຫວັງໃຫ້ນ້ຳພຣະທັຍຂອງພຣະຄຣິສສຳເຣັດໃນເວລາທີ່ພຣະອົງສະເດັດມາ ເຮົາຄວນຍອມເສັຍສລະສຳລັບສິ່ງທີ່ຢູ່ຝ່າຍໂລກ ໂດຍມຸ້ງຫນ້າສູ່ບ້ານເມືອງອັນຖາວອນຂອງເຮົາຢູ່ໃນສວັນ

**<u>ປະການທີສາມ</u>** ທ່ານໂປໂລໄດ້ຢ້ຳໃຫ້ຄຣິສຕຽນ **"ບາກບັ່ນມຸ້ງຫນ້າໄປສູ່ຫລັກຊັຍ"** (ຟປ 3:12-16) ຊີວິດຄຣິສຕຽນບໍ່ແມ່ນວ່າໄດ້ຮັບຄວາມຣອດພົ້ນໃນພຣະເຢຊູຄຣິສແລ້ວກໍຢຸດຢູ່ກັບທີ່ ທ່ານໂປໂລຢ້ຳໃຫ້ຄຣິສຕຽນເຂົ້າໃຈວ່າ ເມື່ອເຮົາສາຣະພາບບາບແລະຮັບການອະພັຍໂທດບາບ "ເຮົາບໍ່ຖືວ່າເຮົາໄດ້ຮັບແລ້ວ ແຕ່ເຮົາເຮັດຢ່າງນຶ່ງ ຄືລືມສິ່ງເຫລົ່ານັ້ນທີ່ຜ່ານພົ້ນໄປແລ້ວເສັຍ ແລະ**ໂນ້ມຕົວ**ອອກໄປຫາສິ່ງທັງຫລາຍທີ່ຢູ່ເບື້ອງຫນ້າ" (ຟປ 3:13) ຊີວິດຄຣິສຕຽນເປັນຊີວິດທີ່ມຸ່ງກ້າວໄປຂ້າງຫນ້າດ້ວຍຄວາມຫວັງທີ່ຫມັ້ນຄົງໂດຍພຣະເຢຊູຄຣິສທີ່ຢູ່ເບື້ອງຫນ້າ

**<u>ປະການທີສີ່</u>** ທ່ານໂປໂລເປັນແບບຢ່າງແລະຫນູນໃຈໃຫ້ແກ່ຄຣິສຕຽນ ທ່ານສອນໃຫ້ຮູ້ຈັກຕໍ່ສູ້ກັບສະພາບການຂອງຊີວິດໃນທຸກສິ່ງທຸກຮູບແບບ ທ່ານສາມາດກ່າວອອກມາໄດ້ວ່າ "ຂ້າພະເຈົ້າບໍ່ໄດ້ຈົ່ມເຖິງເຣື່ອງການຂັດສົນ ເພາະຂ້າພະເຈົ້າຈະມີຖານະຢ່າງໃດກໍຕາມ ຂ້າພະເຈົ້າກໍຮຽນຮູ້ແລ້ວທີ່**ຈະພໍໃຈ**ຢູ່ຢ່າງນັ້ນ" (ຟປ 4:11) ຄຳວ່າ **"ພໍໃຈ"** ເປັນສິ່ງທີ່ຍາກສຳລັບຄຣິສຕຽນຈຳນວນຫລວງຫລາຍ ທີ່ຈະກ່າວວ່າ **"ພໍໃຈແລ້ວ"** ແຕ່ສຳລັບທ່ານໂປໂລແລ້ວ ທ່ານພໍໃຈໃນສະພາບການທຸກສິ່ງທີ່ເກີດຂຶ້ນກັບທ່ານ ເພາະທ່ານຮູ້ວ່າ "ຂ້າພະເຈົ້າສາມາດສູ້ກັບທຸກສິ່ງໄດ້ໂດຍພຣະອົງຜູ້ຊົງຊູກຳລັງຂ້າພະເຈົ້າ" ສິ່ງທີ່<u>ກົງກັນຂ້າມ</u>ກັບ **"ພໍໃຈ"** ຄື **"ບໍ່ພຽງພໍ"** **ຫລື** **"ໂລບ"** ຈິດໃຈຂອງຜູ້ຄົນທີ່ເຕັມໄປດ້ວຍຄວາມໂລບ ແລະຫວັງເອົາແຕ່ຜົນປໂຍດນັ້ນບໍ່ມີສັນຕິສຸກ ເພາະຈະບໍ່ມີວັນພໍໃຈເຂົາ ດັ່ງພຣະທັມສຸພາສິດກ່າວໄວ້ວ່າ "<u>ຄົນໂລບກໍໂລບຢູ່ວັນຍັງຄ່ຳ</u>" (ສພສ 21:26) ແລະເຮົາຮູ້ໄດ້ອີກວ່າຈິດໃຈຂອງຄົນເຊັ່ນນີ້ ຈະບໍ່ມີຄວາມຊື່ນຊົມຍິນດີໃນພຣະຄຣິສ ເພາະຂາດການຊູກຳລັງຈາກພຣະຄຣິສ ພຣະເຢຊູຄຣິສກ່າວວ່າ "ສິ່ງທີ່ອອກມາຈາກພາຍໃນມະນຸດນັ້ນແຫລະ ເຮັດໃຫ້ມະນຸດຊົ່ວມົວຫມອງ ເພາະວ່າຈາກພາຍໃນ ຄື ...ຄວາມໂລບ..." (ມກ

7:20-23) ໃນທາງກົງກັນຂ້າມ ຖ້າຄຣິສຕຽນມີພຣະຄຣິສເປັນທີ່ຕັ້ງແລ້ວ ກໍຈະພໍໃຈໃນສິ່ງຕ່າງ ໆ ເພາະຖືວ່າໄດ້ພຣະເຢຊູຄຣິສ ຊຶ່ງເປັນສິ່ງທີ່ປະເສີດເລີດທີ່ສຸດແລ້ວ ດັ່ງນັ້ນຈະເປັນເວລາທີ່ຂາດເຂີນ ຫລືສົມບູນພູນສຸກກໍຈະສັລເສີນຂອບຄຸນພຣະເຈົ້າພຣະເຈົ້າ ຄວາມຊົມຊື່ນຍິນດີແລະສັນຕິສຸກ ຈຶ່ງຢູ່ໃນຈິດໃຈຂອງຜູ້ນັ້ນ

<u>ປະການສຸດທ້າຍ</u> ມີອີກຄວາມນຶ່ງທີ່ທ່ານໂປໂລເນັ້ນໜັກໃນພຣະທັມຟີລິບປອຍຄື **"ຖ່ອມໃຈລົງ"** ຂໍ້ພຣະທັມໃນຟີລິບປອຍ 2:1-11 ເປັນຂໍ້ພຣະທັມຕອນນຶ່ງທີ່ມີຄວາມສຳຄັນຫລາຍ ທີ່ກ່າວເຖິງການຖ່ອມໃຈລົງຂອງພຣະເຢຊູຄຣິສ ທີ່ຍອມຖ່ອມໃຈລົງຮັບສະພາບມະນຸດ ຍອມຮັບໃຊ້ ແລະເຊື່ອຟັງຈົນເຖິງຄວາມມໍຣະນາທີ່ໄມ້ກາງແຂນ ສະນັ້ນພຣະເຈົ້າຈຶ່ງໄດ້ຊົງຍົກພຣະອົງຂຶ້ນເຖິງທີ່ສູງສຸດດ້ວຍສະງ່າຣາສີ ຕັ້ງແຕ່ຂໍ້ຫົກຮອດຂໍ້ສິບເອັດ ພຣະຄັມພີສະບັບພາສາລາວແປຕາມຮູບແບບຂອງພາສາເດີມ ຊຶ່ງເປັນສັກສນະບົດເພງສັລເສີນ ຊຶ່ງປະກອບໄປດ້ວຍພາສາທີ່ມີຄວາມເລີກຊຶ້ງ

ແບບຢ່າງການຖ່ອມໃຈຂອງພຣະເຢຊູຄຣິສທີ່ທ່ານໂປໂລກ່າວນັ້ນ ເພື່ອຊູໃຈຄຣິສຕຽນໃຫ້ມີການຖ່ອມໃຈຍອມຮັບຊຶ່ງກັນແລະກັນ ອັນເປັນເຫດໃຫ້ເກີດຄວາມເປັນອັນນຶ່ງອັນດຽວກັນ ທ່ານກ່າວວ່າ "ຢ່າເຮັດສິ່ງໃດໃນການຊິງດີຫລືຖືດີກັນ ແຕ່ຈົ່ງຖ່ອມໃຈລົງຖືວ່າຄົນອື່ນດີກວ່າຕົນ ຢ່າໃຫ້ຜູ້ໃດເຫັນແກ່ປໂຍດຂອງຕົນຝ່າຍດຽວ ແຕ່ຈົ່ງເຫັນແກ່ປໂຍດຂອງຄົນອື່ນດ້ວຍ ເຈົ້າທັງຫລາຍຈົ່ງມີນ້ຳໃຈຕໍ່ກັນເໝືອນຢ່າງທີ່ມີໃນພຣະເຢຊູຄຣິສ" (ຟປ 2:3-5)

ເຮົາເຫັນໄດ້ວ່າສາຣະສຳຄັນໃນພຣະທັມຟີລິບປອຍຄື ຄວາມຊົມຊື່ນຍິນດີ ແມ່ນວ່າເຮົາຈະຢູ່ໃນໂລກນີ້ ຫລືໂລກທີ່ມາພາຍໜ້າໃນວັນຂອງພຣະເຢຊູຄຣິສ ຊີວິດຂອງເຮົາກໍດຳເນີນຕໍ່ໄປດ້ວຍຄວາມພໍໃຈທີ່ມີພຣະເຢຊູຄຣິສຊົງຊູກຳລັງເຮົາ ເຮົາຕ້ອງຍອມຖ່ອມໃຈລົງຮັບໃຊ້ ໂດຍມີນ້ຳໃຈຫລືຄວາມຕັ້ງໃຈຢ່າງດຽວກັບພຣະເຢຊູຄຣິສ ຍອມເສັຍສລະແລະເຊື່ອຟັງຈົນເຖິງທີ່ສຸດ ໃນທີ່ສຸດຊີວິດຂອງເຮົາຈຶ່ງຈະຖວາຍກຽດແກ່ພຣະເຈົ້າ ແລະນຳມາເຖິງຄວາມຊົມຊື່ນຍິນດີຢ່າງເຫລືອລົ້ນໃນພຣະເຢຊູຄຣິສ

ພຣະທັມຟີລິບປອຍ ນອກຈາກຈະມີສາຣະສຳຄັນດັ່ງທີ່ໄດ້ກ່າວໄປແລ້ວນັ້ນ ຍັງມີເນື້ອນັຍທີ່ທ່ານໂປໂລສະແດງອອກ ເຖິງຄວາມສັມພັນສ່ວນຕົວກັບພີ່ນ້ອງຄຣິສຕຽນໃນຄຣິສຈັກຟີລິບປອຍ ແລະປັນຫາເລັກນ້ອຍທີ່ທ່ານຕ້ອງການໃຫ້ຄຣິສຕຽນໃນຟີລິບປອຍໄດ້ແກ້ໄຂ

ທ່ານໂປໂລໄດ້ບອກເຖິງແຜນການຂອງທ່ານ ທີ່ຕ້ອງການໃຫ້ຕີໂມທຽວຊຶ່ງເປັນຜູ້ຊ່ວຍທີ່ທ່ານໄວ້ວາງໃຈໄປຫາພວກເຂົາ ແລະທ່ານໄດ້ອະທິບາຍວ່າເອປາໂຟດີໂຕກັບເມືອເນື່ອງດ້ວຍເຫດຜົນອັນໃດ (ຟພ 2:19-30) ທ່ານຕັກເຕືອນໃຫ້ຣະວັງຄຳສອນທີ່ແຊກແຊງເຂົ້າມາໃນຄຣິສຈັກ ໂດຍພວກທີ່ນິຍົມນັບຖືໃນຣີດຄອງຢິວ ພຍາຍາມຈະນຳພວກເຂົາໃຫ້ກັບໄປນັບຖືຕາມຣີດຄອງຢິວອີກ ອັນເປັນສິ່ງທີ່ບໍ່ຈຳເປັນເພາະເຮົາໄດ້ຮັບຄວາມຣອດພົ້ນດ້ວຍການໄຖ່ຂອງພຣະເຢຊູຄຣິສ ທ່ານໂປໂລເອງເປັນຄົນຢິວຕັ້ງແຕ່ກຳເນີດ ມີຊີວິດທີ່ຮ້ອນຮົນ ແລະມີການສະແດງອອກເຖິງຄວາມເຊື່ອສັດທາຢ່າງສູງສຸດ ແຕ່ທ່ານໂປໂລໄດ້ຖິ້ມຄວາມເຊື່ອຖືເດີມເຫລົ່ານັ້ນເສັຍ ເພາະວ່າສິ່ງທີ່ທ່ານຕ້ອງການຄື ການອະພັຍໂທດແລະຣິດເດດຈາກພຣະເຈົ້າ ຊຶ່ງທ່ານໄດ້ພົບໃນພຣະເຢຊູຄຣິສຜູ້ຊົງພຣະຊົນຢູ່ ທ່ານປັກໃຈຢູ່ໃນສິ່ງນຶ່ງຄື ການດຳເນີນຊີວິດຕາມພຣະປະສົງຂອງພຣະເຈົ້າທີ່ມີຕໍ່ຕົວທ່ານຢ່າງເຖິງທີ່ສຸດ (ຟປ 3:1-16)

ຄຣິສຕຽນຕ່າງຊາດຣູ້ນທຳອິດ ເມື່ອເປັນຄຣິສຕຽນໃຫມ່ຈຳເປັນຕ້ອງເລືອກວ່າ ຈະຕິດຕາມເອົາແບບຢ່າງການດຳເນີນຊີວິດຂອງຜູ້ນຳຜູ້ໃດ ເພາະຄວາມເຊື່ອແລະແນວການດຳເນີນຊີວິດຄຣິສຕຽນເປັນສິ່ງໃຫມ່ສຳລັບເຂົາ ດ້ວຍເຫດນີ້ທ່ານໂປໂລຈຶ່ງໄດ້ສເນີແບບຢ່າງການດຳເນີນຊີວິດ ແລະຮຽກຮ້ອງໃຫ້ຄຣິສຕຽນລຽນແບບຂອງທ່ານ ດັ່ງທີ່ເຮົາໄດ້ອ່ານພົບໃນພຣະທັມຈົດຫມາຍຫລາຍສະບັບຂອງທ່ານ ໃນພຣະທັມຟີລິບປອຍ 3:17 ກໍເຊັ່ນດຽວກັນ ທ່ານຢ້ານວ່າຄຣິສຕຽນໃຫມ່ຍັງບໍ່ຮູ້ຈັກພິຈາຣະນາຄຳສອນໃຫ້ເຂົ້າໃຈຊັດແຈ້ງ ຈະຫລົງໄປເອົາແບບຢ່າງອັນບໍ່ຖືກຕ້ອງຂອງຜູ້ນຳບາງຄົນມາປະຕິບັດ ທ່ານເອີ້ນຜູ້ນຳພວກນີ້ວ່າ "ຄົນທີ່ດຳເນີນຊີວິດເປັນສັດຕູຕໍ່ໄມ້ກາງແຂນຂອງພຣະຄຣິສ" "ພຣະຂອງເຂົາກໍຄືທ້ອງເຂົາເອງ" ແລະ "ສົນໃຈໃນວັດຖຸຝ່າຍໂລກ" (ຟປ 3:18-19) ຄົນພວກນີ້ດຳເນີນຊີວິດຕາມເນື້ອຫນັງ ໂດຍມີຄວາມຄິດວ່າ ການໃຊ້ຊີວິດເຊັ່ນນັ້ນບໍ່ມີຜົນເສັຍຕໍ່ຈິດວິນຍານຂອງຕົນເລີຍ ບາງທີພວກເຂົາກໍຍັງມີຄວາມຄິດອີກວ່າ ພຣະເຈົ້າຈະຊົງຍົກໂທດບາບໃຫ້ເຂົາ ແມ່ນວ່າເຂົາຈະເຮັດຜິດບາບຕາມເນື້ອຫນັງຫລາຍປານໃດ ອາຈານໂປໂລເຕືອນໃຫ້ພວກເຂົາຮູ້ວ່າ "ປາຍທາງຂອງຄົນເຫລົ່ານັ້ນຄືຄວາມຈິບຫາຍ" ແຕ່ຖ້າເຮົາຍອມຖວາຍຕົວໃຫ້ກັບພຣະເຢຊູຄຣິສເຈົ້າ ແລະລໍຖ້າດ້ວຍການດຳເນີນຕາມແບບຢ່າງອັນຖືກຕ້ອງພຣະອົງຈະຊົງປ່ຽນແປງກາຍອັນຕໍ່າຕ້ອຍຂອງພວກເຮົາ ໃຫ້ເປັນເຫມືອນພຣະກາຍອັນຊົງສະງ່າຣາສີຂອງພຣະອົງ (ຟປ 3:20-21)

ມີບັນຫາການຜິດໃຈກັນຣະຫວ່າງສັຕຣີສອງຄົນ ໃນຄຣິສຈັກຊຶ່ງທ່ານໂປໂລເຫັນວ່າ ຄວນຊ່ວຍໃຫ້ຍິງທັງສອງໄດ້ຄືນດີກັນອີກ ເພາະບັນຫາແນວນີ້ອາດກາຍເປັນເຣື້ອງໃຫຍ່ໃນຄຣິສຈັກກໍໄດ້ ທ່ານຈຶ່ງໄດ້ໃຫ້ຂໍ້ສເນີແນະຢ່າງສັ້ນ ໆ ທ່ານໄດ້ຊັກຊວນໃຫ້ທຸກຄົນສຳນຶກເຖິງພຣະຄຸນຂອງພຣະເຈົ້າດ້ວຍຄວາມຊົມຊື່ນຍິນດີ ແລະຂໍໃຫ້ອະທິຖານທູລຂໍທຸກສິ່ງດ້ວຍຄວາມເຊື່ອທີ່ໄວ້ວາງໃຈໃນພຣະເຢຊູຄຣິສ (ຟປ 4:4-7)

ທ່ານໂປໂລເຫັນວ່າ ຄຣິສຕຽນຄວນຮູ້ຈັກພິຈາຣະນາແນວຄວາມຄິດໃນສິ່ງທີ່ຖືກຕ້ອງ ແລະຮູ້ຈັກເຮັດທຸກສິ່ງທີ່ໄດ້ຮຽນຮູ້ ທີ່ໄດ້ຮັບໄວ້ ທີ່ໄດ້ຍິນ ແລະທີ່ໄດ້ເຫັນ ພຣະເຈົ້າຜູ້ໂຜດປະທານສັນຕິສຸກຈະຊົງສະຖິດຢູ່ນຳ (ຟປ 4:8-9) ຄຳສອນຂອງທ່ານໂປໂລຕອນນີ້ແນະໃຫ້ເຮົາຮູ້ວ່າ ການຮັກສາຊີວິດຄຣິສຕຽນໃຫ້ບໍຣິສຸດ ມີສ່ວນສັມພັນກ່ຽວຂ້ອງກັບການຮູ້ຈັກຄິດພິຈາຣະນາຢ່າງບໍຣິສຸດດ້ວຍ ແລະຄວາມຄິດທີ່ບໍຣິສຸດແມ່ນວ່າຈະໄດ້ຮັບມາແນວໃດກໍຕາມ ຍັງເປັນສິ່ງສຳຄັນທີ່ຕ້ອງປະຕິບັດອອກໃນການດຳເນີນຊີວິດ ໃນສິ່ງຕ່າງ ໆ ເຫລົ່ານີ້ພຣະເຈົ້າຈະຊົງສະຖິດຢູ່ນຳ ເພື່ອນຳພາໃຫ້ເກີດສັນຕິສຸກພາຍໃນ ໃນໂລກປັດຈຸບັນນີ້ເປັນໂລກແຫ່ງຄວາມກ້າວຫນ້າ ທີ່ເຮົາທຸກຄົນຕ້ອງພົບກັບບັນຫາແນວນີ້ ຈະເປັນຫນັງສືພິມລາຍວັນ ຟັງວິທະຍຸ ເບິ່ງໂທຣະທັດ ມີຫລາຍສິ່ງທີ່ສ້າງແນວຄວາມຄິດໃຫ້ແກ່ຊີວິດຈິດໃຈຂອງເຮົາໃນທາງທີ່ຜິດ ສິ່ງທີ່ສຳຄັນຄື ເຮົາຕ້ອງມີວິຈາຣະນະຍານຮູ້ຈັກຄິດໃນສິ່ງທີ່ຖືກຕ້ອງ ແລະຮູ້ຈັກນຳສິ່ງເຫລົ່ານັ້ນມາປະຕິບັດໃນການດຳເນີນຊີວິດ ໂດຍອາສັຍການນຳພາກຈາກພຣະເຈົ້າຜູ້ຊົງສະຖິດຢູ່ກັບເຮົາ ພຣະອົງຈະໂຜດປະທານສັນຕິສຸກແກ່ເຮົາ ໃຫ້ເຮົາຮູ້ຈັກການພິຈາຣະນາ ແລະປະຕິບັດຕາມສິ່ງທີ່ຖືກຕ້ອງ ທີ່ເປັນນ້ຳພຣະທັຍຂອງພຣະພຣະເຈົ້າ

ເມື່ອສຶກສາພຣະທັມຟີລິບປອຍແລ້ວ ເຮົາສລູບໄດ້ວ່າ ຄຣິສຕຽນມີສູນຣວມຊີວິດທີ່ຕັ້ງຢູ່ໃນພຣະເຢຊູ ຄຣິສ ຜູ້ທີ່ເປັນຄຣິສຕຽນ ຄືຜູ້ທີ່ບາກບັ່ນມຸ່ງໜ້າໄປສູ່ເປົ້າໝາຍປາຍທາງຄື ພຣະເຢຊູຄຣິສ

1. *ຖ້າເຮົາບາກບັ່ນມຸ້ງໜ້າຫາພຣະເຢຊູຄຣິສເໜືອກວ່າສິ່ງອື່ນໃດ (ຟປ 1:21, 3:7)*
   *ເຮົາກໍຈະພົບຄວາມຊອບທັມໃນພຣະຄຣິສ ແລະຣິດອຳນາດໃນການຄືນພຣະຊົນຂອງພຣະອົງ (ຟປ 3:9-11)*

2. *ຖ້າເຮົາບາກບັ່ນມຸ້ງໜ້າຫາການດຳເນີນຊີວິດທີ່ມີພຣະຄຣິສເປັນແບບຢ່າງ (ຟປ 2:5-7)*
   *ເຮົາກໍຈະພົບການດຳເນີນຊີວິດຕາມຊອບພຣະທັຍພຣະເຈົ້າ (ຟປ 2:12-13)*

3. *ຖ້າເຮົາບາກບັ່ນມຸ້ງໜ້າຫາເປົ້າໝາຍທີ່ພຣະເຈົ້າຕັ້ງໄວ້ (ຟປ 3:14)*
   *ເຮົາກໍຈະພົບຣາງວັນແຫ່ງຄວາມຣອດພົ້ນອັນຕະລອດໄປເປັນນິດ (ຟປ 3:14)*

4. *ຖ້າເຮົາບາກບັ່ນມຸ້ງໜ້າຫາສິ່ງທີ່ສັດຈິງ ສິ່ງທີ່ໜ້ານັບຖື ສິ່ງທີ່ຍຸຕິທັມ ສິ່ງທີ່ບໍຣິສຸດ ສິ່ງທີ່ໜ້າຮັກ ສິ່ງທີ່ໜ້າຍິນດີ ສິ່ງທີ່ລ້ຳເລີດ ສິ່ງທີ່ຄວນແກ່ການສັຣເສີນ (ຟປ 4:8)*
   *ເຮົາກໍຈະພົບພຣະເຈົ້າຜູ້ຊົງໂຜດປະທານສັນຕິສຸກສະຖິດຢູ່ນຳ (ຟປ 4:9)*

| |
|---|
| ຈົ່ງເອົາສິ່ງທີ່ທ່ານໄດ້ສຶກສາຈາກຂ້າງເທິງເຮັດບົດຝຶກຫັດຂໍ້ທ້າ & ຂໍ້ຫົກ |

- ເຟີດ ກູ ພລາຍທ໌
- ຍາກ ທີ່ ຈະ ວ່າ
- ໝາກ ສີ ຄອງ ຄອ

ຈົ່ງ NOV. 25, 97

# ບົດທີ 8

## ຈົດໝາຍຂອງທ່ານໂປໂລ ເຖິງຄຣິສຈັກໃນເມືອງໂກໂລຊາຍ

### ຂໍ້ໃຂຈົດໝາຍພຣະທັມໂກໂລຊາຍ

*ພຣະຄຣິສຊົງເປັນແບບລັກສະນະຂອງພຣະເຈົ້າ ຜູ້ຊຶ່ງຕາເຫັນບໍ່ໄດ້ ຊົງເປັນບຸດແຣກເໜືອສາຣະພັດທີ່ຊົງເນຣະມິດສ້າງຂຶ້ນນັ້ນ ພຣະອົງຊົງເປັນສີສະຂອງກາຍຄືຄຣິສຈັກ ພຣະອົງຊົງເປັນປະຖົມ ເປັນຜູ້ແຣກທີ່ຖືກຊົງບັນດານໃຫ້ຄືນມາຈາກຕາຍ ເພື່ອພຣະອົງຈະຊົງເປັນເອກໃນສັພສິ່ງທັງປວງ ເພາະວ່າພຣະບິດາຊົງພໍພຣະທັຍທີ່ຈະໃຫ້ສະພາບຂອງພຣະເຈົ້າສະຖິດຢູ່ໃນພຣະບຸດຢ່າງເຕັມບໍຣິບູນ ແລະໂດຍພຣະບຸດນັ້ນຈະໄດ້ຊົງໃຫ້ສິ່ງສາຣະພັດກັບຄືນດີກັບພຣະເຈົ້າ ບໍ່ວ່າສິ່ງນັ້ນຈະຢູ່ໃນແຜ່ນດິນໂລກຫລືໃນສວັນ ພຣະອົງໄດ້ຊົງບັນດານໃຫ້ເກີດສັນຕິພາບ ດ້ວຍພຣະໂລຫິດຊຶ່ງໄຫລທີ່ໄມ້ກາງແຂນຂອງພຣະອົງ (ກຊ 1:15, 19-20)*

*ເພາະວ່າໃນພຣະອົງ(ພຣະຄຣິສ)ນັ້ນ ສະພາບຂອງພຣະເຈົ້າສະຖິດຢູ່ໃນພຣະກາຍຢ່າງເຕັມບໍຣິບູນ ແລະເຈົ້າທັງຫລາຍໄດ້ມີຊີວິດຄົບບໍຣິບູນໃນພຣະອົງ ຜູ້ຊົງເປັນປະມຸກຂອງການປົກຄອງແລະອຳນາດທຸກປະການ (ກຊ 2:9-10)*

ທ່ານຈອນ ຄາວິນ (John Calvin) ເອີ້ນພຣະທັມໂກໂລຊາຍວ່າເປັນ "ຄັງສົມບັດອັນເຫລືອທີ່ຈະຕີຄ່າລາຄາໄດ້" (an inestimable treasure) ເຫດເພາະວ່າພຣະທັມໂກໂລຊາຍໄດ້ເປີດເຜີຍຄວາມຈິງໃນພຣະເຢຊູຄຣິສຢ່າງເລິກຊຶ້ງ ຄວາມມຸ່ງໝາຍຂອງທ່ານໂປໂລ ແຕ່ແຣກທ່ານຕ້ອງການຈະຕໍ່ສູ້ກັບຄຳສອນປອມ ທີ່ກຳລັງເກີດຂຶ້ນໃນຄຣິສຈັກໂກໂລຊາຍ ແຕ່ເມື່ອທ່ານຂຽນອະທິບາຍເຖິງຄວາມຈິງໃນພຣະເຈົ້າ ກັບເຮັດໃຫ້ທ່ານສາມາດເປີດເຜີຍແລະບັນລະຍາຍ ໃຫ້ເຮົາໄດ້ເຂົ້າໃຈແຈ້ງເຖິງສະພາບຄວາມເປັນຢູ່ ແລະພຣະຊົນຊີພຂອງພຣະເຢຊູຄຣິສ ທີ່ຢູ່ເໜືອສັພສິ່ງໃນໂລກຈັກວາລ ແລະພຣະອົງຊົງເປັນເອກໃນສັພສິ່ງ ພຣະທັມໂກໂລຊາຍເປັນພຣະທັມທີ່ມີຄວາມສຳຄັນໃນການເນັ້ນໜັກໃຫ້ເຮົາເຂົ້າໃຈ ແລະເກີດຄວາມເຊື່ອໃນພຣະເຢຊູຄຣິສໂດຍບໍ່ຕ້ອງສົງສັຍ

### ນຶ່ງ. ລັກສນະຂອງເມືອງໂກໂລຊາຍແລະພື້ນເບື້ອງຫລັງ

ເມືອງໂກໂລຊາຍ ເປັນເມືອງທີ່ຕັ້ງຢູ່ທາງທິດຕາວັນຕົກຊຽງໃຕ້ຂອງເອເຊັຽນ້ອຍ ປະມານ 100 ໄມລ໌ (ຫລື 1,600 ກິໂລແມັດ) ທາງທິດຕາວັນອອກຂອງເມືອງເອເຟໂຊ (ຢູ່ໃນປະເທດຕຸຣະກີໃນປັດຈຸບັນນີ້) ເມືອງໂກໂລຊາຍຢູ່ໃນຣະຫວ່າງຫຸບເຂົາໄລຄັສ (Lycus) ທີ່ສວຍງາມ ຫຸບເຂົານີ້ມີຖນົນສຳຄັນທີ່ເຊື່ອມໂຍງຣະຫວ່າງຕາວັນຕົກກັບຕາວັນອອກໃນສມັຍໂບຮານ ໃນຫຸບເຂົານີ້ມີເມືອງສຳຄັນຊຶ່ງເປັນສູນກາງຂອງຄຣິສຕຽນຢູ່ 3 ເມືອງ ຄື ເມືອງໂກໂລຊາຍ (Colossae) ເມືອງລາວດິເກອາ (Laodicea) ເມືອງເຮັຽຣາໂປລີ (Hieropolis) ເມືອງໂກໂລຊາຍນັບວ່າເປັນເມືອງທີ່ມີຄວາມສຳຄັນໃນສະໄຫມນຶ່ງໃນແຖບຫຸບເຂົາໄລຄັສໃນຍຸກກ່ອນອິດທິພົລຂອງພວກກຣີກ ໃນສະໄຫມຕໍ່ມາລາວດິເກອາແລະເຮັຽຣາໂປລີໄດ້ຈະເຣີນຮຸ່ງເຮືອງຂຶ້ນເປັນຄູ່ແຂ່ງຂອງເມືອງໂກໂລຊາຍ ແຕ່ວ່າເມືອງໂກໂລຊາຍກໍຍັງເປັນນຶ່ງຢູ່ ແລະເປັນເມືອງສຳຄັນຫລາຍໃນເຣື້ອງຂອງສິນຄ້າສິ່ງທໍອັນມີຊື່ສຽງ

ເມື່ອເວລາທີ່ທ່ານໂປໂລຮັບໃຊ້ພຣະເຈົ້າຢູ່ໃນເມືອງເອເຟໂຊສອງປີ ມີປະຊາຊົນມາຈາກເມືອງຕ່າງ ໆ ອ້ອມຂ້າງຈຳນວນຫລວງຫລາຍ ແລະເຊື່ອວ່າມີປະຊາຊົນມາຈາກເມືອງໂກໂລຊາຍດ້ວຍ ທ່ານລູກາໄດ້ບັນທຶກວ່າ "ການນີ້ມີຢູ່ເປັນເວລາສອງປີ ຈົນຄົນທັງຫລາຍທີ່ອາສັຍຢູ່ໃນແຂວງອາເຊັຽ ທັງພວກຢິວແລະພວກກຣີກໄດ້ຍິນພຣະທັມຂອງອົງພຣະເຈົ້າ" (ກຈ 19:10) ຊ່າງເງິນຊື່ ເດເມທີໂອ ໄດ້ປຸກລະດົມໃຫ້ຄົນຕໍ່ສູ້ທ່ານໂປໂລເພາະວ່າ "ທ່ານທັງຫລາຍໄດ້ຮູ້ເຫັນຢູ່ວ່າ ບໍ່ແມ່ນແຕ່ສະເພາະໃນເມືອງເອເຟໂຊເມືອງດຽວ ແຕ່ເກືອບທົ່ວແຂວງອາເຊັຽ ໂປໂລຜູ້ນີ້ໄດ້ຊັກຊວນຄົນທັງຫລາຍໃຫ້ເລີກທາງເກົ່າເສັຍ" (ກຈ 19:26) ໃນຈຳນວນພວກຄົນເຫລົ່ານີ້ທີ່ມີຄວາມເຊື່ອໃນຂ່າວປະເສີດທີ່ທ່ານໂປໂລໄດ້ປະກາດແກ່ເຂົາ ກໍມີຄົນຈຳນວນຫລາຍທີ່ນຳຂ່າວປະເສີດກັບໄປຍັງບ້ານເມືອງຂອງຕົນ ນອກຈາກນີ້ທ່ານໂປໂລຍັງໄດ້ສົ່ງຄົນອອກໄປປະກາດຂ່າວປະເສີດ ກັບຄົນທີ່ຢູ່ໃນຫົວເມືອງໃກ້ຄຽງທີ່ຢູ່ອ້ອມຂ້າງ ເຊື່ອວ່າທ່ານເອປາຟາເປັນຜູ້ທີ່ທ່ານໂປໂລສົ່ງອອກໄປປະກາດຂ່າວປະເສີດຍັງເມືອງໂກໂລຊາຍ ແລະໄດ້ຮັບໃຊ້ພຣະເຈົ້າຢ່າງສັດຊື່ ຈົນໄດ້ຮວບຮວມຜູ້ເຊື່ອ ແລະກໍ່ຕັ້ງຄຣິສຈັກຂຶ້ນ (ກຈ 19:8-10, ກຊ 1:7-8, 4:12) ທ່ານໂປໂລກ່າວເຖິງທ່ານເອປາຟາວ່າ "ເພິ່ນໄດ້ເຮັດການຫນັກຫນ່ວງເພື່ອພວກເຈົ້າ ແລະເພື່ອຄົນທີ່ຢູ່ເມືອງລາວດິເກອາ ທັງເພື່ອຄົນທີ່ຢູ່ເມືອງເຮັຽຣາໂປລີ" (ກຊ 4:13) ຕົວຂອງທ່ານໂປໂລເອງຍັງບໍ່ເຄີຍເດີນທາງໄປເມືອງໂກໂລຊາຍ (ກຊ 1:4, 2:1) ແຕ່ບັດນີ້ຄຣິສຈັກໂກໂລຊາຍໄດ້ເກີດບັນຫາໃຫຍ່ຂຶ້ນ ທ່ານເອປາຟາບໍ່ຮູ້ຈັກຈະເຮັດຫຽງກັບບັນຫານັ້ນ ຈຶ່ງໄດ້ນຳບັນຫາມາຂໍຄຳແນະນຳຈາກທ່ານໂປໂລທີ່ກຳລັງຖືກຄຸກຢູ່ທີ່ກຸງໂຣມ (ກຈ 28:16, 30)

ສະມາຊິກສ່ວນຫລາຍຂອງຄຣິສຈັກໃນເມືອງໂກໂລຊາຍເປັນຄົນຕ່າງຊາດ (ຄົນກຣີກ) ເຮົາສຶກສາໄດ້ຈາກຄຳຂອງທ່ານໂປໂລວ່າ "ເຈົ້າທັງຫລາຍ ຊຶ່ງເມື່ອກ່ອນນັ້ນບໍ່ແມ່ນພົລເມືອງຂອງພຣະເຈົ້າ" (ກຊ 1:21) ໃນໂກໂລຊາຍບົດທີ 1 ຂໍ້ 27 ທ່ານໂປໂລໄດ້ກ່າວກັບຄຣິສຕຽນຊາວໂກໂລຊາຍໂດຍກົງວ່າ "ໃນຖ້າມກາງຄົນຕ່າງຊາດອັນໃດເປັນຄວາມສົມບູນອັນປະກອບດ້ວຍສະງ່າຣາສີແຫ່ງຂໍ້ລໍ້າເລິກຄືທີ່ພຣະຄຣິສຊົງສະຖິດຢູ່ໃນເຈົ້າທັງຫລາຍ ຊຶ່ງເປັນເຫດໃຫ້ຫວັງວ່າຈະໄດ້ເຖິງສະງ່າຣາສີນັ້ນ" ແລະໃນບົດທີ 2 ຂໍ້ 13 "ຝ່າຍເຈົ້າທັງຫລາຍທີ່ຕາຍໄປແລ້ວດ້ວຍການຫລົງຜິດຂອງພວກເຈົ້າ ແລະດ້ວຍເຫດທີ່ເນື້ອກາຍຂອງພວກເຈົ້າບໍ່ໄດ້ຮັບພິທີຕັດ (ພິທີສຳລັບຊາຍຊາວຢິວທຸກຄົນ ທີ່ຈະເຂົ້າສ່ວນເປັນພົລໄພ່ຂອງພຣະເຈົ້າ)" ໃນບົດທີ 3:5-7 ທ່ານໂປໂລໄດ້ໃຫ້ລາຍການຂອງຄວາມຜິດບາບ ທີ່ພວກເຂົາໄດ້ເຮັດກ່ອນມາເປັນຄຣິສຕຽນ ລາຍການຄວາມຜິດບາບເຫລົ່ານັ້ນເປັນຄວາມຜິດບາບທີ່ຊາວຕ່າງຊາດມັກເຮັດ

ໃນສະໄຫມນັ້ນ ແຕ່ກໍບໍ່ໄດ້ຫມາຍຄວາມວ່າຄຣິສຈັກໂກໂລຊາຍບໍ່ໄດ້ມີສະມາຊິກຊາວຢິວເລີຍ ເຊື່ອແນ່ວ່າ ມີສະມາຊິກຊາວຢິວສ່ວນນຶ່ງ ແລະຄົງຈະມີຊາວຢິວຢູ່ໃນເມືອງຫລາຍພໍ ທີ່ຈະກໍ່ໃຫ້ເກີດບັນຫາຄວາມເຊື່ອ ຂັດແຍ້ງກັນໃນຄຣິສຈັກ ເພາະເຫດທີ່ພວກຄຣິສຕຽນຢິວຕ້ອງການຮຽກຮ້ອງໃຫ້ຖືຮີດຂອງປະເພນີຄວາມ ເຊື່ອຕາມລັດທິຢິວນິຍົມ ດັ່ງທີ່ທ່ານຈະສຶກສາໄດ້ຈາກຂໍ້ພຣະທັມໂກໂລຊາຍ 2:16-17, 20-21

ສິ່ງເຫລົ່ານີ້ເຮັດໃຫ້ເຮົາເຂົ້າໃຈສະພາບການຂອງຄຣິສຈັກໃນເມືອງໂກໂລຊາຍ ທີ່ມີຄົນຕ່າງຊາດ ແມ່ນຄົນກຣີກເປັນສ່ວນຫລາຍ ຊຶ່ງພວກເຂົາເປັນຄຣິສຕຽນໃຫມ່ຍັງມີຄວາມສັບສົນຫວຸ່ນຫວາຍກັບຄວາມ ເຊື່ອແລະແນວຄວາມຄິດເດີມ ເມື່ອມາສົມທຽບກັບຄວາມເຊື່ອໃຫມ່ໃນພຣະເຢຊູຄຣິສ ແລະຍັງມີບັນຫາເຕີມ ເຂົ້າມາອີກຄື ຊາວຢິວທັງທີ່ເປັນຄຣິສຕຽນແລະບໍ່ເປັນຄຣິສຕຽນ ຕ່າງກໍຕ້ອງການຊັກນຳເອົາຮີດຄອງປະ ເພນີໃນຄວາມເຊື່ອຖືເດີມຂອງພວກຢິວເຂົ້າມາປົນ ເພື່ອໃຫ້ເປັນຫລັກປະຕິບັດຂອງຄຣິສຈັກ ອັນເປັນ ການວາງພາຣະຫນັກໃຫ້ກັບຄວາມເຊື່ອຂອງຄຣິສຕຽນ

ແຕ່ກ່ອນທີ່ຈະກ່າວເຖິງບັນຫາ ເຮົາຢາກກ່າວເຖິງສ່ວນດີທີ່ທ່ານເອປາຟາໄດ້ນຳໄປເລົ່າໃຫ້ ທ່ານໂປໂລຟັງ ເພື່ອໃຫ້ນັກສຶກສາເຂົ້າໃຈເຖິງຄວາມເຊື່ອທີ່ສະມາຊິກຄຣິສຈັກໂກໂລຊາຍ ວ່າເຂົາໄດ້ ເປີດໃຈກວ້າງຕ້ອນຮັບຂ່າວປະເສີດຂອງພຣະເຢຊູຄຣິສຢ່າງໄວ ເຖິງແມ່ນວ່າຄວາມເຊື່ອນັ້ນຈະບໍ່ສົມບູນ ແຕ່ພວກເຂົາໄດ້ເປີດໃຈກວ້າງຕ້ອນຮັບພຣະເຢຊູຄຣິສ ທ່ານເອເປຟາໄດ້ນຳຂ່າວດີນີ້ຈາກສະມາຊິກໃນ ຄຣິສຈັກໂກໂລຊາຍມາລາຍງານໃຫ້ກັບທ່ານໂປໂລ ເມື່ອທ່ານໂປໂລໄດ້ຟັງຂ່າວດີຈາກທ່ານເອເປຟາ ແລ້ວໄດ້ຂຽນພຣະທັມໂກໂລຊາຍ ທ່ານກ່າວວ່າ "ພວກເຮົາໄດ້ຍິນຄວາມເຊື່ອຂອງເຈົ້າທັງຫລາຍໃນພຣະ ເຢຊູຄຣິສ ແລະເຣື່ອງຄວາມຮັກຊຶ່ງພວກເຈົ້າມີຕໍ່ໄພ່ພົນທັງປວງຂອງພຣະເຈົ້າ" (ກຊ 1:4) ທ່ານໂປ ໂລມີຄວາມຊົມຊື່ນຍິນດີສຳລັບຫມາກຜົນທີ່ກຳລັງເກີດດອກອອກຜົນ (ກຊ 1:6) ທ່ານເອປາຟາໄດ້ເລົ່າ ເຖິງເຣື່ອງຄວາມຮັກ ຊຶ່ງພຣະວິນຍານຊົງປະທານແກ່ຄຣິສຕຽນໂກໂລຊາຍ (ກຊ 1:8) ທ່ານໂປໂລ "ມີຄວາມຊື່ນຊົມຍິນດີ ທີ່ໄດ້ເຫັນສະມາຊິກຊາວໂກໂລຊາຍພາກັນຢູ່ຢ່າງຮຽບຮ້ອຍ ແລະເຫັນຄວາມເຊື່ອ ຫມັ້ນຄົງຂອງເຈົ້າທັງຫລາຍໃນພຣະຄຣິສ" (ກຊ 2:5) ແຕ່ກໍມີບັນຫາທີ່ກຳລັງກໍ່ຕົວຂຶ້ນໃນຄຣິສຈັກ ທ່ານເຫັນວ່າຕ້ອງປ້ອງກັນໄວ້ກ່ອນດີກວ່າ ທີ່ຈະປ່ອຍໃຫ້ບັນຫາເກີດລຸກລາມໃຫຍ່ຂຶ້ນຈົນສາຍເກີນທີ່ຈະແກ້ ໄຂ ດັ່ງນັ້ນ ທ່ານໂປໂລຈຶ່ງພຍາຍາມສອນໃຫ້ສະມາຊິກໃນຄຣິສຈັກໂກໂລຊາຍໄດ້ເຂົ້າໃຈເຖິງຄວາມ ເຊື່ອໃນພຣະເຢຊູຄຣິສຢ່າງຖືກຕ້ອງແລະຊັດແຈ້ງ ແລະໃຫ້ເຂົາມີຄວາມເຊື່ອຫມັ້ນໃນຄວາມສົມບູນຂອງ ພຣະຄຣິສ ເພື່ອຂັບຕາມພຣະເຢຊູຄຣິສດ້ວຍຄວາມຫມັ້ນໃຈ ໂດຍບໍ່ຕ້ອງການໃຫ້ສັບສົນກັບຄວາມເຊື່ອຖື ເດີມທີ່ຕົນເຄີຍມີປະສົບການໃນສາສນາຕ່າງຊາດກໍດີ ຫລືສາສນາຢິວກໍດີ

ໃນສະໄຫມຂອງພຣະຄັມພີພາກພັນທະສັນຍາໃຫມ່ ມີກຸ່ມຄວາມເຊື່ອສາມພວກໃຫຍ່ ໆ ທີ່ເປັນ ອັນຕລາຍຕໍ່ຄວາມເຊື່ອຂອງກອງປະຊຸມຄຣິສຕຽນຊາວຕ່າງຊາດຄື

**ປະການທຳອິດ ໂຫຣາສາດ** (Astrology) ຜູ້ຄົນໃນສະໄຫມໂບຮານເຊື່ອວ່າ ດວງຊະຕາ ຊີວິດຂອງຄົນຂຶ້ນຢູ່ພາຍໃຕ້ການກຳຫນົດຂອງດວງດາວຕ່າງ ໆ ຄວາມເຊື່ອຖືນີ້ໄດ້ເກີດຂຶ້ນແຕ່ໂບຮານ ນານມາແລ້ວ ໂດຍນັກໂຫຣາສາດຊາວບາບີໂລນໄດ້ມີການກຳຫນົດຊະຕາຣາສີຂອງດວງດາວຕ່າງ ໆ ໄວ້ ວ່າ ຊະຕາຣາສີຂອງຄົນແຕ່ລະຄົນກໍຂຶ້ນຢູ່ກັບດວງດາວປະຈຳຕົວທີ່ຕົນເກີດ ດັ່ງນັ້ນແລ້ວ ເມື່ອຈະເຮັດສິ່ງ

ນຶ່ງສິ່ງໃດກໍຂຶ້ນຢູ່ກັບຊະຕາຣາສີ ເຂົາລໍຄອຍຖ້າແລະຊອກຫາໃຫ້ວັນເວລາເຫລົ່ານັ້ນທີ່ເປັນໂຊກຊະຕາຣາສີຂອງເຂົາ ທ່ານໂປໂລໄດ້ຕັກເຕືອນຄຣິສຕຽນຊາວໂກໂລຊາຍວ່າ "ຢ່າໃຫ້ຜູ້ນຶ່ງຜູ້ໃດນຳເຈົ້າທັງຫລາຍຕົກໄປເປັນເຫຍື່ອສະຕິປັນຍາຂອງໂລກ ຊຶ່ງເປັນຄຳຫລອກລວງແລະໄຮ້ສາຣະຕາມຕຳນານຂອງມະນຸດທີ່ສືບຕໍ່ກັນມາ ຕາມອຳນາດສິ່ງສັກສິດແຫ່ງສາກົນຈັກກະວານ ແລະບໍ່ໃຊ່ຕາມອົງພຣະຄຣິສ" "ຖ້າເຈົ້າທັງຫລາຍໄດ້ຕາຍກັບພຣະຄຣິສ ພົ້ນຈາກອຳນາດສິ່ງສັກສິດແຫ່ງສາກົນຈັກກະວານແລ້ວ" (ກຊ 2:8, 20) ທ່ານໂປໂລໝາຍຄວາມວ່າ ຖ້າຜູ້ໃດມີຄວາມເຊື່ອໃນຣິດອຳນາດຂອງພຣະຄຣິສແລ້ວ ກໍບໍ່ສົມຄວນມີຄວາມເຊື່ອຖືໃນໂຊກຊະຕາຣາສີຕາມວິຖີໂຄຈອນຂອງດວງດາວອີກຕໍ່ໄປ

**ປະການທີ່ສອງ ລັດທິຣວມສາສນາ** (Syncretism) ພວກຄຣິສຕຽນໃນເມືອງໂກໂລຊາຍມີຄວາມຍາກລຳບາກໃຈໃນເຣື້ອງສາສນາຕ່າງ ໆ ທີ່ຢູ່ອ້ອມຂ້າງພວກເຂົາ ໃນເມືອງບໍຣິເວນແຖບນັ້ນຫລາຍສາສນາ ເຊັ່ນ ສາສນາໄຫວ້ຮູບເຄົາຣົບຂອງກຣີກ ສາສນາທີ່ຂາບໄຫວ້ດວງດາວໃນທ້ອງຟ້າ ລັດທິທີ່ຖືໂຊກຖືລາງ ລັດທິໂຍຄີຜູ້ຖືການທໍຣະມານຮ່າງກາຍເພື່ອຊ່ວຍຝ່າຍວິນຍານຈິດ ສາສນາເລິກລັບຊຶ່ງມີສາສນາພິທີອັນເລິກລັບ ທັງໝົດນີ້ຣວມກັນຢູ່ໃນແຖບເມືອງໂກໂລຊາຍ ດັ່ງນັ້ນບາງຄົນຈຶ່ງມີຄວາມຄິດເຣື້ອງນມັສການພຣະເຈົ້າຫລາຍ ໆ ອົງຣວມກັນ ຊຶ່ງເອີ້ນວ່າ "ລັດທິອະເນກນິຍົມ" (Polytheism) ໂດຍມີຄວາມຄິດວ່າ ບໍ່ມີຄວາມຜິດແນວໃດທີ່ຈະນມັສການພຣະເຈົ້າຫລາຍ ໆ ອົງຣວມກັນ ພວກນີ້ເຂົາເຊື່ອວ່າ ມີແຕ່ພຣະເຈົ້າອົງດຽວທີ່ມີອຳນາດສູງສຸດທີ່ເບິ່ງບໍ່ເຫັນ ທີ່ມີຄວາມແຕກຕ່າງກັນຣະຫວ່າງສາສນາກໍຄືພຣະນາມຂອງພຣະເຈົ້າທີ່ແຕ່ລະສາສນາເອີ້ນເອົາ ຈັກກະພັດໂຣມັນຜູ້ນຶ່ງຊື່ ອາເລັກຊານເດີ ເຊເວີຣັສ (Alexander Severus) ໄດ້ສ້າງສາລາທັມທີ່ມີຮູບປັ້ນຂອງອັບຣາຮັມ ໂອເຟອຸສ (Orpheus) ອາໂປໂລນິອຸສ (Apollonius) ແລະພຣະຄຣິສ ຣວມຢູ່ໃນທີ່ດຽວກັນ ເພື່ອເປັນການຣວມສາສນາຕ່າງ ໆ ເຂົ້າດ້ວຍກັນ ຜູ້ນຳທາງການເມືອງຫລາຍທ່ານໃນເວລານັ້ນມີຄວາມຄິດເຫັນຢ່າງດຽວກັນນີ້ ເມື່ອຟັງເບິ່ງຣວມ ໆ ຄືກັນວ່າເປັນຄວາມຄິດເຫັນທີ່ດີ ແຕ່ທ່ານໂປໂລມີຄວາມເຊື່ອທີ່ຄວາມແຕກຕ່າງດັ່ງທີ່ທ່ານໄດ້ກ່າວໄວ້ວ່າ "ເຖິງແມ່ນວ່າມີພຣະຫລາຍໃນສວັນ ແລະເທິງແຜ່ນດິນໂລກກໍດີ ທີ່ເຂົາເອີ້ນວ່າພຣະເຈົ້າ (ພຣະກໍມີຫລາຍ ເຈົ້າກໍມີຫລາຍແທ້) ແຕ່ສຳລັບພວກເຮົານັ້ນມີພຣະເຈົ້າອົງດຽວຄືພຣະບິດາ" (1 ກທ 8:5-6) ຄົນທີ່ເຊື່ອໃນສາສນາຣວມແລະປຣາດຍາຕ່າງ ໆ ໄດ້ແປງເອົາການປະຕິບັດບາງຢ່າງຂອງພວກຢິວໄປໃຊ້ ແລະເຂົາກໍພ້ອມທີ່ຈະນັບຖືພຣະເຢຊູ ແລະຍອມຮັບຄຳສອນຂອງຄຣິສຕຽນບາງສ່ວນ ການທີ່ເຂົາເຮັດແນວນີ້ ເຂົາຄິດວ່າເປັນການສະລາດ ໃຈກວ້າງຂວາງ ແລະຍອມຮັບກັນແລະກັນປາກົດວ່າມີບາງຄົນໃນຄຣິສຈັກໂກໂລຊາຍຫລົງມີຄວາມເຊື່ອຕາມແນວນີ້ໄປ ໂດຍເຊື່ອວ່າພຣະເຢຊູຄຣິສເປັນພຽງພຣະອົງນຶ່ງໃນຈຳນວນພຣະຫລາຍ ໆ ອົງທີ່ເຂົາສາມາດຫັນມາຂໍຄວາມຊ່ວຍເຫລືອໄດ້

**ປະການທີ່ສາມ ລັດທິນ້ອສຕິກ** (Gnosticism) ຄວາມເຊື່ອຖືຂອງລັດທິນີ້ເປັນສັດຕຣູຕົວສຳຄັນທີ່ບ່ອນທຳລາຍຄວາມເຊື່ອຂອງຄຣິສຕຽນ ລັດທິນີ້ເອົາເຣື້ອງປຣາດຍາ ເຣື້ອງສາສນາ ແລະເຣື້ອງຕຳນານໂບຣານມາປົນກັນຕາມຄວາມຄິດຂອງຫລັກປຣາດຍາ ພວກນີ້ມີຄວາມຄິດເລິກຊຶ້ງຫລາຍກວ່າພວກລັດທິຣວມສາສນາເຂົ້າດ້ວຍກັນໂດຍມີຄວາມເຊື່ອໃນພຣະເຈົ້າອົງດຽວ ພວກນ້ອສຕິກມີຄວາມເຊື່ອວ່າ ການທີ່ພຣະເຢຊູຄຣິສເປັນພຣະເຈົ້າແລະເປັນມະນຸດມີຄວາມຂັດແຍ້ງກັນ ເຂົາເຫັນວ່າພຣະເຈົ້າຜູ້ສູງສຸດ ບໍຣິສຸດຈະຕິດຕໍ່ກັບມະນຸດທີ່ເປັນຄົນບາບບໍ່ໄດ້ ພຣະວິນຍານກັບວັຕຖຸຈະເຂົ້າກັນບໍ່ໄດ້ ດັ່ງນັ້ນເຂົາຈຶ່ງມີພຣະເຈົ້າຫລາຍອົງ ແລະມີຣະດັບແຕກຕ່າງກັນ ນັບຕັ້ງແຕ່ພຣະເຈົ້າທີ່ທ່ຽງແທ້ສູງສຸດເປັນລຳດັບລົງມາຈົນເຖິງມະ

ບຸດຕາມຄຳສອນຂອງເຂົາ ພຣະເຢຊູບໍ່ເປັນພຣະເຈົ້າທີ່ແທ້ ເພາະມີບາງສ່ວນເປັນພຣະເຈົ້າແລະບາງສ່ວນເປັນມະນຸດຄືກັບເທວະດາ ດັ່ງນັ້ນມະນຸດຈຶ່ງຕ້ອງນມັສການແລະຂໍຄວາມຊ່ວຍເຫລືອເລີ້ມຈາກເທວະດາທີ່ມີຣະດັບສູງກວ່າມະນຸດຂຶ້ນໄປຂັ້ນນຶ່ງ ເພື່ອເປັນທີນທາງຂຶ້ນໄປຮອດພຣະເຈົ້າທີລະຂັ້ນ ຈົນຮອດພຣະຜູ້ສູງສຸດ ຕາມຄຳສອນນີ້ການສິ້ນພຣະຊົນຂອງພຣະເຢຊູບໍ່ມີຣິດອຳນາດພໍທີ່ຈະລົບລ້າງຄວາມບາບ ພຣະອົງຈຶ່ງບໍ່ແມ່ນຄົນກາງຜູ້ດຽວຣະຫວ່າງພຣະເຈົ້າກັບມະນຸດ ຈຶ່ງບໍ່ໄດ້ເປັນພຣະຜູ້ຊ່ວຍໃຫ້ຮອດພົ້ນຂອງມະນຸດ

ພວກນ້ອສຕິກນີ້ຖືວ່າ ພວກເຂົາມີຄວາມຮູ້ພິເສດ ມີຄລັດລັບຕ່າງ ໆ ຖ້າຈະຮອດພົ້ນຈະຕ້ອງເຮັດພິທີປະຕິຍານຕົນເຂົ້າກັບພວກຂອງເຂົາເສັຍກ່ອນຈຶ່ງຈະມີຄວາມຮູ້ທຸກຢ່າງ ພວກເຂົາຈຶ່ງຄິດພິທີ ຄຳສອນ ແລະຂໍ້ປະຕິບັດຂຶ້ນຫລາຍຢ່າງ ຊຶ່ງນຳເອົາມາຈາກສາສນາຕ່າງ ໆ ເຂົາຖືວ່າວັຕຖຸທຸກຢ່າງບາບຮວມທັງຮ່າງກາຍຂອງຄົນ ຈຶ່ງເກີດມີການທໍຣະມານຮ່າງກາຍເພື່ອກຳຈັດຄວາມຊົ່ວອອກຈາກຕົວ ເຮົາສັງເກດເຫັນໄດ້ວ່າລັດທິນ້ອສຕິກທີ່ເມືອງອື່ນໄດ້ສອນກົງກັນຂ້າມວ່າ ຖ້າຮ່າງກາຍເປັນວັຕຖຸແລະວັຕຖຸລ້ວນແຕ່ຊົ່ວ ບໍ່ວ່າຈະທໍຣະມານເທົ່າໃດກໍຈະກຳຈັດຄວາມຊົ່ວອອກໄປບໍ່ໄດ້ ດັ່ງນັ້ນພວກເຂົາຈຶ່ງປ່ອຍຕົວໄປເຮັດການຊົ່ວຊ້າລາມົກອະນາຈານ ແລ້ວຍັງມີຄວາມຫວັງຈະຂຶ້ນສວັນໄດ້ ເພາະຖືວ່າຮ່າງກາຍບໍ່ກ່ຽວຂ້ອງກັບຈິດໃຈ ເນື່ອງຈາກວັຕຖຸບໍ່ກ່ຽວຂ້ອງກັບຈິດວິນຍານ

ເມື່ອສຶກສາຕາມພຣະທັມຈົດຫມາຍໂກໂລຊາຍແລ້ວ ທ່ານໂປໂລເຊື່ອວ່າຄຣິສຕຽນສ່ວນຫລາຍຍັງຈົງຮັກພັກດີຕໍ່ພຣະຄຣິສ (ກຊ 1:3-12) ແຕ່ຄຣິສຈັກໃຫມ່ນີ້ຕ້ອງການຄຳແນະນຳ ທີ່ມີສະຕິປັນຍາເພື່ອຊ່ວຍຄຣິສຕຽນທີ່ຫວັ່ນຫວາຍໃຈໃຫ້ຕັ້ງຫມັ້ນຄົງໃນຄວາມເຊື່ອທີ່ຖືກຕ້ອງໃນພຣະຄຣິສ ຄວາມເຊື່ອຂອງທ່ານໂປໂລໃນພຣະທັມໂກໂລຊາຍໄດ້ບັນລະຍາຍອອກມາໃຫ້ເຂົ້າໃຈເຖິງ ສະພາບຄວາມເປັນຢູ່ຂອງພຣະຄຣິສທີ່ຊັດແຈ້ງຫລາຍກວ່າຈົດຫມາຍສະບັບອື່ນ ໆ ທີ່ທ່ານໄດ້ເຄີຍຂຽນມາ "ຊີວິດແລະສະພາບຄວາມເປັນຢູ່ຂອງພຣະເຢຊູຄຣິສ" ນັກສາສນາສາດເອີ້ນວ່າ "ຄຣິສສາດ" (Christology) ທ່ານໂປໂລມີຄວາມເຊື່ອວ່າ ພຣະຄຣິສເປັນແບບລັກສນະຂອງພຣະເຈົ້າຜູ້ຊຶ່ງຕາເຫັນບໍ່ໄດ້ ພຣະບິດາຊົງພໍພຣະທັຍ ທີ່ຈະໃຫ້ສະພາບຂອງພຣະເຈົ້າສະຖິດຢູ່ໃນພຣະບຸດຢ່າງເຕັມບໍຣິບູນ (ກຊ 1:15-20) ໃນພຣະອົງຊັບສົມບັດແຫ່ງສະຕິປັນຍາແລະຄວາມຮູ້ທັງຫມົດຊົງປິດບັງໄວ້ (ກຊ 2:3) ໃນພຣະອົງສະພາບຂອງພຣະເຈົ້າສະຖິດຢູ່ໃນພຣະກາຍຢ່າງເຕັມບໍຣິບູນ ຜູ້ເປັນສີສະແຫ່ງປວງເທພຜູ້ຄອງແລະສັກດິເທພ (ກຊ 2:9-10) ພຣະອົງຍັງເປັນອັນນຶ່ງອັນດຽວກັນກັບໄພ່ພົນຂອງພຣະອົງໃນໂລກນີ້ຄື ຄຣິສຈັກ ແລະເປັນເອກໃນສັພສິ່ງທັງປວງ (ກຊ 1:18) ຄວາມເຊື່ອຂອງທ່ານໂປໂລທີ່ມີຢູ່ໃນພຣະເຢຊູຄຣິສນີ້ ເປັນຫົວໃຈແລະມີຄວາມສຳຄັນແກ່ຄຣິສຕຽນທຸກຄົນທັງໃນສະໃຫມຂອງທ່ານແລະໃນປັດຈຸບັນ ພຣະຄຣິສຍິ່ງໃຫຍ່ສູງສຸດທີ່ມະນຸດບໍ່ສາມາດນຳເອົາສິ່ງອື່ນມາເຈືອປົນ ຫລືເອົາໄປຮວມເຂົ້າກັບສາສນາອື່ນ ໆ ໃຫ້ເປັນສາສນາດຽວກັນໄດ້

**ຈົ່ງເອົາສິ່ງທີ່ທ່ານໄດ້ສຶກສາຈາກຂ້າງເທິງເຮັດບົດຝຶກຫັດຂໍ້ສອງເຖິງຂໍ້ສາມ**

## ສອງ. ຜູ້ຂຽນພຣະທັມໂກໂລຊາຍ

ພຣະທັມເອເຟໂຊ ຟີລິບປອຍ ໂກໂລຊາຍ ແລະຟີເລໂມນ ເປັນກຸ່ມພຣະທັມຈົດຫມາຍຝາກຈາກຄຸກ ທີ່ມີຄວາມເຊື່ອຖືກັນວ່າທ່ານໂປໂລເປັນຜູ້ຂຽນຣະຫວ່າງຖືກຄຸມຂັງ ພຣະທັມທຸກສະບັບໄດ້ກ່າວເຖິງສະພາບຂອງທ່ານໂລໂປທີ່ໄດ້ຖືກຄຸມຂັງ (ອຟ 3:1, 4:1, 6:20, ຟປ 1:7, 13, 14, 17, ກຊ 1:24, 4:3, 10, 18, ຟມ 1:1, 10, 13, 23) ພຣະທັມທັງສີ່ຂຽນຂຶ້ນໃນເວລາໃກ້ຄຽງກັນປະມານ ຄ.ສ. 61-62 ຄວາມເຊື່ອຖືນີ້ໄດ້ເຊື່ອຖືກັນມາບໍ່ມີຜູ້ໃດສົງສັຍ ຈົນກະທັ່ງໃນສັຕວັດທີ່ສິບເກົ້າ ນັກສຶກສາພຣະຄັມພີບາງຄົນໄດ້ຕັ້ງຂໍ້ສົງສັຍວ່າທ່ານໂປໂລບໍ່ແມ່ນເປັນຜູ້ຂຽນພຣະທັມໂກໂລຊາຍ ແຕ່ວ່ານັກສຶກສາພຣະຄັມພີສ່ວນທີ່ຫລາຍກວ່າມີຄວາມເຊື່ອວ່າ ທ່ານໂປໂລເປັນຜູ້ຂຽນໂດຍບໍ່ຕ້ອງສົງສັຍ ໂດຍມີເຫດຜົນໃຫຍ່ທີ່ເຮົາສຶກສາໄດ້ສາມປະການ ຄື

**ປະການທຳອິດ** ຜູ້ທີ່ມີຄວາມສົງສັຍໃຫ້ເຫດຜົນວ່າ ພຣະທັມໂກໂລຊາຍມີຄຳເວົ້າຫລາຍຄວາມທີ່ບໍ່ເຄີຍໄດ້ປາກົດໃຫ້ພຣະທັມສະບັບອື່ນ ໆ ຂອງທ່ານໂປໂລເລີຍ ຊຶ່ງເປັນຄວາມຈິງແຕ່ບໍ່ສາມາດເປັນເຫດຜົນພິສູດອັນໃດໄດ້ ເພາະວ່າເຮົາບໍ່ສາມາດຮຽກຮ້ອງໃຫ້ຜູ້ນຶ່ງຜູ້ໃດຂຽນຈົດຫມາຍທຸກສະບັບດ້ວຍຄຳເວົ້າ ພາສາສຳນວນຢ່າງດຽວກັນຕລອດ ໃນພຣະທັມໂກໂລຊາຍເຮົາອ່ານພົບວ່າທ່ານໂປໂລໄດ້ບັນລະຍາຍເຖິງຄວາມເຊື່ອດ້ວຍຖ້ອຍຄຳທີ່ແຕກຕ່າງອອກໄປ ເພື່ອໃຫ້ເກີດຄວາມເຂົ້າໃຈຢ່າງຊັດແຈ້ງຍິ່ງຂຶ້ນສຳລັບຜູ້ອ່ານທີ່ແຕກຕ່າງກັນອອກໄປ

**ປະການທີ່ສອງ** ຜູ້ທີ່ມີຄວາມສົງສັຍກ່າວວ່າ ລັດທິນ້ອສຕິກໄດ້ພັທນາກໍ່ຕົວຂຶ້ນພາຍຫລັງໃນສະໄຫມຂອງທ່ານໂປໂລ ຖ້າຄຳສອນປອມພົວພັນກັບພວກລັດທິນ້ອສຕິກແລ້ວ ພຣະທັມຈົດຫມາຍນີ້ຕ້ອງຂຽນຂຶ້ນໃນສະໄຫມຫລັງທ່ານໂປໂລ ກໍເປັນຄວາມຈິງທີ່ລັດທິນ້ອສຕິກເກີດຂຶ້ນພາຍຫລັງສະໄຫມຂອງທ່ານໂປໂລ ແຕ່ກໍມີຄວາມຈິງອີກວ່າ ກ່ອນທີ່ລັດທິນ້ອສຕິກຈະກໍ່ຕົວຂຶ້ນເປັນຕົວຕົນນັ້ນ ຕ້ອງມີຄວາມຄິດແລະຄຳສອນມາຈາກຕົ້ນເດີມຂອງຊາວກຣີກແລະຊາວຢິວທີ່ຫຍັ່ງຮາກເລິກມາເປັນເວລານານ ແມ່ນວ່າໃນສະໄຫມຂອງທ່ານໂປໂລອາດຈະບໍ່ເຕີບໂຕເປັນຕົວເປັນຕົນ ແຕ່ກໍເຫັນໄດ້ວ່າຄວາມຄິດຂອງພວກນ້ອສຕິກເລີ້ມມີຜົນ ແລະສ້າງແນວຄວາມຄິດໃຫ້ຄຣິສຕຽນໃຫມ່ໃຫ້ມີຄວາມຍຸ້ງຍາກໃຈ ທ່ານໂປໂລມີເຫດສຳຄັນທີ່ຕ້ອງສອນໃຫ້ຄຣິສຕຽນເກີດຄວາມຊັດແຈ້ງໃນຄວາມເຊື່ອ ກ່ອນທີ່ຄຳສອນຂອງພວກນ້ອສຕິດຈະແຜ່ຫລາຍຂຍາຍອອກໄປ

**ປະການທີ່ສາມ** ຜູ້ທີ່ມີຄວາມສົງສັຍເຫັນວ່າຄຳສອນເຣື້ອງພຣະເຢຊູຄຣິສໃນພຣະທັມໂກໂລຊາຍນັ້ນເປັນຄວາມເຊື່ອທີ່ຈະເຣີ່ມເຕີບໂຕກ້າວຫນ້າກວ່າພຣະທັມຈົດຫມາຍສະບັບອື່ນ ໆ ຂອງທ່ານໂປໂລ ເຮົາຈະຕອບບັນຫານີ້ໄດ້ດ້ວຍຄຳຕອບສອງປະການ

**ກ.** ບັນຫາທີ່ເກີດຂຶ້ນໃນເມືອງໂກໂລຊາຍນັ້ນແຕກຕ່າງກັບບັນຫາທີ່ເກີດຂຶ້ນໃນເມືອງອື່ນ ທີ່ທ່ານໂປໂລຕ້ອງໃຫ້ຄຳຕອບທີ່ແຕກຕ່າງກັນ ອີກປະການນຶ່ງທ່ານບໍ່ໄດ້ເປັນຜູ້ກໍ່ຕັ້ງຄຣິສຈັກນີ້ຂຶ້ນ ດັ່ງນັ້ນທີ່ຈຳເປັນຕ້ອງມີຄຳອະທິບາຍທີ່ເລິກຊຶ້ງແລະຊັດແຈ້ງ ທີ່ເຂົ້າກັບສະພາບການທີ່ຜູ້ອ່ານຈະສາມາດເຂົ້າໃຈໄດ້ເປັນຄວາມຈິງທີ່ຄຣິສສາດ (Christology) ຂອງພຣະທັມໂກໂລຊາຍກ້າວຫນ້າກວ່າພຣະທັມສະບັບອື່ນ ໆ ຂອງທ່ານໂປໂລ ແຕ່ນັ້ນບໍ່ແມ່ນເປັນເຫດຜົນທີ່ຈະກ່າວວ່າ ທ່ານໂປໂລບໍ່ແມ່ນຜູ້ຂຽນພຣະທັມໂກໂລ

ຊາຍ ເພາະຊີວິດແລະຄວາມເຊື່ອຂອງທ່ານໂປໂລບໍ່ໄດ້ຢຸດຢູ່ກັບທີ່ ເພາະເຫດປະສົບການກັບພຣະເຈົ້າ ແລະສະພາບການທີ່ທ່ານໄດ້ຜະເຊີນເຮັດໄດ້ໃຫ້ທ່ານມີຄວາມຈະເຣີນໃຫຍ່ຂຶ້ນໃນພຣະຄຣິສ ນັ້ນເປັນສິ່ງທັມມະດາສຳລັບຄຣິສຕຽນທຸກຄົນທີ່ມີຊີວິດໃຫມ່ໃນພຣະເຢຊູຄຣິສ ດັ່ງນັ້ນເປັນສິ່ງທີ່ເປັນທັມມະຊາດ ທີ່ທ່ານໂປໂລຈະມີຄວາມເຊື່ອຄວາມເຂົ້າໃຈໃນພຣະເຢຊູຄຣິສ ທີ່ຈະເຣີນກ້າວຫນ້າແລະຊັດເຈນຂຶ້ນກວ່າເດີມໂດຍການນຳພາຂອງພຣະເຈົ້າ

ຂ. ຄວາມເຊື່ອຂອງທ່ານໂປໂລກ່ຽວກັບເຣື່ອງພຣະເຢຊູຄຣິສບໍ່ແມ່ນວ່າເປັນຄວາມເຊື່ອໃຫມ່ ມີຄຳສອນໃນລັກສະນະແນວດຽວກັນໃນພຣະທັມໂກຣິນໂທສະບັບຕົ້ນ ບົດທີ 8:6 "ມີອົງພຣະຜູ້ເປັນເຈົ້າອົງດຽວ ຄືພຣະເຢຊູຄຣິສ ແລະສິ່ງສາຣະພັດກໍບັງເກີດຂຶ້ນໂດຍພຣະອົງ ແລະເຮົາກໍເປັນມາໂດຍພຣະອົງ" ໃນຂໍ້ຄວາມນີ້ກໍຊີ້ໃຫ້ເຮົາເຫັນໄດ້ວ່າ ທ່ານໂປໂລມີຮາກຖານຄວາມເຊື່ອມາກ່ອນແລ້ວ ແລະຄວາມເຊື່ອນັ້ນໄດ້ປາກົດຊັດແຈ້ງຍິ່ງຂຶ້ນດັ່ງທີ່ທ່ານໄດ້ບັນລະຍາຍໄວ້ໃນພຣະທັມໂກໂລຊາຍ

ດ້ວຍເຫດຜົນເຫລົ່ານີ້ ຈຶ່ງເປັນຂໍ້ຢືນຢັນໃຫ້ກັບເຮົາ ໃຫ້ມີຄວາມຫມັ້ນໃຈວ່າ ພຣະທັມໂກໂລຊາຍຂຽນໂດຍທ່ານໂປໂລໂດຍບໍ່ຕ້ອງສົງສັຍ

**ສາມ. ຈຸດປະສົງຂອງພຣະທັມໂກໂລຊາຍ**

ກ. ເພື່ອຢຸດຫຍັ້ງຄຳສອນປອມທີ່ກຳລັງແຊກຊຶມເຂົ້າມາໃນຄຣິສຈັກ ຈາກສາສນາອື່ນ ໆ ແລະລັດທິຄຳສອນຕ່າງ ໆ ດັ່ງທີ່ໄດ້ກ່າວໄປແລ້ວຂ້າງເທິງ ເພື່ອໃຫ້ຄຣິສຕຽນໃຫມ່ມີຄວາມເຊື່ອຢ່າງຫມັ້ນຄົງໃນພຣະເຢຊູຄຣິສ ໂດຍບໍ່ຕ້ອງສັບສົນຫວຸ້ນຫວາຍກັບລັດທິຄຳສອນອື່ນ

ຂ. ເພື່ອເປັນການແນະນຳຕົວທ່ານຕີຂີໂກ (Tychicus) ຊຶ່ງເປັນຜູ້ຕ່າງຫນ້າທ່ານໂປໂລ ແລະເປັນຜູ້ນຳຈົດຫມາຍຂອງທ່ານໂປໂລມາຍັງຄຣິສຈັກໂກໂລຊາຍ ແລະເພື່ອທີ່ຈະແຈ້ງຂ່າວຄວາມເປັນຢູ່ຂອງທ່ານໂປໂລໃຫ້ຮູ້ຈັກ ແລະຫນຸນນ້ຳໃຈພີ່ນ້ອງໃນຄຣິສຈັກໂກໂລຊາຍ ນອກຈາກນັ້ນທ່ານໂປໂລຍັງໄດ້ຂໍໃຫ້ພວກເຂົາ ຮັບຕ້ອນທ່ານໂອເນຊີໂມ (Onesimus) ໄວ້ ທ່ານໂອເນຊີໂມເປັນທາສທີ່ຫລົບຫນີມາແຕ່ໄດ້ກັບໃຈເປັນຄຣິສຕຽນ ທ່ານໂປໂລໃຫ້ທ່ານຕີຂີໂກມາເປັນເພື່ອນນຳ ເພື່ອສົ່ງທ່ານໂອເນຊີໂມກັບຄືນຫາເຈົ້ານາຍເກົ່າໃນເມືອງໂກໂລຊາຍ (ກຊ 4:7-9)

ຄ. ເພື່ອສນັບສນູນຄວາມເຊື່ອຂອງທ່ານເອປາຟາໃນຖານະການພີ່ນ້ອງໃນເມືອງໂກໂລຊາຍ (ກຊ 4:12-13) ທີ່ກຳລັງມີຄົນໂຈມຕີ ໃນຖານະທີ່ທ່ານເອປາຟາເປັນຜູ້ນຳຢູ່

ງ. ເພື່ອເປັນການຕຽມທາງໃຫ້ທ່ານມາຣະໂກເດີນທາງໄປຢ້ຽມຢາມ (ກຊ 4:10)

ຈ. ເພື່ອເຕືອນທ່ານອາຂີໂປໃຫ້ບົວລະບັດຮັບໃຊ້ອົງພຣະຜູ້ເປັນເຈົ້າໃຫ້ສຳເຣັດ (ກຊ 4:17)

ສ. ເພື່ອແນະນຳໃຫ້ຄຣິສຈັກຕ່າງ ໆ ມີການແບ່ງປັນຫມູນວຽນຈົດຫມາຍພຣະທັມທີ່ທ່ານໂປໂລຂຽນສົ່ງໄປໃຫ້ ຊຶ່ງເປັນການແບ່ງປັນພຣະພອນຣະຫວ່າງຄຣິສຈັກຕ່າງ ໆ ໃຫ້ມີຄວາມເຊື່ອທີ່ໃຫຍ່ຂຶ້ນ (ກຊ 4:16)

## ສີ່. ສາຣະສຳຄັນແລະເນື້ອນັຍຂອງພຣະທັມໂກໂລຊາຍ

ສາຣະສຳຄັນໃນພຣະທັມໂກໂລຊາຍທີ່ທ່ານໂປໂລໄດ້ຂຽນຂຶ້ນນັ້ນມີຄວາມຊັດແຈ້ງວ່າ ພຣະເຢຊູຄຣິສຊົງເປັນເອກຖ້າມກາງສັພສິ່ງທັງປວງ ພຣະອົງຊົງເປັນພຣະຜູ້ໄຖ່ຂອງປວງມະນຸດ ເປັນສິ່ງທີ່ສົມຄວນແລ້ວທີ່ພຣະອົງຈະຮຽກຮ້ອງເອົາຄວາມເຊື່ອຢ່າງເຕັມປ່ຽມ ແລະຮຽກຮ້ອງຄວາມຈົງຮັກພັກດີຈາກທຸກຄົນ ພຣະເຢຊູຄຣິສຊົງສົມບູນຄົບຖ້ວນບໍ່ຈຳເປັນຕ້ອງຊອກຫາສິ່ງອື່ນ ໆ ມາເພີ່ມເຕີ່ມອີກ ເຊັ່ນ ການນມັສການເທວະດາ ຫລືກົດຣະບຽບວິນັຍທາງດ້ານສິລທັມ ຫລືການບຳເພັນທຸຊກີຣິຍາ ທີ່ຊາວໂກໂລຊາຍໄດ້ຮັບຊັກຊວນພວກເຂົາຢູ່ອ້ອມຂ້າງ ໃຫ້ພວກເຂົາໃຫ້ຂັບຕາມເພື່ອຈະໄດ້ໄປເຖິງພຣະເຈົ້າ ໂດຍພຣະເຢຊູຄຣິສພຣະເຈົ້າໄດ້ມາຫາມະນຸດແລ້ວ ພຣະອົງເປັນພຣະບຸດຂອງພຣະເຈົ້າ ຜູ້ຕ່າງຫນ້າພຣະບິດາ ສະເດັດມາເພື່ອເປີດເຜີຍໃຫ້ເຮົາຮູ້ຈັກແຈ້ງໃນພຣະບິດາ ພຣະອົງໄດ້ຊົງປະທານຊີວິດເປັນຄ່າໄຖ່ ແລະຊົງປະທານຊີວິດໃຫມ່ແກ່ທຸກຄົນທີ່ເຊື່ອສັດທາ ພຣະອົງຊົງເປັນສີສະຂອງຄຣິສຈັກ ຊົງເປັນເອກໃນສັພສິ່ງທັງປວງສູງສຸດບໍ່ມີຜູ້ໃດທຽບທຽມໄດ້ ທ່ານໂປໂລໄດ້ແນະນຳແລະບັລຍາຍເຖິງພຣະເຢຊູຄຣິສຢ່າງເຕັມຂນາດຄວາມເຊື່ອ ທີ່ບໍ່ໄດ້ເປີດຊ່ອງວ່າງໃຫ້ກັບຄຳສອນປອມອື່ນ ໆ ທີ່ຈະໂຕ້ຕອບທ່ານໄດ້ (ກຊ 1:13-23)

ຄວາມເຊື່ອໃນພຣະເຢຊູຄຣິສເປັນຄວາມເຊື່ອທີ່ຍິ່ງໃຫຍ່ ເປັນຄວາມເຊື່ອທີ່ຄອບຄຸມຄວາມຈິງຕລອດທັງປວັດສາດທັ້ງສິ້ນ ຣວມເຖິງສິ່ງຕ່າງ ໆ ທີ່ພຣະເຈົ້າໄດ້ເຄີຍເຮັດມາ ພຣະບຸດຊົງເປັນແບບລັກສະນະຂອງພຣະເຈົ້າ ພຣະອົງຊົງເປັນຕົວແທນຂອງພຣະເຈົ້າໃນການຊົງສ້າງສັພສິ່ງທັງປວງ ພຣະອົງຊົງຄ້ຳຈຸນທຸກສິ່ງໄວ້ ແລະເຮັດໃຫ້ນ້ຳພຣະທັຍຂອງພຣະບິດາສຳເຣັດໃນປວັດສາດ ພຣະອົງສະເດັດເຂົ້າມາໃນປວັດສາດມະນຸດໂລກ ເພື່ອຊົງໄຖ່ມະນຸດແລະຊົງນຳພາດ້ວຍການເປັນສີສະຂອງຄຣິສຈັກ ພຣະອົງມີຊັຍເຫນືອຄວາມຕາຍ ທີ່ສັພສິ່ງທັງປວງຕ້ອງເບິ່ງດູແລະເພິ່ງພາອາສັຍ ພຣະອົງເປັນສີສະ ແມ່ນທູຕສວັນກໍເປັນສິ່ງທີ່ພຣະອົງຊົງສ້າງໄວ້ ແລະເປັນຫນີ້ແກ່ການຊົງໄຖ່ຂອງພຣະອົງ ດັ່ງນັ້ນທູຕສວັນຈຶ່ງບໍ່ໄດ້ໃຫຍ່ກວ່າຫລືເທົ່າທຽມກັບພຣະອົງ ແລະບໍ່ສົມຄວນໄດ້ຮັບການນມັສການເທົ່າທຽມກັບພຣະອົງ ການນມັສການສົມຄວນຕົກແກ່ພຣະເຈົ້າອົງດຽວເທົ່ານັ້ນ ແລະແກ່ພຣະບຸດຜູ້ຊົງມີສ່ວນຮ່ວມໃນການຊົງໄຖ່ ຊຶ່ງສັພສິ່ງທັງປວງທີ່ພຣະອົງຊົງສ້າງ ສົມຄວນທີ່ຈະຕ້ອງນມັສການແລະສັຣເສີນແກ່ພຣະອົງ

ດັ່ງນັ້ນ ໄພ່ພົນຂອງພຣະເຈົ້າຫລືຄຣິສຈັກຈະຕ້ອງຊອກຫາຄວາມຈິງຈາກພຣະເຢຊູຄຣິສເທົ່ານັ້ນ ຄຣິສຈັກຈະມີຄວາມຫວັງ ຖ້າມີຄວາມເຊື່ອຄວາມຫວັງໃນພຣະເຢຊູຄຣິສ ແລະນັ້ນເປັນເຫດທີ່ທ່ານໂປໂລໄດ້ຍອມຕົວເປັນຜູ້ຮັບໃຊ້ ແລະຍອມຮັບຄວາມທຸກຍາກຕ່າງ ໆ ໃນວຽກການທີ່ທ່ານຮັບໃຊ້ (ກຊ 1:24-29) ທ່ານໂປໂລຍັງໄດ້ສະແດງໃຫ້ເຂົ້າໃຈເຖິງຄວາມລ້ຳເລີກຂອງພຣະເຈົ້າ "ຄືທີ່ພຣະຄຣິສຊົງສຖິດຢູ່ໃນເຈົ້າທັງຫລາຍ (ຄົນຍິວແລະຄວາມຕ່າງຊາດ) ຊຶ່ງເປັນເຫດໃຫ້ຫວັງວ່າຈະໄດ້ເຖິງສະງ່າຣາສີນັ້ນ" (ກຊ 1:27) ຜູ້ທີ່ເຊື່ອທຸກຄົນທີ່ມີຄວາມສັມພັນກັບພຣະຄຣິສຜູ້ຊົງພຣະຊົນຢູ່ ເຂົາທັງຫລາຍຈະໄດ້ແຫລ່ງກຳລັງ

จากการຊີ້ງສຖິດຂອງພຣະຄຣິສ ທີ່ຈະຕໍ່ຕ້ານການທົດລອງໃນປັດຈຸບັນແລະອານາຄົດໄດ້ ແລະມີຄວາມຫວັງອັນໝັ້ນຄົງທີ່ໄດ້ຮັບຄວາມສຸກອັນຍິ່ງໃຫຍ່ໃນອານາຄົດຊຶ່ງຫລາຍກວ່າພຣະພອນໃນປັດຈຸບັນອີກ

ດ້ວຍເຫດນີ້ຄຣິສຕຽນຄວນດໍາເນີນຊີວິດດ້ວຍຄວາມເຊື່ອສັດທາແລະດ້ວຍຄວາມຈົງຮັກພັກດີຕໍ່ພຣະຄຣິສ (ກຊ 2:1-7) ພຣະເຈົ້າຊົງຢູ່ໃນພຣະຄຣິສຢ່າງເຕັມປ່ຽມ ເຂົາທັງຫລາຍບໍ່ສົມຄວນຄິດວ່າພຣະເຈົ້າຢູ່ໃນພຣະຄຣິສພຽງສ່ວນດຽວເທົ່ານັ້ນ ທີ່ຈະເຮັດໃຫ້ເຂົາຕ້ອງຊອກຫາສ່ວນອື່ນ ໆ ທີ່ເຫລືອຢູ່ຈາກບັນດາພວກທູດສວັນ ແລະນມັສການທູດສວັນເຫລົ່ານັ້ນ ເຂົາບໍ່ຄວນຄິດວ່າໂດຍການບໍາເພັນທຸຂກີຣິຍາຢ່າງໂຍຄີ ແລະຖືກົດວິນັຍຂໍ້ບັງຄັບພິເສດຈະຍົກຕົວເຂົາຂຶ້ນໄດ້ ແລະຈະກາຍເປັນຫົນທາງໄປຫາພຣະເຈົ້າ (ກຊ 2:8-23) ການອະພັຍໂທດແລະຊີວິດໃຫມ່ເປັນຂອງພຣະຣາຊທານຈາກພຣະເຈົ້າ ຖ້າເຮົາບໍ່ສາມາດເຂົ້າໃຈເຖິງຄວາມຈິງນີ້ ແລະພຍາຍາມທີ່ຈະສ້າງຊີວິດໃຫມ່ຂຶ້ນຈາກຊີວິດທີ່ມີຄວາມບາບປົກຄຸມແລະເກາະກິນຊີວິດຢູ່ກໍບໍ່ເກີດຜົນ ຜູ້ທີ່ເຮັດແນວນັ້ນກໍສັບສົນກັບຄວາມຈິງ ແລະບໍ່ສາມາດເຫັນເຖິງຄວາມຍິ່ງໃຫຍ່ຂອງພຣະຄຣິສໄດ້ ແລະຈະກໍ່ໃຫ້ເກີດການຍົກຕົວເອງຂຶ້ນ ຄຣິສຕຽນສົມຄວນຕ້ອງດໍາເນີນຊີວິດໃຫມ່ດ້ວຍຄວາມກະຕັນຍູກະຕະເວທີຕໍ່ບຸນຄຸນທີ່ພຣະເຢຊູຄຣິສໄດ້ເຮັດໄວ້ແລ້ວ "ຖ້າເຈົ້າທັງຫລາຍຮັບການຊົງບັນດານໃຫ້ຄືນມາດ້ວຍກັນກັບພຣະຄຣິສແລ້ວ ກໍຈົ່ງສະແວງຫາສິ່ງຊຶ່ງຢູ່ເບື້ອງເທິງ ຄືບ່ອນທີ່ພຣະຄຣິສຊົງສຖິດຢູ່.. ຈົ່ງເອົາໃຈໃສ່ສິ່ງທີ່ຢູ່ເບື້ອງເທິງ ບໍ່ແມ່ນສິ່ງຊຶ່ງຢູ່ທີ່ແຜ່ນດິນໂລກ" (ກຊ 3:1-4)

ການກະທໍາແລະແນວຄວາມຄິດທີ່ຜິດບາບທຸກຢ່າງສົມຄວນຕ້ອງເລີກເສັຍ ແລະແທນທີ່ຈະເຮັດບາບຄຣິສຕຽນຜູ້ເປັນສາວົກຂອງພຣະຄຣິສຄວນຂັບຕາມຕົວຢ່າງຂອງພຣະຄຣິສ ແລະຕາມນໍ້າພຣະທັຍພຣະປະສົງຂອງພຣະອົງ ດ້ວຍຄວາມເຄົາຣົບໂດຍສະມັກໃຈ ອົນຄົບຖ້ວນແລະປະກອບດ້ວຍຄວາມຮັກ "ເມື່ອເຈົ້າທັງຫລາຍຈະເຮັດສິ່ງໃດດ້ວຍວາຈາຫລືດ້ວຍການກະທໍາກໍຕາມ ຈົ່ງເຮັດທຸກສິ່ງໃນພຣະນາມຂອງພຣະເຢຊູເຈົ້າ ແລະຂອບພຣະຄຸນພຣະບິດາເຈົ້າໂດຍພຣະອົງນັ້ນ" (ກຊ 3:5-17)

ທຸກຄົວເຮືອນທີ່ເປັນຄຣິສຕຽນຕ້ອງປົກຄອງດ້ວຍຄວາມຮັກໂດຍບໍ່ເຫັນແກ່ຕົວ ທ່ານໂປໂລໄດ້ໃຫ້ເຮົາເຂົ້າໃຈວ່າສະມາຊິກທຸກຄົນໃນຄອບຄົວເຮືອນສົມຄວນມີຊີວິດຢູ່ດ້ວຍຄວາມຮັກ ແລະຄວາມເຂົ້າໃຈຊ່ວຍເຫລືອກັນ ບໍ່ແມ່ນວ່າຕ່າງຝ່າຍຕ່າງເອົາແຕ່ຮຽກຮ້ອງສິດທິຂອງຕົນ ຄຣິສຕຽນທຸກຄົນສົມຄວນທໍາໜ້າທີ່ຂອງຕົນເໝືອນຖວາຍແກ່ອົງພຣະຜູ້ເປັນເຈົ້າ (ກຊ 3:18-4:1)

ໃນຕອນທ້າຍຂອງພຣະທັມໂກໂລຊາຍ (ກຊ 4:2-18) ກໍຄືກັບພຣະທັມອື່ນ ໆ ທີ່ທ່ານໂປໂລໄດ້ກ່າວຢໍ້າຢູ່ສເມີ ທ່ານຂໍໃຫ້ພີ່ນ້ອງຄຣິສຕຽນມີຈິດໃຈຮ່ວມກັນໃນການອະທິຖານແລະສາມັກຄີທັມ ເພື່ອການປ່າວປະກາດຂ່າວປະເສີດ ແລະດໍາເນີນຊີວິດທີ່ເປັນແບບຢ່າງທີ່ດຶງດູດໃຈຄົນຂ້າງນອກຄຣິສຈັກໃຫ້ມາເຖິງພຣະຄຣິສ "ຈົ່ງປະຕິບັດຕໍ່ຄົນພາຍນອກດ້ວຍໃຊ້ສະຕິປັນຍາ ໂດຍສວຍໂອກາດ ຈົ່ງໃຫ້ວາຈາຂອງເຈົ້າທັງຫລາຍປະກອບດ້ວຍເມດຕາຄຸນຢູ່ສເມີ ປະສົມດ້ວຍເກືອ ເພື່ອເຈົ້າທັງຫລາຍຈະໄດ້ຮູ້ວິທີຕອບທີ່ຖືກໃຈແກ່ທຸກຄົນ" (ກຊ 4:-6)

ເມື່ອສຶກສາພຣະທັມໂກໂລຊາຍແລ້ວຈະພົບຄວາມຊັດແຈ້ງວ່າ "ພຣະເຢຊູຄຣິສຊົງເປັນເອກໃນສັພສິ່ງທັງປວງ" (The Preeminence of Christ) ເປັນສາຣະສຳຄັນຂອງພຣະທັມສະບັບນີ້ ຊຶ່ງຈະສາມາດຂຽນເປັນໂຄງຮ່າງໄດ້ດັ່ງນີ້

**ພຣະຄຣິສຊົງເປັນເອກໃນສັພສິ່ງທັງປວງ** (ກຊ 1:18)

1. **ພຣະຄຣິສຊົງເປັນເອກໃນການຄອບຄອງສາກົນຈັກກະວານ**
   ກ. ພຣະອົງຊົງເປັນແບບລັກສະນະຂອງພຣະເຈົ້າ ຜູ້ຊຶ່ງຕາເຫັນບໍ່ໄດ້ (ກຊ 1:15)
   ຂ. ພຣະເຈົ້າໄດ້ຊົງສ້າງສິ່ງທັງປວງໂດຍທາງພຣະອົງແລະສຳລັບພຣະອົງ (ກຊ 1:16)
   ຄ. ສິ່ງສາຣະພັດນັ້ນເປັນລະບຽບຢູ່ໂດຍພຣະອົງ (ກຊ 1:17)
   ງ. ພຣະອົງຊົງເປັນສີສະຂອງຄຣິສຈັກສາກົນ (ກຊ 1:18)

2. **ພຣະຄຣິສຊົງເປັນເອກໃນການໃຫ້ເກີດການຄືນດີກັບພຣະເຈົ້າ**
   ກ. ພຣະອົງເປັນທີ່ໂຜດປານພຣະທັຍຂອງພຣະບິດາ (ກຊ 1:19, 20)
   ຂ. ພຣະອົງຊົງໂຜດໃຫ້ເຮົາກັບຄືນດີກັບພຣະບິດາ ໂດຍການສິ້ນພຣະຊົນຂອງພຣະອົງ (ກຊ 1:21, 22)
   ຄ. ພຣະອົງຊົງສຖິດກັບຜູ້ເຊື່ອອັນເປັນຄວາມຫວັງແຫ່ງສະງ່າຣາສີ (ກຊ 1:27)
3. **ພຣະຄຣິສຊົງເປັນເອກໃນສະຕິປັນຍາແລະຄວາມຮູ້ທັງຫມົດ**
   ກ. ພຣະອົງເປັນແຫລ່ງແຫ່ງສະຕິປັນຍາແລະຄວາມຮູ້ທັງຫມົດ (ກຊ 2:2, 3)
   ຂ. ສະຕິປັນຍາຂອງພຣະອົງຕ່າງກັບສະຕິປັນຍາຂອງໂລກ (ກຊ 2:8)
4. **ພຣະຄຣິສຊົງເປັນເອກໃນສາສນາພິທີສຳລັບຜູ້ເຊື່ອແຕ່ລະຄົນ**
   ກ. ພິທີຕັດທີ່ທຸກຄົນທີ່ມີຊີວິດໃນພຣະອົງຢ່າງຄົບຖ້ວນ (ກຊ 2:11-13)
   ຂ. ບໍ່ຕ້ອງຖືສາສນາພິທີອື່ນ ໆ ອີກ (ກຊ 2:16-23)
5. **ພຣະຄຣິສເປັນເອກໃນການດຳເນີນຊີວິດຄຣິສຕຽນ**
   ກ. ພຣະອົງເປັນຊີວິດຈິດໃຈຂອງຄຣິສຕຽນ (ຄຊ 3:3)
   ຂ. ພຣະອົງໂຜດຊ່ວຍໃຫ້ຄຣິສຕຽນຫລີກຫນີຈາກການຜິດສິລທັມແລະອວຍພຣະພອນຄຣິສຕຽນ (3:5-14)

ມີຜູ້ທີ່ສົມທຽບເນື້ອນັຍຂອງພຣະທັມໂກໂລຊາຍກັບພຣະທັມເອເຟໂຊ ພົບວ່າມີຄວາມໃກ້ຄຽງກັນຫລາຍ ທັງນີ້ສະແດງວ່າພຣະທັມທັງສອງເປັນພຣະທັມທີ່ຂຽນໃນຣະຍະເວລາທີ່ໃກ້ຄຽງກັນ ໃນເວລາທີ່ທ່ານໂປໂລຕິດຄຸກ

*ສິ່ງທີ່ຄ້າຍຄືກັນຂອງພຣະທັມໂກໂລຊາຍແລະພຣະທັມເອເຟໂຊ ຄື*

1. ພຣະທັມທັງສອງອ້າງອິງເຖິງພຣະເຢຊູຄຣິສຊົງເປັນສີສະຂອງຄຣິສຈັກ (ອຟ 1:23, ກຊ 1:18)

2. ພຣະທັມທັງສອງກ່າວເຖິງໜ້າທີ່ທາງສັງຄົມຂອງຜູ້ມີຊີວິດໃໝ່ໃນພຣະຄຣິສ
(ອຟ 5:22-6:9, ກຊ 3:18-4:1)

*ສິ່ງທີ່ແຕກຕ່າງ* ຄື ພຣະທັມໂກໂລຊາຍມີເນື້ອນັຍທີ່ຕໍ່ຕ້ານຄຳສອນປອມ ທີ່ຊັກນຳໃຫ້ຜູ້ເຂົ້າໃຈຜິດໃນເຣື້ອງຊີວິດແລະການຊົງພຣະຊົນຂອງພຣະຄຣິສ ສ່ວນພຣະທັມເອເຟໂຊນັ້ນໜັກເຖິງເຣື້ອງຄວາມເປັນອັນນຶ່ງອັນດຽວຫລືເອກພາບຂອງຜູ້ເຊື່ອ ແລະຍົກຍໍສັຣເສີນພຣະຄຣິສຮ່ວມກັນ ພຣະທັມໂກໂລຊາຍນັ້ນໜັກ ທີ່ພຣະເຢຊູຄຣິສຊົງເປັນເອກໃນສັພສິ່ງໃນຈັກກະວານ ສ່ວນພຣະທັມເອເຟໂຊເນັ້ນໜັກວ່າພຣະເຢຊູຄຣິສຊົງເປັນປະມຸກຂອງຄຣິສຈັກສາກົນ

| |
|---|
| **ຈົ່ງເອົາສິ່ງທີ່ທ່ານໄດ້ສຶກສາຈາກຂ້າງເທິງເຮັດບົດຝຶກຫັດຂໍ້ສີ່ & ຂໍ້ຫ້າ** |

ວ: 1-26-98

# ບົດທີ 9

# ຈົດໝາຍຂອງທ່ານໂປໂລ ເຖິງຄຣິສຈັກໃນເມືອງເທຊະໂລນິກ

(ພຣະທັມເທຊະໂລນິກສະບັບທີນຶ່ງ & ສອງ)

## ຂໍ້ໄຂຈົດໝາຍພຣະທັມເທຊະໂລນິກ

*ດ້ວຍວ່າຄົນເຫລົ່ານັ້ນເອງກໍໄດ້ລາຍງານເຖິງເຣື້ອງພວກເຮົາວ່າ ເຮົາໄດ້ເຂົ້າມາຫາເຈົ້າທັງຫລາຍເປັນຢ່າງໃດ ແລະພວກເຈົ້າໄດ້ອວ່າຍໜີຈາກພຣະທຽມມາຫາພຣະເຈົ້າດ້ວຍຢ່າງໃດ ເພື່ອຮັບໃຊ້ພຣະເຈົ້າຜູ້ຊົງພຣະຊົນຢູ່ ແລະທ່ຽງແທ້ ແລະຄອຍຖ້າພຣະບຸດຂອງພຣະອົງຈາກສວັນຊຶ່ງພຣະອົງໄດ້ຊົງບັນດານໃຫ້ພຣະບຸດນັ້ນຄືນຂຶ້ນມາຈາກຕາຍ ຄືພຣະເຢຊູຜູ້ໄດ້ຊົງໂຜດເຮົາທັງຫລາຍໃຫ້ພົ້ນຈາກພຣະພິໂຣດທີ່ຈະມີມານັ້ນ (1 ເທຊະໂລນິກ 1:9-10)*

*ເຫດສະນັ້ນແຫລະ ພີ່ນ້ອງເອີຍ ຈົ່ງຕັ້ງໝັ້ນຄົງຢູ່ແລະຍຶດຖືເອົາຄຳສອນທີ່ສືບມາ ຊຶ່ງພວກເຮົາໄດ້ສອນພວກເຈົ້ານັ້ນ ບໍ່ວ່າຈະເປັນທາງວາຈາຫລືທາງຈົດໝາຍຂອງພວກເຮົາ (2 ເທຊະໂລນິກ 2:15)*

ທ່ານເອັດເວີດ ພີ. ເບີຣ໌ (Edward P. Blair) ໄດ້ບັນລະຍາຍເຖິງຄວາມສຳຄັນຂອງພຣະທັມເທຊະໂລນິກສະບັບຕົ້ນວ່າ "ເປັນຈົດໝາຍພຣະທັມທີ່ສະແດງເຖິງຄວາມຫ່ວງໃຍ ແລະຄວາມຮັກຂອງທ່ານໂປໂລຢ່າງຫລວງຫລາຍ" ເພາະໃນພຣະທັມນີ້ທ່ານໂປໂລປາກົດຄືກັບຜູ້ລ້ຽງແກະ (ຫລືສິດຍາພິບາລ) ຜູ້ອ່ອນສຸພາບທີ່ກຳລັງລ້ຽງລູກແກະນ້ອຍ ດ້ວຍຄວາມຮັກແພງ ດ້ວຍການປົກປັກຮັກສາ ແລະໜຸນໃຈແກ່ຜູ້ມີຄວາມເຊື່ອນ້ອຍ ດັ່ງທີ່ເຮົາຈະອ່ານພົບຈາກຄວາມເວົ້າຂອງທ່ານໂປໂລເອງໃນພຣະທັມເທຊະໂລນິກສະບັບຕົ້ນ 2:7 "ແຕ່ວ່າພວກເຮົາໄດ້ຢູ່ໃນຖ້າມກາງພວກເຈົ້າດ້ວຍໃຈສຸພາບອ່ອນໂຍນເໝືອນດັ່ງແມ່ທີ່ລ້ຽງລູກອ່ອນນ້ອຍຂອງຕົນ" ແລະໃນ 2:11-12 "ຕາມດັ່ງເຈົ້າທັງຫລາຍຊາບແລ້ວວ່າ ເຮົາໄດ້ເຮັດນຳພວກເຈົ້າທຸກຄົນເໝືອນພໍ່ກັບລູກຂອງຕົນ ຄືໄດ້ເຕືອນສະຕິໜູນໃຈພວກເຈົ້າ ແລະສັ່ງເນັ້ນພວກເຈົ້າ ເພື່ອໃຫ້ດຳເນີນຊີວິດຕາມຢ່າງສົມຄວນຕໍ່ພຣະເຈົ້າ ຜູ້ຊົງເອີ້ນເອົາເຈົ້າທັງຫລາຍໃຫ້ເຂົ້າມາໃນຣາຊອານາຈັກ ແລະໃນສະງ່າຣາສີຂອງພຣະອົງເອງ"

## ນຶ່ງ. ພື້ນເບື້ອງຫລັງຂອງພຣະທັມເທຊະໂລນິກ

ພຣະທັມຈົດໝາຍເທຊະໂລນິກທັງສອງສະບັບ ຈັດຢູ່ໃນຈົດໝາຍທີ່ເກົ່າແກ່ ຫລືເປັນຈົດໝາຍສະບັບແຣກ ໆ ທີ່ທ່ານໂປໂລໄດ້ຂຽນຂຶ້ນ ເພື່ອສົ່ງໄປຍັງຄຣິສຈັກໃນເມືອງເທຊະໂລນິກ ຊຶ່ງເປັນຄຣິສຈັກ

ທີ່ທ່ານໂປໂລໄດ້ກໍ່ຕັ້ງຂຶ້ນເມື່ອທ່ານອອກປ່າວປະກາດຂ່າວປະເສີດໃນການເດີນທາງທັຽວທີ່ສອງ ໃນເວລາທີ່ທ່ານໂປໂລກຳລັງເດີນທາງຈາກເມືອງຟີລິບປອຍ ທ່ານໄດ້ໄປປ່າວປະກາດຂ່າວປະເສີດຕໍ່ໄປທີ່ເມືອງເທຊະໂລນິກແລະກຸງອາແຖນໂດຍໃຊ້ຣະຍະເວລາອັນສັ້ນ ແລະເດີນທາງຕໍ່ໄປເຖິງເມືອງໂກຣິນໂທ ວຽກການຮັບໃຊ້ທັງໝົດນີ້ທ່ານໂປໂລເອີ້ນວ່າ "ຂັ້ນຕົ້ນຂອງການປະກາດຂ່າວປະເສີດ" (ຟປ 4:15) ຕາມຫລັກຖານຂອງພຣະທັມກິຈການທ່ານໂປໂລໄດ້ຮັບໃຊ້ພຣະເຈົ້າ ແລະເປັນເວລາດຽວກັນກັບທີ່ທ່ານຕ້ອງຫາລ້ຽງຊີພເປັນຊ່າງເຍັບຜ້າເຕັນຮ່ວມກັບອາກີລາແລະປີຊະກີລາ (ກຈ 18:1-3) ຫລັງຈາກທີ່ຊີລາແລະຕີໂມທຽວໄດ້ຮັບໃຊ້ທີ່ແຂວງມາເກໂດເນັຽ ທ່ານທັງສອງໄດ້ເດີນທາງມາເພື່ອຈະຮ່ວມເຮັດວຽກກັບທ່ານໂປໂລ ສິ່ງທີ່ຊາຍໜຸ່ມທັງສອງນຳມາດ້ວຍກໍຄື ເງິນທີ່ພີ່ນ້ອງໄດ້ຖວາຍເພື່ອຊ່ວຍວຽກການຮັບໃຊ້ຂອງທ່ານໂປໂລ ຊຶ່ງນັບວ່າເປັນການຊ່ວຍເຫລືອທີ່ມີຄຸນຄ່າຢ່າງຍິ່ງ ເພາະວ່າທ່ານໂປໂລບໍ່ຕ້ອງເປັນຫ່ວງກັບການທຳມາຫາກິນຕໍ່ໄປ ທ່ານສາມາດປ່າວປະກາດພຣະຄຳຂອງພຣະເຈົ້າໄດ້ຢ່າງເຕັມທີ່(ກຈ 18:5, 2 ກທ 11:9) ຫລັງຈາກນັ້ນບໍ່ນານກໍໄດ້ເກີດການອິລທົນຫວຸ້ນວາຍຂຶ້ນ ເນື່ອງຈາກພວກຢິວຕໍ່ຕ້ານຄຳເທສນາຂອງທ່ານໂປໂລ ຈົນເປັນເຣື້ອງຮ້າຍແຮງທີ່ເປັນເຫດໃຫ້ທ່ານໂປໂລຖືກຂັບໄລ່ອອກໄປຈາກໂຮງທັມສາລາຂອງພວກຢິວ ຫລັງຈາກນັ້ນປະມານປີນຶ່ງຫລືປີເຄິ່ງ ທ່ານໂປໂລໄດ້ຖືກຈັບເພື່ອຈະໃຫ້ຄາລີໂອນຂ້າຫລວງຊາວໂຣມັນພິພາກສາລົງໂທດຄາລີໂອນຫາກໍມາຮັບຕຳແໜ່ງຂ້າຫລວງໂຣມັນບໍ່ນານນັກ ຄືປະມານ ຄ.ສ.50 ຫລື 52 ຈົດໝາຍພຣະທັມເທຊະໂລນິກສະບັບແຣກໜ້າຈະໄດ້ຂຽນຂຶ້ນໃນຣະຫວ່າງເວລານີ້ທີ່ເມືອງໂກຣິນໂທ

ເມືອງເທຊະໂລນິກເປັນນະຄອນໃຫຍ່ ເປັນສູນກາງໃນເຣື້ອງການຄ້າແລະການຄົມນາຄົມ ເປັນເມືອງຫລວງຂອງມາເກໂດເນັຽ ໄປທາງເໜືອເປັນທົ່ງຣາບທີ່ອຸດົມ ແລະມີຖນົນຫລວງໂຣມັນສາຍສຳຄັນສຳລັບການຄ້າຕັດຜ່ານຊື່ ເອຄນາຕຽນ (Egnatian Way) ທາງໃຕ້ເປັນທະເລອາຈຽນແລະມີທ່າເຮືອທີ່ມີການຄ້າທາງທະເລຢ່າງແໜ້ນໜາ ການມີທຸຣະກິຈການຄ້າຂາຍໄດ້ເປັນເຫດໃຫ້ພວກຢິວເຂົ້າມາຢູ່ໃນແຖບນັ້ນ ຊຶ່ງບໍ່ນານໂຮງທັມສາລາກໍເລີ້ມມີຄົນຕ່າງຊາດເຂົ້າມາຮ່ວມໃນການນມັສການນຳພວກຢິວເພາະພວກຜູ້ຍິງຊາວກຣີກມັກຄວາມເຊື່ອແລະຣະດັບສິລທັມອັນສູງຂອງພວກຢິວ ສະພາບການດັ່ງນີ້ເປັນທີ່ພໍໃຈທ່ານໂປໂລຫລາຍທີ່ສຸດໃນການປ່າວປະກາດຂ່າວປະເສີດຂອງພຣະເຢຊູຄຣິສ ທ່ານໂປໂລຮູ້ວ່າພຣະຄຣິສຈະສະເດັດມາຫາພວກຢິວກ່ອນ ສະນັ້ນທ່ານຈຶ່ງໄດ້ເທສນາໃຫ້ພີ່ນ້ອງຊາວຢິວຟັງໃນໂຮງທັມສາລາ ແລະໃນເວລາດຽວກັນທ່ານປ່າວປະກາດກັບຄົນຕ່າງຊາດຕາມທີ່ທ່ານໄດ້ມີພາຣະເນື່ອງຈາກການເອີ້ນຂອງພຣະເຈົ້າ ບັນດາຄົນທີ່ຢູ່ໃນໂຮງທັມສາລາເປັນພວກທີ່ພຣະເຈົ້າໄດ້ຈັດຕຽມໄວ້ແລ້ວໃຫ້ຟັງເຣື້ອງຂ່າວປະເສີດ ເພາະວ່າການທີ່ພວກນີ້ມາເຖິງໂຮງທັມສາລາກໍຍ່ອມມີຄວາມສົນໃຈແລະໄດ້ສຶກສາຄວາມເຊື່ອຈາກພວກຢິວເປັນພື້ນຖານຢູ່ແລ້ວ ພວກເຂົາໄດ້ຮູ້ຈັກພັນທະສັນຍາເດີມດ້ວຍ ແລະຮູ້ຈັກຄວາມເຊື່ອໝັ້ນຄົງຂອງພວກຢິວອີກດ້ວຍ ຈຶ່ງມີຄວາມພ້ອມພຽງທີ່ຈະຟັງເຣື້ອງຂອງພຣະເຢຊູຄຣິສ

ສະນັ້ນທ່ານໂປໂລໄດ້ເຂົ້າໄປໃນໂຮງທັມສາລາຕາມທີ່ທ່ານໄດ້ເຄີຍເຮັດມາກ່ອນ "ແລະໄດ້ອ້າງຂໍ້ຄວາມໃນພຣະຄັມພີໂຕ້ຕອບກັບເຂົາໄດ້**ສາມວັນຊະບາໂຕ** ແລະໄຂຂໍ້ຄວາມຊີ້ແຈງໃຫ້ເຫັນວ່າ ຈຳເປັນທີ່ອົງພຣະຄຣິສຕ້ອງຊົງທົນທຸກທໍຣະມານ ແລະຖືກຊົງບັນດານໃຫ້ເປັນຄືນມາ ແລະກ່າວຕໍ່ໄປວ່າ 'ພຣະເຢຊູຜູ້ທີ່ເຮົາປະກາດແກ່ທ່ານທັງຫລາຍ ຜູ້ນີ້ແຫລະ ເປັນພຣະຄຣິສ' (ກຈ 17:2,3) ດ້ວຍເຫດນີ້ທ່ານຈຶ່ງມີທັງພວກຢິວ ແລະພວກກຣີກຫລືຄົນຕ່າງຊາດກັບໃຈເຊື່ອ ຄຣິສຈັກເລັກ ໆ ທີ່ປະກອບດ້ວຍຜູ້ຮ້ອນຮົນຈຶ່ງໄດ້ຖືກຕັ້ງຂຶ້ນ

ໃນພຣະທັມກິຈການທ່ານລູກາໄດ້ບອກວ່າ ທ່ານໂປໂລພັກຢູ່ສາມວັນຊະບາໂຕ(ສາມອາທິດ)ແລ້ວ

ເກີດການອິລຸທົນຫວຸ້ນວາຍ ຊຶ່ງເປັນເຫດບັງຄັບໃຫ້ທ່ານໂປໂລຕ້ອງອອກຈາກເມືອງເທຊະໂລນິກ ດູເຫມືອນວ່າທ່ານໂປໂລພັກຢູ່ກາຍກວ່າສາມອາທິດ ແຕ່ຕາມຄຳຂອງທ່ານລູກາ ທ່ານຕ້ອງການບັນລະຍາຍໃຫ້ເຮົາຮູ້ຈັກວ່າ ທ່ານໂປໂລເລີ້ມເຮັດວຽກການຢ່າງໃດ ແລະເຫດອັນໃດທີ່ເຮັດໃຫ້ທ່ານໂປໂລຕ້ອງຍ້າຍໄປຍັງເມືອງອື່ນ ຊຶ່ງເປັນການບັນລະຍາຍເຖິງທີ່ມາຕອນຕົ້ນແລະການຈາກໄປຂອງທ່ານໂປໂລ ແຕ່ຖ້າເຮົາສຶກສາຈາກບັນທຶກຈົດຫມາຍຂອງທ່ານໂປໂລເອງກໍຈະພົບວ່າ ທ່ານໂປໂລຄົງຈະໄດ້ຢູ່ນານກວ່າ 3 ອາທິດ ເພາະວ່າທ່ານໄດ້ເຮັດວຽກງານຫລາຍແນວ ທີ່ຈະຕ້ອງໃຊ້ເວລາຫລາຍກວ່າສາມອາທິດ ດ້ວຍເຫດຜົນດັ່ງຕໍ່ໄປນີ້

**ປະການທຳອິດ** ຄຣິສຕຽນເມືອງເທຊະໂລນິກ "ໄດ້ອວ່າຍຫນີຈາກພຣະທຽມມາຫາພຣະເຈົ້າ" (1 ທຊ 1:9) ສະແດງວ່າຜູ້ເຊື່ອສ່ວນຫລາຍເປັນຄົນຕ່າງຊາດ ເປັນຜູ້ຊຶ່ງເຄີຍນມັສການຮູບເຄົາຣົບມາກ່ອນ ເຊື່ອແນ່ວ່າທ່ານໂປໂລຕ້ອງໃຊ້ເວລາຫລາຍກວ່າສາມອາທິດໃນການນຳພວກຄົນຕ່າງຊາດ ທີ່ເປັນສະມາຊິກຄຣິສຈັກ ຊຶ່ງສ່ວນຫລາຍເປັນຊາວຕ່າງຊາດມາເປັນຄຣິສຕຽນ ເພາະພວກເຂົາເປັນຄຣິສຕຽນໃຫມ່ແລະຕ້ອງການການຊູໃຈໃຫ້ມີຄວາມເຂັ້ມແຂງໃນການເລີ້ມຕົ້ນຊີວິດຄຣິສຕຽນ

**ປະການທີ່ສອງ** ທ່ານໂປໂລໄດ້ເຮັດວຽກງານຫນັກທັງກາງວັນແລະກາງຄືນ ເພື່ອລ້ຽງຊີພ (2 ທຊ 3:8) ຄິດວ່າການທີ່ທ່ານເຮັດວຽກເຊັ່ນນີ້ ກໍຕ້ອງພັກຢູ່ຫລາຍກວ່າສາມອາທິດ ຈຶ່ງເປັນເຫດໃຫ້ທ່ານຕ້ອງໄດ້ມີອາຊີພເຍັບເຕັນ ເພື່ອຈະເປັນວຽກການລ້ຽງຊີພໃນການກິນຢູ່

**ປະການທີ່ສາມ** ທ່ານໂປໂລກ່າວວ່າ ທ່ານໄດ້ຮັບຄວາມຊ່ວຍເຫລືອຈາກພີ່ນ້ອງຄຣິສຕຽນຊາວຟີລິບປອຍຫລາຍຄັ້ງຫລາຍເທື່ອໃນເວລາທີ່ຢູ່ໃນເມືອງເທຊະໂລນິກ (ຟປ 4:16) ເຫດທີ່ທ່ານໂປໂລມີຄວາມຕ້ອງການຄວາມຊ່ວຍເຫລືອຫລາຍຄັ້ງຫລາຍເທື່ອ ກໍເພາະທ່ານໄດ້ໃຊ້ເວລາປ່າວປະກາດຂ່າວປະເສີດຢູ່ນານພໍສົມຄວນ

**ປະການທີ່ສີ່** ຄຳສອນຕ່າງ ໆ ທີ່ຊາວເທຊະໂລນິກໄດ້ຮຽນຮູ້ແລະມີຄວາມເຊື່ອໃຫຍ່ຂຶ້ນ ກໍຕ້ອງນັບວ່າທ່ານໂປໂລໃຊ້ເວລາຢ່າງຫລວງຫລາຍໃນການສອນໃຫ້ເກີດຄວາມເຊື່ອໃນເຣື່ອງຕ່າງ ໆ ໂດຍສະເພາະຢ່າງຍິ່ງ "ເຣື່ອງອາວະສານສາດ" ຫລື "ເຣື່ອງອັນຕະສາດ" (Eschatology, ແມ່ນສາດຫລືຄວາມຮູ້ຄວາມເຂົ້າໃຈ ທີ່ກ່ຽວກັບເຣື່ອງຄວາມເຊື່ອໃນສິ່ງສຸດທ້າຍຫລືການສິ້ນສຸດຂອງໂລກ)

ທີ່ຈິງແລ້ວບໍ່ມີໃຜຮູ້ຄັກວ່າທ່ານໂປໂລພັກຢູ່ທີ່ເມືອງເທຊະໂລນິກນານເທົ່າໃດ ອາດຈະເປັນຣະຍະເວລາຫລາຍເດືອນກໍໄດ້ ແຕ່ທີ່ຮູ້ຄັກແນ່ກໍຕ້ອງກາຍກວ່າສາມອາທິດ ທ່ານລູກາບອກໃຫ້ຮູ້ຈັກວ່າທ່ານໂລໂປໄດ້ເລີ້ມການປ່າວປະກາດແນວໃດໃນສາມອາທິດແຣກໃນເມືອງເທຊະໂລນິກ ແຕ່ຊ່ວງຣະຍະເວລາຫລັງຈາກນັ້ນ ນານເທົ່າໃດເຮົາບໍ່ຮູ້ໄດ້ສິ່ງທີ່ເຮົາຮູ້ກໍຄືຄຳສອນຂອງທ່ານໂປໂລມີອິດທິພົນຫລາຍ ໆ ແນວຈົນເປັນເຫດໃຫ້ພວກຢິວຕ້ອງການທຳຮ້າຍ ແລະກໍ່ໃຫ້ເກີດເປັນສາເຫດທີ່ທ່ານໂປໂລຕ້ອງອອກຈາກເມືອງເທຊະໂລນິກ

ພວກຢິວໄດ້ຄິດເຫິງສາກໍ່ການອິລຸທົນຫວຸ້ນວາຍ ແລະບັງຄັບໃຫ້ທ່ານໂປໂລອອກມາມອບຕົວ ແມ່ນວ່າຝູງຊົນຊອກຫາທ່ານໂປໂລແລະຊີລາບໍ່ພົບ ພວກເຂົາກໍຈັບຕົວທ່ານຢາຊົນ ເຈົ້າຂອງເຮືອນທີ່ທ່ານໂປໂລພັກນຳແລະພີ່ນ້ອງລາງຄົນໄປຫາຜູ້ປົກຄອງເມືອງ ຝູງຊົນຮ້ອງກັນວ່າທ່ານໂປໂລແລະຊີລາເປັນພວກກະບົດຕ້ອງການຕັ້ງພຣະເຢຊູໃຫ້ເປັນກະສັດ ແລະລົ້ມການປົກຄອງຂອງໂຣມັນເສັຍ ຂໍ້ກ່າວຫາລັກສະນະນີ້ເປັນການບິດເບືອນຄວາມເຊື່ອຂອງຄຣິສຕຽນທີ່ວ່າ ພຣະຄຣິສຊົງເປັນພຣະເປັນເຈົ້າຂອງຊີວິດນັ້ນໃຫ້ກາຍເປັນເຣື່ອງຂອງການເມືອງ ພວກເຂົາໃສ່ຄວາມຜິດຫາວ່າທ່ານໂປໂລເປັນປະຕິການທາງການເມືອງ ເປັນເຫດໃຫ້ເຈົ້າຫນ້າທີ່ຕົກໃຈຕ້ອງເອົາເຣື່ອງ ຫລັງຈາກທີ່ມີຜູ້ປະກັນຕົວທ່ານຢາຊົນແລະຄົນອື່ນ ໆ ແລ້ວກໍ

ປ່ອຍຕົວທ່ານຢາຊົນໄປ (ກຈ 17:5-9) ເຫດນີ້ເຮັດໃຫ້ທ່ານໂປໂລຕ້ອງອອກຈາກເມືອງເທຊະໂລນິກ ແລະບໍ່ມີໂອກາດກັບຄືນເມືອອີກ

ທ່ານໂປໂລຈາກເມືອງເທຊະໂລນິກໄປຍັງເມືອງເບຣອຍອາກ່ອນ ແລ້ວຕໍ່ໄປເຖິງກຸງອາແທນ ແຕ່ທ່ານຍັງຫ່ວງໃຍໃນຄຣິສຈັກທີ່ຍັງຫນຸ່ມ (ໃນຄວາມເຊື່ອ) ແຫ່ງເມືອງເທຊະໂລນິກ ແລະຮູ້ວ່າການຂັດຂວາງແລະການຂົ່ມເຫັງຍັງມີຢູ່ໃນເມືອງເທຊະໂລນິກຕໍ່ໄປ ທ່ານໂປໂລຈຶ່ງໃຊ້ທ່ານຕີໂມທຽວໃຫ້ຍ້ອນກັບໄປເບິ່ງວ່າ ພວກຄຣິສຕຽນຍັງຍຶດຫມັ້ນໃນຄວາມເຊື່ອຢູ່ຫລືບໍ່ ຊຶ່ງພາຍຫລັງທ່ານຕີໂມທຽວໄດ້ມາລາຍງານຂ່າວດີໃຫ້ທ່ານໂປໂລຮູ້ຈັກວ່າ ພວກພີ່ນ້ອງຄຣິສຕຽນຍັງຍຶດຫມັ້ນໃນຄວາມເຊື່ອ ແລະລະລຶກເຖິງທ່ານໂປໂລດ້ວຍຄວາມຮັກ ແລະດ້ວຍຄວາມກະຕັນຍູກະຕະເວທີ (1 ທຊ 3:1-8)

## ສອງ. ຈຸດປະສົງຂອງພຣະທັມເທຊະໂລນິກ

ທ່ານໂປໂລມີຄວາມຄິດຮອດແລະເປັນຫ່ວງຄຣິສຈັກຫນຸ່ມໃນເມືອງເທຊະໂລນິກ ຢ້ານວ່າພີ່ນ້ອງຄຣິສຕຽນທີ່ມີຄວາມເຊື່ອໃຫມ່ກຸ່ມນີ້ຈະທົນຕໍ່ການຂົ່ມເຫັງຂອງພວກຜູ້ນຳຢິວບໍ່ໄດ້ ທ່ານເປັນຫ່ວງກັບຂໍ້ກ່າວຫາແລະການເວົ້າຂວັນຂອງຄົນທີ່ບໍ່ເປັນຄຣິສຕຽນ ວ່າທ່ານເຫັນແກ່ເງິນແລະຜົນປໂຍດ ໃຊ້ກົນອຸບາຍແລະບໍ່ສັດຊື່ ດ້ວຍເຫດຕ່າງ ໆ ເຫລົ່ານີ້ ທ່ານໂປໂລຈຶ່ງສົ່ງຕີໂມທຽວກັບຄືນໄປຫນູນໃຈພີ່ນ້ອງຄຣິສຕຽນໃນເມືອງເທຊະໂລນັກແລ້ວ ທ່ານຕີໂມທຽວໄດ້ນຳຂ່າວດີກັບມາລາຍງານເຖິງຄວາມເຊື່ອແລະຄວາມຮັກຂອງພວກເຂົາ (1 ທຊ 3:6) ພ້ອມທັງນຳບັນຫາຄວາມເຊື່ອບາງຢ່າງທີ່ພວກເຂົາບໍ່ເຂົ້າໃຈ ດັ່ງນັ້ນທ່ານໂປໂລຈຶ່ງໄດ້ຂຽນພຣະທັມເທຊະໂລນິກສະບັບຕົ້ນດ້ວຍຈຸດປະສົງດັ່ງຕໍ່ໄປນີ້

1. ທ່ານໂປໂລຂອບພຣະຄຸນພຣະເຈົ້າ ສຳລັບຄວາມເຊື່ອຂອງພີ່ນ້ອງຄຣິສຕຽນໃນເມືອງເທຊະໂລນິກທີ່ໄດ້ເປັນແບບຢ່າງແກ່ຄົນທັງປວງ (1 ທຊ 1:2-10)

2. ທ່ານໂປໂລຕ້ອງການຊູໃຈຜູ້ທີ່ມີຄວາມເຊື່ອໃຫ້ມີຄວາມເຂັ້ມແຂງໃນການຜ່ານພົ້ນການທົດລອງທີ່ເກີດຂຶ້ນໃນເວລານັ້ນຈາກ ຜູ້ທີ່ບໍ່ເຊື່ອ (1 ທຊ 2:14, 3:1-4)

3. ທ່ານໂປໂລຕ້ອງການອະທິບາຍເຖິງຄຳເວົ້າທີ່ຄົນກ່າວຫາທ່ານໃນເຣື່ອງການເຮັດວຽກຮັບໃຊ້ຂອງທ່ານໃນເມືອງເທຊະໂລນິກ (1 ທຊ 2:1-12)

4. ທ່ານໂປໂລໄດ້ຊີ້ໃຫ້ຊາວເທຊະໂລນິກເຫັນເຖິງ ມາດຕະຖານສິລທັມທາງດ້ານເພດສັມພັນແລະການສົມຣົດອັນບໍຣິສຸດ ທ່ານພະຍາຍາມນຳພາໃຫ້ຄຣິສຕຽນ ມີມາດຕະຖານທາງດ້ານເພດສັມພັນທີ່ບໍຣິສຸດ ອັນເປັນທີ່ຊອບພຣະທັຍພຣະເຈົ້າ (1 ທຊ 4:1-8)

5. ທ່ານໂປໂລໄດ້ຕອບບັນຫາຄວາມຍຸ້ງຍາກໃຈສອງຂໍ້ ທີ່ພີ່ນ້ອງໃນເມືອງເທຊະໂລນິກມີຢູ່ ກ່ຽວກັບການສະເດັດກັບມາຂອງພຣະເຢຊູຄຣິສ ຄື

   ກ. ພີ່ນ້ອງທີ່ໄດ້ລ່ວງຫລັບໄປກ່ອນ ເມື່ອພຣະເຢຊູຄຣິສຈະສະເດັດມາເທື່ອທີ່ສອງຈະມີສ່ວນໃນແຜ່ນດິນສວັນຫລືບໍ່? (ຄຳຕອບຢູ່ໃນ 4:13-18)

   ຂ. ພຣະເຢຊູຄຣິສຈະສະເດັດກັບມາອີກເມື່ອໃດ? (ຄຳຕອບຢູ່ໃນ 5:1-11)

6. ທ່ານໂປໂລໄດ້ເຕືອນສະຕິພີ່ນ້ອງຊາວເມືອງເທຊະໂລນິກໃຫ້ຂັບຕາມຄວາມເຊື່ອໂດຍພຣະວິນຍານບໍຣິສຸດ ຊຶ່ງເປັນການຕຽມພ້ອມສຳລັບການສະເດັດກັບມາຂອງພຣະເຢຊູຄຣິສເທື່ອທີ່ສອງ

**ຈົ່ງເອົາສິ່ງທີ່ທ່ານໄດ້ສຶກສາຈາກຂ້າງເທິງເຮັດບົດຝຶກຫັດຂໍ້ສອງເຖິງຂໍ້ສາມ**

## ສາມ. ເນື້ອນັຍຂອງພຣະທັມເທຊະໂລນິກ

### *ກ. ຈົດໝາຍພຣະທັມເທຊະໂລນິກສະບັບທີ່ນຶ່ງ*

ພີ່ນ້ອງຄຣິສຕຽນໃນເມືອງເທຊະໂລນິກມີຄວາມຄິດເຖິງທ່ານໂປໂລ ແລະຕ້ອງການສ້າງມິດຕະພາບກັບທ່ານ ພວກເຂົາຕ້ອງການຄຳສິດສອນ ຄຳຊູໃຈ ມີຫວັງວ່າຈະພົບກັບທ່ານໂປໂລອີກ ແຕ່ກໍເປັນການຍາກທີ່ທ່ານຈະກັບຄືນໄປຍັງເມືອງເທຊະໂລນິກອີກ ເພາະມີສິ່ງທີ່ກີດຂວາງກັ້ນທ່ານບໍ່ໃຫ້ທ່ານກັບຄືນໄປ (1 ທຊ 2:17-18, 3:6) ອາດຈະເປັນເພາະທ່ານຢາຊົນໄດ້ໃຫ້ຂໍ້ສັນຍາໄວ້ຕອນທີ່ທ່ານຖືກຈັບກຸມ ແລະເປັນເຫດໃຫ້ທ່ານໄດ້ຮັບການປ່ອຍຕົວ ຂໍ້ສັນຍາຂອງທ່ານຄືຈະບໍ່ໃຫ້ເກີດການອົລທົນຫວຸ້ນວາຍອີກ ດັ່ງນັ້ນທ່ານໂປໂລຈຶ່ງຕ້ອງຮັກສາຂໍ້ສັນຍາທີ່ທ່ານຢາຊົນໄດ້ສັນຍາໄວ້ເປັນຂໍ້ປະກັນ ເຖິງປານນັ້ນທ່ານໂປໂລກ່າວວ່າ "ພວກເຮົາໄດ້ຖືກພັດພາກຈາກພວກເຈົ້າໄປຈັກໜ່ອຍນຶ່ງ ກໍພາກໄປແຕ່ຮ່າງກາຍເທົ່ານັ້ນ ບໍ່ແມ່ນຈິດໃຈ ເຮົາຈຶ່ງພະຍາຍາມດ້ວຍຄວາມປາຖນາຢ່າງຮ້ອນຮົນ ຊອກຫາໂອກາດເພື່ອເຫັນໜ້າພວກເຈົ້າ ດ້ວຍເຫດນັ້ນພວກເຮົາມີໃຈປະສົງຢາກມາຫາພວກເຈົ້າ" (1 ທຊ 2:17-18)

ດ້ວຍເຫດນີ້ຈົດໝາຍພຣະທັມເທຊະໂລນິກສະບັບຕົ້ນຈຶ່ງເປັນຕົວແທນຂອງທ່ານໂປໂລຢ່າງດີ ການທີ່ທ່ານໄດ້ສົ່ງທ່ານຕີໂມທຽວໄປນັ້ນ ກໍເປັນການຊ່ວຍເຫລືອແລະການສະແດງຄວາມຮັກຂອງທ່ານຊັ້ນນຶ່ງແລ້ວ ແຕ່ທ່ານໂປໂລມີຄວາມຮັກຫລາຍກວ່ານັ້ນອີກ ທີ່ຈະສະແດງເຖິງຄວາມຊົມຊື່ນຍິນດີໃນການຕັ້ງໝັ້ນຄົງຂອງພີ່ນ້ອງຊາວເທຊະໂລນິກ ແລະຕ້ອງການສິດສອນເພີ່ມເຕີມໃຫ້ແກ່ພວກເຂົາອີກຊັ້ນນຶ່ງ ຈົດໝາຍພຣະທັມເທຊະໂລນິກສະບັບຕົ້ນ ຈຶ່ງເປັນຕົວແທນຕ່າງໜ້າທ່ານທີ່ຈະກ່າວກັບພີ່ນ້ອງຄຣິສຕຽນຊາວເມືອງເທຊະໂລນິກແທນທ່ານ ທ່ານໂປໂລໄດ້ລົງຊື່ຂອງທ່ານຊີລາແລະທ່ານຕີໂມທຽວຮ່ວມໃນຈົດໝາຍດ້ວຍ ອາດຈະເປັນຄວາມຈິງທີ່ທ່ານໂປໂລເປັນເຈົ້າຂອງຈົດໝາຍ ແຕ່ທ່ານເປັນຄົນບອກຄຳເວົ້າໃຫ້ທ່ານຊີລາແລະທ່ານຕີໂມທຽວຊ່ວຍຂຽນຕາມຄຳບອກ ຈົດໝາຍພຣະທັມເທຊະໂລນິກສະບັບຕົ້ນແບ່ງອອກໄດ້ເປັນສອງຕອນໃຫຍ່ ໆ ດ້ວຍກັນຄື

**ຕອນທຳອິດ** (1 ທຊ ບົດທີ່ 1-3) ທ່ານໂປໂລສະແດງຄວາມຊົມຊື່ນຍິນດີແລະໂມທະນາຂອບພຣະຄຸນພຣະເຈົ້າ ທີ່ຊາວເທຊະໂລນິກຍັງຈົ່ງຮັກພັກດີຕໍ່ພຣະຄຣິສ ແມ່ນວ່າຈະມີການຂົ່ມເຫັງ ທ່ານໂປໂລບອກພວກພີ່ນ້ອງຄຣິສຕຽນຊາວເທຊະໂລນິກວ່າ ທ່ານຮັກພວກເຂົາແລະຢາກຈະເຫັນພວກເຂົາຫລາຍປານໃດ ໃນການທີ່ມີຄົນກ່າວຕຳໜິຕິຕຽນທ່ານໃນເມືອງເທຊະໂລນິກ ຕາມທີ່ທ່ານຕີໂມທຽວໄດ້ລາຍງານໃຫ້ຊາບນັ້ນ ທ່ານໂປໂລກໍໄດ້ທົບທວນເຖິງວຽກການທັງສິ້ນທີ່ທ່ານໄດ້ເຮັດວ່າເປັນສິ່ງທີ່ມີກຽດ ແລະບໍ່ໄດ້ເຫັນແກ່ຕົວເລີຍ

ລາງເທື່ອເຮົາອາດຈະແປກໃຈທີ່ ທ່ານໂປໂລຖືກກ່າວຫາວ່າ ທ່ານເປັນຄົນມັກຍ້ອງຍໍແລະສແວງຫາກຽດຕິຍົດ (1 ທຊ 2:5-6) ເພາະວ່າໃນສະໄໝຂອງທ່ານມີນັກເທດແລະອາຈານຫລາຍຊະນິດທີ່ເດີນທາງໄປໃນອານາຈັກໂຣມ ສ່ວນຫລາຍເປັນຄົນຫລອກລວງ ຄົນພວກນີ້ໃຊ້ກົນອຸບາຍຕ່າງ ໆ ຫລອກ

ລວງຊາວບ້ານ ຈຶ່ງມີບາງຄົນຄິດວ່າທ່ານໂປໂລເປັນອີກຄົນນຶ່ງທີ່ມີກົນອຸບາຍຫລອກລວງພວກເຂົາ ໂດຍສະເພາະພວກຢິວໄດ້ໂຈມຕີທ່ານໃນເຣື້ອງຄຳສອນຂອງທ່ານ ພວກຢິວບໍ່ຍອມຮັບແລະປະນາມຂ່າວປະເສີດຂອງພຣະເຢຊູຄຣິສ ແຕ່ພີ່ນ້ອງຄຣິສຕຽນໃນເມືອງເທຊະໂລນິກກໍມີຄຳຕອບໃນຂໍ້ກ່າວຫານີ້ ເພາະພວກເຂົາໄດ້ມີຄວາມເຊື່ອ ແລະຄວາມຫວັງແລະຄວາມຮັກທາງພຣະເຢຊູຄຣິສ ໂດຍທ່ານໂປໂລ (1 ທຊ 1:2-10) ພີ່ນ້ອງຄຣິສຕຽນໃນເມືອງເທຊະໂລນິກຮູ້ຂ່າວປະເສີດຂອງພຣະເຢຊູຄຣິສວ່າເປັນເຣື້ອງສັດຈິງ ແລະພວກເຂົາຮູ້ວ່າທ່ານໂປໂລໄດ້ຮັບໃຊ້ດ້ວຍຈິງໃຈ ທ່ານໂປໂລໄດ້ໂມທະນາຂອບພຣະຄຸນພຣະເຈົ້າສຳລັບພວກເຂົາ ແລະອະທິຖານເພື່ອພວກເຂົາໃຫ້ພວກເຂົາຈະເຣີນຂຶ້ນໃນຄວາມເຊື່ອແລະ "ຈະເຣີນຂຶ້ນແລະລົ້ນເຫລືອໄປດ້ວຍຄວາມຮັກຊຶ່ງກັນແລະກັນ ທັງຮັກຄົນທັງປວງ" (1 ທຊ 3:9-13)

**ຕອນທີ່ສອງ** (1 ບົດທີ່ 4-5) ທ່ານໂປໂລຍົກເອົາເຣື້ອງບັນຫາອຸກໃຈແກ່ຄຣິສຈັກນັ້ນຂຶ້ນມາເວົ້າພວກຄຣິສຕຽນກຸ່ມນີ້ຫາເພິ່ງຈະອອກມາຈາກຊີວິດທີ່ນັບຖືສາສນາອື່ນ ພວກເຂົາຍັງຂາດຄວາມຈະແຈ້ງແລະການຝຶກຝົນທາງຄວາມເຊື່ອ ພວກເຂົາບໍ່ມີຜູ້ນຳທີ່ມີຄວາມເຂົ້າໃຈໃນຄວາມເຊື່ອຢ່າງຈະແຈ້ງ ມາເປັນຜູ້ນຳເຂົາ ດັ່ງນັ້ນເປັນເຣື້ອງທັມມະດາທີ່ຈະເກີດບັນຫາວ່າ ຈະມີຊີວິດຄຣິສຕຽນແນວໃນການລໍຖ້າການສະເດັດກັບມາຂອງພຣະເຢຊູຄຣິສ ແລະບັນຫາອື່ນ ໆ ກ່ຽວກັບການສະເດັດມາຂອງພຣະເຢຊູຄຣິສ ບັນຫາເຫລົ່ານີ້ ພວກເຂົາອາດຈະຝາກທ່ານຕີໂມທຽວມາປຶກສາກັບທ່ານໂປໂລ ທ່ານໂປໂລໄດ້ຕອບບັນຫາຂອງພວກເຂົາໃນຕອນທີ່ສອງນີ້

ທ່ານໂປໂລໄດ້ຕັກເຕືອນພວກເຂົາໃນເຣື້ອງມາດຕະຖານໃນການສົມຣົດໃນທາງບໍຣິສຸດແລະມີກຽດ (1 ທຊ 4:1-8) ໃນໝູ່ຄົນທີ່ນັບຖືສາສນາອື່ນໃນເວລານັ້ນເປັນພວກບໍ່ມີສິລທັມຢ່າງທີ່ທ່ານໂປໂປສິດສອນຢູ່ນີ້ ແມ່ນວ່າຈະມີຄົນຈຳນວນຫລວງຫລາຍທີ່ມີຊີວິດຢ່າງບໍຣິສຸດສະອາດ ແຕ່ກໍມີຈຳນວນຫລວງຫລາຍຄືກັນທີ່ຜິດສິລທັມ ເພາະສາສນາອື່ນບາງສາສນາ ເຣື້ອງການສົມຣົດໃນບາງບໍຣິສຸດເຂົາບໍ່ໄດ້ຖື ໃນທາງກົງກັນຂ້າມບາງສາສນາເຫັນດ້ວຍໃຫ້ມີເພດສັມພັນໃນບາງເທດສະການ ພວກຢິວນັ້ນມີຄຳສອນຢູ່ໃນພັນທະສັນຍາເດີມໃນເຣື້ອງຄວາມບໍຣິສຸດທາງສິລທັມຢູ່ແລ້ວ ແລະຄຳສອນຂອງຄຣິສຕຽນກໍສືບທອດຄວາມເຊື່ອມາເປັນມໍຣະດົກ ທ່ານໂປໂລຊູໃຈວ່າ ຄຣິສຕຽນທຸກຄົນຕ້ອງມີມາດຕະຖານການດຳເນີນຊີວິດທີ່ສູງແລະບໍ່ຕ້ອງປ່ອຍຕົວ ແລະທ່ານຍັງໄດ້ຊັກຊວນໃຫ້ມີຄວາມຮັກກັນແລະກັນ ແລະຊື່ສັດໃນວຽກການປະຈຳວັນດ້ວຍ (1 ທຊ 4:9, 12)

ບັນຫາທີ່ພວກເຂົາມີຄວາມສົງສັຍຫລາຍຄືເຣື້ອງການສະເດັດກັບມາຂອງພຣະເຢຊູຄຣິສໃນວັນສິ້ນສຸດຂອງໂລກ ພວກເຂົາມີບັນຫາຫລາຍແນວໃນເທດການນັ້ນ ບັນຫາທີ່ສຳຄັນສຳລັບພວກເຂົາຄື ຄົນທີ່ພວກເຂົາຮັກແພງທີ່ຕາຍໄປຈະມີສ່ວນໃນແຜ່ນດິນສວັນຫລືບໍ່? ເຂົາຈະເຂົ້າສ່ວນໃນສະເດັດກັບມາຂອງພຣະຄຣິສແລະໃນຊັຍຊນະເພື່ອພຣະອົງຫລືບໍ່? ທ່ານໂປໂລຮັບລອງເຂົາວ່າຄົນທີ່ຕາຍແລ້ວຈະກັບເປັນຂຶ້ນມາກ່ອນ ຄຣິສຕຽນທຸກຄົນທັງທີ່ຍັງເປັນຢູ່ແລະທີ່ຕາຍແລ້ວຈະເຂົ້າສ່ວນໃນຄວາມມີຊັຍຂັ້ນສຸດທ້າຍອັນຍິ່ງໃຫຍ່ນັ້ນ (1 ທຊ 4:13-18)

ອີກບັນຫານຶ່ງທີ່ພວກເຂົາຢາກຮູ້ຈັກຄື ພຣະເຢຊູຄຣິສຈະສະເດັດກັບມາເມື່ອໃດ? ທ່ານໂປໂລມີຄວາມຫວັງວ່າຈະມາໄວ ໆ ແລະຄຣິສຕຽນທີ່ກັບໃຈໃໝ່ກໍມີຄວາມຫວັງເຊັ່ນນັ້ນ ແຕ່ທ່ານບອກວ່າ "ວັນຂອງພຣະຜູ້ເປັນເຈົ້າຈະມາເໝືອນຂະໂມຍມາໃນເວລາກາງຄືນ" ບໍ່ມີໃຜຮູ້ຈັກ ແຕ່ພວກເຂົາຕ້ອງຕຽມຕົວໃຫ້ພ້ອມສຳລັບເທດການນັ້ນ ໃນເວລາດຽວກັນບໍ່ຕ້ອງປ່ອຍໃຫ້ວັນເວລາຜ່ານພົ້ນໄປລ້າ ໆ ໃຫ້ດຳເນີນວຽກການຮັບໃຊ້ພຣະເຈົ້າຢ່ານອນຫລັບ "ເຫດວ່າເຈົ້າທັງປວງເປັນບຸດຂອງຄວາມສວ່າງ ແລະເປັນບຸດຂອງກາງວັນ" (1 ທຊ 5:5) ພວກເຂົາຕ້ອງເຝົ້າລະວັງແລະຢ່າເມົາມົວ ຈະຕ້ອງພ້ອມຢູ່ສເມີ ແລະ

ຕັ້ງໝັ້ນຄົງດ້ວຍຄວາມອົດທົນ ເປັນເຣື້ອງທັມມະດາທີ່ຄົນເຫລົ່ານັ້ນຈະມອງດູວັນຂອງອົງພຣະຜູ້ເປັນເຈົ້າດ້ວຍຄວາມຮ້ອນຮົນໃຈ ເພາະເຂົາຖືກຂົ່ມເຫັງຢູ່ ທ່ານໂປໂລບໍ່ຢາກໃຫ້ເຂົາເປັນຫ່ວງອີຫຼີກັນອົນໃຈ ຖ້າພວກເຂົາສັດຈິງຕໍ່ຄວາມເຊື່ອແລະຕໍ່ການຮັບໃຊ້ຂອງຕົນ ເວລາສຸດທ້າຍຍ່ອມນຳຄວາມຫລຸດພົ້ນມາຢ່າງປອດໄພ ແລະນຳຄວາມຊື່ນຊົມຍິນດີທຸກຢ່າງມາໃຫ້ ທ່ານໂປໂລມີສ່ວນໃນຄວາມຫວັງໃຈໃນເຣື້ອງການສະເດັດມາແລະຊັຍຊນະຂອງພຣະຄຣິສ ແຕ່ທ່ານບໍ່ຍອມໃຫ້ເຣື້ອງນີ້ເປັນເຄື່ອງກີດຂວາງທ່ານ ເຮັດໃຫ້ທ່ານບໍ່ຮັບໃຊ້ເພື່ອພຣະຄຣິສຢ່າງເຕັມກຳລັງ ທ່ານເຫັນວ່າສິ່ງຕ່າງ ໆ ໃນການດຳເນີນວຽກຂອງຄຣິສຈັກຍັງຕ້ອງດຳເນີນຕໍ່ໄປ ໂດຍທີ່ຕ່າງຝ່າຍຕ່າງໜຸນໃຈກັນ ແລະຕ່າງຄົນຕ່າງຊ່ວຍກໍ່ກັນຂຶ້ນ (1 ທຊ 5:1-22)

### *ຂ. ຈົດໝາຍພຣະທັມເທຊະໂລນິກສະບັບທີ່ສອງ*

ທ່ານໂປໂລຂຽນຈົດໝາຍສະບັບດຽວຍັງບໍ່ພໍ ທີ່ຈະເຮັດໃຫ້ພີ່ນ້ອງຄຣິສຕຽນໃນເມືອງເທຊະໂລນິກເຂົ້າໃຈບັນຫາ ແລະດຳເນີນຊີວິດຢ່າງສັດຊື່ແລະສະງົບສຸກໄດ້ ພວກເຂົາໄດ້ຮັບຄວາມປະທັບໃຈໃນຄຳຕັກເຕືອນແລະສິດສອນຂອງທ່ານໂປໂລ ໃນເຣື້ອງໃຫ້ເຝົ້າຣະວັງການສະເດັດມາຂອງພຣະຄຣິສ ພວກເຂົາຄິດເຖິງເຣື້ອງນີ້ຫລາຍຈົນເກີນໄປ ຈົນມີຜູ້ທີ່ອ້າງວ່າມີຈົດໝາຍມາຈາກທ່ານໂປໂລວ່າ "ວັນຂອງອົງພຣະຜູ້ເປັນເຈົ້າມາເຖິງແລ້ວ" ເຮັດໃຫ້ບາງຄົນເຊົາເຮັດວຽກ ເຂົາມີຄວາມເຊື່ອຖືໃນຂ່າວນັ້ນຈົນບໍ່ທຳມາຫາລ້ຽງຊີບ ເຂົາຫຽວໄປກໍ່ໃຫ້ເກີດຄວາມຕື່ນເຕັ້ນດ້ວຍຄວາມຮ້ອນໃຈ ແຕ່ເມື່ອເຂົາບໍ່ມີລາຍໄດ້ສຳລັບລ້ຽງຊີບແລ້ວ ກໍກາຍເປັນພາຣະຂອງພີ່ນ້ອງຄຣິສຕຽນດ້ວຍກັນ ແລະເປັນເຫດໃຫ້ຄົນພາຍນອກເຍາະເຍີ້ຍພີ່ນ້ອງຄຣິສຕຽນ

ສິ່ງທີ່ທ່ານໂປໂລເປັນຫ່ວງກໍຄື ມີຜູ້ທີ່ຢູ່ລ້າ ໆ ເປັນພວກທີ່ປ່ອຍໃຫ້ເວລາເສັຍໄປລ້າ ໆ (idler) ພວກນີ້ອ້າງວ່າ ຈົດໝາຍຂອງທ່ານໂປໂລເປັນເຫດໃຫ້ເຮັດເຊັ່ນນັ້ນ ເພາະວັນຂອງອົງພຣະຜູ້ເປັນເຈົ້າຈະມາໃນທັນທີ ສະນັ້ນພວກເຂົາຈຶ່ງບໍ່ເຮັດວຽກລ້ຽງຊີບຕໍ່ໄປ ເຣື້ອງນີ້ເປັນຄວາມເຂົ້າຜິດໄປຈາກຄວາມຈິງທີ່ທ່ານໂປໂລໄດ້ສິດສອນ ທີ່ຈິງທ່ານໂປໂລຕັກເຕືອນພວກເຂົາວ່າ "ຈົ່ງຕັ້ງເປົ້າໝາຍວ່າຈະຢູ່ຢ່າງສະງົບ ເຮັດການກ່ຽວກັບກິດທຸຣະສ່ວນຂອງຕົນ ທັງເຮັດວຽກດ້ວຍມືຂອງຕົນເອງ" (1 ທຊ 4:11) ດັ່ງນັ້ນຈຶ່ງແນ່ນໃຈໄດ້ວ່າ ເຫດທີ່ເກີດຄວາມເຂົ້າໃຈຜິດຂຶ້ນຕ້ອງມີຜູ້ປອມແປງຈົດໝາຍຂອງທ່ານໂປໂລເພື່ອບິດເບືອນຄຳສອນຂອງທ່ານ ໂດຍອ້າງອີງວ່າເປັນຄຳສິດສອນຂອງທ່ານ

ດັ່ງນັ້ນ ຈົດໝາຍພຣະທັມເທຊະໂລນິກສະບັບທີ່ສອງຈຶ່ງເປັນສິ່ງຈຳເປັນ ທີ່ທ່ານໂປໂລຕ້ອງຂຽນອະທິບາຍຄວາມຈິງໃຫ້ພີ່ນ້ອງຄຣິສຕຽນຊາວເມືອງເທຊະໂລນິກເກີດຄວາມເຂົ້າໃຈທີ່ຖືກຕ້ອງ ໃນຕອນທຳອິດ ທ່ານໄດ້ໂມທະນາຂອບພຣະຄຸນພຣະເຈົ້າທີ່ພວກເຂົາ ແມ່ນວ່າພວກເຂົາຈະຖືກຂົ່ມເຫັງເພາະຄວາມເຊື່ອຂອງເຂົາ ແຕ່ພວກເຂົາຍັງສັດຊື່ແລະຈົງຮັກພັກດີຕໍ່ໄປ ທ່ານໂປໂລໄດ້ໃຫ້ຄວາມໝັ້ນໃຈກັບເຂົາວ່າ ພຣະເຈົ້າຈະຊົງປະທານພຣະພອນແກ່ເຂົາທັງຫລາຍ ຊຶ່ງຈະເຮັດໃຫ້ຄວາມລຳບາກທຸກຍາກມີຄ່າສົມຄວນແກ່ການອົດທົນຄອຍຖ້າ (2 ທຊ 1:3-12) ທ່ານໂປໂລໄດ້ທົບທວນຄຳສອນຂອງທ່ານວ່າ ເມື່ອທ່ານຢູ່ກັບພວກເຂົາທ່ານໄດ້ສິດສອນເຂົາວ່າ ເຫດການຂັດແຍ້ງທີ່ຄົນຈະຕໍ່ຕ້ານພຣະເຈົ້າຈະເກີດຂຶ້ນກ່ອນເວລາສຸດທ້າຍທີ່ຈະມາເຖິງ ພວກເຂົາບໍ່ສົມຄວນຮ້ອນໃຈເກີນໄປໃຫ້ຄອຍຖ້າເບິ່ງດູກ່ອນ ກ່ອນທີ່ຈະຄິດວ່າພຣະເຢຊູຄຣິສສະເດັດມາ ເຫດການຂັດແຍ້ງຕ່າງ ໆ ຈະເກີດຂຶ້ນ ແລະເມື່ອເວລາຂອງພຣະເຈົ້າມາເຖິງພຣະອົງຈະມີຊັຍເໜືອສິ່ງເຫລົ່ານັ້ນ (2 ທຊ ບົດທີ 2) ທີ່ມີພວກເຂົາມີຄວາມເຊື່ອທີ່ໝັ້ນຄົງ

ແນວນີ້ຈະຊ່ວຍໃຫ້ເຂົາຍຶດໝັ້ນຢູ່ໂດຍບໍ່ກະວົນກະວາຍ ພຣະເຈົ້າອົງສັດຊື່ຈະຊົງເສີມກຳລັງໃຫ້ແລະຈະຊົງປ້ອງກັນທ່ານໃຫ້ພົ້ນຈາກສິ່ງຊົ່ວຮ້າຍ ຂໍໃຫ້ພີ່ນ້ອງຄຣິສຕຽນມີຈິດໃຈທີ່ມີຄວາມຮັກແລະຄວາມເຊື່ອໝັ້ນຄົງໃນພຣະຄຣິສ ທ່ານໂປໂລຂໍໃຫ້ພີ່ນ້ອງຄຣິສເຕືອນສະຕິກັນເໝືອນຢ່າງພີ່ນ້ອງ ສຳລັບຜູ້ທີ່ຢູ່ລ້າ ໆ ແລະຊອບຢຸ່ງກັບທຸຣະຂອງຜູ້ອື່ນ ໃຫ້ຊອກຫາວຽກການຫາລ້ຽງຊີບສຳລັບຕົວເອງຢ່າງສະງົບ ເໝືອນແບບຢ່າງທີ່ທ່ານໂປໂລໄດ້ເຮັດໄວ້ເມື່ອເວລາທີ່ທ່ານຢູ່ນຳພວກເຂົາ ທ່ານໂປໂລບໍ່ໄດ້ວາງຕົວເປັນພາຣະແກ່ຜູ້ໃດແມ່ນວ່າທ່ານຈະມີສິດທິຮຽກຮ້ອງໄດ້ ທ່ານຫາລ້ຽງຊີບຄຸ້ມຕົວເອງແລະຮັບໃຊ້ພຣະເຈົ້າດ້ວຍຄວາມສັດຊື່ (2 ທຊ ບົດທີ່ 3) ຄຣິສຕຽນສົມຄວນທີ່ຈະດຳເນີນຊີວິດໂດຍຄວາມເຊື່ອດ້ວຍຄວາມສຸກສະງົບໃນການຄອຍຖ້າ ການສະເດັດກັບມາຂອງພຣະເຢຊູຄຣິສ ມີຄຣິສຕຽນຈຳນວນຫລວງຫລາຍຕລອດປວັດສາດທີ່ຕື່ນເຕັ້ນຕໍ່ວັນເວລາທີ່ພຣະເຢຊູຄຣິສຈະສະເດັດກັບມາ ຈົນບໍ່ສາມາດໃຊ້ຊີວິດຄຣິສຕຽນຢ່າງປົກຕິສຸກບໍ່ໄດ້ຮັບໃຊ້ພຣະເຈົ້າຕາມພຣະຣາຊບັນຊາຂອງພຣະເຢຊູຄຣິສ ຊຶ່ງບໍ່ໄດ້ເປັນພະຍານແກ່ຄົນພາຍນອກ ທີ່ຈິງແລ້ວຄຣິສຕຽນສົມຄວນມີຄວາມຫວັງໃຈ ແລະເຊື່ອໝັ້ນໃນການສະເດັດກັບມາຂອງພຣະເຢຊູຄຣິສທຸກວັນເວລາ ບໍ່ມີຜູ້ໃດຈະຮູ້ວັນເວລານັ້ນໄດ້ນອກຈາກພຣະເຈົ້າ ວັນຂອງອົງພຣະຜູ້ເປັນເຈົ້າເປັນວັນຂອງພຣະອົງ ແຕ່ໃນເວລາດຽວກັນທີ່ຄຣິສຕຽນຄອຍຖ້າພຣະຄຣິສ ພຣະອົງມີພຣະຣາຊກິຈໃຫ້ເຮົາປ່າວປະກາດຂ່າວປະເສີດຂອງພຣະອົງແລະນຳຄວາມຣອດພົ້ນສູ່ມວລມະນຸດ ເວລານີ້ເປັນໂອກາດແຫ່ງຄວາມຣອດພົ້ນ ທີ່ພຣະເຈົ້າຕ້ອງອົດກັ້ນພຣະທັຍສຳລັບການພິພາກສາເພື່ອຄົນທີ່ຜິດບາບ ຈະໄດ້ຫັນຈາກຄວາມຜິດບາບມາຫາພຣະອົງສົມຄວນທີ່ຄຣິສຕຽນຄວນມີຄວາມຕັ້ງໃຈຢ່າງໜັກແໜ້ນໃນພຣະຣາຊກິຈນີ້ ໃນເວລາດຽວກັນນັ້ນຄຣິສຕຽນສົມຄວນຕ້ອງດຳເນີນຊີວິດທີ່ດີ ເຫດວ່າຄົນພາຍນອກຄອຍເບິ່ງດູຄຳພະຍານຈາກຊີວິດຂອງເຂົາການລ້ຽງຊີບແລະມີຊີວິດທີ່ມີສັນຕິສຸກເປັນພາກສ່ວນນຶ່ງຂອງຊີວິດປະຈຳວັນທີ່ຄຣິສຕຽນສົມຄວນມີໃນຣະຫວ່າງການເຝົ້າຄອຍການສະເດັດກັບມາຂອງພຣະເຢຊູຄຣິສ ທ່ານໂປໂລສະທ້ອນພາບໃຫ້ເຮົາລະນຶກເຖິງຄຳສິດສອນຂອງພຣະເຢຊູຄຣິສທີ່ກ່າວວ່າ "ອານາຈັກຂອງພຣະເຈົ້າຢູ່ຖ້າມກາງທ່ານທັງຫລາຍ" (ລກ 17:21) ແທນທີ່ເຮົາເບິ່ງວ່າພຣະເຢຊູຄຣິສສະເດັດກັບມາ "ຢູ່ທີ່ນີ້ຫລືຢູ່ທີ່ນັ້ນ" ແຕ່ພຣະອົງສອນໃຫ້ສາວົກຂອງພຣະອົງຕັ້ງໝັ້ນຄົງພາຍໃນຕົວເອງ ຢູ່ພາຍໃຕ້ການປົກຄອງຂອງພຣະອົງ ດ້ວຍຄວາມໝັ້ນຄົງໜັກແໜ້ນແທນທີ່ຈະແລ່ນໄປຊອກຫາພຣະອົງໃນທີ່ຕ່າງ ໆ ທີ່ຈະເຮັດໃຫ້ເກີດອັນຕະລາຍ "ດ້ວຍວ່າຈະມີພຣະຄຣິສທຽມແລະໝໍທຳນວຍຂີ້ໂລບຫລາຍເກີດຂຶ້ນ ສະແດງໝາຍສຳຄັນອັນໃຫຍ່ແລະການອັສຈັນຕ່າງ ໆ ເພື່ອວ່າຖ້າເປັນໄດ້ ຈະຫລອກລວງຜູ້ທີ່ພຣະເຈົ້າຊົງເລືອກໄວ້ໃຫ້ຫລົງ" (ມທ 24:24) ທ່ານໂປໂລກ່າວໃນພຣະທັມໂຣມວ່າ "ຣາຊອານາຈັກຂອງພຣະເຈົ້າບໍ່ແມ່ນໝາຍເຖິງການກິນແລະດື່ມ ແຕ່ໝາຍເຖິງຄວາມຊອບທັມແລະສັນຕິສຸກ ກັບຄວາມຊົມຊື່ນຍິນດີທີ່ມາຈາກພຣະວິນຍານບໍຣິສຸດ ຜູ້ທີ່ບົວລະບັດພຣະຄຣິສໃນການເຫລົ່ານັ້ນ ກໍເປັນທີ່ພໍພຣະທັຍພຣະເຈົ້າແລະເປັນທີ່ຊອບໃຈມະນຸດດ້ວຍ ເຫດດັ່ງນີ້ພວກເຮົາຈຶ່ງສແວງຫາສິ່ງທັງຫລາຍທີ່ເຮັດໃຫ້ເກີດຄວາມສະງົບສຸກ ແລະເຮັດໃຫ້ເກີດຄວາມຈະເຣີນແກ່ກັນແລະກັນ" (ຣມ 14:19-20) ຄຳເວົ້າຂອງທ່ານໂປໂລຕອນນີ້ຊີ້ໃຫ້ເຫັນຈະແຈ້ງເຖິງ ຄຣິສຕຽນທີ່ມີຊີວິດຢູ່ພາຍໃຕ້ການປົກຄອງຂອງພຣະຄຣິສຫລືອານາຈັກຂອງພຣະເຈົ້າ ດຳເນີນຊີວິດດ້ວຍສັນຕິສຸກໃນພຣະເຈົ້າ ແລະຍັງໃຫ້ເຮົາໄດ້ເຫັນເຖິງຮູບພາບຂອງຄຣິສຈັກທີ່ປະກອບດ້ວຍສະມາຊິກທີ່ເຕັມໄປດ້ວຍຄວາມຊົມຊື່ນຍິນດີພາຍໃຕ້ການປົກຄອງຂອງພຣະເຢຊູຄຣິສຜູ້ເປັນປະມຸກ ຣາຊອານາຈັກຂອງພຣະເຈົ້າໄດ້ຕັ້ງຂຶ້ນແລ້ວໃນໂລກໂດຍພຣະຄຣິສ ແລະພັນທະນາຕໍ່ໄປຕາມນ້ຳພຣະທັຍແລະແຜນການຂອງພຣະເຈົ້າ ພາກສ່ວນສະຫງ່າຣາສີຂອງການສະເດັດກັບມາຂອງພຣະຄຣິສເປັນສ່ວນທີ່ມາຈາກເບື້ອງເທິງ ເປັນສິ່ງທີ່ຊອກຫາໃນໂລກບໍ່ໄດ້ ແຕ່ຜູ້ທີ່ຈະຖືກຮັບຂຶ້ນໄປ ກໍເປັນຜູ້ທີ່ໄດ້ຖືກສ້າງຂຶ້ນໃໝ່ຈາກມະນຸດເດີມດິນທີ່ຕົກໃນບາບ ຜ່ານພົ້ນການຊຳຣະ

ດ້ວຍພຣະໂລຫິດຂອງພຣະເຢຊູຄຣິສ ເຂົ້າສູ່ການປົກຄອງຂອງພຣະເຢຊູຄຣິສແລະການນຳພາຂອງພຣະວິນຍານບໍຣິສຸດ ແລະເປັນນິຊີວິດທີ່ຖືກສ້າງຂຶ້ນໃຫມ່ທ່າມກາງມະນຸດສະໂລກ ໃຫ້ມີຄຳພະຍານທີ່ສະທ້ອນເຖິງສະງ່າຣາສີຂອງພຣະຄຣິສ ເປັນການດຳເນີນຊີວິດຄຣິສຕຽນດ້ວຍຄວາມຊົບຊື່ນຍິນດີໃນການຮັບໃຊ້ຮ່ວມກັນໂດຍມີຈິດໃຈທີ່ພ້ອມຈະໃຫ້ພຣະອົງຮັບຂຶ້ນໄປສູ່ເບື້ອງເທິງ ໃນເວລາຂອງພຣະເຈົ້າທີ່ຈະມາເຖິງ

ເພື່ອໃຫ້ພີ່ນ້ອງຄຣິສຕຽນຊາວເມືອງເທຊະໂລນິກເກີດໝັ້ນໃຈວ່າເປັນຈົດໝາຍຂອງທ່ານ ທ່ານໂປໂລຈຶ່ງຂຽນດ້ວຍລາຍມືຂອງທ່ານເອງເປັນຄຳສະແດງຄວາມເຄົາຣົບ ແລະຄຳອະທິຖານເພື່ອຜູ້ອ່ານທັງຫລາຍ (2 ທຊ 3:17-18) ແທນລາຍເຊັນຂອງທ່ານ ເພື່ອພີ່ນ້ອງຈະໄດ້ຮູ້ຈະແຈ້ງວ່າເປັນຄຳເວົ້າຂອງທ່ານແທ້ ໆ ບໍ່ແມ່ນຈົດໝາຍປອມ

### *ຄ. ຈົ່ງດຳເນີນຊີວິດຄຣິສຕຽນດ້ວຍຄວາມຫວັງໃຈ*

ໃນພຣະທັມສອງສະບັບທີ່ທ່ານໂປໂລຂຽນໄປເຖິງເມືອງເທຊະໂລນິກມີຄຳສອນສຳລັບຄຣິສຕຽນໃນການດຳເນີນຊີວິດດ້ວຍຄວາມຫວັງໃຈໃນພຣະຄຣິສຢູ່ສີ່ປະການ

**ປະການທຳອິດ** ເປັນສິ່ງສຳຄັນທີ່ຄຣິສຕຽນຕ້ອງດຳເນີນຊີວິດດ້ວຍຄວາມໄວ້ວາງໃຈໃນພຣະເຈົ້າເມື່ອເຮົາເຂົ້າສະນິດຢູ່ໃນພຣະອົງ ຄວາມເຊື່ອຂອງເຮົາກໍມີຫວັງ ເພາະຄວາມຫວັງຂອງເຮົາບໍ່ໄດ້ຢູ່ກັບສິ່ງທີ່ປາກົດພາຍນອກ ທັງທ່ານໂປໂລກັບພີ່ນ້ອງຄຣິສຕຽນຊາວເທຊະໂລນິກຕ່າງກໍມີປະສົບການໃນການຜະເຊີນກັບການຂົ່ມເຫັງທີ່ຫລີກພົ້ນບໍ່ໄດ້ ແຕ່ເຂົາຈະວາງໃຈໃນຄວາມສາມາດຂອງຕົນເອງໃນການແກ້ໄຂບັນຫາບໍ່ໄດ້ ເພາະເຂົາບໍ່ມີຄວາມສາມາດພຽງພໍທີ່ຈະຈັດການກັບໂລກນີ້ ກັບຄວາມຕາຍ ແລະກັບອານາຄົດທີ່ຈະມາໃນວັນສຸດທ້າຍໄດ້ ພື້ນຖານແຫ່ງຄວາມໄວ້ວາງໃຈຂອງເຂົາຄືພຣະເຈົ້າ ພຣະອົງມີພຣະທັຍທີ່ຕັ້ງໃຈດີແລະຣິດທານຸພາບ ພຣະອົງຊົງສະຖິດກັບຜູ້ເຊື່ອແລະຊ່ວຍເຫລືອເຂົາໃຫ້ຜ່ານພົ້ນການທົດລອງທຸກຢ່າງ ແລະນຳເຂົາສູ່ຊັຍຊະນະໃນບັ້ນປາຍແລະມີສັນຕິພາບໃນອານາຈັກຂອງພຣະອົງ (1 ທຊ 5:, 23-24, 2 ທຊ 1:11-12, 2:16-17, 3:3) ພຣະເຈົ້າບໍ່ໄດ້ຊົງຫລີກເວັ້ນພວກຄຣິສຕຽນວ່າ ເຂົາບໍ່ຕ້ອງຕໍ່ສູ້ຊີວິດໃນໂລກນີ້ອີກຕໍ່ໄປ ແຕ່ທຸກຄົນທີ່ເຊື່ອວາງໃຈໃນພຣະອົງ ພຣະອົງຈະຊົງປະທານກຳລັງໃຫ້ ເພື່ອເຂົາຈະທົນເອົາໄດ້ ຊົງນຳພາແລະຊູໃຈໃຫ້ເລືອກສິ່ງທີ່ຖືກຕ້ອງ ແລະຊົງສັນຍາວ່າຈະຊົງຊ່ວຍໃນທີ່ສຸດໃຫ້ພົ້ນຈາກຄວາມຊົ່ວແລະການທົດລອງ

**ປະການທີ່ສອງ** ຂ່າວປະເສີດທີ່ຄຣິສຕຽນປ່າວປະກາດເປັນຂ່າວປະເສີດແຫ່ງຄວາມຫວັງໃຈເພາະວ່າພຣະເຈົ້າຊົງສັດຊື່ ຄຣິສຕຽນຈຶ່ງມີຄວາມປອດພັຍໃນຄວາມຣອດພົ້ນ ຖ້າເຂົາໄວ້ວາງໃຈໃນພຣະບິດາຂອງເຂົາ ເຂົາຕ້ອງຜະເຊີນກັບອານາຄົດທີ່ບໍ່ແນ່ນນອນໄດ້ ໂດຍບໍ່ທໍ້ຖອຍແລະສົງສັຍ ແຕ່ດ້ວຍຄວາມເຊື່ອທີ່ເຕັມເປີ່ຍມໝັ້ນກແໜ່ນວ່າ ຊີວິດຂອງເຂົາຢູ່ໃນພຣະຫັດອັນເລີດປະເສີດສຸດຂອງພຣະເຈົ້າເຂົາມີຄວາມຕື່ນເຕັ້ນທີ່ຈະເຫັນແຜ່ນດິນຂອງພຣະເຈົ້າມາຕັ້ງຢູ່ຄົບບໍຣິບູນ ແຕ່ໃນເວລາດຽວກັນເຂົາຈະອົດທົນເຝົ້າຄອຍຖ້າ ແລະບົວລະບັດຄຣິສຈັກແລະໃຫ້ຄວາມຊ່ວຍເຫລືອເພື່ອນມະນຸດໃຫ້ມາເຖິງຄວາມຣອດພົ້ນ ໂດຍຄວາມເຊື່ອໝັ້ນວ່າພຣະເຢຊູຄຣິສຈະມີຊັຍຊະນະຢ່າງແນ່ນນອນໃນການສະເດັດກັບມາຄັ້ງທີ່ສອງ (1 ທຊ 1:3-4, 4:13-14, 5:8-11)

**ປະການທີ່ສາມ** ຄວາມໄວ້ວາງໃຈທີ່ມີຄວາມເຊື່ອໝັ້ນໃນພຣະເຈົ້າ ເປັນຜົນໃຫ້ເກີດ "**ຄວາມໝັ້ນຄົງ**" (steadfastness) ນີ້ແຫລະເປັນຄວາມສຳເຣັດອັນໃຫຍ່ຫລວງ ບໍ່ເປັນການຍາກທີ່ຈະ

ກ້າຫານແລະເຮັດຢ່າງຖືກຕ້ອງໃນເວລາອັນສັ້ນ ແຕ່ທີ່ຈະຕ້ອງມີຄວາມເຊື່ອຢ່າງຄົງເສັ້ນຄົງວາແລະຮັບໃຊ້ພຣະຄຣິສຕລອດໄປໃນວັນເວລາເລົ່າໄດ້ ທັງນີ້ຕ້ອງມີແຫລ່ງພລັງອຳນາດອັນໃຫຍ່ຫລວງ ທີ່ຈະຊ່ວຍເຮັດໃຫ້ເຖິງຄວາມສຳເຣັດໄດ້ ກຳລັງນີ້ບໍ່ແມ່ນຢູ່ໃນມະນຸດ ແຕ່ເປັນຂອງພຣະຣາຊທານຈາກພຣະເຈົ້າ ແລະໂດຍຣິດເດດຂອງພຣະເຈົ້າມະນຸດຈຶ່ງຈະຕັ້ງໝັ້ນຄົງຢູ່ໄດ້ ແມ່ນວ່າຈະມີການຂົ່ມເຫັງ ຄົນຂອງພຣະເຈົ້າກໍຍຶດໝັ້ນຢູ່ໃນຄວາມເຊື່ອໄດ້ ແມ່ນວ່າຈະຖືກເຍາະເຍີ້ຍ ເຂົາກໍມີຄວາມຊົມຊື່ນຍິນດີໃນຄວາມເຊື່ອ ແລະຮັບຜິດຊອບໃນການຮັບໃຊ້ທີ່ເຂົາມີຢູ່ຮ່ວມກັບພີ່ນ້ອງໃນຄຣິສຈັກ (2 ທຊ 1:3-4, 3:5)

**ປະການທີ່ສີ່** ການເຮັດວຽກລ້ຽງຕົນເອງ ເປັນສິ່ງທີ່ທ່ານໂປໂລໄດ້ເນັ້ນໜັກຢ່າງຈະແຈ້ງໃນຈົດໝາຍທັງສອງສະບັບ ໂດຍສະເພາະໃນຈົດໝາຍສະບັບທີ່ສອງຂອງທ່ານ ເມື່ອເຮົາກ່າວເຖິງວັນຂອງອົງພຣະຜູ້ເປັນເຈົ້າກໍເປັນຄວາມຊື່ນຊົມຍິນດີໃນຄວາມຍິ່ງໃຫຍ່ທີ່ພຣະເຈົ້າຈະພຣະຣາຊທານໃຫ້ ເຮັດໃຫ້ເຮົາມີຄວາມຫວັງໃຈ ແລະຄຣິສຕຽນມີຄວາມເຊື່ອໝັ້ນໃນຊັຍຊນະໃນເທື່ອສຸດທ້າຍທີ່ພຣະເຈົ້າຈະນຳມາ ແຕ່ພຣະອົງບໍ່ໄດ້ອະນຸຍາດໃຫ້ຄຣິສຕຽນຮູ້ວ່າວັນນັ້ນ ວ່າຈະມາເມື່ອໃດ ດັ່ງນັ້ນໃນເວລາທີ່ກຳລັງຄອຍຖ້າພຣະອົງຢູ່ ຜູ້ລໍຄອຍຈະຕ້ອງຮັບຜິດຊອບກັບສັງຄົມທີ່ເຂົາດຳເນີນຊີວິດຢູ່ ເຂົາຕ້ອງບໍ່ຄິດເອົາຕົວຣອດເທົ່ານັ້ນ ແຕ່ເຂົາຕ້ອງຈັດຫາລ້ຽງຄອບຄົວຂອງຕົວ ແລະໃຫ້ຄວາມຊ່ວຍເຫລືອຜູ້ອື່ນທີ່ກັນດານແລະຂັດສົນ (1 ທຊ 4:9-11, 2 ທຊ 3:6-13)

**ຈົ່ງເອົາສິ່ງທີ່ທ່ານໄດ້ສຶກສາຈາກຂ້າງເທິງເຮັດບົດຝຶກຫັດຂໍ້ສີ່ & ຂໍ້ຫົກ**

ສະຫງວນລິກຂະສິດ Copyright©Thira Siengsukon
In compliance with copyright restrictions, no portion of these materials may be reproduced in any form without written permission of the writer.

ສົ່ງ ຈຣ໌ NOV 25, 97

ອ່ານ 1 ຕາ ✓
2 ຕາ —
3 ຕາ —

# ບົດທີ 10

## ຈົດໝາຍຂອງທ່ານໂປໂລ ເຖິງທ່ານຕີໂມທຽວແລະທ່ານຕີໂຕ

(ພຣະທັມຕີໂມທຽວສະບັບທີ່ນຶ່ງ & ສອງ ແລະພຣະທັມຕີໂຕ)

### ຂໍ້ໃຂຈົດໝາຍພຣະທັມຕີໂມທຽວ

*ເຮົາຫວັງໃຈວ່າໃນມໍ່ ໆ ນີ້ເຮົາຈະໄດ້ມາຫາເຈົ້າທັງຫລາຍ ເຮົາຈຶ່ງຂຽນຂໍ້ຄວາມນີ້ມາເຖິງພວກເຈົ້າ ກໍເພື່ອວ່າ ຖ້າເຮົາຫາກຍັງຊ້າຢູ່ ພວກເຈົ້າກໍຈະໄດ້ຮູ້ວ່າຄວນຈະປະພຶດຢ່າງໃດໃນຄອບຄົວຂອງພຣະເຈົ້າ ຄືຄຣິສຈັກຂອງພຣະເຈົ້າຜູ້ຊົງພຣະຊົນຢູ່ ທີ່ເປັນເສົາ ແລະຮາກແຫ່ງຄວາມຈິງ (1 ຕທ 3:14-15)*

*ຈົ່ງເຮັດຕາມແບບຢ່າງແຫ່ງຄຳສອນອັນມີຫລັກ ທີ່ເຈົ້າໄດ້ຍິນຈາກເຮົາດ້ວຍຄວາມເຊື່ອ ແລະຄວາມຮັກທີ່ມີຢູ່ໃນພຣະເຢຊູຄຣິສ ຈົ່ງຮັກສາສິ່ງອັນດີທີ່ໄດ້ຊົງມອບໄວ້ກັບເຈົ້າໂດຍພຣະວິນຍານບໍຣິສຸດ ຊຶ່ງຊົງສະຖິດພາຍໃນເຮົາທັງຫລາຍ (2 ຕີໂມທຽວ 1:13-14)*

*ເພາະວ່າພຣະຄຸນຂອງພຣະເຈົ້າໄດ້ສ່ອງມາປາກົດແລ້ວ ເພື່ອນຳຄວາມພົ້ນມາໃຫ້ຄົນທັງປວງ ແລະສອນເຮົາທັງຫລາຍໃຫ້ລະຖິ້ມຄວາມຊົ່ວອະທັມແລະກິເລດຕັນຫາຝ່າຍໂລກ ແລະໃຫ້ດຳເນີນຊີວິດຢູ່ໃນສມັຍນີ້ ຢ່າງມີສະຕິອັນດີຮອບຄອບດ້ວຍຍຸດຕິທັມແລະນັບຖືພຣະເຈົ້າຢ່າງຖືກຕ້ອງ ໃຫ້ຄອງຖ້າຄວາມສຸກທີ່ສົມກັບຄວາມຫວັງຂອງເຮົາ ຄື ການສ່ອງມາປາກົດອັນຮຸ່ງເຮືອງຂອງພຣະເຈົ້າອັນໃຫຍ່ ຄືພຣະເຢຊູຄຣິສຜູ້ຊົງໂຜດໃຫ້ພົ້ນຂອງເຮົາທັງຫລາຍ ຜູ້ຊົງສລະພຣະອົງເອງແທນເຮົາທັງຫລາຍ ເພື່ອຊົງໄຖ່ພວກເຮົາໃຫ້ພົ້ນຈາກການຊົ່ວອະທັມທັງໝົດ ແລະຊົງຊຳຮະພວກເຮົາໃຫ້ສະອາດ ເພື່ອໃຫ້ເປັນພົລເມືອງຈຳພວກນຶ່ງຂອງພຣະອົງ ຄືເປັນຄົນມີໃຈຮ້ອນຮົນສຳລັບເຮັດການດີ (ຕຕ 2:11-14)*

ເຫງົ່ວຊານ

ຈົດໝາຍຝາກຂອງທ່ານໂປໂລມີສີ່ສະບັບ ເປັນຈົດໝາຍຂຽນເຖິງຜູ້ຮັບທີ່ເປັນບຸກຄົນ ຄື ພຣະທັມຕີໂມທຽວສະບັບທີ່ນຶ່ງແລະສອງ ພຣະທັມຕີໂຕ ແລະພຣະທັມຟີເລໂມນ ໃນຈົດໝາຍສີ່ສະບັບນີ້ມີສາມສະບັບທີ່ເອີ້ນວ່າ **"ຈົດໝາຍຝາກສິດຍາພິບາລ"** ຄືພຣະທັມຕີໂມທຽວສະບັບທີ່ນຶ່ງແລະສອງ ແລະພຣະທັມຕີໂຕເພາະເປັນຈົດໝາຍຂຽນເຖິງການອະພິບາລສິດຫລືລ້ຽງລູກແກະ ເປັນຈົດໝາຍທີ່ສອນໃຫ້ຮູ້ຈັກລະບຽບວິນັຍຂອງຄຣິສຈັກ ແລະການເບິ່ງແຍງຮັກສາລູກແກະຂອງພຣະເຈົ້າ ໃຫ້ພົ້ນຈາກຫລັກຄຳສອນຜິດທີ່ຊາລືໃນສມັຍນັ້ນ ແລະຍັງໄດ້ກ່າວເຖິງໜ້າທີ່ການງານຕ່າງ ໆ ຂອງເຈົ້າໜ້າທີ່ຄຣິສຈັກດ້ວຍ

### ນຶ່ງ. ພື້ນເບື້ອງຫລັງຂອງພຣະທັມ

ສະພາບເຫດການເບື້ອງຫລັງຂອງພຣະທັມຕີໂມທຽວສະບັບທີ່ນຶ່ງແລະສອງ ແລະພຣະທັມຕິໂຕເປັນເຫດການໃນຍະຣະເວລາຊີວິດຕອນທ້າຍຂອງທ່ານໂປໂລ ຊຶ່ງທ່ານລູກາບໍ່ໄດ້ກ່າວໄວ້ໃນພຣະທັມກິຈການ ເພາະທ່ານລູກາບໍ່ໄດ້ຂຽນພຣະທັມກິຈການດ້ວຍຈຸດປະສົງໃຫ້ເປັນຊີວະປວັດຂອງທ່ານໂປໂລ ແຕ່ທ່ານລູກາໄດ້ຂຽນພຣະທັມກິຈການຂຶ້ນ ເພື່ອກ່າວເຖິງເຣື້ອງການເລີ້ມຕົ້ນແລະການແຜ່ຂຍາຍຂອງຄຣິສຈັກ ຊຶ່ງໄດ້ລວມພາກສ່ວນຊີວິດຕອນຕົ້ນຂອງທ່ານໂປໂລໄວ້ ການຮຽນຮູ້ຈັກປວັດຊີວິດຕອນທ້າຍຂອງທ່ານໂປໂລ ຈຶ່ງຈໍາເປັນຕ້ອງຮວບຮວມເອົາຈາກການອ້າງອີງຂອງພຣະຄັມພີຕອນຕ່າງ ໆ ມາຮຽງຕາມລໍາດັບເຫດການໄດ້ດັ່ງນີ້

ເມື່ອເຮົາອ່ານ ພຣະທັມກິຈການ 25:14-27, 26:30-32 ຈະເຫັນໄດ້ວ່າຂໍ້ກ່າວຫາທ່ານໂປໂລໃຫ້ມີໂທດເຖິງຕາຍນັ້ນ ບໍ່ມີນໍ້າຫນັກ ເມື່ອອ່ານພຣະທັມຟີລິບປອຍ 2:23-26 ແລະພຣະທັມຟີເລໂມນ 1:22 ເບິ່ງຄືກັບວ່າທ່ານໂປໂລມີຄວາມຫວັງວ່າຈະໄດ້ຮັບການປ່ອຍຕົວຈາກຄຸກທີ່ກຸງໂຣມໃນເວລາບໍ່ດົນ ນັກສຶກສາພຣະຄັມພີສ່ວນຫລາຍມີຄວາມເຊື່ອວ່າ ທ່ານໂປໂລໄດ້ຮັບການປ່ອຍຕົວຈາກຄຸກທີ່ກຸງໂຣມໃນພາຍຫລັງ ເປັນເຫດໃຫ້ທ່ານໄດ້ຮັບໃຊ້ພຣະເຈົ້າອີກຣະຍະເວລານຶ່ງໃນປີ ຄ.ສ.63-65 ແລະຈົດຫມາຍພຣະທັມຕີໂມທຽວສະບັບນຶ່ງ ແລະຈົດຫມາຍພຣະທັມຕິໂຕໄດ້ຂຽນຂຶ້ນໃນຣະຍະເວລານີ້ ຕາມການບັນທຶກຂອງພຣະທັມ 1 ຕີໂມທຽວ 1:3 ບອກເຮົາວ່າ ທ່ານຕີໂມທຽວໄດ້ຮັບໃຊ້ພຣະເຈົ້າຢູ່ໃນເມືອງເອເຟໂຊ ແລະທ່ານໂປໂລໄດ້ຮັບໃຊ້ຢູ່ໃນແຖບແຂວງມາເກໂດເນັຽ (Macedonia) ໃນເວລາທີ່ຂຽນພຣະທັມຕີໂມທຽວສະບັບຕົ້ນ ທ່ານໂປໂລຂຽນບອກເຖິງຄວາມຕັ້ງໃຈຂອງທ່ານວ່າ ໃນມໍ່ ໆ ຈະມາທ່ານຕີໂມທຽວໃນເມືອງເອເຟໂຊ (1 ຕທ 1:3, 3:14-15,4:13) ແລະຕາມການບັນທຶກຂອງພຣະທັມຕິໂຕ 1:5 ບອກເຮົາວ່າ ທ່ານຕິໂຕຮັບໃຊ້ພຣະເຈົ້າຢູ່ທີ່ເກາະກະເຣເຕ ແລະທ່ານໂປໂລຂຽນຈົດຫມາຍພຣະທັມຕິໂຕຈາກເມືອງນີໂກໂປລີ (Nicopolis) ຕັ້ງຢູ່ທາງດ້ານທິດຕາເວັນຕົກຂອງປະເທດກຣີກ (ຕຕ 3:12) ທ່ານໂປໂລໄດ້ຖືກຈັບກຸມຂັງຄຸກໃນກຸງໂຣມອີກເທື່ອນຶ່ງ ມີໂທດປະຫານຊີວິດ ແລະພຣະທັມຕີໂມທຽວສະບັບທີສອງ 1:16-17 ບອກແກ່ເຮົາວ່າ ທ່ານໂປໂລຂຽນພຣະທັມສະບັບນີ້ຈາກຄຸກໃນກຸງໂຣມກ່ອນຖືກປະຫານຊີວິດ (2 ຕທ 4:6-8, 16-18)

ຕີໂມທຽວເປັນຜູ້ນຶ່ງທີ່ທ່ານໂປໂລໃຫ້ຄວາມຮັກແລະຖືວ່າເປັນຜູ້ຮ່ວມງານທີ່ສັດຊື່ ທ່ານໂປໂລໄດ້ກ່າວເຖິງຕີໂມທຽວໃນຈົດຫມາຍຂອງທ່ານ 6 ສະບັບດ້ວຍກັນວ່າມີສ່ວນຮ່ວມໃນການຂຽນ ການທີ່ທ່ານໂປໂລກ່າວເຊັ່ນນັ້ນ ເພື່ອສະແດງວ່າທ່ານໂປໂລມີຄວາມໄວ້ວາງໃຈໃນທ່ານຕີໂມທຽວ ແລະເພື່ອໃຫ້ຜູ້ອ່ານຮູ້ຈັກວ່າທ່ານທັງສອງຍຶດຫມັ້ນໃນທຽວການຮ່ວມກັນ ພື້ນເບື້ອງຫລັງຂອງທ່ານຕີໂມທຽວ ເມື່ອເດີມນັ້ນພໍ່ຂອງທ່ານເປັນຊາວກຣີກ ແມ່ເປັນຊາວຢິວ (ກຈ 16:1) ແມ່ແລະແມ່ເຖົ້າເປັນຄຣິສຕຽນທີ່ແຂງແຮງໄດ້ສິດສອນພຣະຄັມພີໃຫ້ກັບທ່ານຕີໂມທຽວ (2 ຕທ 1:5, 3:15) ທ່ານໂປໂລໄດ້ພົບກັບທ່ານຕີໂມທຽວເປັນເທື່ອທໍາອິດທີ່ເມືອງລີຊະທາ ທ່ານໂປໂລໄດ້ເອົາຕີໂມທຽວໄປນໍາຫລັງຈາກນັ້ນ (ກຈ 16:1-3) ທ່ານຕີໂມທຽວເປັນຜູ້ທີ່ສັດຊື່ ແລະທ່ານໂປໂລກໍໃຊ້ທ່ານຕີໂມທຽວເດີນທາງໄປຍັງຄຣິສຈັກທີ່ສໍາຄັນເຊັ່ນ ຄຣິສຈັກທີ່ເມືອງເທຊະໂລນິກ ແລະທີ່ເມືອງໂກຣິນໂທ (1 ທຊ 3:1-2, 1 ກທ 4:17) ທ່ານຕີໂມທຽວພ້ອມທີ່ຈະຕິດຄຸກຮ່ວມກັບທ່ານໂປໂລເພື່ອຈະໄດ້ຢູ່ໃກ້ຄອຍຊ່ວຍເຫລືອ (ຟປ 1:1, ກຊ 1:1, ຟມ 1) ທ່ານໂປໂລກ່າວເຖິງທ່ານຕີໂມທຽວວ່າ "ບໍ່ມີຜູ້ໃດທີ່ມີນໍ້າໃຈເຫມືອນຕີໂມທຽວ ຜູ້ເປັນຄົນເອົາໃຈໃສ່ໃນຄວາມສຸກທຸກຂອງພວກເຈົ້າ(ຄຣິສຈັກຟີລິບປອຍ)ໂດຍແທ້... ແຕ່ເຈົ້າທັງຫລາຍກໍຮູ້ເຖິງ

ຄຸນຄ່າຂອງຕີໂມທຽວດີແລ້ວວ່າ ເພິ່ນໄດ້ຮັບໃຊ້ຮ່ວມກັບເຮົາໃນການປະຕິບັດຂ່າວປະເສີດເໝືອນລູກຮັບໃຊ້ພໍ່" (ຟປ 2:19-22) ທ່ານໂປໂລໄດ້ໃຫ້ທ່ານຕີໂມທຽວໄປຊ່ວຍເຫລືອຄຣິສຈັກໃນເມືອງເອເຟໂຊ (1 ຕທ 1:3)

ທ່ານຕີໂຕເປັນຄົນຕ່າງຊາດທີ່ເປັນຄຣິສຕຽນ ຊື່ຂອງທ່ານບໍ່ເຄີຍມີປາກົດໃນພຣະທັມກິຈການ ເມື່ອທ່ານໂປໂລເອີ້ນທ່ານຕີໂຕວ່າ "ຜູ້ເປັນລູກແທ້ຂອງເຮົາໃນຄວາມເຊື່ອອັນດຽວກັນ" (ຕຕ 1:4) ອາດຈະເປັນເພາະທ່ານໂປໂລໄດ້ໃຫ້ເຂົາກັບໃຈ ທ່ານຕີໂຕໄດ້ໄປກັບທ່ານໂປໂລເພື່ອເຂົ້າປະຊຸມທີ່ກຸງເຢຣູຊາເລັມໃນການຕັດສິນວ່າ ຄຣິສຕຽນຕ່າງຊາດຈະຕ້ອງຖືຕາມບັນຍັດຫລືບໍ່ ໃນການທີ່ຈະໄດ້ຮັບຄວາມຣອດພົ້ນ (ກທ 2:3) ທ່ານຕີໂຕໄດ້ຊ່ວຍທ່ານໂປໂລໂດຍນຳຈົດໝາຍໄປຍັງເມືອງໂກຣິນໂທ ທ່ານຕີໂຕໄດ້ໜູນໃຈໃຫ້ຄຣິສຈັກໂກຣິນໂທມາພັກດີຕໍ່ທ່ານໂປໂລ ເມື່ອເກີດຜິດໃຈກັນ ທ່ານຕີໂຕຍັງນຳພາໃນເຣື່ອງການຮວບຮວມເງິນເພື່ອຊ່ວຍຄຣິສຕຽນທີ່ຍາກຈົນທີ່ກຸງເຢຣູຊາເລັມ (2 ກທ 7:5-16, 8:16-24, 12:18) ຕໍ່ມາທ່ານຕີໂຕໄດ້ຮັບໃຊ້ທີ່ເກາະກະເຣເຕ ແລະຮ່ວມກັບທ່ານໂປໂລອີກທີ່ເມືອງນີໂກໂປລີໃນປະເທດກຣີກ ແລະຖືກສົ່ງໄປຍັງດານມາເຕັຽ (ຕຕ 1:5, 3:12, 2 ຕທ 4:10)

## ສອງ. ຈຸດປະສົງຂອງພຣະທັມ

ຈຸດປະສົງຫລັກໃນການຂຽນຈົດໝາຍຝາກເຖິງສິດຍາພິບາລຂອງທ່ານໂປໂລຄື ເຕືອນສະຕິໃຫ້ທ່ານຕີໂມທຽວແລະທ່ານຕີໂຕຈັດການແກ້ໄຂບັນຫາຄຳສອນຜິດແລະການຜິດສິລທັມໃນຄຣິສຈັກໂດຍເດັດຂາດ ທ່ານໂປໂລເຕືອນສະຕິແກ່ຕີໂມທຽວບໍ່ໃຫ້ໃສ່ໃຈໃນເຣື່ອງເຊື້ອສາຍລຳດັບວົງທີ່ເປັນເຫດໃຫ້ເກີດບັນຫາ (1 ຕທ 1:3-4) ທ່ານໂປໂລຕ້ອງການໃຫ້ຕີໂມທຽວວາງຮາກຖານການບົວລະບັດຂອງສະມາຊິກຢ່າງກັບໃນຄອບຄົວຂອງພຣະເຈົ້າ (1 ຕທ 3:14-15) ໃນພຣະທັມຕີໂມທຽວສະບັບສອງ ທ່ານໂປໂລເຕືອນສະຕິໃຫ້ຕີໂມທຽວເອົາໄຊຊະນະຄວາມຂີ້ອາຍ ແລະປ່າວປະກາດຂ່າວປະເສີດຢ່າງເຂັ້ມແຂງແມ່ນວ່າຈະຕ້ອງປະເຊີນກັບຄວາມທຸກຍາກ (2 ຕທ 1:6-8) ທ່ານໂປໂລຕ້ອງການໃຫ້ທ່ານຕີໂມທຽວເຮັດວຽກໃຫ້ແລ້ວ ແລະໄປຫາເພິ່ນທີ່ກຸງໂຣມໂດຍໄວ (2 ຕທ 4:9)

ທ່ານໂປໂລຕ້ອງການໃຫ້ທ່ານຕີໂຕຕໍ່ວ່າພວກທີ່ນຳເອົາຄຳສອນຜິດມາແຜ່ໃນຄຣິສຈັກຢ່າງແຂງແຮງເພື່ອເຂົາຈະໄດ້ມີຄວາມເຊື່ອອັນມີຫລັກ (ຕຕ 1:10-13) ທ່ານໂປໂລຍັງຕ້ອງການໃຫ້ທ່ານຕີໂຕສອນສະມາຊິກແຕ່ລະກຸ່ມໃນຄຣິສຈັກທີ່ມີຄວາມແຕກຕ່າງກັນດ້ວຍຄວາມເຄົາຣົບ (ຕຕ 2:1-10) ທ່ານໂປໂລຕ້ອງການໃຫ້ທ່ານຕີໂຕຣີບໄປຫາທ່ານທີ່ເມືອງນີໂກໂປລີ (ຕຕ 3:12)

**ຈົ່ງເອົາສິ່ງທີ່ທ່ານໄດ້ສຶກສາຈາກຂ້າງເທິງເຮັດບົດຝຶກຫັດຂໍ້ສອງເຖິງຂໍ້ສາມ**

## ສາມ. ເນື້ອນັຍຂອງພຣະທັມເທຊະໂລນິກ

ໃນຈົດໝາຍສິດຍາພິບາລທັງ 3 ສະບັບ ມີເນື້ອຫາຫລັກຄືກັນ ຄື ທ່ານໂປໂລແນະນຳທ່ານຕີໂມທຽວແລະທ່ານຕີໂຕໃນການແກ້ບັນຫາຕ່າງ ໆ ໃນການເບິ່ງແຍງຄຣິສຈັກ ທ່ານໂປໂລຂຽນເຖິງຄຸນສົມບັດຕ່າງ ໆ ທີ່ຜູ້ນຳຄຣິສຈັກຄວນມີ ທ່ານໃຫ້ຄຳແນະນຳໃນການປະຕິບັດ ແລະເມື່ອຕ້ອງປະເຊີນກັບຄຳສອນຜິດ ທ່ານໂປໂລກໍເຕືອນໃຫ້ເຂົາເອົາໃຈໃສ່ຈົດຈໍ່ກັບສາຣະສຳຄັນຂອງຄວາມຈິງ ບໍ່ວົກວົນກັບເຣື່ອງອື່ນ ໆ ວິທີທີ່ດີທີ່ສຸດໃນການຕໍ່ສູ້ກັບການຄຳສອນຜິດກໍຄື ການສອນຄວາມຈິງຈາກພຣະວັຈນະຂອງພຣະເຈົ້າ ເຮົາຈະສລູບເນື້ອນັຍຂອງພຣະທັມທັງສາມສະບັບໄດ້ຈາກຄຳເວົ້າຂອງທ່ານໂປໂລໄດ້ດັ່ງນີ້

### 1. "ເຮົາໄດ້ແລ່ນແຂ່ງຂັນຈົນເຖິງທີ່ສຸດ" (2 ຕທ 4:6-7)

ຈົດໝາຍທັງສາມສະບັບນີ້ ບໍ່ແມ່ນເປັນຈົດໝາຍຂອງຜູ້ທີ່ເລີ້ມຮັບໃຊ້ພຣະເຢຊູຄຣິສ ແຕ່ເປັນຈົດໝາຍຂອງຜູ້ຮັບໃຊ້ທີ່ຜ່ານຜ່າເສິກ ໃນການຮັບໃຊ້ພຣະເຢຊູຄຣິສໃນຫົວເມືອງຫລາຍເມືອງແລະແຂວງຫລາຍແຂວງຂອງອານາຈັກໂຣມັນ ຂ່າວປະເສີດໄດ້ແຜ່ອອກໄປແລ້ວ ຄຣິສຈັກໄດ້ເຕີບໂຕຂຶ້ນ ເດືອນປີທີ່ເທສນາຢ່າງເກີດດອກອອກຜົນໄດ້ຜ່ານພົ້ນໄປ ທ່ານໂປໂລເວົ້າຢ່າງກັບຄົນເຖົ້າຜູ້ເຫັນປາຍທາງຊີວິດຂອງຕົນທີ່ໃກ້ເຂົ້າມາ "ເພາະວ່າຝ່າຍຕົວເຮົາ ກຳລັງຈະຕົກເປັນເຄື່ອງບູຊາຢູ່ແລ້ວ ແລະເຖິງເວລາແລ້ວທີ່ເຮົາຈະຈາກໄປ ເຮົາໄດ້ອົດສາສູ້ໃນການແຂ່ງຂັນ ເຮົາໄດ້ແລ່ນແຂ່ງຂັນຈົນເຖິງທີ່ສຸດ ເຮົາໄດ້ຮັກສາຄວາມເຊື່ອໄວ້ແລ້ວ"

ທ່ານໂປໂລໃຫ້ເວົ້າຢ່າງຄືແກ່ ຜູ້ເຫັນປາຍທາງ ຊີວິດມຸດຄືທີ່ພາລັງ ສິ່ງຄວາມໃຫ້ເວົ້ານາງາ ໂດຍ:

### 2. "ຍຶດໝັ້ນໃນຫລັກອັນທ່ຽງທັມທີ່ຖືກຕ້ອງ" (ຕຕ 1:9)

ລາງເທື່ອເຮົາໄດ້ຍິນຄົນກ່າວ "ຈະເຊື່ອອັນໃດກໍບໍ່ສຳຄັນ ຂໍໃຫ້ເຮົາເຮັດສິ່ງທີ່ຖືກຕ້ອງກໍແລ້ວກັນ" ການເວົ້າແບບນີ້ບໍ່ເປັນຄວາມຈິງ ເພາະເຮົາຈະເຮັດສິ່ງທີ່ເຮົາຄິດ ດ້ວຍວ່າການກະທຳເປັນຜົນທີ່ອອກຈາກຄວາມເຊື່ອທີ່ຝັງຢູ່ໃນແນວຄິດຂອງເຮົາ ເມື່ອເຮົາສະສົມຄວາມຄິດທີ່ບໍ່ຖືກຕ້ອງໄວ້ກໍມັກມີຜົນຕໍ່ການກະທຳທີ່ເຮັດໃນສິ່ງທີ່ບໍ່ຖືກຕ້ອງ ດັ່ງນັ້ນຄຣິສຈັກຈຳເປັນຕ້ອງສອນສະມາຊິກຂອງຄຣິສຈັກຢູ່ສເມີວ່າ ຄວາມເຊື່ອໃນພຣະເຈົ້າແລະໃນພຣະຄຣິສນັ້ນໝາຍຄວາມວ່າແນວໃດ ຄຣິສຕຽນຄວນຢູ່ຮ່ວມກັນແນວໃດ ແລະອັນໃດເປັນວຽກການຂອງຄຣິສຕຽນ ເພື່ອໃຫ້ສະມາຊິກມີແນວຄວາມຄິດທີ່ຖືກຕ້ອງ ແລະມີການກະທຳທີ່ຂັບຕາມດ້ວຍຄວາມເຊື່ອໝັ້ນໃນພຣະເຈົ້າ

ດ້ວຍເຫດນີ້ ທ່ານໂປໂລຕ້ອງການໃຫ້ພວກຜູ້ນຳຂອງຄຣິສຈັກ "ຍຶດໝັ້ນໃນຫລັກອັນທ່ຽງທັມທີ່ຖືກຕ້ອງ" ຄືຫລັກຄວາມຈິງແຫ່ງຄຳສອນຈາກພຣະວັຈນະຂອງພຣະເຈົ້າ ເພາະມີຄວາມຄິດຫລາຍແນວທີ່ຫລອກລວງແລະຄຸກຄາມຢູ່ໃນສັງຄົມຄຣິສຕຽນ ດັ່ງນີ້

1) ລາງຄົນໄດ້ຊັກຊວນໃຫ້ຮັບເອົາຮີດຄອງຂອງພວກຢິວເຂົ້າມາປະຕິບັດ (ຕຕ 1:10, 14) ທ່ານໂປໂລໃຫ້ຄວາມນັບຖືຕໍ່ພຣະທັມບັນຍັດ ເພາະພຣະທັມບັນຍັດສາມາດເຕືອນບໍ່ໃຫ້ເຮັດຜິດ ແລະຮຽກຮ້ອງໃຫ້ເຮັດສິ່ງດີ ແຕ່ການທີ່ຈະໃຫ້ຄວາມໄວ້ວາງໃຈໃນສາສນາພິທີແລະຖືວ່າປະຕິບັດບົດບັນຍັດເປັນຫົນທາງແຫ່ງຄວາມຣອດພົ້ນ ກໍເປັນການລືມພຣະຄຸນຂອງພຣະເຈົ້າທີ່ໄດ້ເຮັດໄວ້ໃນພຣະເຢຊູຄຣິສ

2) ລາງຄົນຄິດວ່າ "ເຣື່ອງເຊື້ອສາຍ" ອັນບໍ່ຮູ້ຈົບຂອງພວກເທວະດາຈະຕ້ອງຈື່ຈຳແລະຮຽນຮູ້

ໄວ້ ເພາະອາດຈະເປັນຫີນທາງໄປເຖິງພຣະເຈົ້າໂດຍອາໄສຄວາມຊ່ວຍເຫລືອຂອງພວກເທວະດາ ຊຶ່ງທ່ານໂປໂລເຫັນວ່າຈະ "ເປັນເຫດໃຫ້ເກີດບັນຫາ ແທນທີ່ຈະໃຫ້ເປັນໄປຕາມແຜນການຂອງພຣະເຈົ້າອັນກ່ຽວກັບຄວາມເຊື່ອ (1 ຕທ 1:4, 4:7)

3) ລາງຄົນຜິດຖຽງໂຕ້ແຍ້ງກັນ ໂດຍທີ່ພວກເຂົາເຂົ້າໃຈຜິດ ອວດຕົວຄິດວ່າມີຄວາມຮູ້ (1 ຕທ 6:20, 2 ຕທ 2:14, 23, ຕຕ 3:9) ໃນທີ່ສຸດໄດ້ຫລົງໄປຈາກຄວາມເຊື່ອ

4) ມີລາງຄົນພຍາຍາມຊອກຫາຫົນທາງໄປສູ່ຄວາມຣອດພົ້ນໂດຍການບຳເພັນທຸກຂະກິຣິຍາ ຄືຫ້າມແຕ່ງງານ ໃຫ້ທໍຣະມານກາຍ ແລະຫ້າມຮັບປະທານເນື້ອ (1 ຕທ 4:3, 8)

5) ຄວາມໂລບແລະການຮັກເງິນຄຳທຳລາຍຄວາມເຊື່ອແລະນຳຄວາມສັບສົນມາໃຫ້ພີ່ນ້ອງຄຣິສຕຽນ (1 ຕທ 6:9-10, 17-18)

6) ລາງຄົນມັກເວົ້າຂວັນຢູ່ບໍ່ເປັນສຸກ ຊອກໄປເຮືອນຂອງສະມາຊິກແລ້ວກໍເວົ້າຂວັນຫຍຸ້ງກ່ຽວກັບທຸຣະຂອງຜູ້ອື່ນ (1 ຕທ 5:13)

7) ຄວາມຍາກລຳບາກຢ່າງຮ້າຍແຮງໄດ້ທວີຫລາຍຂຶ້ນ (2 ຕທ 3:1-5)

8) ຄວາມມຶນເມົາ ແລະຄວາມໂຫດຮ້າຍ ກຳລັງຄອບງຳສັງຄົມ ແລະເປັນໄພຕໍ່ຄວາມເຊື່ອຂອງຄຣິສຕຽນ (1 ຕທ 3:3, 8, 2 ຕທ 4:10, ຕຕ 1:12)

ທ່ານໂປໂລຕັກເຕືອນໃຫ້ຍຶດໝັ້ນໃນຂ່າວປະເສີດຂອງພຣະເຢຊູຄຣິສ ເພື່ອຕໍ່ຕ້ານແນວຄວາມຄິດແລະຄຳສອນທີ່ຜິດ ເພື່ອຕໍ່ຕ້ານຄວາມພຍາຍາມອັນສະລາດທີ່ມະນຸດຄິດຫາຫົນທາງແຫ່ງຄວາມຣອດພົ້ນເອງ ແລະເພື່ອຕໍ່ຕ້ານການຜິດຖຽງກັນກັບການກະທຳທີ່ເຫັນແກ່ຕົວເຫລົ່ານີ້ ເຮົາວາງໃຈໃນຂ່າວປະເສີດຂອງພຣະເຢຊູຄຣິສໄດ້ວ່າ ເປັນຂ່າວປະເສີດທີ່ມີຄຸນຄ່າຄວາມໝາຍທີ່ພຣະເຈົ້າປະທານຄວາມຣອດພົ້ນທາງພຣະເຢຊູຄຣິສ ແລະເສີມສ້າງຜູ້ເຊື່ອໃຫ້ມີຊີວິດໃໝ່ "ແຕ່ເມື່ອພຣະເມດຕາຂອງພຣະເຈົ້າ ຜູ້ຊົງໂຜດເຮົາທັງຫລາຍໃຫ້ພົ້ນ ແລະຄວາມຮັກຂອງພຣະອົງເພື່ອມະນຸດທັງຫລາຍໄດ້ສ່ອງມາປາກົດແລ້ວ ພຣະອົງໄດ້ຊົງໂຜດເຮົາທັງຫລາຍໃຫ້ພົ້ນ ບໍ່ແມ່ນຍ້ອນກິຈການອັນຊອບທັມທີ່ພວກເຮົາເອງໄດ້ເຮັດ ແຕ່ພຣະອົງໄດ້ຊົງພຣະກະຣຸນາຊຳຣະໃຫ້ພວກເຮົາມີໃຈບັງເກີດໃໝ່ ແລະຊົງສ້າງພວກເຮົາຂຶ້ນໃໝ່ໂດຍພຣະວິນຍານບໍຣິສຸດ ພຣະວິນຍານອົງນັ້ນ ພຣະເຈົ້າໄດ້ຊົງຖອກໃສ່ເຮົາທັງຫລາຍຢ່າງບໍຣິບູນ ໂດຍພຣະເຢຊູຄຣິສພຣະຜູ້ຊົງໂຜດໃຫ້ພົ້ນຂອງເຮົາທັງຫລາຍ" (ຕຕ 3:4-6) ພຣະເຈົ້າຕ່າງຫາກຊົງເປັນພຣະຜູ້ຊ່ວຍໃຫ້ເຮົາຣອດພົ້ນ ໂດຍຣິດເດດຂອງພຣະອົງຜ່ານທາງພຣະເຢຊູຄຣິສແລະພຣະວິນຍານບໍຣິສຸດເຮັດໃຫ້ສາມາດດຳເນີນຊີວິດໃໝ່ທີ່ດີໄດ້

## 3. "ຮັ່ງມີໃນການປະຕິບັດອັນດີງາມ" (1 ຕທ 6:18)

ພຣະເຈົ້າຊົງປະທານຣິດເດດໃຫ້ແກ່ຄຣິສຕຽນ ຈຶ່ງເປັນສິ່ງທີ່ສຳຄັນທີ່ຄຣິສຕຽນຄວນມີຜົນໃຫ້ປາກົດໃນຊີວິດຂອງເຂົາ ພຣະເຢຊູຄຣິສຕັດວ່າ "ທ່ານຈະຮູ້ຈັກເຂົາໄດ້ດ້ວຍຜົນຂອງເຂົາ" (ມທ 7:16,20) ເພາະສະນັ້ນທ່ານໂປໂລຈຶ່ງຊຸກຍູ້ຊວ່ານຊູໃຈໃຫ້ຄຣິສຕຽນປະຕິບັດຄວາມດີສເມີ ເປັນຄວາມຈິງທີ່ຂ່າວປະເສີດໃຫ້ການຍົກໂທດໂຜດບາບແກ່ຄົນບາບໂດຍບໍ່ໄດ້ເສັຍອັນໃດ ເຮົາໄດ້ຮັບຄວາມຣອດພົ້ນໂດຍພຣະກະຣຸນາຈາກພຣະເຈົ້າ ເປັນຂອງພຣະຣາຊທານຊຶ່ງເຮົາຮັບໂດຍຄວາມເຊື່ອໃນພຣະຄຣິສ ແຕ່ເພາະຂອງພຣະຣາຊທານທີ່ພຣະເຈົ້າພຣະຣາຊທານໃຫ້ກັບຄຣິສຕຽນ ຄຣິສຕຽນຈຶ່ງຕ້ອງຮູ້ຈັກການຕອບແທນໂດຍຄວາມເຊື່ອດ້ວຍຄວາມຂອບພຣະຄຸນ ດ້ວຍການຂັບຕາມນ້ຳພຣະທັຍຂອງພຣະເຈົ້າ ໂດຍການກະທຳຄຸນ

ຄວາມດີເປັນສ່ວນນຶ່ງຂອງຊີວິດປະຈຳວັນຂອງເຂົາ ເພື່ອສະແດງຜົນແຫ່ງຄວາມເຊື່ອທີ່ເຂົາໄດ້ປະຕິບັດຄຸນງາມຄວາມດີ ທ່ານໂປໂລໄດ້ກຳຊັບຄຣິສຕຽນ ແລະໂດຍສະເພາະຢ່າງຍິ່ງພວກຜູ້ນຳ "ຈົ່ງສັ່ງເຂົາໃຫ້ເຮັດແຕ່ຄຸນງາມຄວາມດີ ໃຫ້ເຂົາຮັ່ງມີໃນການປະຕິບັດອັນດີງາມ ໃຫ້ເຂົາມີໃຈສັດທາເອື້ອເຟື້ອເພື່ອແຜ່ ແລະບໍ່ເຫັນແກ່ຕົວ (1 ຕທ 6:18) "ຖ້າຜູ້ໃດຊຳຣະຕົວໃຫ້ພົ້ນຈາກສິ່ງຊົ່ວເຫລົ່ານັ້ນ ກໍຈະເປັນເຫມືອນພາຊນະອັນມີກຽດ... ທີ່ຈັດໄວ້ພ້ອມແລ້ວສຳລັບການດີທຸກຢ່າງ" (2 ຕທ 2:21) ການໄຖ່ບາບຂອງພຣະເຢຊູຄຣິສ "ເພື່ອໃຫ້ເປັນພົລເມືອງຈຳພວກນຶ່ງຂອງພຣະອົງ ຄື ເປັນຄົນມີໃຈຮ້ອນຮົນສຳລັບເຮັດການດີ" (ຕຕ 2:14) "ແຕ່ພວກເຮົານັ້ນຕ້ອງໃຫ້ເຂົາຮຽນຮູ້ ທີ່ຈະເຮັດການດີເຫມືອນກັນເພື່ອເຂົາຈະບໍ່ເປັນຄົນທີ່ໄຮ້ຜົນ" (ຕຕ 3:14) ທ່ານໂປໂລກ່າວວ່າ ຄຣິສຕຽນຜູ້ທີ່ມີຄວາມເຊື່ອຕ້ອງບໍ່ເປັນຄົນທີ່ "ປະກາດຕົວວ່າຮູ້ຈັກພຣະເຈົ້າ ແຕ່ວ່າໃນການເຮັດຂອງເຂົາ ເຂົາກໍປະຕິເສດພຣະອົງເຂົາເປັນຄົນຫນ້າກຽດຫນ້າຊັງ ບໍ່ຍອມເຊື່ອຟັງໃຜ ແລະສຳລັບການດີອັນໃດກໍໃຊ້ບໍ່ໄດ້ຈັກຢ່າງ" (ຕຕ 1:16) ຜົນຄຸນງາມຄວາມດີເປັນສິ່ງທີ່ຄຣິສຕຽນປະຕິບັດຕາມຄວາມເຊື່ອ

4. **"ຈົ່ງປະຕິບັດຫນ້າທີ່ຂອງເຈົ້ານັ້ນໃຫ້ສຳເຣັດ"** (2 ຕທ 4:5)

ພຣະທັມໃນຊຸດ "ຈົດຫມາຍຝາກສິດຍາພິບາລ" ມີຄຳສອນສ່ວນໃຫຍ່ຕ້ອງການເວົ້າໂດຍກົງກັບຜູ້ນຳທີ່ມີຢູ່ໃນຄຣິສຈັກ ພຣະທັມຈົດຫມາຍຝາກສິດຍາພິບາລໄດ້ບອກໃຫ້ຮູ້ຈັກວ່າ ຜູ້ນຳຕ້ອງມີຄຸນສົມບັດຫຍັງດັ່ງນັ້ນທ່ານໂປໂລໄດ້ເນັ້ນຫນັກກັບຜູ້ນຳເຖິງຄວາມເຊື່ອທີ່ຈິງໃຈ ຊີວິດທີ່ອຸທິດຖວາຍແກ່ພຣະເຈົ້າ ແລະການຮັບໃຊ້ດ້ວຍຄວາມສັດຊື່ ທ່ານໂປໂລບໍ່ໄດ້ໃຫ້ລາຍການຂອງພຣະຣາຊທານຢ່າງຍືດຍາວ ມີແຕ່ກ່າວເຖິງຂອງປະທານໃນການສອນພຣະວັຈນະທັມຂອງພຣະເຈົ້າ ທ່ານເຫັນວ່າ ຜູ້ນຳຕ້ອງເປັນຜູ້ທີ່ສັດຊື່ສຸພາບບໍ່ມີຈິດໃຈທີ່ໂລບ ແລະບໍ່ມັກຜິດຖຽງກັນ ທຸ່ນທ່ຽງ ຮູ້ຈັກບັງຄັບຕົນ ແລະມີຄອບຄົວເປັນພະຍານທີ່ດີໃນທາງຄວາມເຊື່ອ ບໍ່ມີຂອງພຣະຣາຊປະທານອັນໃດທີ່ຈະມາແທນທີ່ຄຸນສົມບັດຕ່າງ ໆ ເຫລົ່ານີ້ໄດ້ ຜູ້ນຳຕ້ອງມີການສຶກສາຢູ່ສເມີ ໂດຍສະເພາະຢ່າງຍິ່ງສຶກສາຈາກພຣະວັຈນະທັມຂອງພຣະເຈົ້າ (2 ຕທ 3:14-17) ຫນ້າທີ່ການງານຂອງຜູ້ນຳຄືໃຫ້ທັງຄຳສອນທີ່ດີແລະແບບຢ່າງການດຳເນີນຊີວິດທີ່ດີ ແລະເຂົາຈະຕ້ອງຍອມຮັບແລະອົດທົນຕໍ່ການຍາກລຳບາກຕ່າງ ໆ ທີ່ຈະມາເຖິງເຂົາ (1 ຕທ 4:11-16, 2 ຕທ 2:3, 4:2)

ເຮົາອາດຖາມວ່າຜູ້ນຳເຫລົ່ານັ້ນແມ່ນໃຜ? ແມ່ນແທ້ຜູ້ນຳຫມາຍເຖິງຕີໂມທຽວແລະຕີໂຕໂດຍກົງເພື່ອໃຫ້ທັງສອງເປັນແບບຢ່າງແກ່ຜູ້ຄົນອື່ນ ໆ ໃນຄຣິສຈັກຂອງເຂົາ ແຕ່ພຣະທັມຈົດຫມາຍຝາກສິດຍາພິບາລ ໃຫ້ນ້ຳຫນັກເນັ້ນເຖິງເຈົ້າຫນ້າທີ່ຕ່າງ ໆ ໃນຄຣິສຈັກນອກເຫນືອຈາກຕົວຂອງທ່ານຕີໂມທຽວແລະທ່ານຕີໂຕ ເຈົ້າຫນ້າທີ່ເຫລົ່ານີ້ໄດ້ແກ່ "ຜູ້ດູແລ" (overseer ຫລື bishop , 1 ຕທ 3:1-7, ຕຕ 1:5-9) ຄຳວ່າ "ຜູ້ດູແລ" ເປັນຄຳທີ່ໃຊ້ຢ່າງເປັນທາງການຕາມຮີດຄອງກຣີກ ຄວາມຫມາຍໃນທີ່ນີ້ໃນທີ່ນີ້ຫມາຍເຖິງ ຜູ້ດູແລກອງປະຊຸມຫລືຄຣິສຈັກໃນແຕ່ລະທ້ອງຖິ່ນ ຄຳທີ່ມີຄວາມຫມາຍດຽວກັນຕາມຮີດຄອງຄຣິສຕຽນຢິວຄື "ເຖົ້າແກ່" (elder) ເມື່ອສຶກສາສົມທຽບເບິ່ງຣະຫວ່າງພຣະທັມຕີໂຕບົດທີ 1 ຂໍ້ 5 ກັບ ຂໍ້ 7 ກໍໄດ້ຄວາມຊັດແຈ້ງວ່າ ຄຳວ່າ "ເຖົ້າແກ່" ໃນຕອນຂໍ້ຫ້າ ຫມາຍເຖິງ "ຜູ້ດູແລ" ໃນຂໍ້ເຈັດໂດຍມີຄຳວ່າ "ເພາະ" ເປັນຄຳເຊື່ອມ ໃນລັກສນະດຽວກັນເມື່ອສຶກສາພຣະທັມຕອນອື່ນ ໆ (ກຈ 20:17, 28, 1 ປຕ 5:1-2) ຈະພົບວ່າຄຳວ່າ "ເຖົ້າແກ່" ແລະ "ຜູ້ດູແລ" ໃຊ້ແທນກັນຄຳໃນພາສາກຣີກທີ່ໃຊ້ໃນພຣະທັມກິຈ 20:28 ເປັນຄຳດຽວກັບໃນພຣະທັມຕີໂຕ 1:7 ຊຶ່ງແປວ່າ "ຜູ້

ດູແລ" ຜູ້ດູແລຫລືເຖົ້າແກ່ມີຫນ້າທີ່ສຳຄັນໃນການປົກຄອງດູແລກອງຄຣິສຕຽນປະຊຸມທ້ອງຖິ່ນ (1 ຕທ 3:5, 5:17) ຄືກັບຜູ້ລ້ຽງແກະທີ່ໃຫ້ການລ້ຽງດູແລະປົກປ້ອງຮັກສາລູກແກະຈາກຄຳສອນຜິດທີ່ຜູ້ນຳຄົນອື່ນນຳພາເຂົ້າມາໃນຄຣິສຈັກ (ກຈ 20:28-31) ພວກເຖົ້າແກ່ຫລືຜູ້ດູແລມີຫນ້າທີ່ເທສນາແລະສັ່ງສອນດ້ວຍ (1 ຕທ 5:17) ດ້ວຍຄວາມຫມາຍແລະຫນ້າທີ່ການຮັບຜິດຊອບທີ່ໄດ້ກ່າວມາສຳລັບ "ຜູ້ດູແລ" ແລະ "ເຖົ້າແກ່" ຄຣິສຈັກສ່ວນໃຫຍ່ໃນຣະບົບການປົກຄອງແບບກອງປະຊຸມ (Congregational) ເຫັນວ່າຄຳທັງສອງມີຄວາມຫມາຍເຖິງ "ສິດຍາພິບາລ" (Pastor) ຊຶ່ງເປັນຄຳທີ່ເຮົາເອີ້ນກັນໃນຄຣິສຈັກປັດຈຸບັນນີ້

ຜູ້ນຳທີ່ເປັນເຈົ້າຫນ້າທີ່ໃນຄຣິສຈັກອີກພວກນຶ່ງຄື "ຜູ້ບົວລະບັດ"(Deacons) ຕາມປະສົບການທີ່ຮັບໃຊ້ພຣະເຈົ້າຢູ່ໃນຄຣິສຈັກລາວມາຫລາຍວ່າສິບປີ ຄຣິສຈັກສ່ວນຫລາຍສັບສົນແລະບໍ່ໄດ້ຮຽກຊື່ຕາມຕຳແຫນ່ງຫນ້າທີ່ນີ້ຕາມຄຳແປຂອງພຣະທັມຕິໂມທຽວ ຕາມຕົ້ນສະບັບພາສາກຣີກເດີມຄຳທີ່ແປວ່າ "ຜູ້ບົວລະບັດ" ກໍຊັດແຈ້ງແລະໃກ້ຄຽງກັບຄວາມຫມາຍແລະພາຣະກິຈຮັບຜິດຊອບຂອງຜູ້ນຳກຸ່ມນີ້ ຄຣິສຈັກລາວສ່ວນຫລາຍນິຍົມໃຊ້ຄຳວ່າ "ເຖົ້າແກ່" ຊຶ່ງເປັນຫນ້າທີ່ການເຮັດວຽກອີກຄວາມຫມາຍນຶ່ງຕາມທີ່ໄດ້ສຶກສາໄປໃນວັກທີ່ແລ້ວ ການທີ່ມີຄວາມນິຍົມໃຊ້ຄຳວ່າ "ເຖົ້າແກ່" ອາດຈະເປັນເພາະຄິດເຖິງຄວາມອາວຸໂສຫລືຄວາມແກ່ເຖົ້າ ຕາມທີ່ຣີດຄອງລາວໃຫ້ກຽດຍົກຍ້ອງ ທີ່ຈິງກໍເປັນຄວາມຄິດສ່ວນນຶ່ງຂອງຮີດຄອງຍິວເຊັ່ນດຽວກັນ ແຕ່ຈຸດປະສົງທີ່ໃຫ້ມີການເລືອກເຈົ້າຫນ້າທີ່ກຸ່ມນີ້ຂຶ້ນບໍ່ແມ່ນເອົາຄວາມອາວຸໂສເປັນຈຸດສຳຄັນ ແຕ່ໄດ້ເອົາພາຣະກິຈການຮັບໃຊ້ບົວລະບັດເປັນຫລັກສຳຄັນ ໃນທີ່ນີ້ບໍ່ໄດ້ຫມາຍຄວາມວ່າ ຄຣິສຈັກບໍ່ໄດ້ໃຫ້ກຽດແກ່ຜູ້ເຖົ້າຜູ້ແກ່ ຄຣິສຈັກຕ້ອງໃຫ້ກຽດເຖົ້າແກ່ເປັນການສົມຄວນ ແຕ່ຜູ້ໃດທີ່ໄດ້ຮັບເລືອກເປັນຜູ້ບົວລະບັດນັ້ນກໍມີພາຣະຫນ້າຄວາມຮັບຜິດຊອບຕິດພັນຢູ່ ຖ້າຜູ້ບົວລະບັດບໍ່ທຳຫນ້າທີ່ຂອງຕົນຕາມພາຣະກິຈທີ່ຄຣິສຈັກມອບຫມາຍໃຫ້ ກໍຈະບໍ່ສາມາດນຳໃຫ້ພົບຄວາມສຳເຣັດຕາມຄວາມມຸ່ງຫມາຍ ດັ່ງນັ້ນແລ້ວການໃຫ້ກຽດແກ່ເຖົ້າແກ່ເປັນຢ່າງນຶ່ງ ແລະການມີຫນ້າຮັບບົວລະບັດເປັນອີກຢ່າງນຶ່ງ ທີ່ຜູ້ກ່ຽວບໍ່ຄວນສັບສົນ ເຈັດຄົນແລກທີ່ໄດ້ຖືກເລືອກໃນພຣະທັມກິຈການ 6:1-6 ກໍເພາະວຽກການຮັບໃຊ້ໃນຄຣິສຈັກມີຫລາຍຂຶ້ນ ເພື່ອໃຫ້ພວກອັຄສາວົກມີເວລາໃນການອ້ອນວອນແລະການສັ່ງສອນພຣະທັມ ຫລາຍກວ່າວຽກການບົວລະບັດສມາຊິກ ຖ້າຄຣິສຈັກຈະເອີ້ນເຈົ້າຫນ້າທີ່ໃນຕຳແຫນ່ງນີ້ໃຫ້ຖືກຕ້ອງ ລາງເທື່ອຈະເຕືອນໃຈໃຫ້ມີຜູ້ບົວລະບັດວຽກງານຂອງພຣະເຈົ້າຫລາຍຂຶ້ນ ຄວາມຈິງນີ້ເຮົາເຫັນໄດ້ຈາກຄຸນສົມບັດຂອງ "ຜູ້ບົວລະບັດ" ທີ່ທ່ານໂປໂລໄດ້ກ່າວໄວ້ (1 ຕທ 3:8-13) ເມື່ອເຮົາໄດ້ອ່ານສຶກສາຄຸນສົມບັດຂອງຜູ້ບົວລະບັດ ກໍຈະບໍ່ພົບຂໍ້ກຳຫນົດຂອງຄວາມອາວຸໂສ ແຕ່ພົບວ່າຜູ້ຮັບໃຊ້ໃນຫນ້າທີ່ນີ້ ຕ້ອງເປັນຄົນທີ່ມີຄວາມເຊື່ອແທ້ຈິງ ແລະມີຊີວິດເປັນແບບຢ່າງແກ່ຜູ້ອື່ນ ເຂົາຕ້ອງເປັນຄົນທີ່ສັດຊື່ແລະເພິ່ງພາໄດ້ ເພາະເຂົາຈະຕ້ອງເປັນຄົນທີ່ຈັດການກ່ຽວກັບການເງິນແລະດູແລຄົນຍາກຈົນ ເມື່ອຄຣິສຈັກຂຍາຍຕົວເລີ້ມມີຣະບຽບຣະບອບແລະການຈັດຕັ້ງອີງ ທ່ານໂປໂລໄດ້ຕັກເຕືອນອັນຕລາຍຂອງເງິນທອງຫລາຍກ່າວນຶ່ງເທື່ອ ໃຫ້ຣະມັດຣະວັງຫາເງິນທອງແລະໃຊ້ຈ່າຍໃຫ້ຖືກຕ້ອງ

## 5. ໃຫ້ຄຣິສຈັກຍືນຫມັ້ນໃນຄວາມເຊື່ອ

ໃນຈົດຫມາຍເຖິງສິດຍາພິບາລເຫລົ່ານີ້ ເຮົາເຫັນວ່າຄຣິສຈັກເລີ້ມມີການຈັດຣະບອບຣະບຽບຂຶ້ນຕອນທຳອິດເມື່ອມີສາວົກທັງຫມົດເປັນພວກຍິວ ເຂົາກໍດຳເນີນຊີວິດພາຍໃນຂອບເຂດຂອງລັດທິຢູດາຍ ເຂົາທັງຫລາຍນມັສການໃນພຣະວິຫານຫລືໃນໂຮງທັມສາລາ ແລະບໍ່ໄດ້ສະແຫວງຫາທີ່ຈະສ້າງອົງການ

ຂຶ້ນໃໝ່ ແຕ່ເມື່ອຄຣິສຈັກສ່ວນໃຫຍ່ມີຊາວຕ່າງຊາດເຂົ້າມາຮ່ວມ ຈຶ່ງຈຳເປັນຕ້ອງຊອກຫາຫົນທາງນມັສການແລະດຳເນີນຊີວິດຢູ່ດ້ວຍກັນເປັນສ່ວນຂອງຄຣິສຕຽນຫລາຍຍິ່ງຂຶ້ນ ເຮັດໃຫ້ຄຣິສຈັກເປັນກຸ່ມແຍກອອກຈາກລັດທິຢູດາຍ ແຕ່ຄຣິສຕຽນຍັງຈຳເປັນຕ້ອງຕັ້ງຕົວໃຫ້ໝັ້ນຄົງຢ່າງເປັນຢູ່ໃນອານາຈັກໂຣມັນ ເຂົາຈະມະລຸ່ມມະລ່ອຍກັບລັດທິຄຳສອນຂອງສາສນາອື່ນບໍ່ໄດ້ ແມ່ນວ່າເຂົາຈະປະຕິບັດຄວາມດີຕໍ່ເພື່ອນມະນຸດດ້ວຍກັນ ແລະແມ່ນວ່າຈະໄດ້ອະທິຖານເພື່ອບັນດາຜູ້ປົກຄອງແລະຂ້າຣາຊການ (1 ຕທ 2:1-4)

ການນມັສການຂອງຄຣິສຈັກໄດ້ມີການພັທນາຂຶ້ນມາ ພຣະຄັມພີມີສ່ວນສຳຄັນຍິ່ງຂຶ້ນ (2 ຕທ 3:14-17) ເບິ່ງຄືກັບວ່າມີການແຕ່ງເພງນມັສການຂຶ້ນ ພຣະທັມ 1 ຕີໂມທຽວ 3:16 ອາດຈະເປັນເພງບົດນຶ່ງ ສະແດງວ່າຄຣິສຈັກເລີ່ມມີການກຳຫນົດຫລັກການຄວາມເຊື່ອອັນເປັນສູນລວມຂອງຕົນຂຶ້ນ ຄຳວ່າ "ຄຳນີ້ເປັນຄຳສັດຈິງ" ຫລື "ຄຳນີ້ເປັນຄຳຈິງ" ປາກົດຫ້າເທື່ອ ໃນຂໍ້ເຫລົ່ານີ້ຊີ້ໃຫ້ເຫັນເຖິງຫລັກຂອງຄວາມເຊື່ອທີ່ຄຣິສຕຽນກ່າວຢ້ຳຢູ່ສເມີ (1 ຕທ 1:15, 3:1, 4:9, 2 ຕທ 2:11, ຕຕ 3:8)

ເມື່ອເຮົາມີຂອງດີເຮົາຕ້ອງການເກັບມ້ຽນຮັກສາໄວ້ ນີ້ເປັນຄວາມຄິດໃນຈົດໝາຍຂອງທ່ານໂປໂລ ໃນເມື່ອຂ່າວປະເສີດແລະຊີວິດຄຣິສຕຽນພຣະເຈົ້າມີຂອງຂວັນໃຫຍ່ຍິ່ງທີ່ສຸດທີ່ຊົງປະທານໃຫ້ເຮົາ ແລະໃນເມື່ອໃນພຣະຄຣິສເຮົາມີຈຸດສູນລວມຂອງຊີວິດອັນຖືກຕ້ອງ ກໍຂໍໃຫ້ເຮົາເກັບມ້ຽນຮັກສາໄວ້ ເຮົາຄວນຈະຄິດເຖິງສິ່ງເຫລົ່ານີ້ໃຫ້ຖືກຕ້ອງ ແລະຄວນຂັບຕາມດ້ວຍຄວາມຈິງຮັກພັກດີຕໍ່ພຣະເຢຊູຄຣິສ ເຮົາຄວນເຮັດໃຫ້ຊີວິດແລະການນຳພາຄຣິສຈັກມີຄຸນຄ່າດ້ວຍຄວາມສັດຊື່ຫລາຍຍິ່ງ "ສິ່ງທີ່ເຮົາຝາກໄວ້ກັບເຈົ້າແລ້ວນັ້ນຈົ່ງຮັກສາໄວ້" (1 ຕທ 6:20)

## 6. ຄຳຕັກເຕືອນສຳລັບຜູ້ຮັບໃຊ້

ທ່ານໂປໂລໄດ້ໃຫ້ຄຳຕັກເຕືອນຕໍ່ທ່ານຕີໂມທຽວສຳລັບວຽກການຮັບໃຊ້ ທີ່ທ່ານຕີໂມທຽວຮັບຜິດຊອບຢູ່ ຊຶ່ງເຫມາະສົມທີ່ພວກເຮົາຄວນຈະຮັບໄວ້ພິຈາຣະນາ ເພື່ອເປັນພື້ນຖານໃນການເປັນຜູ້ນຳຂອງຄຣິສຈັກຕໍ່ໄປ

1) ຈົ່ງມີສ່ວນໃນການລຳບາກ ເພື່ອເຫັນແກ່ຂ່າວປະເສີດ (2 ຕທ 1:8, 2:3)
   ເພາະເຫັນແກ່ພວກທີ່ຊົງເລືອກໄວ້ນັ້ນ ເພື່ອເຂົາຈະໄດ້ຮັບຄວາມຣອດພົ້ນ (2 ຕທ 2:10)
2) ຈົ່ງເຮັດຕາມແບບຢ່າງແຫ່ງຄຳສອນອັນມີຫລັກ (2 ຕທ 1:13, 2:15)
   ເພາະຖ້ອຍຄຳອັນບໍ່ມີປໂຍດແລະນອກສາສນານຳຄົນໄປສູ່ຄວາມອະທັມໃຫ້ທະວີຫລາຍຂຶ້ນ (2 ຕທ 2:1-17)
3) ຈົ່ງຫລີກຫນີຈາກຣາຄະຕັນຫາຂອງຄົນໜຸ່ມ (2 ຕທ 2:22)
   ເພາະຈະຕ້ອງຊຳຣະຕົວໃຫ້ພົ້ນຈາກສິ່ງຊົ່ວ ເພື່ອຈະເປັນພາຊນະອັນມີກຽດ ທີ່ຕັ້ງໄວ້ຕ່າງຫາກ ຊຶ່ງເປັນປໂຍດແກ່ພຣະເຈົ້າ (2 ຕທ 2:21)
4) ຈົ່ງຫລີກເສັຍຈາກການຖົກຖຽງກັນແບບໂງ່ ໆ ທີ່ບໍ່ເປັນແກ່ນສານ (2 ຕທ 2:23-23)
   ເພາະຜູ້ຮັບໃຊ້ຂອງພຣະເຈົ້າຕ້ອງມີໃຈເມດຕາຕໍ່ຄົນທັງປວງ ແລະຊີ້ແຈງດ້ວຍໃຈອ່ອນສຸພາບ ແລະນຳເຂົາມາເຖິງຄວາມຈິງ (2 ຕທ 24-26)
5) ຈົ່ງປະກາດພຣະທັມດ້ວຍເອົາໃຈໃສ່ (2 ຕທ 4:2)
   ເພາະຈະມີເວລາທີ່ເຂົາຈະບໍ່ຮັບເອົາຄຳສອນອັນມີຫລັກ (2 ຕທ 4:3-4)

## 7. ຕາຕະຣາງປຽບທຽບຄຸນສົມບັດຂອງຜູ້ດູແລຫລືເຖົ້າແກ່ແລະຜູ້ບົວລະບັດ

| ຄຸນສົມບັດ | ຜູ້ດູແລ / ເຖົ້າແກ່ | ຜູ້ບົວລະບັດ | ຂໍ້ພຣະທັມ |
|---|---|---|---|
| ຮູ້ຈັກບັງຄັບຕົນເອງ | • | | 1 ຕທ 3:2, ຕຕ 1:8 |
| ສັດທາເຫລື້ອມໃສຕ້ອນຮັບແຂກ | • | | 1 ຕທ 3:2, ຕຕ 1:8 |
| ສົມທີ່ຈະເປັນນາຍຄຣູ | • | | 1 ຕທ 3:2, 5:17, ຕຕ 1:9 |
| ມີສະຕິອັນດີຮອບຄອບ | • | | 1 ຕທ 3:2, ຕຕ 1:8 |
| ບໍ່ຫຽາບຊ້າແຕ່ມີໃຈສຸພາບ | • | | 1 ຕທ 3:3, ຕຕ 1:7 |
| ບໍ່ມັກຜິດຖຽງກັບຜູ້ອື່ນ | • | | 1 ຕທ 3:3 |
| ບໍ່ເຫັນແກ່ເງິນ | • | | 1 ຕທ 3:3, |
| ບໍ່ເປັນຜູ້ເຊື່ອໃຫມ່ ໆ | • | | 1 ຕທ 3:6 |
| ຜູ້ທີ່ຄົນພາຍນອກນັບຖື | • | | 1 ຕທ 3:7 |
| ບໍ່ມີຂໍ້ຕໍາຫນິ | • | | ຕຕ 1:7 |
| ບໍ່ເລືອດຮ້ອນ | • | | ຕຕ 1:7 |
| ຮັກຄວາມດີ | • | | ຕຕ 1:8 |
| ຍຸດຕິທັມ / ບໍຣິສຸດ | • | | ຕຕ 1:8 |
| ບໍ່ຈອງຫອງ | • | | ຕຕ 1:8 |
| ບໍ່ມີໃຜຕິໄດ້ | • | • | 1 ຕທ 3:2, ຕຕ 1:6<br>1 ຕທ 3:9 |
| ເປັນຜົວຂອງຍິງຄົນດຽວ | • | • | 1 ຕທ 3:2, ຕຕ 1:6<br>1 ຕທ 3:12 |
| ບໍ່ເມົາເຫລົ້າ | • | • | 1 ຕທ 3:2, ຕຕ 1:7<br>1 ຕທ 3:8 |
| ບໍ່ໂລບເຫັນແກ່ໄດ້ | • | • | ຕຕ 1:7, 1 ຕທ 3:8 |
| ຄອບຄອງເຮືອນຂອງຕົນໄດ້ດີ | • | • | 1 ຕທ 3:4, 1 ຕທ 3:12 |
| ເບິ່ງວ່າລູກມີຄວາມເຊື່ອຟັງ | • | • | 1 ຕທ 3:4-5, ຕຕ 1:6<br>1 ຕທ 3:12 |
| ຍຶດຫມັ້ນຫລັກຄໍາສອນທີ່ຖືກຕ້ອງ | • | • | ຕຕ 1:9, 1 ຕທ 3:9 |
| ເອົາການເອົາງານ | | • | 1 ຕທ 3:8 |
| ບໍ່ເປັນຄົນສອງລີ້ນ | | • | 1 ຕທ 3:8 |
| ລອງເບິ່ງເສັຽກ່ອນ | | • | 1 ຕທ 3: 10 |

ຄຸນສົມບັດຕາມຕາຕະຣາງທີ່ໄດ້ສເນີໄປນີ້ເປັນມາດຕາຖານທີ່ພຣະວັຈນະຂອງພຣະເຈົ້າໄດ້ນຳສເນີໃຫ້ແກ່ຄຣິສຈັກເປັນແບບຢ່າງ ແຕ່ເຮົາຕ້ອງຍອມຮັບວ່າເມື່ອຄຣິສຈັກຕ້ອງການຊອກຫາຜູ້ນຳຕາມຄຸນສົມບັດທີ່ໄດ້ກຳໜົດໄວ້ນີ້ຢ່າງຄົບຖ້ວນກໍຊອກຫາໄດ້ຍາກ ສິ່ງທີ່ສຳຄັນສຳລັບຄຸນສົມບັດທັງໝົດນີ້ຄື ຜູ້ນຳຕ້ອງມີຊີວິດຄຣິສຕຽນທີ່ເປັນແບບຢ່າງທີ່ສາມາດຊັກນຳຄົນອື່ນມາເຖິງພຣະເຢຊູຄຣິສໄດ້ ຄຸນສົມບັດບາງປະການທີ່ບໍ່ຄົບຖ້ວນນັ້ນ ເຮົາຕ້ອງພິຈາຣະນາເບິ່ງວ່າເປັນສິ່ງທີ່ເກີດຂຶ້ນໃນອາດີດຫລືໃນປັດຈຸບັນ ຖ້າເປັນສິ່ງທີ່ໄດ້ເກີດຂຶ້ນໃນອາດີດແລະຜູ້ກ່ຽວໄດ້ສາຣະພາບບາບກັບໃຈໃໝ່ກັບພຣະເຈົ້າແລ້ວ ກໍເປັນສິ່ງຄວນທີ່ຈະພິຈາຣະນາຄວາມປະພຶດທີ່ມີຢູ່ໃນປັດຈຸບັນ ເພາະການກັບໃຈໃໝ່ເປັນສິ່ງທີ່ຟ້າສວັນປິຕິຍິນດີ ຄຣິສຕຽນຄວນໃຫ້ອະພັຍແລະເສີມສ້າງກັນແລະກັນຂຶ້ນມາໃໝ່ ການຊອກຫາຜູ້ທີ່ຈະຍອມເສັຍສະລະຮັບໃຊ້ກໍຍາກຫລາຍຢູ່ແລ້ວ ຄວາມສຳຄັນອີກປະການນຶ່ງຄື ຜູ້ທີ່ໄດ້ຮັບໜ້າທີ່ມອບໝາຍມາແລ້ວ ຄວນຮັບໃຊ້ຕາມໜ້າທີ່ ໆ ຕົນໄດ້ຮັບມອບມາຢ່າງດີທີ່ສຸດ"ໃນຖານະທີ່ເປັນຜູ້ຮັບມອບໝາຍຈາກພຣະເຈົ້າ" (ຕຕ 1:7) ວຽກການເຫລົ່ານີ້ເປັນໜ້າທີ່ ໆ ພຣະເຈົ້າເປັນຜູ້ເອີ້ນແລະມອບໝາຍໃຫ້ໂດຍກົງ ເຮົາຄວນຂັບຕາມດ້ວຍຄວາມຊື່ສັດຊື່ແລະຈົງຮັກພັກດີ

| |
|---|
| **ຈົ່ງເອົາສິ່ງທີ່ທ່ານໄດ້ສຶກສາຈາກຂ້າງເທິງເຮັດບົດຝຶກຫັດຂໍ້ສື່ & ຂໍ້ຫົກ** |

ຮີ 2/1/28

# ບົດທີ 11

## ຈົດໝາຍຂອງທ່ານໂປໂລ ເຖິງທ່ານຟີເລໂມນ

**ຂໍ້ໄຂຈົດໝາຍພຣະທັມຟີເລໂມນ**

*ເຫດສະນັ້ນ ຖ້າທ່ານ (ຟີເລໂມນ) ຖືວ່າຂ້າພະເຈົ້າ (ໂປໂລ) ເປັນເພື່ອນຮ່ວມງານຂອງທ່ານ ກໍຈົ່ງຮັບລາວ (ໂອເນຊີໂມ) ໄວ້ເໝືອນຮັບຕົວຂ້າພະເຈົ້າເອງ ແລະຖ້າລາວໄດ້ເຮັດຜິດພາດຕໍ່ທ່ານປະການໃດ ຫລືໄດ້ເປັນໜີ້ທ່ານ ກໍໃຫ້ທ່ານຄິດເອົານໍາຂ້າພະເຈົ້າ ຝ່າຍຂ້າພະເຈົ້າໄດ້ລົງມືຂຽນໄວ້ວ່າ "ຂ້າພະເຈົ້າ ໂປໂລ ຈະໃຊ້ແທນໃຫ້"*
*(ຟີເລໂມນ 17-19)*

### ນຶ່ງ. ພື້ນເບື້ອງຫລັງຂອງພຣະທັມຟີເລໂມນ

ໃນຣາຊອານາຈັກໂຣມັນສມັຍໂບຮານມີຣະບົບທາດ (ຂ້ອຍຂ້າ) ເປັນເຣື້ອງສໍາຄັນ ເພາະທາດເປັນສິນບັດຊະນິດນຶ່ງ ທຸກຄົນເຫັນວ່າການມີທາສເປັນເຣື້ອງບໍ່ແປກ ເພາະວ່າລັກສນະທັມມະຊາດຂອງສັງຄົມມະນຸດໃນສມັຍນັ້ນເປັນແນວນັ້ນ ຜູ້ທີ່ເປັນນາຍຄື ເຈົ້ານາຍເໜືອຊີວິດທາດ ກົດໝາຍບ້ານເມືອງໄດ້ຫ້າມບໍ່ໃຫ້ຄົນອື່ນເຂົ້າມາຍຸ້ງກ່ຽວກັບທາດຂອງຜູ້ອື່ນ ຜູ້ທີ່ເປັນນາຍມີສິດທິອໍານາດເດັດຂາດໃນທາດຂອງຕົນ ເພາະເຫດນີ້ ທີ່ເຮົາຈຶ່ງພົບວ່າພຣະເຢຊູແລະພວກອັຄສາວົກບໍ່ເຄີຍໂຈມຕີເຣື້ອງຣະບົບທາດ ແຕ່ຄໍາສອນຂອງພຣະອົງໄດ້ສອນກ່ຽວກັບຄຸນຄ່າຂອງຊີວິດທຸກຊີວິດ (ມທ 6:26, 10:24-31, ລກ 15) ແລະການຖືວ່າສມາຊິກຄຣິສຈັກທຸກຄົນເປັນພີ່ນ້ອງກັນ ໂດຍບໍ່ຕ້ອງຖືວ່າໃຜເປັນນາຍ ໃຜເປັນທາດຕາມຄໍາສອນໃນພຣະຄັມພີໃໝ່ ຄວາມເຊື່ອແລະການປະຕິບັດຂອງຄຣິສຕຽນແນວນີ້ ໄດ້ທໍາລາຍຣະບົບທາດໄປໃນຕົວ (ຄຕ 3:28, ອຟ 6:5-9, ກຊ 3:11) ຍ້ອນເພາະຄວາມຮັກໃນພຣະເຢຊູຄຣິສເຮັດ ໃຫ້ກໍາແພງທີ່ກີດຂວາງກັ້ນໃຫ້ເກີດຄວາມເປັນນາຍແລະທາດ ໄດ້ຖືກທໍາລາຍລົງຢ່າງສິ້ນເຊີງໂດຍຄວາມເຊື່ອໃນພຣະເຢຊູຄຣິສ (ອຟ 2:14)

### ສອງ. ຜູ້ຂຽນພຣະທັມຟີເລໂມນ

ເຮົາຮູ້ຊັດແຈ້ງວ່າທ່ານໂປໂລແມ່ນຜູ້ຂຽນ (ຟມ 1, 21) ຊຶ່ງເປັນເວລາທີ່ທ່ານຖືກຈໍາຈອງຢູ່ໃນຄຸກ ວັນເວລາແລະສະຖານທີ່ທີ່ຂຽນເປັນເວລາດຽວກັບພຣະທັມໂກໂລຊາຍ ແລະມີສະພາບເຫດການ

ຕ່າງ ໆ ທີ່ເກີດຂຶ້ນໃນຣະຍະເວລາດຽວກັນ ທ່ານໂປໂລໄດ້ຂຽນພຣະທັມໂກໂລຊາຍແລະພຣະທັມຟີເລໂມນ ແລ້ວໄດ້ມອບໃຫ້ທ່ານຕີຂີໂກເປັນຜູ້ຖືຈົດໝາຍທັງສອງສະບັບໄປເມືອງໂກໂລຊາຍ ພ້ອມກັບທ່ານໂອເນຊີໂມ (ກຊ 4:7-9) ທ່ານໂອເນຊີໂມຜູ້ເປັນທາດຂອງທ່ານຟີເລໂມນໄດ້ຫລົບໜີໄປຈາກທ່ານຟີເລໂມນໃນເມືອງໂກໂລຊາຍ ແຕ່ວ່າທ່ານໂປໂລຊ່ວຍໃຫ້ທ່ານໂອເນຊີໂມທີ່ໄດ້ກັບໃຈໃໝ່ເປັນຄຣິສຕຽນ ແລະໃຫ້ລາວກັບຄືນໄປທຳຄວາມເຂົ້າໃຈກັບທ່ານຟີເລໂມນຜູ້ເປັນນາຍ ຊຶ່ງເປັນສິ່ງທີ່ຍາກທີ່ສຸດ ເພາະວ່າໃນສມັຍນັ້ນຫາກວ່າທາດຜູ້ໃດໄດ້ຫລົບໜີຈາກເຈົ້ານາຍ ທາດນັ້ນຈະຕ້ອງຮັບໂທດເຖິງຕາຍ ທ່ານໂປໂລຈຶ່ງຕ້ອງຊ່ວຍຂຽນຈົດໝາຍຝາກມາ ເພື່ອເປັນກຳລັງໃຈໃຫ້ກັບທ່ານໂອເນຊີໂມຜູ້ເປັນທາດ ແລະເພື່ອຊ່ວຍໃຫ້ທ່ານຟີເລໂມນຜູ້ເປັນນາຍເກີດຄວາມເຂົ້າໃຈ ມີຄວາມຮັກຂອງຄຣິສຕຽນ ແລະໃຫ້ເກີດການຍົກໂທດອະໄພບາບຕໍ່ທ່ານໂອເນຊີໂມ ເຫດທີ່ຈົດໝາຍທັງສອງສະບັບສົ່ງໄປດ້ວຍກັນກັບທ່ານຕີຂີໂກກໍ ເພາະວ່າບ້ານຂອງທ່ານຟີເລໂມນຢູ່ໃນເມືອງໂກໂລຊາຍ ຄຣິສຈັກໃນເມືອງໂກໂລຊາຍມີການປະຊຸມນມັສການກັນໃນເຮືອນຂອງທ່ານຟີເລໂມນ (ຟມ 2)

## ສາມ. ທ່ານຟີເລໂມນຜູ້ກັບໃຈເປັນຄຣິສຕຽນ

ທ່ານຟີເລໂມນເປັນຜູ້ທີ່ຮັ່ງມີເປັນຄົນມີຖານະດີຄົນນຶ່ງໃນເມືອງໂກໂລຊາຍ ທ່ານໄດ້ພົບແລະໄດ້ຍິນທ່ານໂປໂລທີ່ເມືອງເອເຟໂຊ ເພາະທ່ານໂປໂລບອກວ່າທ່ານບໍ່ເຄີຍໄປເມືອງໂກໂລຊາຍ(ກຊ 2:1) ດັ່ງນັ້ນເມືອງທີ່ຢູ່ໃກ້ກັບທີ່ທ່ານໂປໂລໄດ້ເດີນທາງໄປຢາມແມ່ນເມືອງເອເຟໂຊ ທ່ານໂປໂລໄດ້ຂຽນຈົດໝາຍເຖິງທ່ານຟີເລໂມນ ດ້ວຍຂໍ້ຄວາມທີ່ສະນິດສນົມ ຄືກັບວ່າມີມິຕພາບທີ່ດີກັນມາກ່ອນ ທ່ານໂປໂລໄດ້ເຕືອນສະຕິທ່ານຟີເລໂມນວ່າ "ສ່ວນທ່ານເປັນໜີ້ເຮົານັ້ນ ຄືຊີວິດຂອງທ່ານເອງ ເຮົາຈະບໍ່ອ້າງເຖິງ" (ຟມ 19) ໃນຂໍ້ນີ້ບໍ່ໄດ້ໝາຍຄວາມວ່າ ທ່ານໂປໂລໄດ້ຊ່ວຍຊີວິດຫລືເປັນໜີ້ຝ່າຍຮ່າງກາຍ ແຕ່ໝາຍຄວາມວ່າ ທ່ານໂປໂລໄດ້ປ່າວປະກາດຂ່າວປະເສີດອັນແທ້ຈິງໃຫ້ທ່ານຟີເລໂມນ ແລະໄດ້ນຳຊີວິດໃໝ່ມາເຖິງທ່ານຟີເລໂມນ ດັ່ງນັ້ນທ່ານຟີເລໂມນຈຶ່ງເປັນໜີ້ຕໍ່ທ່ານໂປໂລໃນຝ່າຍຈິດວິນຍານ

ເມື່ອທ່ານຟີເລໂມນກັບໃຈບັງເກີດໃໝ່ແລ້ວ ທ່ານກໍເປັນຄຣິສຕຽນທີ່ມີຄວາມກະຕືຮືລົ້ນແລະແຂງແຮງ ແລະຮ້ອນໃຈໃນການໃຫ້ຄວາມຊ່ວຍເຫລືອແກ່ຄຣິສຕຽນຄົນອື່ນ ໆ ເຮືອນຂອງທ່ານເປັນສູນກາງທີ່ຄຣິສຕຽນມາປະຊຸມນມັສການ ທັງຕົວຂອງທ່ານກໍເປັນຜູ້ທີ່ມີອິດທິພົນຕໍ່ຄຣິສຕຽນອື່ນ ໆ ດ້ວຍ (ຟມ 2,5) ທ່ານຟີເລໂມນໄດ້ເປັນຜູ້ນຳຄຣິສຈັກໃນເມືອງໂກໂລຊາຍຕອນຍຸກທຳອິດ ດ້ວຍເມດຕາໂອບອ້ອມອາຣີເປີດເຮືອນຂອງທ່ານໃຫ້ເປັນທີ່ສາມັກຄີທັມ ຊຸມເຂົ້າ ແລະນມັສການພຣະເຈົ້າ ຊີວິດຂອງທ່ານຟີເລໂມນເປັນຊີວິດທີ່ເຕັມໄປດ້ວຍຄຳພະຍານ ທີ່ທ່ານໂປໂລເບິ່ງເຫັນຄວາມຫວັງວ່າ ທ່ານຟີເລໂມນຈະມີຄວາມຮັກໃນພຣະເຈົ້າແລະເປັນຄຣິສຕຽນທີ່ເຕີບໂຕພໍ ທີ່ຈະໃຫ້ການຍົກໂທດແກ່ທ່ານໂອເນຊີໂມຜູ້ເປັນທາດຂອງຕົນໄດ້ ແລະຮັບເອົາທ່ານໂອເນຊີໂມມາເປັນອ້າຍນ້ອງໃນພຣະຄຣິສ

## ສີ່. ທ່ານໂອເນຊີໂມຜູ້ເປັນທາດ

ເຣື້ອງໃຫຍ່ໃຈຄວາມຂອງພຣະທັມຟີເລໂມນ ແມ່ນເຣື້ອງຂອງທາດຄົນນຶ່ງຊື່ "ໂອເນຊີໂມ" ທ່ານຜູ້ນີ້ໄດ້ລັກຂະໂມຍຊັບສິນຂອງນາຍ ຄືທ່ານຟີເລໂມນ (ຟມ 18) ແລ້ວຫລົບໜີໄປຍັງກຸງໂຣມ ໂດຍມີຄວາມຄິດວ່າ ກຸງໂຣມເປັນເມືອງຫລວງທີ່ໃຫຍ່ມີຝູງຊົນຫລວງຫລາຍ ທີ່ຈະສາມາດໃຊ້ເປັນທີ່ຫລົບຊ່ອນຕົວໄດ້ດີ ເຮົາບໍ່ຮູ້ຄັກວ່າທ່ານໂອເນຊີໂມຕິດຕໍ່ພົບພໍ້ກັບທ່ານໂປໂລທີ່ກຸງໂຣມໄດ້ແນວໃດ ອາດຈະເປັນເພາະວ່າ ເມື່ອເວລາທີ່ທ່ານໂປໂລພົບພໍ້ກັບທ່ານຟີເລໂມນທີ່ເມືອງເອເຟໂຊນັ້ນ ທ່ານໂອເນຊີໂມຜູ້ເປັນທາດຮັບໃຊ້ທ່ານຟີເລໂມນຢູ່ໃນທີ່ນັ້ນດ້ວຍ ຈຶ່ງໄດ້ຮູ້ຈັກກັບທ່ານໂປໂລແລະຄົງຈະຮູ້ຈັກເບື້ອງຫລັງຂອງທ່ານໂປໂລດີຫລາຍ ທ່ານຮູ້ຈັກວ່າທ່ານໂປໂລເປັນຄຣິສຕຽນທີ່ມີຄວາມຮັກຕໍ່ຜູ້ເປັນທາດ ດັ່ງນັ້ນເມື່ອມາຢູ່ກຸງໂຣມແລະໄດ້ຮັບຄວາມເດືອດຮ້ອນ ຍ້ອນເພາະຕ້ອງຫລົບໜີ ກໍອາດຄິດຮອດຫາທ່ານໂປໂລ ຈຶ່ງໄດ້ເປັນເຫດໃຫ້ທ່ານຊອກຫາທ່ານໂປໂລໃນຄຸກທີ່ກຸງໂຣມ ສິ່ງທີ່ສຳຄັນຄື ເມື່ອທ່ານໂອເນຊີໂມພົບພໍ້ກັບທ່ານໂປໂລແລ້ວ ທ່ານໂປໂລກໍໄດ້ນຳໃຫ້ທ່ານໂອເນຊີໂມມີຄວາມເຊື່ອໃນພຣະຄຣິສ ແລະໄດ້ກັບໃຈບັງເກີດໃໝ່ເປັນຄຣິສຕຽນ (ຟມ 10)

ແຕ່ທາດສົມຄວນຈະເຮັດແນວໃດຕໍ່ຄວາມຜິດທີ່ຕົນມີຢູ່ ໃນເມື່ອດຽວນີ້ລາວເປັນຄຣິສຕຽນແລ້ວທ່ານໂປໂລແນະນຳໃຫ້ທ່ານໂອເນຊີໂມກັບເມືອຫານາຍຂອງຕົນ ຜູ້ຊຶ່ງລາວໄດ້ເຮັດຜິດ ແລະພິສູດຕົນເອງແກ່ນາຍ ໃຫ້ເຫັນວ່າຕົນໄດ້ກັບໃຈໃໝ່ເປັນຄົນທີ່ໄວ້ວາງໃຈໄດ້ອີກເທື່ອນຶ່ງ ລາວຄວນຈະກັບເມືອໄປຍັງທີ່ ໆ ລາວເຮັດຜິດແລະຕັ້ງຕົ້ນຈາກທີ່ນັ້ນ ທ່ານໂອເນຊີໂມກໍຍອມປະຕິບັດຕາມຄຳແນະນຳ ທ່ານໂປໂລຈຶ່ງໄດ້ສົ່ງທ່ານກັບເມືອພ້ອມກັບຈົດໝາຍພຣະທັມຟີເລໂມນທີ່ທ່ານຕີຂີໂກຖືໄປ ເພື່ອຂໍຄວາມເຫັນໃຈແລະການອະໄພຈາກຟີເລໂມນຜູ້ເປັນນາຍ ແລະໄດ້ເປັນຄຣິສຕຽນນຳກັນ

ການເຮັດແນວນີ້ເປັນບາດກ້າວທີ່ອັນຕລາຍທີ່ສຸດ ເພາະເຈົ້າຂອງຫລືນາຍທາດມີສິດທີ່ຈະລົງໂທດແນວໃດກໍໄດ້ ຊຶ່ງເປັນສິ່ງທີ່ຖືກຕ້ອງຕາມກົດໝາຍໃນສມັຍນັ້ນ ການລົງໂທດອາດຈະເປັນການຂ້ຽນຕີ ທໍຣະມານ ຫລືຂ້າຖິ້ມກໍໄດ້ ໃນເມື່ອຜູ້ກ່ຽວເປັນທາດທີ່ບໍ່ສັດຊື່ ທ່ານໂປໂລເປັນຫ່ວງຫລາຍທີ່ສຸດໃນການສົ່ງທ່ານໂອເນຊີໂມກັບຄືນຫາເຈົ້ານາຍ ດ້ວຍຄວາມຮັກຂອງຄຣິສຕຽນທ່ານໂປໂລໄດ້ພຍາຍາມຫລາຍທີ່ສຸດທີ່ຈະຊ່ວຍເຫລືອທ່ານໂອເນຊີໂມໃຫ້ກັບຄືນດີກັບທ່ານຟີເລໂມນຜູ້ເປັນເຈົ້ານາຍ ທ່ານໂປໂລໃຫ້ທ່ານໂອເນຊີໂມໄປນຳທ່ານຕີຂີໂກຜູ້ຖືຈົດໝາຍ ແລະເພື່ອວ່າທ່ານຕີຂີໂກຈະໄດ້ມີໂອກາດເວົ້ານຳທ່ານຟີເລໂມນເປັນການສ່ວນຕົວໃນເຣື້ອງຂອງທ່ານໂອເນຊີໂມ ນອກຈາກນັ້ນແລ້ວທ່ານໂປໂລຍັງໄດ້ຂຽນຈົດໝາຍເປັນການສ່ວນຕົວໃຫ້ແກ່ທ່ານຟີເລໂມນແລະຄອບຄົວ ເພື່ອອ້ອນວອນແທນທ່ານໂອເນຊີໂມຜູ້ໄດ້ເຮັດຜິດແລະກັບໃຈມີຊີວິດໃໝ່ ທ່ານໂປໂລມີຄວາມຫວັງວ່າ ດ້ວຍຄວາມຮັກຂອງຄຣິສຕຽນດ້ວຍກັນການອະໄພໂທດຈະເກີດຂຶ້ນ ແລະກັບຄືນດີກັນໃໝ່ອີກ

## ຫ້າ. ສາຣະສຳຄັນແລະເນື້ອນັຍຂອງພຣະທັມຟີເລໂມນ

ຈົດໝາຍພຣະທັມຟີໂລໂມນບໍ່ແມ່ນເປັນຈົດໝາຍລັບ ແຕ່ເປັນຈົດໝາຍທີ່ເປີດເຜີຍ ທ່ານໂປໂລມີຄຳຂຶ້ນຕົ້ນຂອງຈົດໝາຍບໍ່ແມ່ນເຖິງທ່ານຟີເລໂມນເທົ່ານັ້ນ ແຕ່ທ່ານໂປໂລໄດ້ຂຽນເຖິງ "ອັບເຟັຽ" ພັລຍາຂອງທ່ານຟີເລໂມນ ແລະລູກຊາຍຂອງທ່ານຊື່ "ອາຂີໂປ" ດ້ວຍ ນອກຈາກນັ້ນກໍຍັງຂຽນເຖິງກຸ່ມ

ຄຣິສຕຽນທີ່ປະຊຸມນມັສການໃນເຮືອນຂອງທ່ານດ້ວຍ

ທ່ານໂປໂລໄດ້ໃຫ້ການຍົກຍໍທ່ານຟີເລໂມນ ແລະໄດ້ໂມທນາພຣະຄຸນພຣະເຈົ້າໃນການດີທຸກສິ່ງ ຊຶ່ງສະຫາຍຂອງທ່ານໄດ້ເຮັດ (ຟມ 4-7) ແລ້ວທ່ານໂປໂລຈຶ່ງຂໍໃຫ້ເຫັນແກ່ທ່ານ ໃຫ້ທ່ານຟີເລໂມນ ຍົກໂທດແລະຍອມຮັບທາດຂອງຕົນຄືນ ທາດຜູ້ນັ້ນດຽວນີ້ເປັນຄຣິສຕຽນແລ້ວ ທ່ານໄດ້ນຳສເນີດ້ວຍຄວາມ ເວົ້າທີ່ເຮັດໃຫ້ເກີດຄວາມເຂົ້າໃຈທີ່ດີ ແລະດ້ວຍຄວາມຮັກຂອງຄຣິສຕຽນ (ຟມ 8-22) ທ່ານຫລີ້ນ ຄຳເວົ້າໃນຂໍ້ 11 ແລະ 20 ຊື່ "ໂອເນຊີໂມ" ໃນພາສາກຣີກແປວ່າ ທີ່ເປັນປໂຍດ ຫລືທີ່ໃຊ້ໄດ້ ກຳໄລ ຫລືທີ່ຊ່ວຍເຫລືອ ຫລືທີ່ສົງເຄາະ ທ່ານໂປໂລຍອມຮັບວ່າທ່ານໂອເນຊີໂມຜູ້ເປັນທາດໄດ້ປະພຶດ ບໍ່ສົມຄວນກັບຊື່ຂອງລາວ ຄື ບໍ່ໄດ້ເປັນປໂຍດ ແຕ່ທ່ານໂປໂລຊີ້ໃຫ້ເຫັນວ່າ "ແຕ່ບັດນີ້ກໍເປັນປໂຍດ" ແລະຂໍໃຫ້ທ່ານຟີເລໂມນໄດ້ຮັບປໂຍດເພາະເຫັນແກ່ອົງພຣະຜູ້ເປັນເຈົ້າ ໃຫ້ມີຈິດໃຈຊຸ່ມເຢັນຂຶ້ນໃນຖານະ ເປັນຄຣິສຕຽນຮ່ວມກັນ

ທ່ານໂປໂລໄດ້ລົງລາຍມືຂຽນຂອງຕົນເອງວ່າ **"ຂ້າພະເຈົ້າໂປໂລ ຈະໃຊ້ແທນໃຫ້"** (ຟມ 18) ເພື່ອເປັນການຢັ້ງຢືນວ່າ ທ່ານມີຄວາມຍິນດີທີ່ຈະມີສ່ວນຮັບຜິດຊອບດ້ວຍ ຄືກັນກັບຊາວຊະມາເຣັຽໃຈດີ ທີ່ໄດ້ຮັບຜິດຊອບຈະຈ່າຍຫນີ້ສ່ວນທີ່ຍັງຂາດຢູ່ເມື່ອຕ່າວຄືນມາ ໃນພຣະທັມລູກາ 10:35 ຄວາມຮັກເຊັ່ນ ນີ້ຂອງທ່ານໂປໂລໄດ້ເປັນແບບຢ່າງແກ່ຟີເລໂມນ ທ່ານໂປໂລຫມັ້ນໃຈວ່າທ່ານຟີເລໂມນຈະເຊື່ອຟັງທ່ານ ແລະຈະເຮັດລື່ນກວ່າ (ຫລາຍກວ່າ) ທີ່ທ່ານໂປໂລໄດ້ໃຫ້ການແນະນຳໄວ້ອີກ (ຟມ 21) ຄວາມຈິງ ທີ່ຈົດຫມາຍພຣະທັມຟີເລໂມນໄດ້ຖືກເກັບຮັກສາໄວ້ມາຮອດເຖິງເຮົາໃນປັດຈຸບັນ ຍ່ອມສະແດງວ່າໃຫ້ ເຫັນຊັດແຈ້ງວ່າ ທ່ານໂປໂລຊນະໃຈຂອງທ່ານຟີເລໂມນ ແລະທ່ານຟີເລໂມນໄດ້ໃຫ້ອະໄພໂທດແກ່ທ່ານ ໂອເນຊີໂມຜູ້ເປັນທາດ ພຣະທັມສະບັບນີ້ຈຶ່ງໄດ້ປາກົດຢູ່ໃນພຣະຄັມພີເທົ່າທຸກວັນນີ້

ເມື່ອພວກເຮົາອ່ານພົບເຣື້ອງຄວາມເປັນທາດໃນພຣະຄັມພີໃຫມ່ ອາດຈະມີຂໍ້ສົງສັຍວ່າເປັນຫຍັງ ທ່ານໂປໂລຈຶ່ງບໍ່ໄດ້ນຳພາໃຫ້ເກີດການຕໍ່ສູ້ທາງກົດຫມາຍເຣື້ອງການເລີກທາດ ໃນພຣະທັມຈົດຫມາຍ ໂກໂລຊາຍ 3:18-4:1 ທ່ານໂປໂລໄດ້ເວົ້າເຖິງສມາຊິກໃນຄົວເຮືອນ ທ່ານໄດ້ສອນໃຫ້ຜູ້ທີ່ເປັນ ທາດໃຫ້ເຮັດດ້ວຍນ້ຳໃສໃຈຈິງ ເຮັດດ້ວຍຄວາມເຕັມໃຈແລະດ້ວຍຄວາມເຊື່ອຟັງ ທ່ານໂປໂລອາດເຫັນ ໄດ້ວ່າຄຣິສຕຽນຍັງເປັນກຸ່ມຄົນຈຳນວນນ້ອຍ ບໍ່ມີທີນທາງໂດຍກົງທີ່ຈະປ່ຽນແປງຣະບົບທາດໄດ້ ແລະ ເປັນອັນຕຣາຍຕໍ່ຄຣິສຕຽນທີ່ຈະຕໍ່ຕ້ານກົດຫມາຍໃນເວລານັ້ນ ແຕ່ວ່າທ່ານໂປໂລມີໃຈປາຖນາ ຕ້ອງ ການໃຫ້ຄຣິສຕຽນເພີ່ມຈຳນວນຫລາຍທີ່ສຸດເທົ່າທີ່ຈະຫລາຍໄດ້ ແລະໂດຍໄວທີ່ສຸດ ເພາະດ້ວຍຄວາມຮັກ ຂອງຄຣິສຕຽນຈະນຳພາຣະບົບທາດອ່ອນກຳລັງໄປໃນທີ່ສຸດ ທ່ານໄດ້ເນັ້ນຫນັກໃນສິ່ງທີ່ສົມຄວນຈະເນັ້ນ ແມ່ນສິ່ງທີ່ເປັນຮາກຖານຄື ຄວາມເຊື່ອໃນພຣະຄຣິສ ແລະມິດພາບແຫ່ງຄວາມຮັກອັນແທ້ຈິງຣະຫວ່າງ ຄຣິສຕຽນດ້ວຍກັນ ນີ້ແຫລະສາມາດປ່ຽນແປງ ແລະນຳຄົນທຸກຊັ້ນເຂົ້າມາມີມິຕພາບດຽວກັນໄດ້ ເພາະ ສະນັ້ນຜູ້ທີ່ເປັນທາດຈຶ່ງກາຍເປັນ "ອ້າຍນ້ອງທີ່ຮັກ" (ຟມ 16) ຄວາມຈິງອີກຂໍ້ນຶ່ງທີ່ສຳຄັນ ຄືໂດຍ ຄວາມເຊື່ອແລະການຂັບຕາມຊີວິດຄຣິສຕຽນຂອງທ່ານໂອເນຊີໂມ ທ່ານກາຍເປັນຄົນທີ່ຄວນແກ່ການນັບຖື ແລະມີອິສຣະ ໃນຄວາມເຊື່ອຂອງຄຣິສຕຽນຜູ້ເປັນທາດໄດ້ກັບກາຍເປັນບຸກຄົນໃຫມ່ອີກເທື່ອນຶ່ງ ພວກ ທາດບໍ່ຕ້ອງເປັນຊັບສົມບັດຂອງນາຍອີກຕໍ່ໄປ ດັ່ງນັ້ນຄວາມເປັນທາດກໍຈະສິ້ນສຸດລົງ

ບົດຮຽນສຳຄັນທີ່ເຮົາໄດ້ຈາກພຣະທັມຟີເລໂມນເຫລັ້ມນ້ອຍ ໆ ຄື ຄວາມຮັກຂອງຄຣິສຕຽນທີ່ເກີດຈາກຄວາມຮັກຂອງພຣະຄຣິສໃນຕົວຂອງທ່ານໂປໂລ ເຮົາເຫັນໄດ້ວ່າ ທ່ານໂປໂລມີຄວາມຮັກຂອງພຣະຄຣິສທີ່ປາກົດໃນພຣະທັມຟີເລໂມນທີ່ເປັນແບບຢ່າງແກ່ເຮົາ ດັ່ງນີ້

1. ດ້ວຍຄວາມຮັກຂອງພຣະຄຣິສ ທ່ານໂປໂລຂອບຄຸນພຣະເຈົ້າໃນສ່ວນດີຂອງຜູ້ອື່ນ (ຟມ 4,5)
2. ດ້ວຍຄວາມຮັກຂອງພຣະຄຣິສ ທ່ານໂປໂລຊອກຫາທາງໃຫ້ຜູ້ອື່ນເກີດຄວາມບໍ່ຣິບູນ (ຟມ 10)
3. ດ້ວຍຄວາມຮັກຂອງພຣະຄຣິສ ທ່ານໂປໂລແກ້ໄຂບັນຫາດ້ວຍຄວາມຈິງໃຈຕໍ່ຜູ້ອື່ນ (ຟມ 12)
4. ດ້ວຍຄວາມຮັກຂອງພຣະຄຣິສ ທ່ານໂປໂລຍອມຮັບຜູ້ອື່ນເປັນອ້າຍນ້ອງທີ່ຮັກ (ຟມ 16)
5. ດ້ວຍຄວາມຮັກຂອງພຣະຄຣິສ ທ່ານໂປໂລຮ່ວມຮັບຜິດຊອບກັບຜູ້ອື່ນ (ຟມ 18)
6. ດ້ວຍຄວາມຮັກຂອງພຣະຄຣິສ ທ່ານໂປໂລເຊື່ອໃນສ່ວນດີຂອງຜູ້ອື່ນ (ຟມ 21)

ສະຫງວນລິກຂະສິດ Copyright©Thira Siengsukon
In compliance with copyright restrictions, no portion of these materials may be reproduced in any form without written permission of the writer.

Feb. 3, 98
วัน 2-3-98

# ບົດທີ 12

## ພຣະນິມິດ
## ການສຳແດງຂອງພຣະເຈົ້າແກ່ທ່ານໂຢຮັນ

**ຂໍ້ໄຂພຣະທັມພຣະນິມິດ**

*ຂ້າພະເຈົ້າ (ໂຢຮັນ) ໄດ້ຍິນສຽງດັງມາຈາກພຣະຣາຊບັນລັງວ່າ "ເບິ່ງແມ ທີ່ສະຖິດ (ພລັບພລາ) ຂອງພຣະເຈົ້າກໍຢູ່ກັບມະນຸດແລ້ວ ພຣະອົງຈະຊົງສຖິດຢູ່ກັບເຂົາ ເຂົາພວກນັ້ນແຫລະ ຈະເປັນໄພ່ພົນຂອງພຣະອົງ ແລະພຣະເຈົ້າເອງຈະປະທັບຢູ່ກັບເຂົາ ພຣະເຈົ້າຈະຊົງເຊັດນ້ຳຕາທຸກ ໆ ຢົດຈາກຕາຂອງເຂົາ ຄວາມຕາຍຈະບໍ່ມີອີກຕໍ່ໄປ ຄວາມໂສກເສົ້າ ການຮ້ອງໄຫ້ ແລະຄວາມເຈັບປວດຈະບໍ່ມີອີກຕໍ່ໄປ ເພາະສິ່ງທີ່ມີຢູ່ຄາວກ່ອນນັ້ນກໍລ່ວງໄປແລ້ວ*

*(ພຣະນິມິດ 21:3-4)*

**ນຶ່ງ. ພຣະທັມສະບັບຕົ້ນແລະພຣະທັມສະບັບສຸດທ້າຍ**

ພຣະທັມປະຖົມມະການເປັນພຣະທັມສະບັບຕົ້ນຂອງພຣະຄຣິສທັມຄັມພີ ທີ່ມີຄວາມສຳຄັນໃນການເປີດເຜີຍໃຫ້ເຮົາໄດ້ຮູ້ຈັກຄວາມເປັນມາຂອງສັພສິ່ງທັງມວລຢ່າງອັສຈັນໃຈ ພຣະທັມພຣະນິມິດເປັນພຣະທັມສະບັບສຸດທ້າຍຂອງພຣະຄຣິສທັມຄັມພີ ທີ່ຈົບລົງດ້ວຍການສຳແດງຂອງພຣະເຢຊູຄຣິສຢ່າງມີສງ່າຣາສີອັນຍິ່ງໃຫຍ່ ໃນທີ່ສຸດພຣະເຈົ້າມີໄຊຊະນະໃນສັພສິ່ງທັງປວງ ດ້ວຍວ່າສິ່ງຕ່າງ ໆ ທີ່ໄດ້ເລີ້ມຕົ້ນໃນພຣະທັມປະຖົມມະການໄດ້ນຳມາເຖິງຄວາມສຳເຣັດຢ່າງບໍຣິບູນ

- ໃນພຣະທັມປະຖົມມະການ ຟ້າສວັນແລະແຜ່ນດິນໂລກໄດ້ຖືກເນຣະມິດສ້າງ
  - ໃນພຣະທັມພຣະນິມິດ ເຮົາໄດ້ເຫັນຟ້າສວັນແລະໂລກໃຫມ່
- ໃນພຣະທັມປະຖົມມະການ ໄດ້ປາກົດມີດວງອາທິດແລະດວງຈັນ
  - ໃນພຣະທັມພຣະນິມິດ ເຮົາໄດ້ອ່ານພົບວ່າຈະບໍ່ມີດວງອາທິດແລະດວງຈັນອີກຕໍ່ໄປ ເພາະພຣະເຢຊູຄຣິສເປັນຄວາມສວ່າງຂອງສວັນ
- ໃນພຣະທັມປະຖົມມະການມີສວນເອເດັນ
  - ໃນພຣະນິມິດມີເມືອງສວັນອັນບໍຣິສຸດ
- ໃນພຣະທັມປະຖົມມະການ ຄວາມຜິດບາບໄດ້ເລີ້ມຕົ້ນ
  - ໃນພຣະນິມິດ ຄວາມຜິດບາບຖືກທຳລາຍ
- ໃນພຣະທັມປະຖົມມະການ ມີການແຕ່ງງານຂອງອາດາມຊຶ່ງເປັນມະນຸດຜູ້ແລກ
  - ໃນພຣະນິມິດ ມີການແຕ່ງຄັ້ງຍິ່ງໃຫຍ່ຂອງອາດາມຜູ້ທີສອງ ຄືພຣະເຢຊູຄຣິສ

## ສອງ. ພື້ນເບື້ອງຫລັງຂອງພຣະທັມພຣະນິມິດ

ຊື່ພຣະທັມພຣະນິມິດໃນພາສາອັງກິດຄື Revelation ມາຈາກຮາກສັບພາສາກຣີກຂອງຄໍາວ່າ ອະພອຄຄະລິພສ໌ (apocalypse) ຫມາຍເຖິງການເປີດເຜີຍບາງສິ່ງບາງຢ່າງທີ່ແອບມິດໄວ້ໃຫ້ເຫັນແຈ້ງ ຄວາມແລກຂອງພຣະທັມພຣະນິມິດໄດ້ບົ່ງບອກໄວ້ຢ່າງຊັດແຈ້ງວ່າ **"ການຊົງສໍາແດງ** (ຫລືເປີດເຜີຍ) **ຂອງພຣະເຢຊູຄຣິສ"** ຊຶ່ງເປັນຄວາມຫມາຍແລະທີ່ມາຂອງຊື່ພຣະທັມເຫລັ້ມນີ້ ພຣະຄຣິສທັມຄັມພີສະບັບພາສາໄທຍ ຊື່ພຣະທັມເຫລັ້ມນີ້ມີຊື່ວ່າ **"ວິວອນ"** ຊຶ່ງມີຮາກສັບມາຈາກພາສາບາລີ ແປວ່າ ການເປີດ ການເຜີຍ ການໄຂຄວາມ ຊຶ່ງມີຄວາມຫມາຍກົງກັບຄໍາວ່າ Revelation ສ່ວນພຣະຄຣິສທັມຄັມພີພາສາລາວໃຊ້ຊື່ພຣະທັມສະບັບນີ້ວ່າ **"ພຣະນິມິດ"** ຊຶ່ງມີຮາກສັບມາຈາກພາສາບາລີຄືກັນ ແປວ່າ ເຄື່ອງຫມາຍ ລາງ ເຫດ ເປັນເຄື່ອງຫມາຍໃຫ້ຮູ້ສິ່ງທີ່ປາກົດໂດຍທົ່ວໄປ ເຫດທີ່ຜູ້ແປພຣະຄຣິສທັມຄັມພີພາສາລາວໃຊ້ຄໍາວ່າ **ພຣະນິມິດ** ເພາະເປັນຄໍາທີ່ນິຍົມໃຊ້ກັນໃນພາສາລາວ ແລະທຸກຄົນລົ້ງເຄີຍຫລາຍກວ່າຄໍາວ່າ **"ວິວອນ"** ແລະເຫດຜົນອີກປະການນຶ່ງກໍຄື ເນື້ອຄວາມຂອງພຣະທັມສະບັບນີ້ເປັນຮູບພາບທີ່ເປັນເຄື່ອງຫມາຍສັນຍາລັກສ່ວນຫລາຍ ທີ່ຈຶ່ງກໍມີຄວາມຖືກຕ້ອງ ເພາະສິ່ງທີ່ພຣະເຈົ້າສໍາແດງທາງພຣະເຢຊູຄຣິສຜ່ານທາງທູດສວັນ (ເທວະດາ) ປາກົດອອກມາເປັນນິມິດ (Vision) ແຕ່ຊື່ພາສາອັງກິດຕ້ອງການເນັ້ນນໍ້າຫນັກໃຫ້ຄັດແລະຊັດແຈ້ງວ່າ ພຣະນິມິດທີ່ປາກົດອອກໃຫ້ເຫັນເປັນການສໍາແດງຂອງພຣະເຢຊູຄຣິສ (ພນ 1:1) ຄືພຣະເຢຊູຄຣິສເປັນເຫດ ແລະຫົວໃຈສໍາຄັນຂອງການເປີດເຜີຍຫລືການສໍາແດງ ສາເຫດສໍາຄັນທີ່ພຣະທັມສະບັບນີ້ໄດ້ຂຽນອອກມາໃນເທື່ອທໍາອິດ ເພາະຄຣິສຕຽນຜູ້ທີ່ເຊື່ອແລະຈົ່ງຮັກພັກດີຕໍ່ພຣະເຢຊູຄຣິສບໍ່ຍອມກົ້ມຂາບໄຫວ້ຮູບເຄົາຣົບທີ່ເປັນພຣະຂອງສາສນາອື່ນ ຈຶ່ງເປັນສາເຫດໃຫ້ຄຣິສຕຽນຖືກຂົ່ມເຫັງທໍຣະມານ ຮັດໃຫ້ເກີດຄວາມມືດທຶບແລະສົງສັຍວ່າ ພຣະເຈົ້າຢູ່ແຫ່ງຫົນໃດ ຈຶ່ງບໍ່ໄດ້ຊ່ວຍປົດປ່ອຍພວກເຂົາໃຫ້ຫລຸດຈາກຄວາມທຸກຍາກນັ້ນ ເມື່ອພຣະທັມພຣະນິມິດປາກົດອອກມາ ຮັດໃຫ້ຄຣິສຕຽນເຫັນແຈ້ງ ຄວາມມືດທຶບແລະຄວາມສົງສັຍຖືກທໍາລາຍ ເພາະພຣະເຢຊູຄຣິສໄດ້ເປີດເຜີຍສໍາແດງໃຫ້ເຫັນວ່າ ໃນທີ່ສຸດພຣະອົງຈະມີໄຊຊນະຢ່າງເດັດຂາດ ແລະຜູ້ທີ່ອົດທົນຢູ່ໃນຝ່າຍຂອງພຣະອົງກໍຈະມີສ່ວນຮ່ວມສະງ່າຣາສີກັບພຣະອົງດ້ວຍ

ເມື່ອເຮົາສຶກສາເຖິງຈຸດນີ້ ອາດຈະມີຄໍາຖາມ ໆ ຂຶ້ນວ່າ "ດ້ວຍເຫດໃດພວກຄຣິສຕຽນຈຶ່ງຖືກຂົ່ມເຫັງຢ່າງຫລວງຫລາຍ" ການຂົ່ມເຫັງໄດ້ເກີດຂຶ້ນໃນຕອນປາຍຂອງສັຕວັດທີ່ນຶ່ງ ເພາະມີຄໍາບັນຊາຈາກມຫາຈັກກະພັດໂຣມັນວ່າ ໃຫ້ປະຊາກອນໃນອານາຈັກໂຣມັນນມັສການມຫາຈັກກະພັດ ຄໍາບັນຊານີ້ສ້າງຄວາມເດືອດຮ້ອນໃຈໃຫ້ກັບຊາວຢິວ ແລະຄຣິສຕຽນຢ່າງຫລວງຫລາຍໃນແຂວງເອເຊັຽນ້ອຍ (Asia Minor) ເພາະວ່າໃນທີ່ນັ້ນ ມີພຣະວິຫານ ພວກປະໂລຫິດ ແລະການເຊື່ອຖືແລະສາສນາພິທີຢ່າງຫລວງຫລາຍຂອງຊາວຢິວ ແຕ່ພວກໂຣມັນຖືວ່າ ການນມັສການມຫາຈັກກະພັດເປັນການສະແດງຄວາມຮັກຊາດຢ່າງເຂັ້ມແຂງ ເພາະພວກເຂົາເຊື່ອຖືວ່າມຫາຈັກກະພັດເປັນພຣະເຈົ້າ ເມື່ອມຫາຈັກກະພັດອົງນຶ່ງອົງໃດສິ້ນພຣະຊົນກໍມີການປະກາດວ່າ ມຫາຈັກກະພັດອົງນັ້ນ ໆ ເປັນພຣະເຈົ້າ **ມຫາຈັກກະພັດຄາລິກູລາ** (Caligula ຄ.ສ. 37-41) ເປັນອົງທໍາອິດທີ່ປະຊາຊົນຊາວໂຣມັນຕ້ອງການພຍາຍາມຍົກຂຶ້ນໃຫ້ເປັນພຣະເຈົ້າ ມຫາຈັກກະພັດຄາລິກູລາເກືອບຈະປະຫານຊີວິດຊາວຢິວຈໍານວນຫລວງຫລາຍ ທີ່ບໍ່ຍອມຂາບໄຫວ້ນມັສການພຣະອົງຕາມທີ່ໄດ້ບັນຊາໄວ້ ເພາະພວກຢິວມີຄວາມເຊື່ອຢ່າງຫນັກແຫນ້ນຫມັ້ນຄົງວ່າມີພຣະເຈົ້າອົງດຽວ ມຫາຈັກກະພັດຄາລິກູລາໄດ້ຮັບສັ່ງໃຫ້ຕັ້ງຮູບຫລໍ່ຂອງພຣະອົງຂຶ້ນໃນພຣະວິຫານທີ່ກຸງເຢຣູຊາເລັມ ພວກຢິວໃນເວລານັ້ນກໍພ້ອມທີ່ຈະເອົາຊີວິດເຂົາຕໍ່ສູ້ ແຕ່ພຣະເຈົ້າຊົງເມດຕາແລະຟັງຄໍາ

ອະທິຖານຂອງຊາວຢິວ ມຫາຈັກກະພັດຄາລິກູລາໄດ້ສິ້ນພຣະຊົນກ່ອນທີ່ຈະເຮັດໃຫ້ສຳເຣັດ ຈາກນັ້ນແຜນງານຂອງພຣະອົງກໍລົ້ມເລີກໄປ

**ມຫາຈັກກະພັດໂດມິຊຽນ** (Domitian ຄ.ສ. 81-96) ເປັນມຫາຈັກກະພັດອົງຕໍ່ໄປທີ່ມີການອ້າງຕົວວ່າເປັນພຣະເຈົ້າ ໃນຕອນທ້າຍຂອງການຄອງຣາຊຂອງພຣະອົງໄດ້ມີການສນັບສນູນໃຫ້ປະຊາຊົນນມັສການພຣະອົງເປັນພຣະເຈົ້າ ມຫາຈັກກະພັດໂດມິຊຽນມັກໃຫ້ຜູ້ຄົນເອີ້ນພຣະອົງວ່າ ອົງພຣະຜູ້ເປັນເຈົ້າແລະພຣະເຈົ້າ" ເຊື່ອວ່າໃນພຣະທັມໂຢຮັນ 20:28 ຄຳສາຣະພາບຂອງທ່ານໂທມາທີ່ທູນຕອບພຣະເຢຊູວ່າ "ອົງພຣະຜູ້ເປັນເຈົ້າຂອງຂ້າພຣະອົງ ແລະພຣະເຈົ້າຂອງຂ້າພຣະອົງ" ເປັນຕອນທີ່ໄດ້ຂຽນຂຶ້ນໃນຣະຍະເວລານີ້ ເພື່ອຕໍ່ຕ້ານວ່າ ອົງພຣະຜູ້ເປັນເຈົ້າທີ່ພວກຄຣິສຕຽນຖວາຍກຽດຕິຍົດວ່າເປັນພຣະເຈົ້ານັ້ນແມ່ນພຣະເຢຊູຄຣິສ ບໍ່ແມ່ນມຫາຈັກກະພັດໂດມິຊຽນ

ສຳລັບປະຊາຊົນພວກທີ່ນິຍົມພວກໂຣມັນຈຳນວນຫລາຍ ເມື່ອໄດ້ຍິນຄຳອ້າງອົງຂອງມຫາຈັກກະພັດໂດມິຊຽນບໍ່ມີບັນຫາຫຍັງເກີດຂຶ້ນ ເພາະພວກເຂົາເຄີຍນມັສການພຣະເຈົ້າຫລາຍອົງຢູ່ແລ້ວ ຈະເພີ່ມພຣະຫລາຍຂຶ້ນອີກສັກອົງນຶ່ງກໍບໍ່ເປັນຫຍັງ ເພາະໃນຊີວິດປະຈຳວັນທີ່ພວກເຂົາປະກອບອາຊີພຢູ່ນັ້ນ ມີການບູຊາພຣະຫລາຍອົງທີ່ປະຈຳໃນບ່ອນຕ່າງ ໆ ຕາມການລ້ຽງຊີບຂອງເຂົາເຕັມໄປຫມົດ ພວກເຂົາຖືວ່າເຣື່ອງຢ່າງນີ້ເຮັດໄປຕາມພິທີເທົ່ານັ້ນ ບໍ່ມີຄວາມຈິງຈັງແນວໃດ ແລະຖືວ່າເປັນຫນ້າທີ່ ໆ ຈະຕ້ອງເຮັດຕໍ່ສັງຄົມ ແຕ່ຄຣິສຕຽນບໍ່ຍອມນມັສການມຫາຈັກກະພັດ ຫລືພຣະຕ່າງ ໆ ໃນສາສນາອື່ນ ໆ ທີ່ມີຢູ່ໃນສັງຄົມ ແລະບໍ່ຍອມເຮັດຕາມຜູ້ອື່ນໂດຍຖືວ່າເປັນພຽງແຕ່ພິທີເທົ່ານັ້ນ ເພາະຄຣິສຕຽນຖືວ່າ "ແຕ່ສຳລັບພວກເຮົານັ້ນມີພຣະເຈົ້າອົງດຽວຄື ພຣະບິດາ ແລະສິ່ງສາຣະພັດທັງປວງບັງເກີດມາຈາກພຣະອົງ ແລະພວກເຮົາເປັນມາເພື່ອພຣະອົງ ແລະມີອົງພຣະຜູ້ເປັນເຈົ້າອົງດຽວ ຄືພຣະເຢຊູຄຣິສ ແລະສິ່ງສາຣະພັດກໍບັງເກີດຂຶ້ນໂດຍພຣະອົງ ແລະເຮົາກໍເປັນມາໂດຍພຣະອົງ (1 ກທ 8:6) ນັ້ນບໍ່ໄດ້ຫມາຍຄວາມວ່າ ຄຣິສຕຽນບໍ່ມີຄວາມເຄົາຣົບຕໍ່ຜູ້ປົກຄອງຫລືຣັຖບານ ທີ່ຈິງແລ້ວຄຣິສຕຽນໃຫ້ຄວາມເຄົາຣົບນັບຖືຕໍ່ອຳນາດການປົກຄອງ ແລະອະທິຖານເພື່ອຜູ້ປົກຄອງບ້ານເມືອງເຫລົ່ານັ້ນ (ຣມ 13:1-8, 1 ຕທ 2:1-2) ດ້ວຍຄວາມບໍ່ເຂົ້າໃຈນີ້ເອງ ເຮັດໃຫ້ຄຣິສຕຽນຖືກໂຈມຕີ ແລະຖືກກ່າວຫາວ່າເປັນຄົນບໍ່ຮັກຊາດ ປະຊາຊົນພາກັນເວົ້າວ່າ ຊາວໂຣມັນທີ່ຮັກຊາດຈະຮັບຄວາມເຊື່ອຂອງຄຣິສຕຽນບໍ່ໄດ້ ແລະຣັຖບາລໂຣມບໍ່ຄວນໃຫ້ການຜ່ອນຜັນຕໍ່ຄວາມເຊື່ອຂອງຄຣິສຕຽນ (ກຈ 1:20) ລາງເທື່ອພວກຄຣິສຕຽນກໍຖືກປະນາມວ່າເປັນສັດຕູຂອງສັງຄົມ ຄົນທຸກພວກໃນສັງຄົມ ທຸຣະກິຈ ແລະການເມືອງ ມີພຣະເຈົ້າຂອງເຂົາອຸປະຖັມ ແຕ່ຄວາມເຊື່ອໃຫມ່ຂອງຄຣິສຕຽນຮຽກຮ້ອງໃຫ້ລະຖິ້ມຈາກພຣະທຽມມາຫາພຣະເຈົ້າ ເພື່ອຮັບໃຊ້ພຣະເຈົ້າຜູ້ຊົງພຣະຊົນຢູ່ແລະຜູ້ທ່ຽງແທ້ (1 ທຊ 1:9) ຕໍ່ມາອີກບໍ່ດົນພວກຄຣິສຕຽນກໍຖືກຄົນທີ່ຢູ່ໃນສັງຄົມໂຣມັນເອີ້ນວ່າ ເປັນພວກບໍ່ມີພຣະເຈົ້າ (ຕາມພວກເຂົາ) ເພາະວ່າໃນໂລກຂອງຄົນໃນສມັຍນັ້ນ ຄົນສ່ວນຫລາຍເຊື່ອຖືພຣະຫລາຍອົງເປັນພຣະເຈົ້າ ໃນທີ່ນີ້ຫມາຍຄວາມວ່າຄຣິສຕຽນຈະເຂົ້າສ່ວນກັບສັງຄົມບໍ່ໄດ້ ເພາະໃນສັງຄົມສມັຍນັ້ນມີການນມັສການພຣະຂອງສາສນາຕ່າງ ໆ

ພວກສັດຕູທີ່ຕໍ່ສູ້ຄຣິສຕຽນນັ້ນບໍ່ແມ່ນພວກທີ່ຂາດສະຕິປັນຍາ ພວກເຂົາເຫັນວ່າ ຖ້າເຂົາຮັບເອົາຄວາມເຊື່ອຂອງພວກຄຣິສຕຽນ ພວກເຂົາຈະຕ້ອງປ່ຽນແປງຫລາຍສິ່ງໃນການດຳເນີນຊີວິດ ໃນທາງການເມືອງ ໃນທຸຣະກິຈ ແລະໃນສັງຄົມຕາມທີ່ເຂົາໄດ້ຮູ້ຈັກ ພວກເຂົາຈະຕ້ອງຕັດຂາດບໍ່ນມັສການມຫາຈັກກະພັດ ບໍ່ຍອມຮັບພຣະຕ່າງ ໆ ທີ່ເປັນເຈົ້າທີ່ຂອງນະຄອນ ຂອງສະຫະພັນການຊ່າງ ຂອງສັງຄົມແລະເລີກການນມັສການຮູບເຄົາຣົບ ຫລາຍກວ່ານັ້ນອີກ ຄວາມເຊື່ອຂອງຄຣິສຕຽນຍັງຕ້ອງການໃຫ້ເຂົາຄິດເຖິງເຣື່ອງຫນ້າທີ່ແລະຄວາມສັມພັນກັບຄົນອື່ນໃນຊີວິດຂອງເຂົາເສັຍໃຫມ່ ທຸກສິ່ງທຸກຢ່າງຈະຕ້ອງກ່ຽວ

ຂ້ອງກັບພຣະເຈົ້າອີງດຽວ ເມື່ອມີການຕ້ອນຮັບພຣະຄຣິສເມື່ອໃດ ທີ່ນັ້ນຊີວິດມີສູນກາງແລະມາຕາຖານຢ່າງໃຫມ່ ຊຶ່ງຈະນຳໃຫ້ເກີດການປ່ຽນແປງຢ່າງຫລວງຫລາຍໃນຣະບອບປົກຄອງ ໃນທຸຣະກິຈ ແລະໃນສັງຄົມ ພວກທີ່ເປັນສັດຕູຄຣິສຕຽນເມື່ອຄິດເຖິງການປ່ຽນແປງແບບນີ້ແລ້ວ ແທນທີ່ຈະຍອມຮັບຄວາມຈິງທີ່ປາກົດແຕ່ກັບປະຕິເສດ ແລະຕັ້ງແກ້ງເພື່ອໃຫ້ການປະຕິເສດຂອງຕົນມີນ້ຳຫນັກຫລາຍຍິ່ງຂຶ້ນ ພວກເຂົາຈຶ່ງພາກັນຕໍ່ສູ້ແລະຂົ່ມເຫັງຄຣິສຕຽນ

ດັ່ງນັ້ນການຂົ່ມເຫັງຄຣິສຕຽນຈຶ່ງເກີດຂຶ້ນຢ່າງເປີດເຜີຍ ຕັ້ງແຕ່ຣະຍະເລີ້ມແລກຂອງການຈັດຕັ້ງຄຣິສຈັກ ແລະຂຍາຍຕົວຂຶ້ນຈາກທ້ອງຖິ່ນອອກໄປ ໃນສມັຍມຫາຈັກກະພັດນີໂຣ (Nero, ຄ.ສ.64) ໄດ້ຂ້າຄຣິສຕຽນຢ່າງດຸຮ້າຍທີ່ກຸງໂຣມ ເພາະມີຂໍ້ກ່າວຫາທີ່ບໍ່ເປັນຄວາມຈິງວ່າ ຄຣິສຕຽນຈູດໄຟເຜົານະຄອນ ແຕ່ການຂົ່ມເຫັງນັ້ນຍັງບໍ່ໄດ້ຂຍາຍໄປຍັງທ້ອງຖິ່ນຕ່າງ ໆ ນອກອອກໄປ ແຕ່ໃນສມັຍຂອງມຫາຈັກກະພັດໂດມີຊຽນການຂົ່ມເຫັງຮ້າຍແຮງແຜ່ກວ້າງຂວາງອອກໄປ ທີ່ຮ້າຍແຮງທີ່ສຸດຄືໃນເອເຊັຍນ້ອຍ ຄຣິສຕຽນຜູ້ສັດຊື່ຜູ້ນຶ່ງຊື່ **ອັນຕີປາ** ໄດ້ຖືກຂ້າເສັຍໃນເມືອງເປຄາໂມ (ພນ 2:13) ແລະຍັງມີຄົນຈຳນວນຫລາຍທີ່ຖືກຂ້າດ້ວຍ ດັ່ງທີ່ປາກົດໃນພຣະນິມິດທີ່ໄດ້ສຳແດງໃຫ້ກັບທ່ານໂຢຮັນ "ວິນຍານຂອງຄົນທັງຫລາຍທີ່ຖືກຂ້າ ເພາະພຣະທັມຂອງພຣະເຈົ້າ ແລະເພາະຄຳພຍານທີ່ເຂົາຍຶດຖືນັ້ນ" ພຣະທັມຕອນນີ້ບອກໃຫ້ເຮົາຮູ້ອີກວ່າ ຍັງມີພວກທີ່ຈວນຈະຖືກຂ້າອີກ (ພນ 6:9-10) ຄຣິສຕຽນເຫລົ່ານີ້ເປັນຄຣິສຕຽນທີ່ມີຄວາມສັດຊື່ໃນການເປັນພຍານເພື່ອພຣະຄຣິສ ດັ່ງນັ້ນພຣະທັມພຣະນິມິດຈຶ່ງບອກວ່າ "ບັນດາຜູ້ອ່ານແລະຜູ້ຟັງຄຳທຳນວາຍເຫລົ່ານີ້ ແລະບັນດາຜູ້ທີ່ຖືຮັກສາຂໍ້ຄວາມທີ່ຂຽນໄວ້ນີ້ກໍເປັນສຸກ ເພາະວ່າເວລານັ້ນໃກ້ເຂົ້າມາແລ້ວ" (ພນ 1:3)

## ສາມ. ຜູ້ຂຽນແລະສຖານທີ່ຂຽນພຣະທັມພຣະນິມິດ

ພຣະທັມພຣະນິມິດຂຽນຂຶ້ນໂດຍທ່ານໂຢຮັນເມື່ອມີການຂົ່ມເຫັງດັ່ງທີ່ໄດ້ກ່າວມາແລ້ວ ຊຶ່ຂອງທ່ານໂຢຮັນໄດ້ເປີດເຜີຍໃນພຣະທັມພຣະນິມິດໃຫ້ເຮົາໄດ້ຮູ້ຈັກຢ່າງຊັດແຈ້ງວ່າ ທ່ານເປັນຜູ້ຂຽນ (ພນ 1:2, 4, 9, 22:8) ທ່ານໂຢຮັນຜູ້ຂຽນແມ່ນ "ຂ້ອຍໃຊ້" (Servant, ພນ 1:1) ແລະແມ່ນຜູ້ປະກາດພຣະທັມ (Prophet, ພນ 22:9) ຂອງພຣະເຢຊູຄຣິສ ຕົວຂອງທ່ານໂຢຮັນເອງໄດ້ຮັບຄວາມທຸກຍາກເພາະຄວາມເຊື່ອ ທ່ານໂຢຮັນຢູ່ທີ່ເກາະປັດໂມ (Patmos) "ເນື່ອງດ້ວຍພຣະທັມຂອງພຣະເຈົ້າ ແລະເນື່ອງດ້ວຍການເປັນພຍານຝ່າຍພຣະເຢຊູ" (ພນ 1:9) ຄວາມນີ້ຫມາຍຄວາມວ່າທ່ານໂຢຮັນປະກາດຂ່າວປະເສີດຈົນໄດ້ຮັບການຈັບກຸມ ແລະເນຣະເທດໄປຢູ່ບົນເກາະປັດໂມ ເກາະນີ້ແມ່ນສະຖານທີ່ເຂົາໃຊ້ສຳລັບປ່ອຍນັກໂທດອາຊະຍາກອນແລະນັກການເມືອງ ພວກນັກໂທດຈະຕ້ອງເຮັດການຢ່າງຫນັກໃນເຫມືອງແຮ່ ທ່ານໂຢຮັນໄດ້ຮັບການສຳແດງແລະຂຽນບັນທຶກນິມິດຫມາຍ ເພື່ອສົ່ງໄປຍັງຄຣິສຈັກທັງເຈັດທີ່ຢູ່ໃນເອເຊັຍນ້ອຍ (ຊຶ່ງເປັນອານາເຂດນຶ່ງໃນສາມຂອງປະເທດເຕີກີ [Turkey] ດ້ານຕາວັນຕົກໃນປັດຈຸບັນ) ເມື່ອເຮົາອ່ານພຣະທັມພຣະນິມິດເຖິງການຂົ່ມເຫັງຄຣິສຕຽນທີ່ທ່ານໂຢຮັນກ່າວເຖິງເຮັດໃຫ້ເຮົາມີຄວາມເຊື່ອວ່າ ທ່ານໂຢຮັນມີຄວາມລົ້ງເຄີຍແລະມີປະສົບການປ່າວປະກາດຂ່າວປະເສີດຮ່ວມກັບຄຣິສຈັກເຫລົ່ານັ້ນມາກ່ອນຖືກຈັບກຸມ ທ່ານໂຢຮັນຂຽນໄປເຖິງເພື່ອນຄຣິສຕຽນ ເພື່ອຈະເລົ້າໂລມໃຈ ແລະຫນຸນໃຈຄຣິສຕຽນທີ່ຖືກບີບບັງຄັບຢ່າງຫນັກ ທ່ານໂຢຮັນຮູ້ຈັກວ່າຄວາມຊ່ວຍເຫລືອທີ່ພວກຄຣິສຕຽນລໍຄອຍບໍ່ແມ່ນຈະມາຈາກມະນຸດດ້ວຍກັນ ແຕ່ຕ້ອງມາຈາກພຣະເຈົ້າ ທ່ານເປັນຜູ້ເປີດເຜີຍ

ການສຳແດງຂອງພຣະເຈົ້າ ຜູ້ອ່ານຕ້ອງໄດ້ໄວ້ວາງໃຈໃນພຣະເຈົ້າ ເພາະພຣະເຈົ້າຊົງເປັນຜູ້ປະທານພຣະນິມິດນີ້ໃຫ້ (ພນ 1:1) ໂດຍທາງພຣະເຢຊູຄຣິສ ພຣະອົງແມ່ນ "ອົງພຣະຜູ້ເປັນເຈົ້າ ຜູ້ຊົງດຳຣົງຢູ່ໃນປັດຈຸບັນ ຜູ້ຊົງດຳຣົງຢູ່ໃນອະດີດ ຜູ້ຈະສະເດັດມາໃນອານາຄົດ ແລະຜູ້ຊົງຣິດທານາພາບສູງສຸດ" (ພນ 1:8) ຄວາມທີ່ວ່າ "ຜູ້ຊົງຣິດທານຸພາບສູງສຸດ" ໃນພຣະຄຣິສທັມຄັມພີພາກພັນທະສັນຍາໃຫມ່ເຫລັ້ມອື່ນ ໆ ໃຊ້ຄວາມນີ້ພຽງເທື່ອດຽວ ແຕ່ໃນພຣະນິມິດໄດ້ປາກົດເກົ້າເທື່ອດ້ວຍກັນ ເຣັດໃຫ້ຜູ້ອ່ານທີ່ໄດ້ຮັບການຂົ່ມເຫັງແລະການທົນທຸກທໍຣະມານມີຄວາມຮູ້ສຶກປອດພັຍໃນການຄຸ້ມຄອງຂອງພຣະຄຣິສ ພຣະອົງຊົງຣິດອຳນາດສູງສຸດ ທີ່ບໍ່ມີຜູ້ໃດສາມາດມາຕໍ່ຕ້ານໄດ້ ພຣະຣາຊກິດຂອງພຣະເຈົ້າໃນພຣະທັມພຣະນິມິດ ພຣະເຢຊູຄຣິສຊົງເປັນສູນກາງຊຶ່ງເຮົາຈະອ່ານພົບໃນພຣະນິມິດບົດທີ 5 ພຣະເມສານ້ອຍ (Lamb, ຫລືລູກແກະ) ຄືພຣະເຢຊູຄຣິສຜູ້ຊົງປະທານຢູ່ເປັນສູນກາງ ແລະຊົງຮັບການນມັສການຢ່າງສົມກຽດພ້ອມກັບພຣະບິດາ ເພາະພຣະອົງສິ້ນພຣະຊົນເພື່ອມະນຸດທຸກຊາດທຸກພາສາ ພຣະອົງຊົງກຳຣິດທານຸພາບການປົກຄອງຄຣິສຈັກໄວ້ໃນພຣະຫັດຂອງພຣະອົງ ພຣະອົງຈະຊົງເຣັດໃຫ້ຣິດເດດຂອງຄວາມຊົ່ວພ່າຍແພ້ ແລະຊົງເບິ່ງແຍງບັນດາຄົນເຫລົ່ານັ້ນທີ່ທົນທຸກ "ເພາະພຣະເມສານ້ອຍ ທີ່ປະທັບຢູ່ຖ້າມກາງພຣະຣາຊບັນລັງນັ້ນ ຈະຊົງເປັນຜູ້ດູແລເຂົາ ແລະຈະຊົງນຳເຂົາໄປເຖິງນ້ຳພຸອັນປະກອບດ້ວຍຊີວິດ ແລະພຣະເຈົ້າຈະຊົງເຊັດນ້ຳຕາທຸກຢົດຈາກຕາຂອງເຂົາ" (ພນ 7:17) ພຣະເຢຊູເທົ່ານັ້ນຜູ້ຊົງສາມາດເປີດຫນັງສືມ້ວນ ຊຶ່ງແມ່ນເຣື່ອງທີ່ສິ່ງທີ່ຈະເປັນມາໃຫ້ແກ່ທ່ານໂຢຮັນ (ພນ 5:3, 6:1) ພຣະເຢຊູຄຣິສຜູ້ຄືນພຣະຊົນນີ້ແຫລະໄດ້ບັນຊາໃຫ້ທ່ານໂຢຮັນຂຽນພຣະນິມິດລົງໄວ້ (ພນ 1:9-20) ພຣະອົງໄດ້ຊົງສຳແດງພຣະອົງແກ່ໂຢຮັນ ຕັດບອກວ່າພຣະອົງແມ່ນຜູ້ໃດ ແລະຊົງແນະນຳທ່ານໂຢຮັນໃຫ້ຂຽນ "ເຫດສະນີ້ຈົ່ງຂຽນເຫດການທັງຫລາຍທີ່ເຈົ້າໄດ້ເຫັນ ຄືເຫດການທີ່ເປັນຢູ່ດຽວນີ້ ກັບທັງເຫດການທີ່ຈະເກີດຂຶ້ນໃນພາຍຫນ້າເຫມືອນກັນ" (ພນ 1:19)

## ສີ່. ລັກສນະຂອງພຣະທັມພຣະນິມິດ

ພຣະທັມພຣະນິມິດຂຽນຂຶ້ນໃນລັກສນະຂອງນິມິດທີ່ເປັນເຄື່ອງຫມາຍ ຮູບພາບຕ່າງ ໆ ເປັນລັກສນະຄືກັບຫນັງສືລັບຂອງຄຣິສຕຽນໃນສມັຍທຳອິດ ເພື່ອທີ່ແຈກຢາຍໃຫ້ຄຣິສຕຽນດ້ວຍກັນໃນສມັຍນັ້ນອ່ານເຂົ້າໃຈໄດ້ ໃນເວລາທີ່ພວກເຂົາຖືກຂົ່ມເຫັງຢູ່ ຄຣິສຕຽນຕ້ອງເກັບຮັກສາໄວ້ເປັນຄວາມລັບ ເພາະບໍ່ຕ້ອງການໃຫ້ພວກເຈົ້າຫນ້າທີ່ໂຣມຈັບໄດ້ ແລ້ວສາມາດອ່ານເຂົ້າໃຈໄດ້ ຊຶ່ງອາດເປັນເຫດນຳໃຫ້ການຂົ່ມເຫັງຄຣິສຕຽນຫລາຍຂຶ້ນອີກ ແຕ່ຂ່າວສານນີ້ເປັນສິ່ງສຳຄັນຈາກພຣະເຈົ້າຢ່າງຫລວງຫລາຍ ເພື່ອຊູໃຈໃຫ້ຄຣິສຕຽນມີຄວາມຫວັງ ມີກຳລັງໃຈ ທີ່ຈະຂັບຕາມພຣະວັຈນະທັມຂອງພຣະເຈົ້າ ໃນຍາມທີ່ກັນດານເຊັ່ນນັ້ນ ຕົວຢ່າງ ເມື່ອພຣະທັມພຣະນິມິດບົດທີ່ 18 ກ່າວເຖິງນະຄອນບາບີໂລນຫລົ້ມ ພວກຄຣິສຕຽນໃນຍຸກນັ້ນຮູ້ຈັກແລະເຂົ້າໃຈວ່າ ຫມາຍເຖິງຣາຊອານາຈັກໂຣມັນຫລົ້ມ ເຣັດໃຫ້ພວກເຂົາເກີດກຳລັງໃຈຕໍ່ສູ້ກັບການຂົ່ມເຫັງທີ່ມີຢູ່ອ້ອມຂ້າງ

ພຣະທັມພຣະນິມິດໄດ້ສເນີພາບນິມິດເປັນຊຸດ ໆ ທີ່ເຮົາຕ້ອງສັງເກດເບິ່ງດ້ວຍກັນເປັນຊຸດ ໆ ຈຶ່ງຈະໄດ້ຄວາມຫມາຍຄົບຖ້ວນ ຕົວຢ່າງການບັນລະຍາຍເຖິງພຣະເຢຊູຄຣິສ ພຣະທັມພຣະນິມິດໃຫ້ພາບພຣະເຢຊູຄຣິສພາບແລກ ແມ່ນພາບມະນຸດຊົງສວມເຄື່ອງສລອງກວມພຣະບາດຢູ່ຖ້າມກາງເຄື່ອງຮອງຕີນໂຄມທອງຄຳເຈັດອັນ (ພນ 1:13) ຊຶ່ງໂຄມທອງຄຳທັງເຈັດຄວາມຫມາຍເຖິງຄຣິສຈັກ ຕໍ່ມາໄດ້ບັນລະຍາຍພຣະເຢຊູຄຣິສຊົງເປັນສິງ ຫນໍ່ໄມ້ ແລະລູກແກະຫລືເມສານ້ອຍ (ພນ 5:5-6) ຕໍ່ມາໄດ້ບັນ

ລະຍາຍພຣະເຢຊູຄຣິສຊົງປະທັບຫລັງມ້າຂາວອອກຈາກສວັນ (ພນ 19:11) ການທີ່ຈະລວມພາບເຫລົ່ານີ້ເຂົ້າເປັນພາບ ໆ ດຽວດັ່ງທີ່ພຣະເຢຊູຄຣິສເປັນຄົນ ໆ ດຽວກໍເຂົ້າໃຈໄດ້ຍາກ ແຕ່ວ່າຖ້າເຮົາພິຈາລະນາເບິ່ງ ແຕ່ລະພາບກໍຈະໄດ້ຄວາມຊັດແຈ້ງໃນຄວາມເປັນຢູ່ຈິງຂອງພຣະເຢຊູຄຣິສແຕ່ລະດ້ານ ພາບພຣະເຢຊູຄຣິສຜູ້ສວມເຄື່ອງສລອງກອມພຣະບາດເປັນການສະແດງເຖິງສະງ່າຣາສີ ສິດທິອຳນາດ ແລະຄວາມຮູ້ງເຮືອງຂອງພຣະເຢຊູຄຣິສຜູ້ຊົງຄືນພຣະຊົນ ຜູ້ຊົງມີສິດທີ່ຈະບັນຊາຜູ້ຂຽນແລະຄຣິສຈັກທັງຫລາຍ ພາບຕົວສິງສະແດງເຖິງຣາຊອຳນາດຂອງພຣະອົງ ພາບໜໍ່ໄມ້ສະແດງເຖິງເຊື້ອສາຍດາວິດ ພາບລູກແກະເປັນພາບທີ່ໃຊ້ຫລາຍທີ່ສຸດໃນພຣະທັມພຣະນິມິດ ເພື່ອໃຫ້ເຮົາຣະລຶກເຖິງການສລະພຣະຊົນຂອງພຣະເຢຊູຄຣິສເປັນເຄື່ອງສັກກາຣະບູຊາ ເພື່ອໄຖ່ບາບມະນຸດທັງປວງ ພາບນັກຮົບປະທັບເທິງມ້າຂາວມຸ້ງໄປຂ້າງໜ້າ ໝາຍເຖິງການມີຊັຍຢ່າງເດັດຂາດເໜືອອຳນາດຊົ່ວໃນທີ່ສຸດ ເຮົາສັງເກດເຫັນໄດ້ວ່າແຕ່ລະພາບໃຫ້ຄວາມຈິງນຶ່ງໃນຕົວຂອງພຣະເຢຊູຄຣິສຢ່າງຊັດແຈ້ງ

ນິມິດຫລືພາບຕ່າງ ໆ ໃນພຣະທັມພຣະນິມິດ ແມ່ນພາບທີ່ໃຫ້ຊົນຊາດຂອງພຣະເຈົ້າໄດ້ຮັບຄວາມຊູໃຈໃນຍາມທຸກຍາກກັນດານ ເພາະໃຫ້ການຮັບຮອງວ່າພຣະເຈົ້າຈະຊ່ວຍໃຫ້ພົ້ນ ຈຸດປະສົງຂອງຜູ້ຂຽນຄືໃຫ້ຜູ້ທີ່ຖືກຂົ່ມເຫັງຮູ້ວ່າ ຣິດເດດຂອງພຣະເຈົ້າຈະຊ່ວຍຄຸ້ມຄອງເຂົາ ແລະໃນທີ່ສຸດຈະຊ່ວຍບັນດາຜູ້ທີ່ຊື່ສັດໃຫ້ຣອດພົ້ນ ແມ່ນວ່າເຂົາທັງຫລາຍຈະອ່ອນແອແລະທົນທຸກ ແຕ່ພຣະເຈົ້າຈະຊົງນຳເຂົາໂດຍທາງພຣະຄຣິສໃຫ້ຜ່ານພົ້ນໂດຍຕລອດໄປ ຈົນເຂົ້າສູ່ແຜ່ນດິນອັນຕລອດໄປເປັນນິດຂອງພຣະອົງ ໃນຄວາມຈິງນີ້ກໍໄດ້ໜຸນໃຈຄຣິສຕຽນທຸກຍຸກທຸກສມັຍເຊັ່ນດຽວກັນ ເພາະຄຣິສຕຽນໄດ້ຮັບການຂົ່ມເຫັງຢູ່ຕລອດເວລານັບຕັ້ງແຕ່ປວັດສາດຄຣິສຈັກໄດ້ເລີ້ມຕົ້ນມາ ດັ່ງນັ້ນເຮົາເຫັນໄດ້ວ່າ ແມ່ນພຣະນິມິດຈະຂຽນຂຶ້ນໃນລັກສນະເຄື່ອງໝາຍສັນຍາລັກ ທີ່ອາດຈະເຂົ້າໃຈໄດ້ຍາກສຳລັບຄົນບາງຍຸກບາງສມັຍ ແຕ່ຄວາມຈິງອັນບໍ່ເສື່ອມສລາຍນັ້ນ ຊູໃຈຄຣິສຕຽນມາຕລອດປວັດສາດ ແລະຍັງເປັນກຳລັງໃຈໃຫ້ແກ່ຄຣິສຕຽນທີ່ຈະດຳເນີນຊີວິດຕໍ່ໄປໃນອານາຄົດ

**ຫ້າ. ການຕີຄວາມໝາຍຂອງພຣະທັມພຣະນິມິດ**

ຕັ້ງແຕ່ສມັຍຂອງທ່ານໂຢຣັນເປັນຕົ້ນມາຈົນເຖິງປັດຈຸບັນນີ້ ນັກສຶກສາພຣະຄຣິສທັມຄັມພີພຍາຍາມຕີຄວາມໝາຍພຣະທັມພຣະນິມິດຫລາຍຮູບແບບບໍ່ເໝືອນກັນ ແຕ່ໃນທີ່ນີ້ຈະກ່າວເຖິງ 4 ພວກດ້ວຍກັນ ເພື່ອເປັນຄວາມຮູ້ຄວາມເຂົ້າໃຈແກ່ນັກສຶກສາ ໃນການສຶກສາເພີ່ມເຕີມພາຍຫລັງ

__ພວກທີ່ນຶ່ງ Preterist__ (ພຣີເຕີຣິສ) ພວກນີ້ເຊື່ອວ່າເນື້ອຫາໃນພຣະທັມພຣະນິມິດເປັນຂໍ້ເທັດຈິງທີ່ສຳແດງເຖິງສພາບຂອງເຫດການໃນປວັດສາດທີ່ໄດ້ເກີດຂຶ້ນແລ້ວແລະໄດ້ຜ່ານພົ້ນໄປແລ້ວ (ຍົກເວັ້ນເຫດການໃນບົດທີ 20-22) ເຫດການເຫລົ່ານີ້ເກີດຂຶ້ນໃນຣາຊອານາຈັກໂຣມັນໃນຣະຍະເວລາອັນໃກ້ ໆ ກັນນັ້ນ ແລະໄດ້ສິ້ນສຸດລົງໃນສັຕວັດທີ່ນຶ່ງ

__ພວກທີ່ສອງ Historical__ (ຮິສທໍຣິຄັລ) ພວກນີ້ເບິ່ງຈາກແງ່ຂອງປວັດສາດຄຣິສຈັກ ໂດຍມີຄວາມເຂົ້າໃຈວ່າພຣະທັມພຣະນິມິດເປັນຮູບແບບຂອງສັນຍາລັກທີ່ສະແດງເຖິງຊີວິດຂອງຄຣິສຈັກ ຕັ້ງແຕ່ສມັຍຕັ້ງແຕ່ສມັຍຂອງອັຄສາວົກດຳເນີນຕໍ່ເນື່ອງໄປຈົນເຖິງເວລາທີ່ສິ້ນສຸດຂອງໂລກ

**ພວກທີ່ສາມ Idealist** (ໄອດີລລິສທ໌) ພວກນີ້ເຫັນວ່າພຣະນິມິດບໍ່ແມ່ນການສຳແດງເຖິງເຫດການຕ່າງ ໆ ແຕ່ແມ່ນເປັນສັນຍາລັກແລະອຸດົມຄະຕິ ໂດຍຖືວ່າພຣະນິມິດເປັນເໝືອນການສະແດງໃນຮູບແບບຂອງລະຄອນ ອັນມີຈຸດປະສົງທີ່ຈະຊີ້ໃຫ້ເຫັນເຖິງຄວາມຂັດແຍ້ງຝ່າຍຈິດວິນຍານລະຫວ່າງຄວາມດີແລະຄວາມຊົ່ວ ຊຶ່ງຈະເປັນເຫດການທີ່ເກີດຂຶ້ນໃນທຸກຍຸກທຸກສະໄໝ ແຕ່ບໍ່ແມ່ນສິ່ງທີ່ຈະນຳມາແປງເຂົ້າກັບເຫດການນີ້ງເຫດການໃດໃນປະວັດສາດໄດ້

**ພວກທີ່ສີ່ Futurist** (ຟິວເຈີຣິສ) ພວກນີ້ເບິ່ງໃນແງ່ຂອງອານາຄົດ ໂດຍແບ່ງພຣະທັມພຣະນິມິດອອກເປັນສາມຕອນດ້ວຍກັນ ຕາມໄດ້ກ່າວໄວ້ໃນພຣະນິມິດ 1:19

(1) ເຫດການທີ່ເຈົ້າໄດ້ເຫັນ

[ອົງພຣະເຢຊູຄຣິສ ພນ 1:9-20]

(2) ເຫດການທີ່ເປັນຢູ່ດຽວນີ້ ກັບທັງ

[ຄຣິສຈັກທີ່ເປັນຂອງພຣະຄຣິສ ພນ 2:1-3:22]

(3) ເຫດການທີ່ຈະເກີດຂຶ້ນໃນພາຍໜ້າເໝືອນກັນ

[ແຜນການສເດັດມາຂອງພຣະເຢຊູຄຣິສ ພນ 4:1-22:21]

ໃນເມື່ອຄືນສຳຄັນ ໆ ໃນຄຣິສຈັກທຸກຍຸກທຸກສມັຍມີຄວາມຄິດເຫັນບໍ່ເໝືອນກັນ ກໍຈຳເປັນທີ່ເຮົາຈະຕ້ອງພິຈາຣະນາໃຫ້ດີ ບໍ່ກ່າວຮ້າຍຜູ້ອື່ນທີ່ຄິດເຫັນບໍ່ຄືກັບເຮົາ ແຕ່ຕັ້ງໃຈສະແວງຫາຄຳສອນແລະຄວາມຈິງຈາກພຣະເຈົ້າ ຊຶ່ງຈະມີຜົນປໂຍດໃນຊີວິດຄຣິສຕຽນຂອງເຮົາຕາມນ້ຳພຣະທັຍຂອງພຣະອົງໃຫ້ຈະເຣີນຕິບໂຕຂຶ້ນ ໃນການແປຄວາມໝາຍຂອງພຣະທັມພຣະນິມິດທ່ານໂຢຮັນໄດ້ຕັກເຕືອນແກ່ຜູ້ອ່ານວ່າ "ຖ້າຜູ້ໃດຈະເພີ່ມເຕີມຂໍ້ຄວາມໃດໃສ່ໜັງສືນີ້ ພຣະເຈົ້າຈະຊົງເອົາພັຍອັນຕຣາຍທີ່ຂຽນໄວ້ໃນໜັງສືມ້ວນນີ້ ເພີ່ມເຕີມແກ່ຜູ້ນັ້ນ ແລະຖ້າຜູ້ໃດຕັດຂໍ້ຄວາມໃດອອກຈາກໜັງສືທຳນວາຍນີ້ ພຣະເຈົ້າກໍຈະຊົງຕັດສ່ວນແບ່ງຂອງຜູ້ນັ້ນທີ່ມີຢູ່ໃນຕົ້ນໄມ້ຊຶ່ງໃຫ້ມີຊີວິດ ແລະສ່ວນແບ່ງໃນນະຄອນສັກສິດ ທີ່ຂຽນໄວ້ໃນໜັງສືມ້ວນນີ້ອອກເສັຍ (ພນ 22:18-19)

**ຫົກ. ສາຣະສຳຄັນແລະເນື້ອນັຍຂອງພຣະທັມພຣະນິມິດ**

**ກ. ເຫດການທີ່ເຈົ້າໄດ້ເຫັນ**

ຄຳນຳຂອງພຣະທັມພຣະນິມິດໄດ້ເປີດເຣື່ອງດ້ວຍ ຂໍ້ຄວາມທີ່ບອກໃຫ້ຜູ້ອ່ານໄດ້ຮູ້ຈັກຄັກວ່າ ເປັນການສຳແດງຂອງພຣະເຢຊູຄຣິສ ບໍ່ແມ່ນຂອງທ່ານໂຢຮັນ ຊຶ່ງພຣະເຈົ້າໄດ້ຊົງປະທານແກ່ພຣະອົງເພື່ອເປີດເຜີຍໃຫ້ຮູ້ເຖິງເຫດການທີ່ຈະເກີດຂຶ້ນໃນບໍ່ຊ້ານີ້ ທ່ານໂຢຮັນໄດ້ບັນທຶກສິ່ງທີ່ເຫັນແລ້ວສົ່ງໄປຍັງຄຣິສຈັກທັງເຈັດໃນເອເຊັຍນ້ອຍ ຜູ້ທີ່ອ່ານແລະຜູ້ຟັງທີ່ຖືຮັກສາກໍເປັນສຸກ

ທ່ານອັຄສາວົກໂຢຮັນໃກ້ຊິດແລະຮູ້ຈັກກັບພຣະເຢຊູຄຣິສເປັນຢ່າງດີ ເມື່ອພຣະອົງຊົງຢູ່ໃນໂລກນີ້ ແຕ່ເມື່ອພຣະເຢຊູຄຣິສຊົງສຳແດງພຣະອົງໃນຄັ້ງນີ້ ທ່ານໂຢຮັນໄດ້ກົ້ມລົງແທບພຣະບາດຂອງພຣະເຢຊູເໝືອນດັ່ງຄົນທີ່ຕາຍແລ້ວ (ພນ 1:17) ທັງນີ້ເພາະຄວາມຍິ່ງໃຫຍ່ແລະພຣະສະງ່າຣາສີຂອງພຣະເຢຊູຄຣິສ ທ່ານໂຢຮັນບັນລະຍາຍພຣະລັກສນະຂອງພຣະເຢຊູຄຣິສໂດຍໃຊ້ຂໍ້ພຣະທັມຈາກພຣະຄຣິສທັມ

ຄັມພີພາກພັນທະສັນຍາເດີມ ເຊັ່ນ "ພຣະເກສາຂາວ" (ພນ 1:14) ເນັ້ນເຖິງຄວາມເປັນຢູ່ອັນຕລອດໄປ ແລະຊົງພຣະປັນຍາ (ດນອ 7:9, 10:6) "ພຣະສຸຣສຽງເຫມືອນສຽງນ້ຳມາກ" (ພນ 1:15) ຫມາຍເຖິງຣິດທານຸພາບຄວາມຍິ່ງໃຫຍ່ (ອສຄ 43:2) ພຣະອົງພຣະຜູ້ເປັນເຈົ້າຊົງສະງ່າຣາສີຜູ້ນີ້ຊົງເປັນເຈົ້າເຫນືອຄຣິສຈັກທັງເຈັດ ແລະເປັນຜູ້ທີ່ຕິດສິນພວກເຂົາ (1:11-20)

**ຂ. ເຫດການທີ່ເປັນຢູ່ດຽວນີ້**

ພຣະນິມິດທີ່ສຳແດງເຖິງຄຣິສຈັກທັງເຈັດໃນແຂວງອາເຊັຍ ອາດຈະເປັນຄຣິສຈັກທີ່ຖືກຂົ່ມເຫັງຫລາຍທີ່ສຸດ ຫລືອາດຈະເປັນຄຣິສຈັກທີ່ຕ້ອງການຄຳແນະນຳຫລາຍທີ່ສຸດ ແຕ່ຄິດວ່າຄຣິສຈັກທັງເຈັດເປັນຕົວແທນຂອງຄຣິສຈັກທັງຫລາຍໃນທີ່ກຳລັງຕົກຢູ່ໃນອັນຕຣາຍ ທ່ານໂຢຮັນເຫັນວ່າແມ່ນວ່າຄຣິສຕຽນຈະຖືກໂຈມຕີແນວໃດ ຄວາມຕ້ອງການປະການແລກຂອງຄຣິສຈັກແລະຄວາມຫວັງອັນຍິ່ງໃຫຍ່ທີ່ສຸດຄືຄວາມເຂັ້ມແຂງຂອງພີ່ນ້ອງພາຍໃນຄຣິສຈັກ ແລະຄວາມເປັນພີ່ນ້ອງກັນຢ່າງເປັນອັນນຶ່ງອັນດຽວກັນໃນການຈົງຮັກພັກດີຕໍ່ພຣະຄຣິສຮ່ວມກັນ ລາງເທື່ອອັນຕຣາຍບໍ່ໄດ້ມາຈາກພາຍນອກເທົ່ານັ້ນ ຄວາມອ່ອນແອພາຍໃນເປັນອັນຕຣາຍທີ່ຮ້າຍແຮງທີ່ສຸດ ທ່ານໂຢຮັນໄດ້ຍົກຍໍສັຣເສີນຄຣິສຈັກທີ່ມີການຮັບໃຊ້ພຣະເຈົ້າແລະຂໍພວກເຂົາໃຫ້ຍຶດຫມັ້ນໄວ້ ຄຣິສຈັກບໍ່ທຸ້ນທ່ຽງໃຫ້ກັບໃຈເສັຍໃຫມ່ ຣື້ຟື້ນຄວາມເຊື່ອຝ່າຍຄຣິສຕຽນຂຶ້ນມາອີກ ແລະໃຫ້ຍຶດຫມັ້ນຄວາມຈົງຮັກພັກດີຕໍ່ພຣະຄຣິສ ຄຣິສຈັກທັງເຈັດເປັນແບບຢ່າງທີ່ເຮົາຄວນສຶກສາເຖິງສິ່ງທີ່ຫນ້າຊົມເຊີຍ ສິ່ງທີ່ເປັນຂໍ້ຕັກເຕືອນ ຂໍ້ແນະນຳ ແລະຄຳຫມັ້ນສັນຍາ ເພື່ອເຮົາຈະນຳມາພິຈາຣະນາຄວາມຈິງເຫລົ່ານີ້ໃນຄຣິສຈັກຂອງເຮົາໃນປັດຈຸບັນ

1. **ຄຣິສຈັກເມືອງເອເຟໂຊ** (Ephesus, ພນ 2:1-7)
   **ຄຳຊົມເຊີຍ:** ບໍ່ໄດ້ເມື່ອຍລ້າໄປ ອົດທົນເພື່ອເຫັນແກ່ພຣະນາມຂອງພຣະຄຣິສ ຕໍ່ສູ້ກັບຄວາມຊົ່ວ ແລະພິສູດຄວາມຈິງ (ຂໍ້ 2-3)
   **ຄຳຕຳຫນິ:** ໄດ້ປະຖິ້ມຄວາມຮັກເດີມເສັຍ (ຂໍ້ 4)
   **ຄຳແນະນຳ:** ຈົ່ງລະນຶກວ່າໄດ້ຕົກຈາກສະພາບໃດ ແລ້ວຈົ່ງກັບໃຈເສັຍໃຫມ່ແລະຮັດຕາມຢ່າງເດີມ (ຂໍ້ 5)
   **ຄຳຫມັ້ນສັນຍາ:** ຜູ້ໃດມີຊັຍຊະນະ ຈະໃຫ້ຜູ້ນັ້ນກິນຜົນຈາກຕົ້ນໄມ້ສຳລັບຊີວິດ (ຂໍ້ 7)

2. **ຄຣິສຈັກເມືອງຊະມີນາ** (Smyrna, ພນ 2:8-11)
   **ຄຳຊົມເຊີຍ:** ຍອມຮັບຄວາມທຸກລຳບາກແລະຍາກຈົນ ແລະຄຳຫມິ່ນປະມາດ (ຂໍ້ 9)
   **ຄຳຕຳຫນິ:** ບໍ່ມີ
   **ຄຳແນະນຳ:** ຈົ່ງມີໃຈສັດຊື່ສຸຈຣິດຈົນເຖິງວັນຕາຍ (ຂໍ້ 10)
   **ຄຳຫມັ້ນສັນຍາ:** ຈະໄດ້ຮັບພວງມາລັຍແຫ່ງຊີວິດ ແລະຈະບໍ່ຖືກອັນຕຣາຍຈາກຄວາມຕາຍຄັ້ງທີ່ສອງ (ຂໍ້ 10-11)

3. **ຄຣິສຈັກເມືອງເປຄາໂມ** (Pergamum, ພນ 2:12-17)
   **ຄຳຊົມເຊີຍ:** ຍຶດຖືນາມຂອງພຣະເຢຊູຄຣິສໄວ້ຫມັ້ນ ແລະບໍ່ໄດ້ປະຕິເສດຄວາມ

ເຊື່ອໃນພຣະອົງ (ຂໍ້ 13)

**ຄຳຕຳໜິ:** ເຊື່ອຖືຕາມຄຳສອນຂອງພຣະອື່ນ ແລະລ່ວງຜິດຊາຍຍິງ (ຂໍ້ 14)

**ຄຳແນະນຳ:** ຈົ່ງກັບໃຈເສັຍໃໝ່ (ຂໍ້ 16)

**ຄຳໝັ້ນສັນຍາ:** ຈະໃຫ້ມານາທີ່ເຊື່ອງໄວ້ແກ່ຜູ້ມີໄຊຊະນະ ແລະຈະໃຫ້ຫີນຂາວແກ່ຜູ້ນັ້ນ ມີຊື່ໃໝ່ຈາຣຶກ (ຂໍ້ 17)

4. **ຄຣິສຈັກເມືອງທິວເຕຣາ** (Thyatira, ພນ 2:18-29)

**ຄຳຊົມເຊີຍ:** ມີຄວາມຮັກ ຄວາມເຊື່ອ ການປະຕິບັດ ແລະຄວາມພຽນອົດທົນ ຫລາຍຂຶ້ນ ຄືການເບື້ອງປາຍມີຫລາຍກວ່າການເບື້ອງຕົ້ນ (ຂໍ້ 19)

**ຄຳຕຳໜິ:** ເຊື່ອຖືຕາມຄຳສອນຂອງຄຣູສອນປອມຍິງ ແລະລ່ວງຜິດຊາຍຍິງ (ຂໍ້ 20)

**ຄຳແນະນຳ:** ພຣະຄຣິສເປັນຜູ້ຊົງພຣະສູດເບິ່ງຈິດໃຈ ຈົ່ງຍຶດສິ່ງທີ່ມີຢູ່ແລ້ວໄວ້ໃຫ້ໝັ້ນ (ຂໍ້ 25)

**ຄຳໝັ້ນສັນຍາ:** ໄດ້ຮັບອຳນາດປົກຄອງບັນດາປະຊາຊາດຈາກພຣະບິດາ ປະທານດາວປະຈຳຮຸ່ງໃຫ້ (ຂໍ້ 26-28)

5. **ຄຣິສຈັກເມືອງຊາເດ** (Sardis, ພນ 3:1-6)

**ຄຳຊົມເຊີຍ:** ມີຄົນຈຳນວນນ້ອຍຮັກສາຄວາມເຊື່ອໄວ້ (ຂໍ້ 4)

**ຄຳຕຳໜິ:** ມີຊື່ວ່າມີຊີວິດຢູ່ ແຕ່ວ່າເຈົ້າຕາຍເສັຍແລ້ວ (ຂໍ້ 1)

**ຄຳແນະນຳ:** ຈົ່ງຖືຮັກສາສ່ວນທີ່ເຫລືອແລະກັບໃຈເສັຍໃໝ່ (ຂໍ້ 2-3)

**ຄຳໝັ້ນສັນຍາ:** ຜູ້ທີ່ມີໄຊຊະນະ ຈະຫົ່ມເຄື່ອງຂາວ ແລະຈະບໍ່ລຶບຊື່ອອກຈາກທະບຽນ ແຕ່ໄດ້ຮັບການຮັບຮອງຊື່ຕໍ່ພຣະພັກພຣະບິດາ (ຂໍ້ 5-6)

6. **ຄຣິສຈັກເມືອງຟີລາເດັນເຟັຍ** (Philadelphia, ພນ 3:7-13)

**ຄຳຊົມເຊີຍ:** ມີກຳລັງນ້ອຍແຕ່ຍັງຖືຮັກສາຄຳສອນແລະບໍ່ໄດ້ປະຕິເສດພຣະນາມ ຂອງພຣະເຢຊູຄຣິສ (ຂໍ້ 8)

**ຄຳຕຳໜິ:** ບໍ່ມີ

**ຄຳແນະນຳ:** ຈົ່ງຍຶດໝັ້ນໃນສິ່ງທີ່ມີຢູ່ນັ້ນ ບໍ່ໃຫ້ຜູ້ໃດຍາດຊີງເອົາໄປໄດ້ (ຂໍ້ 11)

**ຄຳໝັ້ນສັນຍາ:** ມີໄຊເໜືອສັດຕູ (ຂໍ້ 9) ພົ້ນຈາກການຂົ່ມເຫັງ (ຂໍ້ 10) ແລະ ຜູ້ທີ່ມີໄຊຊະນະຈະມີທີ່ພັກເຊົາໃນພຣະວິຫານຕລອດໄປ (ຂໍ້ 12)

7. **ຄຣິສຈັກເມືອງລາວດີເກອາ** (Laodicea, ພນ 3:14-22)

**ຄຳຊົມເຊີຍ:** ບໍ່ມີ

**ຄຳຕຳໜິ:** ບໍ່ເຢັນບໍ່ຮ້ອນ ບໍ່ຮູ້ຈັກຕົວເອງ (ຂໍ້ 15-17)

**ຄຳແນະນຳ:** ຫລໍ່ຫລອມໃຫ້ບໍຣິສຸດ ກຳຈັດສິ່ງໜ້າອາຍ ແລະໃຫ້ເຫັນຮູ່ງ ມີໃຈຮ້ອນຮົນແລະຕັ້ງໃຈເສັຍໃໝ່ (ຂໍ້ 18-19)

**ຄຳໝັ້ນສັນຍາ:** ຜູ້ທີ່ໄຂປະຕູຈະສລອງຮ່ວມກັບພຣະເຢຊູ ແລະຜູ້ທີ່ມີໄຊຊະນະ

จะได้นั่งเທິງບັນລັງກັບພຣະຄຣິສ (ຂໍ້ 20-21)

ສິ່ງທີ່ເຮົາສັກເກດເບິ່ງໄດ້ຈາກຄຣິສຈັກທັງເຈັດນີ້ຄື ບາງຄຣິສຈັກບໍ່ມີຂໍ້ຕຳໜິ (ຂໍ້ທີ່ຈະຕໍ່ວ່າ) ສະແດງວ່າຄຣິສຈັກນັ້ນ ມີຄວາມເຊື່ອໝັ້ນຄົງແລະພຽນພຍາຍາມເປັນພຍານເພື່ອພຣະຄຣິສ ບາງຄຣິສຈັກບໍ່ມີຂໍ້ຊົມເຊີຍເລີຍ ສະແດງໃຫ້ເຫັນວ່າຄຣິສຈັກນັ້ນບໍ່ໄດ້ຈະເຣີນກ້າວໜ້າເຕີບໂຕໄປໃສ ເຖິງຢ່າງໃດກໍຕາມແມ່ນວ່າຄຣິສຈັກຈະມີຂໍ້ດີຫລືຂໍ້ເສັຍ ພຣະເຢຊູຄຣິສກໍມີສິ່ງທີ່ແນະນຳໃຫ້ກັບທຸກຄຣິສຈັກ ເພື່ອປັບປຸງແກ້ໄຂໃຫ້ຈະເຣີນເຕີບໂຕຂຶ້ນ ບໍ່ມີຄຣິສຈັກໃດທີ່ດີບໍ່ຕ້ອງປັບປຸງແກ້ໄຂອັນໃດ ເພາະບໍ່ມີຄຣິສຈັກໃດສົມບູນ ແລະພຣະອົງຍັງມີຄຳທ້າຍໃຫ້ກັບທຸກຄຣິສຈັກເປັນຄຳໝັ້ນສັນຍາແລະເປັນລາງວັນ ເພື່ອໃຫ້ເຂົາໄດ້ຈະເຣີນເຕີບໂຕຂຶ້ນ ແລະຜູ້ທີ່ຢູ່ຝ່າຍພຣະອົງຈົນເຖິງທີ່ສຸດຈະຮ່ວມຮັບສະງ່າຣາສີກັບພຣະອົງ ຄຣິສຈັກທັງເຈັດນີ້ເປັນຕົວຢ່າງທີ່ເຮົາສົມຄວນນຳມາພິຈາຣະນາສົມທຽບກັບຄຣິສຈັກແລະຕົວຂອງເຮົາໃນປັດຈຸບັນ ເຮົາຈະເຫັນໄດ້ວ່າ ບໍ່ມີຄຣິສຈັກໃດທີ່ສົມບູນ ແລະທີ່ບໍ່ຕ້ອງການຄຳແນະນຳແກ້ໄຂ ແມ່ນວ່າຈະມີຂໍ້ດີຫລືຂໍ້ເສັຍທີ່ເກີດຂຶ້ນໃນຄຣິສຈັກ ພຣະເຢຊູຄຣິສມີຄວາມຫວັງໃຈໃຫ້ເຮົາຄວນຈະພິຈາຣະນາສິ່ງຕ່າງ ໆ ເຫລົ່ານັ້ນດ້ວຍຄວາມທ່ຽງທັມແລະຄວາມຈິງ ກ່ອນທີ່ຈະສາຍເກີນໄປ ພຣະອົງໃຫ້ໂອກາດທຸກຄົນກັບໃຈໃໝ່ ກ່ອນທີ່ພຣະອົງຈະສະເດັດກັບມາອີກເທື່ອທີ່ສອງ ສົມຄວນທີ່ເຮົາຕ້ອງກັບໃຈໃໝ່ປັບປຸງແກ້ໄຂ ແລະມຸ່ງໄປຂ້າງໜ້າ ເພື່ອຮັບລາງວັນທີ່ໄດ້ຈັດໄວ້ແລ້ວສຳລັບເຮົາ

**ຄ. ເຫດການທີ່ຈະເກີດຂຶ້ນໃນພາຍໜ້າ**

ທ່ານໂຢຮັນໄດ້ເລີ້ມຕົ້ນຂຽນຕາມພຣະນິມິດຕາມທີ່ພຣະເຈົ້າຊົງບັນຊາ ແລະໄດ້ກ່າວເຖິງນິມິດເຣື້ອງພຣະເຢຊູຄຣິສ ພຣະອົງໄດ້ສິ້ນພຣະຊົນເທິງໄມ້ກາງແຂນເພື່ອມວລມະນຸດ ແຕ່ບັດນີ້ພຣະອົງໄດ້ຊົງຄືນພຣະຊົນປາກົດເປັນອົງພຣະຜູ້ເຈົ້າຂອງຄຣິສຈັກ ໄດ້ໜຸນໃຈຄຣິສຈັກທັງເຈັດ ແລ້ວທ່ານໂຢຮັນກໍຫັນມາກ່າວເຖິງເຣື້ອງເຫດການທີ່ຈະເກີດຂຶ້ນພາຍໜ້າ ພຣະເຈົ້າໄດ້ຊົງສຳແດງໃຫ້ທ່ານໄດ້ເຫັນນິມິດທີ່ຈະມາໃນອານາຄົດ ໂດຍທີ່ພຣະເຈົ້າແລະພຣະເຢຊູຄຣິສຈະຊົງຄອບຄອງສວັນ (ພນ ບົດ 4,5) ນິມິດຕ່າງ ໆ ທີ່ປາກົດເປັນພື້ນຖານໃຫ້ຄຣິສຈັກມີຄວາມເຊື່ອໝັ້ນທີ່ຈະຮັບໃຊ້ຕໍ່ໄປໃນອານາຄົດ ແລ້ວໃນພຣະທັມພຣະນິມິດບົດທີ 6 ເລີ້ມນິມິດເປັນຊຸດ ໆ ສະແດງພາບຄວາມຈິບຫາຍຂອງຄວາມຊົ່ວ ຄວາມຊົ່ວຖືກທຳລາຍແລະຜູ້ທີ່ສັດຊື່ໄດ້ຮັບການພັກເຊົາ ມີພັຍພິບັດເຈັດຢ່າງຢູ່ສາມຊຸດໃຫຍ່ ຄືຕາປະທັບທັງເຈັດ (ພນ 6:1-8:5) ແກທັງເຈັດ (ພນ 8:6-11:19) ແລະເຣື້ອງຂັນທັງເຈັດ (ພນ 15:1-16:21) ມີນິມິດອື່ນ ໆ ທີ່ແຊກເຂົ້າມາໃນແຕ່ລະຊຸດ ນິມິດຂອງພັຍພິບັດແລະພຣະພອນເປັນການສຳແດງໃຫ້ເຫັນວ່າ ພຣະເຈົ້າຈະຊົງພິພາກສາລົງໂທດຄວາມຊົ່ວ ແລະຄົນຂີ້ຢ້ານ (ໂຍຍ່) ຈະເກີດຂຶ້ນໃນເວລາບໍ່ຊ້າໃນຄວາມຂັດແຍ້ງຣະຫວ່າງຄວາມດີກັບຄວາມຊົ່ວໄຊຊະນະຂຶ້ນຢູ່ກັບພຣະເຈົ້າ ແລະພຣະຄຣິສຜູ້ດຳເນີນວຽກການແທນພຣະບິດາ ຄວາມຊົ່ວຈະພ່າຍແພ້ແລະຖືກກວາດລ້າງໄປເສັຍ ໃນໝູ່ຄົນທີ່ຖືກກ່າວໂທດບໍ່ພຽງແຕ່ຄົນຊົ່ວເທົ່ານັ້ນ ແຕ່ຍັງມີພວກ "ຄົນຂີ້ໂຍຍ່ (ຂີ້ຢ້ານ) ຄົນບໍ່ເຊື່ອ" ດ້ວຍ ສະແດງວ່າຜູ້ທີ່ຈະຖືກກ່າວໂທດບໍ່ແມ່ນຄົນທີ່ເຮັດຄວາມຊົ່ວເທົ່ານັ້ນ ແຕ່ຄົນທີ່ບໍ່ເຊື່ອຟັງ ແລະຂີ້ຢ້ານ (ບໍ່ກ້າຢືນຢູ່ຝ່າຍພຣະຄຣິສ) ກໍຈະຖືກ່າວໂທດດ້ວຍ ການກ່າວໂທດແລະຕັກເຕືອນຄຣິສຕຽນກ່າວຊ້ຳແລ້ວຊ້ຳອີກ ເພື່ອບໍ່ໃຫ້ຫລົງຜິດແລະເກີດການເສັຍຜົນປໂຍດອັນຕລອດໄປ ພຣະເຈົ້າຈະບໍ່ພຽງແຕ່ທຳລາຍຄວາມຊົ່ວຊ້າເທົ່ານັ້ນ ແຕ່ຈະທຳລາຍຜູ້ທີ່ຢ້ານກົວດ້ວຍ ຄົນພວກນີ້ຢ້ານກົວວ່າຈະບໍ່ປອດພັຍເມື່ອຢືນຫຍັດໃນຄວາມເຊື່ອຄຣິສຕຽນ

ເມື່ອຖືກເຍາະເຍີ້ຍຫລືຖືກທຳຮ້າຍກໍຢ້ານກົວ ບໍ່ຍອມສະແດງຄວາມຈົ່ງຮັກພັກດີຕໍ່ພຣະເຈົ້າ ອານາຄົດຂອງຄົນຂີ້ຢ້ານ (ບໍ່ກ້າຫານ) ຈະບໍ່ມີອັນໃດດີ ພຣະປະສົງຂອງພຣະເຈົ້າຕ້ອງການໃຫ້ຊົນຊາດຂອງພຣະອົງເມື່ອຖືກທົດລອງແລ້ວກໍຢືນໝັ້ນຄົງບໍ່ຍອມພ່າຍແພ້ ນີ້ເປັນສິ່ງຍາກຫລາຍທີ່ສຸດທີ່ພຣະອົງຊົງຮຽກຮ້ອງຈາກມະນຸດເມື່ອມີການຂົ່ມເຫັງ ແລະບາງເທື່ອເຮົາຈະຕ້ອງເລືອກລະຫວ່າງຄວາມເຊື່ອແລະການທໍລະຍົດ ທີ່ຈິງຄຣິສຕຽນມີຕົວຢ່າງຂອງພຣະເຢຊູຄຣິສທີ່ປາກົດໃຫ້ເຫັນ ພຣະຄຣິສຊົງ "ເປັນພຍານທີ່ສັດຊື່ແລະທ່ຽງທັມ" (ພນ 3:14) ພຣະອົງບໍ່ໄດ້ແລ່ນໜີຈາກອັນຕຣາຍຫລືຫລີກໜີການສິ້ນພຣະຊົນເທິງໄມ້ກາງແຂນ ພຣະອົງຍຶດໝັ້ນ ຍອມທົນທຸກ ແລະຍັງມີຊັຍ ຄຣິສຕຽນກໍເຮັດໄດ້ຢ່າງດຽວກັນໂດຍຣິດເດດຂອງພຣະເຈົ້າ ທ່ານໂຢຮັນໄດ້ບັນລະຍາຍບໍ່ນ້ອຍກວ່າສອງສາມເທື່ອ ເຖິງຄວາມຜາສຸກ ແລະຜົນຂອງຜູ້ສັດຊື່ທີ່ຍອມອົດທົນຕໍ່ການຂົ່ມເຫັງໂດຍບໍ່ໄດ້ປະຕິເສດພຣະຄຣິສ (ພນ 7:9-17, 14:1-15, 20:4)

ສະພາບເຫດການທີ່ຮ້າຍແຮງທີ່ເກີດຂຶ້ນໃນສັຕວັດແລກບາງເທື່ອເປັນສິ່ງທີ່ຫລີກໜີບໍ່ໄດ້ ບາງຄົນຄິດວ່າພໍຈະມີທາງອອກຢູ່ ເຂົາຄິດວ່າຈະຈົ່ງຮັກພັກດີທັງສອງຝ່າຍ ຄືທັງມຫາຈັກກະພັດແລະພຣະຄຣິສ ທ່ານໂຢຮັນຢ້ຳວ່າທາງຣອດແບບນີ້ບໍ່ມີ ນິມິດທີ່ເລີ່ມຕົ້ນດ້ວຍສັດຮ້າຍປາກົດຕົວໃນພຣະທັມພຣະນິມິດບົດທີ່ 13 ນັ້ນ ທ່ານໂຢຮັນຊີ້ແຈງໄວ້ວ່າທຸກຄົນຕ້ອງຕັດສິນໃຈຮັບ ເຄື່ອງໝາຍຂອງສັດຮ້າຍຫລືເຄື່ອງໝາຍຂອງລູກແກະ ນັ້ນໝາຍຄວາມວ່າ ຖ້າໃຜບໍ່ຢືນໝັ້ນແລະບໍ່ຍອມທົນທຸກເພື່ອພຣະຄຣິສແລ້ວ ເຂົາກໍຈະຕ້ອງນມັສການສັດຮ້າຍແທນພຣະເຈົ້າ

ສັດຮ້າຍນັ້ນແມ່ນຜູ້ໃດ ຄົນໃນສມັຍນັ້ນເຂົ້າໃຈວ່າ ສັດຮ້າຍຈາກທະເລ (ພນ 13:1-10) ແມ່ນອານາຈັກໂຣມັນຊຶ່ງປະກາດບັງຄັບວ່າມະນຸດທຸກຄົນຕ້ອງນມັສການມຫາຈັກກະພັດ ສັດຮ້າຍຈາກແຜ່ນດິນ (ພນ 13:11-17) ຄືກັບວ່າເປັນພວກປະໂລຫິດທີ່ສົ່ງເສີມການນມັສການມຫາຈັກກະພັດ ໃນພຣະທັມພຣະນິມິດ 17:9 ຊີ້ໃຫ້ເຫັນວ່າ ສັດຮ້າຍຕົວແລກມີສູນກາງຢູ່ທີ່ກຸງໂຣມເລັງເຖິງຜູ້ຍິງໂສເພນີ ນາງນັ່ງຢູ່ເທິງພູນ້ອຍເຈັດໜ່ວຍ ຜູ້ອ່ານໃນສມັຍນັ້ນຮູ້ຈັກກັນຢູ່ແລ້ວວ່າໝາຍເຖິງກຸງໂຣມ ເພາະກຸງໂຣມເປັນນະຄອນທີ່ສ້າງຢູ່ບົນເທິງພູນ້ອຍເຈັດໜ່ວຍ

ຄຳສັ່ງໃຫ້ນມັສການມຫາຈັກກະພັດເປັນພຣະເຈົ້າເປັນສິ່ງທີ່ພວກຄຣິສຕຽນຕ້ອງເລືອກຢ່າງທີ່ບໍ່ມີທາງຫລີກໜີໄດ້ ເຂົາຈະຍອມພ່າຍແພ້ ໂດຍປະຕິເສດພຣະຄຣິສແລະນມັສການມຫາຈັກກະພັດແທນກໍໄດ້ ຫລືເຂົາຈະຢືນໝັ້ນແລະຍອມຕາຍເມື່ອເຖິງຄາວຈຳເປັນກໍໄດ້ເໝືອນກັນ ເຫດການນີ້ບໍ່ເປີດໂອກາດໃຫ້ມະລຸ້ມມະລ່ອຍ ແລະເປັນວາລາທີ່ທຸກຄົນຈະຕ້ອງມີເຄື່ອງໝາຍຂອງສັດຮ້າຍ ຫລືເຄື່ອງໝາຍຂອງລູກແກະ ເຂົາຈະຕ້ອງຕັດສິນໃຈວ່າຈະຢູ່ຝ່າຍຊາຕານຫລືຝ່າຍພຣະເຈົ້າ ຝ່າຍສັດຮ້າຍຫລືຝ່າຍພຣະຄຣິສ ຝ່າຍຄວາມຊົ່ວຫລືຝ່າຍຄວາມຊອບທັມ ຄຣິສຕຽນທີ່ແທ້ຍ່ອມຮູ້ຈັກວ່າ ຄວາມຈົ່ງຮັກພັກດີທີ່ມີຢູ່ຈິດໃຈຂອງເຂົາຢູ່ນັ້ນ ຄືຄວາມຈົ່ງຮັບພັກດີຕໍ່ພຣະເຈົ້າທາງພຣະຄຣິສ ເຂົາຈະບໍ່ຍອມນມັສການມຫາຈັກກະພັດ ເຂົາຈະບໍ່ຍອມລະຖິ້ມພຣະຄຣິສຜູ້ຊົງເປັນ "ຈອມເຈົ້າກະສັດ" ແລະ "ຈອມເຈົ້ານາຍ" (ພນ 19:16) ເພາະເຂົາຮູ້ຢູ່ວ່າພຣະຄຣິສຈະຊະນະສັດຮ້າຍ ແລະຝ່າຍພຣະເຈົ້າຈະມີໄຊຊະນະ

ພຣະເຈົ້າມີຄຳສັນຍາແກ່ຄົນທັງຫລາຍທີ່ຖວາຍຊີວິດຂອງເຂົາເພື່ອເຫັນແກ່ພຣະຄຣິສ (ພນ 1-6) ພຣະທັມຕອນນີ້ບັນລະຍາຍເຖິງວາລາພັນປີທີ່ເປັນວາລາທີ່ປອດພັຍ ແລະເປັນວາລາແຫ່ງພຣະພອນ ມີການແປຄວາມພຣະທັມຕອນນີ້ຫລາຍແນວ ບາງຄົນຖືວ່າພຣະທັມຕອນນີ້ໝາຍເຖິງວາລາສິ້ນສຸດຂອງໂລກ ກ່ອນວັນພິພາກສາລົງໂທດຄັ້ງສຸດທ້າຍ ຄຣິສຕຽນຈະໄດ້ຮັບຄວາມຊົມຊື່ນຍິນດີມີຄວາມສັນຕິສຸກກັບພຣະຄຣິສໃນລະຍະວາລານັ້ນ ບາງຄົນກໍແປຄວາມວ່າ "ພັນປີ" ນີ້ເລັງເຖິງລະຍະວາລາທັງໝົດທີ່ຄຣິສຈັກຢູ່ໃນໂລກນີ້

ຕັ້ງແຕ່ສັດຕະວັດທີ່ນຶ່ງຈົນຮອດວັນສຸດທ້າຍຄືວັນສິ້ນໂລກ

ເມື່ອເຮົາພິຈາລະນາຕາມຕົວອັກສອນ ພຣະທັມຕອນນີ້ຕ້ອງການຈະບອກວ່າ ບັນດາຄົນທີ່ປະຕິເສດບໍ່ຍອມນມັສການສັດຮ້າຍ ທີ່ຖືກຂ້າຕາຍຢ່າງວິຣະຊົນນັ້ນ (ພນ 13:15) ຈະໄດ້ຮັບພຣະພອນຮ່ວມຄອບຄອງ (reigned) ກັບພຣະຄຣິສເປັນເວລາພັນປີ ຄວາມໝາຍຂອງພຣະທັມຕອນນ້ອຍນີ້ໄດ້ກໍ່ໃຫ້ເກີດແນວຄວາມຄິດທີ່ແຕກຕ່າງກັນໄປຫລາຍທາງ ເຮົາຄວນຣະລຶກວ່າພຣະທັມພຣະນິມິດເຕັມໄປດ້ວຍພາບນິມິດພຣະ

ທັມນີ້ບໍ່ໄດ້ບັນທຶກເຣື່ອງຣາວຢ່າງກັບປະວັດສາດທີ່ບັນທຶກຕາມລຳດັບເຫດການ ແຕ່ພຣະທັມຕອນນີ້ໃຫ້ຄວາມສວ່າງແກ່ຄຣິສຈັກໃນສັຕວັດແລກໃນຍາມທີ່ພວກເຂົາຜະເຊີນກັບເຫດຮ້າຍອັນໃຫຍ່ຫລວງ ເປັນພຣະທັມທີ່ໜຸນໃຈຄຣິສຕຽນໃຫ້ມີຄວາມສັດຊື່ໃນເວລາຖືກຂົ່ມເຫັງ ພຣະທັມພຣະນິມິດ 20:1-6 ເປັນຄຳໝັ້ນສັນຍາກັບຄົນເຫລົ່ານັ້ນວ່າ ພຣະເຈົ້າຈະຊົງອວຍພຣະພອນແກ່ຜູ້ທີ່ຕ້ອງຕາຍເພາະຄວາມສັດຈິງຕໍ່ພຣະຄຣິສ ພຣະຄຣິສຈະຊົງເບິ່ງແຍງແລະຈະຊົງຍົກຍໍເຂົາທັງຫລາຍເປັນພິເສດ ຄວາມຈິງນີ້ເປັນຄວາມຈິງທີ່ໜຸນໃຈຄຣິສຕຽນທຸກຄົນໃນທຸກຍຸກທຸກສມັຍ ຖ້າຄຣິສຕຽນຈະຍອມສລະຊີວິດດ້ວຍຄວາມສັດຊື່ຈິງຮັກພັກດີຕໍ່ພຣະຄຣິສແລ້ວ ຄົນເຫລົ່ານັ້ນຈະບໍ່ເສັຍຊີວິດຢ່າງໄຮ້ປໂຍດ ພຣະເຈົ້າມີພຣະພອນສຳລັບເຂົາຢ່າງແນ່ນອນທີ່ສຸດ

ພຣະທັມພຣະນິມິດໄດ້ກ່າວຊ້ຳແລ້ວຊ້ຳອີກແກ່ຜູ້ອ່ານວ່າ ທີ່ສຸດສິ້ນສຸດຂອງໂລກຈະມາໃນໄວ ໆ ນີ້ (ພນ 3:11, 22:7, 10, 12, 20) ໃນພຣະທັມຕອນອື່ນທ່ານໂຢຮັນໄດ້ເຕືອນວ່າພຣະຄຣິສຈະສະເດັດມາພິພາກສາລົງໂທດ ນອກຈາກຄຣິສຈັກທີ່ເຮັດຜິດນັ້ນຈະກັບໃຈໃໝ່ (ພນ 2:5, 16, 3:3) ຕົວຂອງທ່ານໂຢຮັນເອງມີຄວາມຫວັງໃຈແລະລໍຄອຍດ້ວຍໃຈຮ້ອນຮົນວ່າ ພຣະເຈົ້າຈະຊົງນຳການພັກເຊົາແລະໄຊຊະນະມາສູ່ຄຣິສຈັກທີ່ໄດ້ຮັບຄວາມລຳບາກໄວ ໆ ໃນເວລາທີ່ທ່ານໂຢຮັນຂຽນພຣະທັມພຣະນິມິດຊຶ່ງເປັນເວລາທີ່ທ່ານຖືກຄຸມຂັງຢູ່ນັ້ນ ທ່ານກໍຢືນໝັ້ນຢູ່ແລະຊຸກຊວນໃຫ້ຜູ້ອ່ານພຣະທັມພຣະນິມິດເຮັດຕາມເຊັ່ນດຽວກັນ ແມ່ນວ່າທ່ານຈະມີຄວາມຫວັງໃຈວ່າເວລາທີ່ສຸດປາຍຈະມາໄວ ໆ ທ່ານບໍ່ໄດ້ພຍາຍາມກຳໜົດເວລາທີ່ແນ່ນອນ ທ່ານຮູ້ຈັກວ່າເຣື່ອງນີ້ຢູ່ໃນພຣະຫັດຂອງພຣະເຈົ້າ

ບາງຄົນພຍາຍາມທີ່ຈະກຳໜົດວັນເວລາທີ່ແນ່ນອນຍິ່ງກວ່າທີ່ທ່ານໂຢຮັນໄດ້ກ່າວໄວ້ ເຂົາພຍາຍາມທີ່ຈະບອກວ່າພຣະຄຣິສຈະສະເດັດມາເວລານັ້ນເວລານີ້ ແລະໂລກຈະສິ້ນສຸດໃນເວລານັ້ນເວລານີ້ ອົງພຣະເຢຊູຄຣິສເອງຕັດວ່າ "ແຕ່ເຣື່ອງວັນຫລືໂມງນັ້ນບໍ່ມີໃຜຮູ້ ແມ່ນທູດສວັນຫລືພຣະບຸດກໍບໍ່ຮູ້ ຮູ້ແຕ່ພຣະບິດາອົງດຽວ ຈົ່ງເຝົ້າລະວັງຢູ່ ເພາະພວກທ່ານບໍ່ຮູ້ວ່າເວລາກຳໜົດນັ້ນຈະມາເຖິງເມື່ອໃດ" (ມກ 13:32-33) ແລະພຣະອົງຍັງໄດ້ຕັດໃນເວລາສິ່ງສະເດັດສູ່ສວັນວ່າ "ບໍ່ແມ່ນໜ້າທີ່ຂອງພວກທ່ານທີ່ຈະຮູ້ເວລາຫລືຍາມກຳໜົດ ຊຶ່ງພຣະບິດາໄດ້ຊົງຕັ້ງໄວ້ດ້ວຍສິດຂອງພຣະອົງເອງ" (ກຈ 1:7) ທ່ານໂປໂລກ່າວວ່າ "ພີ່ນ້ອງທັງຫລາຍເອີຍ ເຣື່ອງເວລາແລະວັນທີ່ຊົງກຳໜົດໄວ້ນັ້ນ ບໍ່ຈຳເປັນຕ້ອງຂຽນບອກໃຫ້ພວກທ່ານຮູ້ ເພາະວ່າເຈົ້າເອງຮູ້ດີແລ້ວວ່າ ວັນຂອງພຣະຜູ້ເປັນເຈົ້າຈະມາເໝືອນຂະໂມຍມາໃນເວລາກາງຄືນ" (1 ທຊ 5:1-2) ແຕ່ຂໍ້ພຣະທັມເຫລົ່ານີ້ບໍ່ຈຸໃຈຄຣິສຕຽນບາງທ່ານ ພວກເຂົາໃຊ້ເວລາໃນການສຶກສາຫລາຍ ແລະພຍາຍາມທຳນວຍວ່າພຣະຄຣິສຈະສະເດັດມາເມື່ອໃດ ແລະໂລກຈະສິ້ນສຸດລົງເມື່ອໃດ ຈົນເຖິງປັດຈຸບັນນີ້ ວັນເວລາທີ່ພວກເຂົາກຳໜົດໄວ້ກໍຜ່ານພົ້ນໄປບໍ່ໄດ້ເປັນຈິງຕາມທີ່ທຳນາຍໄວ້ ການທີ່ພຣະເຢຊູຄຣິສບໍ່ໄດ້ເປີດເຜີຍວັນເວລາທີ່ພຣະອົງຈະສະເດັດກັບມາຢ່າງແນ່ນອນນັ້ນບໍ່ໄດ້ໝາຍຄວາມຄຳທຳນວຍແລະນິມິດໝາຍຕ່າງ ໆ ທີ່ບັນທຶກໄວ້ຈະບໍ່ເກີດຂຶ້ນເປັນຈິງໃນຊີວິດຂອງເຮົາ ເຮົາບໍ່ຕ້ອງສົນໃຈ ຫລືບໍ່ມີຄວາມໝາຍສຳລັບເຮົາແນວໃດ ພຣະເຢຊູຄຣິສໄດ້ສອນເຮົາແນວໃດໃນເຣື່ອງ

ວັນເວລາທີ່ພຣະອົງສະເດັດກັບມາຂອງພຣະອົງ ອ່ານພຣະທັມຂ່າວປະເສີດມາຣະໂກ 13:32-37 ຄວາມນຶ່ງທີ່ພຣະເຢຊູກ່າວເຖິງສາມເທື່ອໃນຕອນນີ້ ແມ່ນ **"ຈົ່ງເຝົ້າລະວັງຢູ່"** ຄຣິສຕຽນບໍ່ສົມຄວນປະມາທໃນເຫດການຕ່າງ ໆ ທີ່ເກີດຂຶ້ນ ຈະຕ້ອງເຝົ້າຣະວັງຢູ່ສເມີ ທ່ານໂປໂລເຕືອນພີ່ນ້ອງໃນຄຣິສຈັກເມືອງເທຊະໂລນິກທີ່ຢາກຮູ້ຈັກວັນເວລາທີ່ກຳໜົດໄວ້ **"ຢ່າໃຫ້ເຮົາທັງຫລາຍຫລັບຢູ່ເໝືອນຄົນອື່ນ ແຕ່ໃຫ້ເຮົາເຝົ້າລະວັງແລະຢ່າເມົາມົວ"** (1 ທຊ 5:6) ທ່ານໂປໂລສອນໃຫ້ຄຣິສຕຽນທຸກຄົນ "ຖືວ່າພວກເຮົາເປັນຜູ້ຮັບໃຊ້ຂອງພຣະຄຣິສ ທັງເປັນຜູ້ປ້ອງກັນຮັກສາ (stewards) ຂໍ້ເລິກລັບຂອງພຣະເຈົ້າ ປະການນຶ່ງ **ຜູ້ປ້ອງກັນຮັກສານັ້ນຈຳເປັນຕ້ອງເປັນຄົນສັດຊື່"** (1 ກທ 4:1-2) ຄວາມສັດຊື່ເປັນຄຸນສົມບັດທີ່ຄຣິສຕຽນຄວນມີ ເພື່ອຖວາຍກຽດແກ່ພຣະເຈົ້າ ພຣະອົງຈະຊົງຊ່ວຍໃຫ້ເຮົາຕັ້ງໝັ້ນຄົງໃນຄວາມສັດຊື່ນັ້ນ (ຣມ 16:25) ຄຣິສຕຽນໃນຖານະທີ່ເປັນຜູ້ຮັບໃຊ້ຂອງພຣະເຈົ້າ "ໄດ້ສເນີຕົວໃຫ້ເປັນທີ່ຊອບ (ຕໍ່ພຣະເຈົ້າ) ໃນການທັງປວງ ໂດຍຄວາມພຽນອົດທົນຫລວງຫລາຍໃນຄວາມທຸກລຳບາກ ໃນຄວາມຂັດສົນ ໃນການບີບຄັ້ນ ..... (2 ກທ 6:4-10) ສິ່ງຕ່າງ ໆ ເຫລົ່ານີ້ທ່ານໂປຣັນຜູ້ຂຽນພຣະທັມພຣະນິມິດ ຕ້ອງການໃຫ້ເພື່ອນຄຣິສຕຽນຂອງທ່ານເປັນແນວນັ້ນ ເຂົາທັງຫລາຍຕ້ອງເປັນຄົນສັດຊື່ເມື່ອຖືກທົດລອງ ຄວາມຈິງນີ້ເປັນຂອງຄຣິສຕຽນທຸກຍຸກທຸກສມັຍ ທີ່ຈະຕ້ອງຖືວ່າຄວາມຈົ່ງຮັກພັກດີຕໍ່ພຣະເຢຊູຄຣິສເປັນສິ່ງທີ່ສຳຄັນທີ່ສຸດໃນຊີວິດ ສ່ວນເຫດການຕ່າງ ໆ ທີ່ຈະເກີດກໍສຸດແລ້ວແຕ່ການຄຸ້ມຄອງເບິ່ງແຍງຂອງພຣະເຈົ້າ ພຣະປະສົງຂອງພຣະອົງຈະມີໄຊຊະນະໃນທີ່ສຸດ ພຣະອົງຈະຊົງກູ້ກຽດທຸກຄົນທີ່ສັດຊື່ຕໍ່ພຣະອົງ ແລະຈະປະທານຄວາມຊົມຊື່ນຍິນດີແກ່ທຸກຄົນ ເຂົາທັງຫລາຍຈະປອດພັຍຢູ່ພາຍໃຕ້ການຄຸ້ມຄອງຂອງພຣະອົງ ໃນປັດຈຸບັນນີ້ແລະໃນກາລຂ້າງໜ້າທີ່ຈະມາເຖິງ

"ຫລັງຈາກນັ້ນຂ້າພະເຈົ້າເບິ່ງ ແລະເຫັນດັ່ງນີ້ ມີຝູງຄົນຫລວງຫລາຍເຫລືອຄະນານັບ ມາຈາກທຸກປະເທດ ທຸກຕະກຸນ ທຸກຊາດ ແລະທຸກພາສາ ຄົນເຫລົ່ານັ້ນນຸ່ງເຄື່ອງສີຂາວ ຖືກ້ານຕານ ຢືນຢູ່ຕໍ່ໜ້າພຣະຣາຊບັນລັງ ແລະຕໍ່ພຣະພັກພຣະເມສານ້ອຍນັ້ນ ຮ້ອງສຽງດັ່ງວ່າ ຄວາມລອດພົ້ນຂຶ້ນຢູ່ກັບພຣະເຈົ້າຂອງພວກເຮົາ ຜູ້ຊົງປະທັບເທິງພຣະຣາຊບັນລັງ ແລະຂຶ້ນຢູ່ກັບພຣະເມສານ້ອຍ" (ພນ 7:9-10) "ຣາຊອານາຈັກແຫ່ງພິພົບນີ້ ໄດ້ກາຍເປັນກັມມະສິດແຫ່ງອົງພຣະຜູ້ເປັນເຈົ້າຂອງເຮົາທັງຫລາຍ ແລະເປັນຂອງພຣະຄຣິສຂອງພຣະອົງ ພຣະອົງຈະຊົງສເວີຍຣາຊຕລອດໄປເປັນນິດ" (ພນ 11:15) "ແລະຂ້າພະເຈົ້າໄດ້ຍິນສຽງສິ່ງທີ່ມີຊີວິດທັງໝົດ ທັງໃນສວັນ ເທິງແຜ່ນດິນໂລກ ໃຕ້ແຜ່ນດິນ ແລະໃນມະຫາສມຸດ ຄືສິ່ງທັງປວງຊຶ່ງຢູ່ໃນທີ່ນັ້ນຮ້ອງວ່າ

'ຂໍໃຫ້ຄຳສັຣເສີນ ກຽດຕິຍົດ ສະງ່າຣາສີ ແລະຣິດທານຸພາບ
ຈົ່ງມີແດ່ພຣະອົງ ຜູ້ຊົງປະທັບເທິງພຣະຣາຊບັນລັງ
ແລະແດ່ພຣະເມສານ້ອຍ ຕລອດໄປເປັນນິດ'

ສັດທັງສີ່ນັ້ນກໍຮ້ອງວ່າ 'ອາແມນ' ແລະຜູ້ອາວຸໂສເຫລົ່ານັ້ນກໍຂາບລົງນມັສການ" (ພນ 5:13)

## ຂອບພຣະຄຸນພຣະເຈົ້າ
## ຈົບພຣະຄຣິສທັມຄັມພີ ພາກພັນທະສັນຍາໃໝ່

ສະຫງວນລິກຂະສິດ Copyright©Thira Siengsukon
In compliance with copyright restrictions, no portion of these materials may be reproduced in any form without written permission of the writer.

## ປຶດຣຽນເພີ່ມເຕີມ

ມີນັກສິລປະຊາວເຢຣະມັນຊື່ Albercht Durer (ຄ.ສ.1471-1528) ໄດ້ຄວັດລາຍຮູບພາບຂອງພຣະທັມພຣະນິມິດ ຕາມນິມິດທີ່ເຂົາໄດ້ເຫັນໄວ້ຊຸດນຶ່ງມີ 15 ຮູບດ້ວຍກັນ ແລະໄດ້ມີການຈັດພິມອອກເມື່ອປີ ຄ.ສ. 1498 ແລະເປັນທີ່ຮູ້ຈັກກັນດີໃນຢຸໂຣບ ຮູບພາບໝາຍເລກ 1, 4, 7, ແລະ 15 ໃນໜ້າຕໍ່ ໆ ໄປ ສະແດງໃຫ້ທ່ານໄດ້ຮູ້ຈັກຄວາມຄິດເຫັນຂອງນັກສິລະປະຜູ້ນີ້

[ຮູບພາບໃນໜ້າຕໍ່ໄປນີ້ໄດ້ມາຈາກປຶດຣຽນຂອງທ່ານ Celia Brewer Marshall, A Guide Through the New Testament, Kentucky: Westminster/John Knox Press, 1994 ໜ້າ 126-129]



Fig. 12.4 Scenes from Dürer's "Apocalypse" #15

ຮູບພາບໝາຍເລກ 15 ຮູບພາບສຸດທ້າຍນີ້ ຄວາມຊົ່ວຮ້າຍຖືກທຳລາຍ ທູດສວັນມີຖືຂໍກະແຈ ແລະໂສ້ຄຸມຂັງພະຍາມານ ແລະທູດອີກອົງນຶ່ງຊີ້ໃຫ້ທ່ານໂຢຮັນເຫັນກຸງເຢຣູຊາເລັມໃໝ່ ທີ່ຜູ້ຊອບທັມຈະຢູ່ຢ່າງສັນຕິສຸກ (ພນ 20:1-3, ບົດທີ 21)



Fig. 12.3 Scenes from Dürer's "Apocalypse" #7

**ຮູບພາບໝາຍເລກ 7** ເປັນຮູບພາບທີ່ບັນລະຍາຍພຣະທັມພຣະນິມິດບົດທີ 8 ເຖິງວິບັດຕ່າງ ໆ ພຣະເຈົ້າຊົງເບິ່ງຢູ່ ມີທູດສວັນເຈັດຕົນຖືແກທັງເຈັດ ມີນົກໃຫຍ່ຄູ່ນຶ່ງຜັກພູຫນ່ວຍໃຫຍ່ທີ່ໄຫມ້ຢູ່ລົງທະເລ ດວງດາວ ໆ ນຶ່ງຕົກ ມີວິບັດອື່ນທີ່ເກີດຂຶ້ນ ຮູບພາບນີ້ຊາວເຢຣະມັນເອີ້ນວ່າ "**ວິບັດ ວິບັດ ວິບັດ**"



Fig. 12.2 Scenes from Dürer's "Apocalypse" #4

<u>ຮູບພາບໝາຍເລກ 4</u> ເປັນຮູບພາບຜູ້ທີ່ຂີ່ມ້າທັງສີ່ ເປັນຮູບທີ່ມີຊື່ສຽງ ທ່ານໄດ້ບັນລະຍາຍຕາມໃນພຣະທັມພຣະນິມິດບົດທີ 6 ຮຽງຕາມລຳດັບຈາກຂວາມືມາທາງຊ້າຍມື ທີ່ໝາຍເຖິງຊັຍຊະນະ ເສິກສົງຄາມ ຄວາມອຶດຢາກ ແລະຄວາມຕາຍ



Fig. 12.1 Scenes from Dürer's "Apocalypse" #1

<u>**ຮູບພາບໝາຍເລກ 1**</u> ເປັນຮູບພາບນິມິດແລກຂອງທ່ານໂຢຮັນ (ພນ ບົດທີ່ 1) ເປັນຮູບພາບຂອງບຸດມະນຸດ (ພຣະເຢຊູຄຣິສ) ຊຶ່ງເຄື່ອງຢ່າງສົມພຣະກຽດ ຖ້າມກາງເຄື່ອງຮອງຕີນໂຄມທອງຄຳເຈັດອັນ ພຣະຫັດກ້ຳຂວາຂອງພຣະອົງຊຶ່ງຖືດາວເຈັດດວງ ມີພຣະແສງສອງຄົມອອກມາຈາກພຣະໂອດ ແລະພຣະພັກຂອງພຣະອົງເໝືອນດັ່ງດວງອາທິດທີ່ສ່ອງແສງກ້າ ທ່ານໂຢຮັນກົ້ມລົງຂາບແທບພຣະບາດຂອງພຣະອົງ

# ຄຣິສຈັກທັງເຈັດໃນພຣະທັມພຣະນິມິດ

**ພຣະທັມພຣະນິມິດ ບົດທີ 2 ເຖິງ ບົດທີ 3**




ສະຫງວນລິກຂະສິດ Copyright©Thira Siengsukon. In Compliance with copyright restrictions, no portion of these materials may be reproduced in any form without written permission of the writer.